ບົດລາຍງານການພັດທະນາມະນຸດແຫ່ງຊາດ

Empowered lives.
Resilient nations.

# ການຫຼຸດພົ້ນອອກຈາກ

## ສະຖານະພາບປະເທດດ້ອຍພັດທະນາ

## ສປປ ລາວ 2017



# ການຫຼຸດພົ້ນອອກຈາກສະຖານະພາບ ປະເທດດ້ອຍພັດທະນາ

ສປປ ລາວ, 2017

## ບົດລາຍງານການພັດທະນາມະນຸດແຫ່ງຊາດ, ເຫຼັ້ມທີ V

ກະຊວງແຜນການ ແລະການລົງທຶນ, ແລະອົງການ
ສະຫະປະຊາຊາດເພື່ອການພັດທະນາໃນ ສປປ ລາວ
ນະຄອນຫຼວງວຽງຈັນ 2017

Copyright © 2017 by:

Ministry of Planning and Investment
Souphanouvong Avenue, Sithan Nuea Village
Sikhottabong District, Vientiane Lao PDR
Tel / Fax: + 856 21 254 827

Empowered lives.
Resilient nations.

United Nations Development Programme
Lane Xang Avenue
P.O. Box 345 Vientiane, Lao PDR
Email: info.la@undp.org
Tel: +856 (0) 21 267 777
Fax: +856 (0) 21 267 799

Photo Credit: UNDP-GEF Sustainable Forest and Land Management Forest Ecosystems of Southern Lao PDR

All rights reserved. No part of this publication may be reproduced, stored in a retrieval system or transmitted, in any means, electronic, mechanical, photocopying, recording or otherwise, without prior permission.

# ຄະນະທີມງານກະກຽມບົດລາຍງານ ການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ ເຫຼັ້ມທີ V

### ຜູ້ຂຽນຮ່ວມ

Dr. Sarthi Acharya
ດຣ. ສິດທິຣົດ ຣາຊະພົນ

### ຜູ້ກວດແກ້ດ້ານວິຊາການ

Dr. Anis Chowdhury

### ຜູ້ຊີ້ນຳໂຄງການ

ດຣ. ບຸນທະວີ ສີສຸພັນທອງ
ອາດີດຮອງລັດຖະມົນຕີກະຊວງແຜນການ ແລະການລົງທຶນ

### ຄະນະນຳພາ ແລະຄຸ້ມຄອງໂຄງການ

ດຣ. ລີເບີ ລີບົວປາວ
ຮອງປະທານສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ

ທ່ານ ສຸພິດ ດາຣາຈັນທຣາ
ຫົວໜ້າໂຄງການ

ດຣ. ສິດທິຣົດ ຣາຊະພົນ
ຜູ້ບໍລິຫານໂຄງການ

### ທີມງານບໍລິຫານ ແລະປະສານງານ

ທ່ານ ນາງ ພອນສະຫວັນ ສິດທິເດດ

ທ່ານ ນາງ ມະນີລັດ ພິມມະສານ

ທ່ານ ບຸນນະພົນ ແສງຄຳຢອງ

### ຜູ້ຊ່ວຍຂຽນ ແລະນັກຄົ້ນຄວ້າ

ທ່ານ ນາງ ອຳພະພອນ ໄຊຍະເສນ

ທ່ານ ວັນໄຊ ໄຊຍະວົງ

ທ່ານ ນາງ ພອນສະຫວັນ ສິດທິເດດ

ທ່ານ ໄຊຍະສັກ ແສງອາລຸນ

### ທີມງານອົງການສະຫະປະຊາຊາດ ເພື່ອການພັດທະນາ

Ms. Kaarina Immonen
ຜູ້ຕາງໜ້າ

Mr. Balasubramaniam Murali
ຮອງຜູ້ຕາງໜ້າ

Mr. Jakob Schemel
ຫົວໜ້າຫ້ອງການປະສານງານສະຫະປະຊາຊາດ

Ms. Azusa Kubota

Dr. Bishwa Tiwari
ຫ້ອງການພາກພື້ນບາງກອກ

Dr. Thangavel Palanivel
ທີ່ປຶກສາທາງດ້ານຍຸດທະສາດ ແລະນັກເສດຖະເສດອາວຸໂສ
ຫ້ອງການອາຊີປາຊີຟິກປະຈຳພາກພື້ນ

ທ່ານ ນາງ ສີລາວັນ ວົງໂພສີ

ທ່ານ ນາງ ອານົງລີ ພິມມະສອນ

ທ່ານ ນາງ ພຸດທະມາດ ໄຊຍະບຸນຊູ

### ຜູ້ກວດແກ້ພາສາອັງກິດ

Ms. Jenny Rouse

### ຜູ້ກວດແກ້ພາສາລາວ

ທ່ານ ສຸພິດ ດາຣາຈັນທຣາ

# ຄຳນຳ

ໃນການເປັນຄູ່ຮ່ວມມືກັນລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ແລະອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ມາຮອດປັດຈຸບັນນີ້ ບົດລາຍງານການພັດທະນາມະນຸດແຫ່ງຊາດ ໄດ້ຖືກຕີພິມຈຳໜ່າຍແລ້ວ ເປັນຈຳນວນ IV ເຫຼັ້ມ ຊຶ່ງສອງເຫຼັ້ມສຸດທ້າຍແມ່ນກ່ຽວກັບການສົ່ງເສີມການຈ້າງງານ ແລະການດຳລົງຊີວິດຂອງປະຊາຊົນ (2009), ແລະການຄ້າລະຫວ່າງປະເທດ (2006). ໃນເມື່ອລັດຖະບານ ແລະປະຊາຊົນລາວ ໄດ້ເລີ່ມລົງເຮືອເພື່ອເດີນທາງໄປສູ່ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ແມ່ນມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ເຂົ້າໃຈວ່າ ໃນປັດຈຸບັນນີ້ ສປປ ລາວ ກຳລັງຢູ່ໃນຈຸດໃດຂອງມາດຖານການຫລຸດພົ້ນອອກຈາກສະຖານະພາບ LDC ດັ່ງກ່າວ ແລະແນວຄວາມຄິດກ່ຽວກັບການພັດທະນາມະນຸດ ຈະສາມາດຊ່ວຍຊຸກຍູ້ ເພື່ອຮັບປະກັນການຫລຸດພົ້ນອອກຈາກສະຖານະພາບ LDC ແລະບັນລຸໄດ້ການພັດທະນາແບບຍືນຍົງຢ່າງລາບລື່ນຄືແນວໃດ. ເພາະສະນັ້ນ, ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ V ນີ້ ຈຶ່ງສຸມໃສ່ການຫລຸດພົ້ນອອກຈາກສະຖານະພາບ LDC ເປັນຕົ້ນຕໍ. ມັນຄືກັບບົດລາຍງານທັງ 4 ເຫຼັ້ມທີ່ຜ່ານມານັ້ນ, ການກະກຽມບົດລາຍງານສະບັບນີ້ ແມ່ນເລີ່ມຈາກການກຳນົດຫົວຂໍ້ທີ່ສຸດທ້າຍສຳລັບການສຶກສາ ໂດຍອີງໃສ່ການປຶກສາຫາລືຢ່າງກວ້າງ ແລະການເປັນເຈົ້າການໃນລະດັບຊາດຢ່າງຕັ້ງໜ້າ. ສະພາທີ່ປຶກສາລະດັບຊາດ ແມ່ນປະກອບດ້ວຍບັນດາຕົວແທນທີ່ມາຈາກກະຊວງ, ມະຫາວິທະຍາໄລ ແລະສະຖາບັນຄົ້ນຄວ້າຕ່າງໆ ຊຶ່ງເຂົາເຈົ້າເຫຼົ່ານັ້ນໄດ້ໃຫ້ຂໍ້ແນະນຳຜ່ານຂະບວນການ ແລະຂັ້ນຕອນຕ່າງໆ.

ບົດລາຍງານສະບັບນີ້ໄດ້ສະເໜີໃຫ້ບັນດາທ່ານຜູ້ອ່ານ ຮັບຮູ້ເຖິງພາບລວມກ່ຽວກັບສະຖານະພາບຂອງການພັດທະນາມະນຸດ ແລະຄວາມຄືບໜ້າໃນການກ້າວໄປສູ່ການຫລຸດພົ້ນອອກຈາກສະຖານະພາບ LDC ຂອງ ສປປ ລາວ ໃນປັດຈຸບັນ. ນອກຈາກນັ້ນ, ມັນຍັງໄດ້ພິຈາລະນາເຖິງຜົນປະໂຫຍດ ແລະ ສິ່ງທ້າທາຍທີ່ເປັນໄປໄດ້ ສຳລັບການຫລຸດພົ້ນອອກຈາກສະຖານະພາບ LDC ຂອງ ສປປ ລາວ, ຄົ້ນຫາບັນດາທາງເລືອກດ້ານນະໂຍບາຍ ແລະບັນດາຂໍ້ສະເໜີຕ່າງໆ ສຳລັບການດຳເນີນການຢູ່ໃນຂະແໜງການຕ່າງໆທີ່ຖືກເລືອກ. ຜົນຂອງການສຶກສານີ້ໄດ້ສະແດງໃຫ້ເຫັນວ່າ ສປປ ລາວ ໄດ້ມີຄວາມຄືບໜ້າທີ່ດີຫຼາຍໃນການພັດທະນາມະນຸດ, ການຫລຸດຜ່ອນຄວາມທຸກຍາກ ແລະກຳລັງຢູ່ໃນເສັ້ນທາງແຫ່ງການຫລຸດພົ້ນອອກຈາກສະຖານະພາບ LDC ເປັນຢ່າງດີ. ເຖິງຢ່າງໃດກໍ່ຕາມ, ຄວາມຄືບໜ້ານີ້ແມ່ນຍັງບໍ່ທັນສະໝໍ່າສະເໝີກັນ (ຍັງແຕກຕ່າງກັນ) ຢ່າງກວ້າງຂວາງຢູ່ໃນຂົງເຂດ ແລະ ກຸ່ມຊົນເຜົ່າຕ່າງໆ. ນອກຈາກນັ້ນ, ຄວາມຫຼາກຫຼາຍທາງເສດຖະກິດຂອງປະເທດກໍ່ຍັງຈຳກັດ, ການເຊື່ອມໂຍງເບື້ອງຫຼັງ ແລະເບື້ອງໜ້າກໍ່ຍັງອ່ອນແອ, ແລະຄວາມສາມາດໃນການຟື້ນຟູຄືນສູ່ສະພາບເດີມ ໃນເມື່ອເກີດເຫດການຊ໊ອກກະທັນຫັນທາງດ້ານເສດຖະກິດຈາກພາຍນອກ ແລະໄພພິບັດທາງທຳມະຊາດ ກໍ່ຍັງສືບຕໍ່ຕໍ່າຢູ່.

ບົດງານສະບັບນີ້ຍັງເນັ້ນວ່າ ບັນດາຜົນປະໂຫຍດຈາກການຫລຸດພົ້ນອອກຈາກ LDC ແມ່ນບໍ່ສາມາດເກີດຂຶ້ນໄດ້ຢ່າງອັດຕະໂນມັດ ຊຶ່ງມັນຮຽກຮ້ອງຕ້ອງການໃຫ້ມີບັນດານະໂຍບາຍທີ່ເປັນຈິງ ເພື່ອຍາດແຍ່ງເອົາບັນດາຂໍ້ໄດ້ປຽບດ້ານກາລະໂອກາດ ແລະ ການຄຸ້ມຄອງຄວາມສ່ຽງຕ່າງໆທີ່ອາດຈະເກີດຂຶ້ນໄດ້. ຕົວຢ່າງ: ການເຊື່ອມໂຍງກັບສາກົນ ແລະຂົງເຂດ ຈະສ້າງບັນດາກາລະໂອກາດ ເພື່ອເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ດ້ວຍການຊຸກຍູ້ສົ່ງເສີມບັນດາຂົງເຂດ ແລະຂະແໜງການຕ່າງໆ ທີ່ ສປປ ລາວ ມີຄວາມໄດ້ປຽບໂດຍສົມທຽບ ແລະການເຂົ້າຮ່ວມເຄືອຂ່າຍການຜະລິດຂອງຂົງເຂດ ແລະ ຂອງໂລກ. ໃນເວລາດຽວກັນນັ້ນ, ສປປ ລາວ ຈຳເປັນຈະຕ້ອງໄດ້ຂ້າມຜ່ານສິ່ງທ້າທາຍຕ່າງໆ ກ່ຽວກັບຄວາມຈຳກັດດ້ານທຶນມະນຸດ, ການມີກຳລັງແຮງງານທີ່ໜ້ອຍ ແລະການລົງທຶນທີ່ຕໍ່າເຂົ້າໃນຂະແໜງການພັດທະນາມະນຸດຕ່າງໆ ເຊັ່ນ: ສາທາລະນາສຸກ, ການສຶກສາ ແລະການປົກປ້ອງທາງສັງຄົມ. ເພື່ອຍາດແຍ່ງເອົາຂໍ້ໄດ້ປຽບດ້ານກາລະໂອກາດຕ່າງໆທີ່ເປັນໄປໄດ້ຢ່າງເຕັມສ່ວນນັ້ນ ສປປ ລາວ ຈຳເປັນຈະຕ້ອງໄດ້ເຕັ້ນຂ້າມອຸດສາຫະກຳການຜະລິດທີ່ເຂັ້ມງານ ແລະມີຜະລິດຕະພາບຕໍ່າ, ສ້າງຂໍ້ໄດ້ປຽບດ້ານການແຂ່ງຂັນຢູ່ໃນບັນດາຜະລິດຕະພັນຊ່ອງວ່າງທີ່ມີມູນຄ່າເພີ່ມສູງ.

ບົດລາຍງານສະບັບນີ້ ໄດ້ສະເໜີບັນດາທາງເລືອກດ້ານນະໂຍບາຍຢູ່ໃນລະດັບມະຫາພາກ ໃນຂອບເຂດ

ຂອງການເພີ່ມທະວີຄວາມຄ່ອງຕົວທາງດ້ານງົບປະມານການເງິນສຳລັບການພັດທະນາມະນຸດ, ການປັບປຸງບັນດາລະບຽບກົດໝາຍຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການມີຄວາມຫຼາກຫຼາຍທາງເສດຖະກິດ, ຮັບປະກັນຄວາມມີສະຖຽນລະພາບຂອງເສດຖະກິດມະຫາພາກ ແລະການຄວບຄຸມນຳໃຊ້ການປັນຜົນດ້ານປະຊາກອນ ເພື່ອຊຸກຍູ້ສົ່ງເສີມດ້ານຊັບສິນມະນຸດ ແລະຄວາມຫຼາກຫຼາຍທາງເສດຖະກິດຂອງປະເທດ. ກະຊວງແຜນການ ແລະການລົງທຶນ (ຜທ) ມີຄວາມເຊື່ອໝັ້ນວ່າ ບົດລາຍງານສະບັບນີ້ຈະໃຫ້ການປະກອບສ່ວນທີ່ສຳຄັນ ຕໍ່ກັບການຈັດຕັ້ງປະຕິບັດແຜນການ ແລະຍຸດທະສາດພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕ່າງໆໄດ້ເປັນຢ່າງດີ.



**ປອ. ກິແກ້ວ ຈັນທະບູຣີ**

ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ

# ຄຳນຳ

ຂ້າພະເຈົ້າມີຄວາມຍິນດີ ທີ່ຈະນຳສະເໜີປຶ້ມບົດລາຍງານການພັດທະນາມະນຸດ ກ່ຽວກັບ ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ສຳລັບ ສປປ ລາວ.

ນັບຕັ້ງແຕ່ໄດ້ມີການເປີດຕົວປຶ້ມບົດລາຍງານການພັດທະນາມະນຸດເຫຼັ້ມຫຼ້າສຸດກ່ຽວກັບການຈ້າງງານ ແລະການດຳລົງຊີວິດເປັນຕົ້ນມາແມ່ນເຫັນວ່າ ສປປ ລາວ ໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງ. ໃນຊຸມປີໃກ້ມານີ້, ເສດຖະກິດຂອງ ສປປ ລາວ ໄດ້ສືບຕໍ່ເຕີບໂຕໃນອັດຕາປະມານ 7% ຕໍ່ປີ ຊຶ່ງເປັນໜຶ່ງໃນບັນດາປະເທດທີ່ມີອັດຕາການເຕີບໂຕໄວທີ່ສຸດຢູ່ໃນໂລກ. ສປປ ລາວ ໄດ້ບັນລຸເປົ້າໝາຍການພັດທະນາສະຫະສະວັດກ່ຽວກັບຄວາມທຸກຍາກ ແລະ ໄດ້ກາຍເປັນປະເທດລາຍຮັບປານກາງຕ່ຳ ຕາມແບບວິທີຄິດໄລ່ຂອງທະນາຄານໂລກ. ຄ່າດັດຊະນີການພັດທະນາມະນຸດຂອງ ສປປ ລາວ ໄດ້ເພີ່ມຂຶ້ນເປັນ 0,575 .

ຊ່ວງເວລາຂອງການອອກບົດລາຍງານການພັດທະນາມະນຸດສະບັບນີ້ ແມ່ນມີຄວາມເໝາະສົມແລ້ວ. ໃນປີ 2016, ສປປ ລາວ ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ຂອງຕົນສຳລັບ ປີ 2016-2020 ໂດຍໄດ້ວາງທິດທາງໃຫ້ບັນລຸໄດ້ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ເຮັດໃຫ້ເສດຖະກິດເຕີບໂຕດ້ວຍຄຸນນະພາບ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບນີ້ ແມ່ນສອດຄ່ອງກັບວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງໂລກທີ່ສຸດ ໂດຍທີ່ 60% ຂອງບັນດາຕົວຊີ້ບອກ ແມ່ນພົວພັນເຊື່ອມໂຍງກັບບັນດາຕົວຊີ້ບອກ ທີ່ຢູ່ໃນບັນດາເປົ້າໝາຍການພັດທະນາແບບຍືນຍົງຂອງໂລກ. ໜຶ່ງໃນບັນດາຫຼັກການທີ່ສຳຄັນຕົ້ນຕໍຂອງບັນດາເປົ້າໝາຍນັ້ນ ແມ່ນບໍ່ປ່ອຍໃຫ້ໃຜຜູ້ໜຶ່ງຢູ່ຕາມຫຼັງ. ບົດລາຍງານສະບັບນີ້ໄດ້ເນັ້ນວ່າ ສປປ ລາວ ຍັງຈະສືບຕໍ່ປະເຊີນໜ້າກັບສິ່ງທ້າທາຍຕ່າງໆ ກ່ຽວກັບການພັດທະນາມະນຸດທີ່ມີຄວາມສະເໝີພາບ. ຄວາມຈິງແລ້ວລາຍໄດ້ແມ່ນເພີ່ມຂຶ້ນແທ້, ແຕ່ການຫຼຸດຜ່ອນຄວາມທຸກຍາກ ແລະ ການຊົມໃຊ້ ແມ່ນຍັງຕາມຫຼັງອັດຕາການເຕີບໂຕຂອງ GDP ຢູ່ ແລະ ຄວາມບໍ່ສະເໝີພາບກໍ່ກຳລັງເພີ່ມຂຶ້ນ. ການແກ້ໄຂບັນດາສິ່ງທ້າທາຍເຫຼົ່ານີ້ ແມ່ນມີຄວາມສຳຄັນຫຼາຍ ເພື່ອເຮັດໃຫ້ຄວາມຫວັງໃໝ່ຂອງປະເທດ ໃນການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງເຕັມສ່ວນ ໄດ້ຢ່າງລາບລື່ນ.

ບົດລາຍງານສະບັບນີ້ ແມ່ນຜົນຂອງການຮ່ວມມື ລະຫວ່າງ ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຊຶ່ງປະກອບດ້ວຍທີມງານນັກຊ່ຽວຊານຂອງລາວ ແລະ ສາກົນ. ຂ້າພະເຈົ້າຫວັງວ່າ ມັນຈະເປັນເຄື່ອງມືທາງດ້ານການວິໄຈ ເພື່ອກະຕຸ້ນໃຫ້ມີການສົນທະນາໂຕ້ວາທີ, ປະກອບສ່ວນໃຫ້ແກ່ບັນດາທາງເລືອກດ້ານນະໂຍບາຍ ແລະ ແຈ້ງບອກການຕັດສິນໃຈສຳຄັນຕ່າງໆ ທີ່ຈະປະກອບສ່ວນຕໍ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ບັນດາຜູ້ຂຽນບົດລາຍງານສະບັບນີ້, ໂດຍສະເພາະແມ່ນທ່ານ ປອ. ສິດທິລິດ ຣາດຊະພົນ, ທ່ານ ປອ. Sarti Acharya ແລະ ທ່ານ ປອ. Anis Chowdhury. ອີກເທື່ອໜຶ່ງ, ຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈມາຍັງຜູ້ຊ່ຽວຊານທັງຫຼາຍຂອງລັດຖະບານ ແຫ່ງ ສປປ ລາວ ແລະ ເພື່ອນໆທີ່ຢູ່ໃນທີມງານຂອງອົງການສະຫະປະຊາຊາດ ປະຈຳ ສປປ ລາວ ທີ່ໄດ້ປະກອບສ່ວນໃຫ້ຄຳແນະນຳອັນມີຄ່າຕໍ່ບົດລາຍງານສະບັບນີ້.



**Kaarina Immonen**
ຜູ້ປະສານງານ UN
ຜູ້ຕາງໜ້າ UNDP ປະຈຳ ສປປ ລາວ

# ບົດສະແດງຄວາມຮູ້ບຸນຄຸນ

ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ V ນີ້ ແມ່ນເປັນການເພີ່ມເຕີມໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ໃນການວິໄຈຄວາມຄືບໜ້າ ຂອງ ສປປ ລາວ ກ່ຽວກັບການຫລຸດພົ້ນອອກຈາກສະຖານະພາບ LDC. ມັນຍັງໄດ້ຄົ້ນຫາຜົນປະໂຫຍດ ແລະສິ່ງທ້າທາຍທີ່ເປັນໄປໄດ້ ຂອງການຫລຸດພົ້ນອອກຈາກສະຖານະພາບ LDC ຂອງ ສປປ ລາວ. ນອກຈາກນັ້ນ, ມັນຍັງໄດ້ສະເໜີບັນດາທາງເລືອກດ້ານນະໂຍບາຍໃຫ້ແກ່ລັດຖະບານພິຈາລະນາ ເພື່ອຮັບປະກັນການຫລຸດພົ້ນອອກຈາກສະຖານະພາບ LDC ແລະການພັດທະນາແບບຍືນຍົງຂອງປະເທດໄດ້ຢ່າງລາບລື່ນ.

ນະທີ່ນີ້, ຂ້າພະເຈົ້າໃນນາມຫົວໜ້າໂຄງການນີ້ ຂໍສະແດງຄວາມຮູ້ບຸນຄຸນມາຍັງ ທ່ານ ປອ. ສິດທິຣິດ ຣາຊະພົນ ຜູ້ທີ່ເປັນຫົວໜ້າທີມງານຄົ້ນຄວ້າ, ທ່ານ ປອ. Sarthi Acharya ແລະ ທ່ານ ປອ. Anis Chowdhury ສໍາລັບການຄວບຄຸມນໍາພາຂະບວນການສຶກສານີ້ ໄປສູ່ຜົນສໍາເລັດຂັ້ນສຸດທ້າຍຂອງບົດລາຍງານສະບັບນີ້ຢ່າງສົມບູນ. ເປັນສິ່ງທີ່ປັດສະຈາກບໍ່ໄດ້ ຊຶ່ງບັນດາທ່ານເຫຼົ່ານີ້ກໍ່ໄດ້ຮັບການຊ່ວຍເຫຼືອຢ່າງຕັ້ງໜ້າ, ແຂງຂັນ ແລະເອົາໃຈໃສ່ຈາກທ່ານ ນ. ອໍາພາພອນ ໄຊຍະເສນ ຜູ້ທີ່ເປັນຜູ້ຊ່ວຍນັກຄົ້ນຄວ້າ ໃນການເກັບກໍາ, ສັງລວມ ແລະປຸງແຕ່ງຂໍ້ມູນ, ລວມທັງການໃຫ້ຄໍາຄິດຄໍາເຫັນຊີ້ແນະທີ່ມີຄ່າ ຈາກ ທ່ານ ປອ. ລີເບີ ລີບົວປາວ ໂດຍຜ່ານຂະບວນການ ແລະຂັ້ນຕອນຕ່າງໆຂອງການສ້າງບົດລາຍງານສະບັບນີ້. ພິເສດທີ່ສຸດ, ຂໍສະແດງຄວາມຮູ້ບຸນຄຸນ ມາຍັງ ທ່ານ ປອ. ລີເບີ ລີບົວປາວ, ອະດີດຫົວໜ້າໂຄງການ; ແລະ ທີມງານບໍລິຫານ ແລະ ປະສານງານ ຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ສໍາລັບການຊ່ວຍເຫຼືອທີ່ດີເລີດຂອງເຂົາເຈົ້າ ໃນການຄຸ້ມຄອງບໍລິຫານໂຄງການ ສໍາລັບຊ່ວງໄລຍະເວລາອາຍຸຂອງໂຄງການນີ້ທີ່ຜ່ານມາ.

ສະພາທີ່ປຶກສາແຫ່ງຊາດແມ່ນມີບົດບາດທີ່ສໍາຄັນຫຼາຍໃນການໃຫ້ຂໍ້ແນະນໍາຜ່ານຂະບວນການຕ່າງໆໃນການສ້າງບົດລາຍງານສະບັບນີ້, ໂດຍສະເພາະແມ່ນ ທ່ານ ປະທານສະພາທີ່ປຶກສາ ປອ.ບຸນທະວີ ສີສຸພັນທອງ ຜູ້ທີ່ໄດ້ໃຫ້ການແນະນໍາໃນການຄັດເລືອກຫົວຂໍ້, ເນື້ອໃນຂອງບົດສຶກສາ ແລະຂໍ້ສະເໜີແນະຕໍ່ການໂຄງຮ່າງບົດລາຍງານສະບັບນີ້.

ບົດສຶກສານີ້ ແມ່ນໄດ້ຮັບການສະໜັບສະໜູນໂດຍ UNDP ຊຶ່ງເປັນສ່ວນໜຶ່ງທີ່ລວມຢູ່ໃນແຜນງານສະໜັບສະໜູນຊ່ວຍເຫຼືອກະຊວງແຜນການ ແລະການລົງທຶນ (ຜທ). ສະນັ້ນ, ກະຊວງແຜນການ ແລະການລົງທຶນ ຈິ່ງຂໍສະແດງຄວາມຮູ້ບຸນຄຸນມາຍັງ UNDP - Lao PDR ພາຍໃຕ້ການນໍາພາຂອງ ທ່ານ ນ.ກາອາຣິນນາ ອິມໂມເນັນ, ຜູ້ປະສານງານ UN ແລະຜູ້ຕາງໜ້າ UNDP ປະຈໍາ ສປປ ລາວ ສໍາລັບການສະໜັບສະໜູນທາງດ້ານການເງິນ ແລະເຕັກນິກວິຊາການຂອງທ່ານ ແລະອົງການຂອງທ່ານ ຕໍ່ກັບພວກເຮົາ. ສຸດທ້າຍນີ້, ກະຊວງແຜນການ ແລະການລົງທຶນ ຂໍສະແດງຄວາມຂອບໃຈຕໍ່ທັງໝົດອົງການຈັດຕັ້ງຕ່າງໆ ແລະ ບັນດາທ່ານທີ່ໄດ້ໃຫ້ການປະກອບສ່ວນ ແລະ ຊ່ວຍເຫຼືອໃນການກວດແກ້ເນື້ອໃນຂອງບົດລາຍງານສະບັບນີ້.



**ສຸພົດ ດາຣາຈັນທຣາ**

ອະດີດຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງ ຜທ

ຫົວໜ້າໂຄງການ NHDR

# ສາລະບັນ

## ພາກ


ຄໍານໍາ VII
ບົດສະແດງຄວາມຮູ້ບຸນຄຸນ XI
ບົດສະຫລຸບສໍາລັບຜູ້ບໍລິຫານ XVIII
ພາກສະເໜີ: ແນວທາງການພັດທະນາມະນຸດ ເພື່ອການຫລຸດພົ້ນອອກຈາກ ສະຖານະພາບ LDC XXVI
ການເຊື່ອມໂຍງລະຫວ່າງການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC 1
ການພັດທະນາມະນຸດ (HD) ເສັ້ນທາງສໍາລັບການຫລຸດພົ້ນອອກຈາກ LDC 6
ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 5 ຂອງ ສປປ ລາວ 9
ໂຄງສ້າງຂອງບົດລາຍງານ 10
ພາກທີ 1: ສະພາບການພັດທະນາມະນຸດ ຂອງ ສປປ ລາວ 13
ລາຍງານຄວາມຄືບໜ້າຂອງການພັດທະນາມະນຸດ 13
ຄວາມຄືບໜ້າຕ່າງໆໃນການພັດທະນາມະນຸດຂອງແຂວງ 16
ຄວາມຄືບໜ້າໃນການເພີ່ມອໍານາດໃຫ້ແກ່ປະຊາຊົນ: ການສຶກສາ, ສາທາລະນະສຸກ ແລະການໂພຊະນາການ 19
ຄວາມທຸກຍາກ ແລະຄວາມບໍ່ສະເໝີພາບ - ຕາມຊ່ວງໄລຍະເວລາຕ່າງໆ 22
ການເຕີບໂຕທາງເສດຖະກິດ: ແຫຼ່ງທີ່ມາ ແລະວິທີການຕ່າງໆ 27
ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ 30
ພາກທີ 2: ການຫລຸດພົ້ນອອກຈາກສະຖານະພາບ LDC - ການປະເມີນຜົນ 34
ຄວາມຄາດຫວັງກ່ຽວກັບການຫລຸດພົ້ນອອກຈາກ LDC ຂອງ ສປປ ລາວ 35
ຄວາມຄືບໜ້າຂອງການຫລຸດພົ້ນອອກຈາກ (LDC) ຢູ່ໃນ ສປປ ລາວ 36
ການຫລຸດພົ້ນອອກຈາກ LDC: ມີທາງເປັນໄປໄດ້ທີ່ຈະມີການສູນເສຍ ແຕ່ມັນກໍ່ເປັນທາງເລືອກ 43
ບັນດາສິ່ງທ້າທ້າຍຕ່າງໆຂອງການເຊື່ອມໂຍງອາຊຽນ 58
ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ 63
ພາກທີ 3: ການສົ່ງເສີມຄວາມອາດສາມາດດ້ານມະນຸດ 69
ການສຶກສາ 70
ການສາທາລະນະສຸກ 81
ການໂພຊະນາການ 91
ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ 95

**ພາກທີ 4: ການເພີ່ມທະວີພື້ນຖານຜະລິດຕະພາບຂອງການຜະລິດ** **100**

ການພັດທະນາກະສິກຳ 101

ການພັດທະນາອຸດສາຫະກຳ ແລະໂຄງລ່າງພື້ນຖານ: 119

ໄພພິບັດທາງທຳມະຊາດຕ່າງໆ 124

ຂໍ້ສະຫລຸບ ແລະນະໂຍບາຍທີ່ຕາມມາ 127

**ພາກທີ 5: ເສັ້ນທາງເພື່ອກ້າວໄປສູ່ - ການລົງທຶນເຂົ້າໃນການພັດທະນາມະນຸດສຳລັບ ການຫລຸດພົ້ນອອກຈາກສະຖານະພາບ LDC** **133**

ສະພາບ ແລະບັນດາຄຳຖາມທີ່ສຳຄັນຕ່າງໆ 134

ບັນດາທາງເລືອກທາງດ້ານນະໂຍບາຍ 135

ການເຕັ້ນຂ້າມໄປສູ່ຄວາມຫຼາກຫຼາຍ 135

ບັນດາລະບຽບການ ແລະການປະຕິຮູບຕ່າງໆສຳລັບຄວາມຫຼາກຫຼາຍ 137

ການສົ່ງເສີມສະພາບຄ່ອງທາງການເງິນ ສຳລັບການພັດທະນາມະນຸດ 139

ບັນດານະໂຍບາຍເສດຖະກິດມະຫາພາກ ສຳລັບການພັດທະນາມະນຸດ ແລະຄວາມຫຼາກຫຼາຍ 144

ແຜນປະຕິບັດງານການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນ 150

ການຍົກລະດັບຊັບສິນມະນຸດ ດ້ວຍການນຳໃຊ້ການປັນຜົນດ້ານປະຊາກອນ 150

ການເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ເພື່ອຫລຸດຜ່ອນຄວາມບອບບາງຂອງມັນ 151

# ບັນຊີຕາຕະລາງ


**ຕາຕະລາງ 1.1:** HDI ຂອງບັນດາປະເທດ ASEAN, 2014 14

**ຕາຕະລາງ 1.2:** ບັນດາຕົວດັດຊະນີທີ່ກ່ຽວພັນກັບບົດບາດຍິງ-ຊາຍ 15

**ຕາຕະລາງ 1.3:** ການຈັດລຽງອັນດັບ HDI ຂອງແຂວງຕ່າງໆ, 2002-2003 ແລະ 2011-2013 17

**ຕາຕະລາງ 1.4:** ອັດຕາສ່ວນຂອງປະຊາກອນທີ່ທຸກຍາກ ຫຼືຂາດແຄນອາຫານ ໃນປີ 2012-2013 20

**ຕາຕະລາງ 1.5:** ອັດຕາສ່ວນຂອງບັນດາຄົວເຮືອນທີ່ເຂົ້າເຖິງນໍ້າສະອາດ ແລະ ສຸຂະອະນາໄມທີ່ປອດໄພ 21

**ຕາຕະລາງ 1.6:** ອັດຕາຄວາມທຸກຍາກຂອງແຂວງ, 2002-2003 ຫາ 2012-2013 23

**ຕາຕະລາງ 1.7:** ຄ່າຄວາມຍືດຢ່ອນຂອງແຮງງານທີ່ມີຕໍ່ຜົນຜະລິດຂອງຂະແໜງການ, 2007-2008 ຫາ 2012-2013 29

**ຕາຕະລາງ 1.8:** ຜະລິດຕະພາບຂອງແຮງງານຕາມຂະແໜງການ, 2007/2008 ແລະ 2012/2013 29

**ຕາຕະລາງ 2.1:** ຂອບເຂດຄ່າຕົວສຳປະສິດຂອງ HAI ທີ່ກ່ຽວກັບການປ່ຽນແປງຫົວໜ່ວຍຢູ່ໃນສ່ວນປະກອບຕ່າງໆ 39

**ຕາຕະລາງ 2.2:** ດັດຊະນີກ່ຽວກັບແນວໂນ້ມຂອງ ODA ແລະອົງປະກອບຕ່າງໆຂອງມັນ (2010-2011=100) 54

**ຕາຕະລາງ 2.3:** ຕາມແຫຼ່ງການຊ່ວຍເຫຼືອຂອງສາກົນ 54

**ຕາຕະລາງ 3.1:** ກະແສການເຂົ້າຮຽນຊັ້ນປະຖົມ (ອາຍຸ 6-10), 2012-2013 75

**ຕາຕະລາງ 3.2:** ອັດຕາການຕາຍຂອງເດັກອ່ອນ, ເດັກເກີດໃໝ່ ແລະເດັກອາຍຸລຸ່ມ 5 ປີ 82

**ຕາຕະລາງ 3.3:** ອັດຕາການຕາຍຂອງເດັກອ່ອນ, ເດັກເກີດໃໝ່ ແລະເດັກອາຍຸລຸ່ມ 5 ປີ ແບ່ງຕາມຂົງເຂດ,ຄວາມຮັ່ງມີ ແລະ ກຸ່ມຊົນເຜົ່າ, 2010/2011 82

**ຕາຕະລາງ 3.4:** ສະຖານະພາບກ່ຽວກັບສານອາຫານຂອງເດັກອາຍຸລຸ່ມ 5 ປີ, 2010/2011 91

**ຕາຕະລາງ 4.1:** ສະຖິຕິເລື່ອງຂະໜາດຂອງທີ່ດິນ, 2010-2011 102

**ຕາຕະລາງ 4.2:** ອັດຕາສ່ວນກ່ຽວກັບທີ່ດິນປູກເຂົ້າທີ່ໃຊ້ຊົນລະປະທານ 104

**ຕາຕະລາງ 4.3:** ອັດຕາສ່ວນຂອງຊາວກະສິກອນ ທີ່ບອກວ່າການຊົນລະປະທານແມ່ນເປັນບັນຫາຂໍ້ຫຍຸ້ງຍາກທີ່ສຳຄັນສຳລັບເຂົາເຈົ້າ 105

**ຕາຕະລາງ 4.4:** ອັດຕາສ່ວນຂອງຈຳນວນບ້ານທີ່ມີສິ່ງອຳນວຍຄວາມສະດວກດ້ານຊົນລະປະທານຂະໜາດໃຫຍ່ 106

**ຕາຕະລາງ 4.5:** ບັນດາບ້ານທີ່ປູກເຂົ້າໄຮ່ ແລ ຜົນກະທົບຂອງມັນ 125

**ຕາຕະລາງ 4.6:** ຄວາມຄິດເຫັນກ່ຽວກັບເລື່ອງຝົນຕົກຂອງນາຍບ້ານ 126

# ບັນຊີຮູບສະແດງ


| | | |
|---|---|---|
| **ຮູບທີ 0.1:** | ປະເທດດ້ອຍພັດທະນາ – ຮູບພາບປະກອບ | 2 |
| **ຮູບທີ 0.2:** | ບັນດາຕົວຊີ້ບອກກ່ຽວກັບການຈັດປະເພດ LDC ແລະອົງປະກອບຂອງການພັດທະນາມະນຸດ | 8 |
| **ຮູບທີ 1.1:** | ແນວໂນ້ມກ່ຽວກັບ HDI ຂອງ 8 ປະເທດ ASEAN | 15 |
| **ຮູບທີ 1.2:** | ຄ່າ HDI ສະເພາະແຂວງ, 2011-2013 | 17 |
| **ຮູບທີ 1.3:** | ຈຳນວນປະຊາກອນທີ່ຢູ່ລຸ່ມເສັ້ນຄວາມທຸກຍາກ1993-2013,ແບ່ງຕາມແຕ່ລະພາກ(%) | 22 |
| **ຮູບທີ 1.4:** | ອັດຕາຄວາມທຸກຍາກແບ່ງຕາມຄຸນລັກສະນະທາງເສດຖະກິດ ແລະສັງຄົມ (2008, 2013) | 25 |
| **ຮູບທີ 1.5:** | ການປະກອບສ່ວນຂອງຂະແໜງການຢູ່ໃນ GDP ແລະກຳລັງແຮງງານ, 2003-2013 | 28 |
| **ຮູບທີ 2.1:** | ຄວາມຄືບໜ້າກ່ຽວກັບ GNI ຕໍ່ຫົວຄົນ ຂອງ ສປປ ລາວ ຢູ່ໃນການທົບທວນມໍ່ໆມານີ້ (2006-2015) | 37 |
| **ຮູບທີ 2.2:** | GNI ຕໍ່ຫົວຄົນ ຕາມຖານຂໍ້ມູນຂອງທະນາຄານໂລກ (ຕາມວິທີ Atlas), 2000-2020 (ຕາມມູນຄ່າເປັນເງິນໂດລາສະຫະລັດ ໃນປັດຈຸບັນ) | 37 |
| **ຮູບທີ 2.3:** | ມາດຖານຂັ້ນຕໍ່າຂອງ HAI ແລະຄວາມຄືບໜ້າຂອງ ສປປ ລາວ | 38 |
| **ຮູບທີ 2.4:** | ວິວັດທະນາການກ່ຽວກັບ EVI ຂອງ ສປປ ລາວ ໂດຍສົມທຽບກັບມາດຖານຂັ້ນຕໍ່າ | 40 |
| **ຮູບທີ 2.5a:** | ທິດທາງການສົ່ງອອກ ຂອງ ສປປ ລາວ | 45 |
| **ຮູບທີ 2.5b:** | ສ່ວນປະກອບຢູ່ໃນການສົ່ງອອກ ຂອງ ສປປ ລາວ | 45 |
| **ຮູບທີ 2.6:** | ການສົ່ງອອກເຄື່ອງຕັດຫຍິບຈາກ ສປປ ລາວ, 2001-2014 (ພັນໂດລາສະຫະລັດ) | 46 |
| **ຮູບທີ 2.7:** | ແນວໂນ້ມຂອງການສົ່ງອອກກາເຟ (ແລະເຄື່ອງເທດ)  (ພັນໂດລາສະຫະລັດ) | 48 |
| **ຮູບທີ 2.8:** | ແນວໂນ້ມຂອງການສົ່ງອອກລາຍການອາຫານອື່ນໆ (ພັນໂດລາສະຫະລັດ) | 51 |
| **ຮູບທີ 2.9:** | ແນວໂນ້ມຂອງການໄດ້ຮັບ ODA (ລ້ານໂດລາສະຫະລັດ) | 53 |
| **ຮູບທີ 3.1:** | ແນວໂນ້ມຂອງການເຂົ້າໂຮງຮຽນຕາມແຕ່ລະໆດັບຊັ້ນ | 73 |
| **ຮູບທີ 3.2:** | ການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ ຕາມອັດຕາສ່ວນງົບປະມານຂອງລັດ ແລະ GDP | 80 |
| **ຮູບທີ 3.3:** | ອັດຕາການຕາຍຂອງແມ່ | 83 |
| **ຮູບທີ 3.4:** | ອັດຕາຄວາມທຸກຍາກ (2012/2013) ແລະຄວາມສູງຂອງເດັກອາຍຸລຸ່ມ 5 ປີ (2010/2011) | 93 |
| **ຮູບທີ 4.1:** | ອັດຕາສ່ວນກ່ຽວກັບການລົງຢ້ຽມຢາມບ້ານຂອງພະນັກງານສົ່ງເສີມ, 2012/2013 | 110 |
| **ຮູບທີ 4.2:** | ລາຄາເຂົ້າ, ການປ່ຽນແປງຕາມແຕ່ລະເດືອນ ຢູ່ໃນ ແຂວງສະຫວັນນະເຂດ, 2011-2015 | 114 |

**ຮູບທີ 4.3:** ອັດຕາສ່ວນຄົວເຮືອນຊາວກະສິກອນທີ່ຂາຍຜົນຜະລິດຂອງເຂົາເຈົ້າໃຫ້ແກ່ຕະຫຼາດ 131
**ຮູບທີ 5.1:** ການປ່ຽນແປງໂຄງສ້າງຢູ່ໃນອາຊີ 136

# ບັນຊີກ່ອງ

**ກ່ອງທີ 0.1:** ມາດຖານການຫລຸດພົ້ນອອກຈາກ LDC 2
**ກ່ອງທີ 0.2:** ຖະແຫຼງການອິສະຕັນບູນ ແລະແຜນງານປະຕິບັດການ (IDPA), 2011 – ໂດຍຫຍໍ້ 4
**ກ່ອງທີ 0.3:** ການພັດທະນາມະນຸດ 7
**ກ່ອງທີ 0.4:** ການອອກຈາກສະຖານະພາບ LDC 9
**ກ່ອງທີ 2.1:** EVI – ບາງເລື່ອງ 40
**ກ່ອງທີ 2.2:** ຕຳແໜ່ງທີ່ກ່ຽວພັນກັບຂອງຂະໜາດການຫລຸດພົ້ນອອກຈາກ LDC ຂອງ ສປປ ລາວ 42
**ກ່ອງທີ 2.3:** ຜົນປະໂຫຍດຂອງການເປັນ LDC 43
**ກ່ອງທີ 2.4:** ການຍົກລະດັບຂະແໜງການເຄື່ອງນຸ່ງຫົ່ມ ແລະການສ້າງການເຊື່ອມໂຍງພາຍໃນ: ບົດຮຽນຈາກ ປະເທດບັງກະລາເດດ 47
**ກ່ອງທີ 2.5:** ການເຕັ້ນຂ້າມໄປສູ່ກາເຟພິເສດຂອງ ຣ໌ວັນດາ – ບົດຮຽນສຳລັບ ສປປ ລາວ 49
**ກ່ອງທີ 2.6:** ໜີ້ສິນຕ່າງປະເທດຂອງພາກລັດ 52
**ກ່ອງທີ 2.7:** ເລື່ອງຂອງ ODA– ມັນຊ່ວຍບັນລຸເປົ້າໝາຍການພັດທະນາມະນຸດ ແລະສັງຄົມ 56
**ກ່ອງທີ 2.8:** ບັນດາອຸດສາຫະກຳທີ່ເປັນປະເພນີ ແລະບໍ່ເປັນປະເພນີ ຢູ່ໃນ ສປປ ລາວ – ຈຳເປັນຕ້ອງໄດ້ເຮັດໃຫ້ມັນມີຄວາມຫຼາກຫຼາຍຂຶ້ນກວ່າເກົ່າ 60
**ກ່ອງທີ 2.9:** ການສະໜັບສະໜູນການເຕີບໂຕຢູ່ໃນການທ່ອງທ່ຽວ ບົດຮຽນຈາກປະເທດເຄັບເວີດ 61
**ກ່ອງທີ 3.1:** ຊີວິດຂອງເດັກນ້ອຍໃນ 28 ມື້ທຳອິດທີ່ແຮກເກີດ 71
**ກ່ອງທີ 3.2:** ການອອກໂຮງຮຽນຊັ້ນປະຖົມ – ການວິໄຈຫຼາຍຕົວປ່ຽນ ແລະກຳລະນີສຶກສາ 76
**ກ່ອງທີ 3.3:** ເລື່ອງຂອງພາສາ – ການສັງເກດການໃນພື້ນທີ່ 77
**ກ່ອງທີ 3.4:** ບົດລາຍງານກ່ຽວກັບການບໍລິການສາທາລະນະສຸກຢູ່ແຂວງຊຽງຂວາງ ແລະເຊກອງ – ບົດລາຍງານການລົງພາກສະໜາມ 85
**ກ່ອງທີ 3.5:** ການຕັ້ງຖິ່ນຖານບ້ານຢູ່ໃໝ່ ເພື່ອເຮັດໃຫ້ມີການເຊື່ອມຕໍ່ທີ່ດີຂຶ້ນ 87
**ກ່ອງທີ 3.6:** ສຸຂະພາບຂອງແມ່ ແລະເດັກຢູ່ແຂວງຊຽງຂວາງ ແລະເຊກອງ – ບົດລາຍງານການລົງພາກສະໜາມ 87
**ກ່ອງທີ 3.7:** ຂໍ້ມູນສຳລັບການຕິດຕາມ ແລະປະເມີນຜົນ – ປະສົບປະການ ຂອງ ສປປ ລາວ ແລະກຳປູເຈຍ 88
**ກ່ອງທີ 3.8:** ການປະສານການສະໜັບສະໜູນຊ່ວຍເຫຼືອຂອງຜູ້ໃຫ້ທຶນ 90
**ກ່ອງທີ 3.9:** ນ້ຳດື່ມທີ່ປອດໄພ 95

ກ່ອງທີ 4.1: ການລວມທີ່ດິນເຂົ້າກັນເພື່ອໃຫ້ມີຄວາມໝັ້ນຄົງ – ບາງປະສົບປະການຂອງສາກົນ 103
ກ່ອງທີ 4.2: ການປະກັນໄພດ້ານການກະສິກຳ – ປະສົບປະການໃນອິນເດຍ 108
ກ່ອງທີ 4.3: ບາງການປະດິດສ້າງໃໝ່ທີ່ສາມາດຖືກສົ່ງເສີມຜ່ານການແຜ່ຂະຫຍາຍ 112
ກ່ອງທີ 4.4: ການຕະຫຼາດກ່ຽວກັບເຂົ້າ – ເຮັດການສັງເກດການຢູ່ແຂວງສະຫວັນນະເຂດ 116
ກ່ອງທີ 4.5: ບັນດາການຈັດຕັ້ງຂອງຊາວກະສິກອນ - ເຮັດການສັງເກດການຢູ່ແຂວງສະຫວັນນະເຂດ 117
ກ່ອງທີ 4.6: ການຄໍ້າປະກັນດ້ານລາຄາໃຫ້ແກ່ຊາວກະສິກອນ – ປະສົບປະການຂອງສາກົນ ແລະ ສປປ ລາວ 118
ກ່ອງທີ 4.7: ການຫັນເປັນອຸດສາຫະກຳ ແລະທັນສະໄໝ – ວິໄສທັດ 2030 120
ກ່ອງທີ 5.1: ການເປັນຄູ່ຮ່ວມລັດ ແລະເອກະຊົນ – ສປປ ລາວ ຕ້ອງການໆສະໜັບສະໜູນຊ່ວຍເຫຼືອດ້ານການສ້າງຄວາມເຂັ້ມແຂງ 142
ກ່ອງທີ 5.2: ເລື່ອງລາວຂອງສອງປະເທດທີ່ບໍ່ມີທາງອອກສູ່ທະເລ – ສປປ ລາວ ສາມາດຮຽນຮູ້ຫຍັງແດ່? 147

# ບັນຊີເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 0.1: ບັນຊີປະເທດດ້ອຍພັດທະນາ 11
ເອກະສານຊ້ອນທ້າຍ 1.1: ການຄຳນວນຕົວດັດຊະນີ HD 32
ເອກະສານຊ້ອນທ້າຍ 2.1: ມາດຖານສຳລັບການກຳນົດເປັນປະເທດດ້ອຍພັດທະນາບັນດາຄຳນິຍາມ ແລະບັນດາແຫຼ່ງຂໍ້ມູນທີ່ສຳຄັນ 64
ເອກະສານຊ້ອນທ້າຍ 2.2: ໂຄງການຊ່ວຍເຫຼືອເພື່ອການພັດທະນາ – ການສະຖາປານິກ 67
ເອກະສານຊ້ອນທ້າຍ 3.1: ການຄາດຄະເນແບບ Probit (ເດັກນ້ອຍທີ່ມີອາຍຸ 6-15 ປີ) 96
ເອກະສານຊ້ອນທ້າຍ 3.2: ສະຖານະພາບຂອງພະຍາດຕ່າງໆ 98
ເອກະສານຊ້ອນທ້າຍ 3.3: ສິ່ງອຳນວຍຄວາມສະດວກດ້ານການບໍລິການສາທາລະນະສຸກ 99
ເອກະສານຊ້ອນທ້າຍ 4.1: ການວິໄຈທາງດ້ານສະຖານະພາບ 129

# ບົດສະຫລຸບຫຍໍ້ສຳລັບຜູ້ບໍລິຫານ

ຕາມປົກກະຕິແລ້ວ, ການພັດທະນາມະນຸດ (HD) ແມ່ນກ່ຽວກັບເສລີພາບອັນແທ້ຈິງຂອງປະຊາຊົນພົນລະເມືອງທີ່ຈະຕ້ອງຕັດສິນໃຈວ່າເຂົາເຈົ້າຈະເປັນໃຜ, ຈະເຮັດຫຍັງ ແລະຈະດຳລົງຊີວິດຢູ່ຄືແນວໃດ. ການພັດທະນາມະນຸດ ແມ່ນພາກສ່ວນໜຶ່ງທີ່ຈຳເປັນເພື່ອຄວາມອຸດົມສົມບູນຂອງບັນດາສິດທິມະນຸດຂັ້ນພື້ນຖານ ແລະແມ່ນເປົ້າໝາຍສຸດທ້າຍຂອງການພັດທະນາແບບຍືນຍົງ ແລະເພື່ອທຸກຄົນ (ທຸກຄົນໄດ້ຮັບຜົນປະໂຫຍດ).

ບົດລາຍງານການພັດທະນາມະນຸດແຫ່ງຊາດ (NHDR) ເຫຼັ້ມທີ 5 ໄດ້ພິຈາລະນາໃນຫຼາຍແງ່ມູມທີ່ແຕກຕ່າງກັນ ກ່ຽວກັບຄວາມດ້ອຍພັດທະນາຂອງ ສປປ ລາວ ທີ່ຖືກຈັດໃຫ້ຢູ່ໃນກຸ່ມປະເທດດ້ອຍພັດທະນາ (LDC). ຍິ່ງໄປກວ່ານັ້ນ, ມາດຖານຊັບສິນມະນຸດ ແລະບັນດາຕົວຊີ້ບອກຂອງມັນ ທີ່ຖືກນຳໃຊ້ເພື່ອຈັດກຸ່ມປະເທດດ້ອຍພັດທະນາ ນັ້ນແມ່ນເປັນອັນດຽວກັນກັບການຈັດປະເພດລະດັບການພັດທະນາມະນຸດຂອງປະເທດ. ຄວາມຕໍ່ເນື່ອງຂອງການພັດທະນາມະນຸດ, ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ເປັນໜຶ່ງໃນບັນດາເຫດການສຳຄັນຕົ້ນໆທີ່ປະເທດເຮົາຈະຕ້ອງໄດ້ຂ້າມຜ່ານ. ການປັບປຸງແກ້ໄຂກ່ຽວກັບການພັດທະນາມະນຸດ ແມ່ນສິ່ງຈຳເປັນສຳລັບການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງລາບລື່ນ. ເພາະສະນັ້ນ, ຂະບວນການຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ແມ່ນຈະຕ້ອງໄດ້ເບິ່ງຈາກພາບທີ່ໄດ້ສັດສ່ວນຂອງການພັດທະນາມະນຸດນຳ.

## ຜົນໄດ້ຮັບທີ່ສຳຄັນຈາກການສຶກສາ

### ການພັດທະນາມະນຸດ

ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງໜ້າປະທັບໃຈໃນການພັດທະນາມະນຸດ ແລະການຫລຸດຜ່ອນຄວາມທຸກຍາກ. ຄ່າດັດຊະນີການພັດທະນາມະນຸດ ຂອງ ສປປ ລາວ ໄດ້ເພີ່ມຂຶ້ນ ຈາກ 0,340 ໃນປີ 1980 ມາເປັນ 0,575 ໃນປີ 2014. ພ້ອມກັນນັ້ນ, ອັດຕາຄວາມທຸກຍາກກໍ່ຫລຸດລົງຈາກ 46% ໃນສົກປີ 1992-1993 ມາເປັນປະມານ 23% ໃນສົກປີ 2012-2013; ສປປ ລາວ ໄດ້ບັນລຸເປົ້າໝາຍສະຫະສະວັດ (MDG) ດ້ວຍການຫລຸດຜ່ອນອັດຕາຄວາມທຸກຍາກລົງໄດ້ເຄິ່ງໜຶ່ງ. ສຳລັບເປົ້າ MDG ອື່ນໆ ກໍ່ໄດ້ມີຄວາມຄວາມຄືບໜ້າເຊັ່ນດຽວກັນ. ໃນລະຫວ່າງສົກປີ 2002-2003 ຫາ ສົກປີ 2012-2013, ອັດຕາການຮູ້ໜັງສືກໍ່ເພີ່ມຂຶ້ນຈາກປະມານ 75% ມາເປັນ 83%. ອັດຕາການເຂົ້າໂຮງຮຽນສຸດທິໃນຊັ້ນປະຖົມເພີ່ມຂຶ້ນຈາກປະມານ 84% ໃນສົກປີ 2005-2006 ມາເປັນປະມານ 98% ໃນສົກປີ 2013-2014 (ຊຶ່ງໃກ້ຄຽງກັບລະດັບຂອງສາກົນແລ້ວ). ສປປ ລາວ ກຳລັງຢູ່ໃນຊ່ວງໄລຍະການບັນລຸເປົ້າໝາຍ MDG ກ່ຽວກັບການຫລຸດຜ່ອນອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ ຊຶ່ງຫລຸດລົງຈາກ 146/1.000 ຄົນ ໃນປີ 2001 ມາເປັນ 79/1.000 ຄົນ ໃນປີ 2011 (ແລະຄາດວ່າຈະເປັນ 70 /1.000 ຄົນ ໃນປີ 2015). ອັດຕາການຕາຍຂອງເດັກອາຍຸລຸ່ມ 1 ປີ ໄດ້ຫລຸດລົງຈາກ 116/1.000 ຄົນ ມາເປັນ 68/1.000 ຄົນ ໃນຊ່ວງໄລຍະເວລາດຽວກັນ. ອັດຕາການຕາຍຂອງແມ່ກໍ່ຫລຸດລົງຈາກ 796/100.000 ຄົນ ໃນປີ 1995 ມາເປັນ 357/100.000 ຄົນ ໃນປີ 2009 (ແລະຄາດວ່າຈະເປັນ 260/100.000 ຄົນ ໃນປີ 2015).

ເຖິງຢ່າງໃດກໍ່ຕາມ, ຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດຂອງ ສປປ ລາວ ແມ່ນຍັງບໍ່ທັນມີຄວາມສະເໝີພາບກັນ (ແຕກຕ່າງກັນ) ຢູ່ໃນແຕ່ລະເຂດ ແລະລະຫວ່າງກຸ່ມຊົນເຜົ່າຕ່າງໆ. ຄວາມທຸກຍາກ ແລະການຂາດເຂີນ ແມ່ນຍັງມີຫຼາຍຢູ່ໃນເຂດຕ່າງໆ (ຕາມປົກກະຕິແລ້ວແມ່ນຢູ່ໃນເຂດຊົນນະບົດ ແລະຫ່າງໄກສອກຫຼີກ) ທີ່ມີຊຸມຊົນຊົນເຜົ່າອາໄສຢູ່ຫຼາຍ.ຫຼັງຈາກທີ່ອັດຕາຄວາມທຸກຍາກໄດ້ຫລຸດລົງຢ່າງຕໍ່ເນື່ອງຮອດສົກປີ 2007-2008, ແຕ່ຢູ່ໃນເຂດພາກໃຕ້ພັດເພີ່ມຂຶ້ນໃນສົກປີ 2012-2013

ຊຶ່ງສູງກວ່າອັດຕາຄວາມທຸກຍາກຂອງທົ່ວປະເທດເຖິງ 6% ແລະໃນເຂດພາກເໜືອກໍ່ຍັງສູງກວ່າອັດຕາສະເລ່ຍຂອງທົ່ວປະເທດຢູ່ເຊັ່ນດຽວກັນ. ເກືອບເຄິ່ງໜຶ່ງຂອງຈຳນວນປະຊາກອນຢູ່ໃນ ແຂວງສາລະວັນ ແລະຫຼາຍກວ່າ 40% ຂອງຈຳນວນປະຊາກອນຢູ່ໃນ ແຂວງບໍ່ແກ້ວ ແລະ ແຂວງເຊກອງ ແມ່ນດຳລົງຊີວິດຢູ່ໃນຄວາມທຸກຍາກ; ແຕ່ກົງກັນຂ້າມ, ຢູ່ນະຄອນຫຼວງວຽງຈັນພັດຍັງເຫຼືອພຽງແຕ່ 6% ເທົ່ານັ້ນ. ຄວາມທຸກຍາກຢູ່ໃນເຂດຊົນນະບົດແມ່ນເຫັນໄດ້ຢ່າງຈະແຈ້ງວ່າຍັງມີສູງຫຼາຍຊຶ່ງຢູ່ທີ່ 28,6%, ຖ້າສົມທຽບກັບເຂດຕົວເມືອງແມ່ນມີພຽງແຕ່ 10%. ຊ່ອງຫວ່າງນີ້ໄດ້ເພີ່ມຂຶ້ນໃນໄລຍະ 5 ປີຜ່ານມາ ເນື່ອງຈາກຄວາມທຸກຍາກໃນຕົວເມືອງໄດ້ຫລຸດລົງຢ່າງໄວວາ. ຄວາມທຸກຍາກສ່ວນໃຫຍ່ແມ່ນສຸມຢູ່ໃນກຸ່ມຊົນເຜົ່າທີ່ບໍ່ແມ່ນ ລາວ-ໄຕ, ກຸ່ມຜູ້ທີ່ມີການສຶກສາໜ້ອຍ ແລະອີງໃສ່ການກະສິກຳແບບລ້ຽງກຸ້ມຕົນເອງເປັນຫຼັກ ຫຼືກຸ່ມຜູ້ທີ່ວ່າງງານ.

ຜົນຂອງການສຶກສາໄດ້ສະແດງໃຫ້ເຫັນວ່າ ລະດັບຂອງການພັດທະນາມະນຸດຢູ່ໃນບາງເຂດ ແລະຢູ່ໃນລະຫວ່າງກຸ່ມຊົນເຜົ່າທີ່ບໍ່ແມ່ນ ລາວ-ໄຕ ແມ່ນຍັງຕ່ຳ. ຂອບເຂດຄ່າດັດຊະນີການພັດທະນາມະນຸດຂອງແຂວງແມ່ນເລີ່ມຈາກ 0,771 (ນະຄອນຫຼວງວຽງຈັນ) ໄປຈົນເຖິງ 0,286 (ແຂວງຄຳມ່ວນ) ແລະ ຢູ່ທ້າຍທີ່ສຸດໃນບັນຊີຂອງການຈັດລຳດັບແມ່ນ ແຂວງຜົ້ງສາລີ (ພາກເໜືອ), ແຂວງສາລະວັນ (ຢູ່ພາກໃຕ້) ແລະແຂວງຄຳມ່ວນ (ພາກກາງ). ໃນເລື່ອງດັ່ງກ່າວນີ້, ດັດຊະນີການພັດທະນາມະນຸດຂອງແຂວງຈຳປາສັກ ໄດ້ຖືກຈັດລຽງລຳດັບຫລຸດລົງຈາກທີ 5 ໃນປີ 2003 ມາເປັນທີ 9 ໃນປີ 2013; ສຳລັບ ແຂວງບໍ່ແກ້ວ, ຫົວພັນ ແລະຄຳມ່ວນ ແມ່ນຫລຸດລົງຫຼາຍກວ່າ 5 ອັນດັບໃນຊ່ວງໄລຍະເວລາດຽວກັນ ເນື່ອງຈາກຄວາມຄືບໜ້າຂອງດັດຊະນີການພັດທະນາມະນຸດຂອງເຂົາເຈົ້າແມ່ນຊັກຊ້າກວ່າແຂວງອື່ນ. ລວມກຸ່ມຊົນເຜົ່າທີ່ບໍ່ແມ່ນ ລາວ-ໄຕ ແມ່ນກວມເອົາສອງສ່ວນສາມຂອງຈຳນວນປະຊາກອນຜູ້ທີ່ບໍ່ມີການສຶກສາຢ່າງເປັນທາງການ. ອັດຕາການເຂົ້າຮຽນສຸດທິໃນຊັ້ນມັດທະຍົມ ຢູ່ໃນ ສປປ ລາວ ແມ່ນມີປະມານ 50%, ແຕ່ຢູ່ແຂວງຜົ້ງສາລີ ແລະສາລະວັນ ແມ່ນຕ່ຳກວ່ານັ້ນ ຊຶ່ງມີພຽງແຕ່ 31% ແລະທີ່ສູງທີ່ສຸດແມ່ນນະຄອນຫຼວງວຽງຈັນ ຢູ່ທີ່ 82%. ພ້ອມກັນນັ້ນ, ມັນກໍ່ຍັງມີຄວາມບໍ່ເທົ່າທຽມກັນຫຼາຍກ່ຽວກັບເລື່ອງບົດບາດຍິງ-ຊາຍ ທັງຢູ່ໃນຄວາມທຸກຍາກ ແລະລະດັບຂອງການພັດທະນາມະນຸດ ຊຶ່ງມີໜ້ອຍກວ່າ 60% ຂອງຈຳນວນເພດຍິງຢູ່ໃນຄົວເຮືອນທຸກຍາກ ທີ່ສາມາດອ່ານອອກ-ຂຽນໄດ້ ຊຶ່ງຖ້າສົມທຽບກັບເພດຊາຍແລ້ວແມ່ນຫຼາຍກວ່າ 80%.

ການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະຊ່ອງຫວ່າງຂອງຄວາມແຕກຕ່າງກັນ ລວມທັງຄວາມບໍ່ໝັ້ນຄົງທີ່ສູງນັ້ນ ໄດ້ເຮັດໃຫ້ຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດ ຂອງ ສປປ ລາວຊັກຊ້າລົງ. ມີປະຊາຊົນຈຳນວນຫຼາຍທີ່ດຳລົງຊີວິດພຽງແຕ່ຢູ່ເໜືອເສັ້ນຄວາມທຸກຍາກໜ້ອຍໜຶ່ງນັ້ນ ແມ່ນຍັງມີຄວາມບອບບາງ ແລະ ອ່ອນໄຫວຢູ່. ຍັງມີສອງສ່ວນສາມຂອງຈຳນວນປະຊາກອນລາວ ທີ່ດຳລົງຊີວິດ ແລະມີລາຍຮັບໜ້ອຍກວ່າ 2 ໂດລາສະຫະລັດ ຕໍ່ມື້ (PPP) ຊຶ່ງຖ້າສົມທຽບກັບປະເທດໄທ ແລະ ຫວຽດນາມ ແມ່ນເຂົາເຈົ້າມີຜູ້ທຸກຍາກທີ່ສຸດຢູ່ພຽງແຕ່ 10% ຂອງຈຳນວນປະຊາກອນເທົ່ານັ້ນ. ສຳລັບການຊົມໃຊ້ຕໍ່ຫົວຄົນ ຂອງ 60% ໃນຈຳນວນຜູ້ທີ່ຫລຸດພົ້ນອອກຈາກຄວາມທຸກຍາກ ໃນລະຫວ່າງສົກປີ 2007-2008 ແລະ 2012-2013 ແມ່ນມີບໍ່ເກີນ 50% ຂອງເຂົາເຈົ້າ ທີ່ຍັງຢູ່ເໜືອເສັ້ນຄວາມທຸກຍາກ. ປະມານເຄິ່ງຂອງຜູ້ທີ່ທຸກຍາກ ໃນສົກປີ 2012-2013 ແມ່ນເປັນຜູ້ທີ່ບໍ່ທຸກຍາກມາກ່ອນ ໃນສົກປີ 2007-2008 ແລະ ຫຼາຍກວ່າສອງສ່ວນສາມຂອງເຂົາເຈົ້າ ແມ່ນເປັນຜູ້ທີ່ບໍ່ທຸກຍາກໃນບາງດ້ານ ໃນລະຫວ່າງຊ່ວງໄລຍະເວລາ 10 ປີທີ່ຜ່ານມາ. ການທີ່ເຂົາເຈົ້າກັບຄືນເຂົ້າສູ່ຄວາມທຸກຍາກອີກນັ້ນ ແມ່ນຍ້ອນບັນດາຜົນກະທົບຈາກເຫດການຊ໊ອກກະທັນຫັນນ້ອຍໆ (Small shocks) ຕໍ່ກັບການດຳລົງຊີວິດຂອງເຂົາເຈົ້າ ຊຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດຮັກສາສຸຂະພາບ ແລະມີລະດັບການໂພຊະນາການທີ່ດີໄດ້, ລວມທັງໄດ້ມີການເອົາລູກຫຼານຂອງເຂົາເຈົ້າອອກຈາກໂຮງຮຽນອີກດ້ວຍ.

ຄວາມບໍ່ສະເໝີພາບແມ່ນເປັນອັນຕະລາຍຕໍ່ກັບການພັດທະນາມະນຸດ ແລະຂັດຂວາງຄວາມພະຍາຍາມເພື່ອຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ຄວາມບໍ່ສະເໝີພາບດ້ານຄ່າດັດຊະນີການພັດທະນາມະນຸດທີ່ຖືກດັດແກ້ (ແກ້ໄຂ) ແມ່ນເຫັນວ່າຫລຸດລົງຕ່ຳກວ່າເວລາທີ່ບໍ່ຖືກດັດແກ້ໃນຊ່ວງໄລຍະ ສົກປີ 2011-2013 ມາຢູ່ທີ່ 24,4%. ຖ້າຫາກຄວາມບໍ່ສະເໝີພາບຍັງຫາກຖືກຮັກສາໄວ້ຢູ່ໃນລະດັບຂອງ ສົກປີ 1992-1993 ແມ່ນອັດຕາຄວາມທຸກຍາກອາດຈະຫລຸດລົງ ຈາກ 46% ມາເປັນ 17% ຊຶ່ງເຮັດໃຫ້ອັດຕາຄວາມທຸກຍາກຫລຸດລົງເຖິງ 28% ແລະຈະໄວກວ່າທີ່ມັນເປັນຢູ່ຕົວຈິງໃນປັດຈຸບັນນີ້. ພ້ອມກັນນັ້ນ, ຄວາມທຸກຍາກຍັງຄວນອາດຈະຫລຸດລົງໄວກວ່ານັ້ນ ຖ້າຫາກບັນດາຄົວເຮືອນທີ່ມີຄວາມບອບບາງຈຳນວນຫຼາຍ ບໍ່ກັບເຂົ້າສູ່ຄວາມທຸກຍາກຄືນໃໝ່ອີກ.

ອັນນີ້ແມ່ນມັນມີການພົວພັນທີ່ສຳຄັນສຳລັບຄວາມຫວັງ ຂອງ ສປປ ລາວ ເພື່ອຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ຄວາມຫຼົ້ມເຫຼວຂອງການເກັບກ່ຽວພືດຜົນທາງການກະສິກຳ ແລະການເກີດບັນຫາທາງສຸຂະພາບແບບຊ໊ອກກະທັນຫັນນັ້ນ ແມ່ນເປັນຕົວອັນຕະລາຍສຳລັບຄົວເຮືອນທີ່ມີຄວາມບອບບາງ ແລະ ອ່ອນໄຫວ.

## ການຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ (LDC)

ສປປ ລາວ ກຳລັງຢູ່ໃນໄລຍະຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ອັດຕາສະເລ່ຍຂອງລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ພາຍໃນຊ່ວງໄລຍະ 3 ປີ (2011-2013) ຂອງ ສປປ ລາວ ໂດຍປະມານແມ່ນ 1.232 ໂດລາສະຫະລັດ ຕໍ່ຄົນຕໍ່ປີ ຊຶ່ງເທົ່າກັບປະມານ 99% ຂອງມາດຖານການຫລຸດພົ້ນອອກຈາກ LDC (1.242 ໂດລາສະຫະລັດ). ຄາດວ່າ GNI ຕໍ່ຫົວຄົນ ຮອດປີ 2018 ແມ່ນຈະບັນລຸໄດ້ມາດຖານຂອງການຫລຸດພົ້ນອອກຈາກ LDC ແລະຈະເກີນກວ່າລະດັບນັ້ນແນ່ນອນ ໃນປີ 2021, ຖ້າວ່າມາດຖານນັ້ນຫາກບໍ່ມີການປ່ຽນແປງຫຼາຍ. ຖ້າອັດຕາການເຕີບໂຕຂອງ GDP ຫາກສູງດັ່ງທີ່ຄາດໄວ້ໃນແຜນພັດທະນາເສດ ຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ນັ້ນ, ແມ່ນ GNI ຂອງ ສປປ ລາວ ຈະເພີ່ມຂຶ້ນສອງເທົ່າຂອງລາຍໄດ້ຕາມມາດຖານການຫລຸດພົ້ນອອກຈາກ LDC ແລະປະເທດຈະຫລຸດພົ້ນອອກຈາກ LDC ໃນຊຸມປີ 2020, ຖ້າຫາກບໍ່ຄຳນຶງເຖິງວ່າແມ່ນຫຍັງທີ່ຈະເກີດຂຶ້ນກັບດັດຊະນີຊັບສິນມະນຸດ (HAI) ຫຼື ຄວາມບອບບາງທາງເສດຖະກິດ (EVI).

ເຖິງແນວໃດກໍ່ຕາມ, ເສດຖະກິດ ຂອງ ສປປ ລາວ ແມ່ນຍັງຂາດການປັບປ່ຽນ ແລະ ຄວາມຫຼາກຫຼາຍທາງດ້ານໂຄງສ້າງ ຕາມທີ່ຕ້ອງການສຳລັບການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນ. ສ່ວນໃຫຍ່ຂອງການເຕີບໂຕທາງເສດຖະກິດໃນໄລຍະມໍ່ໆມານີ້ ແມ່ນມາຈາກຂະແໜງການກະສິກຳທີ່ມີຜະລິດຕະພາບຕໍ່າ ແລະຂະແໜງຊັບພະຍາກອນທຳມະຊາດທີ່ເຂັ້ມທຶນ. ເຖິງແມ່ນວ່າອັດຕາການປະກອບສ່ວນຂອງຂະແໜງກະສິກຳຢູ່ໃນ GDP ໄດ້ຫລຸດລົງ ຈາກ 41% ມາເປັນ 27%, ແຕ່ວ່າອັດຕາການປະກອບສ່ວນຢູ່ໃນການຈ້າງງານຂອງມັນພັດບໍ່ໄດ້ຫລຸດລົງພໍປານໃດ ຊຶ່ງຍັງຢູ່ທີ່ຫຼາຍກວ່າ 60% ຂອງຊົ່ວໂມງເຮັດວຽກໃນເສດຖະກິດທັງໝົດ. ການເຕີບໂຕຢ່າງໄວວາຂອງຂະແໜງບໍ່ແຮ່, ໄຟຟ້າ ແລະແກັສ ແມ່ນເທົ່າກັບ 1% ຂອງຊົ່ວໂມງເຮັດວຽກທັງໝົດເທົ່ານັ້ນ. ການປະກອບສ່ວນຂອງຂະແໜງການປຸງແຕ່ງຢູ່ໃນຊົ່ວໂມງເຮັດວຽກທັງໝົດ ແມ່ນຍັງຮັກສາຢູ່ທີ່ 8% ໃນລະຫວ່າງປີ 2008-2013. ເພາະສະນັ້ນ, ການເຕີບໂຕ ຂອງ ສປປ ລາວ ຈຶ່ງບໍ່ແມ່ນການເຕີບໂຕທີ່ກວ້າງຂວາງ ແລະເພື່ອທຸກຄົນ.

ໂຄງສ້າງການສົ່ງອອກ ຂອງ ສປປ ລາວ ຍັງແຄບ. ປະມານ 80% ຂອງການສົ່ງອອກ ແມ່ນເປັນຜົນຜະລິດຂັ້ນຕົ້ນ (ວັດຖຸດິບ), ແລະການຜະລິດເສື້ອຜ້າ ແລະ ເກີບ ທີ່ເປັນການຜະລິດທີ່ເຂັ້ມງານນັ້ນ ກໍ່ກວມເອົາພຽງແຕ່ 13% ຂອງການສົ່ງອອກທັງໝົດ ຂອງ ສປປ ລາວ. ສາມປະເທດທີ່ນຳເຂົ້າສິນຄ້າ ຈາກ ສປປ ລາວ ເຊັ່ນ: ໄທ, ຈີນ ແລະ ຫວຽດນາມ ແມ່ນກວມເອົາເກືອບ 70% ຂອງການສົ່ງອອກທັງໝົດ ຂອງ ສປປ ລາວ.

ການເຊື່ອມໂຍງເບື້ອງຫຼັງ ແລະເບື້ອງໜ້າ ຂອງຂະແໜງການປຸງແຕ່ງ ຂອງ ສປປ ລາວ ແມ່ນຍັງອ່ອນແອ. ປະມານ 51% ຂອງມູນຄ່າເພີ່ມຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງທີ່ຖືກສ້າງຂຶ້ນຢູ່ພາຍໃນປະເທດ ແມ່ນປະກອບດ້ວຍປັດໄຈນຳເຂົ້າຕ່າງໆທີ່ມາຈາກຂະແໜງການຂັ້ນຕົ້ນ ຊຶ່ງບໍ່ແມ່ນມາຈາກຂະແໜງການປຸງແຕ່ງດ້ວຍຕົວມັນເອງ, ຂະແໜງກະສິກຳ ຫຼືຂະແໜງການບໍລິການແຕ່ຢ່າງໃດ. ມູນຄ່າເພີ່ມພາຍໃນ (49%) ຢູ່ໃນການສົ່ງອອກຈາກຂະແໜງການປຸງແຕ່ງ ຂອງ ສປປ ລາວ ແມ່ນຕໍ່າກວ່າປະເທດອື່ນ ເປັນຕົ້ນແມ່ນປະເທດ ບັງກະລາເດດ (88%), ກຳປູເຈຍ (76%), ໄທ (80%) ແລະຫວຽດນາມ (64%).

ຄວາມບອບບາງທາງເສດຖະກິດ ຂອງ ສປປ ລາວ ແມ່ນຍັງມີຢູ່ສູງ ເນື່ອງຈາກຍັງອີງໃສ່ຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດຫຼາຍໂພດ. ພື້ນຖານການສົ່ງອອກທີ່ຄັບແຄບຂອງມັນ ແລະ ຄວາມອ່ອນໄຫວດ້ານໄພພິບັດທາງທຳມະຊາດທີ່ມີຢູ່ສູງນັ້ນ ກໍ່ປະກອບສ່ວນເຮັດໃຫ້ມີຄວາມບອບບາງທາງເສດຖະກິດສູງ. EVI ຂອງ ສປປ ລາວ ໃນປີ 2015 ແມ່ນ 36,2 (ເທົ່າກັບ 88% ຂອງມາດຖານ) ຊຶ່ງຊ່ອງວ່າງໃນດ້ານນີ້ແມ່ນຍັງກວ້າງຫຼາຍຖ້າສົມທຽບໃສ່ GNI ແລະ HAI. ສະພາບ ຂອງ ສປປ ລາວ ກໍ່ຄືກັນກັບບັນດາ LDCs ອື່ນໆ ຊຶ່ງ EVI ຂອງ

ສປປ ລາວ ແມ່ນຂີ້ຮ້າຍກວ່າ 2 ປະເທດໃນກຸ່ມ LDCs ແຕ່ກໍ່ຍັງດີກວ່າ 16 ປະເທດທີ່ຢູ່ໃນກຸ່ມດຽວກັນນີ້.

ໃນເມື່ອອີງປະກອບ ແລະທິດທາງການສົ່ງອອກ ຂອງ ສປປ ລາວ ເປັນຄືແນວນີ້, ການຫລຸດພົ້ນອອກຈາກ LDC ຂອງມັນກໍ່ຈະບໍ່ກະທົບກັບກາລະໂອກາດຂອງການຄ້າ ເກີນກວ່າການແຂ່ງຂັນປົກກະຕິທີ່ກຳລັງປະເຊີນຢູ່ໃນປັດຈຸບັນນີ້. ການເຂົ້າເຖິງຕະຫຼາດໃນປະເທດໄທ, ຈີນ ແລະຫວຽດນາມ ຂອງ ສປປ ລາວ ບໍ່ແມ່ນຂຶ້ນກັບສະຖານະພາບການເປັນ LDC ຂອງລາວ. ການສົ່ງອອກອຸດສາຫະກຳປຸງແຕ່ງຂອງລາວ ໂດຍສະເພາະແມ່ນສິນຄ້າທີ່ໄດ້ຮັບການຜ່ອນຜັນພາສີ ທີ່ເຂົ້າສູ່ບັນດາປະເທດທີ່ພັດທະນາແລ້ວແມ່ນຍັງມີຈຳກັດຢູ່. ຂົງເຂດທີ່ສາມາດໄດ້ຮັບຜົນກະທົບນັ້ນ ແມ່ນມີພຽງແຕ່ການຫລຸດລົງຂອງເງິນທຶນຈາກພາຍນອກ ເຊັ່ນ: ODA ແລະ IDA ລວມທັງການຊ່ວຍເຫຼືອທາງດ້ານວິຊາການ. ເຖິງຢ່າງໃດກໍ່ຕາມ, ສຳລັບ ODA ແມ່ນໄດ້ຫລຸດລົງເປັນບາງຄັ້ງຄາວ ແລະບັນດາປະເທດຜູ້ໃຫ້ທຶນສ່ວນຫຼາຍ ກໍ່ຍັງຮັກສາຄຳໝັ້ນສັນຍາຂອງເຂົາເຈົ້າໄວ້ຢູ່ຢ່າງເຕັມສ່ວນ.

## ສິ່ງທ້າທາຍຕ່າງໆ

ທຶນມະນຸດ ຂອງ ສປປ ລາວ ແມ່ນຍັງຕໍ່າຫຼາຍ. ກຳລັງແຮງງານຂອງລາວທີ່ອ່ານອອກ-ຂຽນໄດ້ ແລະຄຳນວນເປັນແມ່ນຍັງມີໜ້ອຍ. ຈາກການປະເມີນລະດັບການອ່ານຂັ້ນຕົ້ນ ຄັ້ງທີ 2 ໄດ້ສະແດງໃຫ້ເຫັນວ່າ ຫຼາຍກວ່າ 30% ຂອງຈຳນວນຜູ້ທີ່ເຄີຍອ່ານໄດ້ ແມ່ນບໍ່ສາມາດອ່ານໄດ້ໃນຄຳດຽວ ແລະລະຫວ່າງຜູ້ທີ່ເຄີຍອ່ານໄດ້ນັ້ນ ແມ່ນມີຢູ່ 57% ທີ່ບໍ່ສາມາດເຂົ້າໃຈໃນຄວາມໝາຍທີ່ເຂົາເຈົ້າໄດ້ອ່ານໄປ. ເລື່ອງພາສາແມ່ນເປັນສິ່ງກີດຂວາງທີ່ສຳຄັນສຳລັບຊຸມຊົນໆເຜົ່າຕ່າງໆ. ທີ່ສຳຄັນແມ່ນ ສປປ ລາວ ຍັງຂາດເຂີນສີມືດ້ານວິຊາຊີບທີ່ສຳນານງານ.

ຈຳນວນກຳລັງແຮງງານ ຂອງ ສປປ ລາວ ແມ່ນມີໜ້ອຍຫຼາຍ. ຈຳນວນກຳລັງແຮງງານຂອງລາວ (ທີ່ມີອາຍຸ 15-64 ປີ) ແມ່ນມີຢູ່ 4,2 ລ້ານຄົນ ຊຶ່ງຄາດຄະເນວ່າຈະເພີ່ມຂຶ້ນເປັນ 5,6 ລ້ານຄົນໃນປີ 2030 ແລະຮອດ 7 ລ້ານຄົນ ໃນປີ 2050. ອີກອັນໜຶ່ງ, ຈຳນວນກຳລັງແຮງງານຂອງກຳປູເຈຍ ແມ່ນຄາດວ່າຈະເພີ່ມຂຶ້ນເປັນ 10 ລ້ານຄົນ ໃນປີ 2015 ແລະ ເປັນ 12,5 ລ້ານຄົນ ໃນປີ 2030 ແລະຮອດ 14,8 ລ້ານຄົນ ໃນປີ 2050. ສຳລັບປະເທດພະມ້າກໍ່ຈະມີກຳລັງແຮງງານເຖິງ 41,7 ລ້ານຄົນ ໃນປີ 2030 ແລະຈະເພີ່ມຂຶ້ນເປັນ 43,1 ລ້ານຄົນ ໃນປີ 2050.

ເພາະສະນັ້ນ, ສປປ ລາວ ຈະບໍ່ສາມາດນຳຕາມເສັ້ນທາງທີ່ມີຄວາມຫຼາກຫຼາຍ ຂອງບັນດາຜູ້ທີ່ເລີ່ມການຫັນເປັນອຸດສາຫະກຳມາກ່ອນຢູ່ໃນຂົງເຂດນີ້ຕັ້ງແຕ່ຕົ້ນ ຊຶ່ງເຂົາເຈົ້າມີກຳລັງແຮງງານຫຼາຍກວ່າທີ່ເສດຖະກິດຕ້ອງການຢູ່ແລ້ວ. ມີຄວາມເປັນໄປໄດ້ທີ່ ສປປ ລາວ ຈະປະເຊີນກັບການແຂ່ງຂັນທີ່ຮຸນແຮງຫຼາຍຂຶ້ນ ຈາກບັນດາປະເທດທີ່ມີແຮງງານເກີນ ຢູ່ໃນການຜະລິດຂັ້ນຕໍ່າປະເພດສຸດທ້າຍ ແລະ ການຜະລິດປະເພດການປະກອບ ຫຼາຍກວ່າທີ່ຜູ້ຫັນເປັນອຸດສາຫະກຳມາກ່ອນໄດ້ປະເຊີນແລ້ວ, ໂດຍສະເພາະແມ່ນຢູ່ໃນເສດຖະກິດທີ່ເປັນສາກົນຫຼາຍຂຶ້ນ. ສປປ ລາວ ບໍ່ສາມາດແຂ່ງຂັນໃນການເຄື່ອນຍ້າຍໄປສູ່ບັນດາກິດຈະກຳທີ່ເຂັ້ມງານໄດ້ເປັນເວລາດົນນານ ເນື່ອງຈາກມີກຳລັງແຮງງານໜ້ອຍ ຊຶ່ງກຳປູເຈຍ, ພະມ້າ ແລະຫວຽດນາມ ທີ່ມີແຮງງານເກີນນັ້ນຈະຢູ່ໃນທ່າໄດ້ປຽບກວ່າ.

ການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ, ສາທາລະນະສຸກ ແລະການປົກປ້ອງທາງສັງຄົມ ຂອງ ສປປ ລາວ ໃນປັດຈຸບັນແມ່ນຍັງຕໍ່າຢູ່ ຖ້າສົມທຽບກັບບັນດາປະເທດໃນກຸ່ມອາຊຽນ ແລະ ປະເທດດ້ອຍພັດທະນາອື່ນໆ ຕົວຢ່າງ: ການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ ຂອງ ສປປ ລາວ ຢູ່ໃນລະຫວ່າງປີ 2005-2014 ແມ່ນມີພຽງແຕ່ 2,8% ຂອງ GDP ຊຶ່ງຕ່າງຈາກຫວຽດນາມ ແມ່ນ 6,3%. ຢູ່ໃນບັນດາປະເທດ LDCs ທີ່ບໍ່ມີທາງອອກສູ່ທະເລ ເຊັ່ນ: ເນປານ ແລະພູຖານ ທີ່ມີຄຸນລັກສະນະທາງດ້ານຊັບພະຍາກອນ ແລະພູມສັນຖານຄ້າຍຄືກັນກັບ ສປປ ລາວ ແມ່ນ 4,7% ແລະ 5,5% ຂອງ GDP ຕາມລຳດັບ; ສຳລັບຄ່າສະເລ່ຍຂອງບັນດາປະເທດ LDCs ແມ່ນ 3,4% ຂອງ GDP; ສ່ວນຄ່າໃຊ້ຈ່າຍເຂົ້າໃນຂະແໜງສາທາລະນະສຸກແມ່ນຄ້າຍຄືກັນທີ່ສຸດ. ຄ່າໃຊ້ຈ່າຍຂອງພາກລັດ ຂອງ ສປປ ລາວ ເຂົ້າໃນຂະແໜງສາທາລະນະສຸກ ໃນປີ 2013 ແມ່ນ 2% ຂອງ GDP ຊຶ່ງຕໍ່າກວ່າຫວຽດນາມ ແລະເນປານຫຼາຍ ໂດຍເຂົາເຈົ້າແມ່ນຢູ່ທີ່ 6% ຂອງ GDP ແລະຄ່າສະເລ່ຍຂອງບັນດາປະເທດ LDCs ແມ່ນຢູ່ທີ່ 5,2%. ການໃຊ້ຈ່າຍຂອງພາກລັດ ຂອງ ສປປ ລາວ ເຂົ້າໃນການປົກປ້ອງທາງສັງຄົມ ໃນປີ 2011 ແມ່ນ 0,9%

ຂອງ GDP ຊຶ່ງຕໍ່າກວ່າ ກໍາປູເຈຍ (1,0%), ພູຖານ (1,2%), ເນປານ (2,1%), ໄທ (3,6%) ແລະຫວຽດນາມ (4,7%).

ການເຊື່ອມໂຍງເຂົ້າກັບປະຊາຄົມເສດຖະກິດ ASEAN (AEC) ອາດຈະສາມາດເຮັດໃຫ້ສະຖານະການມີຄວາມທ້າທາຍຫຼາຍຂຶ້ນ. ການຮຽກຮ້ອງໃຫ້ຫລຸດຜ່ອນພາສີເພື່ອການເຊື່ອມໂຍງຢ່າງເຕັມສ່ວນນັ້ນ ແມ່ນຂ້ອນຂ້າງເປັນໄປໄດ້ທີ່ຈະມີຜົນກະທົບທາງລົບຕໍ່ກັບລາຍຈ່າຍງົບປະມານຂອງລັດຖະບານ. ສປປ ລາວ ໄດ້ຫລຸດຜ່ອນອັດຕາພາສີເປັນ 0% ໄປແລ້ວ 79% ຂອງຈໍານວນສິນຄ້າທັງໝົດທີ່ຢູ່ໃນບັນຊີ ພາຍໃຕ້ຂໍ້ຕົກລົງການຫລຸດຜ່ອນພາສີຂອງອາຊຽນ (Common Effective Preferential Tariff ຫຼື CEPT) ແລະມາຮອດປີ 2015 ຈໍານວນສິນຄ້າທີ່ຢູ່ໃນບັນຊີ 8.879 ລາຍການນັ້ນ ແມ່ນໄດ້ຫລຸດພາສີເປັນ 0% ໄປແລ້ວ. ສປປ ລາວ ຍັງສາມາດປະເຊີນກັບຄວາມກົດດັນໃຫ້ຫລຸດອັດຕາຄ່າອາກອນລາຍໄດ້ນໍາອີກ ເພື່ອດຶງດູດການລົງທຶນຈາກຕ່າງປະເທດ. ຄວາມຫວັງສໍາລັບທີ່ຈະຊົດເຊີຍໃຫ້ແກ່ລາຍຮັບທີ່ຖືກສູນເສຍໄປນັ້ນ ແມ່ນການຂະຫຍາຍອາກອນມູນຄ່າເພີ່ມ (VAT) ແຕ່ກໍ່ຍັງຈໍາກັດຢູ່ ເນື່ອງຈາກສ່ວນຫຼາຍຍັງແມ່ນການຜະລິດກະສິກໍາ ແລະກິດຈະກໍາທຸລະກິດທີ່ບໍ່ເປັນທາງການ. VAT ກໍ່ຍັງຈະໄດ້ຫລຸດລົງຕາມລໍາດັບ ແລະ ການແຜ່ຂະຫຍາຍຂອງມັນກໍ່ອາດສາມາດເຮັດໃຫ້ຄວາມບໍ່ສະເໝີພາບຂີ້ຮ້າຍລົງ. ການຫລຸດອາກອນລາຍໄດ້ ອາດຈະສົ່ງຜົນຕໍ່ກັບການສູນເສຍລາຍໄດ້ສຸດທິ ຖ້າການດຶງດູດການລົງທຶນຈາກຕ່າງປະເທດຫາກປະສົບຄວາມຫຼົ້ມເຫຼວ. ດ້ວຍການຫລຸດຜ່ອນພາສີນັ້ນ, ສປປ ລາວ ກໍ່ຍັງບໍ່ທັນມີບັນດາເຄື່ອງມືນະໂຍບາຍເພື່ອປົກປ້ອງອຸດສາຫະກໍາການຜະລິດທີ່ຍັງອ່ອນນ້ອຍຂອງຕົນເທື່ອ.

ສໍາລັບ AEC ແມ່ນມີຄວາມເປັນໄປໄດ້ຫຼາຍທີ່ຈະນໍາມາຊຶ່ງ "ການເຊື່ອມໂຍງການຜະລິດ" ຫຼາຍກວ່າການເຊື່ອມໂຍງການຕະຫຼາດ. ການຄ້າ ແລະການລົງທຶນພາຍໃນ ASEAN ເອງກໍ່ຍັງມີຄວາມຈໍາກັດຫຼາຍຊຶ່ງປະກອບສ່ວນພຽງແຕ່ປະມານ 25% ຂອງຍອດການຄ້າທັງໝົດ ແລະ 16% ຂອງລວມຍອດ FDI. ການສົ່ງອອກແລະນໍາເຂົ້າສ່ວນໃຫຍ່ ຂອງ ASEAN ແມ່ນເຄື່ອງອາໄຫຼ່, ແລະສ່ວນປະກອບຕ່າງໆຂອງເຄື່ອງເອເລັກໂຕຣນິກແລະຜະລິດຕະພັນກ່ຽວກັບລົດໂອໂຕ. ດັ່ງນັ້ນ, ການເຊື່ອມໂຍງຕະຫຼາດພາຍໃນ ASEAN ແມ່ນບໍ່ເປັນຕົວຂັບເຄື່ອນທີ່ສໍາຄັນຂອງການເຊື່ອມໂຍງ ASEAN. FDI ຈໍານວນຫຼາຍ ແມ່ນລົງທຶນເຂົ້າໃນຂະແໜງຊັບພະຍາກອນທໍາມະຊາດ ແລະມີສ່ວນຮ່ວມຢູ່ໃນຕ່ອງໂສ້ມູນຄ່າສຸດທ້າຍຂອງໂລກ/ຂົງເຂດຕໍ່າຫຼາຍ ຊຶ່ງຈະບໍ່ໃຫ້ຜົນປະໂຫຍດຕໍ່ສປປ ລາວ ໃນໄລຍະຍາວຫຼາຍປານໃດ. ສະນັ້ນ, ສປປ ລາວ ຈະຕ້ອງໃຫ້ສາມາດເຂົ້າຮ່ວມໃນຕ່ອງໂສ້ມູນຄ່າສຸດທ້າຍນັ້ນສູງຂຶ້ນ ໂດຍຈໍາເປັນຕ້ອງໄດ້ເພີ່ມການສະສົມທຶນມະນຸດ, ປັບປຸງການເຊື່ອມຕໍ່ ແລະເພີ່ມທະວີຄວາມເຂັ້ມແຂງດ້ານສະຖາບັນ, ລວມທັງຄວາມສາມາດຕ່າງໆດ້ານການບໍລິຫານຄຸ້ມຄອງ.

## ກາລະໂອກາດຕ່າງໆ

ສປປ ລາວ ມີກໍາລັງແຮງງານທີ່ໜຸ່ມແໜ້ນຫຼາຍຂຶ້ນຢູ່ໃນຂົງເຂດນີ້ ແລະຄາດວ່າຈະໄດ້ຮັບປະໂຫຍດຈາກການປ່ຽນແປງໂຄງສ້າງດ້ານປະຊາກອນນີ້. ຈໍານວນປະຊາກອນທີ່ຢູ່ໃນໄວອອກແຮງງານ (15-64 ປີ) ຂອງລາວຄາດວ່າຈະເພີ່ມຂຶ້ນເປັນ 69% ຂອງຈໍານວນປະຊາກອນທັງໝົດ ໃນປີ 2050 ຊຶ່ງກົງກັນຂ້າມກັບກໍາປູເຈຍ ຄື: 65%, ຫວຽດນາມ 62% ແລະພະມ້າ 68%.

ການເຊື່ອມໂຍງທາງເສດຖະກິດຂອງ ASEAN ຈະຕ້ອງສ້າງກາລະໂອກາດຕ່າງໆໃຫ້ແກ່ ສປປ ລາວ ຫຼາຍຂຶ້ນ ສໍາລັບການເຕີບໂຕໃນຫຼາກຫຼາຍທິດທາງ. ຢູ່ໃນຂອບການຮ່ວມມືໃນຂົງເຂດ ASEAN (ARC) ນັ້ນ, ແມ່ນຈະຕ້ອງໄດ້ມີການຂະຫຍາຍໂຄງລ່າງພື້ນຖານ ແລະຕ່ອງໂສ້ມູນຄ່າຂອງຂົງເຂດ. ໃນລະຫວ່າງຊຸມປີຜ່ານມານີ້ໆນີ້ ສປປ ລາວ ສາມາດດຶງດູດບັນດາບໍລິສັດຂອງນາໆຊາດໄດ້ຈໍານວນໜຶ່ງ ຊຶ່ງສົ່ງຜົນເຮັດໃຫ້ມີການເຕີບໂຕໄວຢູ່ໃນຂະແໜງການປະກອບ ແລະ ອາໄຫຼ່ເຄື່ອງມືຕ່າງໆ (ເຊັ່ນ: ອາໄຫຼ່ກ້ອງຖ່າຍຮູບ), ນັ້ນສະແດງໃຫ້ເຫັນວ່າ ທ່າແຮງຂອງສປປ ລາວ ໃນການເຂົ້າຮ່ວມຕ່ອງໂສ້ມູນຄ່າຂອງຂົງເຂດ ແລະຂອງໂລກໄດ້ເລີ່ມມີຜົນແລ້ວ.

ສປປ ລາວ ຍັງສາມາດໄດ້ຮັບຜົນປະໂຫຍດຈາກທ່າແຮງໄດ້ປຽບໂດຍສົມທຽບຂອງຕົນ ຈາກການເຊື່ອມໂຍງຂອງ AEC ຢູ່ໃນຫຼາຍຂົງເຂດ. ຢູ່ໃນຂົງເຂດເຫຼົ່ານັ້ນແມ່ນລວມມີ: ການປຸງແຕ່ງກະສິກໍາ (ຈາກການປະກົດຕົວ

ຂຶ້ນຂອງສ່ວນເກີນດ້ານກະສິກຳ ເຊັ່ນ: ຊາດື່ມ ແລະ ກາເຟ); ມູນຄ່າເພີ່ມທາງວັດທະນະທຳ ແລະການທ່ອງທ່ຽວນິເວດ, ຜ້າພິມທີ່ເຮັດດ້ວຍໄໝ ແລະຂົນສັດ, ພືດກະສິກຳປອດສານພິດ, ຜະລິດຕະພັນໄມ້ຂັ້ນສອງທີ່ມີມູນຄ່າເພີ່ມສູງ ຊຶ່ງລັດຖະບານ ແຫ່ງ ສປປ ລາວ ໄດ້ກຳນົດໄວ້ແລ້ວ.

ດ້ວຍການເຄື່ອນຍ້າຍຢ່າງເສລີຂອງແຮງງານທີ່ມີສີມື ແມ່ນມີຄວາມເປັນໄປໄດ້ທີ່ແຮງງານທີ່ມີສີມືຈະເຂົ້າມາສູ່ ສປປ ລາວ ຊຶ່ງຈະຊ່ວຍຖ່າຍໂອນເຕັກໂນໂລຢີ/ສີມືໃຫ້ແກ່ແຮງງານລາວ. ມັນຍັງມີກາລະໂອກາດຕ່າງໆສຳ ສປປ ລາວ ເພື່ອຍົກລະດັບຄຸນນະພາບຂອງການສຶກສາ ໂດຍຜ່ານການແລກປ່ຽນ ແລະການເປັນຄູ່ຮ່ວມມືກັນໃນການຈັດການຕ່າງໆກັບບັນດາສະຖາບັນການສຶກສາທີ່ໄດ້ມາດຕະຖານສູງຂອງບັນດາປະເທດ ASEAN ທີ່ມີຄວາມກ້າວໜ້າກວ່າ ເຊັ່ນ: ສິງກະໂປ ແລະມາເລເຊຍ.

## ບັນດາທາງເລືອກດ້ານນະໂຍບາຍ

ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ເລັ່ງປັບປຸງດ້ານຊັບສິນມະນຸດ. ດັດຊະນີຊັບສິນມະນຸດ ຂອງ ສປປ ລາວ ໃນປີ 2015 ແມ່ນຢູ່ທີ່ປະມານ 92% ຂອງມາດຖານຂັ້ນຕ່ຳໃນການຫລຸດພົ້ນອອກຈາກ LDC. ການວິໄຈກ່ຽວກັບການປະກອບສ່ວນຕ່າງໆດ້ານສ່ວນເພີ່ມຂອງບັນດາອົງປະກອບສ່ວນບຸກຄົນກ່ຽວກັບ HAI ນັ້ນ ແມ່ນສະແດງໃຫ້ເຫັນວ່າ ການເພີ່ມຂຶ້ນສູງສຸດຢູ່ໃນ HAI ຈະເກີດຂຶ້ນໄດ້, ຖ້າສະຖານະພາບການໂພຊະນາການຂອງປະຊາຊົນຫາກເພີ່ມຂຶ້ນ, ຕາມມາດ້ວຍການເພີ່ມຂຶ້ນຂອງອັດຕາການຮູ້ໜັງສື, ຕໍ່ຈາກນັ້ນກໍ່ແມ່ນການເພີ່ມຂຶ້ນຂອງການເຂົ້າຮຽນໃນຊັ້ນມັດທະຍົມ ແລະສຸດທ້າຍກໍ່ແມ່ນການຫລຸດລົງຂອງອັດຕາການຕາຍຂອງເດັກອາຍຸລຸ່ມ 5 ປີ ຊຶ່ງທັງໝົດນີ້ແມ່ນເປັນອົງປະກອບຢູ່ໃນ HDI.

ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ຢ່າງຮີບດ່ວນຕໍ່ກັບການຫລຸດຜ່ອນຄວາມບອບບາງທາງເສດຖະກິດຂອງຕົນ. ການວິໄຈກ່ຽວກັບ EVI ທີ່ໄດ້ແຍກອອກເປັນສ່ວນນ້ອຍໆນັ້ນສະແດງໃຫ້ເຫັນວ່າ ຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະການຫລຸດຜ່ອນຄວາມກົດດັນຂອງປະຊາຊົນຕໍ່ກັບໄພພິບັດທາງທຳມະຊາດຕ່າງໆແມ່ນມີຄວາມສຳຄັນຫຼາຍສຳລັບການເຮັດໃຫ້ຄ່າ EVI ຫລຸດຕ່ຳລົງ. ການປົກປ້ອງທາງສັງຄົມແມ່ນມີຄວາມສຳຄັນຫຼາຍຕໍ່ກັບບັນດາຜົນຮັບຂອງການປົກປ້ອງການພັດທະນາມະນຸດ ຈາກເຫດການທີ່ເກີດຊ໊ອກກະທັນຫັນ ແລະຄາດຄິດບໍ່ເຖິງ. ຈຸດເລີ່ມຕົ້ນທີ່ດີແມ່ນຕ້ອງໄດ້ມີການພິຈາລະນາບັນດາຂໍ້ສະເໜີແນະຢ່າງຮີບດ່ວນ ດ້ວຍການອີງໃສ່ການປະເມີນການສົນທະນາລະດັບຊາດກ່ຽວກັບການປົກປ້ອງທາງສັງຄົມທີ່ດຳເນີນການພາຍໃຕ້ການຄວບຄຸມດູແລຂອງຄະນະກຳມະການຮ່າງຍຸດທະສາດການປົກປ້ອງທາງສັງຄົມແຫ່ງຊາດຂອງລັດຖະບານ.

ເພາະສະນັ້ນ, ສປປ ລາວ ຈຳເປັນຈະຕ້ອງໄດ້ກະໂດດຂ້າມ ແລະສ້າງທ່າແຮງໄດ້ປຽບໂດຍສົມທຽບຢູ່ໃນບັນດາຜະລິດຕະພັນຊ່ອງວ່າງພິເສດທີ່ມີມູນຄ່າສູງ. ອັນນີ້ແມ່ນມີຄວາມຈຳເປັນຕໍ່ກັບການດຶງເອົາກຳລັງແຮງງານທີ່ມີຢູ່ໃນຂະແໜງກະສິກຳຢ່າງຫຼວງຫຼາຍນັ້ນ ເຂົ້າສູ່ບັນດາກິດຈະກຳທີ່ບໍ່ແມ່ນການກະສິກຳ ແລະມີຜະລິດຕະພາບສູງຢູ່ໃນຂະແໜງອຸດສາຫະກຳການຜະລິດ ແລະການບໍລິການຢ່າງໄວວາ, ແລະທັງຈະຕ້ອງໄດ້ຍົກສູງຜະລິດຕະພາບຂອງຂະແໜງກະສິກຳທີ່ຄົນທຸກຍາກສ່ວນຫຼາຍດຳລົງຊີວິດ ແລະເຮັດວຽກຢູ່ໃຫ້ສູງຂຶ້ນ. ການເຊື່ອມໂຍງເບື້ອງຫຼັງ ແລະເບື້ອງໜ້າ ລະຫວ່າງຂະແໜງອຸດສາຫະກຳການຜະລິດ, ກະສິກຳ ແລະການບໍລິການ ດ້ວຍການເຊື່ອມໂຍງ SMEs ເຂົ້າກັບຕ່ອງໂສ້ການສະໜອງ ແລະເຄືອຂ່າຍການຜະລິດແມ່ນມີຄວາມສຳຄັນຫຼາຍ. ການປັບປຸງການເຂົ້າເຖິງການບໍລິການໆເງິນທີ່ມີຕົ້ນທຶນຕ່ຳກໍ່ມີຄວາມສຳຄັນຫຼາຍສຳລັບ SMEs.

ບັນດາມາດຕະການຕ່າງໆສຳລັບການເພີ່ມຜະລິດຕະພາບຂອງຂະແໜງການກະສິກຳໃຫ້ສູງຂຶ້ນກໍ່ມີຄວາມຈຳເປັນເຊັ່ນກັນ. ສິ່ງຕ່າງໆເຫຼົ່ານີ້ແມ່ນລວມທັງການເຮັດໃຫ້ມີການຖືສິດຄອບຄອງທີ່ດິນທີ່ມີຄວາມໝັ້ນຄົງເພື່ອໃຫ້ສາມາດຫັນເປັນເສດຖະກິດໄດ້ດ້ວຍການນຳໃຊ້ເຕັກໂນໂລຢີສະໄໝໃໝ່, ການນຳໃຊ້ຊົນລະປະທານທີ່ເໝາະສົມສຳລັບພູມມີປະເທດ, ການສະໜອງການບໍລິການໆເງິນທີ່ມີຕົ້ນທຶນຕ່ຳ, ການປັບປຸງການບໍລິການຕ່າງໆ ແລະການເຊື່ອມໂຍງຊາວກະສິກອນເຂົ້າກັບຕະຫຼາດ.

ການເງິນເພື່ອທຸກຄົນແມ່ນມີບົດບາດສຳຄັນສຳລັບ SMEs ແລະການກະສິກຳ. ໃນປີ 2014 ແມ່ນມີ

ພຽງແຕ່ 32% ຂອງ SMEs ທີ່ໄດ້ຮັບສິນເຊື່ອ ຫຼືຍັງມີເງິນກູ້ທີ່ຍັງຈ່າຍຄືນບໍ່ທັນໝົດຈາກຂະແໜງການເງິນທີ່ເປັນທາງການ. ການເງິນເພື່ອທຸກຄົນແມ່ນບໍ່ສາມາດໃຫ້ເປັນເງິນຊ່ວຍເຫຼືອລ້າໄດ້ ເນື່ອງຈາກສະຖາບັນການເງິນຕ່າງໆກໍ່ຕ້ອງໄດ້ສ້າງລາຍໄດ້ ແລະກຳໄລຂອງຕົນເອງເພື່ອການຢູ່ຫຼອດ. ຄືດັ່ງປະສົບປະການທີ່ສະແດງໃຫ້ເຫັນຢູ່ໃນປະເທດບັງກະລາເດດ, ອິນເດຍ ແລະຟີລິບປິນ, ການລວມບັນດາສິ່ງຈູງໃຈເຂົ້າກັນ, ການມີລະບຽບການທີ່ເຂັ້ມງວດ ແລະບັນດາສະຖາບັນການເງິນສະເພາະຂອງລັດ ແມ່ນມັນມີຄວາມຈຳເປັນທີ່ຈະຕ້ອງສົ່ງເສີມການເຂົ້າເຖິງການເງິນຂອງ SMEs ແລະຊາວກະສິກອນ.

ສປປ ລາວ ມີຄວາມຈຳເປັນຈະຕ້ອງໄດ້ມີບັນດາລະບຽບການທີ່ເຂັ້ມງວດເພື່ອຮັບປະກັນການແຂ່ງຂັນ, ຄວາມໝັ້ນຄົງຂອງຂະແໜງການເງິນ ແລະການເງິນເພື່ອທຸກຄົນ, ລວມທັງຈະຕ້ອງມີການປ້ອງກັນການເຊື່ອມໂຊມດ້ານສິ່ງແວດລ້ອມ. ແຕ່ວ່າສິ່ງເຫຼົ່ານີ້ຈະຕ້ອງບໍ່ເປັນການຂົ່ມຂູ່ທີ່ເຮັດໃຫ້ການລົງທຶນຂອງພາກເອກະຊົນມີຄວາມທໍ້ຖອຍ ຫຼືສົ່ງເສີມທັດສະນະຄະຕິທີ່ເປັນຮອຍຮົ່ວ.

ສປປ ລາວ ຍັງອີງໃສ່ເຄື່ອງມືນະໂຍບາຍແບບກວ້າງໆສຳລັບຄວາມຫຼາກຫຼາຍທາງເສດຖະກິດ. ມັນມີຄວາມຈຳເປັນທີ່ຈະຕ້ອງມີສະຖາບັນ ຫຼືລະບຽບການ, ການປົກຄອງ ແລະຄຸ້ມຄອງບໍລິຫານ, ການຄົ້ນຄວ້າ, ຄວາມເຂັ້ມແຂງໃນການປະດິດສ້າງ ແລະກຳລັງແຮງງານທີ່ດີກວ່ານີ້. ອັນນີ້, ແມ່ນຮຽກຮ້ອງໃຫ້ມີການລົງທຶນເຂົ້າໃສ່ການສຶກສາທີ່ມີຄຸນນະພາບ, ການພັດທະນາສີມືແຮງງານ ແລະການດູແລສຸຂະພາບທີ່ດີຂຶ້ນ. ຈຸດຂອງການເລີ່ມຕົ້ນກ່ຽວກັບວິທີການນີ້ແມ່ນຕ້ອງປັບປຸງການຮຽນຮູ້ໜັງສື ແລະ ການຮູ້ຄຳນວນ, ລວມທັງລະດັບຂອງການໂພຊະນາການ ສຳລັບການເພີ່ມຂຶ້ນຂອງກຳລັງແຮງງານ.

ສປປ ລາວ ຍັງຈຳເປັນຕ້ອງໄດ້ສ້າງສີມືດ້ານເຕັກນິກຕ່າງໆທີ່ກ່ຽວຂ້ອງກັບວຽກງານສະເພາະ. ບົດບາດທີ່ເປັນຍຸດທະສາດສຳຄັນຂອງລັດຖະບານໃນການພັດທະນາສີມືດ້ານວິຊາຊີບແມ່ນມີຄວາມຈຳເປັນທີ່ຈະຕ້ອງໄດ້ພັດທະນາບັນດານະໂຍບາຍຕ່າງໆ, ວາງບັນດາມາດຕະຖານ, ລົງທຶນໃສ່ບັນດາເຄື່ອງມືການຝຶກອົບຮົມ ແລະຄູສອນ, ປັບປຸງຂໍ້ມູນຂ່າວສານສາທາລະນະກ່ຽວກັບລະບົບການຝຶກອົບຮົມ ແລະດຳເນີນການປະເມີນຜົນການຝຶກອົບຮົມຕ່າງໆ. ບັນດາບົດຮຽນທີ່ສຳຄັນແມ່ນສາມາດຮຽນຮູ້ໄດ້ຈາກບັນດາປະເທດທີ່ມີຄວາມກ້າວໜ້າກວ່າຢູ່ໃນກຸ່ມອາຊຽນ (ເຊັ່ນ: ສິງກະໂປ) ກ່ຽວກັບວ່າຈະດຶງເອົາຂະແໜງການເອກະຊົນເຂົ້າຮ່ວມໃນການຝຶກງານ ແລະການຝຶກອົບຮົມໃນໜ້າວຽກໄດ້ຄືແນວໃດ.

ສປປ ລາວ ຈະຕ້ອງຮັບປະກັນໃຫ້ໂຄງສ້າງນະໂຍບາຍເສດຖະກິດມະຫາພາກຂອງປະເທດມີຄວາມຕ້ານທານຢ່າງໝັ້ນຄົງ. ອັນນີ້ແມ່ນມີຄວາມສຳຄັນຫຼາຍເພື່ອຫລຸດຜ່ອນຜົນກະທົບຂອງບັນຫາເສດຖະກິດທີ່ຊ໊ອກມາຈາກພາຍນອກ ແລະເພື່ອປົກປ້ອງຜົນໄດ້ຮັບຕ່າງໆຂອງການພັດທະນາມະນຸດ. ເລື່ອງການເງິນເພື່ອທຸກຄົນນັ້ນກໍ່ມີຄວາມສຳຄັນຕໍ່ກັບການບັນເທົາຄວາມບອບບາງທາງເສດຖະກິດຂອງຄົວເຮືອນ. ໃນປີ 2014 ຜ່ານມາ ແມ່ນມີພຽງແຕ່ 7% ເທົ່ານັ້ນທີ່ໄດ້ຮັບກູ້ເງິນຈາກຂະແໜງການເງິນທີ່ເປັນທາງການ. ການຫັນເປັນດີຈີຕອນຂອງຂະແໜງການເງິນ ແລະເຕັກໂນໂລຢີໂທລະສັບມືຖື ແມ່ນສາມາດປະກອບສ່ວນທີ່ສຳຄັນຕໍ່ກັບເລື່ອງນີ້ດັ່ງບົດຮຽນຂອງປະເທດບັງກະລາເດດທີ່ໄດ້ສະແດງໃຫ້ເຫັນມາແລ້ວ. ມັນຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ປັບປຸງການອ່ານ, ການຂຽນ ແລະ ການຄຳນວນທາງການເງິນນຳອີກ, ໂດຍສະເພາະແມ່ນສຳລັບຜູ້ທີ່ທຸກຍາກ.

ສປປ ລາວ ຈຳເປັນຈະຕ້ອງໄດ້ເພີ່ມທະວີຄວາມພະຍາຍາມໃນການລະດົມຊັບພະຍາກອນພາຍໃນ, ລວມທັງການຄຸ້ມຄອງໜີ້ສິນທີ່ດີຂຶ້ນ, ຄວາມສາມາດສ້າງກຳໄລຂອງລັດວິສາຫະກິດ ແລະການນຳໃຊ້ຊັບພະຍາກອນຢ່າງສະຫຼຽວສະຫຼາດ. ອັນນີ້ແມ່ນມີຄວາມຈຳເປັນເພື່ອໃຫ້ມີຄວາມສາມາດລົງທຶນເຂົ້າໃນການພັດທະນາມະນຸດ ແລະໂຄງລ່າງພື້ນຖານເພື່ອສະໜັບສະໜູນຄວາມຫຼາກຫຼາຍທາງເສດຖະກິດໃນຂະນະທີ່ລາຍໄດ້ຈາກພາສີສູນເສຍໄປ ແລະການຫລຸດລົງຂອງການເຂົ້າເຖິງ (ຂອງການຊ່ວຍເຫຼືອ) ການເງິນຈາກພາຍນອກ.

ສປປ ລາວ ຕ້ອງນຳໃຊ້ຂະແໜງຊັບພະຍາກອນຂອງຕົນແບບຍືນຍົງ ເພື່ອຫລຸດຜ່ອນຄວາມບອບບາງດ້ານໄພພິບັດທາງທຳມະຊາດ. ເພາະສະນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ ສປປ ລາວ ຕ້ອງໄດ້ເພີ່ມທະວີຄວາມອາດສາມາດຂອງຕົນໃນການປະເມີນຜົນກະທົບດ້ານສິ່ງແວດລ້ອມຂອງບັນດາໂຄງການບໍ່ແຮ່ ແລະໄຟຟ້ານໍ້າຕົກ.

ສປປ ລາວ ຈໍາເປັນຈະຕ້ອງໄດ້ເພີ່ມທະວີການພົວພັນຮ່ວມມືຢ່າງເລິກເຊິ່ງກັບບັນດາຄູ່ຮ່ວມໃນກຸ່ມອາຊຽນຂອງຕົນ ແລະກັບ ສປ ຈີນ. ອັນນີ້ແມ່ນຄວາມຮຽກຮ້ອງຕ້ອງການເພື່ອຊົດເຊີຍໃຫ້ແກ່ການຫລຸດລົງຂອງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການໃດໜຶ່ງຈາກຄູ່ຮ່ວມພັດທະນາ ພາຍຫຼັງທີ່ປະເທດໄດ້ຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະເພີ່ມທະວີການຮ່ວມມືແບບ ໃຕ້-ໃຕ້ (ການຮ່ວມມືກັບບັນດາປະເທດກໍາລັງພັດທະນາຄືກັນ) ໃຫ້ເຂັ້ມແຂງຂຶ້ນກວ່າເກົ່ານັ້ນແມ່ນສິ່ງທີ່ຈະຕ້ອງໄດ້ເຮັດຢ່າງຈິງຈັງ.

ການເຊື່ອມໂຍງນະໂຍບາຍເຂົ້າກັບການຈັດຕັ້ງປະຕິບັດຕົວຈິງນັ້ນ ແມ່ນສິ່ງຈໍາເປັນສໍາລັບການຍົກລະດັບປະສິດທິພາບການໃຊ້ຈ່າຍຂອງພາກລັດ ແລະການເພີ່ມບັນດາຜົນຈາກການຮ່ວມມືກັນໃຫ້ຫຼາຍທີ່ສຸດ. ການສຶກສາ, ສາທາລະນາສຸກ, ການໂພຊະນາການ ແລະການປົກປ້ອງທາງສັງຄົມແມ່ນເປັນການເຊື່ອມໂຍງກັນພາຍໃນ ຊຶ່ງການປັບປຸງໃນຂົງເຂດໜຶ່ງໃນນັ້ນມັນກໍ່ຈະປະກອບສ່ວນຕໍ່ການປັບປຸງຢູ່ໃນຂົງເຂດອື່ນນໍາອີກ.

ການສະໜັບສະໜູນການປະສານງານຂອງຜູ້ໃຫ້ທຶນແມ່ນມີຄວາມສໍາຄັນສໍາລັບການໃຫ້ເຂົ້າກັບບັນດາຍຸດທະສາດຂອງລັດຖະບານ. ຖ້າຫາກຂາດການປະງານຂອງຜູ້ໃຫ້ທຶນມັນກໍ່ຈະນໍາໄປສູ່ການແຍກອອກເປັນກຸ່ມນ້ອຍໆ ແລະເປັນໄພຄຸກຄາມຕໍ່ກັບຄວາມຍືນຍົງໃນໄລຍະຍາວ, ທັງຍັງຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ລັດຖະບານໃນການຄຸ້ມຄອງ ແລະລາຍງານ.

## ຂໍ້ສະຫລຸບ

ເຖິງແມ່ນວ່າ ສປປ ລາວ ໄດ້ມີຄວາມຄືບໜ້າຫຼາຍໃນການພັດທະນາມະນຸດ ແລະທັງໝົດ 3 ມາດຖານຂອງການຫລຸດພົ້ນອອກຈາກ LDC, ແຕ່ມັນກໍ່ຍັງບໍ່ທັນມີຄວາມເພິ່ງພໍໃຈໃນຕົວເອງພໍປານໃດ. ການເພີ່ມຄວາມຮັບຜິດຊອບທີ່ສູງຂຶ້ນຕໍ່ກັບການພັດທະນາມະນຸດ ແມ່ນບໍ່ພຽງແຕ່ມີຄວາມຈໍາເປັນຕໍ່ກັບການບັນລຸມາດຖານຂອງການຫລຸດພົ້ນອອກຈາກ LDC ເທົ່ານັ້ນ, ແຕ່ຫາກຍັງມີຄວາມສໍາຄັນຕໍ່ກັບບັນດາສິ່ງທ້າທາຍຕ່າງໆພາຍຫຼັງທີ່ໄດ້ຫລຸດພົ້ນໄປ ແລ້ວ ແລະເພື່ອການເກັບກ່ຽວເອົາຜົນປະໂຫຍດຕ່າງໆຈາກການເປີດປະເທດ, ໂດຍສະເພາະແມ່ນການເຊື່ອມໂຍງເຂົ້າກັບ AEC ຢ່າງເຕັມສ່ວນ ຂອງ ສປປ ລາວ.

ນອກຈາກ “ຄຸນຄ່າທາງດ້ານເຄື່ອງມື” ແລ້ວ, ການພັດທະນາມະນຸດ (HD) ກໍ່ຍັງມີ “ຄຸນຄ່າທີ່ມີຢູ່ໃນຕົວຂອງມັນເອງ”. ການຂະຫຍາຍບັນດາຄວາມອາດສາມາດຂອງມະນຸດແມ່ນເປົ້າໝາຍທ້າຍສຸດຂອງຄວາມຍືນຍົງ ແລະການພັດທະນາເພື່ອທຸກຄົນ (ທຸກຄົນໄດ້ຜົນປະໂຫຍດ). ເພາະສະນັ້ນ, ສປປ ລາວ ຈໍາເປັນຈະຕ້ອງໄດ້ໃຊ້ວິທີ “ການພັດທະນາທີ່ຖືກຕ້ອງ” ເພື່ອເພີ່ມການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ, ສາທາລະນາສຸກ ແລະການໂພຊະນາການກ່ຽວກັບການສະໜັບສະໜູນຂັ້ນພື້ນຖານ. ມັນມີຄວາມຈໍາເປັນບໍ່ພຽງແຕ່ສໍາລັບການເພີ່ມຊັບສິນມະນຸດທີ່ຕ້ອງການສໍາລັບການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນເທົ່ານັ້ນ, ແຕ່ຫາກຍັງເປັນການຂະຫຍາຍບັນດາຄວາມສາມາດຂອງປະຊາຊົນນໍາອີກ.

ການພັດທະນາມະນຸດສາມາດເຮັດໜ້າທີ່ເປັນການຮັດແໜ້ນທາງສັງຄົມ ຢູ່ໃນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະພື້ນທີ່ພູມມີປະເທດ ຄືດັ່ງ ສປປ ລາວ. ເນື່ອງຈາກມີຄວາມແຕກຕ່າງທາງດ້ານຂົງເຂດພື້ນທີ່ ແລະລະຫວ່າງຊຸມຊົນຊົນເຜົ່າຕ່າງໆ; ສະນັ້ນ, ລັດຖະບານສາມາດລິເລີ່ມການສົນທະນາລະດັບຊາດ ກ່ຽວກັບຜົນກະທົບທາງດ້ານສັງຄົມໃນບາງເປົ້າໝາຍທີ່ສາມາດບັນລຸໄດ້ ໃນການພັດທະນາມະນຸດຢູ່ໃນບັນດາແຂວງ ແລະລະຫວ່າງຊຸມຊົນໆເຜົ່າຕ່າງໆ.

# ພາກສະເໜີ

## ແນວທາງການພັດທະນາມະນຸດເພື່ອການຫລຸດພົ້ນອອກຈາກ LDC

ການຂະຫຍາຍບັນດາຄວາມສາມາດຂອງມະນຸດແມ່ນເປົ້າໝາຍສຸດທ້າຍຂອງການພັດທະນາແບບຍືນຍົງ ແລະເພື່ອທຸກຄົນ. ເຖິງແນວໃດກໍ່ຕາມ, ນອກຈາກ "ຄຸນຄ່າທີ່ມີຢູ່ໃນຕົວຂອງມັນ" ແລ້ວ, ການພັດທະນາມະນຸດ (HD) ກໍ່ຍັງມີ "ຄຸນຄ່າທາງດ້ານເຄື່ອງມື". ການປັບປຸງ HD ແມ່ນມີຄວາມສຳຄັນສຳລັບການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງລາບລື່ນ. ດ້ວຍການມີຫຼາຍມາດຖານ (ແລະຕົວຊີ້ບອກ) ສຳລັບການກຳນົດວ່າປະເທດນັ້ນເປັນ LDC ແມ່ນນຳໃຊ້ມາດຖານອັນດຽວກັນກັບການຈັດລະດັບການພັດທະນາມະນຸດ HD ຂອງປະເທດຕ່າງໆ. ໃນການບັນລຸຄວາມຄືບໜ້າຂອງ HD, ການຫລຸດພົ້ນອອກຈາກ LDC ແມ່ນເປັນໄມ້ຫຼາວັດແທກທີ່ສຳຄັນໃນເບື້ອງຕົ້ນ ທີ່ປະເທດຕ້ອງການຂ້າມຜ່ານ. ເພາະສະນັ້ນ, ຂະບວນການຫລຸດພົ້ນອອກຈາກ LDC ແມ່ນຈະຕ້ອງໄດ້ເບິ່ງຈາກທັດສະນະຂອງ HD.

ຢູ່ໃນກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກ (1996), ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດເປົ້າໝາຍການພັດທະນາທີ່ຍິ່ງໃຫຍ່ຂອງປະເທດອອກມາ ຄືນຳພາປະເທດໃຫ້ຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ. ຕໍ່ຈາກນັ້ນມາ, ເປົ້າໝາຍນີ້ໄດ້ຖືກເນັ້ນຢໍ້າຢູ່ໃນຫຼາຍເອກສານນະໂຍບາຍຕ່າງໆ. ເຖິງຢ່າງໃດກໍ່ຕາມ, ຍັງບໍ່ທັນຮອດປີ 2012 ມາດຖານ ແລະບັນດາຂະບວນການໃນການຫລຸດພົ້ນອອກຈາກຄວາມດ້ອຍພັດທະນາ ແມ່ນໄດ້ຮັບການພິຈາລະນາ ແລະລວມເຂົ້າຢູ່ໃນແຜນການ, ແລະຍຸດທະສາດການພັດທະນາຕ່າງໆ. ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ແມ່ນເອກະສານນະໂຍບາຍເທື່ອທຳອິດ ທີ່ໄດ້ນຳເອົາເປົ້າໝາຍການຫລຸດພົ້ນອອກຈາກ LDC ເຂົ້າຢູ່ໃນບັນດາເປົ້າໝາຍການພັດທະນາເສດຖະກິດ-ສັງຄົມອື່ນໆ.

ບົດລາຍງານການພັດທະນາມະນຸດແຫ່ງຊາດ (NHDR) ຄັ້ງທີ 5 ນີ້ ໄດ້ພິຈາລະນາໃນຫຼາຍແງ່ມູມທີ່ແຕກຕ່າງກັນ ກ່ຽວກັບຄວາມດ້ອຍພັດທະນາ ຢູ່ໃນ ສປປ ລາວ ທີ່ຖືກກຳນົດໃຫ້ເປັນ LDC. ໂດຍສະເພາະແມ່ນສຸມໃສ່ລະດັບຂອງການພັດທະນາມະນຸດ (HD), ຄວາມຈຳເປັນສຳລັບການຂ້າມຜ່ານສິ່ງທີ່ຂາດໄປໃນດັດຊະນີຊັບສິນມະນຸດ (HAI) ເພື່ອເຮັດການຫລຸດພົ້ນອອກຈາກ LDC ໄດ້ຢ່າງລາບລື່ນ. ພາກສະເໜີນີ້, ໄດ້ໃຫ້ໂຄງສ້າງຂອງການວິໄຈສຳລັບ NHDR ຄັ້ງທີ 5 ຊຶ່ງໄດ້ສະແດງໃຫ້ເຫັນເຖິງການເຊື່ອມຕໍ່ກັນລະຫວ່າງການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC, ທັງເນັ້ນໃສ່ວິທີທາງການພັດທະນາມະນຸດເພື່ອໃຫ້ຫລຸດພົ້ນອອກ LDC ໄດ້ຢ່າງລາບລື່ນ.

# ການເຊື່ອມໂຍງລະຫວ່າງການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC

ອີງຕາມມາດຖານຂອງສະຫະປະຊາຊາດ (UN), ປະເທດທີ່ດ້ອຍພັດທະນາແມ່ນອັນໜຶ່ງທີ່ສະແດງອອກຢູ່ໃນບັນດາຕົວຊີ້ບອກການພັດທະນາເສດຖະກິດ-ສັງຄົມ ແລະການພັດທະນາມະນຸດທີ່ຕໍ່າທີ່ສຸດໃນການຈັດລໍາດັບການພັດທະນາປະເທດ. ແນວຄວາມຄິດກ່ຽວກັບ LDC ໄດ້ປະກົດຂຶ້ນໃນຊຸມປີ 1960, ດ້ວຍຈຸດປະສົງກໍານົດບັນດາປະເທດກໍາລັງພັດທະນາສ່ວນຫຼາຍທີ່ມີຄວາມເສຍປຽບ ເພື່ອໃຫ້ການຊ່ວຍເຫຼືອເຂົາເຈົ້າເປັນການສະເພາະ. ຢູ່ໃນມະຕິຂອງອົງການສະຫະປະຊາຊາດ ສະບັບເລກທີ 2768 (XXVI), ລົງວັນທີ 18 ພະຈິກ 1971 ໄດ້ຂຶ້ນບັນຊີກຸ່ມປະເທດ LDC ເປັນເທື່ອທໍາອິດ, ຊຶ່ງປະເທດທີ່ຖືກກໍານົດໃຫ້ເປັນ LDC ແມ່ນມີມາດ ຖານດັ່ງຕໍ່ໄປນີ້:

1. ລາຍໄດ້ຕໍ່ຫົວຄົນຕໍ່າ: ຕົວຊີ້ບອກແມ່ນລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນຕໍ່າ ຊຶ່ງຂັ້ນພື້ນຖານສໍາລັບມາດຖານນີ້ແມ່ນຄ່າສະເລ່ຍສໍາລັບ 3 ປີ ທີ່ຖືກກໍານົດໂດຍທະນາຄານໂລກ. ໃນປີ 2015, ບັນດາປະເທດທີ່ມີ GNI ຕໍ່າກວ່າ 1.035 ໂດລາສະຫະລັດ (ໃນມູນຄ່າປັດຈຸບັນ) ແມ່ນຖືວ່າເປັນປະເທດ LDC.

2. ທຶນມະນຸດມີຈໍາກັດ: ດັດຊະນີທີ່ປະກອບຂຶ້ນຈາກຫຼາຍສ່ວນ ຊຶ່ງຮຽກວ່າດັດຊະນີຊັບສິນມະນຸດ (HAI) ເຊັ່ນ: ການໂພຊະນາການ, ສາທາລະນາສຸກ, ການສຶກສາ ແລະຄວາມຮູ້ໜັງສືຂອງຜູ້ໃຫຍ່ ແມ່ນຖືກສ້າງຂຶ້ນເພື່ອວັດແທກລະດັບຊັບສິນມະນຸດຂອງປະເທດ. ບັນດາປະເທດທີ່ຖືກກໍານົດໃຫ້ເປັນ LDC ນັ້ນແມ່ນ HAI ຂອງເຂົາເຈົ້າຕໍ່າກວ່າມາດຖານຂັ້ນຕໍ່າທີ່ໄດ້ຖືກກໍານົດໄວ້. ນັບຈາກປີ 2018 ເປັນຕົ້ນໄປ ດັດຊະນີດັ່ງກ່າວແມ່ນຍັງຈະລວມເອົາອັດຕາສ່ວນການຕາຍຂອງແມ່ (MMR) ເຂົ້າໄປນໍາອີກ.

3. ຄວາມບອບບາງທາງເສດຖະກິດສູງ: ດັດຊະນີນີ້ເອີ້ນວ່າດັດຊະນີຄວາມບອບບາງທາງເສດຖະກິດ (EVI) ຊຶ່ງປະກອບດ້ວຍຄວາມບໍ່ໝັ້ນຄົງຂອງການຜະລິດກະສິກໍາ, ຄວາມບໍ່ໝັ້ນຄົງຂອງການສົ່ງອອກສິນຄ້າ ແລະການບໍລິການ, ຄວາມສໍາຄັນທາງເສດຖະກິດຂອງກິດຈະກໍາທີ່ບໍ່ແມ່ນປະເພນີດັ້ງເດີມ, ການສົ່ງອອກສິນຄ້າທີ່ສຸມໃສ່ບາງລາຍການສິນຄ້າ, ຄວາມອ່ອນດ້ອຍຈາກການມີປະຊາຊົນໜ້ອຍ (ມີຕະຫຼາດນ້ອຍ) ແລະມີປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທໍາມະຊາດຫຼາຍ ແມ່ນເປັນການກໍ່ໃຫ້ເກີດມີການວັດແທກຄວາມບອບບາງທາງເສດຖະກິດຂອງປະເທດ. ບັນດາປະເທດທີ່ຖືກກໍານົດໃຫ້ເປັນ LDC ນັ້ນ ແມ່ນ EVI ຂອງເຂົາເຈົ້າສູງເກີນກວ່າມາດຖານຂັ້ນຕໍ່າທີ່ໄດ້ກໍານົດໄວ້ (ຖ້າຫາກ EVI ຕໍ່າລົງ ແມ່ນຄວາມບອບບາງກໍ່ຕໍ່າລົງ).

ເພື່ອຫລຸດພົ້ນອອກຈາກສະຖານະພາບ LDC ແມ່ນປະເທດຈະຕ້ອງໄດ້ຜ່ານ 2 ໃນ 3 ຂອງມາດຖານຂັ້ນຕໍ່າ ຫຼືວ່າຖ້າຫາກວ່າ GNI ຂອງປະເທດບັນລຸໄດ້ 2.484 ໂດລາສະຫະລັດ (ໃນປີ 2015 ແມ່ນເທົ່າກັບ 2 ເທື່ອຂອງມາດຖານຂັ້ນຕໍ່າ) ແລະມັນຍັງສາມາດມີການປ່ຽນແປງຕົວເລກມາດຖານນີ້ໄດ້. ການພິຈາລະນາຕາມຮູບພາບກ່ຽວກັບສະຖານະພາບຂອງ LDC ແມ່ນໄດ້ສະແດງໄວ້ໃນຮູບທີ 0.1 ໃນຂະນະທີ່ລາຍລະອຽດຕ່າງໆຂອງມາດຖານແມ່ນຢູ່ໃນກ່ອງທີ 0.1.

**ຮູບທີ 0.1: ປະເທດດ້ອຍພັດທະນາ - ຕາມຮູບພາບປະກອບ**




ແຫຼ່ງຂໍ້ມູນ: Zhau J (n.d.)

**ກ່ອງທີ 0.1 ມາດຖານການຫລຸດພົ້ນອອກຈາກ LDC**

ໃນປັດຈຸບັນນີ້, ມີ LDC ຢູ່ 48 ປະເທດ; ໃນນັ້ນ, 34 ປະເທດຢູ່ໃນທະວີບອາຟຣິກກາ, 9 ປະເທດຢູ່ໃນທະວີບ ອາຊີ (4 ປະເທດຢູ່ໃນກຸ່ມອາຊຽນ: ກຳປູເຈຍ, ສປປ ລາວ, ພະມ້າ ແລະ ຕີມໍເລສະເຕ) ແລະ 1 ປະເທດຢູ່ໃນທະວີບອາເມລິກາລາຕິນ (ໄຮຕິ). ສ່ວນທີ່ເຫຼືອອີກ 4 ປະເທດແມ່ນເປັນປະເທດຢູ່ໃນເກາະນ້ອຍໆທາງພາກໃຕ້ມະຫາສະມຸດປາຊີຟິກ. LDC ສ່ວນຫຼາຍແມ່ນເປັນປະເທດນ້ອຍຖ້າເບິ່ງໃນແງ່ຂອງຈຳນວນປະຊາກອນ, ແຕ່ກໍ່ມີບາງປະເທດທີ່ມີປະຊາກອນຫຼາຍ (ເຊັ່ນ: ປະເທດບັງກະລາເດ); ໃນນັ້ນ, ບາງປະເທດແມ່ນບໍ່ມີທາງອອກສູ່ທະເລ ແລະຫຼາຍປະເທດແມ່ນກຳລັງປ່ຽນແປງເສດຖະກິດຂ້າມຜ່ານໄປສູ່ສະພາບແວດລ້ອມຂອງຕະຫຼາດ ຊຶ່ງແຕ່ລະເຫດຜົນເຫຼົ່ານີ້ແມ່ນເປັນສ່ວນປະກອບຕໍ່ກັບການເປັນ LDC ຂອງເຂົາເຈົ້າ. ມາຮອດປັດຈຸບັນນີ້, ມີພຽງແຕ່ 4 ປະເທດທີ່ໄດ້ຫລຸດພົ້ນອອກຈາກການເປັນ LDC. ສຳລັບບັນຊີ LDC ແມ່ນໄດ້ສະແດງໄວ້ໃນເອກະສານຊ້ອນທ້າຍ 0.1.

ອົງການສະຫະປະຊາຊາດໄດ້ປະເມີນຜົນຂະບວນການການຫລຸດພົ້ນອອກຈາກ LDC ຂອງປະເທດຕ່າງໆ ໂດຍຜ່ານການທົບທວນການພັດທະນາຂອງປະເທດເຫຼົ່ານັ້ນ ຕາມ 3 ມາດຖານທີ່ໄດ້ກຳນົດໄວ້. ຂະບວນການຫລຸດພົ້ນອອກຈາກ LDC ແມ່ນໄດ້ດຳເນີນມາປະມານຫຼາຍກວ່າ 1 ທົດສະວັດແລ້ວ, ໂດຍອັນທຳອິດແມ່ນມີການຈຳກັດຄວາມວ່າຕ້ອງໄດ້ມີການທົບທວນ 2 ຕໍ່ຄັ້ງ (ສາມປີໃດຄັ້ງໜຶ່ງ) ຊຶ່ງປະເທດທີ່ກ່ຽວຂ້ອງຈະຕ້ອງໄດ້ຮັກສາ (ແລະພັດທະນາຕໍ່ໄປ) ບັນດາມາດຖານເຫຼົ່ານັ້ນໄວ້ ແລະຕໍ່ຈາກນັ້ນກໍ່ຍັງມີຊ່ວງໄລຍະເວລາຂ້າມຜ່ານອີກ 5 ປີ.

ບັນດາ LDC ໄດ້ຮັບການຊ່ວຍເຫຼືອໃນການຜ່ອນຜັນຈຳນວນໜຶ່ງ ເຊັ່ນ: ການຄ້າ ແລະການເຂົ້າເຖິງຕະຫຼາດເປັນຕົ້ນແມ່ນຕະຫຼາດໃນບັນດາປະເທດ OECD. ບັນດາປະເທດທີ່ມີລາຍຮັບຕໍ່າສ່ວນຫຼາຍ ແມ່ນເຂົາເຈົ້າຍັງມີສິດໄດ້ຮັບເງິນກູ້ດອກເບ້ຍຕໍ່າ ແລະການຊ່ວຍເຫຼືອອື່ນໆ ຈາກບັນດາອົງການຈັດຕັ້ງສາກົນ ເຊັ່ນ: ທະນາຄານໂລກ ແລະກອງທຶນການເງິນສາກົນ ເປັນຕົ້ນ.

ສາມອີງປະກອບກ່ຽວກັບມາດຖານການຫລຸດພົ້ນອອກຈາກ LDC ແມ່ນລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ, ດັດຊະນີຊັບສິນມະນຸດ (HAI) ແລະດັດຊະນີຄວາມບອບບາງທາງເສດຖະກິດ (EVI) ຊຶ່ງພວກມັນໄດ້ຖືກກຳນົດໄວ້ດັ່ງຕໍ່ໄປນີ້:

1. ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ

2. ດັດຊະນີຊັບສິນມະນຸດ (HAI) - ປະກອບດ້ວຍຫຼາຍດັດຊະນີ ເຊັ່ນ:

   a. ເປີເຊັນຂອງຈຳນວນປະຊາກອນທີ່ຂາດສານອາຫານ (1/4)

   b. ອັດຕາການຕາຍຂອງເດັກນ້ອຍທີ່ມີອາຍຸລຸ່ມ 5 ປີ (1/4)

   c. ລວມຍອດອັດຕາສ່ວນການເຂົ້າໂຮງຮຽນມັດທະຍົມ (1/4)

   d. ອັດຕາສ່ວນການຮູ້ໜັງສືຂອງຜູ້ໃຫຍ່ (1/4)

3. ດັດຊະນີຄວາມບອບບາງທາງເສດຖະກິດ (EVI) - ປະກອບດ້ວຍຫຼາຍດັດຊະນີ ເຊັ່ນ:

   a. ປະຊາກອນ (1/8)

   b. ຄວາມຫ່າງໄກຊອກຫຼີກ (1/8)

   c. ການສຸມໃສ່ສິນຄ້າສົ່ງອອກຈຳນວນໃດໜຶ່ງ (1/16)

   d. ການປະກອບສ່ວນຂອງກະສິກຳ, ປ່າໄມ້ ແລະການປະມົງ ຢູ່ໃນ GDP (1/16)

   e. ການປະກອບສ່ວນຂອງຈຳນວນປະຊາກອນທີ່ຢູ່ໃນເຂດແຄມທະເລທີ່ຕ່ຳ (1/8)

   f. ຈຳນວນຜູ້ໄດ້ຮັບເຄາະຮ້າຍຈາກໄພພິບັດທາງທຳມະຊາດ (1/8)

   g. ຄວາມບໍ່ໝັ້ນຄົງຂອງການສົ່ງອອກ (1/4)

   h. ຄວາມບໍ່ໝັ້ນຄົງຂອງການຜະລິດກະສິກຳ (1/8)

ໝາຍເຫດ:

- ຕົວເລກທີ່ຢູ່ໃນວົງເລັບແມ່ນຈຳນວນນ້ຳໜັກຂອງມັນ.
- ບັນດາປະເທດທີ່ຖືກກຳນົດໃຫ້ເປັນ LDC ແມ່ນຕ້ອງຖືກປະເມີນຕາມມາດຖານຂັ້ນເທິງນີ້ ແລະຖ້າເຂົາເຈົ້າຫາກບັນລຸໄດ້ມາດຖານຂັ້ນຕ່ຳຂ້າງເທິງນັ້ນກໍ່ຖືວ່າສາມາດປະກາດຫລຸດພົ້ນໄດ້. ນອກຈາກນັ້ນ, ເຖິງວ່າບັນດາປະເທດເຫຼົ່ານັ້ນຍັງຕ້ອງໄດ້ຂໍຄຳເຫັນ ແຕ່ກໍ່ບໍ່ຈຳເປັນຕ້ອງໄດ້ຮັບຄຳຕົກລົງແນະນຳຈາກ CDP ຕື່ມອີກ.
- ທັງສາມມາດຖານນັ້ນແມ່ນຖືກປະເມີນຢ່າງເປັນເອກະລາດ ຊຶ່ງພວກມັນຈະບໍ່ຖືກລວມເຂົ້າກັບດັດຊະນີທີ່ປະກອບເຂົ້າກັບຫຼາຍສ່ວນອື່ນໆ.
- ເພາະວ່າທັງສາມດັດຊະນີນັ້ນ ແມ່ນກ່ຽວຂ້ອງກັບການດຳເນີນການຂອງບັນດາປະເທດອື່ນໆຢູ່ໃນໂລກ; ສະນັ້ນ, ມັນຈຶ່ງມີການປ່ຽນແປງໄປຕາມແຕ່ລະຊ່ວງໄລຍະ.
- ສຳລັບປະເທດທີ່ຫລຸດພົ້ນອອກຈາກມາດຖານ LDC ແມ່ນຈະຕ້ອງບັນລຸໄດ້ສອງໃນສາມມາດຖານ ແລະຈະຕ້ອງມີການປະເມີນສອງເທື່ອໃນທຸກໆສາມປີ.
- ໃນໄລຍະມໍ່ໆມານີ້ຄະນະກຳມະການນະໂຍບາຍພັດທະນາ (CDP) ຂອງສະຫະປະຊາຊາດ ໄດ້ນຳໃຊ້ມາດຖານ "ພຽງແຕ່ລາຍໄດ້" ຊຶ່ງຖ້າ GNI ຕໍ່ຫົວຄົນຂອງ LDC ຫາກສູງກວ່າມາດຖານຂັ້ນຕ່ຳຂອງການຫລຸດພົ້ນອອກຈາກ LDC ເຖິງສອງເທື່ອ ກໍ່ຖືວ່າມີເງື່ອນໄຂຫລຸດພົ້ນອອກຈາກຄວາມດ້ອຍພັດທະນາແລ້ວ.

ບັນດາປະເທດ LDCs ທັງຫຼາຍ ໂດຍທົ່ວໄປແລ້ວແມ່ນມີການພັດທະນາໂຄງລ່າງພື້ນຖານຕໍ່າ ແລະມີບັນດາສະຖາບັນທີ່ທັນສະໄໝໜ້ອຍ ສໍາລັບຊ່ວຍໃນການບໍລິການຕ່າງໆ ແລະການບໍລິຫານຄຸ້ມຄອງທີ່ມີປະສິດທິພາບ, ລວມທັງການຕິດຕາມ ແລະການປະເມີນຜົນ. ບັນດາອົງກອນກ່ຽວກັບການສຶກສາ ແລະ/ຫຼືຄົ້ນຄວ້າຂັ້ນສູງ, ອໍານາດຕຸລາການ, ບັນດາລະບົບທະນາຄານ, ບັນດາສະມາຄົມທຸລະກິດ ແລະອື່ນໆຂອງເຂົາເຈົ້າ ບໍ່ໄດ້ຮັບການພັດທະນາຢ່າງພຽງພໍໃຫ້ເທົ່າທຽມ ຫຼືສາມາດແຂ່ງຂັນໃນລະດັບຂອງສາກົນ ຫຼືຂົງເຂດ. ນອກຈາກນັ້ນ, ເຂົາເຈົ້າກໍ່ຍັງມີຄວາມສາມາດຈໍາກັດໃນການເຊື່ອມເສດຖະກິດເຂົ້າກັບໂຄງສ້າງຕະຫຼາດທີ່ທັນສະໄໝ (ທີ່ເປັນສາກົນ) ຫຼືການປັບຕົວຕໍ່ກັບການປ່ຽນແປງຢ່າງໄວວາທີ່ເກີດຂຶ້ນຢູ່ໃນຕະຫຼາດທີ່ໃຫຍ່ກວ່າ ຫຼືສະພາບເສດຖະກິດ-ສັງຄົມທີ່ຂັບເຄື່ອນໂດຍຕະ ຫຼາດ, ຖ້າຫາກປັດສະຈາກການຊ່ວຍເຫຼືອຈາກພາຍນອກ.

ບັນດາຂໍ້ຕົກລົງ ແລະສົນທິສັນຍາສາກົນໄດ້ຖືກຮ່າງຂຶ້ນເພື່ອຊ່ວຍເຫຼືອບັນດາປະເທດ LDC ຢູ່ໃນບັນດາຂົງເຂດຕ່າງໆທີ່ໄດ້ຂຶ້ນບັນຊີໄວ້ຢູ່ໃນກ່ອງທີ 0.2 (ຖະແຫຼງການອິສະຕັນບູນ, IDPA) ແມ່ນໄດ້ກວມເອົາທັງການຊ່ວຍເຫຼືອທາງດ້ານວິຊາການເພື່ອສ້າງຄວາມເຂັ້ມແຂງ, ການຊ່ວຍເຫຼືອທາງດ້ານເສດຖະກິດ (ລວມທັງການໃຫ້ສິ່ງເຄາະດ້ານໜີ້ສິນ) ເພື່ອສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ ແລະການອໍານວຍຄວາມສະດວກດ້ານການຄ້າເພື່ອຫລຸດຜ່ອນການຂຶ້ນກັບການສົ່ງອອກສິນຄ້າຊັບພະຍາກອນ ແລະດ້ວຍເຫດນັ້ນຈຶ່ງເຮັດໃຫ້ GDP/GNI ດີຂຶ້ນ.

ເພາະສະນັ້ນ, ປະເທດທີ່ກໍາລັງຫລຸດພົ້ນອອກຈາກສະຖານະພາບ LDC ແມ່ນຈະສູນເສຍບັນດາຄວາມໄດ້ປຽບເຫຼົ່ານີ້. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງຄົງມີຄວາມຄາດຫວັງວ່າຈະຮັກສາການເຕີບໂຕທາງເສດຖະກິດໄວ້, ມີບັນດາຄວາມສາມາດພາຍໃນ ແລະຊັບພະຍາກອນຕ່າງໆເພື່ອລົງທຶນເຂົ້າໃສ່ທຶນມະນຸດ, ເຈລະຈາຢ່າງເປັນເອກະລາດກັບປະເທດອື່ນໆກ່ຽວກັບການຄ້າ ແລະບັນດາກະແສທາງການເງິນ, ສ້າງຮູບແບບຄວາມສໍາພັນສາກົນແບບໃໝ່ຂຶ້ນ ແລະອື່ນໆ. ນອກຈາກນັ້ນ, ບັນດາປະເທດຄູ່ຮ່ວມພັດທະນາ (ໝາຍເຖິງບັນດາປະເທດຜູ້ໃຫ້ທຶນ) ກໍ່ປ່ຽນແປງບັນດາບຸລິມະສິດຂອງເຂົາເຈົ້າຢູ່ເລື້ອຍໆຕໍ່ກັບບັນດາປະເທດເຫຼົ່ານັ້ນທີ່ໄດ້ບັນລຸສະຖານະພາບການພັດທະນາໃດໜຶ່ງ, ເຖິງແມ້ວ່າອາດຈະມີເຫດຜົນອື່ນໆໃນການປະຕິບັດງານຂອງເຂົາເຈົ້າ.

**ກ່ອງທີ 0.2** **ຖະແຫຼງການອິສະຕັນບູນ ແລະແຜນງານປະຕິບັດການ** (IDPA), 2011 **ໂດຍຫຍໍ້**

ກອງປະຊຸມຄັ້ງທີ 4 ຂອງ UN ກ່ຽວກັບປະເທດດ້ອຍພັດທະນາ ທີ່ຈັດຂຶ້ນຢູ່ນະຄອນຫຼວງອິສະຕັນບູນ ໃນລະຫວ່າງວັນທີ 9-13 ພຶດສະພາ 2011 ໄດ້ຮັບຮອງເອົາແຜນງານປະຕິບັດການກ່ຽວກັບບັນດາປະເທດດ້ອຍພັດທະນາ ຮອດປີ 2020 ຊຶ່ງເປັນທີ່ຮູ້ກັນວ່າ ແຜນງານປະຕິບັດການອິສະຕັນບູນ (IPOA). ອັນນີ້ແມ່ນຜົນທີ່ຕາມມາຈາກແຜນງານປະຕິບັດການບຣຸກແຊນ (BOPA) ໃນຊ່ວງປີ 2001-2010.

IPOA ໄດ້ນໍາສະເໜີວິໄສທັດ ແລະຍຸດທະສາດກ່ຽວກັບຊຸມຊົນສາກົນ ສໍາລັບການພັດທະນາແບບຍືນຍົງຂອງບັນດາປະເທດ LDC ດ້ວຍການສຸມໃສ່ການເພີ່ມຄວາມສາມາດໃນການຜະລິດຂອງເຂົາເຈົ້າຢ່າງແຂງແຮງ. ໃນຂອບກ້ວາງໆຂອງບັນດາປັດໄຈຕ່າງໆທີ່ໄດ້ຄາດຄະເນໄວ້ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ IPOA ນັ້ນ ແມ່ນລວມທັງປະເທດຄູ່ຮ່ວມພັດທະນາ (DP), ບັນດາປະເທດກໍາລັງພັດທະນາ, ຂະແໜງການເອກະຊົນ, ສັງຄົມພົນລະເຮືອນ, ສະຫະປະຊາຊາດ ແລະບັນດາສະຖາບັນການເງິນຕ່າງໆຂອງຂົງເຂດ ແລະ ສາກົນ.

ໂດຍອີງໃສ່ບົດຮຽນຕ່າງໆທີ່ໄດ້ຮຽນຮູ້ມາ ໃນລະຫວ່າງ 10 ປີ ຂອງການຈັດຕັ້ງປະຕິບັດ IPOA ເຫັນວ່າມັນໄດ້ສ້າງ ແລະພັດທະນາຫຼັກການ, ເປົ້າໝາຍ ແລະບັນດາຈຸດປະສົງຈໍານວນໜຶ່ງ, ລວມທັງໄດ້ກໍານົດບັນດາຂົງເຂດບຸລິມາສິດສໍາລັບການດໍາເນີນການ. ເປົ້າໝາຍທີ່ສູງສົ່ງຈໍານວນໜຶ່ງນັ້ນ ແມ່ນການຂ້າມຜ່ານໂຄງສ້າງສິ່ງທ້າທາຍຕ່າງໆສໍາລັບການບັນລຸການເຕີບໂຕຢ່າງໄວວາ, ການຫລຸດຜ່ອນຄວາມທຸກຍາກ, ການບັນລຸເປົ້າໝາຍການພັດທະນາທີ່ອີງການສາກົນໄດ້ຕົກລົງໄວ້ ແລະຫລຸດຜ່ອນຄວາມບອບບາງຕ່າງໆ ແລະການແກ້ໄຂບັນດາສິ່ງທ້າທາຍຕ່າງໆທີ່ເກີດຂຶ້ນໃໝ່, ລວມມີຜົນກະທົບຕ່າງໆກ່ຽວກັບບັນຫາທີ່ກ່ຽວຂ້ອງກັນລະຫວ່າງບັນດາວິກິດດ້ານອາຫານ, ວິກິດການດ້ານນໍ້າມັນ ແລະເສດຖະກິດ, ແລະການປ່ຽນແປງຂອງດິນຟ້າອາກາດ. IPOA ຍັງມີເປົ້າໝາຍເລັ່ງໃສ່ການຈ້າງງານຢ່າງເຕັມສ່ວນ ແລະ ມີຜະລິດຕະພາບ (ຕົວຢ່າງ: ສ້າງວຽກງານທີ່ເໝາະສົມ ແລະໝັ້ນຄົງ)

ສຳລັບທຸກຄົນ, ໂດຍສະເພາະແມ່ນຊາວໜຸ່ມ.

**ບັນດາຫຼັກການຕ່າງໆ:**

ຫຼັກການທີໜຶ່ງ ແມ່ນເນັ້ນໜັກໃສ່ ຄວາມເປັນເຈົ້າຂອງ, ຄວາມເປັນຜູ້ນຳ ແລະຄວາມຮັບຜິດຊອບຂັ້ນຕົ້ນສຳລັບການພັດທະນາຂອງເຂົາເຈົ້າ ແມ່ນຕິດພັນກັບປະເທດດ້ອຍພັດທະນາ LDC. ຫຼັກການກ່ຽວກັບການດຸນບົດບາດຂອງລັດຖະບານ ແລະຕະຫຼາດ ໄດ້ສົ່ງຜົນຕໍ່ການປ່ຽນແປງຍຸດທະສາດການພັດທະນາຢ່າງຫຼີກລ່ຽງບໍ່ໄດ້ສຳລັບທົດສະວັດຕໍ່ໄປ ໂດຍເນັ້ນບົດບາດການເຂົ້າຮ່ວມຢ່າງຕັ້ງໜ້າຂອງລັດຖະບານ. ສ່ວນບັນດາຫຼັກການອື່ນໆ, ລວມທັງວິທີການເຂົ້າຮ່ວມເປັນໜຶ່ງດຽວກັບຂະບວນການພັດທະນາຢູ່ໃນບັນດາປະເທດ LDC ແມ່ນຄວນຈະຕ້ອງໄດ້ພິຈາລະນາວິທີການຢ່າງລະອຽດ ແລະກວມລວມ ເຊັ່ນ: ການເປັນຫຸ້ນສ່ວນ ແລະຄວາມສາມັກຄີທີ່ແທ້ຈິງ, ການກຳນົດທິດທາງຜົນໄດ້ຮັບ, ສິດທິມະນຸດ, ຄວາມສະເໝີພາບ ແລະການມີສ່ວນຮ່ວມ.

**ບັນດາຈຸດປະສົງ ແລະຂົງເຂດບຸລິມະສິດສຳລັບການດຳເນີນງານ:**

1. ບັນລຸໄດ້ຄວາມຍືນຍົງ, ຄວາມສະເໝີພາບ ແລະການເຕີບໂຕທາງເສດຖະກິດເພື່ອທຸກຄົນ ດ້ວຍການຍົກສູງຄວາມສາມາດຂອງການຜະລິດ (ໂດຍສະເພາະແມ່ນເຮັດໃຫ້ການກະສິກຳເຂັ້ມແຂງຂຶ້ນ, ຫລຸດຜ່ອນການເພິ່ງພາອາໄສການສົ່ງອອກຄ້າສິນຄ້າຂັ້ນຕົ້ນ ແລະເພີ່ມບໍລິມາດການຄ້າໃຫ້ສູງຂຶ້ນ).

2. ສ້າງຄວາມສາມາດດ້ານຕ່າງໆຂອງມະນຸດ ດ້ວຍການສົ່ງເສີມຄວາມຍືນຍົງ, ຄວາມສະເໝີພາບ ແລະການພັດທະນາສັງຄົມ ແລະມະນຸດ ເພື່ອທຸກຄົນ, ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ ແລະການເພີ່ມອຳນາດໃຫ້ແກ່ເພດຍິງ.

3. ເພີ່ມທະວີຄວາມສາມາດໃນການຟື້ນຟູຄືນສູ່ສະພາບເດີມ ເພື່ອຫລຸດຜ່ອນຄວາມບອບບາງຂອງບັນດາປະເທດ LDC ຕໍ່ກັບເຫດການຊ໊ອກກະທັນຫັນທາງເສດຖະກິດ, ທຳມະຊາດ ແລະສະພາບແວດລ້ອມ, ແລະໄພພິບັດທາງທຳມະຊາດຕ່າງໆ.

4. ຮັບປະກັນເຮັດໃຫ້ບັນດາຊັບພະຍາກອນທາງການເງິນດີຂຶ້ນ ແລະຫລຸດຜ່ອນພາລະໜີ້ສິນລົງ.

5. ສົ່ງເສີມການບໍລິຫານຄຸ້ມຄອງ ແລະການປົກຄອງທີ່ດີ.

**ການເພີ່ມຄຸນຄ່າ ແລະບັນດາສິ່ງສຳຄັນຕ່າງໆທີ່ສາມາດເຮັດໄດ້:**

1. ການເພີ່ມອັດຕາສ່ວນການສົ່ງອອກຂອງບັນດາ LDC ຢູ່ໃນການສົ່ງອອກຂອງໂລກໃຫ້ໄດ້ສອງເທົ່າຕົວ ໃນປີ 2020 ແລະການໃຫ້ຄຳໝັ້ນສັນຍາເພື່ອຮັບປະກັນການຈັດຕັ້ງປະຕິບັດການປອດພາສີ ແລະໂກຕາສິນຄ້າ (DFQF) ໃນການເຂົ້າເຖິງຕະຫຼາດສຳລັບ LDC ທັງໝົດ ໃຫ້ໄດ້ຕາມກຳນົດເວລາ.

2. ການຢືນຢັນອີກເທື່ອໜຶ່ງກ່ຽວກັບການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ທີ່ໄດ້ຮັບປາກໄວ້ໃນປີ 2015 ແລະທົບທວນຄືນການໃຫ້ຄຳໝັ້ນສັນຍາກ່ຽວກັບ ODA ເພື່ອການຍົກລະດັບຊັບພະຍາກອນຕ່າງໆຂອງ LDC ໃຫ້ດີຂຶ້ນ ຫຼັງຈາກປີ 2015.

3. ການຍົກລະດັບອັດຕາສ່ວນຂອງການຊ່ວຍເຫຼືອໃຫ້ແກ່ບັນດາປະເທດ LDC ໃຫ້ຫຼາຍຂຶ້ນ.

4. ຮັບເອົາບັນດາລະບອບການສົ່ງເສີມການລົງທຶນໂດຍບັນດາຄູ່ຮ່ວມພັດທະນາຕ່າງໆ.

5. ເນັ້ນໜັກໃສ່ການປະດິດສ້າງໃໝ່ດ້ານເຕັກໂນໂລຢີ ແລະການຖ່າຍໂອນເຕັກໂນໂລຢີໃຫ້ແກ່ບັນດາປະເທດ LDC, ລວມທັງບັນດາຄຳໝັ້ນສັນຍາຕ່າງໆຂອງຄູ່ຮ່ວມພັດທະນາ ເພື່ອໃຫ້ການສະໜັບສະໜູນດ້ານການເງິນ ແລະເຕັກນິກວິຊາການ.

6. ພັດທະນາບັນດາຍຸດທະສາດການບັນເທົາຄວາມສ່ຽງສຳລັບການບັນເທົາວິກິດການ ແລະຄວາມສາມາດກັບຄືນສູ່ສະພາບປົກກະຕິໄດ້ໄວ.

7. ຮຽກຮ້ອງໃຫ້ມີການສ້າງຕັ້ງ ແລະຫັນເປັນການດຳເນີນງານກ່ຽວກັບກອງທຶນດິນຟ້າອາກາດສີຂຽວ ແລະຮຽກຮ້ອງຄຳໝັ້ນສັນຍາຕ່າງໆຈາກບັນດາຄູ່ຮ່ວມພັດທະນາເພື່ອສົ່ງເສີມບັນດາກົນໄກການພັດທະນາທີ່ສະອາດ.

8. ຂະຫຍາຍເວລາໃນການອຸດໜູນທີ່ຕິດພັນກັບການເດີນທາງທີ່ມີຢູ່ໃນປັດຈຸບັນ ໃຫ້ແກ່ຜູ້ຕາງໜ້າຂອງບັນດາປະເທດທີ່ຫາກໍ່ຫລຸດພົ້ນອອກຈາກຄວາມດ້ອຍພັດທະນາຕາມຊ່ວງໄລຍະເວລາອັນເໝາະສົມຕາມສະພາບການພັດທະນາຂອງເຂົາເຈົ້າ.

9. ຢັ້ງຢືນຄືນຄວາມຮັບຜິດຊອບຮ່ວມກັນຂອງບັນດາປະເທດ LDC ແລະບັນດາຄູ່ຮ່ວມພັດທະນາ ສຳລັບການໃຫ້ຄຳໝັ້ນສັນຍາຕ່າງໆຂອງເຂົາເຈົ້າ.

10. ຮັບປະກັນການຄຸ້ມຄອງບໍລິຫານ ແລະການປົກຄອງທີ່ດີ, ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ, ການປົກຄອງຕາມລະບຽບກົດໝາຍ ແລະສົ່ງເສີມເພີ່ມທະວີການເປັນຕົວແທນຂອງບັນດາປະເທດ LDC ໃນການເຂົ້າຮ່ວມກອງປະຊຸມສາກົນຕ່າງໆ.

ແຫຼ່ງຂໍ້ມູນ: UNCTAD (2015)

## ການພັດທະນາມະນຸດ (HD): ເສັ້ນທາງສຳລັບການຫລຸດພົ້ນອອກຈາກ LDC

ການພັດທະນາມະນຸດແມ່ນວິທີການໜຶ່ງໃນການພັດທະນາທີ່ເປັນທີ່ຮູ້ຈັກກັນດີ. ເວົ້າແບບສັ້ນໆກໍ່ແມ່ນຮູບແບບການພັດທະນາມະນຸດໄດ້ສະແດງໃຫ້ເຫັນການຂະຫຍາຍຄວາມສາມາດຕ່າງໆຂອງຜູ້ຄົນ ຫຼືບັນດາອິດສະລະພາບ ແລະກາລະໂອກາດຕ່າງໆສຳລັບການປັບປຸງສະຫວັດດີພາບຂອງເຂົາເຈົ້າ. ມັນກ່ຽວກັບອິດສາລະພາບທີ່ຜູ້ຄົນປົກກະຕິຄວນຈະຕ້ອງໄດ້ຮັບເພື່ອຕັດສິນໃຈວ່າແມ່ນຫຍັງທີ່ເຂົາເຈົ້າຫວັງທີ່ຈະເປັນ ແລະຈະເຮັດ, ແລະເຂົາເຈົ້າຄາດຫວັງວ່າຈະດຳລົງຊີວິດຢູ່ຄືແນວໃດ. ແນວຄວາມຄິດກ່ຽວກັບການພັດທະນາມະນຸດໄດ້ສຸມໃສ່ສ້າງບັນດາກາລະໂອກາດ ແລະທາງເລືອກຕ່າງໆໃຫ້ແກ່ໝົດທຸກຄົນ. ຮ່າງກ່ຽວກັບຮູບແບບການພັດທະນາມະນຸດໄດ້ສະແດງໄວ້ຢູ່ໃນກ່ອງ 0.3. ໃນພາກປະຕິບັດຕົວຈິງ, ການພັດທະນາມະນຸດແມ່ນຈຳເປັນຕ້ອງໄດ້ຂະຫຍາຍໄປສູ່ຜູ້ຄົນຈຳນວນຫຼາຍເພື່ອເຮັດໃຫ້ເຂົາເຈົ້າມີສຸຂະພາບທີ່ດີ, ມີສີມື ແລະການສຶກສາທີ່ສູງ, ແລະສ້າງຄວາມຮັ່ງມີຜ່ານການເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ ຢ່າງຕັ້ງໜ້າຂອງເຂົາເຈົ້າ. ຫຼັງຈາກທີ່ຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ ກໍ່ຍັງຮຽກຮ້ອງໃຫ້ມີການຍົກລະດັບການສຶກສາ ແລະສີມືຂອງປະຊາຊົນຢູ່, ປັບປຸງສຸຂະພາບຂອງເຂົາເຈົ້າ ແລະເພີ່ມລາຍຮັບຂອງເຂົາເຈົ້າຕາມທິດຍືນຍົງ, ມັນມີຄວາມສຳພັນໃກ້ຄຽງກັບຄວາມສອດຄ່ອງໂດຍລວມລະຫວ່າງປະເທດທີ່ມີການພັດທະນາມະນຸດຕ່ຳ (ຫຼື ປານກາງ) ແລະເປັນ LDC, ແລະໃນທາງກັບກັນ ກໍ່ເປັນເຊັ່ນດຽວກັນນັ້ນ.

**ກ່ອງທີ 0.3 ການພັດທະນາມະນຸດ:**

ສໍາລັບປະຊາຊົນ: ວິທີທາງຂອງການພັດທະນາມະນຸດ ແມ່ນຄວນສຸມການປັບປຸງຊີວິດການເປັນຢູ່ຂອງຜູ້ຄົນຫຼາຍກວ່າການອວດອ້າງດ້ານການເຕີບໂຕທາງເສດຖະກິດ ແລະໃນທີ່ສຸດກໍ່ຈະເປັນຜົນສໍາຄັນຫຼາຍຕໍ່ກັບບັນດາກາລະໂອກາດອັນໃຫຍ່ຫຼວງສໍາລັບທຸກຄົນ. ການເຕີບໂຕດ້ານລາຍໄດ້ແມ່ນພາຫານະທີ່ສໍາຄັນຕໍ່ກັບການພັດທະນາຫຼາຍກວ່າການຈົບຕົວຂອງມັນເອງ.

ສໍາລັບບັນດາກາລະໂອກາດຕ່າງໆ: ການພັດທະນາມະນຸດແມ່ນກ່ຽວກັບການໃຫ້ເສລີພາບ ແລະກາລະໂອກາດຕ່າງໆສໍາລັບການດໍາລົງຊີວິດທີ່ເຂົາເຈົ້າຖະນຸຖະໜອມ. ມັນໝາຍເຖິງການເພີ່ມຄວາມສາມາດຂອງປະຊາຊົນ ແລະການສ້າງກາລະໂອກາດເພື່ອນໍາໃຊ້ເຂົາເຈົ້າ. ສາມຢ່າງທີ່ເປັນພື້ນຖານກ່ຽວກັບການພັດທະນາມະນຸດແມ່ນການດໍາລົງຊີວິດຢູ່ດ້ວຍສຸຂະພາບທີ່ແຂງແຮງ, ມີການສ້າງຊີວິດໃຫ້ມີຄວາມຮູ້ ແລະການເຂົ້າເຖິງຊັບພະຍາກອນຕ່າງ ຊຶ່ງທັງສາມຢ່າງນີ້ແມ່ນສິ່ງຈໍາເປັນສໍາລັບມາດຖານການດໍາລົງຊີວິດທີ່ມີຄວາມເໝາະສົມ. ນອກຈາກນີ້, ກໍ່ຍັງມີແງ່ມູມອື່ນໆອີກ ເຊັ່ນ: ຄວາມຍືນຍົງທາງດ້ານສະພາບແວດລ້ອມ, ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ, ປະຊາທິປະໄຕ ແລະເສລີພາບ. ລາຍການ ຫຼືຮູບພາບກ່ຽວກັບການພັດທະນາມະນຸດແມ່ນໄດ້ສະແດງໄວ້ຂ້າງລຸ່ມນີ້:




ແຫຼ່ງຂໍ້ມູນ: http://hdr.undp.org/en/humandev

ເນື່ອງຈາກຮູບແບບການພັດທະນາມະນຸດ ມີລັກສະນະປັບຕົວໄດ້ງ່າຍ ແລະຂະຫຍາຍຕົວ, ການພັດທະນາການ HD ແມ່ນຊ່ວຍໃຫ້ບັນລຸໄດ້ບັນດາມາດຖານຕ່າງໆກ່ຽວກັບການຫລຸດພົ້ນອອກຈາກສະຖານະພາບ LDC. ໃນຕົວຈິງແລ້ວ, ບັນດາຕົວຊີ້ບອກທີ່ກໍານົດໃຫ້ເປັນ LDC ແມ່ນຍັງນອນຢູ່ໃນຮູບແບບຂອງການພັດທະນາມະນຸດໂດຍລວມ ຊຶ່ງອັນນີ້ແມ່ນຫຼັກຖານຈາກຮູບທີ 0.2 ທີ່ສະແດງໃຫ້ເຫັນເຖິງຄວາມສອດຄ່ອງ. ໃນຂະນະທີ່ບັນດານິຍາມກ່ຽວກັບບັນດາຕົວຊີ້ບອກ ແລະອົງປະກອບ ຢູ່ໃນທັງສອງຢ່າງ ອາດມີຄວາມແຕກຕ່າງກັນ, ແຕ່ແນວຄວາມຄິດແມ່ນເປັນອັນດຽວກັນ ທີ່ກ່ຽວພັນກັບຄວາມສາມາດຂອງມະນຸດ (ການສຶກສາ ແລະສຸຂະພາບ) ແລະລາຍໄດ້ຕ່າງໆ.

**ຮູບທີ 0.2: ບັນດາຕົວຊີ້ບອກກ່ຽວກັບການກຳນົດເປັນປະເທດ LDC ແລະບັນດາອົງປະກອບຂອງການພັດທະນາມະນຸດ**




ໝາຍເຫດ:

- ທັງບັນດາຕົວຊີ້ບອກກ່ຽວກັບ LDC ແລະບັນດາອົງປະກອບຂອງການພັດທະນາມະນຸດແມ່ນກ່ຽວຂ້ອງກັບການດຳເນີນງານຂອງປະເທດຕ່າງໆສຳລັບບັນດາຕົວຊີ້ບອກເຫຼົ່ານີ້.
- ດັດຊະນີການພັດທະນາມະນຸດ (HDI) ບໍ່ແມ່ນການພັດທະນາມະນຸດ; ມັນເປັນພຽງໜຶ່ງໃນບັນດາຕົວຊີ້ບອກກ່ຽວກັບການພັດທະນາມະນຸດເທົ່ານັ້ນ.ດັດຊະນີການພັດທະນາມະນຸດແມ່ນເປັນພຽງດັດຊະນີໜຶ່ງ, ໃນຂະນະທີ່ການພັດທະນາມະນຸດແມ່ນຮູບແບບຂອງການພັດທະນາ.

ການພັດທະນາມະນຸດເປັນຂະບວນການທີ່ຕໍ່ເນື່ອງຂອງການປັບປຸງຊີວິດການເປັນຢູ່ຂອງມະນຸດ ໂດຍຜ່ານການເຕີບໂຕແບບຍືນຍົງ ແລະເພື່ອທຸກຄົນ. ມັນມີຫຼາຍແງ່ມູມຂອງການພັດທະນາທີ່ແຕກຕ່າງກັນ ເຊັ່ນ: ການເຕີບໂຕທາງເສດຖະກິດ, ການພັດທາງສັງຄົມ, ຄວາມສະເໝີພາບ, ຄວາມແຕກຕ່າງດ້ານບົດບາດຍິງ-ຊາຍ, ປະຊາທິປະໄຕ, ການມີສ່ວນຮ່ວມຂອງປະຊາຊົນ ແລະການກະຈ່າຍອຳນາດ ຊຶ່ງອັນນີ້ກໍ່ເປັນພຽງສ່ວນໜ້ອຍໜຶ່ງເທົ່ານັ້ນ. ຢູ່ໃນທີ່ນີ້, ການຫລຸດພົ້ນອອກຈາກ LDC ແມ່ນເປັນໜຶ່ງຂອງເຫດການທາງປະຫວັດສາດເບື້ອງຕົ້ນທີ່ປະເທດມີຄວາມຕ້ອງການຂ້າມຜ່ານ, ແລະຂະບວນການຫລຸດພົ້ນອອກຈາກ LDC ແມ່ນຈະຕ້ອງໄດ້ເບິ່ງຢູ່ໃນສະພາບຂ້າງລຸ່ມນີ້

**ກ່ອງທີ 0.4** **ການອອກຈາກປະເທດ LDC**

ຄຳຖາມມີຢູ່ວ່າ: ບັນດາ LDC ຈະຫລຸດພົ້ນອອກຈາກສະຖານະພາບ LDC ຂອງເຂົາເຈົ້າຄືແນວໃດ?

ຄຳຕອບມີຄື: ເຂົາເຈົ້າຈະຕ້ອງໄດ້ສົ່ງເສີມການເຕີບໂຕທາງເສດຖະກິດ ແລະການພັດທະນາມະນຸດຢ່າງໄວວາ ດ້ວຍການສຸມໃສ່ປັບປຸງການສຶກສາ, ສາທາລະນາສຸກ ແລະການເພີ່ມອຳນາດໃຫ້ແກ່ປະຊາຊົນ ເພື່ອເຮັດໃຫ້ເຂົາເຈົ້າມີລາຍໄດ້ທີ່ເປັນຜົນກຳໄລຢູ່ໃນທິດທາງຍືນຍົງ. ໃນເມື່ອລາຍໄດ້ຂອງປະຊາຊົນທັງໝົດເພີ່ມຂຶ້ນຫຼາຍ GNI ກໍ່ຈະເພີ່ມຂຶ້ນເຊັ່ນກັນ. ຖ້າຫາກຢູ່ໃນຂະບວນການຄືແນວນີ້, ເຫດການທາງປະຫວັດສາດໃນການຂ້າມຜ່ານຈາກ LDC ແລະການພັດທະນາຕໍ່ໄປກໍ່ຈະດີຂຶ້ນ.

ມັນບໍ່ແມ່ນດັດຊະນີທີ່ບັນດາອົງກອນຕ່າງໆຂອງປະເທດຈຳເປັນຈະຕ້ອງສະແຫວງຫາທັງໝົດ ຊຶ່ງມັນກໍ່ມີວິທີທາງອື່ນທີ່ສາມາດເຮັດແທນໄດ້. ເຂົາເຈົ້າຄວນຈະຕ້ອງລິງມືເຮັດວິທີທາງໃດໜຶ່ງກ່ຽວກັບການສົ່ງເສີມການພັດທະນາມະນຸດໃຫ້ໄວຂຶ້ນ ແລະປະເທດຈະຕ້ອງໄດ້ຄືບຄານອອກຈາກສະຖານະພາບດ້ອຍພັດທະນາຕາມວິທີທາງນັ້ນ.

HAI, EVI ແລະ GNI ຕໍ່ຫົວຄົນ ແມ່ນມີຄວາມກ່ຽວພັນກັນ. ຖ້າຫາກຜູ້ຄົນມີການສຶກສາ/ສີມືທີ່ດີຂຶ້ນ ແລະມີສຸຂະພາບແຂງແຮງ (HAI ສູງ) ເຂົາເຈົ້າກໍ່ຈະສາມາດເຮັດວຽກຢູ່ໃນບັນດາກິດຈະກຳຕ່າງໆທີ່ແຕກຕ່າງກັນເພື່ອສ້າງລາຍໄດ້ ແລະຊັບສິນໃຫ້ຫຼາຍຂຶ້ນ (GNI ຕໍ່ຫົວຄົນສູງ/EVI ຕ່ຳ). ໃນທາງກົງກັນຂ້າມກໍ່ແມ່ນແນວນັ້ນ ແຫ້ຖ້າຫາກ HAI ຕໍ່ຫົວຄົນຕ່ຳ ກໍ່ຈະເຮັດໃຫ້ GNI ຕ່ຳ, ແລະ/ຫຼື ຍັງເພີ່ມຄ່າ EVI ໃຫ້ສູງຂຶ້ນນຳອີກ.

ບັນດາຕົວເລກຂໍ້ມູນເຫຼົ່ານີ້ໄດ້ຊີ້ໃຫ້ເຫັນວ່າ ບັນດາປະເທດທີ່ມີ HAI ຕ່ຳ ຫຼື EVI ສູງ ແມ່ນຈະມີ GNI ຕໍ່ຫົວຄົນຕ່ຳ, ນອກຈາກປະເທດສ່ວນໜ້ອຍໜຶ່ງເທົ່ານັ້ນທີ່ຕ່າງໄປຈາກນີ້ ເຊັ່ນ: ບັນດາປະເທດທີ່ຜະລິດນ້ຳມັນ.

ສັງລວມແລ້ວ, ການປັບປຸງ HD ຈະປະກອບສ່ວນໂດຍກົງຕໍ່ກັບການເພີ່ມຂຶ້ນຂອງ HAI, ການຕ່ຳລົງຂອງ EVI ແລະເພີ່ມຂຶ້ນ GNI ຕໍ່ຫົວຄົນ ຊຶ່ງເຮັດໃຫ້ການຫລຸດພົ້ນອອກຈາກ LDC ມີຄວາມລາບລື່ນ.

## ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 5 ຂອງ ສປປ ລາວ

ບົດລາຍງານການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ ເຫຼັ້ມນີ້ ແມ່ນຜົນໄດ້ຮັບຈາກການສົນທະນາລະດັບຊາດ ກ່ຽວກັບການນຳເອົາປະເທດຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ. ດັ່ງທີ່ໄດ້ສະເໜີໄວ້ຂ້າງເທິງນັ້ນ, ການຫລຸດພົ້ນອອກຈາກສະຖານະພາບ LDC ແມ່ນຮຽກຮ້ອງໃຫ້ມີການປັບປຸງການພັດທະນາມະນຸດ; ເພາະສະນັ້ນ, ບົດລາຍງານສະບັບນີ້ຈະພະຍາຍາມພິຈາລະນາສະພາບປັດຈຸບັນຂອງການພັດທະນາມະນຸດ ແລະສະເໜີບັນດາມາດຕະການ ເພື່ອເພີ່ມຄວາມລາບລື່ນໃຫ້ແກ່ການຫລຸດພົ້ນອອກຈາກການ LDC ຂອງ ສປປ ລາວ ໃນອະນາຄົດອັນໃກ້ນີ້ ແລະສືບຕໍ່ກ້າວໜ້າຕໍ່ໄປເລື້ອຍໆ. ເພາະສະນັ້ນ, ມັນຍັງໄດ້ພິຈາລະນາເຖິງສິ່ງທ້າທາຍຕ່າງໆພາຍຫຼັງທີ່ໄດ້ຫລຸດພົ້ນແລ້ວ ໂດຍສະເພາະແມ່ນໃນສະພາບທີ່ ສປປ ລາວ ກຳລັງຢູ່ໃນໄລຍະການຂ້າມຜ່ານໄປສູ່ເສດຖະກິດຕະຫຼາດ, ລວມທັງເສດຖະກິດທີ່ເຊື່ອມໂຍງເຂົ້າກັບຂົງເຂດພາກພື້ນ ແລະສາກົນ.

ອັນສະເພາະກວ່ານັ້ນ, ບົດລາຍງານການພັດທະນາມະນຸດແຫ່ງຊາດ ຄັ້ງທີ 5 ຂອງ ສປປ ລາວ ແມ່ນມີຈຸດປະສົງ ແລະເປົ້າໝາຍ ເພື່ອ:

- ພິຈາລະນາຢ່າງຖີ່ຖ້ວນກ່ຽວກັບແນວໂນ້ມ ຫຼືທິດທາງຂອງບັນດາຕົວຊີ້ບອກກ່ຽວກັບການພັດທະນາ,ໂດຍສະເພາະແມ່ນບັນດາຕົວຊີ້ບອກທີ່ກ່ຽວພັນກັບການພັດທະນາມະນຸດ (ການສຶກສາ, ສາທາລະນາສຸກ, ຄວາມທຸກຍາກ ແລະຄວາມບໍ່ສະເໝີພາບ) ແລະ ສົມທຽບຄວາມແຕກຕ່າງກັບປະເທດອື່ນໆໃນຂົງເຂດ. ໃຫ້ບັນດາຂໍ້ສະເໜີແນະດ້ານນະໂຍບາຍ ເພື່ອແກ້ໄຂບັນດາສິ່ງທີ່ຂາດຫາຍໄປ ແລະບັນດາຄວາມແຕກຕ່າງຢູ່ໃນການພັດທະນາມະນຸດ.

- ພິຈາລະນາສາມມາດຖານຂອງການຫລຸດພົ້ນອອກຈາກ LDC (ຊັບສິນມະນຸດ, ຄວາມບອບບາງດ້ານເສດຖະກິດ ແລະລາຍໄດ້). ກຳນົດບັນດາສິ່ງທ້າທາຍ ແລະກາລະໂອກາດຕ່າງໆທີ່ປະເທດຈະປະເຊີນ ຫຼັງຈາກທີ່ຫລຸດພົ້ນອອກຈາກ LDC ແລ້ວ, ແລະໃຫ້ຂໍ້ສະເໜີແນະດ້ານມາດຕະການຕ່າງໆ ເພື່ອຮັກສາສະຖານະພາບການຫລຸດພົ້ນອອກຈາກ LDC ນັ້ນໄວ້ ແລະເດີນໜ້າຕໍ່ໄປ.

- ຊອກຄົ້ນຫາທາງເລືອກດ້ານນະໂຍບາຍ ແລະສະເໜີອາລະການດຳເນີນງານຢູ່ໃນຂະແໜງການທີ່ຖືກເລືອກ (ການສຶກສາ, ສາທາລະນາສຸກ, ກະສິກຳ, ການປຸງແຕ່ງ, ການບໍລິການ, ການບໍລິຫານຄຸ້ມຄອງ ແລະອື່ນໆ) ເພື່ອຊ່ວຍໃຫ້ປະເທດບັນລຸ ແລະປະສົບຜົນສຳເລັດໃນການຫລຸດພົ້ນອອກຈາກ LDC, ລວມທັງການສົ່ງເສີມການພັດທະນາມະນຸດ.

## ໂຄງສ້າງຂອງບົດລາຍງານ

ພາກທີ 1: ປະເມີນລະດັບການພັດທະນາມະນຸດ ຂອງ ສປປ ລາວ, ໂດຍສະເພາະແມ່ນຢູ່ໃນຂົງເຂດການສຶກສາ, ສາທາລະນາສຸກ, ການໂພຊະນາການ, ການເຂົ້າເຖິງນ້ຳດື່ມທີ່ສະອາດ ແລະສຸຂະອະນາໄມ. ພ້ອມກັນນັ້ນ, ກໍ່ພິຈາລະນາລັກສະນະການເຕີບໂຕ ຂອງ ສປປ ລາວ ຢູ່ໃນລະຫວ່າງຊຸມທົດສະວັດທີ່ຜ່ານມາ ແລະທີ່ສຳຄັນແມ່ນຊີ້ໃຫ້ເຫັນວ່າການເຕີບໂຕທາງເສດຖະກິດຂອງມັນໃນໄລຍະມໍ່ໆມານີ້ ແມ່ນຍັງບໍ່ທັນທົ່ວເຖິງທຸກຄົນ. ນອກຈາກນັ້ນ, ຄວາມບໍ່ສະເໝີພາບຂອງບຸກຄົນພາຍໃນກໍ່ເຊື່ອມໂຊມລົງ, ມີຄວາມແຕກຕ່າງດ້ານລາຍໄດ້ ແລະຂະໜາດຂອງການພັດທະນາມະນຸດຢູ່ໃນລະຫວ່າງຂົງເຂດແລະກຸ່ມຊົນເຜົ່າຕ່າງໆ ແມ່ນເຫັນໄດ້ຢ່າງຈະແຈ້ງ. ຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກກໍ່ຍັງບໍ່ທັນສອດຄ່ອງກັບການປັບປຸງກັບການພັດທະນາມະນຸດຢູ່ໃນບາງກໍລະນີ. ບັນດາຄວາມແຕກຕ່າງຂອງຂົງເຂດສາມາດກາຍເປັນຄວາມບໍ່ໝັ້ນຄົງທາງດ້ານການເມືອງໄດ້, ໂດຍສະເພາະແມ່ນໃນເມື່ອມັນກ່ຽວພັນກັບຄວາມແຕກຕ່າງທາງດ້ານຊັບພະຍາກອນ ແລະອື່ນໆ, ບັນດາຂົງເຂດທີ່ຮັ່ງມີດ້ານຊັບພະຍາກອນແມ່ນມີການພັດທະນາມະນຸດຕ່ຳ ແລະເປັນເຂດທີ່ມີກຸ່ມຊົນເຜົ່າທີ່ແຕກຕ່າງກັນອາໄສຢູ່ຫຼາຍ. ໃນພາກນີ້ແມ່ນລົງທ້າຍດ້ວຍການບັນຍາຍບັນດາຜົນຕາມມາທາງດ້ານນະໂຍບາຍ ແລະໃຫ້ເຫດຜົນວ່າບັນດາຄຳໝັ້ນສັນຍາຕໍ່ກັບການພັດທະນາມະນຸດຂອງຜູ້ມີສ່ວນໄດ້ເສຍທັງໝົດນັ້ນ ແມ່ນສາມາດເຮັດໜ້າທີ່ຕິດແທ້ນກັບຄວາມສຳພັນກັນທາງສັງຄົມຕາມ ທີ່ຕ້ອງການສຳລັບສືບຕໍ່ຄວາມຄືບໜ້າຕາມແນວທາງທີ່ຍືນຍົງ ແລະເພື່ອທຸກຄົນ.

ພາກທີ 2: ວິໄຈສະຖານະພາບຂອງບັນດາຕົວຊີ້ບອກ LDC ຂອງ ສປປ ລາວ, ລວມທັງແນວໂນ້ມ ແລະເສັ້ນມາດຖານຂອງພາບເຫດການຕໍ່ໄປສຳລັບອະນາຄົດອັນໃກ້ນີ້. ຕໍ່ໄປແມ່ນໄດ້ສົນທະນາກ່ຽວກັບສະພາບຕ່າງໆຂອງປະເທດ ຊຶ່ງມັນມີຄວາມເປັນໄປໄດ້ທີ່ຈະປະເຊີນກັບບາງບັນຫາ ແລະກາລະໂອກາດ ໃນເມື່ອມັນຫາກຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ. ອັນທີ່ເປັນການສະເພາະກວ່ານັ້ນ, ແມ່ນໄດ້ພິຈາລະນາ ແລະຄົ້ນຫາຜົນກະທົບຕໍ່ກັບເສດຖະກິດ, ຖ້າວ່າ ສປປ ລາວ ຫາກໄດ້ຮັບການຜ່ອນຜັນໃນເລື່ອງຂອງການໄດ້ຮັບການຊ່ວຍເຫຼືອທາງເສດຖະກິດ ແລະເຕັກນິກວິຊາການ (ຕົວຢ່າງ: ການຊ່ວຍເຫຼືອລ້າ ແລະການເຂົ້າເຖິງເງິນກູ້ງ່າຍ, ການຜ່ອນຜັນການເຂົ້າເຖິງຕະຫຼາດຂອງບັນດາປະເທດ OECD ສ່ວນຫຼາຍ) ໜ້ອຍລົງ ຫຼືຈຳກັດ. ຢູ່ໃນພາກນີ້ຍັງໄດ້ພິຈາລະນາເຖິງບັນດາກາລະໂອກາດ ແລະສິ່ງທ້າທາຍຕ່າງໆໃນການເຂົ້າຮ່ວມ AEC ຊຶ່ງຂ້ອນຂ້າງເຫັນວ່າມັນຈະເກີດມີໄດ້. ມັນມີຄວາມຈຳເປັນທີ່ຈະຕ້ອງສຸມໃສ່ຄວາມຫຼາກຫຼາຍຂອງການຜະລິດ, ການປັບປຸງຜະລິດຕະພາບຂອງການຜະລິດ ແລະການພັດທະນາມະນຸດເພື່ອຂ້າມຜ່ານສິ່ງທ້າທາຍເຫຼົ່ານັ້ນ ເນື່ອງຈາກມັນມີທັງການຫລຸດພົ້ນອອກຈາກ LDC ແລະການເຊື່ອມໂຍງກັບ AEC ນຳ.

ພາກທີ 3: ເປັນການສົນທະນາທີ່ກວ້າງຂວາງ ແລະເລິກເຊິ່ງກວ່ານັ້ນ ກ່ຽວກັບດັດຊະນີການພັດທະນາມະນຸດ (HDI) ທີ່ຢູ່ໃນພາກທີ 1, ໂດຍສະເພາະແມ່ນກ່ຽວກັບການສຶກສາ ແລະສາທາລະນາສຸກ ທີ່ເປັນອົງປະກອບຂອງດັດຊະນີຊັບສິນມະນຸດ (HAI) ດ້ວຍທັດສະນະມູມມອງ ເພື່ອການສະເໜີຄຳຄິດເຫັນດ້ານວິທີການຕ່າງໆທີ່ສາມາດດຳເນີນການໄດ້ສຳລັບການສົ່ງເສີມພວກມັນ. ໃນພາກນີ້, ແມ່ນເລີ່ມຕົ້ນດ້ວຍການສະເໜີເນື້ອໃນໃຈຄວາມໂດຍຫຍໍ້ກ່ຽວກັບສະພາບຂອງການສຶກສາ ແລະສາທາລະນາສຸກໃນປັດຈຸບັນ ທີ່ເຫັນໄດ້ຈາກບັນດາຕົວຊີ້ບອກທີ່ກ່ຽວພັນກັບເລື່ອງສາທາລະນາສຸກ ຄື: ອັດຕາການຕາຍຂອງເດັກນ້ອຍ, ອັດຕາການຕາຍຂອງແມ່, ການ

ໂພຊະນາການ ແລະການສຶກສາຢູ່ໃນຂັ້ນປະຖົມ ແລະ ມັດທະຍົມ, ແລະສິ່ງອື່ນໆທີ່ຄ້າຍຄືກັນນີ້. ຕໍ່ຈາກນັ້ນແມ່ນໄດ້ມີການວິໄຈເລື່ອງປັດໄຈສຳຄັນຕ່າງໆເບື້ອງຄວາມຕ້ອງການ ແລະການສະໜອງ ທີ່ຈຳກັດປະຊາຊົນໃນການໄດ້ຮັບປະໂຫຍດຈາກສິ່ງອຳນວຍຄວາມສະດວກຕ່າງໆດ້ານສາທາລະນາສຸກ, ການສຶກສາ ແລະການບໍລິການຕ່າງໆ. ທ້າຍທີ່ສຸດ, ແມ່ນໄດ້ສະໜັບສະໜູນສິ່ງເສີມວິທີການທີ່ອີງໃສ່ສິດທິຕ່າງໆສຳລັບການສິ່ງເສີມດ້ານສາທາລະນາສຸກ ແລະການສຶກສາສຳລັບ ສປປ ລາວ ທີ່ກຳລັງຕ້ອງການຫລຸດພົ້ນອອກຈາກສະຖານະພາບ LDC ຂອງມັນ ໂດຍຜ່ານການປັບປຸງການພັດທະນາມະນຸດຂອງມັນ.

ພາກທີ 4: ໄດ້ພິຈາລະນາເລືອກເອົາບັນດາອົງປະກອບກ່ຽວກັບດັດຊະນີຄວາມບອບບາງທາງເສດຖະກິດ ຊຶ່ງຂົງເຂດທີ່ໄດ້ຄົ້ນຄວ້າ-ວິໄຈນັ້ນ ແມ່ນການກະສິກຳ (ໃນນັ້ນ, ແມ່ນອັດຕາສ່ວນແບ່ງ ແລະຄວາມບໍ່ໝັ້ນຄົງຂອງມັນ), ແຜນງານການຫັນເປັນອຸດສາຫະກຳ ແລະທັນສະໄໝ, ແລະການຫລຸດຜ່ອນ ແລະຄຸ້ມຄອງໄພພິບັດທາງທຳມະຊາດທີ່ໄດ້ຖືກສະເໜີອອກແລ້ວນັ້ນ ຊຶ່ງມັນໄດ້ໃຫ້ເຫດຜົນວ່າບັນດາຍຸດທະສາດການພັດທະນາກະສິກຳ, ການຫັນເປັນອຸດສາຫະກຳ ແລະ ການຫລຸດຜ່ອນໄພພິບັດທາງທຳມະຊາດ ແມ່ນຈະຕ້ອງຖືກເຊື່ອມສານເຂົ້າກັບບັນດາຍຸດທະສາດ ຂອງ ສປປ ລາວ ເພື່ອບັນລຸບັນດາເປົ້າໝາຍການພັດທະນາຂອງໂລກ ແລະການເອົາຜູ້ຄົນເປັນໃຈກາງ. ການພັດທະນາມະນຸດແມ່ນເຄື່ອງມືທີ່ສຳຄັນ ແລະແມ່ນເປົ້າໝາຍຢູ່ໃນຕົວຂອງມັນເອງ. ໃນພາກນີ້, ໄດ້ລົງທ້າຍດ້ວຍການສະເໜີກ່ຽວກັບການດຳເນີນງານຕ່າງໆເພື່ອເສີມຕື່ມໃຫ້ແກ່ແຜນງານຕ່າງໆຂອງລັດຖະບານ.

ພາກທີ 5: ເປັນການສະຫລຸບບົດລາຍງານການສົນທະນາແບບສັ້ນໆ ແລະກະຈ່າງແຈ້ງ ກ່ຽວກັບທິດທາງທີ່ຈະເດີນໜ້າຕໍ່ໄປ. ໄດ້ສົນທະນາເລື່ອງບັນດາທາງເລືອກດ້ານນະໂຍບາຍກ່ຽວກັບສິດທິໃນບັນດາຄຳໝັ້ນສັນຍາຕ່າງໆ ຂອງ ສປປ ລາວ ຕໍ່ກັບການເຊື່ອມໂຍງທາງເສດຖະກິດເຂົ້າກັບຂົງເຂດພາກພື້ນ ແລະສາກົນ, ການຂ້າມຜ່ານໄປສູ່ເສດຖະກິດທີ່ນຳໂດຍຕະຫຼາດຫຼາຍຂຶ້ນ ແລະບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDG). ສຸດທ້າຍ, ແມ່ນວາລະການດຳເນີນການສຳລັບການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນ.

### ເອກະສານຊ້ອນທ້າຍ 0.1: ບັນຊີລາຍຊື່ບັນດາປະເທດດ້ອຍພັດທະນາ

| ຊື່ປະເທດ | ປີທີ່ເຂົ້າຢູ່ໃນບັນຊີ | ຊື່ປະເທດ | ປີທີ່ເຂົ້າຢູ່ໃນບັນຊີ |
|---|---|---|---|
| ອາຟະການິສະຖານ | 1971 | ມາດາກາສະກາ | 1991 |
| ອັງໂກລາ[a] | 1994 | ມາລາວີ | 1971 |
| ບັງກະລາເດດ | 1975 | ມາລີ | 1971 |
| ເບນິນ | 1971 | ມໍຣິຕາເນຍ | 1986 |
| ພູຖານ | 1971 | ໂມຊຳບິກ | 1988 |
| ເບີກິນາ ຟາໂຊ | 1971 | ພະມ້າ | 1987 |
| ບູຣູນດິ | 1971 | ເນປານ | 1971 |
| ກຳປູເຈຍ | 1991 | ໄນເຈີເຣຍ | 1971 |
| ສາທາລະນາລັດ ອາຟຣິກາກາງ | 1975 | ຣໍວັນດາ | 1971 |
| ຊາດ | 1971 | ຊາວໂຕເມ ແລະ ປະຣິນຊິບເປ | 1982 |
| ໂກໂມໂຣສ໌ | 1977 | ເຊເນການ | 2000 |
| ສາທະລະນາລັດ ປະຊາທິປະໄຕ ກົງໂກ | 1991 | ເຊຣາລີໂອນ | 1982 |
| ຈີບູຕີ | 1982 | ໝູ່ເກາະໂຊໂລມອນ | 1991 |

| | | | |
|---|---|---|---|
| ເອກວາໂຕຣຽນ ຈູອີນເນຍ[b] | 1982 | ໂຊມມາລີ | 1971 |
| ເອຣິຕະເຣຍ | 1994 | ຊູດານໃຕ້ | 2012 |
| ເອທິໂອປີ | 1971 | ຊູດານ | 1971 |
| ກຳເບຍ | 1975 | ຕີມໍເລສະເຕ | 2003 |
| ຈູອີນເນຍ | 1971 | ໂຕໂກ | 1982 |
| ຈູອີນເນຍ-ບິຊໍ | 1981 | ຕູວາລູ | 1986 |
| ໄຮຕິ | 1971 | ອູກັນດາ | 1971 |
| ກີຣິບາຕີ | 1986 | ຕັນຊາເນຍ | 1971 |
| ສປປ ລາວ | 1971 | ວານູອາຕູ[c] | 1985 |
| ເລໂຊໂທ | 1971 | ເຢແມນ | 1971 |
| ລີເບີເຣຍ | 1990 | ຊຳເບຍ | 1991 |

ແຫຼ່ງຂໍ້ມູນ: United Nations Committee for Development Policy;

http://www.un.org/en/development/ desa/policy/cdp/ldc/ldc_list.pdf

ໝາຍເຫດ:

a. ມະຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ ເລກທີ A/RES/70/253, ລົງວັນທີ 12 ກຸມພາ 2016, ຕົກລົງວ່າ ອັງໂກລາ ຈະຫລຸດພົ້ນໄດ້ພາຍໃນ 5 ປີ ຫຼັງຈາກການຮັບຮອງມະຕິ, ຕົວຢ່າງແມ່ນ ວັນທີ 12 ກຸມພາ 2021.

b. ມະຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ ເລກທີ A/RES/68/18, ລົງວັນທີ 4 ທັນວາ 2013, ຕົກລົງວ່າ ເອກວາໂຕຣຽນ ຈູອີນເນຍ ຈະຫລຸດພົ້ນໄດ້ພາຍໃນ 3 ປີ ເຄິ່ງ ຫຼັງຈາກການຮັບຮອງມະຕິ, ຕົວຢ່າງແມ່ນ ວັນທີ 4 ມິຖຸນາ 2017.

c. ມະຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ ເລກທີ A/RES/68/18 ລົງວັນທີ 4 ທັນວາ 2013, ຕົກລົງວ່າ ວານູອາຕູ ຈະຫລຸດພົ້ນໄດ້ພາຍໃນ 4 ປີ ຫຼັງຈາກການຮັບຮອງມະຕິ ຕົວຢ່າງແມ່ນ ວັນທີ 4 ທັນວາ 2017. ມະຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ ເລກທີ A/RES/70/78 ລົງວັນທີ 9 ທັນວາ 2015, ໄດ້ຕົກລົງຂະຫຍາຍໄລຍະເວລາໃນການກະກຽມກ່ອນການຫລຸດພົ້ນໃຫ້ແກ່ ວານູອາຕູ ຕື່ມອີກ 3 ປີ ຄືຮອດ ວັນທີ 4 ທັນວາ 2020, ເນື່ອງຈາກຄວາມຫຍຸ້ງຍາກສະເພາະທີ່ສົ່ງຜົນກະທົບຕໍ່ຄວາມກ້າວໜ້າທາງເສດຖະກິດ ແລະສັງຄົມ ຂອງ ວານູ ອາຕູ ຍ້ອນພາຍຸຊາຍຄະໂລນປາມ.

# ພາກທີ 1

## ສະພາບຂອງການພັດທະນາມະນຸດ

ສປປ ລາວ ມີຄວາມຄືບໜ້າຢ່າງໜ້າພໍໃຈໃນການພັດທະນາມະນຸດ ແລະການຫລຸດຜ່ອນຄວາມທຸກຍາກ, ເຊິ່ງໄດ້ຮັບການຍູ້ໜູນຈາກການເຕີບໂຕຢ່າງໄວວາຢູ່ໃນຂະແໜງຊັບພະຍາກອນ. ແຕ່ເຖິງຢ່າງໃດກໍ່ຕາມ, ການຈັດອັນດັບຢູ່ໃນໂລກແມ່ນໄດ້ຫລຸດລົງ; ເນື່ອງຈາກຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດນັ້ນ ແມ່ນຍັງບໍ່ທັນສົມສ່ວນກັບການເຕີບໂຕຂອງມັນ. ນອກຈາກນີ້, ບັນດາຜົນສຳເລັດຂອງ ສປປ ລາວ ແມ່ນຍັງບໍ່ທັນສະເໝີພາບ ຫຼືເທົ່າທຽມກັນຢູ່ໃນທົ່ວທຸກຂົງເຂດພື້ນທີ່ ແລະບັນດາກຸ່ມຊົນເຜົ່າຕ່າງໆຂອງມັນ. ຄວາມບໍ່ສະເໝີພາບ ແລະຊ່ອງວ່າງຂອງຄວາມແຕກຕ່າງກັນໄດ້ເພີ່ມຂຶ້ນ, ພ້ອມກັບຄວາມບອບບາງກໍ່ສູງ ອັນເຮັດໃຫ້ອັດຕາຄວາມໄວໃນຄວາມຄືບໜ້າຂອງມັນຊັກຊ້າລົງ. ສປປ ລາວ ຈຳເປັນຈະຕ້ອງໄດ້ເຮັດໃຫ້ການເຕີບໂຕເພື່ອທຸກຄົນນັ້ນກວ້າງອອກ ແລະຄວາມຮັບຜິດຊອບຕໍ່ການພັດທະນາມະນຸດນັ້ນສູງຂຶ້ນ. ລັດຖະບານຈະຕ້ອງໄດ້ມີການລິເລີ່ມການສົນທະນາລະດັບຊາດກ່ຽວກັບຜົນກະທົບທາງສັງຄົມຂອງບາງເປົ້າໝາຍທີ່ສາມາດບັນລຸໄດ້ ໃນການພັດທະນາມະນຸດຢູ່ໃນແຂວງຕ່າງໆ ແລະລະຫວ່າງຊຸມຊົນຊົນເຜົ່າຕ່າງໆ.

ມີກຸ່ມເຄື່ອງມືວັດແທກຈຳນວນໜຶ່ງທີ່ຖືກພັດທະນາຂຶ້ນມາໃນໄລຍະຜ່ານມາ ເພື່ອປະເມີນສະພາບສະຫວັດດີພາບຂອງມະນຸດ. ໃນສາມຫຼັກການທີ່ສຳຄັນນັ້ນແມ່ນດັດຊະນີການພັດທະນາມະນຸດ (HDI) ,ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) ແລະດັດຊະນີຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຍິງຊາຍ (GII), ເພີ່ມຕື່ມຈາກອັນນັ້ນກໍ່ຍັງມີ HDI ທີ່ຖືກດັດປັບຄວາມບໍ່ສະເໝີພາບ ຊຶ່ງແຕ່ລະອັນນີ້ແມ່ນປະກອບດ້ວຍ 3-4 ຕົວຊີ້ບອກ. ເອກະສານຊ້ອນທ້າຍ 1.1 ສະແດງໃຫ້ເຫັນເຖິງບັນດາວິທີການຕ່າງໆຂອງການຄິດໄລ່ກ່ຽວກັບບັນດາຕົວຊີ້ບອກເຫຼົ່ານີ້.[1]

## ລາຍງານຄວາມຄືບໜ້າຂອງການພັດທະນາມະນຸດ

### ດັດຊະນີການພັດທະນາມະນຸດ

ພວກເຮົາໄດ້ມີຄວາມກ້າວໜ້າທີ່ສຳຄັນກ່ຽວກັບການເພີ່ມຂຶ້ນຂອງດັດຊະນີພັດທະນາມະນຸດ ໂດຍທີ່ຄ່າ HDI ໄດ້ເພີ່ມຂຶ້ນຈາກ 0,340 ໃນປີ 1980 ເປັນ 0,575 ໃນປີ 2014. ເຖິງຢ່າງໃດກໍ່ຕາມ, ສະຖານະພາບທີ່ກ່ຽວຂ້ອງກັບເລື່ອງນີ້ ຂອງ ສປປ ລາວ ກໍ່ຍັງບໍ່ທັນດີພໍ, ຖ້າສົມທຽບໃສ່ຫຼາຍປະເທດຢູ່ໃນໂລກນີ້. ຈາກການຈັດອັນດັບກ່ຽວກັບ HDI ຂອງໂລກ ໃນປີ 2014, ສປປ ລາວ ແມ່ນຖືກຈັດໃຫ້ຢູ່ໃນອັບທີ 141 ຈາກ 187 ປະເທດທີ່ມີຂໍ້ມູນ ຊຶ່ງເຫັນວ່າຫລຸດລົງຈາກອັນດັບທີ 139 ໃນປີ 2013 ແລະຈາກອັນດັບທີ 138 ໃນປີ 2012, ໝາຍຄວາມ

ວ່າຊື່ຮ້າຍກວ່າປະເທດອື່ນໆ. ຄ່າ HDI ຂອງ ສປປ ລາວ ໄດ້ຫລຸດລົງເປັນ 0,428 (ໃນປີ 2014), ໃນຂະນະທີ່ຄວາມບໍ່ສະເໝີພາບໄດ້ຫລຸດລົງ ຊຶ່ງອັນນີ້ກໍາລັງຊີ້ໃຫ້ເຫັນວ່າມັນມີຄວາມສາມາດຫຼີກລ່ຽງຄວາມບໍ່ສະເໝີພາບໄດ້.

ລະຫວ່າງ 9 ປະເທດກໍາລັງພັດທະນາໃນ ASEAN ແມ່ນ ສປປ ລາວ ຖືກຈັດໃຫ້ຢູ່ໃນອັນດັບທີ 7 (ຕາຕະລາງ 1.1).[2] ປະເທດໄທ ອັນດັບທີ 2 ແລະຫວຽດນາມ ອັນດັບທີ 5 ແມ່ນປະເທດຄູ່ຮ່ວມທາງການຄ້າ ແລະການລົງທຶນທີ່ສໍາຄັນຢູ່ໃນຂົງເຂດ ຂອງ ສປປ ລາວ ແລະການຈັດອັນດັບຢູ່ໃນໂລກ ສໍາລັບ ສປປ ລາວ ກໍ່ເຫັນວ່າຕໍ່າກວ່າ 2 ປະເທດນີ້ຫຼາຍ. ອັນນີ້ໄດ້ເຮັດໃຫ້ມີຄວາມກັງວົນໃຈ ໃນເມື່ອເບິ່ງຈາກທັດສະນະຂອງທັງການຫລຸດພົ້ນອອກຈາກ LDC ແລະການເຊື່ອມໂຍງເຂົ້າກັບປະຊາຄົມເສດຖະກິດ (AEC) ຢ່າງເຕັມສ່ວນ, ເພາະວ່າການຮ່ວມມືທາງເສດຖະກິດແມ່ນຈະມີຄວາມເທົ່າທຽມກັນໝົດທຸກປະເທດ.[3]

**ຕາຕະລາງທີ 1.1: HDI ຂອງບັນດາປະເທດອາຊຽນ, 2014**

| ຊື່ປະເທດ | HDI (2014) | ອັນດັບໃນ ASEAN | ອັນດັບໃນໂລກ (2014) |
|---|---|---|---|
| ກໍາປູເຈຍ | 0,555 | 8 | 143 |
| ອິນໂດເນເຊຍ | 0,684 | 3 | 110 |
| ສປປ ລາວ | 0,575 | 7 | 141 |
| ມາເລເຊຍ | 0,779 | 1 | 62 |
| ພະມ້າ | 0,536 | 9 | 148 |
| ຟີລິບປິນ | 0,668 | 4 | 115 |
| ໄທ | 0,726 | 2 | 93 |
| ຫວຽດນາມ | 0,662 | 5 | 116 |
| ຕີມໍເລສະເຕ[a] | 0,595 | 6 | 133 |

ແຫຼ່ງຂໍ້ມູນ: UNDP (2015)

ໝາຍເຫດ: a = ຕີມໍເລສະເຕ ແມ່ນຍັງບໍ່ເປັນສະມາຊິກ ASEAN ຢ່າງເຕັມສ່ວນ ຊຶ່ງໄດ້ສະໝັກເຂົ້າເປັນສະມາຊິກຢ່າງເປັນທາງການ ໃນວັນທີ 4 ມີນາ 2011 ແລະຄາດວ່າຈະເປັນສະມາຊິກຢ່າງເຕັມສ່ວນໃນປີ 2017.

ຮູບທີ 1.1: ສະເໜີຄ່າ HDI ຂອງ 8 ປະເທດ ASEAN ໃນລະຫວ່າງປີ 1980 ແລະ 2014, ຊຶ່ງເຫັນໄດ້ວ່າ ມາເລເຊຍ ແມ່ນຍັງສາມາດຮັກສາການເປັນຜູ້ນໍາໜ້າຢູ່. ແຕ່ ຟີລິບປິນ ທີ່ເຄີຍຢູ່ໃນລະດັບດຽວກັນກັບ ມາເລເຊຍ ໃນປີ 1980 ນັ້ນ ແມ່ນສູນເສຍອັນດັບໃຫ້ແກ່ ໄທ ແລະປັດຈຸບັນນີ້ແມ່ນຢູ່ລຸ່ມ ອິນໂດເນເຊຍ ແລະເກືອບຈະຢູ່ໃນລະດັບດຽວກັນກັບ ຫວຽດນາມ. ເຖິງວ່າ ພະມ້າ ໄດ້ມີຄວາມຄືບໜ້າແດ່ແລ້ວ, ແຕ່ກໍ່ຍັງຢູ່ຕໍ່າກວ່າໝູ່ ແລະບໍ່ຫ່າງຈາກ ກໍາປູເຈຍ ພໍເທົ່າໃດ. ກໍາປູເຈຍ ແລະໄທ ແມ່ນເຫັນວ່າໄດ້ຮັບການພັດທະນາໄວ. ກໍາປູເຈຍ ທີ່ຢູ່ລຸ່ມນັ້ນ ກໍ່ເຫັນວ່າຈະນໍາທັນ ສປປ ລາວ ແລ້ວ, ແຕ່ເບິ່ງຄືວ່າມັນຈະອ່ອນກໍາລັງລົງໃນບໍ່ດົນນີ້. ເລີ່ມຈາກພື້ນຖານທີ່ຕໍ່າ HDI ຂອງ ສປປ ລາວ ໄດ້ຖືກເລັ່ງໃຫ້ໄວຂຶ້ນ, ແຕ່ອັດຕາຄວາມໄວຂອງມັນແມ່ນຊັກຊ້າລົງກວ່າເກົ່າ ນັບຕັ້ງແຕ່ປີ 2005 ມານີ້. ສປປ ລາວ ມີຄວາມຈໍາເປັນຕ້ອງໄດ້ໃສ່ເກຍເລັ່ງໃຫ້ HDI ມີຄວາມຄືບໜ້າໄວຂຶ້ນກວ່ານີ້ ເພື່ອທີ່ຈະບັນລຸໄດ້ເປົ້າໝາຍການຫລຸດພົ້ນອອກຈາກຄວາມທຸກຍາກ ແລະການເຊື່ອມໂຍງກັບ AEC ໄດ້ຢ່າງລາບລື່ນ.

**ຮູບທີ 1.1: ແນວໂນ້ມ HD ຂອງ 8 ປະເທດ ASEAN**




ແຫຼ່ງຂໍ້ມູນ: UNDP (2015)

## ດັດຊະນີຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຊາຍ (GII) ແລະດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI)

GII ແມ່ນດັດຊະນີວັດແທກ ອັດຕາສ່ວນ (%) ຂອງການສູນເສຍການພັດທະນາມະນຸດ ຍ້ອນບັນດາຂໍ້ບົກຜ່ອງດ້ານບົດບາດຍິງ-ຊາຍ ທີ່ມີບັນດາມິຕິຕ່າງໆຂອງ HD ລວມຢູ່ໃນນັ້ນ. ບັນດາຄ່າຂອງ GII ແມ່ນຈັດລຽງຢູ່ໃນລະຫວ່າງ 0 ຫາ 1, ໂດຍທີ່ 0 ແມ່ນມີຄວາມສະເໝີພາບ ຊຶ່ງມັນໄດ້ຊີ້ໃຫ້ເຫັນວ່າເພດຍິງແມ່ນມີຄວາມສະເໝີພາບ, ຖ້າສົມທຽບກັບເພດຊາຍ, ແລະ 1 ແມ່ນບໍ່ມີຄວາມສະເໝີພາບຢ່າງເຕັມສ່ວນ ຊຶ່ງຊີ້ບອກວ່າເພດຍິງແມ່ນຂີ້ຮ້າຍຫຼາຍຖ້າທຽບກັບເພດຊາຍ. GDI ແມ່ນອັດຕາສ່ວນຂອງ HDI ທີ່ຖືກຄິດໄລ່ແຍກອອກຕ່າງຫາກສໍາລັບເພດຍິງ ແລະ ເພດຊາຍ.[4] ຕາຕະລາງ 1.2: ສະແດງໃຫ້ເຫັນເຖິງບັນດາຄ່າ GII ແລະ GDI ຂອງ 9 ປະເທດກໍາລັງພັດທະນາຢູ່ໃນກຸ່ມ ASEAN.

**ຕາຕະລາງ 1.2: ບັນດາດັດຊະນີທີ່ກ່ຽວພັນກັບບົດບາດຍິງ-ຊາຍ**

| ຊື່ປະເທດ | ດັດຊະນີຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຊາຍ (GII) | ອັນດັບຂອງໂລກ (2013) | ດັດຊະນີການພັດທະນາບົດບາດຍິງ-ຊາຍ (GDI) | ອັນດັບຂອງໂລກ (2013) |
|---|---|---|---|---|
| ກໍາປູເຈຍ | 0,505 | 105 (7) | 0,909 | 105 |
| ອິນໂດເນເຊຍ | 0,500 | 103 (6) | 0.923 | 98 |
| ສປປ ລາວ | 0,534 | 118 (8) | 0,897 | 112 |
| ມາເລເຊຍ | 0,21 | 39 (1) | 0,935 | 91 |
| ພະມ້າ | 0,43 | 83 (5) | n.a. | n.a. |

| | | | | |
|---|---|---|---|---|
| ຟີລິບປິນ | 0,406 | 78 (4) | 0,989 | 17 |
| ໄທ | 0,364 | 70 (3) | 0,990 | 14 |
| ຫວຽດນາມ | 0,322 | 58 (2) | n.a. | n.a. |
| ຕີມໍເລສະເຕ | 0,875 | 122 (9) | n.a. | n.a. |

ແຫຼ່ງຂໍ້ມູນ: ຄືກັນກັບຕາຕະລາງ 1.1

ໝາຍເຫດ: ຕົວເລກທີ່ຢູ່ໃນວົງເລັບໃນຖັນທີ (3) ແມ່ນສະແດງເຖິງອັນດັບໃນ ASEAN.

ມີຢູ່ 3 ຂໍ້ສັງເກດແຕກຕ່າງກັນທີ່ຈະຕ້ອງໄດ້ຈົດຈຳຢູ່ໃນທີ່ນີ້: ອັນທີໜຶ່ງ, ແມ່ນການຈັດລຽງລຳດັບ HDI, GII ແລະ GDI ຂອງປະເທດທີ່ແຕກຕ່າງກັນຢ່າງຈະແຈ້ງ ຊຶ່ງອັນດັບ ຂອງ ສປປ ລາວ ຢູ່ໃນໂລກນີ້ແມ່ນທີ 141 (HDI), 118 (GII) ແລະ 112 (GDI) ຊຶ່ງທັງໝົດນັ້ນແມ່ນເກືອບວ່າຢູ່ໃນທ້າຍໆຂອງບັນປະເທດ ASEAN. ອັນທີສອງ, ແມ່ນປະເທດໄທ ແລະຟີລິບປິນ ໄດ້ເຮັດໃຫ້ GDI ດີຂຶ້ນກວ່າເກົ່າຫຼາຍ ຈາກການຈັດອັນດັບຢູ່ໃນໂລກ ຖ້າທຽບໃສ່ HDI ຫຼື GII ຂອງເຂົາເຈົ້າ, ຊຶ່ງ GII ແມ່ນຄວນຈະຕ້ອງຕ່ຳ (ອັນນີ້ໝາຍຄວາມວ່າມີຜົນສຳເລັດຫຼາຍຂຶ້ນ) ເຖິງແມ່ນວ່າໃນເວລານັ້ນປະເທດຍັງຊັກຊ້າກ່ຽວກັບ HDI ໂດຍລວມກໍ່ຕາມ (ຕົວຢ່າງປະເທດພະມ້າ). ເວົ້າອີກໃນທາງໜຶ່ງ, HDI ຂອງ ພະມ້າ ແມ່ນຈະຕ້ອງຂີ້ຮ້າຍກວ່າ ຍ້ອນຂາດຄວາມສະເໝີພາບດ້ານບົດບາດຍິງ-ຊາຍຫຼາຍກວ່າ. ອັນທີສາມ, ປະເທດໄທ ແມ່ນໃກ້ຈະສົມບູນແບບແລ້ວ ກ່ຽວກັບຄວາມສະເໝີພາບດ້ານການພັດທະນາບົດບາດຍິງ-ຊາຍ ໂດຍ GDI ຂອງມັນແມ່ນຢູ່ທີ່ 0,990 ແລະ ສປປ ລາວ ແມ່ນມີຄວາມຊັກຊ້າຫຼາຍກ່ຽວກັບການພັດທະນາບົດບາດຍິງ-ຊາຍ ຊຶ່ງ GDI ຂອງມັນແມ່ນຢູ່ທີ່ 0,897 ໃນລະຫວ່າງປະເທດກຳລັງພັດທະນາທີ່ຢູ່ໃນກຸ່ມ ASEAN.

ໂດຍເຫັນໄດ້ຈາກພາບທັດສະນະຂອງການພັດທະນາມະນຸດ, ປະຊາຊົນແມ່ນຊັບສິນທີ່ແທ້ຈິງຂອງຊາດ. ໃນຂະນະທີ່ເພດຍິງກວມເອົາເຖິງເຄິ່ງໜຶ່ງຂອງຈຳນວນມະນຸດຊາດຢູ່ໃນໂລກນີ້, ໂດຍການພັດທະນາຂອງເຂົາເຈົ້າກໍ່ມີຄວາມໝາຍໃນການພັດທະນາມະນຸດເຊັ່ນກັນ ຊຶ່ງບາດລ້ຽວນີ້ຈະຊ່ວຍພັດທະນາບໍ່ພຽງແຕ່ HD, ແຕ່ຫາກຍັງສາມາດບັນລຸໄດ້ເປົ້າໝາຍການເຕີບໂຕທາງເສດຖະກິດເພື່ອທຸກຄົນໂດຍລວມອີກດ້ວຍ.

## ຄວາມຄືບໜ້າຕ່າງໆໃນການພັດທະນາມະນຸດຂອງແຂວງ

ສຳລະດັບ HDI ຂອງແຂວງແມ່ນໄດ້ຄຳນວນເປັນສອງໄລຍະ ຄື: 2002-2003 ແລະ 2012-2013 ເພື່ອປະເມີນ ຫຼືວັດແທກເບິ່ງຂະໜາດຄວາມແຕກຕ່າງກັນຂອງ HD ຢູ່ພາຍໃນແຂວງ ແລະເບິ່ງຄວາມຄືບໜ້າທີ່ກ່ຽວພັນກັບ HD ຂອງແຂວງຕ່າງໆ. ສ່ວນວິທີການສຳລັບການຄຳນວນດັດຊະນີນີ້ ແມ່ນໄດ້ນຳໃຊ້ວິທີການເກົ່າທີ່ໄດ້ຖືກນຳໃຊ້ມາຮອດກາງທົດສະວັດທີ່ຜ່ານມາ. ເນື່ອງຈາກມີຂໍ້ຈຳກັດຫຼາຍອັນກ່ຽວກັບຂໍ້ມູນຢູ່ໃນລະດັບແຂວງ ຈຶ່ງພາໃຫ້ເກີດມີຄວາມບ່ຽງເບນສອງອັນຈາກວິທີວິທະຍາທົ່ວໄປທີ່ໄດ້ເຮັດມາແລ້ວ ຄື: ອັນທີ 1, ການຄິດໄລ່ GDP/GNI ຢູ່ໃນ ສປປ ລາວ ແມ່ນບໍ່ໄດ້ເອົາຢູ່ໃນລະດັບແຂວງ, ແຕ່ໄດ້ເອົາມາຈາກລະດັບການຊົມໃຊ້ຢູ່ໃນ LECS-5 ແທນ. ອັນທີສອງ, ຂໍ້ມູນດ້ານການມີອາຍຸຍືນ ແມ່ນໄດ້ມາຈາກການສຳຫຼວດພົນລະເມືອງພຽງຢ່າງດຽວ, ແຕ່ວ່າຂໍ້ມູນຈາກການສຳຫຼວດພົນລະເມືອງ ໃນປີ 2015 ແມ່ນຍັງບໍ່ທັນເຂົ້າເຖິງໄດ້ເທື່ອ. ໃນທາງກົງກັນຂ້າມ, ອັດຕາການຕາຍຂອງເດັກເກີດໃໝ່ (IMR) = [1-IMR] ແມ່ນໄດ້ມາຈາກຈາກການສຳຫຼວດພົນລະເມືອງ ໃນປີ 2005 ແລະໄດ້ນຳໃຊ້ຂໍ້ມູນຈາກ LSIS ໃນປີ 2011-2012 LSIS ແທນ.

### ຄວາມແຕກຕ່າງກັນ ຫຼືຄວາມບໍ່ສະເໝີພາບຢູ່ພາຍໃນແຂວງ:

ບັນດາຕົວດັດຊະນີລະດັບແຂວງທີ່ໄດ້ນຳມາຄຳນວນສຳລັບຊ່ວງໄລຍະປີ 2011-2013 (ຮູບທີ 1.2), ໄດ້ສະແດງໃຫ້ເຫັນວ່າ HDI ສູງທີ່ສຸດແມ່ນຢູ່ນະຄອນຫຼວງວຽງຈັນ ແລະຕ່ຳທີ່ສຸດແມ່ນຢູ່ແຂວງຄຳມ່ວນ. ໂດຍທົ່ວໄປແລ້ວ, ການເປີດຕະຫຼາດໃຫ້ຫຼາຍຂຶ້ນ ແລະການມີອາຊີບທີ່ຫຼາກຫຼາຍນັ້ນ ແມ່ນເຮັດໃຫ້ບັນດາຄ່າ HDI ສູງຂຶ້ນ,

ຊຶ່ງຢູ່ໃນອັນດັບສຸດທ້າຍຂອງບັນຊີນີ້ແມ່ນ ແຂວງຜົ້ງສາລີ (ພາກເໜືອ), ສາລະວັນ (ພາກໃຕ້) ແລະຄຳມ່ວນ (ພາກກາງ). ສຳລັບ HDI ຂອງນະຄອນຫຼວງວຽງຈັນ (ທີ່ສູງກວ່າໝູ່) ແມ່ນ 2,7 ເທື່ອ ສູງກວ່າ HDI ຂອງແຂວງຄຳມ່ວນ. ສ່ວນຄວາມແຕກຕ່າງລະຫວ່າງຄ່າສະເລ່ຍຂອງ HDI ສຳລັບບັນດາແຂວງທີ່ຢູ່ໃນລະດັບສູງສຸດ ແລະບັນດາແຂວງທີ່ຢູ່ໃນລະດັບຕ່ຳສຸດ ແມ່ນຢູ່ທີ່ 2,19. ສຳລັບຕົວຄູນຂອງຕົວປ່ຽນ (COV) ແມ່ນຢູ່ທີ່ປະມານ 26% ຊຶ່ງໃນທາງສະຖິຕິແລ້ວແມ່ນເຫັນວ່າສູງຫຼາຍ.[5]

**ຮູບທີ 1.2: ຄ່າດັດຊະນີການພັດທະນາມະນຸດຂອງບັນດາແຂວງ ໃນປີ 2012-2013**




ແຫຼ່ງຂໍ້ມູນ: ຄຳນວນຈາກຂໍ້ມູນ LECS-5 (2004), LSIS (2012) ແລະຖານຂໍ້ມູນຈາກກະຊວງສຶກສາ ຂອງ ສປປ ລາວ.

## ຄວາມຄືບໜ້າຂອງ HDI ຂອງແຂວງ ໃນລະຫວ່າງປີ 2002-2003 ແລະ 2011-2013

ຢູ່ໃນການກຳນົດໂດຍທົ່ວໄປຂອງມັນ, HDI ແມ່ນວັດແທກຈາກຕົວແທນຂອງຫຼາຍຂະແໜງການ ແລະຖ້າສົມທຽບມັນຢູ່ໃນສະພາບຂອງຊ່ວງໄລຍະເວລາໃດໜຶ່ງແມ່ນບໍ່ອາດສາມາດອະນຸຍາດໃຫ້ເຮັດໄດ້,ນອກຈາກວ່າພວກເຮົາຫາກໄດ້ກຳນົດເປົ້າໝາຍຄືງທີ່ໄວ້ຢ່າງແນ່ນອນດ້ວຍການສົມທຽບກັບສາກົນ.ຍ້ອນແນວນັ້ນ,ການວິໄຈບັນດາສິດທິຂັ້ນພື້ນຖານຕ່າງໆຈຶ່ງບໍ່ສາມາດເຮັດໄດ້ຢູ່ພາຍໃນຂັ້ນແຂວງເນື່ອງຈາກຂາດແຄນຂໍ້ມູນຢູ່ໃນຂັ້ນນີ້. ເຖິງແນວໃດກໍ່ຕາມ, ໃນແຕ່ລະປີບັນດາແຂວງກໍ່ຄວນທີ່ຈັດລຽງລຳດັບ HDI ຂອງຕົນ ແລະອັນດັບທີຂອງແຕ່ລະແຂວງແມ່ນຄວນຈະຕ້ອງໄດ້ມີການສົມທຽບກັນເພື່ອໃຫ້ເຫັນຄວາມແຕກຕ່າງດ້ວຍການການວາງຕຳແໜ່ງຂອງມັນໄວ້ແຕ່ເນີ້ນໆ. ອັນດັບທີຕ່າງໆແມ່ນໄດ້ໃຫ້ໄວ້ສຳລັບປີ 2002-2013 ແລະ 2011-2013 ຢູ່ໃນຕາຕະລາງ 1.3.

**ຕາຕະລາງ 1.3: ການຈັດລຽງອັນດັບ HDI ຂອງແຂວງ, 2002-2003 ແລະ 2011-2013**

| ຊື່ແຂວງ | 2003 HDI | 2003 ອັນດັບທີ | 2013 HDI | 2013 ອັນດັບທີ | ການປ່ຽນແປງອັນດັບ |
|---|---|---|---|---|---|
| (1) | (2) | (3) | (4) | (5) | (6) |
| ນະຄອນຫຼວງ ວຽງຈັນ | 0,79 | 1 | 0,78 | 1 | ຍັງຄືເກົ່າ |
| ຜົ້ງສາລີ | 0,32 | 14 | 0,47 | 16 | ເສຍໄປ 2 ຕຳແໜ່ງ |
| ຫຼວງນ້ຳທາ | 0,30 | 15 | 0,32 | 7 | ໄດ້ເພີ່ມ 8 ຕຳແໜ່ງ |

| | | | | | |
|---|---|---|---|---|---|
| ອຸດົມໄຊ | 0,32 | 12 | 0,54 | 12 | ຍັງຄືເກົ່າ |
| ບໍ່ແກ້ວ | 0,45 | 7 | 0,50 | 14 | ເສຍໄປ 7 ຕຳແໜ່ງ |
| ຫຼວງພະບາງ | 0,44 | 9 | 0,56 | 10 | ເສຍໄປ 1 ຕຳແໜ່ງ |
| ຫົວພັນ | 0,45 | 8 | 0,53 | 13 | ເສຍໄປ 5 ຕຳແໜ່ງ |
| ໄຊຍະບູລີ | 0,57 | 3 | 0,61 | 5 | ເສຍໄປ 2 ຕຳແໜ່ງ |
| ຊຽງຂວາງ | 0,48 | 6 | 0,59 | 6 | ຍັງຄືເກົ່າ |
| ວຽງຈັນ | 0,62 | 2 | 0,63 | 2 | ຍັງຄືເກົ່າ |
| ບໍລິຄຳໄຊ | 0,54 | 4 | 0,60 | 4 | ຍັງຄືເກົ່າ |
| ຄຳມ່ວນ | 0,34 | 11 | 0,49 | 17 | ເສຍໄປ 6 ຕຳແໜ່ງ |
| ສະຫວັນນະເຂດ | 0,43 | 10 | 0,55 | 11 | ເສຍໄປ 1 ຕຳແໜ່ງ |
| ສາລະວັນ | 0,26 | 16 | 0,46 | 15 | ໄດ້ເພີ່ມ 1 ຕຳແໜ່ງ |
| ເຊກອງ | 0,24 | 17 | 0,58 | 8 | ໄດ້ເພີ່ມ 9 ຕຳແໜ່ງ |
| ຈຳປາສັກ | 0,49 | 5 | 0,58 | 9 | ເສຍໄປ 6 ຕຳແໜ່ງ |
| ອັດຕະປື | 0,32 | 13 | 0,65 | 3 | ໄດ້ເພີ່ມ 10 ຕຳແໜ່ງ |

ໝາຍເຫດ:ຖັນທີ (2) ແລະ (4) ຢູ່ໃນຕາຕະລາງນີ້ ແມ່ນບໍ່ສາມາດສົມທຽບກັນໄດ້ ຍ້ອນການຈັດລຽງອັນດັບແມ່ນກ່ຽວພັນຊຶ່ງກັນ ແລະກັນ ລະຫວ່າງແຕ່ລະແຂວງ ຢູ່ໃນປີດຽວກັນ ແລະບໍ່ແມ່ນປີທີ່ຕ່າງກັນ

ມັນສາມາດເຫັນໄດ້ວ່າ ການຈັດລຽງອັນດັບ HD ຂອງບັນດາແຂວງຕ່າງໆຜ່ານໜຶ່ງທົດສະວັດຜ່ານມາ ແມ່ນມີການປ່ຽນແປງທີ່ເຫັນໄດ້ຢ່າງຈະແຈ້ງ ດັ່ງທີ່ສັງລວມໄວ້ຂ້າງລຸ່ມນີ້:

1. ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ອຸດົມໄຊ, ຊຽງຂວາງ ແລະບໍລິຄຳໄຊ ແມ່ນສາມາດຮັກສາອັນດັບທີຂອງເຂົ້າເຈົ້າເອົາໄວ້ໄດ້ຄືເກົ່າ.

2. ແຂວງອັດຕະປື ແມ່ນໄດ້ມີການປັບປຸງຢ່າງຫຼວງຫຼາຍ ຈາກອັນດັບທີ 13 ມາເປັນອັນດັບ 3 ແລະ ເຊກອງ ຈາກອັນດັບທີ 17 ມາເປັນທີ 8 ຊຶ່ງອັນນີ້ແມ່ນມີຄວາມຈຳເປັນຕ້ອງມີການອະທິບາຍ. ມັນແມ່ນຍ້ອນມີການລົງທຶນຈຳນວນຫຼາຍຈາກ ສປ ຈີນ ຫຼືບໍ່ ຈຶ່ງເຮັດໃຫ້ມັນມີການປ່ຽນແປງຄືແນວນີ້?. ຖ້າຫາກແມ່ນແນວນັ້ນແທ້, ເປັນຫຍັງ ແຂວງສະຫວັນນະເຂດ ຈຶ່ງບໍ່ໄດ້ມີການປັບປຸງໃນທົດສະວັດຜ່ານມານີ້ ຊຶ່ງມັນກໍ່ມີການລົງທຶນຂອງຕ່າງປະເທດຢູ່ໃນແຂວງນີ້ຫຼາຍເຊັ່ນກັນ?.

3. ແຂວງຈຳປາສັກ ທີ່ເປັນແຂວງໃກ້ຄຽງກັບ ແຂວງເຊກອງ ແລະອັດຕະປື ພັດມີຄວາມຂີ້ຮ້າຍລົງກວ່າເກົ່າ ຄືຈາກທີ 5 ມາເປັນທີ 9. ເປັນຫຍັງມັນຈຶ່ງບໍ່ສາມາດໄດ້ຮັບຜົນປະໂຫຍດ ທີ່ລົ້ນເຫຼືອອອກມາຈາກສອງແຂວງໃກ້ຄຽງທີ່ເປັນດາວເດັ່ນນີ້ໄດ້ ?

4. ແຂວງບໍ່ແກ້ວ, ຫົວພັນ ແລະຄຳມ່ວນ ແມ່ນໄດ້ມີການສູນເສຍ ຫຼື ຫລຸດລົງຫຼາຍກວ່າ 5 ອັນດັບ. ມັນແມ່ນຫຍັງແດ່ທີ່ປະກອບສ່ວນຕໍ່ການຫລຸດລົງຂອງເຂົາເຈົ້າ?

ມັນຮຽກຮ້ອງໃຫ້ມີການສຶກສາລົງລາຍລະອຽດກວ່ານີ້ເພື່ອຕອບບັນດາຄຳຖາມເຫຼົ່ານີ້ໃຫ້ໄດ້. ບັນດາຄຳຕອບຕໍ່ບັນດາຄຳຖາມເຫຼົ່ານີ້ຈະເປັນຜົນຕາມມາທີ່ສຳຄັນສຳລັບການວາງນະໂຍບາຍຕ່າງໆ ແລະບັນດາຍຸດທະສາດການດຳເນີນງານເພື່ອສົ່ງເສີມ HD, ຊຶ່ງການເພີ່ມອຳນາດ ຫຼືຄວາມສາມາດຂອງປະຊາຊົນແມ່ນເປັນຈຸດເລີ່ມຕົ້ນທີ່ສຳຄັນ.

## ຄວາມຄືບໜ້າໃນການເພີ່ມອຳນາດໃຫ້ແກ່ປະຊາຊົນ: ການສຶກສາ, ສາທາລະນາສຸກ ແລະການໂພຊະນາການ

ການສຶກສາ ແລະສີມືແຮງງານຕ່າງໆ, ພ້ອມກັບການມີສຸຂະພາບທີ່ດີຂອງປະຊາຊົນຈະເພີ່ມຄວາມສາມາດໃນການເຮັດວຽກ ຫຼືການຈ້າງງານຂອງເຂົາເຈົ້າ ຊຶ່ງຈະເປັນການເປີດປະຕູໃຫ້ເຂົາເຈົ້າມີລາຍໄດ້, ມີທາງເລືອກ ແລະອິດສາລະພາບຫຼາຍຂຶ້ນ. ການພົວພັນກັນລະຫວ່າງການຈ້າງງານທີ່ມີຄຸນນະພາບ (ແລະມີລາຍໄດ້ທີ່ຫຼາຍຂຶ້ນ), ການມີຄວາມຮູ້ ແລະສຸຂະພາບທີ່ດີຂຶ້ນ ແມ່ນຖືກສ້າງຂຶ້ນດ້ວຍປະສົບປະການຫຼາຍກວ່າທິດສະດີມາຫຼາຍກວ່າສີ່ທົດສະວັດແລ້ວ.[6] ການມີຄວາມຮູ້ທີ່ເພີ່ມຂຶ້ນຍັງສາມາດປະກອບສ່ວນຕໍ່ກັບການເພີ່ມລາຍໄດ້ ແລະຄຸນນະພາບຊີວິດຂອງເຂົາເຈົ້າເອງ ແລະລູກຫຼານຂອງເຂົາເຈົ້າໃຫ້ດີຂຶ້ນ ໂດຍຜ່ານການເຮັດໃຫ້ວິຖີການດຳລົງຊີວິດຂອງເຂົາເຈົ້າມີຄວາມສົມເຫດສົມຜົນ ແລະເປັນມິດກັບສະພາບແວດລ້ອມ. ບັນດາຮູບແບບຂອງການສຶກສາ (ແລະສີມືຕ່າງໆ) ແມ່ນມີຄວາມຈຳເປັນເພື່ອຄວາມອຸດົມສົມບູນຂອງການພັດທະນາມະນຸດ ແລະເປັນສູນກາງຂອງການບັນລຸ HAI ທີ່ສູງຂຶ້ນ.

### ຄວາມຮູ້ໜັງສື ແລະການເຂົ້າໂຮງຮຽນຂັ້ນພື້ນຖານ:

ໃນລະຫວ່າງ ສົກປີ 2002-2003 ແລະ 2012-2013, ອັດຕາການຮູ້ໜັງສື ຢູ່ໃນ ສປປ ລາວ ໄດ້ເພີ່ມຂຶ້ນປະມານ 75% ຫາ 83%, ຊຶ່ງຈຳນວນປະຊາກອນທີ່ມີອາຍຸ 6 ປີ ຂຶ້ນໄປ ທີ່ຮູ້ໜັງສືນັ້ນ ແມ່ນເຫັນວ່າອັດຕາສ່ວນຂອງເພດຍິງຍັງໜ້ອຍກວ່າເພດຊາຍຢູ່. ເຖິງແມ່ນວ່າໄດ້ມີຄວາມພະຍາຍາມໃຫ້ນຳທັນກັນກໍ່ຕາມ, ແຕ່ກໍ່ຍັງມີຄວາມຄືບໜ້າຊັກຊ້າຢູ່. ສ່ວນຈຳນວນປະຊາກອນທີ່ມີອາຍຸຢູ່ໃນລະຫວ່າງ 25-30 ປີ ທີ່ບໍ່ຮູ້ໜັງສືນັ້ນ ສ່ວນຫຼາຍແມ່ນບໍ່ມີຄວາມຄາດຫວັງທີ່ຈະຮູ້ໜັງສືອີກ ຍ້ອນພາລະໜ້າທີ່, ຄວາມຮັບຜິດຊອບ ແລະຄວາມມັກຂອງເຂົາເຈົ້າ. ນອກຈາກນັ້ນ, ກໍ່ຍັງມີບັນດາອົງປະກອບ ຫຼືປັດໄຈອື່ນໆອີກ ທີ່ເຮັດໃຫ້ຜູ້ໃຫຍ່ບໍ່ຢາກຮູ້ໜັງສື. ອັດຕາສ່ວນກ່ຽວກັບເລື່ອງນີ້ແມ່ນເຫັນວ່າມີການຖ່ວງດຶງຄືນ ຍ້ອນການເພີ່ມຂຶ້ນຂອງການມີອາຍຸຍືນ. ກ່ຽວກັບຄວາມຄືບໜ້າໃນເລື່ອງນີ້ ຢູ່ໃນກຸ່ມຜູ້ທີ່ມີອາຍຸທີ່ໜຸ່ມກວ່າ (6-24 ປີ) ແມ່ນມີຄວາມຮູ້ດີກວ່າຫຼາຍ, ຊຶ່ງຈຸດນີ້ຈະໄດ້ເວົ້າຕໍ່ໄປຢູ່ໃນພາກທີ 3.

ຢູ່ໃນກະໂຕສູນກາງຂອງແຂວງຕ່າງໆແມ່ນມີອັດຕາການຮູ້ໜັງສືຫຼາຍກວ່າ, ແລະຖ້າສົມທຽບແລ້ວເຫັນວ່າບັນດາແຂວງພາກໃຕ້ ແລະພາກເໜືອ ແມ່ນມີອັດຕາການຮູ້ໜັງສືຫຼາຍກວ່າພາກກາງ. ຕົວຢ່າງນີ້, ແມ່ນສອດຄ່ອງກັບການພັດທະນາເສດຖະກິດຂອງຂົງເຂດ, ຊຶ່ງມັນກຳລັງຊີ້ໃຫ້ເຫັນວ່າບັນດາລາຍໄດ້ຕ່າງໆ ແລະ ການເຂົ້າຮ່ວມໃນຂະບວນການຂອງການສຶກສາຕ່າງໆແມ່ນມັນມີຄວາມສຳພັນກັນ. ຄວາມແຕກຕ່າງຂອງການປ່ຽນແປງການຮູ້ໜັງສືຢູ່ພາຍໃນແຂວງຕ່າງໆ ແມ່ນມີຄວາມແຕກໂຕນກັນຫຼາຍ; ເຖິງຢ່າງໃດກໍ່ຕາມ, ຄ່າສຳປະສິດຂອງການປ່ຽນແປງ (COV) ແມ່ນຢູ່ທີ່ 14%.[7]

ການສຶກສາໂດຍສະເລ່ຍໃນຊຸມປີຜ່ານມານີ້ແມ່ນຢູ່ໃນອັນດັບທີ່ 4-5 ປີ ໂດຍທີ່ການສຶກສາຂອງເພດຍິງແມ່ນຕໍ່າກວ່າເພດຊາຍໜ້ອຍໜຶ່ງ. ສ່ວນໜຶ່ງໃນນີ້, ແມ່ນເປັນຍ້ອນປັດໄຈຕ່າງໆທາງດ້ານວັດທະນະທຳ ຊຶ່ງບັນດາວັດທະນະທຳທີ່ມີຢູ່ໃນສັງຄົມຊົນເຜົ່າຕ່າງໆຂອງລາວ ແມ່ນມີຄວາມເຊື່ອວ່າເດັກນ້ອຍເພດຍິງຈະຕ້ອງຢູ່ໃນບົດບາດຕາມປະເພນີ; ເພາະສະນັ້ນ, ເຂົາເຈົ້າຈຶ່ງມີຄວາມຮູ້ສຶກວ່າການສຶກສາຢູ່ໃນໂຮງຮຽນຢ່າງເປັນທາງການ ແມ່ນບໍ່ມີຄວາມສຳຄັນສຳລັບເຂົາເຈົ້າ. ປັດໄຈຕ່າງໆດ້ານການຂາດເຂີນສິ່ງອຳນວຍຄວາມສະດວກສຳລັບການຮຽນນັ້ນກໍ່ເປັນອີກອັນໜຶ່ງ; ຕົວຢ່າງ: ຫຼາຍໂຮງຮຽນແມ່ນບໍ່ມີຫ້ອງນ້ຳທີ່ອຳນວຍຄວາມສະດວກໃຫ້ແກ່ເດັກນ້ອຍເພດຍິງ.[8]

ອັດຕາການເຂົ້າຮຽນສຸດທິຢູ່ໃນຊັ້ນປະຖົມສຳລັບປີ 2014 ແມ່ນປະມານ 97% ຊຶ່ງມີຄວາມແຕກຕ່າງເລັກໜ້ອຍດ້ານບົດບາດຍິງ-ຊາຍ, ແຕ່ກໍ່ໃກ້ຈະບັນລຸເປົ້າໝາຍ MDGs ແລ້ວ. ສຳລັບຄວາມແຕກຕ່າງຢູ່ພາຍໃນແຂວງກໍ່ມີໜ້ອຍເຊັ່ນກັນ ໂດຍຄ່າ COV ແມ່ນປະມານ 3%. ອັດຕາການເຂົ້າຮຽນສຸດທິຂອງ ແຂວງຫຼວງນ້ຳທາ, ຫົວພັນ ແລະສະຫວັນນະເຂດ ແມ່ນໜ້ອຍກວ່າ (95%) ຊຶ່ງໜ້ອຍກວ່າແຂວງອື່ນໆໜ້ອຍໜຶ່ງ.[9]

## ການໂພຊະນາການ ແລະສຸຂະພາບ

ຜູ້ທີ່ມີສຸຂະພາບດີແມ່ນເປັນຄົນທີ່ມີຄວາມສຸກຫຼາຍກວ່າ, ຜູ້ທີ່ຮຽນຮູ້ຄວາມດຸໝັ່ນພາກພຽນ ແລະຜູ້ອອກແຮງງານທີ່ມີຄວາມຕັ້ງໃຈ ແລະມີຜະລິດຕະພາບ ແມ່ນສາມາດເຮັດໜ້າທີ່ປະຈຳວັນຂອງຕົນດີຂຶ້ນ. ການມີສຸຂະພາບທີ່ດີກໍ່ແມ່ນສິ່ງຈຳເປັນສຳເລັບຜູ້ຄົນ ເພື່ອເຮັດບົດບາດໜ້າທີ່ທາງສັງຄົມໄດ້ຫຼາຍຂຶ້ນ. ສຸຂະພາບ ແລະການໂພຊະນາການ ແມ່ນເປັນອົງປະກອບທີ່ຈຳເປັນ ເພື່ອຄວາມສົມບູນຂອງ HD.

ຜູ້ທີ່ທຸກຍາກດ້ານອາຫານແມ່ນໃຫ້ຖືວ່າເປັນຜູ້ທີ່ມີອາຫານບໍ່ພຽງພໍ.[10] ໃນສົກປີ 2012-2013 ແມ່ນມີປະມານ 21,1% ຂອງປະຊາກອນ ຢູ່ໃນ ສປປ ລາວ ໄດ້ຮັບຄວາມທຸກທໍລະມານຈາກຄວາມທຸກຍາກດ້ານອາຫານ: ໃນນັ້ນ, 23,3% ແມ່ນຢູ່ໃນເຂດຊົນນະບົດ ແລະ 12,1% ແມ່ນຢູ່ໃນເຂດຕົວເມືອງ (ຕາຕະລາງທີ 1.4). ການມີອາຫານທີ່ບໍ່ດີນັ້ນ ສ່ວນຫຼາຍແມ່ນສຸມຢູ່ໃນເຂດຊົນນະບົດ ແລະມີຢູ່ສູງໃນເຂດຊົນນະບົດຂອງພາກໃຕ້ ແລະພາກເໜືອ. ເຖິງຢ່າງໃດກໍ່ຕາມ, ໃນຄວາມເປັນຈິງແລ້ວຜູ້ທີ່ທຸກຍາກຢູ່ໃນເຂດຊົນນະບົດໄດ້ມີການເພີ່ມຂຶ້ນແດ່ແລ້ວ.

**ຕາຕະລາງ 1.4: ຜູ້ທີ່ທຸກຍາກດ້ານອາຫານ ທີ່ຖືວ່າມີອາຫານບໍ່ພຽງພໍ ໃນປີ 2012-2013**

| ເຂດທີ່ຕັ້ງ | % ຂອງປະຊາກອນຜູ້ທີ່ທຸກຍາກດ້ານອາຫານ |
|---|---|
| ເຂດຊົນນະບົດໃນວຽງຈັນ | 12,5 |
| ເຂດຕົວເມືອງໃນວຽງຈັນ | 10,5 |
| ເຂດຊົນນະບົດໃນພາກເໜືອ | 25,4 |
| ເຂດຕົວເມືອງໃນພາກເໜືອ | 7,9 |
| ເຂດຊົນນະບົດໃນພາກກາງ | 18,5 |
| ເຂດຕົວເມືອງໃນພາກກາງ | 14,6 |
| ເຂດຊົນນະບົດໃນພາກໃຕ້ | 29,3 |
| ເຂດຕົວເມືອງໃນພາກໃຕ້ | 16,3 |
| ເຂດຊົນນະບົດໃນ ສປປ ລາວ | 23,3 |
| ເຂດຕົວເມືອງໃນ ສປປ ລາວ | 12,1 |
| ທົ່ວ ສປປ ລາວ | 20,1 |

ແຫຼ່ງຂໍ້ມູນ: Pimhidzai, et al (2014)

ຂໍ້ມູນແມ່ນໄດ້ມາຈາກການສຳຫຼວດຕົວຊີ້ວັດທາງສັງຄົມ ຂອງ ສປປ ລາວ 2011-2012 ທີ່ຊີ້ໃຫ້ເຫັນວ່າ 26,6% ຂອງຈຳນວນເດັກນ້ອຍຊາຍ (ອາຍຸ 0-5 ປີ) ແລະ 26,4% ຂອງເດັກນ້ອຍຍິງແມ່ນມີນ້ຳໜັກຫລຸດເກນມາດຕະຖານ, 45,7% ຂອງເດັກນ້ອຍຊາຍ ແລະ 42,6% ຂອງເດັກຍິງ ແມ່ນມີຄວາມສູງຫລຸດເກນມາດຕະຖານ (ເຕີບໂຕບໍ່ເຕັມທີ່), 6,4% ຂອງເດັກຊາຍ ແລະ 5,4% ຂອງເດັກຍິງແມ່ນຈ່ອຍເຫຼືອງ.[11] ອີງຕາມຂໍ້ມູນ, ແມ່ນເປັນທີ່ຈະແຈ້ງແລ້ວວ່າບໍ່ມີຄວາມບໍ່ສະເໝີພາບຫຼາຍດ້ານບົດບາດຍິງ-ຊາຍ. ເຖິງຢ່າງໃດກໍ່ຕາມ, ການມີນ້ຳໜັກ ແລະຄວາມສູງຫລຸດເກນມາດຕະຖານ, ແລະການມີຮ່າງກາຍທີ່ຈ່ອຍເຫຼືອງຢູ່ໃນລະຫວ່າງກຸ່ມຊົນເຜົ່າອື່ນໆ ແມ່ນມີຫຼາຍກວ່າເຜົ່າລາວ-ໄຕ; ແລະ ມີຢູ່ໃນເຂດຊົນນະບົດ, ໃນບັນດາຄອບຄົວທີ່ແມ່ມີການສຶກສາຕ່ຳ ແລະ/ຫຼືກຸ່ມທີ່ມີລາຍໄດ້ຕ່ຳຫຼາຍກວ່າ ຊຶ່ງບັນດາຊ່ອງວ່າງຕ່າງໆເຫຼົ່ານີ້ໄດ້ຊີ້ໃຫ້ເຫັນເຖິງລັກສະນະທາງມິຕິ ຫຼືຂະໜາດຂອງການຂາດສານອາຫານ. ບັນດາເປົ້າໝາຍ MDG (ປີ 2015) ທີ່ຍັງບໍ່ທັນບັນລຸໄດ້ນັ້ນແມ່ນກ່ຽວກັບບັນດາຂໍ້ມູນຕົວເລກເຫຼົ່ານີ້.

ອັນສຸດທ້າຍ, ອັດຕາການຕາຍຂອງເດັກເກີດໃໝ່, ເດັກທີ່ມີອາຍຸລຸ່ມ 5 ປີ ແລະແມ່ ແມ່ນບັນດາຕົວຊີ້ບອກທີ່ສຳຄັນກ່ຽວກັບດ້ານສາທາລະນາສຸກ ຊຶ່ງມັນໄດ້ສະແດງໃຫ້ເຫັນເຖິງຄວາມຄືບໜ້າບາງອັນແລ້ວ; ເຖິງວ່າມີ

ຫຼາຍອັນຢູ່ໃນສິ່ງເຫຼົ່ານີ້ແມ່ນຍັງຢູ່ຫ່າງຈາກເປົ້າໝາຍ MDGs ທີ່ຕັ້ງໄວ້ກໍ່ຕາມ – ລາຍລະອຽດກ່ຽວກັບເລື່ອງນີ້ແມ່ນມີຢູ່ໃນພາກທີ 3.

### ນ້ຳ ແລະສຸຂະອະນາໄມ:

ນ້ຳດື່ມທີ່ສະອາດ ແລະປອດໄພໄດ້ຊ່ວຍປັບປຸງການໂພຊະນາການ ແລະຫລຸດຜ່ອນອັນຕາການຕາຍໄດ້. ຖ້າຫາກບໍ່ມີ ຫຼືມີສິ່ງປົນເປື້ອນຢູ່ໃນນ້ຳໜ້ອຍທີ່ສຸດ, ຈຳນວນອາຫານທີ່ໄດ້ກິນລົງໄປກໍ່ຈະຖືກຮັກສາໄວ້ຢູ່ໃນຮ່າງກາຍແລ້ວມັນກໍ່ຈະຊ່ວຍປັບປຸງໂພຊະນາການ ແລະການເຕີບໂຕຂອງມະນຸດ. ຄວາມໝາຍ ຂອງ ສປປ ລາວ ກ່ຽວກັບນ້ຳສະອາດແມ່ນໝາຍເຖິງນ້ຳລິນ, ນ້ຳບາດານ, ນ້ຳສ້າງ, ນ້ຳອອກບໍ່ ແລະນ້ຳອັດກວດ, ສ່ວນແຫຼ່ງອື່ນໆແມ່ນຖືວ່າບໍ່ປອດໄພ.

ກ່ຽວກັບເລື່ອງສຸຂະອະນາໄມ, ບັນດາອົງການຕ່າງໆໄດ້ກຳນົດວ່າ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມທີ່ໄດ້ຮັບການປັບປຸງຢ່າງຖືກຕ້ອງຕາມຫຼັກອະນາໄມນັ້ນ ຈະຊ່ວຍແຍກສິ່ງເສດເຫຼືອຂອງມະນຸດອອກຈາກການຕິດແປດກັບມະນຸດ. ຖ້າການກຳຈັດສິ່ງເສດເຫຼືອຈາກມະນຸດນັ້ນຫາກບໍ່ດີພໍ ກໍ່ຈະເຮັດໃຫ້ມີພະຍາດຕ່າງໆເກີດຂຶ້ນໄດ້, ລວມທັງພະຍາດຖອກທ້ອງ ແລະ ໂປລີໂອ.

ໃນປີ 2010-2015, ມີປະມານ 70% ຂອງຈຳນວນຄົວເຮືອນ ຢູ່ໃນ ສປປ ລາວ ໄດ້ເຂົ້າເຖິງນ້ຳສະອາດ (ຫຼືນ້ຳທີ່ປອດໄພ) ສຳລັບການໃຊ້ດື່ມ, ໃຊ້ລ້າງ ແລະໃຊ້ເພື່ອກິດຈະກຳອື່ນໆ, ມີປະມານ 59% ຂອງຄົວເຮືອນໄດ້ເຂົ້າເຖິງສຸຂະອະນາໄມທີ່ປອດໄພ. ຕາຕະລາງທີ 1.5 ໄດ້ສະແດງໃຫ້ເຫັນເຖິງບັນດາຕົວເລກເຫຼົ່ານີ້ທີ່ມີຢູ່ໃນຂົງເຂດຕ່າງໆຂອງປະເທດ, ຊຶ່ງຕາຕະລາງນີ້ໄດ້ຊີ້ໃຫ້ເຫັນວ່າ ຈຳນວນລວມ ແລະເຂດຕົວເມືອງຕ່າງໆ ແມ່ນດີກວ່າບັນດາເຂດຊົນນະບົດຫຼາຍ. ກ່ຽວກັບນ້ຳທີ່ສະອາດ ແລະປອດໄພນັ້ນ ແມ່ນຂົງເຂດພາກເໜືອຈະດີກວ່າພາກອື່ນໆຂອງປະເທດ, ໃນຂະນະທີ່ເຂດພາກກາງພັດມີສຸຂະອະນາໄມດີກວ່າ. ສຳລັບເຂດພາກໃຕ້ແມ່ນມີສຸຂະອະນາໄມໜ້ອຍກວ່າຫຼາຍ ຖ້າສົມທຽບກັບສອງຂົງເຂດດັ່ງກ່າວ ແລະຊ່ອງວ່າງນີ້ແມ່ນຫ່າງອອກຈາກກັນຫຼາຍ. ບັນດາຕົວຢ່າງເຫຼົ່ານີ້, ສາມາດເປັນໄປໄດ້ທີ່ຈະສະທ້ອນໃຫ້ເຫັນເຖິງຜົນກະທົບຂອງບັນດາໂຄງການໃຫ້ທຶນຈາກພາຍນອກ ທີ່ກ່ຽວພັນກັບການສະໜອງນ້ຳ ແລະສຸຂະອະນາໄມ ຊຶ່ງໄດ້ຈັດຕັ້ງປະຕິບັດຢູ່ໃນເຂດພາກກາງ ແລະພາກເໜືອ. ບັນດາຄວາມແຕກຕ່າງຢູ່ໃນຂົງເຂດອັນໃຫຍ່ໂຕເຫຼົ່ານີ້ ແມ່ນປະກອບດ້ວຍ: COV ຂອງການເຂົ້າເຖິງນ້ຳສະອາດແມ່ນຢູ່ທີ່ 18%, ໃນຂະນະທີ່ການເຂົ້າເຖິງສຸຂະອະນາໄມທີ່ປອດໄພແມ່ນ 38% ໃນທົ່ວແຂວງຕ່າງໆ ຊຶ່ງດີກວ່າ 10% ຂອງເພດານທີ່ໄດ້ຮັບຮອງໃນລະດັບຊາດ. ບັນດາຊ່ອງວ່າງເຫຼົ່ານີ້ແມ່ນເປັນຜົນຮ້າຍຕໍ່ກັບ HD, ສະຫວັດດີພາບຂອງມະນຸດ ແລະສຳລັບການຫລຸດພົ້ນອອກຈາກສະຖານະພາບ LDC ຂອງປະເທດ.

**ຕາຕະລາງ 1.5: ອັດຕາສ່ວນຂອງຄົວເຮືອນທີ່ເຂົ້າເຖິງນ້ຳສະອາດ ແລະສຸຂະອະນາໄມທີ່ປອດໄພ**

| ຂົງເຂດ | % ຂອງຄົວເຮືອນທີ່ເຂົ້າເຖິງນ້ຳສະອາດ | % ຂອງຄົວເຮືອນທີ່ເຂົ້າເຖິງສຸຂະອະນາໄມທີ່ປອດໄພ |
|---|---|---|
| ພາກເໜືອ | 79,4 | 61,3 |
| ພາກກາງ | 64,8 | 67,8 |
| ພາກໃຕ້ | 67,1 | 34,8 |
| ທັງໝົດໃນຕົວເມືອງ | 87,6 | 91,3 |
| ທັງໝົດໃນຊົນນະບົດ | 63,9 | 48,2 |
| ສຳລັບທົ່ວປະເທດ | 69,9 | 59,2 |

ແຫຼ່ງຂໍ້ມູນ: ການສຳຫຼວດຕົວຊີ້ວັດທາງສັງຄົມ ຂອງ ສປປ ລາວ, 2010-2011

ໂດຍສະຫລຸບແລ້ວ, ຄວາມຄືບໜ້າໃນການເພີ່ມອຳນາດ ຫຼືເພີ່ມພະລັງໃຫ້ແກ່ປະຊາຊົນແມ່ນດີຂຶ້ນຫຼາຍ, ແຕ່ກໍ່ຍັງມີຄວາມບໍ່ເທົ່າທຽມກັນຢູ່ ແລະຍັງມີອັນສຳຄັນທີ່ຂາດຫາຍໄປຢູ່ໃນການເຂົ້າຮ່ວມການສຶກສາ, ສະພາບເງື່ອນ

ໄຂດ້ານສາທາລະນາສຸກ, ລະດັບຂອງການໂພຊະນາການ ແລະການເຂົ້າເຖິງນໍ້າດື່ມ, ແລະສຸຂະອະນາໄມທີ່ປອດໄພ. ຍັງມີຄວາມແຕກຕ່າງກັນຫຼາຍຢູ່ໃນຂົງເຂດພື້ນທີ່ຕ່າງໆລະຫວ່າງຍິງ-ຊາຍ ແລະກຸ່ມຊົນເຜົ່າຕ່າງໆ, ຊຶ່ງບັນດາຜູ້ວາງນະໂຍບາຍຈຳເປັນຈະຕ້ອງໄດ້ຮັບຮູ້ວ່າຄວາມແຕກຕ່າງໃນແນວນອນ (ທາງຂວາງ) ກ່ຽວກັບການພັດທະນາມະນຸດ ແລະການເພີ່ມພະລັງອຳນາດທີ່ກ່ຽວພັນກັບຄວາມທຸກຍາກ ແລະຄວາມບໍ່ສະເໝີພາບນັ້ນເປັນຄືແນວໃດ.

## ຄວາມທຸກຍາກ ແລະຄວາມບໍ່ສະເໝີພາບ - ຕາມຊ່ວງໄລຍະເວລາຕ່າງໆ[12]

### ຄວາມທຸກຍາກ:

ບັນດາການວັດແທກດ້ານລາຍໄດ້ ຫຼືການຊົມໃຊ້ທີ່ກ່ຽວກັບຂະໜາດຂອງຄວາມທຸກຍາກນັ້ນ ແມ່ນໄດ້ລະບຸເຖິງການສູນເສຍທີ່ແທ້ຈິງຂອງປະຊາຊົນ ເຊັ່ນ: ການຂາດແຄນການເຂົ້າເຖິງອາຫານ ແລະສິ່ງຈຳເປັນຂັ້ນພື້ນຖານຕ່າງໆທີ່ສົມຄວນປະຊາຊົນຈະຕ້ອງໄດ້ຮັບ (ຢ່າງເປັນປະຈຳ ຫຼືເປັນຊ່ວງໄລຍະເວລາ). ປະຊາຊົນຜູ້ທີ່ທຸກຍາກນັ້ນແມ່ນຍ້ອນເຂົາເຈົ້າບໍ່ສາມາດມີລາຍໄດ້ທີ່ພຽງພໍຕໍ່ກັບຄວາມຕ້ອງການຂັ້ນຕໍ່າສຸດຂອງເຂົາເຈົ້າ ເນື່ອງຈາກວຽກເຮັດງານທຳ ແລະການຈ້າງງານຍັງມີໜ້ອຍ, ການຈ່າຍຄ່າແຮງງານຍັງຕໍ່າ, ມີຄວາມບໍ່ສະເໝີພາບ, ມີການຢູ່ນອກ ຫຼືຫ່າງເຫີນຈາກສັງຄົມ ແລະປະກົດການອື່ນໆທີ່ຄ້າຍຄືກັນນີ້ກໍ່ຍັງມີຢູ່.

ການວັດແທກຄວາມທຸກຍາກຕາມຫົວຄົນແມ່ນເຫັນໄດ້ຢູ່ໃນຮູບທີ 1.3 ຊຶ່ງມັນໄດ້ສະແດງໃຫ້ເຫັນວ່າອັດຕາຄວາມທຸກຍາກໃນລະດັບຊາດ (ປະເທດ) ແມ່ນໄດ້ຫລຸດລົງປະມານເຄິ່ງໜຶ່ງ ຈາກລະຫວ່າງຕົ້ນຊຸມປີ 1990 ແລະ 2012-2013 ຊຶ່ງພຽງແຕ່ເກືອບຈະບັນລຸໄດ້ເປົ້າໝາຍ MDG (ຂອງປີ 2015) ເທົ່ານັ້ນ. ການເພີ່ມຄວາມສາມາດ ແລະສະຕິປັນຍາ, ທຶນມະນຸດຂັ້ນຕົ້ນ ແລະການເຂົ້າເຖິງທີ່ດິນ, ລວມທັງການສ້າງວຽກເຮັດງານທຳທີ່ບໍ່ແມ່ນການກະສິກຳ ແມ່ນເປັນຕົວຂັບເຄື່ອນທີ່ສຳຄັນຂອງການຫລຸດຜ່ອນຄວາມທຸກຍາກ. ບໍ່ຈຳເປັນຕ້ອງເວົ້າກໍ່ຮູ້ແລ້ວວ່າການຫລຸດຜ່ອນຄວາມທຸກຍາກຂອງ ສປປ ລາວ ນັ້ນ, ທີ່ສຳຄັນແມ່ນໄດ້ມາຈາກຂະແໜງການຊັບພະຍາກອນທຳມະຊາດທີ່ເປັນຕົວຂັບເຄື່ອນ ດ້ວຍການເພີ່ມຂຶ້ນຂອງຄວາມຕ້ອງການຢູ່ໃນເຂດເສດຖະກິດຂອງໂລກໂດຍສະເພາະແມ່ນປະເທດຈີນ.

ແຕ່ວ່າການປັບປຸງການຫລຸດຜ່ອນຄວາມທຸກຍາກໂດຍລວມ ແມ່ນຍັງມີຄວາມແຕກຕ່າງກັນຫຼາຍຢູ່ໃນລະຫວ່າງຂົງເຂດຕ່າງໆຂອງປະເທດ. ອັດຕາຄວາມທຸກຍາກຢູ່ໃນຂົງເຂດພາກໃຕ້ ແມ່ນສູງກວ່າອັດຕາສະເລ່ຍຂອງທົ່ວປະເທດເຖິງ 6 % ແລະຢູ່ໃນຂົງເຂດພາກເໜືອກໍ່ຍັງສູງກວ່າອັດຕາຄວາມທຸກຍາກຂອງທົ່ວປະເທດເຊັ່ນກັນ.

**ຮູບທີ 1.3: ຜູ້ທີ່ຍັງຢູ່ລຸ່ມເສັ້ນຄວາມທຸກຍາກທາງການ 1993-2013, ແບ່ງຕາມແຕ່ລະເຂດ (%)**[13]




ແຫຼ່ງຂໍ້ມູນ: Pimhidzai et al (2014), ແລະ UNDP (2009)

ອັດຕາຄວາມໄວ ຫຼືຄວາມກ້າວໜ້າຂອງການຫລຸດຜ່ອນຄວາມທຸກຍາກຢູ່ໃນຂົງເຂດຕ່າງໆກໍ່ຍັງບໍ່ທັນເທົ່າທຽມກັນ ຫຼືຄືກັນ. ຢູ່ໃນນະຄອນຫຼວງວຽງຈັນ ແມ່ນໄດ້ມີການຫລຸດລົງຫຼາຍໃນລະຫວ່າງ 1992-1993 ແລະ 1997-1998, ແຕ່ວ່າຫຼັງຈາກນັ້ນອັດຕາຄວາມທຸກຍາກພັດເພີ່ມໃນ 10 ປີຕໍ່ມາ ແລະໄດ້ຫລຸດລົງອີກໃນປີ 2012-2013. ເຫດຜົນທີ່ເປັນໄປໄດ້ອັນໜຶ່ງສໍາລັບການປ່ຽນແປງຂຶ້ນໆລົງໆນີ້ ແມ່ນການເຄື່ອນຍ້າຍຖິ່ນຖານເຂົ້າມາຂອງຜູ້ທີ່ທຸກຍາກຢູ່ໃນຊົນນະບົດຜ່ານຊ່ວງໄລຍະເວລາຮອດປີ 2007-2008, ຊຶ່ງເຂົາເຈົ້າເຫຼົ່ານັ້ນອາດຈະບໍ່ສາມາດຊອກຫາວຽກເຮັດງານທໍາທີ່ເໝາະສົມໄດ້ຢ່າງທັນການ; ແຕ່ວ່າພາຍຫຼັງທີ່ຢູ່ໃນນະຄອນຫຼວງວຽງຈັນມານານ ບັນດາຜູ້ຍ້າຍຖິ່ນຖານເຫຼົ່ານັ້ນກໍ່ສາມາດປັບຕົວເຂົ້າກັບສັງຄົມເມືອງ ແລະເລີ່ມມີລາຍໄດ້ຫຼາຍຂຶ້ນ.

ຢູ່ໃນບັນດາແຂວງພາກເໜືອທີ່ເປັນເຂດທີ່ມີອັດຕາສ່ວນຜູ້ທີ່ທຸກຍາກຫຼາຍກວ່າໝູ່ ໃນລະຫວ່າງປີ 1992-1993 ແລະ 2007-2008, ແຕ່ມາຮອດປີ 2012-2013 ແມ່ນເຫັນວ່າໄດ້ມີການຫລຸດລົງຢ່າງຫຼວງຫຼາຍ. ໃນຂະນະທີ່ບັນດາແຂວງພາກກາງແມ່ນຍັງຮັກສາລະດັບການຫລຸດລົງຂອງອັດຕາຄວາມທຸກຍາກແບບຄ່ອຍໆ (ແບບຄ່ອຍເປັນຄ່ອຍໄປ), ເວົ້າແບບສັ້ນໆ: ແມ່ນເຂົາເຈົ້າໄດ້ປ່ຽນອັນດັບ ໃນປີ 1997-1998 ທີ່ຈະໃຫ້ກາຍເປັນເຂດທີ່ທຸກຍາກທີ່ສຸດອັນດັບສອງຂອງປະເທດ, ແຕ່ຕໍ່ຈາກເຂົາເຈົ້າກໍ່ໄດ້ປ່ຽນຖານະຂອງເຂົາເຈົ້າຄືນສູ່ອັນດັບທີສາມຂອງເຂດທີ່ທຸກຍາກທີ່ສຸດ. ຢູ່ຂົງເຂດພາກໃຕ້ ແມ່ນຍັງຮັກສາແນວໂນ້ມຂອງການຫລຸດຜ່ອນຄວາມທຸກຍາກໄວ້ຈົນຮອດປີ 2007-2008, ແຕ່ວ່າອັດຕາຄວາມທຸກຍາກພັດເພີ່ມຂຶ້ນໃນເຂດນັ້ນ ໃນປີ 2012-2013 ຊຶ່ງອັນນີ້ແມ່ນເຫດຜົນຂອງຄວາມຫ່ວງໃຍ (ທີ່ໜ້າເປັນຫ່ວງ) ຫລາຍ.

ບັນດາຕົວເລກຕ່າງໆທີ່ບໍ່ໄດ້ລວມເຂົ້າກັນ (ແຍກກັນຢູ່) ນີ້ (ຕາຕະລາງ 1.6) ແມ່ນສະແດງໃຫ້ເຫັນຢ່າງຈະແຈ້ງຫຼາຍຂຶ້ນ ກ່ຽວກັບຄວາມແຕກຕ່າງຂອງຂົງເຂດໃນດ້ານການເກີດຂຶ້ນຂອງຄວາມທຸກຍາກ ແລະຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ. ຕົວຢ່າງ: ເຄິ່ງໜຶ່ງຂອງປະຊາກອນໃນ ແຂວງສາລະວັນ ແລະຫຼາຍກວ່າ 40% ໃນ ແຂວງບໍ່ແກ້ວ ແລະເຊກອງ (2 ໃນ 5 ແຂວງທີ່ທຸກຍາກທີ່ສຸດ) ແມ່ນດໍາລົງຊີວິດຢູ່ໃນຄວາມທຸກຍາກ, ແຕ່ກົງກັນຂ້າມ, ຢູ່ໃນນະຄອນຫຼວງວຽງຈັນ (1 ໃນ 17 ແຂວງ) ແມ່ນມີພຽງແຕ່ 6% ເທົ່ານັ້ນ. ຢູ່ໃນເຂດຊົນນະບົດແມ່ນເຫັນໄດ້ຢ່າງຈະແຈ້ງວ່າມີຄວາມທຸກຍາກສູງກວ່າ ຊຶ່ງຢູ່ທີ່ 28,6% ທຽບກັບ 10% ຢູ່ໃນເຂດຕົວເມືອງ. ເປັນທີ່ໜ້າວິຕົກກັງວົນນັ້ນ, ແມ່ນຊ່ອງວ່າງນີ້ໄດ້ເພີ່ມຂຶ້ນໃນ 5 ປີຜ່ານມາ ໃນຂະນະທີ່ຄວາມທຸກຍາກຢູ່ໃນເຂດຕົວເມືອງໄດ້ຫລຸດລົງຢ່າງໄວອາກວ່າເກົ່າ. ໃນປັດຈຸບັນ, ປະມານ 87% ຂອງຜູ້ທີ່ທຸກຍາກ ແມ່ນດໍາລົງຊີວິດຢູ່ໃນເຂດຊົນນະບົດຊຶ່ງທຽບກັບໄລຍະຜ່ານມາແມ່ນມີຢູ່ປະມານ 80% ເທົ່ານັ້ນ. ເຫດຜົນໜຶ່ງທີ່ເຮັດໃຫ້ມີຄວາມແຕກໂຕນກັນລະຫວ່າງເຂດຕົວເມືອງ ແລະຊົນນະບົດນີ້ ແມ່ນຜະລິດຕະພາບຂອງການກະສິກໍາຕໍ່າຢູ່ໃນບ່ອນທີ່ຜູ້ທີ່ທຸກຍາກສ່ວນຫຼາຍເຮັດວຽກຢູ່. ຜະລິດຕະພາບຂອງແຮງງານຢູ່ໃນຂະແໜງກະສິກໍາ ແມ່ນຕໍ່າກວ່າຢູ່ໃນຂະແໜງການທີ່ບໍ່ແມ່ນກະສິກໍາຫຼາຍ ແລະມັນກໍ່ຍັງບໍ່ມີການເພີ່ມຂຶ້ນເທື່ອ.

**ຕາຕະລາງ 1.6: ອັດຕາຄວາມທຸກຍາກແຍກຕາມແຂວງ, 2002-2003 ເຖິງ 2012-2014**

| ຊື່ແຂວງ | % ຂອງຜູ້ທີ່ທຸກຍາກ 2002-2003 | % ຂອງຜູ້ທີ່ທຸກຍາກ 2007-2008 | % ຂອງຜູ້ທີ່ທຸກຍາກ 2012-2013 |
|---|---|---|---|
| ນະຄອນຫຼວງວຽງຈັນ | 16,7 | 15,2 | 5,9 |
| ຜົ້ງສາລີ | 50,8 | 46,0 | 12,3 |
| ອຸດົມໄຊ | 45,1 | 33,7 | 30,1 |
| ອັດຕະປື | 44,0 | 24,6 | 8,9 |
| ບໍລິຄໍາໄຊ | 28,7 | 21,5 | 16,4 |
| ສະຫວັນນະເຂດ | 43,1 | 28,5 | 27,9 |
| ຫຼວງພະບາງ | 39,5 | 27,2 | 25,5 |
| ຫົວພັນ | 51,5 | 50,5 | 39,2 |
| ບໍ່ແກ້ວ | 21,1 | 32,6 | 44,4 |

| | | | |
|---|---|---|---|
| ເຊກອງ | 41,8 | 51,8 | 42,7 |
| ຈຳປາສັກ | 18,4 | 10,0 | 199 |
| ຫຼວງນ້ຳທາ | 22,8 | 30,5 | 16,1 |
| ໄຊຍະບູລີ | 25,0 | 15,7 | 15,4 |
| ຊຽງຂວາງ | 41,6 | 42,0 | 31,9 |
| ແຂວງວຽງຈັນ | 19,0 | 28,0 | 12,0 |
| ຄຳມ່ວນ | 33,7 | 31,4 | 26,4 |
| ສາລະວັນ | 54,3 | 36,3 | 49,8 |
| **ສປປ ລາວ** | **33,5** | **27,6** | **23,2** |

ແຫຼ່ງຂໍ້ມູນ: Pimhidzai et al (2014)

ບັນດາແຂວງຕ່າງໆ ແມ່ນສາມາດຈັດເປັນ 3 ກຸ່ມ ໂດຍອີງຕາມຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກຂອງເຂົາເຈົ້າ:

1. ມີຢູ່ 8 ແຂວງ (ເຂດສີຟ້າ, ຕາຕະລາງ 1.6) ທີ່ມີ **ອັດຕາສ່ວນຂອງຜູ້ທີ່ທຸກຍາກຫລຸດລົງຫຼາຍກວ່າອັດຕາສະເລ່ຍຂອງທົ່ວປະເທດ (ປະມານ 10%)** ລະຫວ່າງປີ 2002-2003 ແລະ 2012-2013. ແນ່ນອນ, ນະຄອນຫຼວງວຽງຈັນ ແມ່ນມີຄວາມທຸກຍາກຕໍ່າກວ່າ ຍ້ອນການຫັນເປັນຕົວເມືອງ ແລະລະດັບການພັດທະນາເສດຖະກິດ-ສັງຄົມ; ຜົ້ງສາລີ, ອຸດົມໄຊ ແລະອັດຕະປື ແມ່ນໄດ້ຮັບການລົງທຶນດ້ານການປູກຝັງຈາກປະເທດຈີນຫຼາຍ; ບໍລິຄຳໄຊ ແມ່ນເປັນແຂວງບໍ່ແຮ່; ຫຼວງພະບາງ ແມ່ນການດຶງດູດນັກທ່ອງທ່ຽວ; ສະຫວັນນະເຂດ ແມ່ນເປັນແຂວງອຸດສາຫະກຳ.

2. ສາມແຂວງ (ເຂດສີແດງ) ທີ່ມີອັດຕາສ່ວນຄົນທຸກຍາກເພີ່ມຂຶ້ນ **ໃນລະຫວ່າງປີ 2002-2003 ແລະ 2012-2013** ຊຶ່ງບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 4 (2009) ໄດ້ກຳນົດໄວ້ວ່າ ມີຢູ່ສາມສາເຫດ ຄື: ການຫລຸດລົງຂອງການປູກເຂົ້າໄຮ່ ແລະການຫລຸດລົງຂອງການປູກຝິ່ນ ໂດຍທີ່ບໍ່ມີອາຊີບອື່ນທົດແທນ, ແລະການລົງປູກຝັງຂະໜາດໃຫຍ່ໄດ້ກວມເອົາເຂດທີ່ດິນ ແລະເຂດທຳມາຫາກິນຂອງປະຊາຊົນ. ມັນມີຄວາມຈຳເປັນຕ້ອງໄດ້ມີການກວດສອບ ຫຼືພິສູດວ່າ ໃນປັດຈຸບັນນີ້ມັນຍັງມີເຫດຜົນຄືເກົ່ານີ້ຢູ່ຫຼືບໍ່?.

3. ອີກຫົກແຂວງ (ທີ່ບໍ່ໄດ້ລົງສີນັ້ນ) ແມ່ນມີອັດຕາສ່ວນຄົນທຸກຍາກ **ຫລຸດລົງໃນອັດຕາທີ່ໜ້ອຍກວ່າ 10%** (ໜ້ອຍກວ່າອັດຕາການຫລຸດລົງຂອງປະເທດ).

ການກະຈາຍ ຫຼືການແບ່ງໄລຍະຍັງສະແດງໃຫ້ເຫັນຕໍ່ໄປວ່າ: ເຖິງແມ່ນວ່າຄວາມເຂັ້ມຂຸ້ນຂອງຄວາມທຸກຍາກ ຢູ່ໃນ ສປປ ລາວ ແມ່ນກ່ຽວກັບທີ່ຕັ້ງພູມສັນຖານຂອງແຂວງຫຼາຍກວ່າ, ແຕ່ມັນກໍ່ບໍ່ແມ່ນແນວນັ້ນສະເໝີໄປ ເພາະວ່າບາງແຂວງທີ່ມີຂໍ້ຈຳກັດຫຼາຍກວ່າ ກໍ່ຍັງມີອັດຕາຄວາມທຸກຍາກຕໍ່າກວ່າບາງແຂວງທີ່ມີຄວາມສະດວກກວ່າຊໍ້າອີກ. ຄວາມເຂັ້ມຂຸ້ນຂອງຄວາມທຸກຍາກນີ້ ແມ່ນຍັງມີຜົນມາຈາກຂະໜາດຂອງຈຳນວນປະຊາກອນນຳອີກ. ຕົວຢ່າງ: ແຂວງສະຫວັນນະເຂດ ແມ່ນມີອັດຕາສ່ວນຄົນທຸກຍາກກວມເອົາເຖິງ 17% ຂອງຜູ້ທີ່ທຸກຍາກໃນທົ່ວປະເທດ ແຕ່ວ່າແຂວງນີ້ພັດເປັນແຂວງທີ່ມີຈຳນວນປະຊາກອນຫຼາຍກວ່າໝູ່. ເບິ່ງອີກແງ່ໜຶ່ງ, ແຂວງບໍ່ແກ້ວ ທີ່ມີອັດຕາຄວາມທຸກຍາກຢູ່ທີ່ 44,4% ແລະເປັນແຂວງທີ່ມີຄວາມທຸກຍາກສູງສູດຢູ່ໃນອັນດັບສອງຂອງປະເທດ, ແຕ່ວ່າພັດກວມເອົາພຽງແຕ່ 5% ຂອງຜູ້ທີ່ທຸກຍາກທັງໝົດຢູ່ໃນປະເທດ ຊຶ່ງອັນນີ້ກໍ່ແມ່ນຍ້ອນແຂວງນີ້ມີຈຳນວນປະຊາກອນໜ້ອຍ.

ບັນດາຕົວປ່ຽນຕ່າງໆທີ່ກ່ຽວກັບດິນຟ້າອາກາດທາງການກະສິກຳ ແລະການເຂົ້າເຖິງຕະຫຼາດ ແມ່ນຈະຕ້ອງໄດ້ອະທິບາຍເຖິງຄວາມແຕກຕ່າງກ່ຽວກັບຄວາມທຸກຍາກຂອງຊົນນະບົດຢູ່ໃນລະດັບບ້ານ. ນັ້ນແມ່ນຄວາມທຸກຍາກທີ່ໄດ້ຖືກຄາດຄະເນໄວ້ວ່າມັນຈະຕ້ອງມີສູງກວ່າຢູ່ໃນໝູ່ບ້ານຕ່າງໆທີ່ມີຄວາມທຸລະກັນດານດ້ານພູມມີປະເທດຫຼາຍກວ່າ; ມີຝົນຕົກໃນຊ່ວງລະດູການຂອງມັນຫຼາຍກວ່າ; ແລະຕັ້ງຢູ່ໄກຈາກຕົວເມືອງ, ແມ່ນ້ຳໃຫຍ່

ແລະຕະຫຼາດຫຼາຍກວ່າ. ໂດຍຜ່ານການວິໄຈຍ້ອນຫຼັງຕ່າງໆພົບວ່າ ຄວາມທຸລະກັນດານດ້ານພູມີປະເທດໄດ້ເຮັດໃຫ້ມີຄວາມທຸກຍາກສູງ ຢູ່ໃນ ສປປ ລາວ, ແຕ່ວ່າການພົວພັນລະຫວ່າງຕົວປ່ຽນທີ່ກ່ຽວກັບດິນຟ້າອາກາດທາງດ້ານກະສິກຳ ແລະການປ່ຽນແປງຕ່າງໆຂອງຄວາມທຸກຍາກ ແມ່ນເປັນເລື່ອງທີ່ສຳຄັນອັນໜຶ່ງຢູ່ໃນເລື່ອງອື່ນໆ ຂອງ ສປປ ລາວ.

ຈຸດພິເສດ ຫຼືລັກສະນະອື່ນໆກ່ຽວກັບຄວາມທຸກຍາກ ຢູ່ໃນ ສປປ ລາວ ແມ່ນການເກີດຂຶ້ນຂອງຄວາມແຕກຕ່າງດ້ານຄວາມທຸກຍາກທີ່ຍັງຫຼາຍຢູ່ໃນລະຫວ່າງກຸ່ມຊົນເຜົ່າຕ່າງໆ, ລວມເຖິງຄວາມແຕກຕ່າງໃນດ້ານສະພາບຂອງການພັດທະນາເສດຖະກິດ-ສັງຄົມ (ຮູບທີ 1.4). ຄວາມທຸກຍາກສ່ວນຫຼາຍແມ່ນມີຢູ່ໃນຊຸມຊົນຊົນເຜົ່າທີ່ບໍ່ແມ່ນ ລາວ-ໄຕ, ກຸ່ມທີ່ມີການສຶກສາໜ້ອຍ ແລະກຸ່ມທີ່ອີງໃສ່ການຜະລິດກະສິກຳແບບຄົວເຮືອນເປັນຕົ້ນຕໍ ຫຼືກຸ່ມທີ່ມີການວ່າງງານ. ເຖິງຢ່າງໃດກໍ່ຕາມ, ກຸ່ມຊົນເຜົ່າທີ່ໃຊ້ພາສາ ຈີນ-ຕິເບດ ແມ່ນດີຂຶ້ນໃນຊຸມປີມໍ່ໆນີ້ ຊຶ່ງໄດ້ເຮັດໃຫ້ອັດຕາຄວາມທຸກຍາກຂອງເຂົາເຈົ້າຫລຸດລົງຢ່າງໄວວາເກືອບຈະຢູ່ໃນລະດັບໃກ້ຄຽງກັບກຸ່ມຊົນເຜົ່າທີ່ໃຊ້ພາສາລາວ-ໄຕ ແລ້ວ.

**ຮູບທີ 1.4: ອັດຕາຄວາມທຸກຍາກ ແຍກຕາມຄຸນລັກສະນະຂອງເສດຖະກິດ-ສັງຄົມ (2008-2013)**




ແຫຼ່ງຂໍ້ມູນ: Pimhidzai et al (2014)

ຈຸດສຸດທ້າຍທີ່ຈະຕ້ອງໄດ້ເອົາໃຈໃສ່ ແມ່ນການຕົກຕໍ່າລົງກ່ຽວກັບເລື່ອງຊ່ອງວ່າງຂອງຄວາມທຸກຍາກ,[14] ໝາຍຄວາມວ່າຜູ້ທຸກຍາກທີ່ອາໄສດໍາລົງຊີວິດຢູ່ລຸ່ມເສັ້ນຄວາມທຸກຍາກນັ້ນ ແມ່ນຍັງຢູ່ຫ່າງໄກຈາກເສັ້ນຄວາມທຸກຍາກຫຼາຍປານໃດ? ຊຶ່ງມັນກໍ່ໄດ້ຄ່ອຍໆຫລຸດລົງຈາກ 8 ໃນປີ 2003 ມາເປັນ 5,5 ໃນປີ 2013, ໃນນີ້ເຫັນວ່າຢູ່ໃນເຂດຕົວເມືອງ (ຈາກ 4,1 ມາເປັນ 2,3) ແມ່ນຫລຸດລົງຫຼາຍກວ່າຢູ່ໃນເຂດຊົນນະບົດ (ຈາກ 9,2 ມາເປັນ 6,8). ເຖິງຢ່າງໃດກໍ່ຕາມ, ໂດຍທົ່ວໄປແລ້ວປະຊາຊົນລາວແມ່ນຍັງມີຄວາມຝືດເຄືອງ ແລະບອບບາງຫຼາຍ ຊຶ່ງສ່ວນຫຼາຍຂອງເຂົາເຈົ້າແມ່ນດໍາລົງຊີວິດຢູ່ເໜືອເສັ້ນຄວາມທຸກຍາກພຽງໜ້ອຍດຽວເທົ່ານັ້ນ. ຕົວຢ່າງ: ການຊົມໃຊ້ຕໍ່ຫົວຄົນຂອງຜູ້ທີ່ຫລຸດພົ້ນອອກຈາກຄວາມທຸກຍາກ ໃນປີ 2007/2008 ແມ່ນ 60% ແລະ ໃນປີ 2012/2013 ແມ່ນບໍ່ເກີນ 50% ຢູ່ເໜືອເສັ້ນຄວາມທຸກຍາກ.[15] ສອງສ່ວນສາມຂອງຈໍານວນປະຊາກອນຢູ່ໃນ ສປປ ລາວ ແມ່ນດໍາລົງຊີວິດຢູ່ຕໍ່າກວ່າ 2 ໂດລາສະຫະລັດ (PPP) ຕໍ່ມື້ ທຽບໃສ່ຢູ່ໃນປະເທດໄທ ແລະຫວຽດນາມ ແມ່ນ 10%.

ເຂົາເຈົ້າມີຄວາມສ່ຽງທີ່ຈະຕົກເຂົ້າສູ່ຄວາມທຸກຍາກ ຍ້ອນເຫດການຊ໊ອກກະທັນຫັນນ້ອຍໆຕໍ່ກັບການດໍາລົງຊີວິດຂອງເຂົາເຈົ້າ. ຄວາມທຸກຍາກຄວນຈະຕ້ອງຖືກຫລຸດລົງດ້ວຍການເຮັດໃຫ້ບັນດາຄົວເຮືອນທີ່ມີຄວາມບອບບາງຈໍານວນຫຼາຍນັ້ນບໍ່ຕົກເຂົ້າສູ່ຄວາມທຸກຍາກຄືນອີກ. ປະມານເຄິ່ງໜຶ່ງຂອງຜູ້ທີ່ທຸກຍາກ ໃນປີ 2012/2013 ແມ່ນເຄີຍເປັນຜູ້ທີ່ບໍ່ທຸກຍາກ (ຫລຸດພົ້ນ) ແລ້ວ ໃນປີ 2007/2008 ແລະ ຫຼາຍກວ່າສອງສ່ວນສາມຂອງເຂົາເຈົ້າແມ່ນເຄີຍເປັນຜູ້ທີ່ບໍ່ທຸກຍາກຢູ່ໃນບາງຈຸດ (ບາງປີ) ໃນຊ່ວງໄລຍະ 10 ຜ່ານມາ. ອັນນີ້ແມ່ນມີຄວາມສໍາຄັນຫຼາຍສໍາລັບຄວາມປາຖະໜາ ຂອງ ສປປ ລາວ ທີ່ຈະຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ. ຄວາມຫຼົ້ມເຫຼວຂອງການເກັບກ່ຽວພືດຜົນທາງການກະສິກໍາ ແລະເຫດການສຸກເສີນ (ຊ໊ອກ) ທາງດ້ານສຸຂະພາບ ແມ່ນເປັນຕົວຂັບເຄື່ອນທີ່ສໍາຄັນກ່ຽວກັບຄວາມບອບບາງຂອງຄົວເຮືອນ.[16]

## ຄວາມບໍ່ສະເໝີພາບ ຫຼືຄວາມບໍ່ເທົ່າທຽມກັນ

ການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບໃນຊຸມໃນທົດສະວັດໃກ້ໆຜ່ານມານີ້ ແມ່ນໄດ້ກາຍເປັນບັນຫາຂອງໂລກເສຍແລ້ວ. ຕາມບົດຂຽນທີ່ສໍາຄັນຂອງ Thomas Piketty, Anthony B Atkinson ແລະJoseph Stiglitz, ການໂຕ້ວາທີກ່ຽວກັບເລື່ອງນີ້ໄດ້ເຂົ້າມາສູ່ຂັ້ນໃຈກາງຂອງບົດຄວາມທີ່ສໍາຄັນທາງວິຊາການ ແລະນະໂຍບາຍຂອງລັດຢູ່ໃນບັນດາປະເທດທີ່ພັດທະນາແລ້ວ ແລະບັນດາປະເທດກໍາລັງພັດທະນາກໍ່ເຊັ່ນກັນ.[17] ຢູ່ໃນບັນດາປະເທດທີ່ມີຊັບພະຍາກອນທໍາມະຊາດຕ່າງໆແມ່ນໄດ້ມີການໂຕ້ຖຽງກັນໃນເລື່ອງອື່ນອີກ ຊຶ່ງກ່ຽວກັບທີ່ເອີ້ນກັນວ່າ "ຄວາມຫາຍຍະນະຂອງຊັບພະຍາກອນ" ຊຶ່ງມັນໄດ້ຊີ້ໃຫ້ເຫັນວ່າ ມັນມີຄວາມບໍ່ເທົ່າທຽມກັນຫຼາຍອັນຂອງທ້ອງຖິ່ນ ຫຼືຂົງເຂດ ກ່ຽວກັບຄວາມສາມາດທາງດ້ານຊັບພະຍາກອນ, ໃນເມື່ອມັນທັບຊ້ອນກັນກັບອັນໃດອັນໜຶ່ງຂອງທ້ອງຖິ່ນ ຫຼືການຂາດຫາຍໄປຂອງການພັດທະນາມະນຸດທີ່ຕິດພັນກັບຊົນເຜົ່ານັ້ນ ແມ່ນສາມາດນໍາໄປສູ່ຂໍ້ຂັດແຍ່ງທາງສັງຄົມທີ່ໃຊ້ຄວາມຮຸນແຮງໄດ້.

ສປປ ລາວ ກໍ່ມີຄວາມບໍ່ເທົ່າທຽມກັນເພີ່ມຂຶ້ນໃນຊຸມປີຜ່ານມາໃກ້ໆນີ້. ຄ່າສໍາປະສິດຕາມຫຼັກເກນຂອງທ່ານ Gini (The Gini Coefficient) ກ່ຽວກັບຄວາມບໍ່ສະເໝີພາບຂອງການຊົມໃຊ້ຕາມທີ່ໄດ້ຄິດໄລ່ຈາກຖານຂໍ້ມູນຂອງ LECS ແມ່ນເພີ່ມຂຶ້ນຈາກ 32,46% ໃນສົກປີ 2002-2003 ມາເປັນ 35,04% ໃນສົກປີ 2007-2008 ແລະສືບຕໍ່ເພີ່ມຂຶ້ນເປັນ 36,17% ໃນສົກປີ 2012-2013. ຄວາມບໍ່ສະເໝີພາບຢູ່ໃນຂົງເຂດພື້ນທີ່ຕ່າງໆ ແລະບັນດາກຸ່ມເສດຖະກິດ-ສັງຄົມ ແມ່ນຍັງຕ້ອງໄດ້ເບິ່ງຢູ່ໃນຕົວຊີ້ບອກອື່ນໆອີກ. ຕົວຢ່າງ: ຄ່າສໍາປະສິດ Gini ຂອງຄວາມບໍ່ສະເໝີພາບກ່ຽວກັບການເຂົ້າຮ່ວມໃນການສຶກສາ (ຈໍານວນປີການສຶກສາຕໍ່ຫົວຄົນຢູ່ໃນຄົວເຮືອນ) ແມ່ນ 0,36 ໃນສົກປີ 2012-2013. ຢູ່ໃນກຸ່ມຊົນເຜົ່າຕ່າງໆນັ້ນແມ່ນປະກອບດ້ວຍສອງສ່ວນສາມຂອງຈໍານວນປະຊາກອນຂອງເຂົາເຈົ້າ ແມ່ນບໍ່ໄດ້ມີການສຶກສາຢ່າງເປັນທາງການ. ອັດຕາການເຂົ້າຮຽນສຸດທິຂອງຊັ້ນມັດທະຍົມຢູ່ໃນທົ່ວ ສປປ ລາວ ແມ່ນປະມານ 50%, ແຕ່ວ່າຢູ່ແຂວງຜົ້ງສາລີ ແລະສາລະວັນ ແມ່ນຍັງຕໍ່າກວ່ານັ້ນ (31%) ແລະສູງທີ່ສຸດແມ່ນຢູ່ ນະຄອນຫຼວງວຽງຈັນ (82%).

ໃນສົກປີ 2010-2011, ມີປະມານ 15% ຂອງຈໍານວນບ້ານທັງໝົດທີ່ບໍ່ສາມາດເຂົ້າເຖິງເສັ້ນທາງ ແລະປະມານ 30% ແມ່ນຍັງບໍ່ມີການເຊື່ອມຕໍ່ ຫຼືເຂົ້າເຖິງໄຟຟ້າ. ມີພຽງແຕ່ 43% ແລະ 59% ຂອງຈໍານວນຄົວ

ເຮືອນ ທຸກຍາກທີ່ສາມາດເຂົ້າເຖິງຫ້ອງນ້ຳທີ່ໄດ້ຮັບການປັບປຸງ ແລະໄຟຟ້າໄດ້ ຕາມລຳດັບ, ສົມທຽບກັບ 85% ແລະ 91% ໃນລະຫວ່າງບັນດາຄົວເຮືອນທີ່ມີການຊົມໃຊ້ຫຼາຍກວ່າເສັ້ນຄວາມທຸກຍາກທົບໜຶ່ງເທົ່າຕົວ ຕາມລຳດັບ.

ບັນດາຊ່ອງວ່າງຕ່າງໆດ້ານບົດບາດຍິງ-ຊາຍ ກໍ່ຍັງສາມາດສັງເກດໄດ້ຢູ່ພາຍໃນກຸ່ມຕ່າງໆ ເຊັ່ນ: ເພດຍິງທີ່ຢູ່ໃນຄົວເຮືອນທຸກຍາກ ທີ່ສາມາດອ່ານອອກ-ຂຽນໄດ້ ແລະຄຳນວນເປັນ ແມ່ນມີຢູ່ຕ່ຳກວ່າ 60% ຊຶ່ງຖ້າສົມທຽບກັບເພດຊາຍແມ່ນຫຼາຍກວ່າ 80%.[18]

ຄວາມບໍ່ເທົ່າທຽມກັນນັ້ນແມ່ນເປັນໄພອັນຕະລາຍຕໍ່ HD ແລະຂັດຂວາງຄວາມພະຍາຍາມເພື່ອຫລຸດພົ້ນອອກຈາກສະຖານະພາບ LDC ຂອງປະເທດ. ຄ່າ HDI ທີ່ຖືກດັດປັບຄວາມບໍ່ເທົ່າທຽມກັນແມ່ນຢູ່ທີ່ປະມານ 24,4% ຊຶ່ງໜ້ອຍກວ່າຄ່າ HDI ທີ່ຍັງບໍ່ທັນໄດ້ຖືກດັດປັບ ໃນປີ 2011-2013.

ສັງລວມແລ້ວ, ສປປ ລາວ ແມ່ນມີຄວາມຄືບໜ້າຫຼາຍໃນການຫລຸດຜ່ອນຄວາມທຸກຍາກ ກໍ່ຄືການພັດທະນາມະນຸດ. ເຖິງຢ່າງໃດກໍ່ຕາມ, ບັນດາຜົນສຳເລັດເຫຼົ່ານັ້ນກໍ່ຍັງບໍ່ທັນສະເໝີພາບກັນ ແລະເຮັດໃຫ້ຄວາມບໍ່ເທົ່າທຽມກັນເພີ່ມຂຶ້ນທັງຢູ່ໃນແນວຕັ້ງ ແລະ ແນວນອນ. ການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດແມ່ນຈະຕ້ອງໄວກວ່ານັ້ນ, ແຕ່ກໍ່ບໍ່ຄວນໃຫ້ຄວາມບໍ່ສະເໝີພາບຢູ່ໃນມິຕິຕ່າງໆນັ້ນເຊື່ອມໂຊມລົງກວ່າເກົ່າ. ຖ້າວ່າຄວາມບໍ່ສະເໝີພາບຫາກຍັງຖືກຮັກສາໄວ້ແບບສົມມຸດຕິຖານຢູ່ໃນລະດັບ ສົກປີ 1992-93 ນັ້ນ, ອັດຕາການເກີດຂຶ້ນຂອງຄວາມທຸກຍາກຈະຫລຸດລົງຈາກ 46% ມາເປັນ 17%. ອັນນັ້ນແມ່ນວ່າ, ຖ້າຫາກຄວາມບໍ່ສະເໝີພາບບໍ່ມີການປ່ຽນແປງ, ອັດຕາການເກີດຂຶ້ນຂອງຄວາມທຸກຍາກຈະຫລຸດລົງ 28% ຊຶ່ງມັນຈະຫລຸດລົງໄວກວ່າທີ່ເປັນຢູ່ໃນປັດຈຸບັນນີ້.[19] ອັດຕາຄວາມໄວ ຫຼືຄວາມກ້າວໜ້າຂອງການຫລຸດຜ່ອນຄວາມທຸກຍາກຍັງຈະສືບຕໍ່ບໍ່ດີພໍ ຍ້ອນມັນຍັງມີຄວາມບອບບາງສູງຊຶ່ງເຫັນໄດ້ຢ່າງຈະແຈ້ງຈາກຕົວເລກຈຳນວນຄົວເຮືອນທີ່ຫລຸດພົ້ນອອກຈາກທຸກຍາກແລ້ວ ແຕ່ພັດກັບຄືນມາສູ່ຄວາມທຸກຍາກອີກ ທີ່ໄດ້ສະແດງໃຫ້ເຫັນມາກ່ອນນີ້. ອັດຕາການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດແມ່ນຍັງຊັກຊ້າຢູ່ ຖ້າທຽບໃສ່ອັດຕາການເຕີບໂຕທາງເສດຖະກິດທີ່ສູງ ຂອງ ສປປ ລາວ ໃນໄລຍະຫຼັງໆມານີ້. ໜຶ່ງໃນບັນດາສາເຫດສຳຄັນຕ່າງໆທີ່ເຮັດໃຫ້ຄວາມບໍ່ສະເໝີພາບຂີ້ຮ້າຍລົງນັ້ນ ແມ່ນການຂາດການເຕີບໂຕໃນແນວກວ້າງ ຫຼືການເຕີບໂຕເພື່ອທຸກຄົນ ແລະຄວາມຫຼົ້ມເຫຼວໃນການຈ້າງງານທີ່ມີຜະລິດຕະພາບໃນຈຳນວນທີ່ພຽງພໍ ເພື່ອຊຸກຍູ້ການເຕີບໂຕຂອງກຳລັງແຮງງານຈາກການກະສິກຳທີ່ມີປະສິດທິພາບຕ່ຳ.

## ການເຕີບໂຕທາງເສດຖະກິດ: ແຫຼ່ງທີ່ມາ ແລະວິທີການຕ່າງໆ

ອັດຕາການເຕີບໂຕຂອງເສດຖະກິດຂອງລາວແມ່ນມີຢູ່ສູງໃນແຕ່ລະປີ ຊຶ່ງຢູ່ທີ່ 6-8% ໃນ 10-15 ປີຜ່ານມານີ້. ເຖິງແມ່ນວ່າເສດຖະກິດຂອງໂລກໄດ້ຕົກຕ່ຳລົງໃນປີ 2009 ຊຶ່ງມັນໄດ້ສົ່ງຜົນກະທົບທົ່ວໄປຕໍ່ບັນດາຂົງເຂດ ASEAN ລວມທັງກຳປູເຈຍ ແລະຫວຽດນາມດ້ວຍ, ແຕ່ເສດຖະກິດຂອງລາວກໍ່ຍັງເຕີບໂຕຢູ່ທີ່ 7,5%.

ການເຕີບໂຕຂອງ GDP ແມ່ນມາຈາກຂະແໜງການກະສິກຳ ແລະຊັບພະຍາກອນທຳມະຊາດ. ເນື້ອທີ່ດິນທັງໝົດທີ່ໃຊ້ເຂົ້າໃນການປູກຝັງ (ປະກອບດ້ວຍຫຼາຍພືດ) ໄດ້ຂະຫຍາຍອອກປະມານ 4,3% ຕໍ່ປີ ຊຶ່ງສົ່ງຜົນເຮັດໃຫ້ເນື້ອທີ່ດິນປູກຝັງເພີ່ມຂຶ້ນຈາກ 0,96 ລ້ານເຮັກຕາ ໃນສົກປີ 1998-1999 ມາເປັນ 1,6 ລ້ານເຮັກຕາ ໃນສົກປີ 2010-2011. ການຂະຫຍາຍເນື້ອທີ່ການປູກຝັງນີ້ ໄດ້ກາຍເປັນຫົວຈັກຂັບເຄື່ອນການເຕີບໂຕທີ່ສຳຄັນສຳລັບການກະສິກຳ ແລະມັນຂ້ອນຂ້າງຈະເປັນແນວນັ້ນຕໍ່ໄປອີກຢ່າງໜ້ອຍກໍ່ແມ່ນປະມານ 5-10 ປີ.[20]

ສຳລັບການປະກອບສ່ວນຂອງຂະແໜງບໍ່ແຮ່ ແລະໄຟຟ້າ ຢູ່ໃນ GDP ແມ່ນຫຼາຍກວ່າທົບເທົ່າຕົວ ນັບແຕ່ປີ 2003-2013 (ຮູບທີ 1.5). ຫຼັງຈາກທີ່ລາຄາຂອງທັງແຮ່ທາດ ແລະຜະລິດຕະພັນກະສິກຳໄດ້ມີຄວາມໝັ້ນຄົງໃນໄລຍະຜ່ານມາມໍ່ໆນີ້ ຈຶ່ງເປັນເຫດເຮັດໃຫ້ GDP ກໍ່ມີການເຕີບໂຕທີ່ໝັ້ນຄົງເຊັ່ນກັນ.

ການປະກອບສ່ວນຂອງຂະແໜງກະສິກຳຢູ່ໃນ GDP ໄດ້ຫລຸດລົງຈາກ 41% ໃນປີ 2003 ມາເປັນ 27% ໃນປີ 2013; ແຕ່ການປະກອບສ່ວນໃນການຈ້າງງານຂອງແຮງງານຢູ່ໃນຂະແໜງການນີ້ພັດຫລຸດລົງພຽງແຕ່ຈາກ 68% ມາເປັນ 61% ເທົ່ານັ້ນ ຢູ່ໃນຊ່ວງໄລຍະເວລາດຽວກັນນີ້.[21] ການປະກອບສ່ວນດ້ານຜົນໄດ້ຮັບຢູ່ໃນຂະ

ແໜງການນີ້ໄດ້ຫລຸດລົງ 13% ສົມທຽບກັບການປະກອບສ່ວນໃນການຈ້າງງານຢູ່ໃນຂະແໜງການແມ່ນຫລຸດລົງພຽງແຕ່ 7% ເທົ່ານັ້ນ, ອັນນີ້ສະແດງໃຫ້ເຫັນວ່າຜະລິດຕະພາບຢູ່ໃນຂະແໜງການກະສິກຳແມ່ນຍັງຕໍ່າ.

ໃນຕົວຈິງແລ້ວ, ຈຳນວນຜູ້ທີ່ເຮັດວຽກຢູ່ໃນຂະແໜງການກະສິກຳໄດ້ເພີ່ມຂຶ້ນປະມານ 2,5% ຕໍ່ປີ, ໃນຂະນະທີ່ວຽກບໍ່ແມ່ນການກະສິກຳພັດຍັງຕາມຫຼັງຢູ່. ຄວາມຢືດຫົດຂອງແຮງງານທີ່ເຮັດວຽກຢູ່ໃນຂະແໜງກະສິກຳແມ່ນ 0,99; ໃນຂະທີ່ຢູ່ໃນຂະແໜງອຸດສາຫະກຳການຜະລິດແມ່ນ 0,04 ແລະຢູ່ໃນຂະແໜງການບໍລິການຕ່າງໆແມ່ນ 0,59 (ຕາຕະລາງ 1.7). ຄວາມຢືດຫົດຂອງການຈ້າງງານກ່ຽວກັບຜົນໄດ້ຮັບແມ່ນກົງກັນຂ້າມກັບຜະລິດຕະພາບຂອງແຮງງານ. ຄວາມຢືດຫົດຂອງການຈ້າງງານສູງຢູ່ໃນກະສິກຳ ໄດ້ຢືນຢັນເຖິງຜະລິດຕະພາບທີ່ຕໍ່າຂອງຂະແໜງການ. ຄວາມຢືດຫົດຂອງການຈ້າງງານຕໍ່າເປັນພິເສດຢູ່ໃນຂະແໜງອຸດສາຫະກຳການຜະລິດ ແມ່ນເປັນການຊີ້ໃຫ້ເຫັນກ່ຽວກັບລັກສະນະຄວາມເຂັ້ມທຶນສູງຂອງຂະແໜງການ. ເພາະສະນັ້ນ, ປັດໄຈທີ່ແຮງກ້າຂອງໂຄງສ້າງການຜະລິດ ຂອງ ສປປ ລາວ ແມ່ນເຫັນວ່າໜັກໄປທາງຂ້າງໜຶ່ງ ເຕີມຕໍ່ໃສ່ກັບຄວາມຫຼາກຫຼາຍທີ່ມີຄວາມຈຳກັດນັ້ນ ຊຶ່ງມັນຍັງບໍ່ທັນສອດຄ່ອງ ຫຼືກົງກັບການເຕີບໂຕຂອງກຳລັງແຮງງານເທື່ອ.

ຜູ້ອອກແຮງງານສ່ວນຫຼາຍແມ່ນເຮັດວຽກຢູ່ນອກຟາຣ໌ມ ຊຶ່ງມີຢູ່ປະມານ 0,92 ລ້ານຄົນທີ່ເຮັດວຽກຢູ່ໃນຂະແໜງການບໍລິການຕ່າງໆ, ໃນຂະນະທີ່ຜູ້ເຮັດວຽກຢູ່ໃນຂະແໜງອຸດສາຫະກຳການຜະລິດແມ່ນມີໜ້ອຍກວ່າ 250.000 ຄົນໜ້ອຍໜຶ່ງ ໃນສົກປີ 2012-2013.[22]

**ຮູບທີ 1.5: ອົງປະກອບຂອງ GDP ແລະຜູ້ອອກແຮງງານຕາມຂະແໜງການ, 2003-2013**







ແຫຼ່ງຂໍ້ມູນ: Pimhidzai et al. (2014)

**ຕາຕະລາງ1.7: ຄ່າຄວາມຢືດຫົດຂອງການນຳໃຊ້ແຮງງານຕໍ່ກັບຜົນໄດ້ຮັບຕາມຂະແໜງການ (2007-2008 ຫາ 2012-2013)**

| ຂະແໜງການ | ຄວາມຢືດຫົດ |
|---|---|
| (1) | (2) |
| ການກະສິກຳ ແລະກິດຈະກຳຕ່າງໆທີ່ກ່ຽວພັນກັນ | 0.99 |
| ອຸດສາຫະກຳການຜະລິດ | 0.04 |
| ການກໍ່ສ້າງ ແລະການບໍລິການ | 0.59 |

ໝາຍເຫດ: ຂໍ້ມູນກ່ຽວກັບຂະແໜງບໍ່ແຮ່ແມ່ນບໍ່ໄດ້ນຳມາສະເໜີຢູ່ໃນທີ່ນີ້ ເນື່ອງຈາກຂະແໜງການນີ້ມີກຳມະກອນເຮັດວຽກຢູ່ໜ້ອຍກວ່າ. ແຫຼ່ງຂໍ້ມູນແມ່ນຄິດໄລ່ມາຈາກການຊົມໃຊ້ ແລະການໃຊ້ຈ່າຍຂອງລາວ (LECS) 3 ແລະ 5 ຂໍ້ມູນສຳລັບຜູ້ອອກແຮງງານ ແລະຖານຂໍ້ມູນທາງດ້ານສະຖິຕິກ່ຽວກັບ GDP (ສຳລັບການຜະລິດ)

**ຕາຕະລາງ1.8: ຜະລິດຕະພາບຂອງແຮງງານຕາມຂະແໜງການ, 2001-2008 ແລະ2012-2013**

| ຂະແໜງການ | ປີງົບປະມານ 2007-2008 | ປີງົບປະມານ 2012-2013 |
|---|---|---|
| (1) | (2) | (3) |
| ກະສິກຳ ແລະກິດຈະກຳທີ່ກ່ຽວພັນ | 4,35 | 4,35 |
| ອຸດສາຫະກຳການຜະລິດ | 10,52 | 15,93 |
| ການກໍ່ສ້າງ ແລະການບໍລິການ | 15,84 | 18,92 |

ແຫຼ່ງຂໍ້ມູນ: ຄິດໄລ່ຈາກຖານຂໍ້ມູນ LECS ສຳລັບຜູ້ອອກແຮງງານ ແລະຖານຂໍ້ມູນທາງສະຖິຕິຂອງ GDP (ສຳລັບການຜະລິດ)

ຕາຕະລາງ 1.8 ສະເໜີຕົວເລກຕ່າງໆກ່ຽວກັບຜະລິດຕະພາບຂອງແຮງງານ ຢູ່ໃນ ສປປ ລາວ ແບ່ງຕາມບັນດາຂະແໜງການໃຫຍ່ແບບກວ້າງໆ. ດັ່ງທີ່ສະແດງໃຫ້ເຫັນໃນກ່ອນນີ້, ຂະແໜງກະສິກຳແມ່ນມີຜະລິດຕະພາບຂອງແຮງງານຕໍ່າທີ່ສຸດຢູ່ໃນທັງສອງຊ່ວງໄລຍະເວລາທີ່ກ່າວມານັ້ນ ແຕ່ມັນພັດມີຈຳນວນແຮງງານຫຼາຍທີ່ສຸດຢູ່ໃນຂະແໜງການນີ້. ຂໍ້ມູນເຫຼົ່ານີ້ (ຈາກ LECS, ແມ່ນບໍ່ໄດ້ຖືກສະແດງຢູ່ໃນທີ່ນີ້) ຊີ້ໃຫ້ເຫັນວ່າອັດຕາຜົນຜະລິດຂອງພືດສ່ວນຫຼາຍເບິ່ງຄ້າຍກັບວ່າບໍ່ມີການປ່ຽນແປງ ໃນລະຫວ່າງ ສົກປີ 2007-2008 ແລະ 2012-2013. ບັນດາຕົວເລກກ່ຽວກັບຂອບເຂດເນື້ອທີ່ດິນປູກຝັງທີ່ໄດ້ສະເໜີມາກ່ອນນີ້ ສະແດງໃຫ້ເຫັນວ່າໄດ້ມີການຂະຫຍາຍກວ້າງອອກ, ແຕ່ຜະລິດຕະພາບຂອງແຮງງານແມ່ນຍັງເປັນຢູ່ຄືເກົ່າ.[23]

ໃນເວລາດຽວກັນ, ຂະແໜງອຸດສາຫະກຳການຜະລິດກໍ່ຍັງບໍ່ມີການດູດດຶງເອົາແຮງງານເຂົ້າມາຫາຕົນເອງໄດ້ຫຼາຍພໍ (ຄວາມຢືດຫົດກ່ຽວກັບການນຳໃຊ້ແຮງງານເຂົ້າໃນການຜະລິດຂອງຂະແໜງການນີ້ ແມ່ນເກືອບວ່າເທົ່າສູນ), ແຕ່ວ່າຜະລິດຕະພາບຂອງແຮງງານຢູ່ໃນຂະແໜງການນີ້ພັດເພີ່ມຂຶ້ນຫຼາຍ ຊຶ່ງມີຢູ່ປະມານ 51% ໃນລະຫວ່າງສົກປີ 2007-2008 ແລະ 2012-2013 (ຫຼື 8,7% ຕໍ່ປີ).

ຂະແໜງການບໍລິການຕ່າງໆໄດ້ສະແດງໃຫ້ເຫັນເຖິງຄວາມຢືດຫົດຂອງການຈ້າງງານຢູ່ທີ່ 0,59, ໃນຂະນະດຽວກັນນັ້ນ ຜະລິດຕະພາບຂອງແຮງງານໄດ້ເພີ່ມຂຶ້ນປະມານ 19% ຢູ່ໃນຊ່ວງໄລຍະເວລາ 5 ປີ (ຫຼື 3,6% ຕໍ່ປີ). ຜະລິດຕະພາບຂອງແຮງງານຢູ່ໃນຂະແໜງການບໍລິການຕ່າງໆກໍ່ເຫັນວ່າເພີ່ມຂຶ້ນໜ້ອຍ ຖ້າສົມທຽບກັບຂະແໜງອຸດສາຫະກຳການຜະລິດ ຊຶ່ງມີຄວາມເຊື່ອກັນຢ່າງກວ້າງຂວາງວ່າມັນເປັນຍ້ອນການເພີ່ມຂຶ້ນໄວຫຼາຍຂອງການບໍລິການທີ່ມີຜະລິດຕະພາບຕໍ່າ ໃນຂະນະທີ່ມີຜູ້ຄົນຢູ່ໃນຂະແໜງການນີ້ເປັນຈຳນວນຫຼາຍ, ໂດຍສະເພາະແມ່ນຊາວໜຸ່ມຜູ້ທີ່ຕ້ອງການໜີອອກຈາກຂະແໜງການກະສິກຳ ຊຶ່ງບາງກໍລະນີແມ່ນຍ້ອນມີການປະລະການສຶກສາ ແລະກໍ່ຍ້ອນສະພາບແວດລ້ອມດ້ານທີ່ດິນທຳການກະສິກຳຂອງເຂົາເຈົ້ານຳ.[24] ເຖິງຢ່າງໃດກໍ່ຕາມ, ເຂົາເຈົ້າກໍ່ຍັງບໍ່ສາມາດ

ຊອກຫາວຽກເຮັດງານທຳທີ່ມີລາຍໄດ້ສູງໄດ້ ຍ້ອນເຫດຜົນຕ່າງໆດ້ານການສະໜອງ ແລະຄວາມຕ້ອງການ:

- ເຂົາເຈົ້າບໍ່ມີສີມືທີ່ເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງໜ້າວຽກຢູ່ໃນຕຳແໜ່ງທີ່ມີລາຍຮັບສູງ.

- ການສ້າງງານຢູ່ໃນຂະແໜງການທີ່ມີການເຕີບໂຕສູງແມ່ນມີໜ້ອຍ, ປະມານ 57% ຂອງການລົງທຶນໃໝ່ ແມ່ນຢູ່ໃນຂະແໜງພະລັງງານ ແລະບໍ່ແຮ່ ຊຶ່ງສາມາດສ້າງການຈ້າງງານພາຍໃນໄດ້ພຽງແຕ່ໜ້ອຍກວ່າ 1% ຂອງກຳລັງແຮງງານເທົ່ານັ້ນ.[25]

ການເຕີບໂຕດ້ວຍການດຶງດູດດ້ານອຸດສາຫະກຳ (ເປັນຫົວຫອກໂດຍທຶນ ແລະເຕັກໂນໂລຢີຂອງຕ່າງປະເທດ) ແມ່ນບໍ່ໄດ້ມີການສ້າງການຈ້າງງານ ຫຼືຊ່ວຍຍົກລະດັບການພັດທະນາມະນຸດຕາມທີ່ເຮົາປາຖະໜາໄວ້ນັ້ນ ແລະມີຄວາມເປັນໄດ້ທີ່ຈະບໍ່ສາມາດບັນລຸໄດ້ພໍເທົ່າໃດ.[26] ສິ່ງທີ່ຕາມມາ, ກໍ່ຄືກຳມະກອນ ແລະບັນດາຄອບຄົວທີ່ຕິດຄ້າງຢູ່ໃນການກະສິກຳເພື່ອກຸ້ມຕົນເອງທີ່ມີຜະລິດຕະພາບຕໍ່າມານານນັ້ນ ອາດຈະກາຍເປັນຜູ້ວ່າງງານຊໍ້າໄປເສຍອີກ. ການປ່ຽນແປງໂຄງສ້າງທີ່ບໍ່ສົມບູນ ຫຼືຖືກບິດເບືອນນີ້ ແມ່ນເປັນເຫດຜົນພື້ນຖານສຳລັບລະດັບສະຫວັດດີການທີ່ຕໍ່າກວ່າທີ່ໄດ້ຄາດຫວັງເອົາໄວ້ຢູ່ໃນປະເທດ.[27] ອັນນີ້, ມັນໄດ້ເປັນຜົນພວງຕໍ່ການພັດທະນາມະນຸດທີ່ຕໍ່າ.

ສັງລວມແລ້ວ, ການເຕີບໂຕທາງດ້ານເສດຖະກິດ ຢູ່ໃນ ສປປ ລາວ ເປັນທີ່ໜ້າເພິ່ງພໍໃຈນັ້ນ ແມ່ນມາຈາກຂະແໜງບໍ່ແຮ່ ແລະພະລັງງານຫຼາຍກວ່າ. ເວົ້າອີກແນວໜຶ່ງ, ການເຕີບໂຕນັ້ນແມ່ນບໍ່ເປັນໄປໃນທາງກວ້າງ ແລະບໍ່ໄດ້ສ້າງການຈ້າງງານທີ່ມີຜະລິດຕະພາບໃນຈຳນວນທີ່ຫຼາຍພໍ. ມີກຳມະກອນ ແລະຄອບຈຳນວນຫຼາຍ ແມ່ນຍັງຍຶດຕິດຢູ່ກັບການກະສິກຳ ແລະກິດຈະກຳກ່ຽວພັນທີ່ມີຜະລິດຕະພາບຕໍ່າຢູ່ ຊຶ່ງເປັນຜົນມາຈາກການປ່ຽນແປງໂຄງສ້າງທີ່ບໍ່ສົມບູນ. ການຂາດການເຕີບໂຕໃນແນວກວ້າງນີ້ ຍັງການຫລຸດຜ່ອນຄວາມໄວຂອງການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດນຳອີກ.

## ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ

ສປປລາວໄດ້ມີຄວາມຄືບໜ້າຢ່າງໃຫຍ່ຫຼວງໃນການພັດທະນາມະນຸດ ແລະການຫລຸດຜ່ອນຄວາມທຸກຍາກດ້ວຍການໃຊ້ພະລັງຂັບເຄື່ອນຂອງຂະແໜງຊັບພະຍາກອນ ຈຶ່ງເຮັດໃຫ້ມັນມີການເຕີບໂຕຢ່າງແຂງແຮງໃນໄລຍະມໍ່ໆມານີ້. ເຖິງຢາງໃດກໍ່ຕາມ, ມັນກໍ່ຍັງຊັກຊ້າ ແລະຄວາມບໍ່ເທົ່າທຽມກັນດ້ານລາຍໄດ້ ແລະການພັດທະນາມະນຸດກໍ່ເພີ່ມຂຶ້ນຢູ່ໃນລະຫວ່າງຂົງເຂດ ແລະກຸ່ມຊົນເຜົ່າຕ່າງໆ. ການເຕີບໂຕທາງດ້ານເສດຖະກິດຂອງ ສປປ ລາວ ແມ່ນບໍ່ໄດ້ເປັນໄປໃນແນວກວ້າງ ແລະເພື່ອທຸກຄົນ (ທຸກຄົນໄດ້ປະໂຫຍດ).

ເຖິງແມ່ນວ່າມັນໄດ້ຮັກສາລະດັບການເຕີບໂຕສູງມາເປັນໄລຍະເວລາທົດສະວັດກວ່າແລ້ວກໍ່ຕາມ,ແຕ່ວ່າເສດຖະກິດຂອງມັນກໍ່ຍັງບໍ່ມີຄວາມຫຼາກຫຼາຍພໍ, ໂຄງສ້າງການຜະລິດຍັງບໍ່ທັນສົມດູນ ແລະປະສົບກັບການເຕີບໂຕດ້ານຜະລິດຕະພາບຕໍ່າ. ທັງໝົດທີ່ກ່າວມານີ້ໄດ້ປະກອບສ່ວນເຮັດໃຫ້ການຫລຸດຜ່ອນຄວາມທຸກຍາກ ແລະການຍົກລະດັບການພັດທະນາມະນຸດມີຄວາມຄືບໜ້າຊ້າລົງ. ນອກຈາກນີ້, ພວກມັນຍັງປະກອບສ່ວນເຮັດໃຫ້ຄວາມບໍ່ສະເໝີພາບເພີ່ມຂຶ້ນ ແລະເພີ່ມຄວາມບອບບາງຂຶ້ນຕື່ມອີກ ຊຶ່ງມັນໄດ້ສືບຕໍ່ເຮັດໃຫ້ຄວາມໄວຂອງຄວາມຄືບໜ້າໃນການຫລຸດຜ່ອນຄວາມທຸກຍາກ ແລະການພັດທະນາມະນຸດບໍ່ດີພໍ, ແລະສ້າງວົງຈອນອຸບາດຂຶ້ນມາ.

ພັນທະສັນຍາຕໍ່ກັບການພັດທະນາມະນຸດຂອງຜູ້ມີສ່ວນຮ່ວມທັງໝົດ ແມ່ນມີຄວາມຈຳເປັນຕ້ອງທັບມ້າງວົງຈອນອຸບາດນັ້ນໃຫ້ແຕກ. ບັນດາປະເທດກຳລັງພັດທະນາທີ່ປະສົບຜົນສຳເລັດທັງໝົດ ແມ່ນເຂົາເຈົ້າໄດ້ຜ່ານເສັ້ນທາງແຫ່ງປະຫວັດສາດຂອງການປ່ຽນແປງໂຄງສ້າງຢ່າງເຕັມພາລະກຳລັງ; ສະນັ້ນ, ສປປ ລາວ ຈະຕ້ອງໄດ້ເລັ່ງລັດປ່ຽນແປງໂຄງສ້າງຂອງຕົນ ໃນເມື່ອມີຄວາມປາຖະໜາໃຫ້ປະເທດຫລຸດພົ້ນອອກຈາກສະຖານະພາບ LDC ແລະການເຂົ້າຮ່ວມ AEC ໃນປັດຈຸບັນໄດ້ຢ່າງລາບລື່ນ. ການປ່ຽນແປງໂຄງສ້າງທີ່ປະສົບຜົນສຳເລັດ ແມ່ນກ່ຽວຂ້ອງກັບສີ່ລັກສະນະສຳຄັນຕົ້ນຕໍ ຄື: ການປະກອບສ່ວນຂອງຂະແໜງກະສິກຳຢູ່ໃນຜົນຮັບທາງເສດຖະກິດ ແລະການ

ຈ້າງງານຕໍ່າລົງ, ການປະກອບສ່ວນໃນກິດຈະກໍາທາງດ້ານເສດຖະກິດຂອງອຸດສາຫະກໍາ ແລະການບໍລິການທີ່ທັນສະໄໝຢູ່ໃນຕົວເມືອງເພີ່ມຂຶ້ນ, ມີການເຄື່ອນຍ້າຍຂອງແຮງງານຈາກຊົນນະບົດເຂົ້າສູ່ຕົວເມືອງ, ແລະການປ່ຽນແປງສະພາບກ່ຽວກັບຈໍານວນປະຊາກອນຢູ່ໃນອັດຕາການເກີດ ແລະການຕາຍ ມັກຈະນໍາໄປສູ່ການເພີ່ມຂຶ້ນຢ່າງໄວວາຂອງຈໍານວນປະຊາກອນ ຊຶ່ງເຮັດໃຫ້ເກີດມີຄວາມເປັນໄປໄດ້ສໍາລັບ "ການປັນຜົນດ້ານປະຊາກອນ".[28]

ເຖິງຢ່າງໃດກໍ່ຕາມ, ການປ່ຽນແປງໂຄງສ້າງແມ່ນຈະເຮັດໃຫ້ເກີດມີຜູ້ໄດ້ ແລະຜູ້ເສຍ, ດັ່ງທີ່ມັນສະທ້ອນໃຫ້ເຫັນຢູ່ໃນການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະຄວາມບໍ່ເທົ່າທຽມກັນ, ແລະປະສົບປະການ ຂອງ ສປປ ລາວ ແມ່ນບໍ່ມີການຍົກເວັ້ນຢ່າງສິ້ນເຊີງ, ແຕ່ຄວາມບໍ່ເທົ່າທຽມກັນຢູ່ໃນສັງຄົມທີ່ມີຊົນເຜົ່າຢ່າງຫຼາກຫຼາຍຄືກັນກັບ ສປປ ລາວ ໄດ້ກໍ່ໃຫ້ເກີດມີສິ່ງທ້າທາຍເພີ່ມຕື່ມອີກ.

ບັນດາປະເທດທີ່ປະສົບຄວາມສໍາເລັດ ແມ່ນເຂົາເຈົ້າມີວິທີການທີ່ຫຼາກຫຼາຍ ເພື່ອໃຫ້ໄດ້ຮັບຄວາມກົດດັນທາງດ້ານການເມືອງ ທີ່ຖືກສ້າງຂຶ້ນຕາມທິດທາງຂອງການປ່ຽນແປງໂຄງສ້າງ. ຄວາມຮັ່ງມີທາງດ້ານຊັບພະຍາກອນສາມາດເປັນຂໍ້ໄດ້ປຽບສໍາລັບ ສປປ ລາວ, ຖ້າຫາກຖືກນໍາໃຊ້ເພື່ອຈຸດປະສົງທີ່ໃຫ້ຜົນດີ ແລະການສ້າງສັງຄົມທີ່ທຸກຄົນໄດ້ຮັບຜົນປະໂຫຍດ. ສປປ ລາວ ສາມາດນໍາໃຊ້ຄວາມຮັ່ງມີທາງດ້ານຊັບພະຍາກອນຂອງຕົນ ເພື່ອປັບປຸງການເຂົ້າເຖິງ ແລະປັບປຸງຄຸນນະພາບຂອງການບໍລິການ, ສ້າງກາລະໂອກາດຕ່າງໆໃຫ້ແກ່ປະຊາຊົນພົນລະເມືອງສໍາລັບການປະກອບສ່ວນ ແລະການເຂົ້າຮ່ວມໃນຂະບວນການຂອງການເຕີບໂຕ, ລົງທຶນເຂົ້າໃນການປູພື້ນການປົກປ້ອງທາງດ້ານສັງຄົມ ແລະສ້າງຄວາມສາມາດໃນການຟື້ນຟູສູ່ສະພາບເດີມ ເພື່ອປົກປ້ອງຜົນໄດ້ຮັບຈາກຄວາມຄືບໜ້າ ແລະຫລຸດຜ່ອນຄວາມກົດດັນຈາກເຫດການຊ໊ອກແບບກະທັນຫັນຕ່າງໆ.

ການພັດທະນາມະນຸດສາມາດເຮັດໜ້າທີ່ຕິດແໜ້ນກັບຄວາມສໍາພັນທີ່ຈໍາເປັນ ສໍາລັບປະເທດທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະພູມສັນຖານ ຄືກັນກັບປະເທດລາວ, ໂດຍສະເພາະຢູ່ໃນລະຫວ່າງຂະບວນການປ່ຽນແປງໂຄງສ້າງ. ລັດຖະບານສາມາດລິເລີ່ມການສົນທະນາລະດັບຊາດ ກ່ຽວກັບຂໍ້ຕົກລົງທາງສັງຄົມຢູ່ໃນບາງເປົ້າໝາຍຕ່າງໆທີ່ສາມາດບັນລຸໄດ້ ໃນການການພັດທະນາມະນຸດຢູ່ໃນແຂວງ ແລະລະຫວ່າງຊຸມຊົນຊົນເຜົ່າຕ່າງໆ.

## ເອກະສານຊ້ອນທ້າຍ 1.1: ການຄິດໄລ່ບັນດາຕົວຊີ້ບອກກ່ຽວກັບການພັດທະນາມະນຸດ:

## ບັນດາຕົວຊີ້ບອກດ້ານການພັດທະນາມະນຸດດັ່ງທີ່ໄດ້ມີການຄິດໄລ່

## ສຳລັບການສົມທຽບກັບລະດັບສາກົນ

ດັດຊະນີການພັດທະນາມະນຸດ (HDI): ດັດຊະນີການພັດທະນາມະນຸດ ແມ່ນປະກອບຂຶ້ນດ້ວຍການເປັນຕົວແທນຂອງຫຼາຍໆຢ່າງ ກ່ຽວກັບສະພາບຂອງການພັດທະນາມະນຸດຢູ່ໃນປະເທດ ຫຼືຂົງເຂດ. ໃນທາງທິດສະດີ, ການພັດທະນາມະນຸດແມ່ນກວມເອົາເລື່ອງລາວທີ່ກວ້າງຂວາງ ຊຶ່ງມັນມີຄວາມຫຍຸ້ງຍາກຫຼາຍທີ່ຈະໃຫ້ກວມເອົາທັງໝົດມິຕິຕ່າງໆຂອງມັນເຂົ້າຢູ່ໃນດັດຊະນີດຽວ. ເພາະສະນັ້ນ, ສຳລັບຢູ່ໃນໄລຍະເວລາອັນສັ້ນໆນີ້ ແມ່ນປະກອບຂຶ້ນດ້ວຍຫຼາຍສ່ວນຂອງຕົວປ່ຽນທີ່ລວມກັນເຂົ້າຢູ່ໃນ HDI ດັ່ງຕໍ່ໄປນີ້:

(ກ) ລາຍໄດ້ຂອງຄົວເຮືອນຕໍ່ຫົວຄົນ (ທີ່ຖືກວັດແທກຕາມຄວາມເທົ່າທຽມກັນກ່ຽວກັບອຳນາດການໃຊ້ຈ່າຍ (PPP) ສຳລັບການສົມທຽບກັບສາກົນ);

(ຂ) ການລວມກັນຕາມໄລຍະເວລາ (ນໍ້າໜັກ) ຂອງອັດຕາການຮູ້ໜັງສື ແລະອັດຕາການເຂົ້າຮຽນສຸດທິ; ແລະ

(ຄ) ຄວາມມີອາຍຸຍືນຂອງຜູ້ຄົນ.

ບັນດາຕົວດັດຊະນີຊີ້ບອກສຳລັບແຕ່ລະອັນຂ້າງເທິງນີ້ແມ່ນໄດ້ຖືກຄິດໄລ່ແຍກກັນ, ຫຼັງຈາກນັ້ນພວກມັນຈຶ່ງຖືກລວມເຂົ້າກັນ ແລະຖືກແຍກອອກເປັນສາມຕົວດັດຊະນີຊີ້ບອກ ເພື່ອສ້າງເປັນດັດຊະນີການພັດທະນາມະນຸດ. ເນື່ອງຈາກວ່າແຕ່ລະຕົວດັດຊະນີຊີ້ບອກທັງສາມຢ່າງນັ້ນ ແມ່ນເປັນຈຳນວນຫົວໜ່ວຍນ້ອຍ; ສະນັ້ນ, ການເພີ່ມຕື່ມບາງອັນແມ່ນສາມາດອະນຸຍາດໃຫ້ເຮັດໄດ້.

ຕົວດັດຊະນີສຳລັບຕົວປ່ຽນຕົວດຽວ ແມ່ນຖືກຄິດໄລ່ຈາກຂໍ້ມູນໃນຫຼາຍສ່ວນ ກ່ຽວກັບຢ່າງໃດຢ່າງໜຶ່ງ ຫຼືທັງສອງຢ່າງ ເຊັ່ນ: ບັນດາປະເທດ ຫຼືບັນດາຂົງເຂດ/ບັນດາແຂວງ ຢູ່ພາຍໃນປະເທດ:

$$\text{ຕົວດັດຊະນີແຕ່ລະອັນ} = \frac{[(\text{ຄ່າຕົວຈິງຂອງຕົວປ່ຽນ}) - (\text{ຄ່າຕໍ່າສຸດຂອງຕົວປ່ຽນ})]}{[(\text{ຄ່າສູງສຸດຂອງຕົວປ່ຽນ}) - (\text{ຄ່າຕໍ່າສຸດຂອງຕົວປ່ຽນ})]}$$

## ການຄິດໄລ່ບັນດາຕົວດັດຊະນີຊີ້ບອກສໍາລັບບັນດາແຂວງ ຢູ່ໃນ ສປປ ລາວ

ສໍາລັບການຄິດໄລ່ຢູ່ໃນລະດັບແຂວງແມ່ນມີສາມອົງປະກອບ ຄື:

(a) ການຊົມໃຊ້ຂອງຄົວເຮືອນໂດຍສະເລ່ຍຕໍ່ຫົວຄົນຂອງແຂວງ; (b) ອັດຕາການຮູ້ໜັງສື ແລະອັດຕາການເຂົ້າຮຽນສຸດທິ; ແລະ (c) ຄວາມມີອາຍຸຍືນ.

ໝາຍເຫດ: ສໍາລັບການສົມທຽບຕາມຊ່ວງໄລຍະເວລາ, HDI ແມ່ນຖືກຄິດໄລ່ຕາມ (a), (b) ແລະ (c) ຂ້າງເທິງນີ້. ອັນນີ້ແມ່ນເປັນສູດຄິດໄລ່ HDI ແບບເກົ່າ ແລະບໍ່ມີອັນໃດທີ່ຖືກນໍາໃຊ້ໃນປັດຈຸບັນນີ້. ອັນນີ້ກໍ່ເປັນຍ້ອນວ່າບັນດາຕົວຊີ້ບອກຕ່າງໆນັ້ນແມ່ນເປັນຂໍ້ມູນເກົ່າ ເຊັ່ນວ່າຄ່າສະເລ່ຍຂອງປີການສຶກສາ ແລະອື່ນໆ ກໍ່ແມ່ນບໍ່ສາມາດທີ່ຈະເອົາມາໃຊ້ໄດ້.

**<u>ຂໍ້ມູນ:</u>**

ລາຍໄດ້ຂອງແຂວງ: ໃນເມື່ອລາຍໄດ້ຂອງແຂວງບໍ່ສາມາດຫາໄດ້ ຫຼືບໍ່ສາມາດນໍາເອົາມາໃຊ້ໄດ້ ແມ່ນໄດ້ມີການນໍາເອົາການຊົມໃຊ້ຂອງຄົວເຮືອນຕໍ່ຫົວຄົນມາທົດແທນໃຫ້ແກ່ລາຍໄດ້. ອັນນີ້ແມ່ນໄດ້ເຮັດໃຫ້ມີການເພີ່ມຂຶ້ນ (1-Gini) ຂອງຄວາມບໍ່ສະເໝີພາບທາງດ້ານທີ່ດິນ ເພື່ອຄໍານວນຄວາມບໍ່ສະເໝີພາບທີ່ມີຢູ່ໃນແຕ່ລະແຂວງໃນປັດຈຸບັນ. ແຫຼ່ງຂໍ້ມູນ: ສໍາລັບການຊົມໃຊ້ຂອງແຂວງແມ່ນເອົາມາຈາກ LECS-3 ແລະ LECS-5.

ອັດຕາການຮູ້ໜັງສື: ຂໍ້ມູນສໍາລັບປະຊາກອນທີ່ມີອາຍຸ 15 ປີ ແລະສູງກວ່ານັ້ນ ແມ່ນໄດ້ມາຈາກ LECS-3 ແລະ LECS-5

ອັດຕາການເຂົ້າຮຽນສຸດທິ: ອັດຕາການເຂົ້າຮຽນສຸດທິໃນຊັ້ນປະຖົມ: ກະຊວງສຶກສາທິການ ແລະກິລາ (ປີ 2003 ແລະ 2013).

ອັດຕາການຕາຍຂອງເດັກເກີດໃໝ່ (ເພື່ອແທນທີ່ໃຫ້ແກ່ຄວາມມີອາຍຸຍືນ): ການສໍາຫຼວດພົນລະເມືອງ ປີ 2005 ແລະ LSIS 2012.

<u>ການປະກາດຄາດໝາຍ:</u>

ລາຍໄດ້ສູງສຸດ ແມ່ນສູງກວ່າແຂວງທີ່ມີລາຍໄດ້ສູງສຸດນັ້ນ 25% ແລະລາຍໄດ້ຕໍ່າສຸດ ແມ່ນຕໍ່າກວ່າແຂວງທີ່ມີລາຍໄດ້ຕໍ່າສຸດນັ້ນ 25%. ອັດຕາການຮູ້ໜັງສື ແລະອັດຕາການເຂົ້າຮຽນສູງສຸດແມ່ນ 100, ອັດຕາການຮູ້ໜັງສື ແລະອັດຕາການເຂົ້າຮຽນຕໍ່າສຸດແມ່ນ 0. ອາຍຸຍືນສູງສຸດ ແມ່ນສູງກວ່າແຂວງທີ່ມີອາຍຸຍືນສູງສຸດນັ້ນ 25% ແລະອາຍຸຍືນຕໍ່າສຸດ ແມ່ນຕໍ່າກວ່າແຂວງທີ່ມີອາຍຸຍືນຕໍ່າສຸດນັ້ນ 25%. ສໍາລັບ HDI ທີ່ຖືຄິດໄລ່ສໍາລັບການສົມທຽບຕາມຊ່ວງໄລຍະເວລານັ້ນ, ການປະກາດຄາດໝາຍແມ່ນ: (1) ມີຄ່າສູງກວ່າຄ່າສະເລ່ຍຂອງສອງປີທີ່ມີຄ່າສູງສຸດນັ້ນ 25% ສໍາລັບຂອບເຂດຈໍາກັດຂັ້ນສູງ; ແລະ (2) ມີຄ່າຕໍ່າກວ່າຄ່າສະເລ່ຍຂອງສອງປີທີ່ມີຄ່າຕໍ່າສຸດນັ້ນ 25% ສໍາລັບຂອບເຂດຈໍາກັດຂັ້ນຕໍ່າ.

# ພາກທີ 2

## ການຫລຸດພົ້ນອອກຈາກ LDC - ການປະເມີນຜົນ

ສປປ ລາວ ກຳລັງຢູ່ໃນເສັ້ນທາງຂອງການຫລຸດພົ້ນອອກຈາກສະຖານະພາບ LDC; ແຕ່ເຖິງແນວໃດກໍ່ຕາມ, ຄວາມບອບບາງທາງເສດຖະກິດທີ່ເຜີຍໃຫ້ເຫັນນັ້ນ ແມ່ນມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ຢ່າງຮີບດ່ວນ. ການຫລຸດພົ້ນອອກຈາກ LDC ແມ່ນຈະຕ້ອງບໍ່ເປັນຜົນກະທົບຕໍ່ກັບກາລະໂອກາດທາງການຄ້າຂອງ ສປປ ລາວ ເກີນກວ່າການແຂ່ງຂັນຕາມປົກກະຕິທີ່ມັນປະເຊີນຢູ່ໃນປັດຈຸບັນນີ້. ໃນກໍລະນີໃດໜຶ່ງ, ສປປ ລາວ ຈຳເປັນຈະຕ້ອງໄດ້ເປີດກວ້າງພື້ນຖານເສດຖະກິດຂອງຕົນ ແລະສ້າງທ່າແຮງໄດ້ປຽບຢູ່ໃນຜະລິດຕະພັນຊ່ອງວ່າງຕ່າງໆ ເພື່ອໃຫ້ໄດ້ປະໂຫຍດຈາກການຂັບເຄື່ອນໃນການກ້າວໄປສູ່ການເປີດປະຕູສູ່ໂລກ ແລະຂົງເຂດລວມທັງເພື່ອຫລຸດຜ່ອນຄວາມບອບບາງທາງເສດຖະກິດຂອງຕົນ. ການລົງທຶນເຂົ້າໃນການພັດທະນາມະນຸດໂດຍສະເພາະແມ່ນການສຶກສາ, ສາທາລະນາສຸກ ແລະການຍົກລະດັບສີມືແຮງງານ, ລວມທັງການຮູ້ໜັງສືແລະການຮູ້ຄຳນວນ, ແລະການລົງທຶນເຂົ້າໃນການປົກປ້ອງທາງສັງຄົມແມ່ນມີຄວາມສຳຄັນຫຼາຍ ສຳລັບການເລັ່ງລັດດ້ານຄວາມຫຼາກຫຼາຍທາງເສດຖະກິດ, ການເພີ່ມຜະລິດຕະພາບ, ການຫລຸດຜ່ອນຄວາມບອບບາງທາງເສດຖະກິດ ແລະການປັບປຸງ ຫຼືພັດທະນາຊັບສິນມະນຸດ.

ພາກນີ້, ແມ່ນມີຈຸດປະສົງເພື່ອປະເມີນເບິ່ງສະຖານະພາບ LDC ຂອງ ສປປ ລາວ ໃນເລື່ອງກ່ຽວກັບບັນດາຕົວຊີ້ບອກສະເພາະ ທີ່ຄະນະກຳມະການນະໂຍບາຍການພັດທະນາ (CDP) ຂອງສະຫະປະຊາຊາດ (UN) ໄດ້ຕັ້ງໄວ້.[29] ມັນມີຄວາມຈຳເປັນຕ້ອງໄດ້ກ່າວຊ້ຳອີກວ່າ ບັນດາດັດຊະນີເຫຼົ່ານີ້ແມ່ນຕົກເຂົ້າຢູ່ໃນຕະກູນຂອງບັນດາຕົວຊີ້ບອກກ່ຽວກັບ HD; ເພາະສະນັ້ນ, ການປັບປຸງກ່ຽວກັບອັນນີ້ກໍ່ຍັງຈະເພີ່ມທາງເລືອກ ແລະເສລີພາບຂອງຜູ້ຄົນນຳ. ໃນພາກນີ້ຍັງໄດ້ພະຍາຍາມກຳນົດຜົນກະທົບທີ່ເປັນໄປໄດ້ຕໍ່ກັບເສດຖະກິດຂອງ ສປປ ລາວ ໃນເມື່ອທີ່ປະເທດໄດ້ຫລຸດພົ້ນອອກຈາກສະຖານະພາບ LDC ໃນອະນາຄົດອັນໃກ້ນີ້. ໂດຍສະເພາະແລ້ວ, ໃນພາກນີ້ແມ່ນໄດ້ສົນທະນາໃນເລື່ອງຕໍ່ໄປນີ້:

1. ສະຖານະພາບຂອງບັນດາຕົວດັດຊະນີທີ່ກຳນົດຄວາມໝາຍວ່າເປັນ LDC ແລະແນວໂນ້ມຂອງພວກມັນເພື່ອໃຫ້ເຂົ້າໃຈເຖິງຂອງຄາດຫວັງ ຫຼືກາລະໂອກາດ ຂອງ ສປປ ລາວ ສຳລັບການຫລຸດພົ້ນອອກຈາກສະຖານະພາບ LDC ຂອງມັນ ຕາມທີ່ໄດ້ວາງແຜນເອົາໄວ້;

2. ພິສູດ ແລະຊີ້ໃຫ້ເຫັນວ່າ ບັນດາອຸດສາຫະກຳທີ່ແຕກຕ່າງກັນຕ່າງໆນັ້ນ (ໂດຍສະເພາະແມ່ນອຸດສາຫະກຳທີ່ສົ່ງອອກ) ຈະຖືກກະທົບຄືແນວໃດ, ຖ້າຫາກມີການຫລຸດລົງຂອງການຊ່ວຍເຫຼືອຈາກພາຍນອກ ເນື່ອງຈາກການຫລຸດພົ້ນອອກຈາກ LDC ແລ້ວ;

3. ບັນດາສິ່ງທ້າທາຍຕ່າງໆຈາກການເຊື່ອມໂຍງປະຊາຄົມເສດຖະກິດອາຊຽນ (AEC) ໂດຍທີ່ຈະບໍ່ມີການປົກປ້ອງການເປັນ LDC ອີກ.

## ຄວາມຄາດຫວັງກ່ຽວກັບການຫລຸດພົ້ນອອກຈາກ LDC ຂອງ ສປປ ລາວ

### ວິໄສທັດກ່ຽວກັບການຫລຸດພົ້ນອອກຈາກ LDC ໃນປີ 2020 ຂອງ ສປປ ລາວ

ລັດຖະບານ ແຫ່ງ ສປປ ລາວ ເປັນໜຶ່ງໃນບັນດາລັດຖະບານຂອງ LDC ຈຳນວນໜ້ອຍໜຶ່ງເທົ່ານັ້ນ ທີ່ໄດ້ໝາຍໝັ້ນປັ້ນມື ຫຼືໃຫ້ຄຳໝັ້ນສັນຍາຢ່າງແຂງຂັນ ຕໍ່ກັບເປົ້າໝາຍການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຊຶ່ງຄາດໝາຍແມ່ນປີ 2020. ຄຳໝັ້ນສັນຍາລະດັບຊາດສຳລັບການຫລຸດພົ້ນອອກຈາກສະຖານະພາບ LDC ໃນປີ 2020 ເທື່ອທຳອິດແມ່ນມີຂຶ້ນຢູ່ໃນກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ ໃນປີ 1996 ຊຶ່ງໄດ້ກຳນົດວ່າ "...ພັດທະນາປະເທດເພື່ອກ້າວໄປສູ່ການຫລຸດພົ້ນອອກຈາກສະຖານະພາບ LDC, ບັນລຸໃຫ້ໄດ້ການພັດທະນາເສດຖະກິດ-ສັງຄົມສູງກວ່າລະດັບທີ່ເປັນຢູ່ໃນປັດຈຸບັນນີ້ ... ຂະແໜງການກະສິກຳ ແລະອຸດສາຫະກຳຈະຕ້ອງໄດ້ຮັບການພັດທະນາຢ່າງແຂງແຮງ ເພື່ອກ້າວໄປສູ່ການຫັນເປັນອຸດສາຫະກຳ ແລະທັນສະໄໝ, ມາດຖານການດຳລົງຊີວິດຂອງປະຊາຊົນລາວຈະຕ້ອງຖືກຍົກໃຫ້ສູງຂຶ້ນ ມີການເຂົ້າເຖິງການສຶກສາ ແລະສາທາລະນາສຸກຢ່າງກວ້າງຂວາງ ...ຄ່ອຍໆເຊື່ອມໂຍງປະເທດເຂົ້າໃນລະດັບຂົງເຂດ ແລະລະດັບໂລກ...". ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020), ຄວາມມຸ່ງໝາຍອັນນີ້ແມ່ນໄດ້ມີການສືບຕໍ່ຢ່າງຈະແຈ້ງຢູ່ໃນຮູບຂອງຍຸດທະສາດຕາມກຳນົດເວລາ.

ຄຳໝັ້ນສັນຍານີ້ແມ່ນໄດ້ຮັບການກ່າວຢໍ້າຢູ່ເລື້ອຍໆ, ແລະເພື່ອໃຫ້ບັນລຸໄດ້ເປົ້າໝາຍນັ້ນ ແມ່ນຈະຕ້ອງໄດ້ດຳເນີນຕາມບັນດາຂັ້ນຕອນຕ່າງໆ ຄື: ການສ້າງຍຸດທະສາດການພັດທະນາ ຮອດປີ 2020; ການປັບປຸງຍຸດທະສາດແຫ່ງຊາດ ກ່ຽວກັບການສ້າງປັດໄຈຕ່າງໆສຳລັບການຫັນເປັນອຸດສາຫະກຳ ແລະທັນສະໄໝຂອງປະເທດ ຮອດປີ 2020; ການພັດທະນາຍຸດທະສາດແຫ່ງຊາດ ກ່ຽວກັບການຫັນປ່ຽນປະເທດຈາກສະຖານະພາບທີ່ເປັນປະເທດບໍ່ມີທາງອອກສູ່ທະເລ ໄປສູ່ປະເທດທີ່ເປັນທາງຜ່ານຢູ່ໃນອະນຸຂົງເຂດ; ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕ ແລະການຫລຸດຜ່ອນຄວາມທຸກຍາກແຫ່ງຊາດ; ແລະອື່ນໆ. ບັນດາຍຸດທະສາດເຫຼົ່ານີ້ ແມ່ນໄດ້ຖືກເຊື່ອມໂຍງເຂົ້າ ແລະຖືກຈັດຕັ້ງປະຕິບັດໄປພ້ອມກັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດອື່ນໆ. ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VII (2011-2015) ແມ່ນໄດ້ສຸມໃສ່ການບັນລຸເປົ້າໝາຍສະຫະສະວັດ (MDGs) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-202) ທີ່ຖືກຮັບຮອງເອົາໃນປັດຈຸບັນນີ້ ແມ່ນຖືເອົາການຫລຸດພົ້ນອອກຈາກສະຖານະພາບ LDC ເປັນເປົ້າໝາຍ ແລະສຸມໃສ່ບັນດາເປົ້າໝາຍການພັດທະນາມະນຸດທີ່ເປັນໃຈຄວາມສຳຄັນ ຮອດປີ 2020.

### ເງື່ອນໄຂ ແລະມາດຖານຂັ້ນຕໍ່າ:

ເງື່ອນໄຂ ແລະມາດຖານຂອງປະເທດທີ່ເປັນ LDC ແມ່ນໄດ້ກຳນົດໄວ້ຢູ່ໃນພາກສະເໜີ. ຈຸດເລີ່ມຕົ້ນຂອງແຕ່ລະສາມຕົວດັດຊະນີນັ້ນ ແມ່ນມີຄືດັ່ງຕໍ່ໄປນີ້:

1. ລວມຍອດລາຍໄດ້ແຫ່ງຊາດ (GNI): ຂອງ ສປປ ລາວ ແມ່ນ 1.035 ໂດລາສະຫະລັດ ຕໍ່ຄົນຕໍ່ປີ, ຊຶ່ງຈະຕ້ອງໄດ້ເພີ່ມອີກ 20% ສຳລັບມາດຖານຂັ້ນພື້ນຖານຂອງການຫລຸດພົ້ນອອກຈາກ LDC (1.242 ໂດລາສະຫະລັດ; ປີ: 2015) – ຍິ່ງສູງຍິ່ງດີ.[30]

2. ດັດຊະນີຊັບສິນມະນຸດ (HAI): ຂອງ ສປປ ລາວ ແມ່ນມີຄະແນນ 60 ຊຶ່ງຈະຕ້ອງໄດ້ເພີ່ມອີກ 10% ສຳລັບມາດຖານຂັ້ນພື້ນຖານຂອງການຫລຸດພົ້ນອອກຈາກ LDC (ຕົວຢ່າງ 66) – ຍິ່ງສູງຍິ່ງດີ.

3. ດັດຊະນີຄວາມບອບບາງທາງເສດຖະກິດ (EVI): ຂອງ ສປປ ລາວ ແມ່ນ 36 ຊຶ່ງຈະຕ້ອງໄດ້ຫລຸດລົງຕື່ມອີກ 10% ສຳລັບມາດຖານຂັ້ນພື້ນຖານຂອງການຫລຸດພົ້ນອອກຈາກ LDC (ຕົວຢ່າງ 33) – ຍິ່ງສູງຍິ່ງດີ.

ເຊັ່ນດຽວກັນກັບ HDI, GDI ແລະອື່ນໆ, ຊຶ່ງບັນດາຕົວຊີ້ບອກ LDC ແມ່ນມີຄວາມສຳພັນກັນ ແລະບັນດາຕົວຊີ້ບອກເຫຼົ່ານີ້ແມ່ນຂຶ້ນກັບການດຳເນີນການຂອງແຕ່ລະປະເທດ. ຈຸດເລີ່ມຕົ້ນ ຫຼືມາດຖານຂັ້ນຕ່ຳນັ້ນ ແມ່ນໄດ້ຖືກຕັ້ງໄວ້ໃຫ້ສອດຄ່ອງກັບສາມສ່ວນສີ່ທີ່ຢູ່ໃນການຈັດລຽງອັນດັບຂອງ LDC ທັງໝົດ ແລະບັນດາປະເທດກຳລັງພັດທະນາອື່ນໆ.[31] ຈຸດເລີ່ມຕົ້ນ ຫຼືມາດຖານຂັ້ນຕ່ຳຂອງ GNI, HAI ແລະ EVI ແມ່ນບໍ່ໄດ້ກຳນົດຕາຍຕົວໄວ້ຕະຫຼອດໄປ ຊຶ່ງພວກມັນຈະມີການປ່ຽນແປງໄປຕາມຊ່ວງໄລຍະເວລາ ແລະອາດສາມາດເພີ່ມຂຶ້ນໄດ້ສຳລັບການທົບທວນຄັ້ງຕໍ່ໄປ ຢູ່ໃນປີ 2018. ສຸດທ້າຍ, ບັນດາແຫຼ່ງຂໍ້ມູນທີ່ຖືກກຳນົດໂດຍ CDP ແມ່ນເປັນພຽງແຫຼ່ງຂໍ້ມູນທີ່ສາມາດນຳໃຊ້ໄດ້ສຳລັບການຄຳນວນບັນດາດັດຊະນີ LDC, ສ່ວນແຫຼ່ງອື່ນໆແມ່ນບໍ່ເປັນທີ່ຍອມຮັບໄດ້.

ສຳລັບການອ້າງອີງ, ບັນດາຕົວຊີ້ບອກແມ່ນໄດ້ຖືກຜະລິດຂຶ້ນໃໝ່ຢູ່ໃນເອກະສານຊ້ອນທ້າຍ 2.1 ຊຶ່ງສາມາດເຫັນໄດ້ວ່າແຕ່ລະຕົວຊີ້ບອກ ແລະອະນຸຕົວຊີ້ບອກກ່ຽວກັບການກຳນົດ LDC ເຫຼົ່ານີ້ ແມ່ນມາຈາກຕະກູນຂອງບັນດາຕົວຊີ້ບອກ HD. ມັນຕາມມາດ້ວຍວ່າ, ຖ້າເພີ່ມ HD/HDI ຂຶ້ນ ກໍ່ຍັງຈະເປັນຜົນຕໍ່ກັບການປັບປຸງບັນດາຕົວຊີ້ບອກເຫຼົ່ານີ້; ນັ້ນໝາຍຄວາມວ່າ, ຖ້າປັບປຸງ HD ປະເທດກໍ່ຈະຫຍັບເຂົ້າໃກ້ກັບການຊຸກດັນໃຫ້ຫລຸດພົ້ນອອກຈາກສະຖານະພາບ LDC ຂອງມັນ.

ດັດຊະນີສາມຕົວນີ້ ແມ່ນພວກມັນມີຄວາມເປັນເອກະລາດ ແລະຈະບໍ່ຖືກລວມເຂົ້າກັນເພື່ອສ້າງເປັນດັດຊະນີລວມອັນດຽວ. ດັ່ງທີ່ໄດ້ກ່າວມາຢູ່ໃນພາກສະເໜີກ່ອນນີ້, ສາມມາດຖານ (ຫຼືບັນດາຕົວດັດຊະນີ) ເຫຼົ່ານີ້ ແມ່ນເປັນການວັດແທກທາງດ້ານປະລິມານ ກ່ຽວກັບສະຖານະພາບການພັດທະນາຂອງປະເທດ. HD ຫຼືການຫລຸດພົ້ນອອກຈາກ LDC ແມ່ນຫຼາຍເກີນກວ່າການປັບປຸງບັນດາຕົວດັດຊະນີທີ່ສຳຄັນພຽງຢ່າງດຽວ (ກ່ຽວກັບ HD ຫຼື LDC): ມັນມີຫຼາຍປັດໄຈສຳຄັນທີ່ຖືກຄາດວ່າຈະປະກອບເຂົ້າຢູ່ໃນການກ້າວເດີນຂອງປະເທດ ເພື່ອໄປສູ່ການຫລຸດພົ້ນອອກຈາກສະຖານະພາບ LDC ແລະຫຼັງຈາກນັ້ນ ເຊັ່ນ: ການປົກຄອງທີ່ດີຂຶ້ນ ຫຼືການປັບປຸງສະຖາບັນຕ່າງໆ ທີ່ຈະເຮັດໃຫ້ຄຸນນະພາບຊີວິດຂອງປະຊາລາດຊະດອນຈຳນວນຫຼາຍດີຂຶ້ນ.[32]

## ຄວາມຄືບໜ້າຂອງການຫລຸດພົ້ນອອກຈາກ (LDC) ຢູ່ໃນ ສປປ ລາວ

### ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ

ອີງຕາມການຄຳນວນຂອງ CDP ໃນປີ 2015, ຄ່າສະເລ່ຍຂອງ GNI ຕໍ່ຫົວຄົນ ໃນຊ່ວງໄລຍະເວລາ 3 ປີ (2011-2013) ຂອງ ສປປ ລາວ ແມ່ນຢູ່ທີ່ປະມານ 1.232 ໂດລາສະຫະລັດ ຊຶ່ງສາມາດບັນລຸໄດ້ປະມານ 99% ຂອງມາດຖານຂັ້ນຕ່ຳໃນການຫລຸດພົ້ນອອກຈາກ LDC (US$1,242).[33] GNI ຕໍ່ຫົວຄົນ ແມ່ນໄດ້ຮັບການປັບປຸງຢ່າງໄວວາຢູ່ໃນການທົບທວນ ໃນປີ 2015 ຊຶ່ງເພີ່ມຂຶ້ນຈາກ 913 ໂດລາສະຫະລັດ (ຫຼືປະມານ 77% ຂອງມາດຖານຂັ້ນຕ່ຳທີ່ບອກວ່າ 1.086 ໂດລາສະຫະລັດ) ສຳລັບການທົບທວນຢູ່ໃນປີ 2012. ມັນໄດ້ປະມານ 510 ໂດລາສະຫະລັດ (ຫຼືປະມານ 47% ຂອງມາດຕະຖານຂັ້ນຕ່ຳທີ່ບອກວ່າ 900 ໂດລາສະຫະລັດ) ສຳລັບການທົບທວນ ໃນປີ 2009, ແລະ ປະມານ 350 ໂດລາສະຫະລັດ (ຫຼືປະມານ 39% ຂອງມາດຕະຖານຂັ້ນຕ່ຳທີ່ບອກວ່າ 900 ໂດລາສະຫະລັດ) ສຳລັບການທົບທວນ ໃນປີ 2006.[34] ຮູບ 2.1 ສະແດງເຖິງຄວາມຄືບໜ້າຂອງ GNI ຕໍ່ຫົວຄົນ ຂອງ ສປປ ລາວ ທີ່ໄດ້ຈັດຕັ້ງປະຕິບັດມາໃນລະຫວ່າງ ປີ 2006-2015.

**ຮູບທີ 2.1: ຄວາມຄືບໜ້າຂອງ GNI ຕໍ່ຫົວຄົນ ຂອງ ສປປ ລາວ ສໍາລັບການທົບທວນໃນໄລຍະໃກ້ໆ ຜ່ານມານີ້(2006-2015)**




ແຫຼ່ງຂໍ້ມູນ: ການຄໍານວນຂອງ CDP ແລະ ສຖສ (NERI)

ເສດຖະກິດຂອງ ສປປ ລາວ ແມ່ນກໍາລັງສືບຕໍ່ພັດທະນາຢ່າງມີຄວາມກ້າວໜ້າ ແລະຄາດວ່າຈະມີການເຕີບໂຕຢູ່ໃນອັດຕາສະເລ່ຍ 7,5% ຕໍ່ປີ ດັ່ງທີ່ໄດ້ຄາດການໄວ້ຢູ່ໃນເອກະສານແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020). GNI ຕໍ່ຫົວຄົນ ຂອງ ສປປ ລາວ ໃນປີ 2018 ແມ່ນຄາດວ່າຈະເກີນກວ່າມາດຖານຂັ້ນຕໍ່າຂອງການຫລຸດພົ້ນອອກຈາກສະຖານະພາບ LDC ແລະຈະເກີນກວ່າລະດັບນັ້ນຫຼາຍ ໃນປີ 2021, ຖ້າມາດຖານຂັ້ນຕໍ່ານີ້ຫາກບໍ່ມີການປ່ຽນແປງ (ເບິ່ງໃນຕາຕະລາງ 2.2). ຕົວເລກນີ້ຍັງສະແດງໃຫ້ເຫັນວ່າ ຖ້າຫາກອັດຕາການເຕີບໂຕຂອງ GDP ມີຢູ່ສູງດັ່ງທີ່ ແຜນ VIII ໄດ້ຄາດຄະເນໄວ້, ຕໍ່ຈາກນັ້ນ GNI ຂອງ ສປປ ລາວ ກໍ່ຈະຫຍັບເຂົ້າໃກ້ຄວາມຄ້າຍຄືກັນກັບ GDP — ຈະເປັນໜຶ່ງເທົ່າຕົວຂອງມາດຖານຂັ້ນຕໍ່າໃນການຫລຸດພົ້ນອອກຈາກ LDC, ແລະປະເທດກໍ່ຈະຫລຸດພົ້ນອອກຈາກການເປັນ LDC ໃນປີ 2020 ໂດຍບໍ່ຄໍານຶງ ຫຼືພິຈາລະນາວ່າແມ່ນຫຍັງທີ່ຈະເກີດຂຶ້ນກັບ HAI ຫຼື EVI.[35]

**ຮູບທີ 2.2: GNI ຕໍ່ຫົວຄົນ ຕາມຖານຂໍ້ມູນຂອງທະນາຄານໂລກ (Atlas Method), 2000- 2020 (ຕາມມູນຄ່າຂອງເງິນໂດລາສະຫະລັດໃນປັດຈຸບັນ)**




ແຫຼ່ງຂໍ້ມູນ: ຖານຂໍ້ມູນຂອງທະນາຄານໂລກ ແລະການຄາດຄະເນຢູ່ໃນແຜນ VIII:

## ດັດຊະນີຊັບສິນມະນຸດ (HAI)

HAI ຂອງ ສປປ ລາວ ແມ່ນໄດ້ຮັບການປັບປຸງຫຼາຍຂຶ້ນ ຕັ້ງແຕ່ປີ 2003 ເປັນຕົ້ນມາ, ແຕ່ວ່າກໍ່ຍັງບໍ່ທັນຄືກັນກັບຄວາມຄືບໜ້າຂອງ GNI ຊຶ່ງຄວາມຄືບໜ້ານັ້ນແມ່ນຍັງບໍ່ທັນລາບລື່ນພໍ (ເບິ່ງຢູ່ໃນຮູບທີ 2.3). ໃນປີ 2003, HAI ຂອງ ສປປ ລາວ ແມ່ນບັນລຸໄດ້ 84% ຂອງມາດຖານຂັ້ນຕໍ່າ; ໃນປີ 2006 ໄດ້ເພີ່ມຂຶ້ນເປັນ 94%; ແຕ່ໃນປີ 2009 ພັດຫລຸດລົງເປັນ 93%, ແລະໃນປີ 2015 ພັດສືບຕໍ່ຫລຸດລົງເປັນ 92% (ຮູບສະແດງທີ 2.3), ແຕ່ມັນກໍ່ຍັງຢູ່ເໜືອກວ່າ 90% ນັບແຕ່ປີ 2006 ມານີ້; ເຖິງແນວໃດກໍ່ຕາມ, ຈາກການທົບທວນຂອງ CDP ໄດ້ຕີຄວາມໝາຍໃຫ້ເຫັນວ່າມັນມີແນວໂນ້ມທີ່ຊັກຊ້າລົງ, ຖ້າສົມທຽບກັບບາງປະເທດອື່ນໆ. ເຫັນວ່າ ສປປ ລາວ ແມ່ນຂ້ອນຂ້າງຊັກຊ້າໃນການບັນລຸບັນດາເປົ້າໝາຍ HAI; ແຕ່ວ່າມັນກໍ່ມີບັນດາເຫດຜົນທີ່ເປັນໄປໄດ້ສຳລັບຍຸກນີ້; ອັນທີໜຶ່ງ, ແມ່ນມີບັນດາຕົວຊີ້ບອກທີ່ແຕກຕ່າງກັນປະກອບຢູ່ໃນ HAI ຊຶ່ງເຮັດໃຫ້ມີການເຄື່ອນຍ້າຍໂດຍລວມຊັກຊ້າລົງ ຖ້າສົມທຽບກັບບັນດາຕົວປ່ຽນທີ່ບໍ່ແນ່ນອນຫຼາຍຂຶ້ນ ຄືກັນກັບ GNI/GDP; ແລະ ອັນທີສອງ, ແມ່ນມັນໄດ້ມີການປ່ຽນແປງຖານຂໍ້ມູນ ໃນປີ 2012 ເນື່ອງຈາກຄຳນິຍາມ, ການກວມເອົາ ແລະອື່ນໆໄດ້ມີການປ່ຽນແປງ.[3]

ຈຳນວນຕົວເລກ HAI ໃນຮູບ 2.3 ຢູ່ໃນ 4 ແທ່ງຄູ່ທຳອິດນັ້ນ ແມ່ນອີງຕາມຂໍ້ມູນກ່ຽວກັບປີ 2012-2013 ຫຼືຂໍ້ມູນກ່ອນນັ້ນ. ຂໍ້ມູນໃນໄລຍະໃກ້ໆມານີ້ໄດ້ຊີ້ໃຫ້ເຫັນວ່າ ມັນໄດ້ມີການປັບປຸງບັນດາຕົວຊີ້ບອກທາງສັງຄົມຕ່າງໆ; ເພາະສະນັ້ນ, ບາງການຄຳນວນໃໝ່ນີ້ແມ່ນໄດ້ມີການນຳໃຊ້ຂໍ້ມູນຈິນມາຮອດດຽວນີ້ ຊຶ່ງຍັງບໍ່ທັນໄດ້ນຳໃຊ້ຂໍ້ມູນຈາກແຫຼ່ງຕ່າງໆຂອງ CDP ແລະຄາດວ່າຈະໄດ້ມີການນຳໃຊ້ເຂົ້າໃນການທົບທວນຄັ້ງຕໍ່ໄປ. ຄ່າ HAI ທີ່ຖືກດັດແກ້ແລ້ວ ໃນປີ 2015 ແມ່ນຕົກຢູ່ທີ່ 65,32 – 99% ຂອງມາດຖານຂັ້ນຕໍ່າ.

ສຳລັບປີ 2016 ແມ່ນໄດ້ເຮັດການຄາດຄະເນແຕ່ລະຕົວຊີ້ບອກຂອງສີ່ອົງປະກອບຂອງ HAI, ຊຶ່ງການທົບທວນຂອງ CDP ໃນຄັ້ງຕໍ່ໄປ ສຳລັບປີ 2018 ແມ່ນຈະໄດ້ນຳໃຊ້ຂອງປີ 2016 (ຕົວປ່ຽນຫຼ້າສຸດໃນປີ 2018). ຂອບເຂດພື້ນຖານສຳລັບການຄາດຄະເນແມ່ນ: ການຂາດສານອາຫານຈະຫລຸດລົງ 3,8%, ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ ຈະຫລຸດລົງ 6,7%, ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ຈະເພີ່ມຂຶ້ນ 7,2%, ແລະອັດຕາການເຂົ້າຮຽນຊັ້ນມັດທະຍົມຈະເພີ່ມຂຶ້ນ 5,2% ໃນທຸກໆສາມປີ. ການຄາດຄະເນ HAI ທີ່ອີງໃສ່ບັນດາຂອບເຂດສົມມຸດຖານຕ່າງໆສຳລັບປີ 2016 ແມ່ນເປັນ 67,14%. ເພາະສະນັ້ນ, ຖ້າການຄາດຄະເນຫາກມີຄວາມຖືກຕ້ອງ ແລະຫຼັກຄາດໝາຍຂອງ HAI ບໍ່ມີການປ່ຽນແປງ, ສປປ ລາວ ຈະມີຄຸນວຸດທິໃນປີ 2018 ສຳລັບການສະເໜີໃຫ້ຫລຸດພົ້ນອອກຈາກສະຖານະພາບ LDC.[37]

**ຮູບທີ 2.3: ມາດຕະຖານຂັ້ນຕໍ່າ ແລະຄວາມຄືບໜ້າດ້ານ HAI ຂອງ ສປປ ລາວ**




ແຫຼ່ງຂໍ້ມູນ: ການຄິດໄລ່ຂອງ ສຄສ ຈາກຖານຂໍ້ມູນຂອງ CDP

ການແຍກ HAI ຈາກການທົບທວນ ໃນປີ 2015 ສະແດງໃຫ້ເຫັນວ່າ ຄ່າຂອງຕົວຊີ້ບອກກ່ຽວກັບການຂາດສານອາຫານແມ່ນ 72 (ມາດຖານຂັ້ນຕ່ຳແມ່ນ 66), ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ ແມ່ນ 62,79, ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ແມ່ນ 63,6, ແລະອັດຕາການເຂົ້າຮຽນຊັ້ນມັດທະຍົມແມ່ນ 45. ຈາກທີ່ນີ້ເຫັນວ່າມີພຽງແຕ່ການຂາດສານອາຫານເທົ່ານັ້ນທີ່ບັນລຸໄດ້ເປົ້າໝາຍ; ສ່ວນສາມອັນອື່ນນັ້ນແມ່ນຍັງຕາມຫຼັງຢູ່ ໂດຍສະເພາະແມ່ນຕົວຊີ້ບອກກ່ຽວກັບອັດຕາການເຂົ້າຮຽນຊັ້ນມັດທະຍົມ, ນັ້ນສະແດງວ່າ ສປປ ລາວ ຈຳເປັນຈະຕ້ອງໄດ້ເຮັດວຽກກັບບັນດາຕົວປ່ຽນທີ່ຍັງຊັກຊ້ານັ້ນ ໂດຍຖືເປັນບຸລິມະສິດພື້ນຖານສຳລັບການປັບປຸງ HAI.

ຕາຕະລາງ 2.1 ສະແດງເຖິງຄ່າສຳປະສິດສ່ວນເພີ່ມຂອງແຕ່ລະສີ່ສ່ວນປະກອບຂອງ HAI.[38] ຄ່າຕ່າງໆຢູ່ໃນຕາຕະລາງນີ້ ຊີ້ໃຫ້ເຫັນວ່າການເພີ່ມຂຶ້ນສູງສຸດຢູ່ໃນ HAI ແມ່ນຈະເກີດຂຶ້ນໄດ້, ຖ້າສະຖານະພາບການໂພຊະນາການຂອງປະຊາກອນເພີ່ມຂຶ້ນ, ຕາມມາດ້ວຍການເພີ່ມຂຶ້ນຂອງອັດຕາການຮູ້ໜັງສື, ຕໍ່ຈາກນັ້ນແມ່ນການເພີ່ມຂຶ້ນຂອງອັດຕາການເຂົ້າຮຽນຊັ້ນມັດທະຍົມ, ແລະສຸດທ້າຍແມ່ນການຫລຸດລົງຂອງອັດຕາການຕາຍຂອງເດັກເດັກນ້ອຍອາຍຸລຸ່ມ 5 ປີ. ການລົງທຶນເຂົ້າໃສ່ບັນດາອົງປະກອບຂອງ HAI ເຫຼົ່ານີ້ ແມ່ນຍັງຈະຊ່ວຍປັບປຸງ HD ນຳອີກ. ຕາມຄວາມເປັນຈິງແລ້ວ, ແມ່ນມັນມີຜົນຮ່ວມກັນໃນລະຫວ່າງສີ່ອົງປະກອບນີ້ຄືນທີ່ມີການສຶກສາຈະມີຄວາມເອົາໃຈໃສ່ຫຼາຍຕໍ່ກັບການດູແລສຸຂະພາບຂອງເຂົາເຈົ້າ ແລະລົງທຶນເຂົ້າໃນການໂພຊະນາການ ແລະອື່ນໆ. ການເອົາໃຈໃສ່ຢ່າງຕັ້ງໜ້າຕໍ່ກັບການປະສົມປະສານໃດໜຶ່ງຂອງບັນດາຕົວຊີ້ບອກເຫຼົ່ານີ້ ກໍ່ຈະຊ່ວຍໃນການປັບປຸງອັນອື່ນນຳຄືກັນ.

**ຕາຕະລາງ 2.1: ຄ່າຕົວສຳປະສິດສ່ວນເພີ່ມຂອງ HAI ກ່ຽວກັບການປ່ຽນແປງຫົວໜ່ວຍຢູ່ໃນສ່ວນປະກອບຕ່າງໆ**

| ຕົວປ່ຽນ | ຄ່າ |
|---|---|
| ການຂາດສານອາຫານ | -0,42 |
| ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ | -0,15 |
| ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ | 0,33 |
| ອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມ | 0,28 |

ແຫຼ່ງຂໍ້ມູນ: ການຄິດໄລ່ຢູ່ພາຍໃນ ສຄສ

## ດັດຊະນີຄວາມບອບບາງທາງເສດຖະກິດ (EVI)

EVI ແມ່ນຕົວດັດຊະນີທີ່ຊັບຊ້ອນຂອງຈຳນວນຕົວປ່ຽນທີ່ໄດ້ກ່າວມາກ່ອນນີ້ຢູ່ໃນພາກສະເໜີ, ຊຶ່ງອັນຫຼັກໆແມ່ນລວມມີການກະສິກຳ ແລະສິນຄ້າຕ່າງໆ (ຄວາມສຳຄັນຂອງພວກມັນ ແລະຄວາມບໍ່ໝັ້ນຄົງໃນການຜະລິດ ແລະການສົ່ງອອກ); ແລະຜົນກະທົບຈາກໄພພິບັດທາງທຳມະຊາດຕ່າງໆ. ໃນໄລຍະຕົ້ນ ແລະກາງຊຸມປີ 2000, ເຫັນວ່າຄ່າ EVI ຢູ່ໃນ ສປປ ລາວ ແມ່ນຖືກແຍກອອກຫ່າງໄກຫຼາຍຈາກຄວາມຮຽກຮ້ອງຕ້ອງການຂັ້ນຕ່ຳສຸດ, ແຕ່ວ່າມາໃນປີ 2012 ແລະໃນປີ 2015 ມັນໄດ້ມາຈຸ້ມເຂົ້າກັນຄືນອີກເທື່ອໜຶ່ງ ເພື່ອກ້າວໄປສູ່ຄະແນນທີ່ມີຄວາມຮຽກຮ້ອງຕ້ອງການສຳລັບການຫລຸດພົ້ນອອກຈາກ LDC (32 – ຍິ່ງນ້ອຍຍິ່ງດີ). ໃນປີ 2015, CDP ໄດ້ທົບທວນພົບວ່າ ສປປ ລາວ ໄດ້ບັນລຸ 88% ຂອງມາດຖານການຫລຸດພົ້ນອອກຈາກ LDC ກ່ຽວກັບການຄິດໄລ່ EVI (ຮູບທີ 2.4) ຊຶ່ງເຫັນວ່າມັນຍັງມີບາງໄລຍະຫ່າງຈາກເງື່ອນໄຂທີ່ຈຳເປັນ ຫຼືທີ່ຮຽກຮ້ອງຕ້ອງການຢູ່.

**ຮູບທີ 2.4: ວິວັດທະນາການ EVI ຂອງ ສປປ ລາວ ໂດຍສົມທຽບກັບມາດຖານຂັ້ນຕໍ່າ**




ແຫຼ່ງຂໍ້ມູນ: CDP ສໍາລັບຮອດປີ 2012 ແລະການຄິດໄລ່ຂອງ ສດສ ສໍາລັບປີ 2015

**ກ່ອງທີ 2.1: EVI - ບາງເລື່ອງ**

ນິຍາມຄວາມໝາຍຂອງ EVI ແມ່ນມີຫຼາຍຄໍາຖາມທີ່ຍົກຂຶ້ນຕໍ່ກັບການຄໍານວນ ແລະຂໍ້ມູນຂອງມັນ ນັບຕັ້ງແຕ່ມັນປະກົດຕົວຂຶ້ນມາເປັນດັດຊະນີ 'ຂະໜາດດຽວທີ່ເໝາະສົມກັບທັງໝົດ'. ຕົວຢ່າງທີ່ໜຶ່ງ, ທີ່ຖືວ່າເປັນຄວາມຫ່າງໄກນັ້ນ ແມ່ນ ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ຊຶ່ງຖືວ່າເປັນສິ່ງກີດຂວາງອັນໜຶ່ງໃນການເຂົ້າເຖິງຕະຫຼາດໂລກ. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງມີເລື່ອງອື່ນໃຫ້ພິຈາລະນາອີກ ດັ່ງຕໍ່ໄປນີ້:

- ພະລັງງານໄຟຟ້າແມ່ນຖືກສົ່ງຜ່ານສາຍສົ່ງແຮງສູງ ແລະເຊື່ອມຕໍ່ກັບຕາຂ່າຍໄຟຟ້າຂອງໄທສ່ວນໜຶ່ງ ແລ້ວຈຶ່ງສົ່ງກັບເຂົ້າມາລາວອີກ – ຊຶ່ງອັນນີ້ບໍ່ໄດ້ໝາຍຄວາມວ່າແມ່ນຄວາມຫ່າງໄກແຕ່ຢ່າງໃດ.
- ຄູ່ຮ່ວມທາງການຄ້າຂອງ ສປປ ລາວ ສໍາລັບຜະລິດຕະພັນກະສິກໍາສ່ວນຫຼາຍ ແມ່ນພຽງແຕ່ຂ້າມຊາຍແດນໄປໜ້ອຍໜຶ່ງ (<20 Km) ເທົ່ານັ້ນ ຊຶ່ງຄວາມຫ່າງໄກແມ່ນບໍ່ເປັນບັນຫາສໍາລັບຜະລິດຕະພັນເຫຼົ່ານີ້ (ເບິ່ງໃນ, DTIS ສໍາລັບ ສປປ ລາວ, ຈັດໂດຍກະຊວງອຸດສາຫະກໍາ ແລະ ການຄ້າ, ສປປ ລາວ

  file:///Users/sarthiacharya/Downloads/lao_pdr_dtis_update_2012.pdf).

ຕົວຢ່າງທີສອງ, ກ່ຽວກັບຄວາມເຂັ້ມຂຸ້ນ ຫຼືຈຸດສຸມຂອງການສົ່ງອອກສິນຄ້າ ແລະການປະກອບສ່ວນຂອງປ່າໄມ້ ຫຼືການສົ່ງອອກທີ່ບໍ່ມີຄວາມໝັ້ນຄົງ.

- ຄວາມຕ້ອງການໂລຫະ ຫຼືແຮ່ໂລຫະ ແມ່ນບໍ່ມີຄວາມຢືດຫົດດ້ານລາຄາ. ຖ້າຫາກວ່າມີການຫລຸດລົງຂອງຄວາມຕ້ອງການຍ້ອນມັນບໍ່ມີຄວາມຕ້ອງການທາງດ້ານວັດຖຸເນື່ອງຈາກເສດຖະກິດຂອງຈີນ ແລະບັນດາເຂດເສດຖະກິດໃຫຍ່ອື່ນໆມີການຂະຫຍາຍຕົວຕໍ່າລົງ. ເມື່ອເປັນແນວນັ້ນ, ແມ່ນຈະເປັນບັນຫາດ້ານຄວາມຫ່າງໄກສໍາລັບລາຍການສົ່ງອອກນີ້ບໍ?
- ໄມ້ ແລະຜະລິດຕະພັນໄມ້ ແມ່ນມີຄວາມຕ້ອງການສູງຢູ່ໃນໂລກ ຊຶ່ງເຮັດໃຫ້ປ່າໄມ້ທໍາມະຊາດຫລຸດລົງຫຼາຍ. ພ້ອມກັນນັ້ນ, ກໍ່ຍັງມີບັນດາສົນທິສັນຍາສາກົນຈໍານວນໜຶ່ງ ທີ່ຮຽກຮ້ອງໃຫ້ມີການປົກປັກຮັກສາຊັບພະຍາກອນທໍາມະຊາດ. ສປປ ລາວ ເປັນໜຶ່ງໃນບັນດາປະເທດເອເຊຍຈໍານວນໜ້ອຍໜຶ່ງ (ຍົກເວັ້ນອິນໂດເນເຊຍ ແລະ ປາປົວ ນິວຈີນເນຍ) ທີ່ເປັນຜູ້ສະໜອງຜະລິດຕະພັນໄມ້. ຄວາມຕ້ອງການແມ່ນເກືອບວ່າບໍ່ມີຄວາມຢືດຫົດດ້ານລາຄາ.

ເວົ້າແບບກະທັດຮັດ, ແມ່ນມີຂອບເຂດໃນການນຳເອົາບັນດາຕົວປ່ຽນສະເພາະຂອງບາງປະເທດ ເຂົ້າໃນການຄິດໄລ່ດັດຊະນີທີ່ສອດຄ່ອງ ແລະເໝາະສົມກັບແຕ່ລະປະເທດ (ຫຼືປະເທດທີ່ມີຄວາມຄ້າຍຄືກັນ). ເພາະສະນັ້ນ, ໃນຂະນະທີ່ ປະເທດຊາມົວ, ຟີຈີ ຫຼື ຕົງກາ ແມ່ນອາດຈະຂຶ້ນກັບ ຫຼືອີງອາໄສໃສ່ປ່າ ແລະບາງຜະລິດຕະພັນກະສິກຳໜັກຫຼາຍ ແລະບາງໝູ່ເກາະພັດປະເຊີນກັບບັນຫານ້ຳຖ້ວມ ຖ້າຫາກວ່າລະດັບນ້ຳທະເລເພີ່ມສູງຂຶ້ນ; ໃນຂະນະທີ່ບັນດາປະເທດອາດີດສະຫະພາບໂຊວຽດຢູ່ໃນເຂດອາຊີກາງ, ມົງໂກລີ ຫຼື ສປປ ລາວ ພັດພະເຊີນກັບບັນດາບັນຫາ ຫຼືເງື່ອນໄຂທີ່ແຕກຕ່າງກັນຫຼາຍ.

ການຄຳນວນ EVI ສຳລັບບັນດາຂໍ້ຫຍຸ້ງຍາກ ແລະຄວາມບໍ່ແນ່ນອນຕ່າງໆ ທີ່ LDC (ສາມາດ) ພະເຊີນກັບເສດຖະກິດ ແມ່ນການເກີດຂຶ້ນຂອງໄພພິບັດທາງທຳມະຊາດ ແລະທີ່ຕັ້ງພູມສັນຖານຂອງປະເທດ. ໃນຂະນະທີ່ການເຮັດການຈຳລອງຄືດັ່ງທີ່ໄດ້ດຳເນີນການສຳລັບ HAI ແມ່ນບໍ່ໄດ້ເຮັດຢູ່ໃນທີ່ນີ້ ເນື່ອງຈາກມີຂໍ້ຫຍຸ້ງຍາກກ່ຽວກັບການຄາດຄະເນບັນດາຕົວຊີ້ບອກຍ່ອຍຂອງມັນ, ແຕ່ມີບາງຈຸດໜ້ອຍໜຶ່ງທີ່ຮຽກຮ້ອງໃຫ້ມີການກ່າວເຖິງ ຫຼືຄາດການໄວ້ສຳລັບທິດທາງໃນອະນາຄົດຂອງ EVI.

ການຄິດໄລ່ແຍກກັນຂອງ EVI ຈາກການທົບທວນໃນປີ 2015 ໄດ້ສະແດງໃຫ້ເຫັນວ່າ ຄ່າຂອງຕົວຊີ້ບອກດ້ານປະຊາກອນແມ່ນ 41,4 (ມາດຖານຂັ້ນຕ່ຳແມ່ນ 32 – ຍິ່ງຕ່ຳຍິ່ງດີ), ຄວາມຫ່າງໄກແມ່ນ 58,8, ຄວາມເຂັ້ມຂຸ້ນ ຫຼືຈຸດສຸມຂອງການສົ່ງອອກແມ່ນ 22,4, ການປະກອບສ່ວນຂອງກະສິກຳແມ່ນ 41,9, ການປ່າໄມ້ ແລະການປະມົງແມ່ນ 41,9, ຜູ້ໄດ້ຮັບເຄາະຮ້າຍຈາກໄພພິບັດທາງທຳມະຊາດແມ່ນ 88,9, ຄວາມບໍ່ໝັ້ນຄົງທາງດ້ານກະສິກຳແມ່ນ 20,4, ແລະຄວາມບໍ່ໝັ້ນຄົງຂອງການສົ່ງອອກແມ່ນ 24,2. ບັນດາຕົວເລກເຫຼົ່ານີ້ໄດ້ຊີ້ໃຫ້ເຫັນວ່າ ອັນສຳຄັນທີ່ເຮັດໃຫ້ຄ່າ EVI ຕ່ຳນັ້ນແມ່ນຄວາມຫ່າງໄກ, ແຕ່ວ່າບັນດາຈຸດນ້ອຍໆທີ່ເບົາບາງ ແມ່ນໄດ້ສະເໜີໄວ້ຢູ່ໃນກ່ອງທີ 2.1, ອັນທີ່ເປັນໃຈກາງຂອງການຫລຸດຄ່າ EVI ນັ້ນ ຄວນຈະແມ່ນຄວາມຫຼາກຫຼາຍທາງເສດຖະກິດ ແລະການຫລຸດຜ່ອນຈຳນວນປະຊາກອນທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດຕ່າງໆ. ບາງແງ່ນະໂຍບາຍທີ່ສຳຄັນກ່ຽວກັບການຫລຸດຄ່າ EVI ໃນມູມມອງຂອງການພັດທະນາຕ່າງໆຢູ່ ສປປ ລາວ ໃນປັດຈຸບັນ ແລະແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແມ່ນໄດ້ສົນທະນາຢູ່ຂ້າງລຸ່ມນີ້:

- ລັດຖະບານໄດ້ສະເໜີເພື່ອເພີ່ມທະວີການຄຸ້ມຄອງຊົນລະປະທານ, ການປູກພືດທີ່ຫຼາກຫຼາຍ ແລະຫັນບັນດາກິດຈະກຳຕ່າງໆເປັນການຄ້າ ເປັນຕົ້ນແມ່ນການລ້ຽງສັດ. ດ້ວຍສິ່ງທີ່ກ່າວມານີ້, ຈຶ່ງຈະເຮັດໃຫ້ການກະສິກຳມີຄວາມໝັ້ນຄົງຫຼາຍຂຶ້ນ ແລະບັນດາກິດຈະກຳທີ່ກ່ຽວພັນຂອງມັນຈຶ່ງຈະສາມາດມີຄວາມຄາດຫວັງໄດ້. ດັ່ງພາກທີ 4 ຈະສະແດງໃຫ້ເຫັນວ່າ ສ່ວນໜຶ່ງຂອງອັນນີ້ແມ່ນໄດ້ປະກົດມີຂຶ້ນແລ້ວ, ເຖິງແມ່ນວ່າຈະມີການຮຽກຮ້ອງຕ້ອງການໃຫ້ມີການດຳເນີນການຫຼາຍຂຶ້ນກວ່າເກົ່າກໍ່ຕາມ.

- ຖ້າຫາກມີການດຳເນີນການຫັນເປັນກຸ່ມບໍລິສັດຄ້າຂາຍເຂົ້າ ຫຼືສິນຄ້າທາງການກະສິກຳອື່ນໆ ດັ່ງທີ່ປະເທດໄທໄດ້ເຮັດມາໃນບາງຊ່ວງໄລຍະເວລາຫຼັງນີ້, ຄາດວ່າມັນມີຄວາມເປັນໄປໄດ້ທີ່ຈະຫັນລາຄາສົ່ງອອກເຂົ້າໃຫ້ມີຄວາມໝັ້ນຄົງ. ອັນນີ້ແມ່ນໜຶ່ງໃນການລິເລີ່ມຕ່າງໆ ທີ່ປະເທດຮຽກຮ້ອງໃຫ້ມີການດຳເນີນການຮ່ວມກັບຄູ່ຮ່ວມໃນກຸ່ມ ASEAN ແລະບັນດາປະເທດທີ່ສົ່ງອອກຜົນຜະລິດກະສິກຳຂອງເອເຊຍ.

- ຄວາມເຂັ້ມຂຸ້ນ ຫຼືຈຸດສຸມຂອງການສົ່ງອອກສິນຄ້າ ແມ່ນຍັງຈະຮັກສາລະດັບສູງຕາມທີ່ເປັນຢູ່ໃນຂະນະນີ້; ແຕ່ການສົ່ງອອກບາງອັນເຊັ່ນ: ພະລັງງານໄຟຟ້າ ແມ່ນເປັນຄ້າຍຄືກັນກັບຜະລິດຕະພັນນ້ຳມັນທີ່ເປັນຢູ່ມາຮອດປັດຈຸບັນນີ້ ຄື: ມີຄວາມຕ້ອງການສູງ, ມີຄວາມຍືດຫົດດ້ານລາຄາໜ້ອຍ ຫຼືບໍ່ມີເລີຍ ແລະເກືອບວ່າຈະບໍ່ມີອັນຕະລາຍກ່ຽວກັບການພັງທະລາຍຂອງຕະຫຼາດ. ເຖິງຢ່າງໃດກໍ່ຕາມ, ການໃຫ້ຜົນປະໂຫຍດເພີ່ມເຕີມໃນມິຕິທາງນິເວດວິທະຍາຕ່າງໆ ກໍ່ເປັນແງ່ມູມໜຶ່ງທີ່ຮຽກຮ້ອງໃຫ້ມີການເອົາໃຈໃສ່ຕໍ່ໄປ.

- ບັນດານະໂຍບາຍຕ່າງໆກ່ຽວກັບການຫັນເປັນອຸດສາຫະກຳ ແລະທັນສະໄໝ ຢູ່ໃນ ສປປ ລາວ ທີ່ໄດ້ສົນທະນາໃນລາຍລະອຽດຫຼາຍຢູ່ໃນພາກທີ 4 ນັ້ນ ຈະຊ່ວຍໃຫ້ປະເທດສືບຕໍ່ຫລຸດພົ້ນອອກຈາກການເອື່ອຍອີງໃສ່ຜະລິດຕະພັນຂັ້ນຕົ້ນ, ເຖິງແມ່ນວ່າ ສປປ ລາວ ຈຳເປັນຈະຕ້ອງໄດ້ເພີ່ມທະວີການພັດທະນາມະນຸດ ເປັນພື້ນຖານອັນຮີບດ່ວນສຳລັບການເລັ່ງລັດການຫັນເປັນອຸດສາຫະກຳກໍ່ຕາມ.

- ບັນດານະໂຍບາຍຕ່າງໆສຳລັບການຄຸ້ມຄອງ ແລະຫລຸດຜ່ອນໄພພິບັດທີ່ມີຢູ່ໃນປັດຈຸບັນນີ້ ແມ່ນຮຽກຮ້ອງໃຫ້ມີການສົ່ງເສີມຕື່ມ ໂດຍສະເພາະແມ່ນລະບົບເຕືອນໄພລ່ວງໜ້າ, ການສະແດງພາບກ່ຽວກັບນ້ຳຖ້ວມຜ່ານດາວທຽມ ແລະອື່ນໆ; ນອກຈາກນັ້ນກໍ່ແມ່ນການຢຸດຕິການຖາງປ່າເຮັດໄຮ່,ການທຳລາຍປ່າໄມ້ ແລະການຂຸດຄົ້ນບໍ່ແຮ່ທີ່ບໍ່ຖືກຕາມຫຼັກວິທະຍາສາດໃຫ້ໄດ້ຢ່າງສົມບູນ. ເນື່ອງຈາກຖານຂໍ້ມູນກ່ຽວກັບເລື່ອງນີ້ມີຈຳກັດຫຼາຍ; ສະນັ້ນ, ຄວາມຈຳເປັນໃນການເພີ່ມທະວີຂີດຄວາມສາມາດຂອງມັນ ແມ່ນບໍ່ສາມາດເນັ້ນໄດ້ຫຼາຍໄປກວ່ານີ້.

ໃນແຕ່ລະຢ່າງທີ່ກ່າວມາຂ້າງເທິງນີ້ ແມ່ນສາມາດຊ່ວຍຫລຸດຜ່ອນຄ່າ (ຕົວຢ່າງ: ປັບປຸງສິ່ງທີ່ຢູ່ຂ້າງເທິງນີ້) EVI ໄດ້.

ສັງລວມແລ້ວ, ສປປ ລາວ ໄດ້ມີຄວາມຄືບໜ້າເປັນຢ່າງດີ ໃນສາມມາດຖານຂອງການຫລຸດພົ້ນອອກຈາກ LDC ຕາມການທົບທວນຄັ້ງຫຼ້າສຸດຂອງ CDP ໃນປີ 2015, ແຕ່ມັນກໍ່ຍັງບໍ່ສາມາດບັນລຸໄດ້ຕາມເງື່ອນໄຂທີ່ວາງໄວ້ເທື່ອ. ການຄຳນວນທີ່ນຳໃຊ້ຕົວປ່ຽນຫຼ້າສຸດ/ຂໍ້ມູນທີ່ຄາດຄະເນໄວ້ກ່ຽວກັບ GNI ແລະ HAI ໄດ້ຊີ້ໃຫ້ເຫັນວ່າຕາມເວລາຂອງການປະເມີນຄັ້ງຕໍ່ໄປ (ໃນປີ 2018) GNI ຕໍ່ຫົວຄົນ ຂອງ ສປປ ລາວ ແມ່ນຈະສູງກວ່າມາດຖານຂັ້ນຕ່ຳຂອງການຫລຸດພົ້ນອອກຈາກ LDC ແນ່ນອນ (ໃນຕົວຈິງ, ແມ່ນມັນບັນລຸໄດ້ແລ້ວ ໃນສົກປີ 2015/2016), ແລະຄ່າ HAI ກໍ່ຈະໄດ້ເຊັ່ນກັນ. ກ່ຽວກັບຄ່າ EVI ທີ່ຢູ່ໃນຂັ້ນນີ້ ແມ່ນຍັງບໍ່ສາມາດເວົ້າໄດ້ຫຼາຍເທື່ອ, ແຕ່ກໍ່ຄາດວ່າຈະສະແດງໃຫ້ເຫັນບາງສະພາບແວດລ້ອມຂອງມັນ. ແຕ່ວ່າ, ຖ້າຫາກປະເທດສາມາດບັນລຸໄດ້ຄາດໝາຍຂອງສອງໃນສາມມາດຖານນັ້ນ ມັນກໍ່ຈະມີສິດສະເໜີເພື່ອຫລຸດພົ້ນອອກຈາກ LDC ໄດ້. ກ່ອງທີ 2.2 ສະແດງເຖິງສະຖານະພາບຂອງ ສປປ ລາວ ທີ່ກ່ຽວຂ້ອງກັບທັງສາມມາດຖານ ໂດຍສົມທຽບກັບ LDC ອື່ນໆ. ເຖິງຢ່າງໃດກໍ່ຕາມ, ການວິໄຈນີ້ກໍ່ບໍ່ໄດ້ສະແດງໃຫ້ເຫັນວ່າມັນມີທີ່ ຫຼື ບ່ອນສຳລັບຄວາມພໍໃຈໃນຕົນເອງແຕ່ຢ່າງໃດ: ມີຂົງເຂດອື່ນໆຢູ່ໃນການສຶກສາ (ຕົວຢ່າງ, ການສຶກສາຊັ້ນມັດທະຍົມ ແລະອັດຕາການຮູ້ໜັງສືຂອງຜູ້ໃຫຍ່) ທີ່ຈຳເປັນຈະຕ້ອງໄດ້ມີການສືບຕໍ່ປັບປຸງຕໍ່ໄປ ແລະບັນດາອົງປະກອບອື່ນໆຂອງ HAI ກໍ່ຕ້ອງໄດ້ປັບປຸງເຊັ່ນກັນ ຊຶ່ງພວກມັນຈະຍັງປະກອບສ່ວນຕໍ່ HD ອີກດ້ວຍ.

**ກ່ອງທີ 2.2 : ຕຳແໜ່ງທີ່ກ່ຽວພັນກັບຂະໜາດຂອງການຫຼຸດພົ້ນອອກຈາກ LDC ຂອງ ສປປ ລາວ**










- ສປປ ລາວ ຈະປະກາດຫຼຸດພົ້ນອອກຈາກ LDC ໃນປີ 2020.
- GNI ແລະ HAI ຢູ່ໃນສະຖານະທີ່ກ້າວໜ້າກວ່າບັນດາ LDC ສ່ວນຫຼາຍ.
- ມັນຈະບັນລຸໄດ້ມາດຖານ GNI ຢູ່ໃນການທົບທວນປີ 2018.
- EVI ແມ່ນຍັງມີຄວາມຊັກຊ້າ, ທັງຢູ່ໃນໄລຍະທຽບຄຽງ ແລະໄລຍະຂາດຕົວ

## ການຫລຸດພົ້ນອອກຈາກ LDC ມີທາງເປັນໄປໄດ້ທີ່ຈະມີການສູນເສຍແຕ່ມັນກໍ່ເປັນທາງເລືອກ

ການເປັນ LDC ແມ່ນໄດ້ຮັບຜົນປະໂຫຍດແນ່ນອນ ກ່ຽວກັບເລື່ອງການເຂົ້າເຖິງຕະຫຼາດ, ການອໍານວຍຄວາມສະດວກດ້ານການຄ້າ, ການຖ່າຍໂອນເຕັກໂນໂລຢີ ແລະການຊ່ວຍເຫຼືອເພື່ອການພັດທະນາ (ເບິ່ງໃນກ່ອງທີ 2.3). ໃນເມື່ອປະເທດຫາກຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວບວກກັບຄວາມກ້າວໜ້າຂອງຕົວຊີ້ບອກຕ່າງໆສົມມຸດວ່າເຂົາເຈົ້າມີຄວາມອີງອາດກ້າຫານພໍທີ່ຈະບໍ່ອີງໃສ່ການຊ່ວຍເຫຼືອຈາກພາຍນອກສໍາລັບການສະໜອງການບໍລິການຂັ້ນພື້ນຖານຕ່າງໆທີ່ມີຄຸນນະພາບເປັນທີ່ຍອມຮັບໄດ້ຢ່າງມີເຫດຜົນໃຫ້ແກ່ປະຊາຊົນ. ເຂົາເຈົ້າຍັງສືບຕໍ່ຄາດຫວັງເພື່ອເຂົ້າສູ່ຮູບແບບຕ່າງໆນາໆ (ແລະສູງກວ່າ) ກ່ຽວກັບການເປັນຄູ່ຮ່ວມກັບບັນດາປະເທດອື່ນໆທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດໃນວົງການຖ້າ, ການຖ່າຍໂອນທຶນ/ເຕັກໂນໂລຢີ, ການແລກປ່ຽນການສຶກສາ ແລະວັດທະນະທໍາ, ແລະອື່ນໆທີ່ຄ້າຍຄືກັນນີ້. ຜ່ານຂະບວນການຂອງການຫຼູ່ຫຼອມໃນການເປັນຄູ່ຮ່ວມໃໝ່ທີ່ກ້າວໜ້າຢ່າງໄວວາ, ບັນດາປະເທດຕ່າງໆຍັງຈະຕ້ອງຮັບພາລະຢູ່ໃນສະຖານະພາບການເຈລະຈາທີ່ກວ້າງອອກ ຢູ່ໃນຂົງເຂດ ແລະສາກົນເຊັ່ນ: ອາຊຽນ, ທະນາຄານພັດທະນາອາຊີ/ທະນາຄານໂລກ, ອົງການການຄ້າໂລກ ແລະອົງການສະຫະປະຊາຊາດ. ສປປ ລາວ ຮຽກຮ້ອງໃຫ້ມີການເຮັດການປະເມີນ ກ່ຽວກັບວ່າຮູບແບບຂອງການເປັນຄູ່ຮ່ວມ ໃໝ່ຄືແນວໃດທີ່ມັນຈະເຂົ້າຮ່ວມ ແລະຮ່ວມກັບໃຜ, ແລະຄວາມຮຽກຮ້ອງຕ້ອງການ / ພັນທະຂັ້ນຕໍ່າສຸດຢູ່ໃນປະເທດ ສໍາລັບສິ່ງເຫຼົ່ານີ້ແມ່ນມີຫຍັງແດ່.[39] ລັດຖະບານຂອງປະເທດໃດໜຶ່ງທີ່ກໍາລັງຈະຫລຸດພົ້ນອອກຈາກ LDC ແມ່ນປາຖະໜາທີ່ຈະສືບຕໍ່ເຮັດວຽກ ເພື່ອກ້າວໄປສູ່ການຮັກສາ ແລະປັບປຸງທັງໝົດບັນດາຕົວຊີ້ບອກມາດຖານຂອງການພັດທະນາ ແລະການພັດທະນາມະນຸດ (HD).

ເພື່ອປະເມີນເບິ່ງຄວາມເປັນໄປໄດ້ຂອງການສູນເສຍ ແລະຜົນໄດ້ຮັບຕ່າງໆ ຂອງ ສປປ ລາວ ຈາກການຫລຸດພົ້ນອອກຈາກ LDC, ໃນສ່ວນນີ້ແມ່ນໄດ້ເຮັດການວິໄຈ ກ່ຽວກັບການເຮັດວຽກກັບຫຼາຍໆກຸ່ມເສດຖະກິດ, ອົງການຈັດຕັ້ງສາກົນ, ໂຄງສ້າງທາງການຄ້າ ແລະການອີງໃສ່ການຊ່ວຍເຫຼືອໃນປັດຈຸບັນນີ້ ຂອງ ສປປ ລາວ.

**ກ່ອງທີ 2.3: ຜົນປະໂຫຍດຕ່າງໆຈາກການເປັນ LDC**

ມີການຜ່ອນຜັນຫຼາຍຢ່າງທີ່ OECD ແລະປະເທດຄູ່ຮ່ວມພັດທະນາອື່ນໆ ໄດ້ໃຫ້ແກ່ບັນດາ LDC. ເວົ້າແບບສັ້ນໆ ແລະງ່າຍໆ, ບັນຊີການຜ່ອນຜັນຕ່າງໆທີ່ເຂົາເຈົ້າສະເໜີໃຫ້ ຫຼື ສປປ ລາວ ສາມາດນໍາເອົາມາໃຊ້ໄດ້ແມ່ນມີດັ່ງຂ້າງລຸ່ມນີ້:

- ການຜ່ອນຜັນດ້ານການຄ້າ ທີ່ໃຫ້ໂດຍອົງການຈັດຕັ້ງກ່ຽວກັບການຮ່ວມມືທາງເສດຖະກິດ ແລະການພັດທະນາ (OECD) ແລະປະເທດອື່ນໆ.
- ການເຂົ້າເຖິງຕະຫຼາດຂອງປະເທດອື່ນໆ.
- ການຊ່ວຍເຫຼືອຂອງສາກົນເພື່ອການພັດທະນາ (ເງິນກູ້ດອກເບ້ຍຕໍ່າ ແລະການຊ່ວຍເຫຼືອລ້າ).
- ການຊ່ວຍເຫຼືອສິ່ງເຄາະດ້ານໜີ້ສິນ (ການຍົກເລີກ ຫຼືແກ່ຍາວໄລຍະເວລາຂອງການຊໍາລະໜີ້).
- ສິ່ງອໍານວຍຄວາມສະດວກສະເພາະພາຍໃຕ້ອົງການງຄ້າໂລກ (WTO).
- ຜົນປະໂຫຍດຕ່າງໆພາຍໃຕ້ອົງການສະຫະປະຊາຊາດ [ຜ່ານຄະນະກໍາມະການເສດຖະກິດ ແລະສັງຄົມ (ECOSOC) ຂອງອົງການສະຫະປະຊາຊາດ (UN)].
- ການຊ່ວຍເຫຼືອເພື່ອການຍົກລະດັບຄວາມສາມາດຂອງມະນຸດ.

ສິ່ງຕ່າງໆເຫຼົ່ານີ້ແມ່ນສາມາດຈັດເປັນ 2 ກຸ່ມ ຄື: ການຄ້າ (ແລະການສິ່ງເຄາະດ້ານໜີ້ສິນ) ແລະ ການຜ່ອນຜັນດ້ານການໄຫຼເຂົ້າ/ການຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ (ລວມທັງການສ້າງຂີດຄວາມສາມາດ).

## ການຄ້າ ແລະການສືງເຄາະດ້ານໜີ້ສິນ:

**ການຜ່ອນຜັນດ້ານການຄ້າພາຍໃຕ້ WTO:**

ມີຢູ່ສອງໂຄງການທົ່ວໄປ ກ່ຽວກັບການຜ່ອນຜັນທາງການຄ້າໃຫ້ແກ່ບັນດາປະເທດກຳລັງພັດນາຢູ່ໃນໂລກທີ່ກຳລັງດຳເນີນການຢູ່ໃນປັດຈຸບັນນີ້ ຄື: ອັນທີໜຶ່ງ, ລະບົບການຜ່ອນຜັນທົ່ວໄປ (GSP) ຊຶ່ງອະນຸຍາດໃຫ້ບັນດາ LDC ສົ່ງສິນຄ້າເຂົ້າສູ່ສະຫະພາບເອີຣົບ (EU), ສະຫະລັດອາເມລິກາ ແລະບັນດາປະເທດ OECD ຕ່າງໆ ໂດຍປັດສະຈາກການຕອບແທນໃດໆ, ຕົວຢ່າງ: ບໍ່ມີຂໍ້ຜູກມັດທີ່ກ່ຽວພັນກັບການນຳເຂົ້າຈາກປະເທດນັ້ນໆ; ແລະ ອັນທີສອງ, ລະບົບການຜ່ອນຜັນການຄ້າຂອງໂລກ (GSTP) ໃນລະຫວ່າງບັນດາປະເທດກຳລັງພັດທະນາ, ໂຄງການຕອບແທນຊຶ່ງກັນແລະກັນ ຊຶ່ງມີແຕ່ລະປະເທດທີ່ໄດ້ລົງນາມໃນສັນຍາເທົ່ານັ້ນ ຈຶ່ງຈະສາມາດນຳເອົາມາໃຊ້ໄດ້.[40] ນອກນັ້ນ, ບັນດາຂໍ້ຕົກລົງຕ່າງໆຂອງ WTO ຍັງສະເໜີໃຫ້ມີການປະຕິບັດແບບສະເພາະ ແລະແຕກຕ່າງກັນ (S&D) ໃຫ້ແກ່ບັນດາ LDC. ຢ່າງໜ້ອຍກໍ່ມີຢູ່ 5 ປະເພດຂອງການຜ່ອນຜັນ ທີ່ສາມາດໄດ້ຮັບຜົນປະໂຫຍດຄື:

I. ເພີ່ມການເຂົ້າເຖິງຕະຫຼາດ;

II. ເພີ່ມການປັບຕົວງ່າຍຢູ່ໃນກົດຄຸ້ມຄອງມາດຕະການທາງການຄ້າຕ່າງໆ;

III. ມີຊ່ວງໄລຍະເວລາຍາວກວ່າ ສຳລັບການຈັດຕັ້ງປະຕິບັດຂໍ້ຕົກລົງ ແລະພັນທະສັນຍາຕ່າງໆ;

IV. ມີບັນດາມາດຕະການ ເພື່ອເພີ່ມກາລະໂອກາດຕ່າງໆທາງການຄ້າໃຫ້ບັນດາປະເທດກຳລັງພັດທະນາ;

V. ມີການສະໜັບສະໜູນ ເພື່ອຊ່ວຍເຫຼືອບັນດາປະເທດກຳລັງພັດທະນາ ໃນການສ້າງຂີດຄວາມສາມາດສຳລັບການດຳເນີນວຽກງານຂອງ WTO, ການຄວບຄຸມ ແລະແກ້ໄຂຂໍ້ຂັດແຍ່ງຕ່າງໆ, ແລະການຈັດຕັ້ງປະຕິບັດມາດຕະຖານທາງດ້ານເຕັກນິກຕ່າງໆ.

ສປປ ລາວ ໄດ້ເປັນສະມາຊິກສົມບູນຂອງ WTO ມາຕັ້ງແຕ່ ວັນທີ 2 ກຸມພາ 2013 ຊຶ່ງມັນຄວນຈະ (ເປັນໄປໄດ້) ໄດ້ຮັບຜົນປະໂຫຍດບາງຢ່າງ ຫຼືທັງໝົດພາຍໃຕ້ S&D, ແມ່ນແຕ່ຫຼັງຈາກມັນຫລຸດພົ້ນອອກຈາກ LDC ແລ້ວກໍ່ຕາມ. ສປປ ລາວ ແມ່ນຍັງບໍ່ທັນໄດ້ເຂົ້າຮ່ວມຢູ່ໃນ GSTP ເທື່ອ; ດັ່ງນັ້ນສະພາບການເປັນ LDC ຂອງມັນແມ່ນບໍ່ມີບັນຫາກ່ຽວກັບເລື່ອງນີ້; ແຕ່ວ່າການສົ່ງອອກຂອງ ສປປ ລາວ ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນ EU ຕົ້ນຕໍແມ່ນພາຍໃຕ້ GSP ທີ່ມີພາສີຕໍ່າສຸດ ຫຼືບໍ່ມີພາສີ ຫຼືໂກຕາ.[41] ດັ່ງນັ້ນ, ການຫລຸດພົ້ນອອກຈາກ LDC ແມ່ນມີຄວາມສາມາດເປັນໄປໄດ້ທີ່ຈະກະທົບຕໍ່ການສົ່ງອອກຂອງ ສປປ ລາວ ໄປສູ່ຕະຫຼາດ EU; ເຖິງຢ່າງໃດກໍ່ຕາມ, ອັນນີ້ຄືຈະບໍ່ເປັນໄປໄດ້ສູງປານໃດ ເນື່ອງຈາກສ່ວນປະກອບ ແລະທິດທາງການສົ່ງອອກຂອງ ສປປ ລາວ ໃນປັດຈຸບັນນີ້ແມ່ນບໍ່ເປັນຄືແນວນັ້ນ (ຖືກຄອບງຳໂດຍຂະແໜງຊັບພະຍາກອນ ແລະສາມປະເທດທີ່ບໍ່ຢູ່ໃນ EU).

**ການຄ້າຂອງ ສປປ ລາວ:**[42]

ການຄ້າ ຂອງ ສປປ ລາວ ຕົ້ນຕໍແມ່ນເຮັດກັບໄທ, ຈີນ ແລະຫວຽດນາມ ໂດຍທີ່ອຳນາດຊັກຈູງດ້ານການຄ້າ ແລະເສດຖະກິດໂດຍລວມຂອງຈີນຢູ່ໃນລາວແມ່ນກຳລັງເພີ່ມຂຶ້ນ (ຮູບທີ 2.5a) ຊຶ່ງການສົ່ງອອກໄປສູ່ສາມປະເທດນີ້ ແມ່ນບໍ່ໄດ້ຂຶ້ນກັບການຜ່ອນຜັນໃດໆທີ່ບັນດາ LDC ໄດ້ຮັບ.

ຮູບທີ 2.5b ສະແດງໃຫ້ເຫັນເຖິງສ່ວນປະກອບການສົ່ງອອກ ຂອງ ສປປ ລາວ ທີ່ມີການປ່ຽນແປງຂຶ້ນລົງໃນໄລຍະຊຸມປີຜ່ານມານີ້. ທີ່ສຳຄັນຂອງການສົ່ງອອກນີ້ແມ່ນຍັງເປັນຜະລິດຕະພັນຂັ້ນຕົ້ນ ຫຼັງຈາກທີ່ໄດ້ຫລຸດລົງຈາກ 80% ໃນ 1990 ມາເປັນປະມານ 40% ໃນປີ 2015, ແຕ່ການປະກອບສ່ວນຂອງມັນພັດຄືບຄານກັບຫຼັງໄປສູ່ລະດັບໃນປີ 2010 ຜ່ານມາ. ສິ່ງສຳຄັນທີ່ຈະຕ້ອງໄດ້ພິຈາລະນານັ້ນ ແມ່ນການຫລຸດລົງໃນສ່ວນປະກອບຂອງອຸດສາຫະກຳການຜະລິດ, ລວມທັງອຸດສາຫະກຳການຜະລິດເຄື່ອງນຸ່ງຫົ່ມ ແລະເກີບ ທີ່ເຂັ້ມງານດ້ວຍ. ນີ້ໝາຍຄວາມວ່າ ຈາກມູມມອງໃນສ່ວນປະກອບຂອງການສົ່ງອອກນັ້ນ, ການຫລຸດພົ້ນອອກຈາກສະຖານະພາບ LDC ຂອງ ສປປ ລາວ ແມ່ນຄືຈະເປັນໄປບໍ່ໄດ້ທີ່ຈະມີຜົນກະທົບໃນທາງລົບ ເກີນກວ່າສະພາບປົກກະຕິຂອງເສດຖະກິດ

ໃນຂົງເຂດ ແລະຂອງໂລກ.

ຜົນຕາມມາທີ່ເປັນໄປໄດ້ຈາກການຫລຸດພົ້ນອອກຈາກ LDC ຕໍ່ກັບບັນດາລາຍການສິ່ງອອກຂອງ ສປປ ລາວ ທີ່ໄດ້ເລືອກໄວ້ຈຳນວນໜຶ່ງ ແມ່ນໄດ້ມີການສົນທະນາໃນບາງລາຍລະອຽດຢູ່ຂ້າງລຸ່ມນີ້.

**ຮູບທີ 2.5a: ທິດທາງການສົ່ງອອກ ຂອງ ສປປ ລາວ**




ແຫຼ່ງຂໍ້ມູນ:http://www.trademap.org

**ຮູບທີ 2.5b: ສ່ວນປະກອບໃນການສົ່ງອອກ ຂອງ ສປປ ລາວ**




ແຫຼ່ງຂໍ້ມູນ:http://www.trademap.org

## ເຄື່ອງຕັດຫຍິບ

ການສົ່ງອອກເຄື່ອງຕັດຫຍິບລວມກັນທັງໝົດ ແມ່ນປະກອບສ່ວນປະມານ 40% ຂອງລາຍໄດ້ຈາກການສົ່ງອອກທັງໝົດໃນສະຕະວັດຜ່ານມາ, ທີ່ພາໃຫ້ເຮັດໄດ້ຄືແນວນີ້ກໍ່ແມ່ນຍ້ອນຂໍ້ຕົກລົງສາຍໃຍຫຼາຍຢ່າງ (MFA ທີ່ໝົດອາຍຸລົງ ໃນປີ 2005) ແລະ ຂໍ້ຕົກລົງ GSP ທີ່ອະນຸຍາດໃຫ້ມີການປອດພາສີ (ແລະປອດໂກຕາ) ສຳລັບການສົ່ງອອກເຄື່ອງຕັດຫຍິບໄປຍັງເອີຣົບ/EU. ດ້ວຍການເພີ່ມຂຶ້ນຂອງຜະລິດຕະພັນບໍ່ແຮ່ ແລະໄຟຟ້າ, ແລະກິດຈະກຳທາງເສດຖະກິດອື່ນໆທີ່ຄ້າຍຄືກັນນີ້ຢູ່ໃນປະເທດ, ຈຶ່ງເຮັດໃຫ້ຜະລິດຕະພັນນີ້ສູນເສຍຄວາມສຳຄັນໄປ ແລະສ່ວນປະກອບຂອງມັນຢູ່ໃນການສົ່ງອອກໃນປັດຈຸບັນນີ້ ແມ່ນຍັງເຫຼືອບໍ່ເກີນ 7-8% ຂອງມູນຄ່າການສົ່ງອອກທັງໝົດຂອງ ສປປ ລາວ. ເຖິງແນວໃດກໍ່ຕາມ, ໃນເລື່ອງທີ່ສຳຄັນຕ່າງໆນັ້ນ ແມ່ນເຫັນໄດ້ຈາກ ຮູບທີ 2.6 ຊຶ່ງມູນຄ່າການສົ່ງອອກແມ່ນເພີ່ມຂຶ້ນ. ໃນປີ 2014, ການສົ່ງອອກຜະລິດຕະພັນຕັດຫຍິບແມ່ນມີມູນຄ່າປະມານ 270 ລ້ານໂດລາສະຫະລັດ ແລະແນວໂນ້ມການເຕີບໂຕຂອງມັນແມ່ນປະມານ 6% ສຳລັບປີ 2001 ຫາ 2014.

ການອຳນວຍຄວາມສະດວກດ້ານການຄ້າຜ່ານ WTO ແລະສົນທິສັນຍາຫຼາຍຝ່າຍ ແມ່ນເງື່ອນໄຂເບື້ອງຕົ້ນເທົ່ານັ້ນ, ແຕ່ການເຕີບໂຕຂອງການສົ່ງອອກແມ່ນຖືກຂັບເຄື່ອນດ້ວຍຄວາມຕ້ອງການ. ຖ້າຫາກມີການຍົກເລີກພາສີເປັນສູນ ຫຼືໃກ້ກັບສູນ (ຫຼືຍົກເລີກໂກຕາ) ແລ້ວລາຍຮັບຈາກການສົ່ງອອກຈະມີບັນຫາຫຼືບໍ່? ເວົ້າອີກແນວໜຶ່ງ, ແມ່ນຫຍັງຈະເກີດຂຶ້ນກັບອຸດສາຫະກຳຕັດຫຍິບ ຫຼັງຈາກທີ່ມີການຍົກເລີກຂໍ້ຜ່ອນຜັນຕ່າງໆທີ່ມີຢູ່ໃນປັດຈຸບັນ?

**ຮູບທີ 2.6: ການສົ່ງອອກເຄື່ອງຕັດຫຍິບຈາກ ສປປ ລາວ, 2001-2014 (ພັນໂດລາສະຫະລັດ)**




ແຫຼ່ງຂໍ້ມູນ: http://www.trademap.org

ສາມຈຸດທີ່ສາມາດນຳໄປສູ່ຄຳຕອບກ່ຽວກັບເລື່ອງນີ້ ມີຄື:

1. ສາມາດເວົ້າແບບງ່າຍໆວ່າ ບັນດາໂຮງງານຕັດຫຍິບ ຂອງ ສປປ ລາວ ຈະເລີ່ມປິດຕົວລົງ ຍ້ອນປະເຊີນໜ້າກັບການເກັບພາສີ (ຫຼືໂກຕາ) ຂອງບັນດາປະເທດທີ່ນຳເຂົ້າ. ມີຫຼາຍໂຮງງານ (ຕັດຫຍິບ) ແມ່ນກຳລັງຈະ "ອອກຈາກປະເທດ" ແລະອີກແງ່ມູມໜຶ່ງແມ່ນຈະ "ຈັດຈ້າງແຮງງານຕ່າງປະເທດ" ທີ່ໄຫຼອອກຈາກປະເທດຈີນ ແລະໄທ ທີ່ນອກເໜືອໄປຈາກ ກຳປູເຈຍ-ລາວ-ພະມ້າ-ຫວຽດນາມ (CLMV) ເວົ້າແບບສັ້ນໆແມ່ນແລວແມ່ນ້ຳຂອງ. ໃນເມື່ອຂະບວນການນີ້ແຮງຂຶ້ນ, ມັນມີທາງເປັນໄປໄດ້ທີ່ຫຼາຍໂຮງງານຈະກາຍເປັນຜູ້ຊຳນານພິເສດຫຼາຍຂຶ້ນຢູ່ໃນບັນດາກິດຈະກຳຂອງວ່າງຕ່າງໆ ແລະມີຄວາມແຂງແຮງຂຶ້ນແທນທີ່ຈະປິດຕົວລົງ, ແລະສ່ວນຜູ້ທີ່ບໍ່ສາມາດປັບໂຄງສ້າງຄືນໃໝ່ໄດ້ນັ້ນກໍ່ອາດຈະອອກຈາກທຸລະກິດໄປ. ເວົ້າແບບງ່າຍໆ, ບັນດາໂຮງງານທີ່ຢູ່ໂດດດ່ຽວດ້ວຍການຜະລິດເຄື່ອງຕັດຫຍິບທີ່ນຳໃຊ້ເຕັກໂນໂລຢີຕ່ຳ

ເຂົ້າໃນຂັ້ນຕອນການຕັດ-ຫຍິບ-ສອຍແບບສຳເລັດຮູບ (CMT) ແລະຂາຍຜ່ານເສັ້ນທາງຂອງ GSP ນັ້ນ ແມ່ນຈະບໍ່ສາມາດຄົງຕົວຢູ່ໄດ້ໃນລະບອບຕະຫຼາດເປີດ, ໃນຂະນະທີ່ຜູ້ມີການປັບປຸງໂຄງສ້າງຄືນໃໝ່ນັ້ນແມ່ນຈະເຕີບໂຕງອກງາມຂຶ້ນ.[43] ດັ່ງນັ້ນ, ການປັບປຸງໂຄງສ້າງຄືນໃໝ່ແມ່ນສິ່ງສຳຄັນຕໍ່ກັບການຢູ່ລອດຄວາມຈິງແລ້ວ, ສປປ ລາວ ແມ່ນບໍ່ສາມາດຢືນຢູ່ດ້ວຍອຸດສາຫະກຳການຜະລິດທີ່ເຂັ້ມງານທີ່ມີຄຸນນະພາບຕ່ຳເປັນເວລານານໄດ້ ເນື່ອງຈາກມັນມີກຳລັງແຮງງານໜ້ອຍ ແລະສືບຕໍ່ຖືກກົດຈາກອັດຕາການແລກປ່ຽນ ຍ້ອນການຂະຫຍາຍຕົວແຮງຂອງຂະແໜງຊັບພະຍາກອນ. ເພາະສະນັ້ນ, ສປປ ລາວ ຈະຕ້ອງໄດ້ເຕັ້ນຂ້າມໄປສູ່ບັນດາລາຍການຊ່ອງວ່າງຕ່າງໆທີ່ມີມູນຄ່າເພີ່ມສູງ ຢ່າງບໍ່ຄຳນຶງວ່າຈະມີຫຍັງເກີດຂຶ້ນຕໍ່ກັບສະຖານະພາບການເປັນ LDC , ຄືດັ່ງທີ່ປະເທດ ບັງກະລາເດດ ກຳລັງເຮັດຢູ່ໃນປັດຈຸບັນນີ້ (ເບິ່ງໃນກ່ອງທີ 2.4) ແລະ ປະເທດ ສິງກະໂປ ກໍ່ໄດ້ເຮັດມາແລ້ວໃນທ້າຍຊຸມປີ 1970 - ກາງຊຸມປີ 1980.

2. ມັນຍັງມີໂອກາດຢູ່ 5-6 ປີ ກ່ອນທີ່ອຸດສາຫະກຳນີ້ຈະຖືກປ່ອຍໃຫ້ເຂົ້າສູ່ຕະຫຼາດເປີດຢ່າງສົມບູນ. ຢູ່ໃນລະຫວ່າງຊ່ວງໄລຍະເວລານີ້, ບັນດາເຈົ້າຂອງໂຮງງານຕັດຫຍິບຈະໄດ້ຮັບຄຳແນະນຳທີ່ດີທີ່ສຸດ ເພື່ອຍົກລະດັບເຕັກໂນໂລຢີຂອງເຂົາເຈົ້າ ແລະລົງທຶນເຂົ້າໃນການພັດທະນາສີມື (ການຝຶກອົບຮົມໃນໜ້າວຽກ) ເພື່ອເພີ່ມຜະລິດຕະພາບຂອງການຜະລິດ, ປັບປຸງຄຸນນະພາບຂອງຜະລິດຕະພັນ ແລະຫລຸດຜ່ອນ (ຫຼືໜ່ອຍ) ຕົ້ນທຶນ ຊຶ່ງສອດຄ່ອງກັບເຫດຜົນກ່ຽວກັບການປັບປຸງໂຄງສ້າງຄືນໃໝ່.[44]

3. ການໃຫ້ GSP ແກ່ປະເທດໃດໜຶ່ງ ແມ່ນຂຶ້ນຢູ່ກັບບັນດາປະເທດຕ່າງໆທີ່ໄດ້ຮັບການຊ່ວຍເຫຼືອຫຼາຍກວ່າທີ່ວ່າເຂົາເຈົ້າເປັນ LDC. ຕົວຢ່າງ: EU ໄດ້ຂະຫຍາຍໄລຍະເວລາການໃຫ້ GSP ແກ່ປະເທດ ປາກີສະຖານ ໃນສິ່ງທີ່ມັນມີທ່າແຮງໄດ້ປຽບທັງໝົດ ໃນປີ 2004, ເຖິງວ່າ ປາກີສະຖານ ບໍ່ແມ່ນ LDC ແລ້ວກໍ່ຕາມ.[45] ສປປ ລາວ ກໍ່ຍັງມີບ່ອນວ່າງຢູ່ ສຳລັບການເຈລະຈາສະຖານະພາບຂອງຕົນເອງຢູ່ໃນລະບົບ GST ເພື່ອຂະຫຍາຍໄລຍະເວລາຕື່ມອີກ ພາຍຫຼັງທີ່ໄດ້ຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ.

**ກ່ອງທີ 2.4 : ການຍົກລະດັບຂະແໜງການເຄື່ອງນຸ່ງຫົ່ມ ແລະ ການສ້າງການເຊື່ອມຕໍ່ພາຍໃນ ບົດຮຽນຈາກປະເທດ ບັງກະລາເດັດ**

ບັງກະລາເດັດ ມັກຈະຖືກນຳມາກ່າວອ້າງເປັນຕົວຢ່າງກ່ຽວກັບປະເທດທີ່ປະສົບຜົນສຳເລັດໃນການເຄື່ອນຍ້າຍອອກຈາກ CMT ໄປສູ່ FOB. ບັງກະລາເດັດ ເປັນໜຶ່ງໃນອຸດສາຫະກຳສົ່ງອອກເຄື່ອງນຸ່ງຫົ່ມທີ່ໃຫຍ່ທີ່ສຸດໃນເລື່ອງຂອງມູນຄ່າ (22,8 ຕື້ໂດລາສະຫະລັດ) ແລະສ່ວນແບ່ງຂອງຕະຫຼາດໂລກ. ອຸດສາຫະກຳເຄື່ອງນຸ່ງຫົ່ມແມ່ນຍັງມີຄວາມສຳຄັນຫຼາຍຕໍ່ກັບເສດຖະກິດຂອງມັນ ຊຶ່ງກວມເອົາປະມານ 83% ຂອງການສົ່ງອອກສິນຄ້າທັງໝົດຂອງມັນ ແລະມີການຈ້າງງານເຖິງ 4 ລ້ານຄົນ ໃນປີ 2012. ໃນປັດຈຸບັນ, ອຸດສາຫະກຳນີ້ແມ່ນຖືກຄອບງຳ ແລະເປັນເຈົ້າຂອງໂດຍວິສາຫະກິດພາຍໃນ ຊຶ່ງກວມເອົາຫຼາຍກວ່າ 90% ຂອງວິສາຫະກິດຢູ່ໃນປະເທດ ບັງກະລາເດັດ. ສ່ວນຫຼາຍຂອງບັນດາວິສາຫະກິດນີ້ ແມ່ນເຮັດບັນດາກິດຈະກຳ FOB, ສ້າງງານໃຫ້ແກ່ຄົນຊັ້ນລ່າງ ແລະສະໜັບສະໜູນບັນດາ SME; ແຕ່ອັນນີ້ກໍ່ບໍ່ແມ່ນທຸກໆກໍລະນີ. ບັນດານະໂຍບາຍຂອງລັດຖະບານໄດ້ເຮັດບົດບາດເປັນໃຈກາງໃນການລິເລີ່ມອຸດສາຫະກຳນີ້ ດ້ວຍການເຊື່ອຕໍ່ກັບຜູ້ຊື້ຢູ່ຕ່າງປະເທດ, ເຕັກໂນໂລຢີ ແລະການຖ່າຍໂອນຄວາມຮູ້.

ການເຄື່ອນຍ້າຍອອກຈາກ CMT ໄປສູ່ FOB ສຳລັບຜູ້ສົ່ງອອກທີ່ເປັນຕົ້ນແບບ ແມ່ນຮຽກຮ້ອງໃຫ້ບໍລິສັດ: (1) ມີການເຂົ້າເຖິງຜູ້ຊື້ຢູ່ຕ່າງປະເທດໂດຍກົງ, ແລະ (2) ເຂົ້າເຖິງການເງິນເພື່ອຊື້ວັດຖຸດິບສິ່ງທໍຕ່າງໆ. ຈາກທັດສະນະມູມມອງຂອງປະເທດ, ສະຖານທີ່ຕັ້ງຂອງບໍລິສັດແມ່ນມີຄວາມຈຳເປັນຕ້ອງແມ່ນສະຖານທີ່ຕັ້ງຂອງສຳນັກງານໃຫຍ່ ຫຼືສະຖານທີ່ຕັ້ງກ່ຽວຂອງບໍລິສັດພາຍໃນ. ການເຂົ້າເຖິງຜູ້ຊື້ໂດຍກົງແມ່ນສາມາດເກີດຂຶ້ນຜ່ານຄວາມສຳພັນເບື້ອງຕົ້ນ ໂດຍຜ່ານຕົວແທນ ຫຼືການເຂົ້າຮ່ວມໃນເຫດການຕ່າງໆເຊັ່ນ: ງານສະແດງສິນຄ້າ. ການເຂົ້າເຖິງວັດຖຸດິບສິ່ງທໍ ກໍ່ສາມາດໄດ້ຮັບການອຳນວຍຄວາມສະດວກຜ່ານ EPZs ໂດຍມີການຍົກເວັ້ນພາສີນຳເຂົ້າສຳລັບຜະລິດຕະພັນທີ່ຈະສົ່ງອອກ. ເຖິງຢ່າງໃດກໍ່ຕາມ, ອັນນີ້ແມ່ນເປັນການຈຳກັດການເຊື່ອມໂຍງກັບຫຼັງ ເພື່ອສ້າງອຸດສາຫະກຳສິ່ງທໍ ເນື່ອງຈາກວັດຖຸດິບສ່ວນຫຼາຍແມ່ນນຳເຂົ້າຈາກຕ່າງປະເທດ.

ແຫຼ່ງຂໍ້ມູນ: Varela, Hollweg and Gomez-Mera (2016)

**<u>ກາເຟ</u>:**

ລວມຍອດການສົ່ງອອກກາເຟທັງໝົດ (ບອກັບຊາ ແລະເຄື່ອງເທດ) ຜະລິດຕະພັນຊ່ອງວ່າງ ຢູ່ໃນ ສປປ ລາວ (ປະມານ 80% ແມ່ນກາເຟສາຍພັນໂຣບາສະຕາ ແລະສ່ວນທີ່ເຫຼືອແມ່ນສາຍພັນອາຣາບິກາ) ມີມູນຄ່າປະມານ 68 ລ້ານໂດລາສະຫະລັດ ຊຶ່ງເທົ່າກັບປະມານ 1,8% ຂອງລວມຍອດການສົ່ງອອກທັງໝົດຂອງປະເທດ ໃນປີ 2014 (ຮູບທີ 2.7).[46] ຜະລິດຕະພັນນີ້ໄດ້ສະແດງໃຫ້ເຫັນເຖິງຄວາມບໍ່ແນ່ນອນ ຫຼື ການເໜັງຕີງແຮງຢູ່ໃນລາຍໄດ້ຂອງການສົ່ງອອກ: ມັນຂຶ້ນສູງສຸດ ໃນປີ 2011 ແລະຫຼັງຈາກນັ້ນກໍ່ໄດ້ຫລຸດລົງ, ແລະການເໜັງຕີງຂອງລາຄາກໍ່ແມ່ນສາເຫດທີ່ສຳຄັນສຳລັບເລື່ອງນີ້.[47] ຄວາມຕ້ອງການກາເຟຂອງໂລກແມ່ນມາຈາກປະເທດທີ່ຮັ່ງມີ, ໃນຂະນະທີ່ມັນພັດຖືກຜະລິດຢູ່ໃນອາເມລິກາມໃຕ້/ກາງ, ອາຊີ ແລະອາຟຼິກາ. ເຖິງຢ່າງໃດກໍ່ຕາມ, ລາຍໄດ້ຈາກການສົ່ງອອກກາເຟຂອງ ສປປ ລາວ ແມ່ນຫລຸດລົງໃນຊຸມປີໃກ້ໆຜ່ານມານີ້ ຊຶ່ງສ່ວນໜຶ່ງແມ່ນເປັນຍ້ອນການແຂ່ງຂັນທີ່ເຂັ້ມຂຸ້ນ ແລະອີກສ່ວນໜຶ່ງແມ່ນເປັນຍ້ອນອັດຕາຜົນຜະລິດຕຶກຕ່ຳ (ສົມທຽບກັບອັດຕາຜົນຜະລິດຂອງຟາຣົມຢູ່ປະເທດໄທ ແລະຫວຽດນາມ).

**ຮູບທີ 2.7: ແນວໂນ້ມຂອງຂອງການສົ່ງອອກກາເຟ (ແລະ ເຄື່ອງເທດ) (ພັນໂດລາສະຫະລັດ)**




ແຫຼ່ງຂໍ້ມູນ: http://www.trademap.org

ການທີ່ເວົ້າວ່າກາເຟລາວ ຈະບໍ່ປະສົບພົບພໍ້ກັບຕະຫຼາດທີ່ມີການເກັບພາສີໂດຍປະເທດທີ່ນຳເຂົ້ານັ້ນ ແມ່ນບໍ່ເປັນຄວາມຈິງ. ດັ່ງທີ່ ທ່ານ Paul Christopher, ຫົວໜ້ານັກຍຸດທະສາດສາກົນ ຢູ່ທີ່ Wells Fargo Advisors ໄດ້ເວົ້າຕໍ່ Bloomberg ໃນປີ 2012 ວ່າ "ກ່ຽວກັບຄວາມຕ້ອງການກາເຟ ແມ່ນຄວາມຢືດຫົດດ້ານລາຄາຕ່ຳຫຼາຍ".[48] ແຕ່ອັນນີ້ບໍ່ແມ່ນສຳລັບຜູ້ຂາຍຍ່ອຍ; ປະເທດທີ່ນຳເຂົ້າ (ຢ່າງໜ້ອຍກໍ່ຢູ່ໃນອາຊີ) ຈະຕ້ອງຂາຍໃຫ້ແກ່ຜູ້ຄ້າສາກົນ ຫຼືພໍ່ຄ້າລາຍໃຫຍ່ທີ່ໄດ້ຮັບຜະລິດຕະພັນມາຈາກຫຼາຍແຫຼ່ງ ແລະເຂົາເຈົ້າຈະປ່ຽນແປງການລົງທຶນຂອງເຂົາເຈົ້າຢູ່ເລື້ອຍໆ ເພື່ອໃຫ້ໄດ້ກຳໄລສູງສຸດ ຊຶ່ງການຊັບປ່ຽນນັ້ນຈະເປັນຜົນກະທົບຕໍ່ປະເທດທີ່ສົ່ງອອກ ແລະຜູ້ສະໜອງຂະໜາດນ້ອຍກວ່າ. ທາງເລືອກໜຶ່ງສຳລັບ ສປປ ລາວ ແມ່ນຈະຕ້ອງໄດ້ເຂົ້າຮ່ວມກັບກຸ່ມຕະຫຼາດສາກົນເພື່ອຮັກສາສ່ວນແບ່ງຢູ່ໃນຕະຫຼາດສາກົນ. ເຖິງຢ່າງໃດກໍ່ຕາມ, ທາງເລືອກທີ່ດີທີ່ສຸດນັ້ນ ແມ່ນການປ່ຽນແປງຕະຫຼາດ ແລະຜະລິດກາເຟທີ່ມີຄຸນນະພາບສູງພິເສດ (ເບິ່ງໃນກ່ອງທີ 2.5).

**ກ່ອງ 2.5: ການເຕັ້ນຂ້າມໄປສູ່ກາເຟພິເສດ ຂອງ ຣ໌ວັນດາ: ບົດຮຽນສໍາລັບ ສປປ ລາວ**

ຣ໌ວັນດາ ເປັນປະເທດ LDC ທີ່ບໍ່ມີທາງອອກສູ່ທະເລຄືກັນກັບ ສປປ ລາວ ແລະ ກໍ່ມີຫຼາຍຢ່າງທີ່ຄ້າຍຄືກັບ ສປປ ລາວ ເຊັ່ນ: ຄວາມຮັ່ງມີທາງດ້ານຊັບພະຍາກອນທໍາມະຊາດ, ມີຊົນເຜົ່າທີ່ຫຼາກຫຼາຍ, ພູມສັນຖານເປັນພູສູງ ແລະມີຈໍານວນປະຊາກອນໜ້ອຍ (ປະມານ 9,5 ລ້ານຄົນ) ດ້ວຍອັດຕາສ່ວນຢູ່ໃນໄວອອກແຮງງານສູງ (15-64 ປີ) ທີ່ກວມເອົາເຖິງ 67% ຂອງຈໍານວນປະຊາກອນທັງໝົດ.

ການຜະລິດກາເຟຢູ່ໃນ ຣ໌ວັນດາ ແມ່ນ ເຢຍລະມັນ ເປັນຜູ້ນໍາເຂົ້າມາ ໃນປີ 1904 ແລະບໍ່ດົນຕໍ່ມາກໍ່ເປັນທີ່ຮູ້ກັນວ່າ ຣ໌ວັນດາ ເປັນຜູ້ຜະລິດກາເຟທໍາມະດາ (ບໍ່ດີປານໃດ) ທີ່ດຶງດູດຄວາມສົນໃຈໄດ້ໜ້ອຍ ຈາກການຈໍາແນກຂອງຜູ້ນໍາເຂົ້າ ແລະຜູ້ຊົມໃຊ້, ແຕ່ເມື່ອມາຮອດປີ 2008 Solberg ແລະ Hansen (ຊາວນອກແວ໌) ທີ່ເປັນຜູ້ນໍາເຂົ້າກາເຟພິເສດທີ່ມີຄຸນນະພາບສູງ ໄດ້ສະເໜີລາຄາໃຫ້ຕໍ່າກວ່າ 40 ໂດລາສະຫະລັດໜ້ອຍໜຶ່ງ ຕໍ່ກິໂລກຣາມ ສໍາລັບກາເຟຈາກ ຣ໌ວັນດາ (ຊຶ່ງຕ່າງກັນຫຼາຍສໍາລັບລາຄາປົກກະຕິຂອງກາເຟພິເສດ ທີ່ຢູ່ໃນລະຫວ່າງ 3 ແລະ 4 ໂດລາ ຕໍ່ກິໂລກຣາມ), ມັນໄດ້ສະແດງໃຫ້ເຫັນເຖິງການປ່ຽນແປງທີ່ເປັນຈິງ ແລະເປັນທາງບວກ ຢູ່ໃນຂະແໜງກາເຟຂອງ ຣ໌ວັນດາ. ຄູ່ມື້ນີ້, ກາເຟຂອງ ຣ໌ວັນດາ ໄດ້ເປັນທີ່ຮັບຮູ້ເພີ່ມຂຶ້ນວ່າເປັນຜະລິດຕະພັນທີ່ມີຄຸນນະພາບສູງ. ການຜະລິດກາເຟພິເສດໄດ້ເພີ່ມຂຶ້ນຈາກໜ້ອຍກວ່າ 1.000 ໂຕນ ໃນປີ 2004 ມາເປັນປະມານ 6.000 ໂຕນ ໃນປີ 2012.

ການປ່ຽນແປງໃນຂະແໜງກາເຟຂອງ ຣ໌ວັນດາ ໄດ້ເກີດຂຶ້ນຢ່າງໄວວາ. ໃນປີ 2000, ຊາວກະສິກອນຂອງ ຣ໌ວັນດາ ໄດ້ຜະລິດກາເຟເຄິ່ງປຸງແຕ່ງເພື່ອຂາຍຢູ່ໃນຕະຫຼາດໂລກ. ລາຄາຊື້ຢູ່ຕໍ່ໜ້າຟາຣ໌ມແມ່ນຕໍ່າ (60 ຟັ້ງຂອງ ຣ໌ວັນດາ ຕໍ່ກິໂລກຣາມ), ແລະຄວາມຄາດຫວັງສໍາລັບຊາວກະສິກອນ ແລະຜູ້ສົ່ງອອກ ເພື່ອເພີ່ມລາຍໄດ້ ຫຼືກໍາໄລ ແມ່ນມີຈໍາກັດ.

ເພື່ອຕອບໂຕ້ກັບການຕົກລົງຂອງລາຄາກາເຟ ໃນປີ 1997 ນັ້ນ, ລັດຖະບານໄດ້ສ້າງຍຸດທະສາດກາເຟແຫ່ງຊາດຂຶ້ນ ໃນປີ 2002 ເພື່ອອອກຈາກກາເຟທີ່ມີຄຸນນະພາບຕໍ່າ ໄປສູ່ກາເຟພິເສດທີ່ມີຄຸນນະພາບສູງ ແລະເພື່ອທັບມ້າງການມອງເຫັນ ຫຼືຄວາມຮັບຮູ້ກ່ຽວກັບ "ແຮ້ວຂອງຄຸນນະພາບຕໍ່າ ແລະປະລິມານຕໍ່າ". ພາຍໃຕ້ຍຸດທະສາດນີ້, ລັດຖະບານໄດ້ເປີດເສລີສໍາລັບຂະແໜງການນີ້, ເຄື່ອນຍ້າຍສິ່ງກີດຂວາງຕ່າງໆຕໍ່ກັບການຄ້າ, ສ້າງສິ່ງຈູງໃຈໃໝ່ສໍາລັບກຸ່ມ ແລະບຸກຄົນ ເພື່ອລົງທຶນເຂົ້າໃນການຜະລິດກາເຟ, ແລະອໍານວຍຄວາມສະດວກໃຫ້ແກ່ການເປັນຜູ້ປະກອບການ (ນັກທຸລະກິດ) ໃຫຍ່ຢູ່ໃນອຸດສາຫະກໍາກາເຟ. ເນື່ອງຈາກເປັນໜຶ່ງໃນສີ່ຂະແໜງການຈຸດສຸມ ທີ່ໄດ້ຖືກກໍານົດຢູ່ໃນຍຸດທະສາດການພັດທະນາເສດຖະກິດ ແລະການຫລຸດຜ່ອນຄວາມທຸກຍາກຂອງປະເທດ, ຂະແໜງກາເຟຍັງຖືກຮັກສາໄວ້ເປັນບຸລິມະສິດສູງຂອງລັດຖະບານ.

ໃນການເຮັດວຽກຮ່ວມກັບຂະແໜງການເອກະຊົນ ແລະຜູ້ໃຫ້ທຶນສາກົນຕ່າງໆ, ລັດຖະບານຂອງ ຣ໌ວັນດາ ໄດ້ຈັດຮູບແບບອຸດສາຫະກໍາກາເຟໃໝ່ ເຊັ່ນ: ໄດ້ດັດແກ້ໂຄງສ້າງລະບຽບກົດໝາຍສໍາລັບການຜະລິດ; ໄດ້ສ້າງສະຖານີລ້າງກາເຟຂຶ້ນຫຼາຍກວ່າ 100 ແຫ່ງ; ຜູ້ໃຫ້ທຶນຕ່າງໆໄດ້ໃຫ້ການສະໜັບສະໜູນການພັດທະນາການເຊື່ອມໂຍງກັບຕະຫຼາດ ລະຫວ່າງ ຜູ້ຜະລິດ ແລະຜູ້ຊື້ຢູ່ຕ່າງປະເທດ; ໄດ້ມີການສ້າງຕັ້ງສະຫະກອນຂຶ້ນ; ແລະຊາວກະສິກອນຜູ້ຖືຄອງທີ່ດິນຂະໜາດນ້ອຍກໍ່ກໍາລັງເຮັດວຽກຮ່ວມກັນ ໃນຄວາມພະຍາຍາມເພື່ອປັບປຸງຄຸນນະພາບ, ການຕະຫຼາດ ແລະເຄື່ອງໝາຍການຄ້າຂອງກາເຟເຂົາເຈົ້າ.

ກ່ອນປີ 2001, ບັນດາທະນາຄານໄດ້ໃຫ້ການສະໜອງສິນເຊື່ອຕາມລະດູການໃຫ້ແກ່ຜູ້ຄ້າ ແລະຜູ້ຄ້າຄົນກາງຜູ້ທີ່ຮັບຊື້ເມັດກາເຟໂດຍກົງຈາກຜູ້ຖືຄອງທີ່ດິນຂະໜາດນ້ອຍ ຫຼືສະຫະກອນຕ່າງໆ, ຜູ້ທີ່ສີກາເຟແຫ້ງຕາມວິທີ ພື້ນເມືອງແລ້ວສົ່ງອອກ; ແຕ່ພາຍຫຼັງທີ່ລາຄາກາເຟຕົກຕໍ່າ ແລະມີຜົນເສຍຫາຍຢ່າງໜັກໜ່ວງ, ບັນດາທະນາຄານຈຶ່ງໄດ້ຢຸດຕິການປ່ອຍສິນເຊື່ອຕາມລະດູການ. ການຕິດຕັ້ງ ຫຼືກໍ່ສ້າງສະຖານີລ້າງກາເຟ ແມ່ນສິ່ງຈໍາເປັນທີ່ຈະຕ້ອງໄດ້ເຮັດກ່ອນ ສໍາລັບການປ່ຽນແປງໄປສູ່ກາເຟພິເສດທີ່ມີຄຸນນະພາບສູງ, ແຕ່ມັນມີຄວາມຕ້ອງການທຶນໃນການເລີ່ມຕົ້ນ ແລະມີທຶນໝູນວຽນສູງ ຊຶ່ງການໃຫ້ສິນເຊື່ອຕາມລະດູການຂອງທະນາຄານແມ່ນບໍ່ສາມາດບັນລຸໄດ້. ການຈັດຕັ້ງປະຕິບັດໂຄງການຄໍ້າປະກັນເງິນກູ້ ໂດຍຜ່ານອົງການສິນເຊື່ອເພື່ອການພັດທະນາ ແລະການສະໜອງສິນເຊື່ອທີ່ມີການສະໜັບສະໜູນຕາມສາຍຂອງຜູ້ໃຫ້ທຶນ ໄດ້ທັບມ້າງບັນດາສິ່ງກີດຂວາງໃນການເຂົ້າເຖິງການເງິນຂອງບັນດາສະຖານີລ້າງກາເຟຕ່າງໆ ຊຶ່ງເປັນການປ່ຽນແປງຢ່າງໄວວາຢູ່ໃນຂະແໜງກາເຟຂອງ ຣໍວັນດາ.

ການປ່ຽນແປງນີ້ໄດ້ກະທົບຢ່າງແຂງແຮງຕໍ່ກັບເສດຖະກິດ ແລະສັງຄົມ. ກາເຟຍັງສືບຕໍ່ສ້າງລາຍໄດ້ທີ່ສໍາຄັນໃຫ້ແກ່ການສົ່ງອອກ ແລະລັດຖະບານ. ການແລກປ່ຽນເງິນຕາຕ່າງປະເທດທີ່ໄດ້ຈາກການເພີ່ມຂຶ້ນຂອງກາເຟພິເສດ ແມ່ນຈາກ 0 ໂດລາສະຫະລັດ ໃນປີ 2001 ມາເປັນຫຼາຍກວ່າ 27 ລ້ານໂດລາສະຫະລັດ ໃນປີ 2011; ລາຍໄດ້ຈາກກາເຟໄດ້ເພີ່ມຂຶ້ນຈາກ 20 ລ້ານໂດລາສະຫະລັດ ໃນປີ 2002 ມາເປັນ 74,6 ລ້ານໂດລາສະຫະລັດ ໃນປີ 2011.

ການມີລາຍໄດ້ທີ່ສູງຂຶ້ນຂອງຊາວກະສິກອນ ໄດ້ເຮັດໃຫ້ຄອບຄົວ ແລະຊຸມຊົນຂອງເຂົາເຈົ້າມີທາງເລືອກຫຼາຍຂຶ້ນ. ບັນດາສະຫະກອນທີ່ມີກໍາໄລສູງຂຶ້ນ ກໍ່ສາມາດຈ້າງກໍາມະກອນ, ຈ່າຍຄືນຕົ້ນທຶນ ແລະໃຫ້ການສະໜັບສະໜູນຊ່ວຍເຫຼືອໂຄງການຕ່າງໆຂອງຊຸມຊົນ ເຊັ່ນ: ການປັບປຸງໂຮງຮຽນ ແລະອື່ນໆ.

ການປ່ຽນແປງຂອງຂະແໜງກາເຟ ຣໍວັນດາ ຍັງສ້າງຜົນປະໂຫຍດທາງສັງຄົມອີກດ້ວຍ. ການເຮັດວຽກຮ່ວມກັນຢູ່ໃນສະຖານີລ້າງກາເຟໂດຍສະເພາະແມ່ນສະຖານີທີ່ຕັ້ງຢູ່ໃນເຂດຊົນນະບົດ, ຄ້ອຍຊັນ ແລະເຂົ້າເຖິງໄດ້ຍາກ ທີ່ເປັນເຂດປູກກາເຟ ແລະມີໂຄງລ່າງທາງການຄ້າອື່ນໆໜ້ອຍຫຼາຍບັນດາຊາວກະສິກອນໃນທີ່ນັ້ນໄດ້ມີໂອກາດໃໝ່ໃນການປະຕິບັດ (ມີປະຕິກິລິຍາ) ຕໍ່ກັບຊາວຣໍວັນດາ ທີ່ມາຈາກເຂດອື່ນ. ການມີປະຕິກິລິຍາຊໍ້າແລ້ວຊໍ້າອີກຢູ່ແນວນີ້ ໄດ້ຊ່ວຍຫລຸດຜ່ອນຄວາມສໍານຶກກ່ຽວກັບຄວາມຫ່າງເຫີນກັນໃນລະຫວ່າງສະມາຊິກຂອງສັງຄົມຣໍວັນດາ.ໃນເມື່ອຊາວກະສິກອນ ແລະກໍາມະກອນຢູ່ໃນສະຖານີລ້າງກາເຟ ຮູ້ສຶກເພິ່ງພໍໃຈກັບການເພີ່ມຂຶ້ນຂອງເສດຖະກິດ ພ້ອມກັບການມີລາຍໄດ້ທີ່ສູງຂຶ້ນຈາກກາເຟ, ເຂົາເຈົ້າກໍ່ຍັງມີຄວາມຮູ້ສຶກໃນລະດັບສູງ ກ່ຽວກັບຄວາມໄວ້ວາງໃຈໃນການເປັນຄົນຮ່ວມກັນກັບຜູ້ທີ່ເຂົາເຈົ້າໄດ້ປະຕິບັດຕໍ່; ດັ່ງນັ້ນ, ຈຶ່ງມີການພັດທະນາທັດສະນະຄະຕິໃນທາງບວກຫຼາຍຂຶ້ນ ແລະກ້າວໄປສູ່ການຄືນດີກັນໃໝ່. ເພາະວ່າກາເຟໃນຣໍວັນດາ ແມ່ນຜູ້ທຸກຍາກ ແລະຜູ້ຖືຄອງທີ່ດິນຂະໜາດນ້ອຍເປັນຜູ້ປູກ ຊຶ່ງເຂົາເຈົ້າເຫຼົ່ານັ້ນແມ່ນກວມເອົາເຖິງ 90% ຂອງຈໍານວນປະຊາກອນທັງໝົດຢູ່ໃນປະເທດ, ບັນດາການປ່ຽນແປງໃນທາງບວກເຫຼົ່ານີ້ ແມ່ນມີຄວາມເປັນໄປໄດ້ທີ່ຈະໃຫ້ຜົນປະໂຫຍດສ່ວນເຫຼືອຢ່າງຫຼວງຫຼາຍແກ່ສັງຄົມຣໍວັນດາ ໂດຍລວມ.

ແຫຼ່ງຂໍ້ມູນ: Boudreaux (2011); Islam ແລະ Islam (2015)

## <u>ບັນດາຜະລິດຕະພັນທາງການກະສິກໍາ/ສັດລ້ຽງອື່ນໆ:</u>

ລາຍການອາຫານອື່ນໆທີ່ ສປປ ລາວ ສົ່ງອອກ ແມ່ນພືດປະເພດເມັດ, ຜັກ, ໝາກໄມ້, ອາຫານທີ່ປຸງແຕ່ງແລ້ວ, ຊີ້ນ ແລະຜະລິດຕະພັນຊີ້ນ, ປາ, ສັດເປັນ, ເຄື່ອງດື່ມ ແລະຜະລິດຕະພັນໄມ້ ຊຶ່ງມີມູນຄ່າກວມເອົາປະມານ 6,6% ຂອງມູນຄ່າການສົ່ງອອກທັງໝົດ ໃນປີ 2014. ແນວໂນ້ມນີ້ແມ່ນເຫັນໄດ້ຢູ່ໃນ ຮູບທີ 2.8 ໂດຍມັນສະແດງໃຫ້ເຫັນວ່າອັດຕາການເຕີບໂຕແມ່ນສູງຫຼາຍ ຢູ່ທີ່ປະມານ 28% ຕໍ່ປີ (ຄໍານວນເປັນລາຍປີ). ເກືອບວ່າທັງໝົດຂອງບັນດາລາຍການນີ້ ແມ່ນຖືກສົ່ງອອກໄປຍັງປະເທດເພື່ອບ້ານໃກ້ຄຽງ: ຕົ້ນຕໍແມ່ນປະເທດໄທ, ຫວຽດນາມ ແລະຈີນ, ຍົກເວັ້ນເບຍລາວ (ທີ່ສົ່ງໄປປະເທດອື່ນໆນໍາ). ໃນຂະນະທີ່ບັນດາປະເທດເພື່ອນບ້ານໃກ້ຄຽງບໍ່ໄດ້ປະຕິບັດຕາມ GSP ຫຼືສົນທິສັນຍາອື່ນທີ່ກ່ຽວພັນກັບສະຖານະພາບ LDC ASEAN ກໍ່ໄດ້ມີກົດ ແລະສົນທິສັນຍາ

ຂອງຕົນ, ລວມທັງການເຮັດກັບຈີນນຳຊຶ່ງອັນນີ້ແມ່ນຂ້ອນຂ້າງຈະບໍ່ມີຜົນກະທົບໃດໆເລີຍ ຕໍ່ກັບວ່າ ສປປ ລາວ ຈະຢູ່ໃນສະຖານະພາບເປັນ LDC ຫຼືບໍ່.

ມັນມີໂອກາດທີ່ດີສຳລັບບັນດາລາຍການເຫຼົ່ານີ້ ທີ່ຈະເລີນງອກງາມຂຶ້ນຢູ່ໃນຕະຫຼາດສາກົນ, ຖ້າຫາກວ່າພວກເຮົາມີຄວາມພະຍາຍາມເພີ່ມມູນຄ່າໃຫ້ແກ່ພວກມັນຫຼາຍຂຶ້ນ ໂດຍຜ່ານກິດຈະກຳປາຍທາງ, ໂດຍສະເພາະແມ່ນການປຸງແຕ່ງ.

ສຸດທ້າຍ, ແມ່ນຂະແໜງຢາສູບທີ່ກວມເອົາປະມານ 3% ຂອງການສົ່ງອອກທັງໝົດ ໃນປີ 2014 ຊຶ່ງມັນໄດ້ເພີ່ມຂຶ້ນຢ່າງໄວວາໃນລະຫວ່າງຊ່ວງປີ 2001 ແລະ 2011, ແລະຫຼັງຈາກນັ້ນກໍ່ໄດ້ຫລຸດລົງ. ຜະລິດຕະພັນຢາສູບກໍ່ຖືກສົ່ງໄປສູ່ບັນດາປະເທດເພື່ອນບ້ານໃກ້ຄຽງເຊັ່ນກັນ; ເພາະສະນັ້ນ, ມັນກໍ່ຂ້ອນຂ້າງທີ່ຈະບໍ່ມີຜົນກະທົບຈາກອຳນາດ/ສົນທິສັນຍາອື່ນ ຫຼາຍກວ່າອຳນາດຕະຫຼາດເຫຼົ່ານີ້.

**ຮູບທີ 2.8: ແນວໂນ້ມຂອງການສົ່ງອອກລາຍການອາຫານອື່ນໆ (ພັນໂດລາສະຫະລັດ)**




ແຫຼ່ງຂໍ້ມູນ: http://www.trademap.org

**<u>ໄມ້, ແຮ່ທາດ ແລະໄຟຟ້າ</u>:**

ໄມ້ ແລະຜະລິດຕະພັນໄມ້ປະກອບສ່ວນປະມານ 29% ຂອງການສົ່ງອອກສິນຄ້າທັງໝົດ, ໃນຂະນະທີ່ຜະລິດຕະພັນແຮ່ທາດ (ທອງແດງ, ຄຳ, ແຮ່ເຫຼັກ, ແຮ່ໂລຫະອື່ນໆ, ຫີນມີຄ່າ ແລະອື່ນໆ) ແມ່ນປະກອບສ່ວນປະມານ 30% ຂອງການສົ່ງອອກສິນຄ້າທັງໝົດ (2014). ການສົ່ງອອກໄຟຟ້າ ໃນປັດຈຸບັນນີ້ແມ່ນປະກອບສ່ວນຕໍ່ການສົ່ງອອກທັງໝົດບໍ່ຫຼາຍປານໃດ (ປະມານ 12-14%) ແຕ່ຄາດວ່າຈະເພີ່ມຂຶ້ນຫຼາຍຫຼັງຈາກປີ 2020.

ດ້ານຄວາມຕ້ອງການໄມ້ ແລະຜະລິດຕະພັນໄມ້ ແມ່ນບໍ່ຂຶ້ນລົງຕາມລາຄາຫຼາຍ. ຢູ່ທີ່ໃດກໍ່ຕາມ, ບັນດາຜູ້ຊົມໃຊ້ ແມ່ນບໍ່ໄດ້ພິຈາລະນາເຖິງການທົດແທນໃຫ້ແກ່ໄມ້ ຄືດັ່ງ "ການທົດແທນຕົວຈິງ". ໄມ້ແມ່ນຜະລິດຕະພັນ "ທີ່ລ້ຳຄ່າ" ໃນປັດຈຸບັນນີ້, ມີຫຼາຍພາກຂອງໂລກທີ່ບໍ່ມີຄວາມອຸດົມສົມບູນດ້ານປ່າໄມ້ ແລະທີ່ດິນສຳລັບການປູກປ່າແຕ່ກໍ່ຍົກເວັ້ນ ສປປ ລາວ ໃນປັດຈຸບັນນີ້. ເຖິງແມ່ນວ່າ, ປະເທດທີ່ນຳເຂົ້າຈະເພີ່ມພາສີຂຶ້ນກໍ່ຕາມ ແຕ່ມັນກໍ່ຈະເກີດຂຶ້ນດ້ວຍການກະທຳຂອງຜູ້ຊົມໃຊ້ຢູ່ໃນບັນດາປະເທດທີ່ນຳເຂົ້າເຫຼົ່ານັ້ນ; ແຕ່ໃນມໍ່ໆມານີ້ ສປປ ລາວ ກໍ່ໄດ້ມີລະບຽບ

ການໃໝ່ທີ່ບອກວ່າ ມີແຕ່ໄມ້ທີ່ໄດ້ຮັບການປຸງແຕ່ງ ແລະສ້າງມູນຄ່າເພີ່ມຢູ່ພາຍໃນແລ້ວເທົ່ານັ້ນ ຈຶ່ງຈະອະນຸຍາດໃຫ້ສົ່ງອອກໄດ້.

ເຊັ່ນດຽວກັນ, ມັນມີຄວາມຕ້ອງການທີ່ບໍ່ຂຶ້ນລົງຕາມລາຄາຫຼາຍສຳລັບຜະລິດຕະພັນໂລຫະ ແລະແຮ່ທາດ. ຖ້າຫາກມີຄວາມຕ້ອງການຕົກຕໍ່າລົງຄືກັນກັບຢູ່ໃນປັດຈຸບັນແມ່ນຍ້ອນເສດຖະກິດມີການຂະຫຍາຍຕົວຕໍ່າຢູ່ໃນບັນດາປະເທດທີ່ນຳເຂົ້າ. ອີກຢ່າງໜຶ່ງ, ລັກສະນະຂອງສັນຍາທີ່ມີກັບບັນດາບໍລິສັດຮ່ວມຊາດ (ຫຼາຍຊາດ) ທີ່ຜະລິດແຮ່ ຄືດັ່ງ ສປປ ລາວ ກໍ່ໄດ້ຮັບຄ່າພາກຫຼວງ ແລະຄ່າສຳປະທານ, ສັນຍາການຂົນສົ່ງ ແລະອື່ນໆ ຊຶ່ງແຕ່ລະຢ່າງນັ້ນແມ່ນໄດ້ຮັບເປັນຈຳນວນຕາຍຕົວ (ຄົງທີ່), ແລະຄືຈະເປັນໄປບໍ່ໄດ້ທີ່ຈະມີຜົນກະທົບ ໃນກໍລະນີທີ່ຜູ້ນຳເຂົ້າຫາກຖືກບັງຄັບເກັບພາສີຂາເຂົ້າຢູ່ໃນປະເທດຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມ, ຄວາມສາມາດໃນການຫຼອມ/ປຸງແຕ່ງໂລຫະ ແມ່ນຮຽກຮ້ອງໃຫ້ມີການປຸງແຕ່ງຢູ່ພາຍໃນ ເພື່ອສ້າງ ແລະສະຫງວນວຽກເຮັດງານທຳທີ່ມີມູນຄ່າສູງຫຼາຍຂຶ້ນຢູ່ພາຍໃນປະເທດ ຊຶ່ງຈະປະກອບສ່ວນຕໍ່ກັບການປັບປຸງ GNI ແລະ EVI.

ຄວາມຕ້ອງການພະລັງງານໄຟຟ້າກໍ່ບໍ່ຂຶ້ນລົງຕາມລາຄາເຊັ່ນກັນ. ໂຄງການພະລັງງານຕ່າງໆ ແມ່ນເປັນການລົງທຶນ ແລະດຳເນີນການໂດຍບໍລິສັດຕ່າງປະເທດ ຊຶ່ງມັນໄດ້ມີຂໍ້ຕົກລົງໄລຍະຍາວກັບລັດຖະບານ ສຳລັບການຊື້-ຂາຍພະລັງງານ. ດັ່ງນັ້ນ, ພະລັງງານຈຶ່ງບໍ່ສາມາດທີ່ຈະຖືກຮັກສາໄວ້ ແລະຈະຕ້ອງຖືກຊົມໃຊ້ທັງໝົດ, ການດຳເນີນການຂອງບໍລິສັດຕ່າງປະເທດ ແມ່ນຄືຈະບໍ່ເປັນໄປໄດ້ທີ່ຈະມີການແບກຮັບຄວາມສູນເສຍ ໃນກໍລະນີທີ່ມີການການກະຈາຍພະລັງງານເຂົ້າເຖິງ ຫຼືການບັງຄັບເກັບພາສີນຳເຂົ້າພະລັງງານ ໂດຍລັດຖະບານຂອງເຂົາເຈົ້າ. ມັນຍັງຈະຕ້ອງໄດ້ສັງເກດ (ຈົດຈຳ) ວ່າ ປະເທດໄທທີ່ເປັນຜູ້ນຳເຂົ້າຕົ້ນຕໍນັ້ນ ແມ່ນຂ້ອນຂ້າງ 'ຫິວພະລັງງານ' ສຳລັບພະລັງງານສະອາດ ແລະພະລັງງານທົດແທນ. ໃນຄວາມຮູ້ສຶກນີ້, ແມ່ນຈະບໍ່ມີບັນຫາໃດໆກ່ຽວກັບຄວາມຕ້ອງການ.

ສະຫລຸບແລ້ວ, ການຫລຸດພົ້ນອອກຈາກສະຖານະພາບ LDC ແມ່ນຂ້ອນຂ້າງຈະບໍ່ມີຜົນກະທົບຕໍ່ການສົ່ງອອກຂອງ ສປປ ລາວ. ຖ້າຈະເວົ້າໃຫ້ຖືກແທ້ໆນັ້ນ ແມ່ນມັນຄວນຈະນຳໃຊ້ພະລັງອຳນາດທີ່ໄດ້ຈາກການຫລຸດພົ້ນອອກຈາກສະຖານະພາບ LDC ເພື່ອປັບປຸງ ແລະຍົກລະດັບໂຄງສ້າງອຸດສາຫະກຳ ແລະການຜະລິດສິນຄ້າ, ລວມທັງການເພີ່ມຜະລິດຕະພາບຂອງການຜະລິດກະສິກຳ ກໍ່ເປັນສ່ວນໜຶ່ງຂອງຄວາມຫຼາກຫຼາຍທາງເສດຖະກິດ ແລະຂັບເຄື່ອນການຫັນເປັນອຸດສາຫະກຳ.

**ການຊ່ວຍເຫຼືອສົງເຄາະດ້ານໜີ້ສິນ:**

ໃນເມື່ອ ສປປ ລາວ ຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ, ສະຖານະພາບຂອງໜີ້ສິນອາດຈະກາຍເປັນບັນຫາໜັກຂຶ້ນໜ້ອຍໜຶ່ງ ຍ້ອນອົງປະກອບຂອງເງິນກູ້ທີ່ໄຫຼເຂົ້າຈາກພາຍນອກອາດຈະເພີ່ມຂຶ້ນ ແລະບໍ່ແມ່ນທັງໝົດຂອງມັນຈະເປັນເລື່ອງງ່າຍພໍປານໃດ. ສະນັ້ນ, ສປປ ລາວ ຈຳເປັນຈະຕ້ອງໄດ້ກຳນົດໂຄງສ້າງໜີ້ໄລຍະຍາວຄືນໃໝ່. ເບິ່ງຢູ່ໃນກ່ອງທີ 2.5.

**ກ່ອງທີ 2.6: ໜີ້ສາທາລະນະຈາກພາຍນອກ (ຕ່າງປະເທດ)**

ສປປ ລາວ ບໍ່ໄດ້ເຂົ້າຮ່ວມຢູ່ໃນແຜນງານປະເທດທຸກຍາກທີ່ເປັນໜີ້ສູງ (HIPC). ໜີ້ສິນຈາກພາຍນອກແມ່ນຕ່ຳກວ່າເຂດຈຳກັດ ຢູ່ທີ່ປະມານ 40% ຂອງ GDP. IMF ໄດ້ຄາດຄະເນວ່າ ຄວາມຍືນຍົງ/ຄວາມກົດດັນຂອງໜີ້ສິນແມ່ນຈະສືບຕໍ່ຢູ່ໃນລະດັບປານກາງ, ເຖິງແມ່ນວ່າ ສປປ ລາວ ເກືອບຈະຢູ່ໃນໄລຍະເຂົ້າສູ່ຄວາມສ່ຽງສູງ ດ້ວຍການເພີ່ມຂຶ້ນຂອງຄວາມບອບບາງດ້ານໜີ້ສາທາລະນະກໍ່ຕາມ. ອັນນີ້ແມ່ນຍ້ອນອົງປະກອບດ້ານໜີ້ສິນໃນການຊ່ວຍເຫຼືອກຳລັງເພີ່ມຂຶ້ນ ໂດຍສະເພາະແມ່ນຕັ້ງແຕ່ປີ 2012 ເປັນຕົ້ນມາ. ການເພີ່ມຂຶ້ນຂອງໜີ້ຕ່າງປະເທດຕໍ່ກັບອັດຕາສ່ວນຂອງ GDP ແລະການເຮັດຜິດສັນຍາຢູ່ໃນມາດຖານຂັ້ນຕໍ່າໄລຍະສັ້ນ ແລະໄລຍະກາງ, ຈຸດທີ່ຈຳເປັນຈະຕ້ອງໄດ້ເພີ່ມທະວີນັ້ນ ແມ່ນຄວາມອາດສາມາດໃນການຄຸ້ມຄອງໜີ້ສິນຂອງ ສປປ ລາວ..

ແຫຼ່ງຂໍ້ມູນ: ເບິ່ງໃນ, IMF (2014), Lao People's Democratic Republic Staff Report for the 2014 article IV Consultation—Debt Sustainability Analysis, Washington, https://www.imf.org/external/pubs/ft/scr/2015/cr1545.pdf

## ການໄຫຼເຂົ້າຂອງການໂຍະຍານຜ່ອນຜັນ/ການໃຫ້ການຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທາງດ້ານວິຊາການ[49]

**<u>ການຊ່ວຍເຫຼືອເພື່ອການພັດທະນາ:</u>**[50]

ລວມການຈ່າຍໃຫ້ທັງໝົດພາຍໃຕ້ ODA ຢູ່ໃນຮູບທີ 2.9 ໄດ້ສະແດງໃຫ້ເຫັນກ່ຽວກັບຄ່າສະເລ່ຍຂອງ ODA ແມ່ນມີຢູ່ປະມານ 4-5% ຂອງ GDP ໃນສົກປີ 2013-2014 ຫຼືປະມານ 20% ຂອງງົບປະມານແຫ່ງລັດ (ໂດຍປະມານ ເນື່ອງຈາກການຊ່ວຍເຫຼືອແມ່ນບໍ່ໄດ້ຜ່ານທາງງົບປະມານໂດຍກົງທັງໝົດ). ໃນຊຸມປີມໍ່ໆຜ່ານມານີ້ ແມ່ນມີແນວໂນ້ມການໄຫຼເຂົ້າຂອງການຊ່ວຍເຫຼືອຕໍ່າລົງ. ໃນຂະນະທີ່ຕົວເລກສໍາລັບ ສົກປີ 2014-2015 ແມ່ນບໍ່ໄດ້ກວມເອົາທັງໝົດສົກປີ (ພຽງແຕ່ຮອດ ເດືອນພຶດສະພາ 2015; ປີການເງິນແມ່ນສິ້ນສຸດໃນ ວັນທີ 30 ເດືອນກັນຍາ 2015) ຊຶ່ງລັດຖະບານກໍ່ບໍ່ແນ່ໃຈວ່າມັນຈະເພີ່ມຂຶ້ນຫຼາຍຫຼືບໍ່ໃນສີ່ເດືອນຫຼັງນີ້ (ມິຖຸນາ-ກັນຍາ 2015). ແນ່ນອນ, ການຊ່ວຍເຫຼືອແມ່ນມີແນວໂນ້ມຫລຸດລົງ, ແຕ່ວ່າມັນກໍ່ບໍ່ສາມາດສູງກວ່າຕົວເລກທີ່ສະແດງໄວ້ຢູ່ໃນ ຮູບທີ 2.9 ໄດ້.

ຕາມສະພາບຄວາມເປັນຈິງ, ການໃຫ້ ODA ແມ່ນຂຶ້ນກັບການຕັດສິນໃຈຕາມບຸລິມາສິດຂອງປະເທດຄູ່ຮ່ວມພັດທະນາຕ່າງໆ ຊຶ່ງຂຶ້ນຢູ່ກັບພັນທະສັນຍາ (ການຮັບປາກ) ຕໍ່ໂລກຂອງເຂົາເຈົ້າ. ໃນຂະນະທີ່ຖະແຫຼງການສາກົນກ່ຽວກັບບັນດາ LDC ແມ່ນເປັນພຽງແຕ່ຫຼັກການຊີ້ນໍາ ຊຶ່ງພວກມັນແມ່ນບໍ່ມີອໍານາດບັງຄັບໃດໆ. ໃນຄວາມເປັນຈິງແລ້ວ, ການໃຫ້ ODA ແມ່ນໄດ້ມີການຫລຸດລົງທັງໝົດຢູ່ໃນບັນດາປະເທດອາຊີ ກໍ່ຄືອາຊຽນ, ຖ້າສົມທຽບກັບບັນດາປະເທດໃນອາຟຼິກາ, ແລະ ສປປ ລາວ ກໍ່ບໍ່ມີການຍົກເວັ້ນ.[51]

**ຮູບທີ 2.9: ແນວໂນ້ມຂອງການໃຫ້ ODA (ລ້ານໂດລາສະຫະລັດ)**




ແຫຼ່ງຂໍ້ມູນ: ຖານຂໍ້ມູນ AMP ຢູ່ ກະຊວງ ຜທ, ນະຄອນຫຼວງວຽງຈັນ

ໝາຍເຫດ: ຂໍ້ມູນສໍາລັບ ສົກປີ 2014-2015 ແມ່ນໄດ້ຮັບຮອດ ເດືອນພຶດສະພາ 2015 (ແປດເດືອນ). ປີການເງິນແມ່ນສິ້ນສຸດໃນ ວັນທີ 30 ເດືອນກັນຍາ 2015.

ຕາຕະລາງ 2.2 ສະແດງໃຫ້ເຫັນເຖິງບັນດາຕົວດັດຊະນີກ່ຽວກັບແນວໂນ້ມຂອງ ODA ໂດຍລວມ ແລະແຕ່ລະອົງປະກອບຂອງມັນ (2010-2011=100). ທຽບໃສ່ ສົກປີ 2010-2011 ເຫັນວ່າທຸກໆປະເພດທຶນແມ່ນໄດ້ຫລຸດລົງ. ການປະກອບສ່ວນຂອງກອງທຶນສິນເຊື່ອ (Trust fund) ໄດ້ຫລຸດລົງໄວກວ່າໝູ່, ໃນຂະນະທີ່ TA ແມ່ນຫລຸດລົງຊ້າກວ່າໝູ່.[52] ໃນຕົວຈິງແລ້ວ, ເງິນກູ້ ແລະການຊ່ວຍເຫຼືອທາງດ້ານວິຊາການ ແມ່ນໄດ້ມີການພິກປີ້ນ ແລະບາງປີໃນມໍ່ໆຜ່ານມານີ້ແມ່ນໄດ້ມີການເພີ່ມຂຶ້ນ, ເຖິງແມ່ນວ່າບໍ່ສູງກວ່າລະດັບ ໃນສົກປີ 2010-2011 ກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ການປະກອບສ່ວນຂອງກອງທຶນສິນເຊື່ອແມ່ນມີໜ້ອຍ (<5% ຂອງຈໍານວນທັງໝົດ), ດັ່ງນັ້ນ ມັນຈຶ່ງບໍ່ເປັນບັນຫາໃຫຍ່. ການຫລຸດລົງຂອງເງິນຊ່ວຍເຫຼືອລ້າ ໄດ້ເຮັດໃຫ້ເງິນກູ້ ແລະການຊ່ວຍເຫຼືອທາງ

ດ້ານວິຊາການຂ້ອນຂ້າງມີຄວາມສຳຄັນຫຼາຍຂຶ້ນ. ການຊ່ວຍເຫຼືອລ້າໄດ້ປະກອບສ່ວນຫຼາຍກວ່າ 80% ຂອງການໄຫຼເຂົ້າຂອງທຶນທັງໝົດ ໃນລະຫວ່າງປີ 2011 ແລະ 2013, ແຕ່ກໍ່ຫລຸດລົງຕ່ຳກວ່າ 80% ຫຼັງຈາກນັ້ນມາ. ໃນສົກປີ 2014-15 ແມ່ນພວກມັນໄດ້ປະກອບສ່ວນປະມານ 72% ຂອງການໄຫຼເຂົ້າຂອງທຶນທັງໝົດ. ທີ່ແທ້ຈິງແລ້ວ, ອົງປະກອບຂອງການຊ່ວຍເຫຼືອລ້າແມ່ນໄດ້ຫລຸດລົງໄວກວ່າການຊ່ວຍເຫຼືອທົ່ວໄປ.

**ຕາຕະລາງ 2.2: ການຈັດດັດຊະນີກ່ຽວກັບແນວໂນ້ມຂອງ ODA ແລະບັນດາອົງປະກອບຂອງມັນ (2010-2011 = 100)**

| ປີງົບປະມານ | ລວມ | ຊ່ວຍເຫຼືອລ້າ | TA | ເງິນກູ້ | ກອງທຶນສິນເຊື່ອ | ມະນຸດສະທຳ |
|---|---|---|---|---|---|---|
| 2010-2011 | 100 | 100 | 100 | 100 | 100 | 100 |
| 2011-2012 | 82,1 | 77,9 | 109,7 | 110,2 | 70,1 | 180 |
| 2012-2013 | 75,7 | 71,7 | 115,2 | 72,6 | 94,3 | 2.800 |
| 2013-2014 | 79,9 | 73,3 | 112,6 | 139,7 | 43,6 | 1.480 |
| 2014-2015 | 37,7 | 31,7 | 94,3 | 61,6 | 8,8 | 110 |

ແຫຼ່ງຂໍ້ມູນ: ຖານຂໍ້ມູນ AMP, ກະຊວງ ຜທ, ນະຄອນຫຼວງວຽງຈັນ

ບັນດາແນວໂນ້ມນີ້ໄດ້ສະແດງໃຫ້ເຫັນວ່າ ການກ້າວໄປສູ່ການຫລຸດລົງຂອງ ODA ແລະການປ່ຽນແປງການໃຫ້ການຊ່ວຍເຫຼືອແມ່ນໄດ້ເກີດຂຶ້ນແລ້ວ ຊຶ່ງເກີດຂຶ້ນກ່ອນເວລາທີ່ປະເທດຈະຫລຸດພົ້ນອອກຈາກສະຖານະພາບ LDC ໃນ 5-7 ປີຂ້າງໜ້າ. ຖ້າຫາກປະເທດຈະເລີນຮຸ່ງເຮືອງຂຶ້ນ ດ້ວຍການຊ່ວຍເຫຼືອຈາກພາຍນອກທີ່ຫລຸດລົງຄືແນວນີ້, ການຫລຸດພົ້ນອອກຈາກສະຖານະພາບ LDC ກໍ່ບໍ່ອາດເປັນໄປໄດ້ທີ່ຈະມີຜົນກະທົບແຮງ.[53]

ຕາຕະລາງ 2.3 ຊີ້ໃຫ້ເຫັນວ່າ ການຊ່ວຍເຫຼືອຈາກອົງການຮ່ວມມືສອງຝ່າຍແມ່ນກວມອັດຕາສ່ວນຫຼາຍກວ່າ; ຄ່າສະເລ່ຍຂອງ 5 ປີ ແມ່ນຢູ່ທີ່ປະມານ 55,5%. ໃນທາງກົງກັນຂ້າມ, ອົງການຮ່ວມມືຫຼາຍຝ່າຍແມ່ນປະກອບສ່ວນພຽງແຕ່ 35%. ບັນດາອົງການຂອງສະຫະປະຊາຊາດແມ່ນປະກອບສ່ວນປະມານ 10%, ໃນຂະນະທີ່ INGOs ແມ່ນປະກອບສ່ວນຕ່ຳກວ່າ 1%. ດັ່ງທີ່ກ່າວມາຂ້າງຕົ້ນນັ້ນ, ອົງການຮ່ວມມືສອງຝ່າຍໄດ້ສະໜອງທຶນຕາມນະໂຍບາຍລວມຂອງໂລກ ແມ່ນໄດ້ມີການປ່ຽນແປງຕາມເວລາເລື້ອຍໆ ຊຶ່ງຂຶ້ນກັບບັນດາເງື່ອນໄຂທາງເສດ ຖະກິດຂອງໂລກທີ່ມີຢູ່ທົ່ວໄປ ແລະຜົນປະໂຫຍດທາງຍຸດທະສາດຂອງເຂົາເຈົ້າ. ອັນນີ້ແມ່ນໄດ້ມີການເຈລະຈາເລື້ອຍໆ ໃນລະຫວ່າງປະເທດຄູ່ຮ່ວມພັດທະນາ ແລະປະເທດຜູ້ຮັບທຶນ, ແລະບໍ່ຂຶ້ນກັບພຽງແຕ່ການເປັນ LDC ຂອງປະເທດທີ່ຮັບທຶນເທົ່ານັ້ນ. ຕົວຢ່າງ: ປະເທດມົງໂກລີ, ເກນຢາ ແລະປາກິສະຖານ ກໍ່ເປັນຜູ້ທີ່ໄດ້ຮັບທຶນຊ່ວຍເຫຼືອຫຼາຍ ໂດຍທີ່ເຂົາເຈົ້າບໍ່ແມ່ນປະເທດ LDC. ໃນຕົວຈິງແລ້ວ, ຈີນ, ໄທ ແລະຕວກກີ ແມ່ນເປັນປະເທດທີ່ມີລາຍໄດ້ຮັບປານກາງສູງ ແລະເສດຖະກິດກໍ່ຈະເລີນຮຸ່ງເຮືອງ ແຕ່ເຂົາເຈົ້າກໍ່ໄດຮັບການໄຫຼເຂົ້າຂອງບາງການຊ່ວຍເຫຼືອຜ່ອນຜັນຈົນຮອດປັດຈຸບັນນີ້.

**ຕະຕະລາງ 2.3: ການຊ່ວຍເຫຼືອຂອງສາກົນແບ່ງຕາມແຫຼ່ງຕ່າງໆ (ຫໜ. ລ້ານໂດລາສະຫະລັດ)**

| ອົງການ | 2010–11 | 2011-12 | 2012-13 | 2013-14 | 2014-15 | ການຈ່າຍໃຫ້ (ລວມ 5 ປີ) |
|---|---|---|---|---|---|---|
| (1) | (2) | (3) | (4) | (5) | (6) | (7) |
| ສະຖາບັນການເງິນສາກົນ | 229,5 | 198,8 | 151,9 | 184,7 | 58,5 | 823,5 |
| ອົງການຮ່ວມມືສອງຝ່າຍ | 296,1 | 270,0 | 293,9 | 279,7 | 151,4 | 1.291,9 |

| | | | | | | |
|---|---|---|---|---|---|---|
| ບັນດາອົງການຂອງ UN | 126,1 | 40,0 | 25,8 | 34,3 | 21,1 | 247,3 |
| INGOs | 0,2 | 2,9 | 2,3 | 1,7 | 1,0 | 8,1 |
| **ລວມ** | **651,9** | **511,7** | **473,9** | **500,4** | **232,0** | **2.369,9** |

ແຫຼ່ງຂໍ້ມູນ: ຖານຂໍ້ມູນ AMP, ກະຊວງ ຜທ, ນະຄອນຫຼວງວຽງຈັນ

ໝາຍເຫດ: ບັນດາຕົວເລກສຳລັບການປະກອບສ່ວນຂອງ INGO ອາດຈະບໍ່ໄດ້ຮວມເຂົ້າກັນທັງໝົດ ເນື່ອງຈາກບັນຫາຂອງການຄຳນວນ.

ປັດຈຸບັນນີ້, ການເພີ່ມຂຶ້ນຂອງການຊ່ວຍເຫຼືອຫຼາຍຝ່າຍແມ່ນເປັນຮູບຂອງເງິນກູ້ສ່ວນປະກອບຂອງການຊ່ວຍເຫຼືອລ້າແມ່ນອາດຈະໜ້ອຍລົງຕາມການເວລາ. ສະຖານະພາບຂອງການເປັນ LDC ແມ່ນກ່ຽວພັນກັບເລື່ອງຂອງການກູ້ເງິນຈາກອົງການພັດທະນາສາກົນ (IDA) ທີ່ເປັນປ່ອງຢ້ຽມຂອງທະນາຄານໂລກ, ແລະໃນເມື່ອ ສປປ ລາວ ຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ ຄາດວ່າປ່ອງຢ້ຽມນີ້ຈະນ້ອຍລົງ ຫຼືຖືກປິດກໍ່ເປັນໄດ້. ເຖິງຢ່າງໃດກໍ່ຕາມ, ບັນດາອົງການຮ່ວມມືຫຼາຍຝ່າຍ ໄດ້ມີທາງເລືອກກ່ຽວກັບການສະໜອງເງິນກູ້ດອກເບ້ຍຕໍ່າຜ່ານ ແລະປ່ອງຢ້ຽມນີ້ຈະເປີດອອກ, ຖ້າຫາກວ່າ ສປປ ລາວ ບໍ່ເປັນ LDC ອີກຕໍ່ໄປ. ໃນປັດຈຸບັນນີ້, ການໃຫ້ທຶນຈາກກອງທຶນສິນເຊື່ອແມ່ນຍັງນ້ອຍ ແລະຫລຸດລົງສຳລັບ ສປປ ລາວ, ແຕ່ການດຳເນີນການເຈລະຈາໂດຍລັດຖະບານ ກໍ່ສາມາດເປີດທາງເລືອກນີ້ອອກໄດ້.

ການໃຊ້ຈ່າຍຕ່າງໆທີ່ດຳເນີນການໂດຍ UN ແມ່ນບໍ່ແມ່ນເງິນກູ້ ແລະບໍ່ເຊື່ອມໂຍງກັບສະຖານະພາບ LDC ແຕ່ຢ່າງໃດ, ແຕ່ພັດໃຫ້ແກ່ຈຸດປະສົງໃນການບັນລຸບັນດາເປົ້າໝາຍ MDG ແລະ (ປັດຈຸບັນນີ້ແມ່ນ SDGs) ເປົ້າໝາຍອື່ນໆ ເຊັ່ນ: ການແກ້ໄຂບັນຫາຢູ່ໃນບັນດາເຂດທີ່ມີການປົນເປື້ອນຍ້ອນບໍ່ແຮ່, ອາຫານສຳລັບຜູ້ທີ່ທຸກຍາກ, ສຸຂະພາບຂອງເດັກນ້ອຍ, ການຕໍ່ຕ້ານ HIV/ AIDS, ແລະອື່ນໆ. UN ໄດ້ມີການໃຊ້ຈ່າຍຢູ່ໃນ ສປປ ລາວ ເປັນຈຳນວນຫຼາຍ, ແຕ່ກໍ່ໄດ້ມີການຫລຸດລົງແດ່ແລ້ວ. ການໄຫຼເຂົ້າຕົວຈິງຂອງທຶນສຳລັບບັນດາກິດຈະກຳພັດທະນາ ຢູ່ໃນ ສປປ ລາວ ໃນອະນາຄົດ ທີ່ສຳຄັນແມ່ນຈະຂຶ້ນກັບຈຳນວນເງິນທີ່ UN ສາມາດລະດົມໄດ້ຈາກບັນດາປະເທດຄູ່ຮ່ວມພັດທະນາ ແລະອື່ນໆ.

ສຳລັບບັນດາອົງການ INGO ແມ່ນມີການເຄື່ອນໄຫວ ຢູ່ໃນ ສປປ ລາວ ໜ້ອຍຫຼາຍ. ໃນກໍລະນີໃດກໍ່ຕາມ, ແມ່ນເຂົາເຈົ້າເຮັດວຽກຕາມບັນດາຫຼັກການ ຊຶ່ງບໍ່ມີຄວາມຈຳເປັນທີ່ຈະເຊື່ອມໂຍງກັບສະຖານະພາບການເປັນ LDC, ແຕ່ຫາກແມ່ນເຮັດຕາມບຸລິມະສິດສາກົນຕ່າງໆຂອງເຂົາເຈົ້າ, ການມີທຶນ ແລະການເຮັດວຽກທີ່ສະດວກສະບາຍ. ບັນດາອົງການ INGO ຢູ່ໃນ ກຳປູເຈຍ ໄດ້ມີການໃຊ້ຈ່າຍເງິນປະມານ 100 ລ້ານໂດລາສະຫະລັດ ຕໍ່ປີ, ໃນຂະນະທີ່ເຂົາເຈົ້າໃຊ້ຈ່າຍ ຢູ່ໃນ ສປປ ລາວ ແມ່ນໜ້ອຍກວ່າ 2 ລ້ານໂດລາສະຫະລັດ ຕໍ່ປີ ຊຶ່ງທັງສອງປະເທດນີ້ແມ່ນເປັນ LDC ແລະ ມີຄຸນລັກສະນະທີ່ຄ້າຍຄືກັນ. ສປປ ລາວ ສາມາດທີ່ຈະຕັ້ງໜ້າຊອກຄົ້ນຫາແຫຼ່ງທຶນນີ້ເພື່ອຄວາມໄດ້ປຽບຂອງຕົນ.

ການຊ່ວຍເຫຼືອລ້າສ່ວນຫຼາຍແມ່ນເປັນການສຶກສາຢູ່ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງຜ່ານການໃຫ້ທຶນການສຶກສາ ໂດຍບໍ່ໄດ້ມີການພິຈາລະນາເຖິງແຫຼ່ງທີ່ມາບໍ່ຈຳເປັນເຊື່ອມໂຍງກັບສະຖານະພາບການເປັນ LDC ແຕ່ຢ່າງໃດ. ໃນຫຼາຍກໍລະນີ, ແມ່ນພາກສ່ວນໜຶ່ງຂອງຂໍ້ຕົກລົງສອງຝ່າຍ ພາຍໃຕ້ ‘‘ການແລກປ່ຽນດ້ານການສຶກສາ ແລະວັດທະນະທຳ’’ ຊຶ່ງຈະມີການເຈລະຈາຄືນໃໝ່ກັບບັນດາປະເທດທີ່ກ່ຽວຂ້ອງ ຫຼັງຈາກທີ່ຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ, ແລະບາງເທື່ອກໍ່ອາດຈະມີການເຈລະຈາກັບຫຼາຍປະເທດກວ່າທີ່ເປັນຢູ່ໃນປັດຈຸບັນນີ້. ເປັນທີ່ແນ່ນອນແລ້ວວ່າ, ການຊ່ວຍເຫຼືອໃນການສ້າງຂີດຄວາມສາມາດຈຳນວນໜ້ອຍໜຶ່ງນັ້ນ ແມ່ນໃຫ້ຍ້ອນວ່າສະຖານະພາບຂອງປະເທດເປັນ LDC ຊຶ່ງຕົ້ນຕໍແມ່ນໃຫ້ແກ່ພະນັກງານຂອງລັດ ແລະອັນນີ້ແມ່ນຈະຕ້ອງໄດ້ຈ່າຍໃນເມື່ອປະເທດຫລຸດພົ້ນອອກຈາກສະຖານະພາບ LDC ແລ້ວ.

ໃນເລື່ອງຂອງ HD (ແລະສະຖານະພາບ LDC), ຖ້າຫາກມີການຖອນ ຫຼືລົບລ້າງການໄຫຼເຂົ້າແບບຜ່ອນຜັນ ມັນກໍ່ຈະມີຜົນກະທົບຕໍ່ກັບຂະແໜງການສຶກສາ, ສາທາລະນະສຸກ, ກະສິກຳ ແລະ ໂຄງລ່າງພື້ນຖານ ຫຼາຍກວ່າຂະແໜງການອື່ນ, ເນື່ອງຈາກການຊ່ວຍເຫຼືອຂອງສາກົນ ຕົ້ນຕໍແມ່ນໄຫຼເຂົ້າສູ່ຂະແໜງການເຫຼົ່ານີ້ (ກ່ອງທີ 2.6). ເຖິງຢ່າງໃດກໍ່ຕາມ, ການຖອນນີ້ແມ່ນຄາດວ່າຈະຄ່ອຍໆເປັນໄປ ຊຶ່ງລັດຖະບານຈະຕ້ອງມີປ່ອງຢ້ຽມສຳລັບຫຼາຍໆປີ ເພື່ອການເພີ່ມ ແລະຈັດສັນຊັບພະຍາກອນໃຫ້ແກ່ບັນດາຂະແໜງການເຫຼົ່ານີ້. ເຖິງແມ່ນວ່າ, ຂະບວນການຈັດສັນນີ້ ແມ່ນມີມູນຄ່າສູງສຳລັບຊັບພະຍາກອນຕ່າງໆທີ່ຈັດສັນໃຫ້ແກ່ HD, ແຕ່ມັນກໍ່ຈຳເປັນທີ່ຈະຕ້ອງໄດ້ເລີ່ມຕົ້ນແຕ່ປັດຈຸບັນເປັນຕົ້ນໄປນີ້ ເນື່ອງຈາກຂະບວນການຕ່າງໆນີ້ແມ່ນມີຈຳນວນເພີ່ມຂຶ້ນ. ສຳລັບປະເທດແລ້ວ, ແມ່ນມັນຈະຕ້ອງໄດ້ໃຊ້ເວລາຫຼາຍປີໃນການຈັດສັນຊັບພະຍາກອນ ເພື່ອໃຫ້ບັນລຸໄດ້ຕາມຄວາມຮຽກຮ້ອງຕ້ອງການດ້ານຊັບພະຍາກອນຂອງຂະແໜງການນີ້ຈາກແຫຼ່ງພາຍໃນປະເທດ..

**ກ່ອງທີ 2.7: ເລື່ອງຂອງ ODA ມັນໄດ້ຊ່ວຍບັນລຸ HD ແລະເປົ້າໝາຍທາງສັງຄົມຕ່າງໆ**

ການຊ່ວຍເຫຼືອຂອງສາກົນໃຫ້ແກ່ ສປປ ລາວ ຈຳນວນຫຼາຍແມ່ນໃຫ້ແກ່ບັນດາຂະແໜງການທີ່ກ່ຽວພັນກັບການພັດທະນາມະນຸດ. ຈຳນວນຈາກບາງແຫຼ່ງບາງທີກໍ່ນ້ອຍ ແລະຖ້າລວມທັງໝົດກໍ່ບໍ່ເກີນ 5% ຂອງ GDP, ແຕ່ມັນກໍ່ໄດ້ຊ່ວຍສະໜັບສະໜູນບັນດາຂະແໜງການທີ່ສຳຄັນ ເຊັ່ນ: ສາທາລະນະສຸກ, ການສຶກສາຂັ້ນພື້ນຖານ, ການກະສິກຳ, ການດຳລົງຊີວິດ, ການລຶບລ້າງຄວາມທຸກຍາກ ແລະອື່ນໆທີ່ຄ້າຍຄືກັນນີ້. ຮູບກ້ອນເຄັກຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນເຖິງຮູບພາບຕົວຢ່າງກ່ຽວກັບວ່າການຊ່ວຍເຫຼືອຂອງສາກົນນັ້ນ ທີ່ໄດ້ໃຊ້ຈ່າຍເຂົ້າໃນຂະແໜງການໃດແດ່. ມັນໄດ້ສະແດງໃຫ້ເຫັນວ່າ ໃນເມື່ອມີວິກິດການດ້ານງົບປະມານຢູ່ໃນຫຼາຍໆປະເທດທີ່ກຳລັງພັດທະນາ ຂະແໜງການທຳອິດທີ່ຈະຖືກຕັດງົບປະມານນັ້ນແມ່ນຂະແໜງການທາງສັງຄົມ. ແຕ່ສຳລັບ ສປປ ລາວແລ້ວ ແມ່ນຈະຕ້ອງຮັບປະກັນວ່າປະຫວັດສາດນັ້ນຈະບໍ່ຊ້ຳຮອຍຄືນຢູ່ໃນທີ່ນີ້ ຖ້າຫາກການຊ່ວຍເຫຼືອຂອງສາກົນຫລຸດລົງຢ່າງຫຼວງຫຼາຍກໍ່ຕາມ.

**ອັດຕາສ່ວນການແຈກຢາຍການຊ່ວຍເຫຼືອຂອງສາກົນຢູ່ຕາມຂະແໜງການຕ່າງໆ**

**(ຄ່າສະເລ່ຍ ຂອງ 5 ປີ)**




ແຫຼ່ງຂໍ້ມູນ: ຖານຂໍ້ມູນຢູ່ໃນ ກະຊວງ ຜທ, ນະຄອນຫຼວງວຽງຈັນ

ສໍາລັບແຜນ 5 ປີ ຄັ້ງທີ VII (2011-2015), ລັດຖະບານໄດ້ເຮັດການປະເມີນຊັບພະຍາກອນຕ່າງໆທີ່ມີຄວາມຈໍາເປັນສໍາລັບການບັນລຸບັນດາເປົ້າໝາຍ MDG ຢູ່ໃນແຜນ. ມັນໄດ້ມີການຄາດຄະເນຄວາມຕ້ອງການຊັບພະຍາກອນສໍາລັບຂະແໜງກະສິກໍາ, ສຶກສາ, ສາທາ, ໂຄງລ່າງພື້ນຖານ (ນໍ້າ, ສຸຂະອະນາໄມ, ຖະໜົນ, ແມ່ນໍ້າ ແລະອື່ນໆ), ສະພາບແວດລ້ອມ, ບົດບາດຍິງ-ຊາຍ. ໂດຍຜ່ານການຈັດກຸ່ມຄືນໃໝ່ຂອງຂໍ້ມູນທີ່ຖືກແຍກກັນ (ບໍ່ໄດ້ລວມກັນ) ຈາກຖານຂໍ້ມູນ AMP (2011-2015) ມັນໄດ້ສະແດງໃຫ້ເຫັນເຖິງການຊ່ວຍເຫຼືອຂອງສາກົນຕໍ່ກັບການກະສິກໍາ/ການພັດທະນາຊົນນະບົດ, ການສຶກສາ, ສາທາລະນາສຸກ, ພະລັງງານ ແລະໂຄງລ່າງພື້ນຖານ. ຈໍານວນທີ່ໄດ້ຮັບຈາກສອງແຫຼ່ງນັ້ນ ແມ່ນໄດ້ຖືກວາດພາບເພື່ອປະເມີນເບິ່ງຄວາມສໍາພັນລະຫວ່າງການຊ່ວຍເຫຼືອຂອງສາກົນ ແລະ ບັນດາເປົ້າໝາຍ MDG/ຄວາມຮຽກຮ້ອງຕ້ອງການເປົ້າໝາຍທາງສັງຄົມ (ຮູບຂ້າງລຸ່ມນີ້). ໃນຂະແໜງການສຶກສາແມ່ນມັນເກີນກວ່າເປົ້າໝາຍ (ຢູ່ເໜືອເສັ້ນ), ໃນຂະນະທີ່ຢູ່ໃນຂະແໜງສາທາລະນາສຸກແມ່ນຫລຸດລົງ (ຕໍ່າກວ່າເສັ້ນ). ໃນເລື່ອງອື່ນໆນັ້ນ ແມ່ນມີຄວາມສອດຄ່ອງແນ່ນອນ; ດັ່ງນັ້ນ, ມັນຈຶ່ງເປັນຫຼັກຖານທີ່ວ່າຄວາມສໍາພັນນັ້ນແມ່ນສູງຫຼາຍ; ເວົ້າແບບສັ້ນໆກໍ່ແມ່ນ ODA ໄດ້ຊ່ວຍໃຫ້ບັນລຸບັນດາເປົ້າໝາຍ MDG/ບັນດາເປົ້າໝາຍທາງສັງຄົມ.

**ODA (ແກນ Y) ແລະຄວາມຕ້ອງການທີ່ຄາດຄະເນໄວ້ (ແກນ X) 2011-2015**




ຈາກການສົນທະນາຜ່ານມາຂ້າງເທິງນີ້ໄດ້ຊີ້ໃຫ້ເຫັນວ່າ ການຫລຸດພົ້ນອອກຈາກສະຖານະພາບ LDC ແມ່ນຄືຈະບໍ່ເປັນໄປໄດ້ພໍປານໃດທີ່ຈະສົ່ງຜົນກະທົບໃນທາງລົບຕໍ່ກັບ ສປປ ລາວ, ໂດຍສະເພາະແມ່ນການສົ່ງອອກທັງສ່ວນປະກອບ ແລະທິດທາງ. ໂດຍບໍ່ຄໍານຶງເຖິງວ່າຈະຢູ່ໃນສະຖານະພາບ LDC ຫຼື ບໍ່, ສປປ ລາວ ຈະຕ້ອງໄດ້ເຮັດໃຫ້ມີຄວາມຫຼາກຫຼາຍທາງເສດຖະກິດ ແລະຍົກລະດັບປະສິດທິພາບ ເພື່ອສ້າງທ່າແຮງໄດ້ປຽບໂດຍສົມທຽບຢູ່ໃນບັນດາຜະລິດຕະພັນຊ່ອງວ່າງທີ່ມີມູນຄ່າເພີ່ມສູງ; ແຕ່ສິ່ງທີ່ເປັນຫ່ວງສໍາລັບ ສປປ ລາວ ນັ້ນ ແມ່ນ ODA ບັນດາການຊ່ວຍເຫຼືອລ້າ, ການຊ່ວຍເຫຼືອດ້ານການໂຍະຍານຜ່ອນຜັນ ແລະການຊ່ວຍເຫຼືອທາງດ້ານວິຊາການອາດຈະຫລຸດລົງແດ່. ເຖິງຢ່າງໃດກໍ່ຕາມ, ປັດຈຸບັນນີ້ມັນກໍ່ໄດ້ມີການຫລຸດລົງແດ່ແລ້ວ, ໂດຍສະເພາະແມ່ນຕັ້ງແຕ່ສົກປີ 2008-2009 ທີ່ມີວິກິດການທາງດ້ານການເງິນຂອງໂລກ ເປັນຕົ້ນມາ, ແລະສປປ ລາວ ຈໍາເປັນຈະຕ້ອງໄດ້ເພີ່ມທະວີຄວາມພະຍາຍາມໃນການລະດົມຊັບພະຍາກອນພາຍໃນ. ທັງການເພີ່ມຄວາມສາມາດໃນການແຂ່ງຂັນ ແລະການເພີ່ມທະວີການລະດົມຊັບພະຍາກອນພາຍໃນ ແມ່ນມີຄວາມຈໍາເປັນ ແລະຫຼີກລ່ຽງບໍ່ໄດ້ ເນື່ອງຈາກມັນມີການປ່ຽນແປງຊຶ່ງຂ້ອນຂ້າງຈະປະເຊີນກັບຄູ່ຮ່ວມຢູ່ໃນ AEC ພາຍຫຼັງທີ່ມີການເຂົ້າຮ່ວມການເຊື່ອໂຍງຢ່າງເຕັມສ່ວນຂອງ ສປປ ລາວ ແລະການຍົກເລີກ/ການຫລຸດຜ່ອນພາສີ ໃນປີ 2018.

## ບັນດາສິ່ງທ້າທາຍຕ່າງໆຂອງການເຊື່ອມໂຍງອາຊຽນ

### ປະຊາຄົມເສດຖະກິດອາຊຽນ (AEC)

ບັນດາ 10 ປະເທດສະມາຊິກ ASEAN ໄດ້ກ້າວສູ່ການຮ່ວມມືກັນຢ່າງໃກ້ຊິດໃນການສ້າງຕະຫຼາດໃຫ້ໃຫຍ່ຂຶ້ນ, ການອະນຸຍາດໃຫ້ມີການເຄື່ອນຍ້າຍທຶນ ແລະແຮງງານສີມືຢ່າງເສລີ (ຕາມອາຊີບທີ່ແນ່ນອນ)[54] ແລະການຫລຸດຜ່ອນ ຫຼືຍົກເລີກສິ່ງກີດຂວາງດ້ານພາສີທັງໝົດຮ່ວມກັນສໍາລັບການເຄື່ອນຍ້າຍສິນຄ້າຢ່າງເສລີ. ຕັ້ງແຕ່ເກີດມີ ASEAN ຂຶ້ນມາ, ຂັ້ນຕອນທີ່ສໍາຄັນທໍາອິດໃນການກ້າວສູ່ການຮ່ວມມືທາງເສດຖະກິດ ແມ່ນໄດ້ເຮັດໃນປີ 2015, ແຕ່ກໍ່ເບິ່ງຄືວ່າຄວາມຄືບໜ້າຂອງມັນແມ່ນຊັກຊ້າກວ່າທີ່ຄາດຫວັງເອົາໄວ້.[55] ເຖິງຢ່າງໃດກໍ່ຕາມ, ເຮັດໄວກໍ່ດີກວ່າຊ້າ, ບັນດາປະເທດຕ່າງໆໄດ້ຄາດຫວັງເພື່ອກ້າວເຂົ້າສູ່ຄວາມໃກ້ສິດທາງດ້ານເສດຖະກິດ, ວັດທະນະທໍາ ແລະສັງຄົມ. ສປປ ລາວ ທີ່ເປັນສະມາຊິກສົມບູນຂອງ ASEAN ແມ່ນຄາດວ່າຈະຖືກເຊື່ອມໂຍງຢ່າງເຕັມສ່ວນເຂົ້າກັບ AEC.

ຄໍາຖາມທີ່ກ່ຽວຂ້ອງກໍ່ຄື: ສະຖານະພາບ LDC ຂອງ ສປປ ລາວ ຈະເປັນບັນຫາຫຼືບໍ່ ໃນເມື່ອເຊື່ອມໂຍງກັບ AEC ຫຼາຍຂຶ້ນ. ໃນຂະນະທີ່ ASEAN ບໍ່ໄດ້ເຂົ້າຮ່ວມຢູ່ໃນຖະແຫຼງການອິສະຕັນບູນ ແລະມີສະມາຊິກ ASEAN ປະເທດໃດທີ່ເປັນສະມາຊິກຂອງປະເທດທີ່ໃຫ້ການຊ່ວຍເຫຼືອເພື່ອການພັດທະນາ (Development Assistance Countries ຫຼື DAC) ຊຶ່ງເຫັນວ່າໃນທາງທິດສະດີແລ້ວແມ່ນມັນຈະບໍ່ມີບັນຫາພໍປານໃດ. ຄືດັ່ງການວິໄຈຢູ່ໃນພາກກ່ອນນີ້ໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ຈະເປັນ LDC ຫຼືບໍ່ນັ້ນ ແມ່ນເປັນເລື່ອງນ້ອຍກວ່າທີ່ມັນຈະຕ້ອງໄດ້ເຮັດສໍາລັບການເປັນສະມາຊິກ ASEAN. ເຖິງຢ່າງໃດກໍ່ຕາມ, ດ້ວຍການເຊື່ອມໂຍງເຂົ້າໃນ AEC ທີ່ຫຼາຍຂຶ້ນ, ຫຼາຍໆແງ່ມູມແມ່ນຈະຕ້ອງໄດ້ເປີດ ແລະບາງຊ່ວງໄລຍະມັນກໍ່ຈະເກີດມີບັນຫາ ບໍ່ວ່າປະເທດຈະເປັນ LDC ຫຼືບໍ່. ເພື່ອເປັນການເລີ່ມຕົ້ນດັ່ງທີ່ໄດ້ກ່າວຢູ່ໃນພາກທີ 1 ນັ້ນ, ການເຮັດວຽກໃນການເປັນຄູ່ຮ່ວມມືກັນແມ່ນດີທີ່ສຸດ ຢູ່ໃນລະຫວ່າງຜູ້ທີ່ມີຄວາມສາມາດເທົ່າໆກັນ ແລະບໍ່ດັ່ງນັ້ນກໍ່ຈະເປັນໄປໃນທາງກົງກັນຂ້າມ.

**<u>ບັນດາກາລະໂອກາດທີ່ເປັນທ່າແຮງດ້ວຍການເຊື່ອມໂຍງ:</u>**

ການກໍ່ສ້າງຖະໜົນເຊື່ອມຕໍ່ລະຫວ່າງຫວຽດນາມ ແລະໄທ (ຕາເວັນອອກ-ຕາເວັນຕົກ–ຜ່ານ ສປປ ລາວ) ແລະລະຫວ່າງພາກໃຕ້ຂອງຈີນ ແລະໄທ (ເໜືອ-ໃຕ້–ໂດຍຜ່ານ ສປປ ລາວ ຄືກັນ); ລະຫວ່າງຖ້ຽວບິນໂດຍກົງຢ່າງເປັນປົກກະຕິລະຫວ່າງ ວຽງຈັນ-ບັງກອກ, ຮ່າໂນ້ຍ, ຄຸນໝິງ, ກົວລາລໍາເປີ ແລະສິງກະໂປ; ເສັ້ນທາງລົດໄຟເຊື່ອມຕໍ່ກັບຈີນ ແມ່ນເປັນບາງໂຄງການພາຍໃຕ້ເສັ້ນທາງ ຫຼືທໍ່ສົ່ງແສ ຫຼືນໍ້າມັນ ທີ່ຈະເພີ່ມທະວີການເຊື່ອມໂຍງຕໍ່ໄປ. ພວກມັນຈະເຮັດໃຫ້ປະເທດມີ ‘‘ການເຊື່ອມຕໍ່ທາງອາກາດ/ທາງໜ້າດິນ’’ ຫຼາຍຂຶ້ນ ເພື່ອປົດປ່ອຍປະເທດອອກຈາກການທີ່ເປັນປະເທດບໍ່ມີທາງອອກສູ່ທະເລ. ການເຊື່ອມໂຍງເຂດເສດຖະກິດພິເສດ (SEZ) ຢູ່ ແຂວງສະຫວັນນະເຂດ ແລະຂົງເຂດອື່ນໆ ກໍ່ຈະຊ່ວຍໃນການຫັນເປັນອຸດສາຫະກໍາຂອງປະເທດຄືກັນ. ສຸດທ້າຍ, ການເຊື່ອມໂຍງທີ່ໄດ້ຮັບການປັບປຸງ ແລະຍົກລະດັບ ຈະເຮັດໃຫ້ເກີດມີຮ້ານອາຫານ ແລະໂຮງແຮມ/ບ້ານພັກ, ກິດຈະກໍາການກໍ່ສ້າງອື່ນໆ, ການທະນາຄານ, ແລະກິດຈະກໍາໂທລະຄົມມະນາຄົມເກີດຂຶ້ນ ແລະຈະເລີນຮຸ່ງເຮືອງ ຢູ່ຕາມແລວຖະໜົນແລະເສັ້ນທາງລົດໄຟ. ສປປ ລາວ ຈະມີການເຂົ້າເຖິງຕະຫຼາດ ASEAN ທີ່ມີປະຊາກອນປະມານ 500 ລ້ານຄົນ ແລະພາກໃຕ້ຂອງຈີນໄດ້ງ່າຍຂຶ້ນ. ທັງໝົດນີ້ແມ່ນພວກມັນຈະຊ່ວຍໃນການປັບປຸງ GNI (ເພີ່ມຄ່າຂຶ້ນ) ແລະ EVI (ຫລຸດຄ່າລົງ).

ໃນລະຫວ່າງຊຸມປີໃກ້ໆຜ່ານມານີ້, ສປປ ລາວ ສາມາດດຶງດູດບໍລິສັດຮ່ວມຊາດໄດ້ຈໍານວນໜຶ່ງ, ລວມທັງນິກອນ, ເອຊິນເລີ, ໂຕໂຢຕາ, ມິດຊູບິຊິ ແລະໂປລີຄອມ ຊຶ່ງເປັນຜົນເຮັດໃຫ້ມີການເຕີບໂຕຢ່າງໄວວາຢູ່ໃນຂະແໜງການປະກອບ ແລະອາໄຫຼ່ເຄື່ອງມື. ດ້ວຍການພັດທະນານີ້, ສປປ ລາວ ໄດ້ມີການເລີ່ມຕົ້ນສົ່ງອອກອາໄຫຼ່ເຄື່ອງມືຕ່າງໆ (ເຊັ່ນ: ອາໄຫຼ່ກ້ອງຖ່າຍຮູບ) ຊຶ່ງເພີ່ມຂຶ້ນຈາກຖານທີ່ຕໍ່າ ໃນປີ 2013 ມາເປັນປະມານ 300 ລ້ານໂດລາສະຫະລັດ ໃນປີ 2015. ອັນນີ້ສະແດງວ່າ ສປປ ລາວ ສາມາດເຂົ້າຮ່ວມຕ່ອງໂສ້ລາຄາໃນຂົງເຂດ ແລະໃນໂລກ ໄດ້ຢ່າງມີປະສິດທິຜົນສ່ວນໜຶ່ງແລ້ວ, ດັ່ງນັ້ນການເຊື່ອມໂຍງກັບ AEC ແມ່ນມີທາງເປັນໄປໄດ້ທີ່ມັນຈະເປັນ

ການສົ່ງເສີມໃນດ້ານນີ້ຕື່ມ.

ຍ້ອນລະບຽບ ແລະຫຼັກການຕ່າງໆກ່ຽວກັບການເຮັດທຸລະກິດຢູ່ໃນປະເທດຕ່າງໆ ໄດ້ຫຍັບເຂົ້າໃກ້ຄຽງກັນ, ການເຮັດທຸລະກິດກໍ່ຈະງ່າຍດາຍຂຶ້ນ. ບາງຂະແໜງການທີ່ ສປປ ລາວ ສາມາດໄດ້ຮັບທ່າແຮງໄດ້ປຽບໂດຍສົມທຽບຍ້ອນການເຊື່ອມໂຍງ ແມ່ນ: ການປຸງແຕ່ງຜະລິດຕະພັນກະສິກໍາ (ຈາກການມີສ່ວນເກີນດ້ານການກະສິກໍາ, ລວມທັງຊາ ແລະກາເຟ); ການທ່ອງທ່ຽວທີ່ມີມູນຄ່າເພີ່ມສູງ; ການປະກອບສິນຄ້າເອເລັກໂຕຼນິກ ແລະເຄື່ອງຈັກຕ່າງໆ; ການກະຈາຍໄຟຟ້າ; ແລະບໍ່ແຮ່. ດ້ວຍການເຄື່ອນຍ້າຍແຮງງານສີມືຢ່າງເສລີ ແມ່ນມີຄວາມເປັນໄປໄດ້ທີ່ແຮງງານສີມືຈະເຂົ້າມາສູ່ ສປປ ລາວ ຊຶ່ງມັນຈະຊ່ວຍໃນການຖ່າຍໂອນເຕັກໂນໂລຢີ/ສີມືໃຫ້ແກ່ແຮງງານລາວ.

ມັນຍັງມີກາລະໂອກາດຕ່າງໆເພື່ອເພີ່ມທະວີດ້ານການສຶກສາ. ASEAN ໄດ້ມີບາງສະຖາບັນການສຶກສາທີ່ໄດ້ມາດຕະຖານສູງ ຢູ່ ສິງກະໂປ, ມາເລເຊຍ, ຟີລິບປິນ ແລະໄທ; ແລະ ບາງສະຖາບັນສໍານານງານພິເສດ ຢູ່ ອິນໂດເນເຊຍ ແລະບຣູນາຍ. ເນື່ອງຈາກການແລກປ່ຽນດ້ານວັດທະນະທໍາ ແມ່ນພາກສ່ວນໜຶ່ງຂອງຂະບວນການເຊື່ອມໂຍງ; ສະນັ້ນ ຈຶ່ງເປັນກາລະໂອກາດສໍາລັບສະຖາບັນການສຶກສາ ຂອງ ສປປ ລາວ ທີ່ຈະເຊື່ອມໂຍງກັບສະຖາບັນການສຶກສາຢູ່ໃນຂົງເຂດເຫຼົ່ານັ້ນ ເພື່ອຍົກລະດັບມາດຕະຖານຂອງຕົນ. ການແລກປ່ຽນຄະນະ ແລະນັກສຶກສາ/ຜູ້ໄດ້ຮັບທຶນການສຶກສາ ກໍ່ຈະຊ່ວຍເຮັດໃຫ້ຜູ້ຄົນມີຄວາມເຂົ້າໃຈ ແລະມີປະຕິກິຍາຕໍ່ໂລກພາຍນອກ ແລະຫລຸດຜ່ອນການຢູ່ໂດດດ່ຽວຢ່າງເປັນລະບົບ.

ທ້າຍທີ່ສຸດ, ກ່ຽວກັບການທ່ອງທ່ຽວແມ່ນ ສປປ ລາວ ຄວນຈະດຶງດູດນັກທ່ອງທ່ຽວມາຈາກແຫຼ່ງອື່ນ ເກີນກວ່າຕະຫຼາດປະເພນີນິຍົມ ຄື: ເກີນກວ່ານັກທ່ອງທ່ຽວໄທ ແລະຫວຽດນາມ ດ້ວຍການເພີ່ມທະວີການຮ່ວມມືຜູກພັນກັບຜູ້ທີ່ດໍາເນີນກິດຈະກໍາການທ່ອງທ່ຽວທີ່ມີປະສົບປະການສູງ ຢູ່ໃນບັນດາປະເທດ ASEAN ຕ່າງໆ.

ເຖິງຢ່າງໃດກໍ່ຕາມ, ຜົນປະໂຫຍດທາງເສດຖະກິດຈາກການເຊື່ອມໂຍງ ແມ່ນເປັນໄປບໍ່ໄດ້ແບບອັດຕະໂນມັດ ຫຼືເຫັນໄດ້ງ່າຍ. ນອກຈາກການແຂ່ງຂັ້ນທີ່ເພີ່ມຂຶ້ນແລ້ວ, ການເຊື່ອມໂຍງຢ່າງເຕັມສ່ວນ ກໍ່ຍັງກໍ່ໃຫ້ເກີດສິ່ງທ້າທາຍອື່ນໆອີກ ເຊັ່ນ: ຊ່ອງວ່າງດ້ານການເງິນ ແລະນະໂຍບາຍທີ່ຫລຸດລົງ ເນື່ອງຈາກການຕັດຮອນດ້ານພາສີ ແລະການຫັນອັດຕາພາສີໃຫ້ເປັນອັນດຽວກັນ ຊຶ່ງອາດຈະເປັນໄປໄດ້ທີ່ຈະຈໍາກັດຄວາມອາດສາມາດ ຂອງ ສປປ ລາວ ໃນການເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ແລະສາມາດແຂ່ງຂັນໄດ້.

**ກ່ອງທີ 2.8: ບັນດາອຸດສາຫະກໍາຕາມປະເພນີນິຍົມ ແລະອຸດສາຫະກໍາທີ່ບໍ່ແມ່ນປະເພນີນິຍົມຢູ່ໃນ ສປປ ລາວ - ມີຄວາມຈໍາເປັນທີ່ຕ້ອງໄດ້ເຮັດໃຫ້ມັນຫຼາຍຂຶ້ນກວ່າເກົ່າ**

## ບັນດາອຸດສາຫະກໍາຕາມປະເພນີນິຍົມ:

ໃນຂະນະທີ່ການຜະລິດຊາແມ່ນຍັງບໍ່ທັນກວ້າງຂວາງຫຼາຍເທື່ອ ຊຶ່ງພຽງແຕ່ຈໍາກັດຢູ່ໃນ ເມືອງຜົ້ງສາລີ ແລະເມືອງຍອດອູຂອງແຂວງຜົ້ງສາລີ, ແລະເຂດພູພຽງບໍລະເວນຢູ່ໃນພາກໃຕ້ຂອງປະເທດເທົ່ານັ້ນ, ຄວາມເປັນໄປໄດ້ໃນການຂະຫຍາຍການປູກພືດອຸດສາຫະກໍານີ້ແມ່ນຍັງມີຢູ່ຫຼາຍ. ແຜນການ 5 ປີ ຄັ້ງທີ VIII ຂອງ ສປປ ລາວ (2016-2020) ໄດ້ເນັ້ນຢໍ້າຄືນໃໝ່ກ່ຽວກັບເລື່ອງນີ້. ໃນປັດຈຸບັນ, ຜົນຜະລິດແມ່ນໄດ້ໜ້ອຍກວ່າ 100 ໂຕນຕໍ່ປີ, ແຕ່ວ່າມັນມີຄວາມເປັນໄປໄດ້ທີ່ຈະເພີ່ມຜົນຜະລິດນີ້ຂຶ້ນ ເນື່ອງຈາກຄວາມຕ້ອງການຜະລິດຕະພັນນີ້ຢູ່ໃນປະເທດຈີນແມ່ນມີຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍ່ຕາມ, ການປູກຊາໃນປັດຈຸບັນນີ້ ແມ່ນເຮັດໂດຍຜູ້ຖືຄອງທີ່ດິນກະສິກໍາຂະໜາດນ້ອຍເທົ່ານັ້ນທີ່ຖືກແນະນໍາໃຫ້ປູກໃນເບື້ອງຕົ້ນ ກໍ່ແມ່ນເພື່ອສົ່ງເສີມໃຫ້ປະຊາຊົນຢຸດຕິການປູກຝິ່ນເທົ່ານັ້ນຊຶ່ງບໍ່ໄດ້ຄິດວ່າມັນຈະຢູ່ໃນຕະຫຼາດໄດ້ຄືກັນກັບກາເຟທີ່ຖືກຄວບຄຸມດ້ວຍຜູ້ຄ້າລາຍໃຫຍ່ຫຼາຍຄົນ. ລາຄາຊາແມ່ນມີການຂຶ້ນລົງຫຼາຍສໍາລັບຜູ້ຜະລິດ ຊຶ່ງເລື່ອງນີ້ແມ່ນຈະຕ້ອງໄດ້ມີການຊອກຄົ້ນຫາວິທີແກ້ໄຂຕໍ່ໄປ.

ສ່ວນການທ່ອງທ່ຽວແມ່ນມີການຂະຫຍາຍຕົວຢ່າງກວ້າງຂວາງແລ້ວ ຊຶ່ງມີຢູ່ປະມານ 3,6 ລ້ານເທື່ອຄົນທີ່ເຂົ້າມາທ່ອງທ່ຽວຢູ່ໃນ ສປປ ລາວ ແລະ ຖ້າລວມກັບຄົນລາວທີ່ທ່ອງທ່ຽວຢູ່ໃນປະເທດ ແມ່ນມີຢູ່ປະມານ 6,4 ລ້ານຄົນ. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງເຫັນວ່າ ປະມານ 57% ຂອງນັກທ່ອງທ່ຽວ ແມ່ນມາຈາກປະເທດໄທ ແລະເປັນນັກທ່ອງທ່ຽວຜ່ານແດນທີ່ມາຢ້ຽມຢາມສະຖານທີ່ທາງສາສະໜາພຸດແລ້ວກັບໃນວັນດຽວກັນ. ທັດຈາກນັ້ນກໍ່ແມ່ນນັກທ່ອງທ່ຽວຈາກຫວຽດນາມ ຊຶ່ງກວມເອົາປະມານ 25% ແລະສ່ວນຫຼາຍຂອງເຂົາເຈົ້າແມ່ນຜູ້ທີ່ມາເຮັດທຸລະກິດໃນໄລຍະສັ້ນ. ອັນດັບສາມ, ແມ່ນນັກທ່ອງທ່ຽວຈາກ ສປ ຈີນ ຊຶ່ງກວມປະມານ 7%, ແລະນັກທ່ອງທ່ຽວຈາກປະເທດຕາເວັນຕົກ (ລວມທັງຍີ່ປຸ່ນ) ກໍ່ກວມເອົາປະມານ 7%. ເພາະສະນັ້ນ, ຮູບແບບການທ່ອງທ່ຽວນີ້ ຈຶ່ງເຮັດໃຫ້ລາຍໄດ້ຂອງຂະແໜງການຍັງຈໍາກັດ (ບໍ່ສູງ).

ຂະແໜງການທ່ອງທ່ຽວ ແມ່ນຈະຕ້ອງໄດ້ມີການຂະຫຍາຍກວ້າງອອກ ໃນເລື່ອງຂອງການດຶງດູດນັກທ່ອງທ່ຽວຈາກປະເທດທີ່ມີລາຍຮັບສູງ ແລະໃຊ້ເວລາໃນການພັກເຊົາ/ທ່ອງທ່ຽວຫຼາຍຂຶ້ນ ເພື່ອສົ່ງເສີມ/ເພີ່ມລາຍໄດ້ຂອງຂະແໜງການໃຫ້ຫຼາຍຂຶ້ນ. ສໍາລັບອັນນີ້, ໃນຂະນະທີ່ລັດຖະບານໄດ້ກໍານົດສະຖານທີ່ທ່ອງທ່ຽວໃໝ່ຕ່າງໆ, ບັນດາທິດທາງໃໝ່ ເຊັ່ນ: ການທ່ອງທ່ຽວນິເວດ, ການທ່ອງທ່ຽວທາງວັດທະນະທໍາ, ການທ່ອງທ່ຽວເພື່ອສຸຂະພາບ, ການທ່ອງທ່ຽວເພື່ອຄວາມບັນເທີງທາງທໍາມະຊາດ, ການທ່ອງທ່ຽວເພື່ອການສຶກສາຮຽນຮູ້ ແລະການທ່ອງທ່ຽວດ້ານກິລາອື່ນໆ ແມ່ນຮຽກຮ້ອງໃຫ້ມີການສົ່ງເສີມ, ຊຶ່ງພື້ນທີ່ພູມມີປະເທດທີ່ເປັນພູ ແລະພູສູງຫຼາຍຄືກັນກັບ ສປປ ລາວ ນີ້ ແມ່ນມີຄວາມສາມາດເປັນໄປໄດ້ໃນການສະເໜີ ຫຼືເລັ່ງໃສ່ການທ່ອງທ່ຽວແບບນີ້.

## ອຸດສາຫະກໍາທີ່ບໍ່ແມ່ນປະເພນີນິຍົມ:

ລັດຖະບານໄດ້ມີການສ້າງຕັ້ງເຂດເສດຖະກິດພິເສດ (SEZ) ຂຶ້ນ ຊຶ່ງເປັນບ່ອນທີ່ອຸດສາຫະກໍາໃໝ່ຕ່າງໆໄດ້ຖືກສ້າງຕັ້ງຂຶ້ນ ເຊັ່ນ: ການປະກອບລົດໂອໂຕ (ຮຸນໄດຂອງໂຄລາວ, ຮອນດາ ແລະໂຕໂຍຕາ), ແວ່ນຕາ, ການປະກອບກ້ອງຖ່າຍຮູບ (ນິກອນ), ການປຸງແຕ່ງຫີນມີຄ່າ/ຫີນ, ການປຸງແຕ່ງຜະລິດຕະພັນກະສິກໍາ, ການປຸງແຕ່ງຢາງພາລາ, ແລະໂຮງງານຊີມັງ.

ສິ່ງເຫຼົ່ານີ້ແມ່ນເປັນການເພີ່ມເຕີມໃຫ້ແກ່ໂຮງງານຕໍ່າແຜ່ນ ແລະ ຕັດຫຍິບທີ່ເປັນປະເພນີນິຍົມມາແລ້ວ. ເຖິງຢ່າງໃດກໍ່ຕາມ, ພື້ນຖານຂອງມັນແມ່ນຍັງນ້ອຍ ຊຶ່ງຈະຕ້ອງໄດ້ເຮັດໃຫ້ຂອບເຂດ ແລະຂະໜາດກວ້າງຂວາງໃຫຍ່ໂຕຂຶ້ນ ໂດຍຜ່ານການດຶງດູດການລົງທຶນຈາກພາຍໃນ ແລະຕ່າງປະເທດເຂົ້າໃນຂະແໜງການນີ້ ແລະການຍົກລະດັບຂອງສີມືແຮງງານ. ສປປ ລາວ ແມ່ນຍັງຈຳເປັນທີ່ຈະຕ້ອງໄດ້ສ້າງເງື່ອນໄຂໃຫ້ແກ່ການລົງທຶນຢູ່ໃນປະເທດຫຼາຍຂຶ້ນ ເພື່ອເພີ່ມເຕີມໃຫ້ແກ່ຄູ່ຮ່ວມທີ່ເປັນປະເພນີນິຍົມມາແລ້ວ ເຊັ່ນ: ຈີນ, ໄທ ແລະຫວຽດນາມ ຜູ້ທີ່ມີການລົງທຶນໃນປັດຈຸບັນນີ້ ກວມເອົາເຖິງ 80% ຂອງ FDI ທັງໝົດ, ຕົ້ນຕໍແມ່ນຢູ່ໃນຂະແໜງການອຸດສາຫະກຳທີ່ອີງໃສ່ຊັບພະຍາກອນທຳມະຊາດ.

ແຫຼ່ງຂໍ້ມູນ: ລັດຖະບານ ແຫ່ງ ສປປ ລາວ (n.d.); ດວງຄຳ ແລະ ແດນກາຍາພິຈິດ (n.d.) https://www.teaguardian. com/quality-varieties/tea-varieties/laos-shengcha/9/, ແລະ ຍັງເບິ່ງໄດ້ຢູ່ໃນບົດຄວາມກ່ຽວກັບການທ່ອງທ່ຽວທີ່ໜັງສືພິມຂອງໄທໄດ້ຈັດພິມໃນມໍ່ໆມານີ້, The Nation, http://www.nationmultimedia.com/aec/Tourism-is-Laos-second-highest-income-earner-30206071.html; ແລະຕໍ່ດ້ວຍ, https://en.wikipedia.org/wiki/Tourism in_Laos

**ກ່ອງທີ 2.9: ການສະໜັບສະໜູນການເຕີບໂຕໃນຂະແໜງທ່ອງທ່ຽວ: ບົດຮຽນຈາກ ປະເທດ ເຄັບເວີດ (Cape Verde)**

ປະເທດ ເຄັບເວີດ, ທີ່ຫລຸດພົ້ນອອກຈາກສະຖານະພາບ LDC ໃນປີ 2007 ແມ່ນເຫດການທີ່ສຳຄັນ ແລະການປ່ຽນແປງຢ່າງໄວວາຂອງຂະແໜງການທ່ອງທ່ຽວ. ມັນໄດ້ປ່ຽນຈາກທີ່ຮູ້ກັນໜ້ອຍວ່າເປັນປະເທດເກາະນ້ອຍໆໜຶ່ງໄປສູ່ຈຸດໝາຍປາຍທາງການທ່ອງທ່ຽວຂອງຜູ້ຄົນຈຳນວນຫຼາຍ. ນັກທ່ອງທ່ຽວທີ່ມາຢ້ຽມຢາມ ປະເທດນ້ອຍໆນີ້ໄດ້ເພີ່ມຂຶ້ນຈາກ 67.042 ຄົນ ໃນປີ 1999 ເປັນ 497.000 ຄົນ ໃນປີ 2015, ອັດຕາການເຕີບໂຕສະເລ່ຍຕໍ່ປີແມ່ນ 14%. ຈຳນວນເງິນທີ່ໄດ້ຮັບຈາກນັກທ່ອງທ່ຽວໄດ້ເພີ່ມຂຶ້ນຢ່າງໄວວາ ເປັນສອງເທົ່າຕົວ ຢູ່ທີ່ 28% ຕໍ່ປີ, ອັນເປັນຜົນມາຈາກລາຍໄດ້ຕໍ່ຫົວນັກທ່ອງທ່ຽວທີ່ສູງ ແລະເທົ່າກັບ 44,5% ຂອງ GDP (ທາງກົງ, ທາງອ້ອມ ແລະການຈູງໃຈ). ຜົນມາຈາກການເຕີບໂຕຢ່າງດີເລີດໃນຂະແໜງການທ່ອງທ່ຽວ ໄດ້ເຮັດໃຫ້ ເຄັບເວີດ ບັນລຸໄດ້ອັດຕາການເຕີບໂຕຂອງ GDP ສະເລ່ຍແມ່ນ 6,5% ຕໍ່ປີ ໃນທົດສະວັດທີ່ຜ່ານມາ.

ຕາມປົກກະຕິແລ້ວ, ການປ່ຽນແປງທີ່ຊັບຊ້ອນຄົບຊຸດແນວນັ້ນ ແມ່ນຈະຕ້ອງໄດ້ໃຊ້ເວລາ ແລະໄດ້ຮັບການຊ່ວຍເຫຼືອຈາກນະໂຍບາຍຂອງລັດຖະບານ. ລັດຖະບານຂອງ ເຄັບເວີດ ໄດ້ເຮັດການນຳພາສາທາລະນະຢ່າງແຂງແຮງສຳລັບການທ່ອງທ່ຽວ ແລະໄດ້ພັດທະນາສະພາບແວດລ້ອມຂອງການລົງທຶນໃນທາງບວກ. ດ້ວຍເສດຖະກິດທີ່ມີຄວາມໝັ້ນຄົງ ໄດ້ເປັນການດຶງດູດການລົງທຶນຂອງຕ່າງປະເທດເຂົ້າໃນຂະແໜງການທ່ອງທ່ຽວ ແລະເຮັດໃຫ້ມັນຈະເລີນງອກງາມຂຶ້ນ.

- ເຄັບເວີດ ໄດ້ດຳເນີນການໃນທາງບຸກເຂົ້າໃນການລົງທຶນໃສ່ຂະແໜງການທ່ອງທ່ຽວ. ການທີ່ລັດຖະບານໄດ້ຈັດຫາທີ່ດິນ ແລະສິ່ງຈູງໃຈດ້ານການລົງທຶນຕ່າງໆ, ລວມທັງເສດຖະກິດທີ່ມີຄວາມໝັ້ນຄົງໄດ້ເຮັດໃຫ້ການທ່ອງທ່ຽວຂອງປະເທດນີ້ມີການເຕີບໂຕຢ່າງໄວວາ.

- ສະໜາມບິນທີ່ມີຄຸນນະພາບສູງ, ບັນດາສິ່ງອຳນວຍຄວາມສະດວກໃນການສ້ອມແປງເຮືອບິນທີ່ດີ ແລະບັນດານະໂຍບາຍທີ່ໃຫ້ການສະໜັບສະໜູນການການບິນ ແມ່ນມີຄວາມສຳຄັນຫຼາຍສຳລັບການເພີ່ມການເຂົ້າມາຂອງຈຳນວນນັກທ່ອງທ່ຽວ. ປະເທດນີ້ໄດ້ມີສະໜາມບິນທີ່ດີ ແລະຖືກຮັບຮອງໃຫ້ເປັນສະໜາມບິນປະເພດໜຶ່ງ ຈາກລັດຖະບານຂອງສະຫະລັດອາເມລິກາ.

ການເຕີບໂຕຂອງການທ່ອງທ່ຽວໄດ້ເກີດຂຶ້ນຢ່າງໄວວາ ແລະທັງນຳໄປສູ່ສິ່ງທ້າທາຍ ສຳລັບອຳນາດການປົກຄອງຂອງ ເຄັບເວີດ. ການເຕີບໂຕຢ່າງໄວວາຂອງການທ່ອງທ່ຽວ ໄດ້ພາໃຫ້ເກີດມີຊ່ອງວ່າງຕ່າງໆກ່ຽວກັບການອະນຸລັກ, ໂຄງລ່າງພື້ນຖານ ແລະການເຊື່ອມຕໍ່ກັບປະຊາຊົນໃນທ້ອງຖິ່ນ. ໃນປັດຈຸບັນນີ້, ແມ່ນລັດຖະບານຕ້ອງໄດ້ແກ້ໄຂກ່ຽວກັບເລື່ອງການພັດທະນາທີ່ບໍ່ເທົ່າທຽມກັນ ແລະການຮົ່ວໄຫຼຂອງລາຍໄດ້ທີ່ສູງ ດ້ວຍການເຮັດໃຫ້ການທ່ອງທ່ຽວມີການເຊື່ອມໂຍງກັນ ແລະເປັນການທ່ອງທ່ຽວເພື່ອທຸກຄົນຢ່າງເລິກເຊິ່ງ. ສຳລັບການຮັກສາການເຕີບໂຕໃນໄລຍະຍາວ ແມ່ນຍັງມີຄວາມຮຽກຮ້ອງຕ້ອງການ ຂະແໜງການເອກະຊົນທີ່ມີຄວາມຊ່ຽວຊານ ແລະກຳລັງແຮງງານທີ່ມີສີມື.

ແຫຼ່ງຂໍ້ມູນ: Christie et al. (2013).

**<u>ບັນດາຄວາມສ່ຽງທີ່ຈະຕ້ອງໄດ້ມີການຄຸ້ມຄອງ:</u>**

ອັນທີໜຶ່ງ, ຕະຫຼາດດ່ຽວແມ່ນຈະມີການແຂ່ງຂັນສູງ, ຢ່າງໜ້ອຍກໍ່ຢູ່ໃນຂະແໜງອຸດສາຫະກຳການຜະລິດຍົກເວັ້ນໄຟຟ້າ ແລະໂລຫະ/ແຮ່ທາດຕ່າງໆ, ການສົ່ງອອກສ່ວນໃຫຍ່ໄປສູ່ບັນດາປະເທດ ASEAN ຍັງແມ່ນຜະລິດຕະພັນກະສິກຳ ແລະອຸດສາຫະກຳການຜະລິດແບບປະເພນີນິຍົມທີ່ມີຂະໜາດນ້ອຍ. ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການເຊື່ອມໂຍງ ASEAN ຢ່າງມີປະສິດທິຜົນ, ມັນແມ່ນຄວາມທ້າທາຍໃນການເພີ່ມຂະໜາດຂອງການດຳເນີນການ ແລະ ເພີ່ມຄຸນນະພາບ; ແລະ ສຳລັບອັນນີ້ແລ້ວ ທັງທຶນ ແລະສີມື ແມ່ນສິ່ງຈຳເປັນທີ່ຈະຕ້ອງມີ. ນອກຈາກນັ້ນ, ກໍ່ຕ້ອງມີຄວາມລະມັດລະວັງເພື່ອປົກປັກຮັກສາສິ່ງແວດລ້ອມ. ການລົງທຶນ ແລະຄວາມພະຍາຍາມເພື່ອກ້າວໄປຂ້າງໜ້າ, ທັງໝົດເຫຼົ່ານີ້ແມ່ນມີຄວາມຈຳເປັນ ເພື່ອບໍ່ໃຫ້ປະເທດຕິດຄ້າງຢູ່ກັບການຂຶ້ນກັບອຸດສາຫະກຳຂຸດຄົ້ນບໍ່ແຮ່ ທີ່ບໍ່ມີການຍົກລະດັບສະຖານະພາບຂອງ HD.

ອັນທີສອງ, ດ້ວຍການຄາດວ່າອັດຕາພາສີຈະຕໍ່າລົງ ແລະສິ່ງກີດຂວາງອື່ນໆທີ່ບໍ່ແມ່ນພາສີຈະຫລຸດລົງແລ້ວລັດຖະບານກໍ່ຈະສູນເສຍລາຍໄດ້ (ຈາກພາສີ) ສິ່ງນີ້ແມ່ນຈະຕ້ອງຖືກຊົດເຊີຍຜ່ານອາກອນທາງກົງ ຊຶ່ງອັນນີ້ກໍ່ແມ່ນຄວາມທ້າທາຍອີກອັນໜຶ່ງ. ການຫລຸດຜ່ອນພາສີ ແລະສິ່ງກີດຂວາງທີ່ບໍ່ແມ່ນພາສີ ແມ່ນໝາຍເຖິງ ສປປ ລາວຈະຕ້ອງໄດ້ຊອກຫາເຄື່ອງມືຕ່າງໆທີ່ມີອຳນາດ ເພື່ອເລັ່ງລັດເຮັດໃຫ້ເສດຖະກິດຂອງມັນມີຄວາມຫຼາກຫຼາຍ ແລະສ້າງທ່າແຮງໃນການແຂ່ງຂັນຢູ່ໃນຜະລິດຕະພັນຊ່ອງວ່າງທີ່ມີມູນຄ່າເພີ່ມສູງ.

ອັນທີສາມ, ກ່ຽວກັບການຊອກຫາລາຍໄດ້ທີ່ດີກວ່າ, ການທີ່ ສປປ ລາວ ມີຈຳນວນແຮງງານທີ່ມີສີມືໜ້ອຍນັ້ນ ກໍ່ຍັງເປັນສິ່ງບໍ່ດີຕໍ່ກັບການຫລຸດພົ້ນອອກຈາກ LDC ຂອງມັນ.[56] ສປປ ລາວ ຈຳເປັນຈະຕ້ອງໄດ້ສ້າງສິ່ງຈູງໃຈຕ່າງໆເພື່ອປ້ອງກັນບັນຫາສະໝອງໄຫຼ. ການເຄື່ອນຍ້າຍອອກຂອງແຮງງານສີມື ກໍ່ສາມາດຍົກລະດັບການໄຫຼເຂົ້າຂອງການສົ່ງເງິນກັບບ້ານຂອງ ສປປ ລາວ ໄດ້, ແຕ່ກໍ່ພົບວ່າຄວາມບໍ່ສະເໝີພາບແມ່ນຂີ້ຮ້າຍລົງ.[57]

ອັນທີສີ່, ການຄ້າ ແລະການລົງທຶນພາຍໃນ ASEAN ແມ່ນຍັງມີຄວາມຈຳກັດຫຼາຍ ຊຶ່ງກວມເອົາພຽງແຕ່ປະມານ 25% ຂອງການຄ້າທັງໝົດ ແລະ 16% ຂອງ FDI ທັງໝົດ. ການສົ່ງອອກ ແລະນຳເຂົ້າສ່ວນໃຫຍ່ຂອງ ASEAN ແມ່ນເຄື່ອງອາໄຫຼ່ ແລະຜະລິດຕະພັນເຄື່ອງປະກອບເອລັກໂຕຼນິກ ແລະລົດໂອໂຕ. ດັ່ງນັ້ນ, ການເຊື່ອມໂຍງຕະຫຼາດພາຍໃນ ASEAN ຈຶ່ງບໍ່ແມ່ນຕົວຂັບເຄື່ອນທີ່ສຳຄັນຂອງການເຊື່ອມໂຍງ ASEAN. ສ່ວນ AEC ແມ່ນຂ້ອນຂ້າງເປັນໄປໄດ້ຫຼາຍທີ່ຈະນຳມາຊຶ່ງ “ການເຊື່ອມໂຍງການຜະລິດ” ຫຼາຍກວ່າການເຊື່ອມໂຍງການຕະຫຼາດ, ນັ້ນແມ່ນການເຊື່ອມໂຍງຢ່າງເລິກເຊິ່ງກັບ “ໂຮງງານຂອງ ASEAN” ຊຶ່ງເປັນອົງປະກອບທີ່ສຳຄັນໜຶ່ງຂອງ “ຕ່ອງໂສ້ມູນຄ່າໂລກ” ທີ່ມະຫັດສະຈັນ. FDI ຈຳນວນຫຼາຍແມ່ນລົງທຶນເຂົ້າໃນຂະແໜງຊັບພະຍາກອນທຳມະຊາດ ແລະມີສ່ວນຮ່ວມທີ່ຕໍ່າຢູ່ໃນຕ່ອງໂສ້ມູນຄ່າຂອງໂລກ/ຂົງເຂດ ຊຶ່ງມັນຈະໃຫ້ຜົນປະໂຫຍດແກ່ ສປປ ລາວ ໃນໄລຍະຍາວບໍ່ຫຼາຍ. ມັນຈະຕ້ອງໃຫ້ສາມາດເຂົ້າຮ່ວມຢູ່ໃນຕ່ອງໂສ້ມູນຄ່າສູງໄດ້ຈຶ່ງຈະເປັນການດີ.

ເລື່ອງຕ່າງໆທີ່ກ່າວມາຂ້າງເທິງນີ້ ແມ່ນຈຳເປັນຈະຕ້ອງໄດ້ມີການຮັບຮູ້ເປັນຢ່າງດີ ກ່ຽວກັບຄວາມກ້າວໜ້າ ແລະຂັ້ນຕອນສຳຄັນຕ່າງໆທີ່ຈະຕ້ອງໄດ້ເຮັດ ເພື່ອຍົກສູງຄວາມສາມາດແຂ່ງຂັນ ດ້ວຍການປັບປຸງຄຸນນະພາບຂອງແຮງງານ/ສີມື, ຜະລິດຕະພັນ ແລະດ້ວຍການຊອກຫາຕະຫຼາດໃໝ່. ແຕ່ລະຢ່າງທີ່ກ່າວມານີ້ ແມ່ນຮຽກຮ້ອງຕ້ອງການໆ

ລົງທຶນເຂົ້າໃສ່ຜູ້ຄົນ ແລະຄວາມມີຫົວຄິດທາງທຸລະກິດຂອງແຮງງານລາວອີກທາງໜຶ່ງ, ແລະແບບວິທີການການຄຸ້ມຄອງເສດຖະກິດມະຫາພາກ ເພື່ອໃຫ້ສາມາດຍົກສູງຜະລິດຕະພາບຂອງການລົງທຶນ ເຂົ້າໃສ່ HD ແລະ ໂຄງລ່າງພື້ນຖານ.

ດັ່ງນັ້ນ, ການເຊື່ອມໂຍງທາງເສດຖະກິດຢ່າງກວ້າງຂວາງ ຂອງ ສປປ ລາວ ເຂົ້າໃນ AEC ແມ່ນມີທັງກາລະໂອກາດ ແລະສິ່ງທ້າທາຍຕ່າງໆ. ໃນເບື້ອງທາງບວກນັ້ນ, ແມ່ນມັນຈະມີການຂະຫຍາຍໂຄງລ່າງພື້ນຖານ ແລະການເຂົ້າເຖິງຕະຫຼາດ ຊຶ່ງແຕ່ລະຢ່າງນີ້ຈະສ້າງກາລະໂອກາດໃຫ້ແກ່ປະເທດຫຼາຍຂຶ້ນ ເພື່ອພັດທະນາທິດທາງທີ່ຫຼາກຫຼາຍ. ເຖິງຢ່າງໃດກໍ່ຕາມ, ຖ້າອີງປະກອບຂອງ HD ຫາກບໍ່ໄດ້ຮັບການພັດທະນາໃນເວລາດຽວກັນ ແມ່ນປະຊາຊົນລາວກໍ່ຈະບໍ່ໄດ້ຮັບຜົນປະໂຫຍດຫຼາຍ ຖ້າສົມທຽບກັບປະເທດຄູ່ຮ່ວມອື່ນໆ, ໃນກໍລະນີທີ່ການເປັນຄູ່ຮ່ວມບໍ່ເທົ່າທຽມກັນ. ໃນທາງກັບກັນນີ້, ກໍ່ຈະນຳໄປສູ່ການເຊື່ອມໂຍງຂອງປະຊາຊົນລາວເຂົ້າໃນວົງການສະໄໝໃໝ່ໄດ້ໜ້ອຍກວ່າ ແລະຄວາມເສຍປຽບຂອງເຂົາເຈົ້າກໍ່ຈະມີຫຼາຍ. ເວົ້າແບບສັ້ນໆ, ການລົງທຶນເຂົ້າໃສ່ HD ຈະກາຍເປັນເງື່ອນໄຂບັງຄັບກ່ອນຕາມສະພາບຄວາມເປັນຈິງ ເພື່ອເຊື່ອມໂຍງເຂົ້າໃນ AEC ແລະເຂົ້າຮ່ວມໃນຕ່ອງໂສ້ມູນຄ່າສູງຂອງຂົງເຂດ/ໂລກ ໄດ້ຢ່າງມີປະສິດທິຜົນ. ອັນນີ້ກໍ່ຍັງຈະໃຫ້ການຊຸກຍູ້ສິ່ງເສີມທັງໝົດສາມເສົາ (ສາມເງື່ອນໄຂ) ຂອງການຫລຸດພົ້ນອອກຈາກ LDC ນຳ.

## ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ

ສປປ ລາວ ໄດ້ສະແດງຕົນຢູ່ໃນເສັ້ນທາງຂອງການຫລຸດພົ້ນອອກຈາກສະຖານະພາບ LDC ຂອງມັນ; ແຕ່ເຖິງຢ່າງໃດກໍ່ຕາມ, ມັນຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ແກ້ໄຂຄວາມບອບບາງ (ຄວາມອ່ອນແອ) ກ່ຽວກັບເລື່ອງພື້ນຖານເສດຖະກິດທີ່ແຄບ ແລະເປີດຕໍ່ການຊ໊ອກແບບກະທັນຫັນ. ຊັບສິນມະນຸດ ກໍ່ມີຄວາມຈຳເປັນທີ່ຈະຕ້ອງໄດ້ເລັ່ງລັດປັບປຸງ. ການລົງທຶນເຂົ້າໃສ່ການພັດທະນາມະນຸດ, ໂດຍສະເພາະແມ່ນການສຶກສາ, ສາທາລະນາສຸກ ແລະການຍົກລະດັບສີມືແຮງງານ, ລວມທັງການຮູ້ໜັງສື ແລະຮູ້ຄຳນວນ, ແລະການປົກປ້ອງທາງສັງຄົມ ຊຶ່ງມັນຈະຊ່ວຍຫລຸດຜ່ອນຄວາມບອບບາງທາງເສດຖະກິດ ແລະຍົກລະດັບຊັບສິນມະນຸດຂອງມັນໃຫ້ສູງຂຶ້ນ.

ເນື່ອງຈາກໂຄງສ້າງ ແລະທິດທາງການສົ່ງອອກຂອງ ສປປ ລາວ, ແມ່ນເຫັນວ່າການຫລຸດພົ້ນອອກຈາກສະຖານະພາບ LDC ຈະບໍ່ກະທົບກັບໂອກາດທາງການຄ້າຂອງມັນ ເກີນກວ່າການແຂ່ງຂັນປົກກະຕິທີ່ປະເຊີນຢູ່ໃນປັດຈຸບັນນີ້. ໃນກໍລະນີໃດກໍ່ຕາມ, ສປປ ລາວ ຈຳເປັນຈະຕ້ອງເປີດກວ້າງພື້ນຖານເສດຖະກິດຂອງຕົນ ແລະສ້າງທ່າແຮງໃນການແຂ່ງຂັນຕໍ່ໄປຢູ່ໃນຜະລິດຕະພັນຊ່ອງວ່າງ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການຂັບເຄື່ອນໄປສູ່ການເປີດກວ້າງ ທັງຕໍ່ໂລກ ແລະຂົງເຂດ.

ສປປ ລາວ ອາດຈະສູນເສຍການເຂົ້າເຖິງການຜ່ອນຜັນ (ການໄດ້ຮັບນະໂຍບາຍ) ທາງດ້ານການເງິນ ແລະການຊ່ວຍເຫຼືອທາງດ້ານວິຊາການ, ສຳລັບອັນນີ້ແມ່ນມັນຈະຕ້ອງໄດ້ເພີ່ມທະວີການຮ່ວມມືສອງຝ່າຍ,ໂດຍສະເພາະແມ່ນການຮ່ວມມືກັບບັນດາປະເທດ ASEAN ທີ່ກ້າວໜ້າ ແລະບັນດາເຂດເສດຖະກິດທີ່ເກີດຂຶ້ນຢູ່ໃນຂົງເຂດ ເຊັ່ນ: ຈີນ, ອິນເດຍ ແລະບັນດາປະເທດທີ່ພັດທະນາແລ້ວຢູ່ໃນຂົງເຂດ ຍີ່ປຸ່ນ ແລະສ.ເກົາຫຼີ. ເຖິງຢ່າງໃດກໍ່ຕາມ, ໂດຍບໍ່ຄຳນຶງເຖິງວ່າແມ່ນຫຍັງທີ່ຈະເກີດຂຶ້ນກັບສະຖານະພາບການເປັນ LDC, ສປປ ລາວ ຈຳເປັນຈະຕ້ອງໄດ້ເພີ່ມທະວີຄວາມພະຍາຍາມໃນການລະດົມຊັບພະຍາກອນພາຍໃນຂອງຕົນ ເນື່ອງຈາກມີຄວາມຕ້ອງການທຶນເປັນຈຳນວນຫຼາຍ ເພື່ອການເຂົ້າຮ່ວມບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs), ແນວໂນ້ມຂອງ ODA ຢູ່ໃນໂລກທີ່ກຳລັງຫລຸດລົງ/ຍຸດຈົ້ງ ແລະເປັນໄປໄດ້ທີ່ຈະສູນເສຍລາຍໄດ້ທີ່ກ່ຽວພັນກັບການຄ້າ ເນື່ອງຈາກມີການຮຽກຮ້ອງໃຫ້ຕັດຫລຸດພາສີສຳລັບການເຊື່ອມໂຍງ AEC ຂອງ ສປປ ລາວ.

ສິ່ງສຳຄັນທີ່ສຸດ, ແມ່ນການເຮັດໃຫ້ມີຄວາມຫຼາກຫຼາຍທາງເສດຖະກິດ ແລະການຍົກລະດັບຜະລິດຕະພາບ. ນີ້ແມ່ນສິ່ງຈຳເປັນທີ່ສຸດ ແລະຫຼີກລ່ຽງບໍ່ໄດ້ ສຳລັບທັງການຫລຸດຜ່ອນຄວາມບອບບາງທາງເສດຖະກິດ ແລະການປະເຊີນກັບສິ່ງທ້າທາຍຕ່າງໆ ທີ່ເກີດຂຶ້ນຈາກການຫລຸດພົ້ນອອກຈາກສະຖານະພາບ LDC ກໍ່ຄືການເຊື່ອມໂຍງ AEC. ເນື່ອງຈາກຄວາມດ້ອຍພັດທະນາຂອງ ສປປ ລາວ, ໂດຍສະເພາະແມ່ນການມີລະດັບສີມືແຮງງານທີ່ຕໍ່າ ແລະອີງໃສ່ສິນຄ້າຂັ້ນຕົ້ນຢ່າງໜັກໜ່ວງນັ້ນ ມັນຂ້ອນຂ້າງຈະເປັນຄວາມທ້າທາຍສຳລັບ ສປປ ລາວ ເພື່ອຄວບຄຸມ

ຜົນປະໂຫຍດຈາກການເຊື່ອມໂຍງ AEC ກໍ່ຄືການເຮັດໃຫ້ການຫລຸດພົ້ນອອກຈາກ LDC ຂອງມັນເປັນໄປຢ່າງລາບລື່ນ. ການລົງທຶນຢ່າງຮີບດ່ວນເຂົ້າໃສ່ການພັດທະນາມະນຸດ ຍັງແມ່ນສິ່ງສໍາຄັນຕົ້ນຕໍສໍາລັບຄວາມສໍາເລັດ.

## ເອກະສານຊ້ອນທ້າຍ 2.1: ມາດຖານສໍາລັບການກໍານົດວ່າເປັນປະເທດດ້ອຍພັດທະນາ: ຄໍານິຍາມ ແລະແຫຼ່ງຂໍ້ມູນທີ່ສໍາຄັນຕົ້ນຕໍ

### ອັດຕາການຮູ້ໜັງສືຂອງຜູ້ໃຫຍ່

ຕົວຊີ້ບອກນີ້, ໄດ້ວັດແທກຈໍານວນຜູ້ທີ່ຮູ້ໜັງສື ທີ່ມີອາຍຸ 15 ປີຂຶ້ນໄປ ໄດ້ສະແດງເປັນສ່ວນຮ້ອຍ (%) ຂອງຈໍານວນປະຊາກອນທີ່ມີອາຍຸຢູ່ໃນເກນດັ່ງກ່າວ. ຜູ້ທີ່ຖືກພິຈາລະນາວ່າຮູ້ໜັງສືນັ້ນ ແມ່ນເຂົາ/ລາວສາມາດອ່ານອອກ ແລະຂຽນໄດ້, ມີຄວາມເຂົ້າໃຈເນື້ອໃນຂອງການອ່ານ ແລະການຂຽນນັ້ນ, ແລະສາມາດຂຽນບັນທຶກງ່າຍໆກ່ຽວກັບຊີວິດປະຈໍາວັນຂອງເຂົາ/ລາວ. ຕົວຊີ້ບອກໄດ້ໃຫ້ຂໍ້ມູນກ່ຽວກັບຂະໜາດຂອງພື້ນຖານທີ່ມີຢູ່ ສໍາລັບການສືບຕໍ່ໃຫ້ການຝຶກອົບຮົມ ແລະຍົກລະດັບສີມືແຮງງານຂອງຊັບພະຍາກອນມະນຸດ ທີ່ມີຄວາມຈໍາເປັນສໍາລັບການພັດທະນາ.

ຕົວຊີ້ບອກນີ້, ຕາມປົກກະຕິແລ້ວແມ່ນລາຍງານໂດຍສະຖາບັນສະຖິຕິ ຂອງ UNESCO.

### ລວມຍອດອັດຕາການເຂົ້າຮຽນໃນຊັ້ນມັດທະຍົມ

ຕົວຊີ້ບອກນີ້, ໄດ້ວັດແທກຈໍານວນຂອງນັກຮຽນທີ່ເຂົ້າຮຽນໃນຊັ້ນມັດທະຍົມ ໂດຍບໍ່ໄດ້ຄໍານຶງເຖິງອາຍຸ, ຊຶ່ງໄດ້ສະແດງເປັນສ່ວນຮ້ອຍ (%) ຂອງຈໍານວນປະຊາກອນທີ່ຢູ່ໃນເກນອາຍຸຕາມຫຼັກການ ສໍາລັບການສຶກສາໃນລະດັບຊັ້ນດຽວກັນນີ້. ມັນໄດ້ໃຫ້ຂໍ້ມູນກ່ຽວກັບອັດຕາສ່ວນຂອງຈໍານວນປະຊາກອນ ທີ່ຖືວ່າມີລະດັບສີມືທີ່ຈໍາເປັນພໍ ສໍາລັບການພັດທະນາຄວາມກ້າວໜ້າຕໍ່ໄປ.

ຕົວຊີ້ບອກນີ້, ຕາມປົກກະຕິແລ້ວແມ່ນລາຍງານໂດຍສະຖາບັນສະຖິຕິ ຂອງ UNESCO.

### ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ:

ຕົວເລກ GNI ຕໍ່ຫົວຄົນ ແມ່ນໄດ້ສະແດງໃຫ້ເຫັນເຖິງຂໍ້ມູນກ່ຽວກັບສະຖານະພາບລາຍໄດ້ຂອງປະເທດ. GNI ແມ່ນເທົ່າກັບລວມຍອດຜະລິດຕະພັນແຫ່ງຊາດ (GDP) ຂອງປະເທດນັ້ນ ຫັກລົບໃຫ້ລາຍໄດ້ຈາກການລົງທຶນຂອງຕ່າງປະເທດຢູ່ໃນປະເທດນັ້ນ ແລ້ວບວກກັບລາຍໄດ້ຈາກການລົງທຶນຂອງຄົນໃນປະເທດນັ້ນຢູ່ຕ່າງປະເທດ. ການວັດແທກ GNI ທີ່ຖືກນໍາໃຊ້ໂດຍ CDP ແມ່ນໄດ້ສະແດງເປັນຫົວໜ່ວຍເງິນໂດລາສະຫະລັດ. ມູນຄ່າທີ່ສະແດງເປັນຫົວໜ່ວຍເງິນໂດລາສະຫະລັດນັ້ນ ແມ່ນຖືກຄໍານວນຕາມວິທີອັດລາສ (Atlas) ຂອງທະນາຄານໂລກ ແລະບໍ່ໄດ້ສະທ້ອນ (ຄໍານຶງ) ເຖິງນໍ້າໜັກຄ່າສະເລ່ຍຂອງສາມປີ (2011, 2012 ແລະ 2013; ໃນກໍລະນີຂອງປີ 2015 ທີ່ວ່າສາມປີໃດທົບທວນຄັ້ງໜຶ່ງ).

ພະແນກສະຖິຕິຂອງອົງການສະຫະປະຊາຊາດໄດ້ຄໍານວນອັນນີ້ ໂດຍອີງໃສ່ພື້ນຖານຂອງຖານຂໍ້ມູນລວມຂອງການບັນຊີແຫ່ງຊາດ ແລະຂໍ້ມູນກ່ຽວກັບນໍ້າໜັກທີ່ກ່ຽວຂ້ອງກັບເງິນຕາ ຊຶ່ງຢູ່ໃນສິດທິຂອງການຖອນພິເສດ (SDR) ທີ່ກອງທຶນການເງິນສາກົນ (IMF) ສະໜອງໃຫ້.

### ຄວາມບໍ່ໝັ້ນຄົງຂອງການຜະລິດກະສິກໍາ

ຕົວຊີ້ບອກທີ່ວັດແທກການຂຶ້ນລົງໃນແຕ່ລະປີຂອງລວມຍອດການຜະລິດກະສິກໍາ ໄດ້ສະແດງໃຫ້ເຫັນເຖິງຄວາມເປັນຈິງທີ່ສະທ້ອນໃຫ້ເຫັນວ່າ ໃນບັນດາສິ່ງອື່ນໆເຫຼົ່ານັ້ນ, ຄວາມບອບບາງຂອງປະເທດຕໍ່ກັບເຫດການຊ໊ອກກະທັນຫັນຂອງທໍາມະຊາດ, ໂດຍສະເພາະແມ່ນຜົນກະທົບຈາກໄພແຫ້ງແລ້ງ ແລະການລົບກວນຂອງໄພທໍາມະຊາດໃນລະດູຝົນ. ການຜະລິດກະສິກໍາ ແມ່ນກວມເອົາການຜະລິດພືດ ແລະສັດທັງໝົດຢູ່ໃນປະເທດ. ຕົວຊີ້ບອກນີ້ແມ່ນຖືກຄໍານວນ ໂດຍການຄາດຄະເນແນວໂນ້ມຂອງການຜະລິດກະສິກໍາ ດ້ວຍການນໍາໃຊ້ສົມຜົນເສັ້ນຊື່;

ມາດຕະຖານຄວາມບ່ຽງເບນ (ຄວາມຜິດພາດ) ຂອງການຜະລິດຢູ່ໃນຂອບເຂດແນວໂນ້ມຂອງມັນ ແມ່ນເຫັນວ່າຍັງບໍ່ມີຄວາມໝັ້ນຄົງ.

ຕົວຊີ້ບອກນີ້ແມ່ນຖືກຄຳນວນໂດຍກອງເລຂາ ຂອງ CDP ດ້ວຍການນຳໃຊ້ດັດຊະນີປະລິມານຂອງການຜະລິດກະສິກຳໂດຍລວມ, ປະລິມານສຸດທິທີ່ຖືກນຳໃຊ້ເຂົ້າໃນການເພາະພັນ ແລະການລ້ຽງ, ແລະຂໍ້ມູນທີ່ໄດ້ຈາກອົງການອາຫານ ແລະ ການກະສິກຳ ຂອງສະຫະປະຊາຊາດ (FAO).

**ຄວາມບໍ່ໝັ້ນຄົງຂອງການສົ່ງອອກສິນຄ້າ ແລະການບໍລິການ:**

ຕົວຊີ້ບອກນີ້ໄດ້ວັດແທກຄວາມບໍ່ໝັ້ນຄົງກ່ຽວກັບຄວາມສາມາດຂອງປະເທດ ເພື່ອສົ່ງອອກສິນຄ້າ ແລະການບໍລິການ ຈາກລາຍໄດ້ຂອງການສົ່ງອອກໃນປັດຈຸບັນ, ແຫຼ່ງຂອງການຜະລິດທີ່ສຳຄັນຕົ້ນຕໍ ແລະການຈ້າງງານຢູ່ໃນຫຼາຍໆປະເທດກຳລັງພັດທະນາ. ຕົວຊີ້ບອກນີ້, ແມ່ນຖືກຄຳນວນຕາມການຄາດຄະເນແນວໂນ້ມຂອງລາຍໄດ້ຈາກການສົ່ງອອກ ດ້ວຍການນຳໃຊ້ສົມຜົນເສັ້ນຊື່, ຊຶ່ງເຫັນວ່າການບ່ຽງເບນອອກຈາກມາດຕະຖານຂອງການສົ່ງອອກ ແມ່ນມີແນວໂນ້ມເປັນໄປໄດ້ທີ່ຈະບໍ່ມີຄວາມໝັ້ນຄົງ.

ຕົວຊີ້ບອກນີ້ແມ່ນຖືກຄຳນວນໂດຍກອງເລຂາຂອງ CDP ດ້ວຍການນຳໃຊ້ຂໍ້ມູນຂອງການສົ່ງອອກສິນຄ້າ ແລະການບໍລິການຕາມຫົວໜ່ວຍເງິນໂດລາສະຫະລັດແບບຄົງທີ່ ທີ່ໄດ້ຈາກ United Nations Statistics Division, National Accounts Main Aggregates Database.

**ການກະຈຸກຕົວ (ເຂັ້ມຂຸ້ນຢູ່ຂະແໜງການໃດໜຶ່ງເທົ່ານັ້ນ) ຂອງການສົ່ງອອກສິນຄ້າ**

ຕົວຊີ້ບອກນີ້ໄດ້ວັດແທກການກະຈຸກຕົວຂອງຂະແໜງການ ກ່ຽວກັບການສົ່ງອອກຂອງປະເທດ ຊຶ່ງມັນຊີ້ໃຫ້ເຫັນວ່າການຂະຫຍາຍການສົ່ງອອກນັ້ນ ແມ່ນຈະຕ້ອງໄດ້ຖືກກະຈາຍໄປສູ່ກິດຈະກຳທາງເສດຖະກິດຕ່າງໆທີ່ແຕກຕ່າງກັນ. ຕົວຊີ້ບອກນີ້ ແມ່ນໄດ້ຖືກສະແດງເປັນຕົວດັດຊະນີ (Herfindahl Hirschmann index), ແລະຖືກກຳນົດເປັນອັດຕາສ່ວນຂອງແຕ່ລະສິນຄ້າ ຢູ່ໃນລວມຍອດຂອງການສົ່ງອອກທັງໝົດ (ຢູ່ໃນສາມຕົວເລກປະເພດຜະລິດຕະພັນ SITC). ເປັນທຳມະດາທີ່ມັນຈະຢູ່ໃນຕົວເລກ ລະຫວ່າງ 0 ແລະ 1 (ໃນກໍລະນີທີ່ມີການສົ່ງອອກພຽງແຕ່ສິນຄ້າໜຶ່ງດຽວເທົ່ານັ້ນ). ເນື່ອງຈາກມີຂໍ້ຈຳກັດດ້ານຂໍ້ມູນ; ສະນັ້ນ, ໃນປັດຈຸບັນນີ້ຈຶ່ງໄດ້ລວມເອົາພຽງແຕ່ສິນຄ້າເທົ່ານັ້ນ ຊຶ່ງຍັງບໍ່ໄດ້ລວມເອົາການບໍລິການເຂົ້ານຳເທື່ອ. ຕົວຊີ້ບອກນີ້, ໄດ້ໃຫ້ຂໍ້ມູນກ່ຽວກັບການເປີດ (ປ່ອຍ) ໄວ້ໃຫ້ໄດ້ຮັບອັນຕະລາຍຈາກເຫດການຊ໊ອກທາງການຄ້າ ເນື່ອງຈາກໂຄງສ້າງການສົ່ງອອກທີ່ກະຈຸກຕົວຢູ່ກັບສິນຄ້າໃດໜຶ່ງເທົ່ານັ້ນ.

ບົດລາຍງານປົກກະຕິຂອງກອງປະຊຸມສະຫະປະຊາຊາດ ກ່ຽວກັບຕົວຊີ້ບອກດ້ານການຄ້າ ແລະການລົງທຶນ ຜ່ານລະບົບການການເຜີຍແຜ່ຂໍ້ມູນຂອງ dissemination system UNCTADSTAT.

**ອັດຕາສ່ວນຂອງຈຳນວນປະຊາກອນທີ່ຂາດສານອາຫານ**

ຕົວຊີ້ບອກນີ້, ໄດ້ໃຫ້ຂໍ້ມູນກ່ຽວກັບການແຜ່ຫຼາຍຂອງຜູ້ທີ່ຂາດສານອາຫານຢູ່ໃນຈຳນວນປະຊາກອນທັງໝົດ. ມັນສະແດງໃຫ້ເຫັນເຖິງອັດຕາສ່ວນຂອງຈຳນວນປະຊາກອນ ຜູ້ທີ່ຊົມໃຊ້ໄດ້ຊົມໃຊ້ອາຫານຕໍ່າກວ່າຄວາມຕ້ອງ ການພະລັງງານອາຫານຂັ້ນຕໍ່າທີ່ຕັ້ງໄວ້ ເພື່ອການມີຊີວິດທີ່ແຂງແຮງ ແລະການເຮັດກິດຈະກຳທາງດ້ານຮ່າງກາຍທີ່ເບົາໄດ້. ການຂາດສານອາຫານແມ່ນປະກອບດ້ວຍສະຖານະພາບທາງດ້ານສຸຂະພາບ ແລະຜົນສຳເລັດຂອງການສຶກສາ ຊຶ່ງເປັນຜົນກະທົບທາງລົບທີ່ສຳຄັນຕໍ່ກັບຜະລິດຕະພາບຂອງງານ.

ບົດລາຍງານປະຈຳຂອງ UN FAO ກ່ຽວກັບສະຖິຕິການຄ້ຳປະກັນດ້ານສະບຽງອາຫານ, ຊຶ່ງສາມາດເບິ່ງໄດ້ຈາກ http:// data.un.org/ ແລະ http://www.fao.org/economic/ess/essfs/en/

**ປະຊາກອນ**

ຕົວຊີ້ບອກນີ້, ໄດ້ວັດແທກປະຊາກອນຕາມຄວາມເປັນຈິງຂອງຂະໜາດຂອງປະເທດ ຢູ່ໃນຈຸດລະຫວ່າງກາງຂອງປີທີ່ຖືກຊີ້ບອກ. ຂະໜາດຂອງປະຊາກອນນີ້ ແມ່ນສາມາດນຳໃຊ້ເປັນຕົວແທນກ່ຽວກັບການເປີດໃຫ້ໄດ້ຮັບອັນຕະລາຍຈາກເຫດການຊ໊ອກຕ່າງໆ, ໃນຂະນະທີ່ບັນດາປະເທດນ້ອຍ ແມ່ນມີຄວາມເປັນໄປໄດ້ໜ້ອຍສຳລັບການເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ. ຮ້າຍແຮງກວ່ານັ້ນ, ບັນດາປະເທດນ້ອຍທັງຫຼາຍ ແມ່ນສາມາດປະເຊີນກັບໄພອັນຕະລາຍຈາກເຫດການຊ໊ອກທາງທຳມະຊາດສູງ ຊຶ່ງມັກຈະກະທົບຕໍ່ກັບທັງໝົດປະເທດໃນຍາມໜຶ່ງຍາມດຽວກັນ.

ຕົວຊີ້ບອກນີ້, ແມ່ນຖືກລາຍງານຢ່າງເປັນປົກກະຕິ ໂດຍພະແນກປະຊາກອນ, ກົມກິດຈະການເສດຖະກິດ ແລະສັງຄົມ ຂອງອົງການສະຫະປະຊາຊາດ ຢູ່ໃນຖານຂໍ້ມູນການສຳຫຼວດປະຊາກອນໂລກ ຊຶ່ງສາມາດຫາໄດ້ຈາກ http://esa.un.org/unpd/ wpp/index.htm ແລະ http://data.un.org

**ຄວາມຫ່າງໄກ**

ຕົວຊີ້ບອກນີ້, ໄດ້ວັດແທກນ້ຳໜັກ ຫຼືອິດທິພົນຂັ້ນຕ່ຳສຸດຂອງຄວາມຫ່າງໄກ ຕໍ່ກັບການເຮັດການຄ້າຂອງປະເທດ ເພື່ອໃຫ້ໄປເຖິງສ່ວນທີ່ສຳຄັນຂອງຕະຫຼາດໂລກ (ຕົວຢ່າງ, 50 ເປີເຊັນ). ເພື່ອໃຫ້ເຫດຜົນກ່ຽວກັບຕົ້ນທຶນຂອງການຂົນສົ່ງທີ່ຂ້ອນຂ້າງສູງ ແລະອຸປະສັກ ຫຼືຂໍ້ເສຍປຽບຂອງບັນດາປະເທດກຳລັງພັດທະນາທີ່ບໍ່ມີທາງອອກສູ່ທະເລນັ້ນ ແມ່ນໄດ້ເພີ່ມປັດໄຈຄົງທີ່ເຂົ້າໄປຕື່ມຢູ່ໃນອິດທິພົນຂັ້ນຕ່ຳສຸດຂອງຄວາມຫ່າງໄກ ຕໍ່ກັບການເຮັດການຄ້າຂອງປະເທດເຫຼົ່ານັ້ນ. ຄວາມຫ່າງໄກຈາກຕະຫຼາດໄດ້ເຮັດໃຫ້ການຂົນສົ່ງມີຕົ້ນທຶນທີ່ສູງ ແລະຈຳກັດຄວາມເປັນໄປໄດ້ສຳລັບຄວາມຫຼາກຫຼາຍທາງເສດຖະກິດ; ເພາະສະນັ້ນ, ມັນຈຶ່ງຫລຸດຜ່ອນຄວາມອາດສາມາດຂອງປະເທດ ຕໍ່ການຕອບຮັບກັບເຫດການຊ໊ອກທາງການຄ້າ. ລາຍລະອຽດຂອງການອະທິບາຍກ່ຽວກັບຕົວຊີ້ບອກດ້ານຄວາມຫ່າງໄກ ແລະວິທີການຄຳຂອງມັນ ແມ່ນສາມາດຄົ້ນພົບໄດ້ຢູ່ໃນການວັດແທກຄວາມຫ່າງໄກສຳລັບການກຳນົດເປັນ LDC “Measuring remoteness for the identification of LDCs” ທີ່ພັດທະນາຂຶ້ນໂດຍກອງເລຂາ CDP.

ຕົວຊີ້ບອກນີ້, ແມ່ນຖືກຄຳນວນໂດຍອີງໃສ່ຂໍ້ມູນກ່ຽວກັບຄວາມຫ່າງໄກດ້ານພູມມີສາດ ລະຫວ່າງບັນດານະຄອນຫຼວງ ຫຼືເມືອງໃຫຍ່ໆຂອງໂລກ (ໄດ້ຮັບຈາກ Centre d' Etudes Prospective set d' Informations Internationales (CEPII)). ຂໍ້ມູນກ່ຽວກັບການສົ່ງອອກ ແລະການນຳເຂົ້າສິນຄ້າ ແລະການບໍລິການ ແມ່ນໄດ້ມາຈາກຖານຂໍ້ມູນລວມຕົ້ນຕໍຂອງການບັນຊີແຫ່ງຊາດ, ພະແນກສະຖິຕິຂອງສະຫະປະຊາຊາດ.

**ການປະກອບສ່ວນຂອງຂະແໜງກະສິກຳ-ປ່າໄມ້ ແລະການປະມົງ ຢູ່ໃນ GDP**

ຕົວຊີ້ບອກນີ້, ແມ່ນຖືກກຳນົດເປັນອັດຕາສ່ວນລວມຍອດມູນຄ່າເພີ່ມຂອງຂະແໜງກະສິກຳ-ປ່າໄມ້ ແລະການປະມົງ (ປະເພດ A ແລະ B ຢູ່ໃນການກຳນົດ ISIC ຂອງການທົບທວນ 3 ແລະ 3.1) ຢູ່ໃນ GDP ຂອງປະເທດ. ຕົວຊີ້ບອກນີ້, ໄດ້ໃຫ້ຂໍ້ມູນກ່ຽວກັບການເປີດຮັບຜົນເສຍຫາຍຂອງບັນດາປະເທດຕ່າງໆ ເນື່ອງຈາກໂຄງສ້າງເສດຖະກິດຂອງເຂົາເຈົ້າ, ຍ້ອນການກະສິກຳ-ປ່າໄມ້ ແລະການປະມົງ ເປັນເລື່ອງປົກກະຕິທີ່ຈະປະເຊີນກັບເຫດການຊ໊ອກທາງທຳມະຊາດ ແລະເສດຖະກິດ.

ແຫຼ່ງຂໍ້ມູນແມ່ນໄດ້ມາຈາກຖານຂໍ້ມູນລວມຕົ້ນຕໍຂອງການບັນຊີແຫ່ງຊາດ, ພະແນກສະຖິຕິຂອງສະຫະປະຊາຊາດ.

**ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ເຂດຊາຍຝັ່ງທະເລຕ່ຳ**

ຕົວຊີ້ບອກນີ້, ໄດ້ວັດແທກອັດຕາສ່ວນຂອງຈຳນວນປະຊາກອນຢູ່ໃນປະເທດ ທີ່ດຳລົງຊີວິດຢູ່ເຂດຊາຍຝັ່ງທະເລຕ່ຳ ຊຶ່ງຖືກກຳນົດໃຫ້ເປັນເຂດທີ່ຕິດກັບຊາຍຝັ່ງ ແລະຢູ່ຕ່ຳກວ່າລະດັບມາດຕະຖານຂັ້ນຕ່ຳ. ໃນປັດຈຸບັນນີ້, ມາດຕະຖານຂັ້ນຕ່ຳຂອງລະດັບທີ່ສູງກ່ວາໜ້ານ້ຳທະເລແມ່ນໄດ້ກຳນົດເອົາ 5 ແມັດລົງມາ. ຕົວຊີ້ບອກນີ້, ແມ່ນມີຈຸດປະສົງເພື່ອບັນທຶກຄວາມບອບບາງຂອງຜົນກະທົບຕໍ່ກັບເຂດຊາຍຝັ່ງ (ລວມທັງລະດັບນ້ຳທະເລທີ່ເພີ່ມຂຶ້ນ

ແລະການພັດຜ່ານຂອງພາຍຸ) ,ລວມທັງການປ່ຽນແປງຂອງດິນຟ້າອາກາດ.

ຕົວຊີ້ບອກນີ້, ແມ່ນໄດ້ມາຈາກສູນເຄືອຂ່າຍຂໍ້ມູນຂ່າວສານວິທະຍາສາດໂລກຂອງສາກົນ ຢູ່ມະຫາວິທະຍາໄລໂກລົມເບຍ.

**ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ**

ຕົວຊີ້ບອກນີ້, ສະແດງໃຫ້ເຫັນເຖິງຄວາມເປັນໄປໄດ້ກ່ຽວກັບການຕາຍຂອງເດັກນ້ອຍທີ່ມີອາຍຸຢູ່ໃນລະຫວ່າງນັບແຕ່ມື້ເກີດຈົນເຖິງອາຍຸ 5 ປີ ຊຶ່ງມັນໄດ້ສະແດງເປັນອັດຕາການຕາຍຕໍ່ 1.000 ຄົນ ຂອງເດັກເກີດມີຊີວິດ. ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ ໄດ້ໃຫ້ຂໍ້ມູນຢ່າງລະອຽດກ່ຽວກັບຜົນກະທົບຕໍ່ກັບສຸຂະພາບ (ຄວາມແຂງແຮງ) ຂອງສັງຄົມ, ເສດຖະກິດ ແລະເງື່ອນໄຂສະພາບແວດລ້ອມຢູ່ໃນປະເທດ ຊຶ່ງມັນເຫັນວ່າເຊື່ອຖືໄດ້ຫຼາຍກວ່າຕົວຊີ້ບອກອື່ນ ເຊັ່ນ: ການມີອາຍຸຍືນ, ໂດຍສະເພາະແມ່ນຢູ່ໃນປະເທດທີ່ດ້ອຍພັດທະນາ.

ຂໍ້ມູນນີ້ ແມ່ນໄດ້ມາຈາກບົດລາຍງານປົກກະຕິ ກ່ຽວກັບຕົວຊີ້ບອກສຳລັບການຄາດຄະເນອັດຕາການຕາຍຂອງເດັກ, ກຸ່ມອົງການລະຫວ່າງປະເທດຂອງສະຫະປະຊາຊາດ.

**ຜູ້ໄດ້ຮັບເຄາະຮ້າຍຈາກໄພພິບັດທາງທຳມະຊາດ**

ຕົວຊີ້ບອກນີ້, ໄດ້ວັດແທກອັດຕາສ່ວນຂອງຈຳນວນປະຊາກອນ ທີ່ເປັນຜູ້ໄດ້ຮັບເຄາະຮ້າຍຈາກໄພພິບັດທາງທຳມະຊາດຕ່າງໆ. ບັນດາຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດທາງທຳມະຊາດນີ້ ແມ່ນໄດ້ກຳນົດເອົາທັງຜູ້ທີ່ຕາຍ ແລະຜູ້ທີ່ໄດ້ຮັບຜົນກະທົບຍ້ອນໄພພິບັດທາງທຳມະຊາດ (ຕົວຢ່າງ: ຜູ້ຄົນທີ່ຕ້ອງການໆຊ່ວຍເຫຼືອຢ່າງຮີບດ່ວນດ້ານສະບຽງອາຫານ, ນໍ້າ, ທີ່ຢູ່ອາໄສ, ສຸຂະອະນາໄມ ຫຼືຢາປົວພະຍາດ). ອັນນີ້, ແມ່ນມັນລວມທັງອາກາດ ແລະໄພພິບັດທີ່ກ່ຽວພັນກັບດິນຟ້າອາກາດ (ເຊັ່ນ: ນໍ້າຖ້ວມ, ດິນຖະຫຼົ່ມ, ພາຍຸ, ແຫ້ງແລ້ງ ແລະອຸນຫະພູມທີ່ຮ້າຍແຮງ) ລວມທັງໄພພິບັດທາງດ້ານທໍລະນີຟີຊິກ (ເຊັ່ນ: ແຜ່ນດິນໄຫວ ຫຼືພູໄຟລະເບີດ). ຕົວຊີ້ບອກນີ້, ສະແດງໃຫ້ເຫັນເຖິງຄວາມບອບບາງຕໍ່ກັບເຫດການຊ໊ອກທາງທຳມະຊາດ, ໂດຍສະເພາະແມ່ນຜົນກະທົບຂອງໄພພິບັດທາງທຳມະຊາດຕໍ່ກັບມະນຸດ ທີ່ເກີດຈາກເຫດການຊ໊ອກກະທັນຫັນຕ່າງໆເຫຼົ່ານີ້.

ຕົວຊີ້ບອກນີ້, ແມ່ນຖືກຄຳນວນໂດຍກອງເລຂາຂອງ CDP ໂດຍອີງໃສ່ຂໍ້ມູນກ່ຽວກັບຄົນຕາຍ ແລະຄົນທີ່ໄດ້ຮັບຜົນກະທົບຈາກຖານຂໍ້ມູນໄພພິບັດສຸກເສີນ (EMDAT) ຂອງສູນການຮ່ວມມືສຳລັບການຄົ້ນຄວ້າກ່ຽວກັບໂລກລະບາດຈາກໄພພິບັດ (CRED) ຂອງ WHO, ແລະຂໍ້ມູນກ່ຽວກັບຈຳນວນປະຊາກອນທັງໝົດ ທີ່ມາຈາກພະແນກປະຊາກອນ, ກິມກິດຈະການທາງເສດຖະກິດ ແລະສັງຄົມ ຂອງອົງການສະຫະປະຊາຊາດ ທີ່ຢູ່ໃນຖານຂໍ້ມູນການສຳຫຼວດປະຊາກອນໂລກ.

**ເອກະສານຊ້ອນທ້າຍ 2.2: ບັນດາໂຄງການຊ່ວຍເຫຼືອເພື່ອການພັດທະນາ - ສະຖາປັດຕະຍະກຳ**

ຖະແຫຼງການບຣຸກແຊນ ສຳລັບບັນດາປະເທດດ້ອຍພັດທະນາ (BPOA) ທີ່ກວມເອົາຊ່ວງໄລຍະປີ 2001-2010, ອັນຕົ້ນຕໍຢູ່ໃນຖະແຫຼງການນີ້ ແມ່ນບັນດາປະເທດ OECD ໄດ້ໃຫ້ການຊ່ວຍເຫຼືອແກ່ການພັດທະນາເປັນສ່ວນໃຫຍ່ ເພື່ອຕໍ່ສູ້ກັບຄວາມທຸກຍາກ ແລະການພັດທະນາແບບຍືນຍົງ. ອັນທີ່ເຂົ້າມາຕໍ່ຈາກນັ້ນແມ່ນການຈັດຕັ້ງປະຕິບັດແຜນງານອິສະຕັນບູນ (IPOA) ທີ່ກວມເອົາຊ່ວງໄລຍະປີ 2011-2020, ຊຶ່ງອັນທີ່ໄດ້ຮັບຕົ້ນຕໍຢູ່ໃນນີ້ ແມ່ນບັນດາປະເທດ OECD ຈະໃຫ້ການຊ່ວຍເຫຼືອແກ່ການພັດທະນາ (ກ່ອງທີ 0.1 – ພາກສະເໜີ). ບັນດາປະເທດອື່ນໆກໍ່ໄດ້ໃຫ້ການຊ່ວຍເຫຼືອຄືກັນ, ແຕ່ຕົ້ນຕໍແມ່ນເປັນການຮ່ວມມືສອງຝ່າຍ ຊຶ່ງຢູ່ນອກໂຄງສ້າງ IPOA.

OECD/ບັນດາປະເທດທີ່ໃຫ້ການຊ່ວຍເຫຼືອແກ່ການພັດທະນາ (DAC), ພາຍໃຕ້ແຜນງານເຫຼົ່ານີ້ ບັນດາປະເທດຜູ້ໃຫ້ທຶນໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ ODA ແກ່ບັນດາ LDC ປະມານ 0,15% ຂອງ GNI ຂອງເຂົາເຈົ້າ. ສ່ວນໃຫຍ່ຂອງການຖ່າຍໂອນ ຫຼືການສົ່ງມອບຢູ່ໃນແຜນງານເຫຼົ່ານີ້ ແມ່ນການຊ່ວຍເຫຼືອລ້າ ແລະ/ຫຼືການອະນຸໂລມຜ່ອນຜັນດ້ານເງິນກູ້ ດ້ວຍການໃຫ້ໄລຍະເວລາສຳລັບການຊຳລະຄືນເງິນກູ້ຍາວອອກ (ຕົວຢ່າງ: ແຜນງານເງິນ

ກູ້ທີ່ເປັນເງິນເຢັນຂອງຍີ່ປຸ່ນ ແມ່ນມີໄລຍະການຊໍາລະຄືນ 50 ປີ, ດ້ວຍອັດຕາດອກເບ້ຍ <0,1%) ແລະໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກວິຊາການໃນບາງດ້ານ. ຄືດັ່ງທີ່ກ່າວມາຂ້າງເທິງນັ້ນ, ບັນດາປະເທດທີ່ບໍ່ແມ່ນ OECD/DAC ກໍ່ໄດ້ເຂົ້າຮ່ວມຢູ່ໃນບັນດາແຜນງານຕ່າງໆ ເພື່ອຊ່ວຍເຫຼືອທັງບັນດາ LDC ແລະ ບໍ່ແມ່ນ LDC ທີ່ເປັນປະເທດມີລາຍໄດ້ຕໍ່າ: ການຊ່ວຍທາງດ້ານການເງິນ ແລະການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ທີ່ໄດ້ຖືກສະໜອງໃຫ້ພາຍໃຕ້ການຮ່ວມມື ແລະການເຊື່ອມໂຍງທາງເສດຖະກິດ ລະຫວ່າງບັນດາປະເທດກໍາລັງພັດທະນາ (ECIDC) ແລະບັນດາຂໍ້ຕົກລົງສອງຝ່າຍອື່ນໆ. ສປ ຈີນ, ກູເວດ, ກາຕາ, ສິງກະໂປ, ອິນເດຍ, ໄທ ແລະບາງປະເທດທີ່ບໍ່ແມ່ນ OECD/DAC ກໍ່ໄດ້ມີການໃຫ້ການຊ່ວຍເຫຼືອສອງຝ່າຍຢ່າງເປັນເອກະລາດ ເງິນກູ້ດອກເບ້ຍຕໍ່າ ແລະການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະກໍ່ມີການຊ່ວຍເຫຼືອທາງດ້ານການເງິນຈໍານວນໜ້ອຍໜຶ່ງ, ຍົກເວັ້ນກໍລະນີສະເພາະ.

ເບິ່ງຢູ່ໃນ http://unctad.org/en/pages/gds/Economic%20Cooperation %20and% 20Integration %20among%20Developing%20Countries/Economic-Cooperation-and-Integration-among-Developing-Countries.aspx

ພາຍໃຕ້ການຊ່ວຍເຫຼືອຫຼາຍຝ່າຍ, ການອະນຸໂລມຜ່ອນຜັນທາງດ້ານການເງິນ [ຕົວຢ່າງ: ສະມາຄົມ ຫຼືອົງການພັດທະນາສາກົນ (IDA) ໂອກາດການອະນຸໂລມຜ່ອນຜັນເງິນກູ້ຂອງທະນາຄານໂລກ] ແມ່ນໄດ້ສະໜອງໃຫ້ແກ່ 77 ປະເທດທີ່ທຸກຍາກທີ່ສຸດ (ລວມທັງ ສປປ ລາວ, ກ່ຽວກັບການປະສົມປະສານໃນເລື່ອງຕ່າງໆ, ຕົວ ຢ່າງ: ການລວມເຂົ້າກັນຂອງການຊ່ວຍເຫຼືອລ້າ, ເງິນກູ້ດອກເບ້ຍຕໍ່າ, ແລະເງິນກູ້ອັດຕາດອກເບ້ຍບໍ່ຕໍ່າປານໃດ). ຕາມກົດເກນແລ້ວ ແມ່ນຖືກກໍານົດຕາມລາຍໄດ້ຕໍ່ຫົວຄົນຂອງປະເທດທີ່ໃຫ້ກູ້ເງິນ.

ສຸດທ້າຍ, ພາຍໃຕ້ "ການຊ່ວຍເຫຼືອອື່ນໆ" ມີບັນດາອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍເປັນຈໍານວນຫຼາຍ ໄດ້ໃຫ້ການຊ່ວຍເຫຼືອແກ່ບັນດາ LDC ໂດຍຜ່ານແຜນງານການຮ່ວມມືດ້ານວິຊາການ ເພື່ອການສ້າງຄວາມເຂັ້ມແຂງ. ທະນາຄານໂລກ, IMF, UNDP, UNICEF, WFP, ໂຄງສ້າງຂອງອົງການສະຫະປະຊາຊາດ ກ່ຽວກັບສົນທິສັນຍາວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ (UNFCCC), ກອງທຶນພັດທະນາທຶນຂອງອົງການສະຫະປະຊາຊາດ (UNCDF) ແລະອົງການຈັດຕັ້ງອຸຕຸນິຍົມວິທະຍາຂອງໂລກ (WMO) ແມ່ນເປັນອົງການຈໍານວນໜຶ່ງທີ່ໃຫ້ການຊ່ວຍເຫຼືອໃນດ້ານນີ້. ບັນດາປະເທດ LDs ກໍ່ໄດ້ຮັບຂະຫຍາຍການຊ່ວຍເຫຼືອໃນຮູບຂອງການສະໜັບສະໜູນທາງດ້ານການເງິນ ເພື່ອເຂົ້າຮ່ວມຢູ່ໃນບັນດາສົນທິສັນຍາຂອງຂົງເຂດ ແລະຂອງໂລກ, ຕົວຢ່າງ: ການກຸ້ມຕົນເອງດ້ານເບ້ຍລ້ຽງ ແລະຄ່າເດີນທາງຂອງບັນດາ LDC ໃນການເຂົ້າຮ່ວມໃນອົງການຂ້າຫຼວງໃຫຍ່ສະຫະປະຊາຊາດ ຫຼືການທົບທວນປະຈໍາປີ ກ່ຽວກັບແຜນງານປະຕິບັດການສໍາລັບ LDC ແມ່ນບໍ່ໄດ້ມາຈາກກອງທຶນຂອງຜູ້ໃຫ້ທຶນຫຼາຍຝ່າຍແຕ່ຢ່າງໃດ. ການປະກອບສ່ວນຂອງບັນດາ LDC ເຂົ້າໃນກໍາລັງຮັກສາສັນຕິພາບຢູ່ໃນເຂດຕ່າງໆທີ່ມີຄວາມຫຍຸ້ງຍາກ ແມ່ນໄດ້ຫລຸດລົງປະມານ 90%. ຍັງມີຂີດຈໍາກັດຢູ່ປະມານ 0,01% ຈາກງົບປະມານປົກກະຕິຂອງບັນດາ LDC ທີ່ປະກອບສ່ວນໃຫ້ແກ່ອົງການສະຫະປະຊາດ. ສຸດທ້າຍ, ແມ່ນການເປີດກວ້າງດ້ານທຶນການສຶກສາໃຫ້ແກ່ນັກສຶກສາ, ພະນັກງານລັດ/ມະຫາວິທະຍາໄລ ຈາກບັນດາປະເທດເຫຼົ່ານີ້ ຊຶ່ງເປັນພາກສ່ວນໜຶ່ງຂອງການສະໜັບສະໜູນໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ແລະການສ້າງຂີດຄວາມສາມາດ. ເຖິງຢ່າງໃດກໍ່ຕາມ, ມັນຈະຕ້ອງເອົາໃຈໃສ່ ແລະ ໄດ້ຈົດຈໍາວ່າ ສິ່ງທີ່ກ່າວມາຂ້າງເທິງທັງໝົດນີ້ ແມ່ນບໍ່ໄດ້ເຈາະຈົງວ່າຈະສະເໜີການຊ່ວຍເຫຼືອຫຼາຍຝ່າຍ/ສອງຝ່າຍໃຫ້ແກ່ກຸ່ມໃດກຸ່ມໜຶ່ງໂດຍສະເພາະ, ເຖິງວ່າມີບາງລາຍການອາດສາມາດເປັນໄປໄດ້ກໍ່ຕາມ ເຊັ່ນ: ການໃຫ້ທຶນການສຶກສາແກ່ນັກສຶກສາ.

ແຫຼ່ງຂໍ້ມູນ: ຫ້ອງການ UN ທີ່ຮັບຜິດຊອບບັນດາປະເທດດ້ອຍພັດທະນາ, ປະເທດທີ່ບໍ່ມີທາງອອກສູ່ທະເລ ແລະບັນດາປະເທດກໍາລັງພັດທະນາທີ່ເປັນເກາະ,UNOHRLLS (2006).

# ພາກທີ 3

## ການສົ່ງເສີມຄວາມສາມາດຂອງມະນຸດ

ການສຶກສາຕໍ່ຈາກຊັ້ນປະຖົມ, ການສາທາລະນາສຸກ ແລະໂພຊະນາການທີ່ໄດ້ຮັບການປັບປຸງ ແມ່ນສິ່ງຈໍາເປັນພື້ນຖານສໍາລັບຜູ້ຄົນ ເພື່ອຍົກສູງສະຕິປັນຍາຄວາມຮັບຮູ້ຂອງຕົນເອງ, ຄວາມຮູ້ສຶກຜິດ-ຖືກຢູ່ໃນໃຈ, ຄວາມເປັນເອກະລາດ ແລະຈິນຕະນາການທີ່ປະດິດສ້າງ. ສປປ ລາວ ຈໍາເປັນຕ້ອງໄດ້ນໍາໃຊ້ວິທີການ "ສິດທິຕໍ່ກັບການພັດທະນາ" ເພື່ອເພີ່ມການໃຊ້ຈ່າຍຂອງພາກລັດເຂົ້າໃສ່ການສຶກສາ, ການສາທາລະນາສຸກ ແລະການໂພຊະນາການຢ່າງສົມເຫດສົມຜົນ ຊຶ່ງບໍ່ແມ່ນພຽງແຕ່ຍົກລະດັບຊັບສິນມະນຸດຂອງມັນຂຶ້ນ ເພື່ອການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນເທົ່ານັ້ນ, ແຕ່ຫາກຍັງຈະຕ້ອງໄດ້ຂະຫຍາຍຄວາມສາມາດຂອງປະຊາກອນຕື່ມອີກ ເພື່ອບັນລຸການພັດທະນາໄດ້ຢ່າງອິດສາຫຼະພາບ. ການສຶກສາ, ການສາທະລະນາສຸກ ແລະການໂພຊະນາການ ແມ່ນມີການເຊື່ອມໂຍງຊຶ່ງກັນ ແລະກັນ ການປັບປຸງສະຖານະພາບດ້ານການສຶກສາ ແລະສຸຂະພາບຂອງແມ່ມັນກໍ່ຍັງຊ່ວຍປັບປຸງການໂພຊະນາການ ແລະຄວາມສາມາດຮັບຮູ້ຂອງເດັກນ້ອຍນໍາ. ວິທີການທີ່ລວມເປັນອັນໜຶ່ງອັນດຽວກັນເຂົ້າຢູ່ໃນນະໂຍບາຍ ແລະການຈັດຕັ້ງປະຕິບັດ ເພື່ອຄວາມມີປະສິດທິພາບ ແລະປະສິດທິຜົນຮ່ວມກັນ ແມ່ນເປັນສິ່ງສໍາຄັນຫຼາຍ. ການປະສານການສະໜັບສະໜູນຊ່ວຍເຫຼືອຂອງຜູ້ໃຫ້ທຶນເຂົ້າກັນກໍ່ມີຄວາມສໍາຄັນຫຼາຍ ເພື່ອຈັດຕັ້ງປະຕິບັດໃຫ້ເປັນແນວດຽວກັນກັບບັນດາຍຸດທະສາດຂອງລັດຖະບານ.

ການສຶກສາທີ່ມີຄຸນນະພາບ ແລະສຸຂະພາບທີ່ດີ ແມ່ນສິ່ງຈໍາເປັນທີ່ຕ້ອງມີເພື່ອບັນລຸໄດ້ການພັດທະນາມະນຸດທີ່ສູງຂຶ້ນ ແລະເພື່ອແຜ້ວຖາງທາງໃຫ້ແກ່ປະເທດໃນການຫລຸດພົ້ນອອກຈາກສະຖານະພາບ LDC.[58] ມັນມີຫຼັກຖານພຽງພໍທີ່ຊີ້ໃຫ້ເຫັນວ່າ ການລົງທຶນເຂົ້າໃສ່ທຶນມະນຸດ (ການສຶກສາ) ແລະສຸຂະພາບ (ລວມທັງການໂພຊະນາການ, ນໍ້າ ແລະສຸຂະອະນາໄມ) ຈະນໍາໄປສູ່ອະນາຄົດທີ່ສົດໃສທາງດ້ານເສດຖະກິດ ແລະຊີວິດການເປັນຢູ່ທີ່ດີຂອງມະນຸດ. ການສຶກສາ ແລະສຸຂະພາບ ແມ່ນສິ່ງສໍາຄັນສໍາລັບໝົດທຸກຄົນ ຊຶ່ງບໍ່ຈໍາກັດພຽງແຕ່ສໍາລັບເດັກເກີດໃໝ່ ຫຼືເດັກນ້ອຍ ເນື່ອງຈາກມັນແມ່ນຄວາມເຊື່ອຕາມແບບປະເພນີນິຍົມ, ແຕ່ການເນັ້ນໜັກໃສ່ສຸຂະພາບຂອງເດັກເກີດໃໝ່ ແລະເດັກນ້ອຍນັ້ນແມ່ນມີເຫດທີ່ດີ ເພາະວ່າການມີສຸຂະພາບ ແລະໂພຊະນາການທີ່ດີຕັ້ງແຕ່ຢູ່ໃນໄວເຍົາ ຈະເຮັດໃຫ້ຄົນເຮົາມີການເຕີບໂຕທາງດ້ານຮ່າງກາຍ ແລະສະຕິປັນຍາ ທີ່ເປັນເງື່ອນໄຂທີ່ສໍາຄັນສໍາລັບການຮຽນຮູ້, ການຈື່ຈໍາ ແລະການນໍາໃຊ້ສິ່ງທີ່ຮຽນຮູ້ນັ້ນ. ສະຖານະພາບທາງດ້ານສຸຂະພາບຂອງຜູ້ໃຫຍ່ກໍ່ມີຄວາມສໍາຄັນເຊັ່ນດຽວກັນ ເພາະວ່າການມີສຸຂະພາບທີ່ແຂງແຮງ, ມີສີມືແຮງງານ ແລະມີກໍາລັງແຮງງານທີ່ມີຜະລິດຕະພາບສູງຫຼາຍຂຶ້ນ ກໍ່ຈະເຮັດໃຫ້ເສດຖະກິດມີການເຕີບໂຕຢ່າງສະຫຼັບຊັບຊ້ອນ ແລະມີປະສົບປະການຫຼາຍຂຶ້ນ. ປະຊາກອນທີ່ມີສຸຂະພາບແຂງແຮງ ກໍ່ຍັງສາມາດເຂົ້າຮ່ວມການດໍາເນີນຊີວິດທາງສັງຄົມ ແລະການເມືອງໄດ້ດີ ຊຶ່ງພາໃຫ້ເຂົາເຈົ້າກາຍເປັນພົນລະເມືອງທີ່ມີຄວາມຮັບຜິດຊອບ ແລະຮ່ວມເຮັດວຽກກັບສັງຄົມໄດ້ດີຂຶ້ນ.

ຢູ່ໃນພາກນີ້ແມ່ນໄດ້ມີການອະທິບາຍຢ່າງລະອຽດກ່ຽວກັບການສຶກສາ ແລະສາທາລະນາສຸກ ເນື່ອງຈາກ

ພວກມັນໄດ້ປະກອບສ່ວນໂດຍກົງຕໍ່ກັບການພັດທະນາມະນຸດ ແລະຊັບສິນມະນຸດ ຕາມທີ່ຕ້ອງການສຳລັບການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນ. ເກີນກວ່າບົດບາດທີ່ເປັນເຄື່ອງມືອັນຮີບດ່ວນ ແລະທັນທີທັນໃດນັ້ນ, ການສຶກສາ ແລະສາທາລະນາສຸກ ຍັງໄດ້ຂະຫຍາຍຄວາມສາມາດ ແລະອິດສະຫຼະພາບຂອງມະນຸດອີກດ້ວຍ. ຢູ່ໃນພາກນີ້ແມ່ນໄດ້ສຸມໃສ່ສະເພາະກ່ຽວກັບ: (i) ທັງໝົດທຸກແງ່ມູມຂອງການສຶກສາ ແລະການພັດທະນາສີມື; (ii) ແງ່ມູມທີ່ສຳຄັນຕ່າງໆດ້ານສາທາລະນາສຸກ ຊຶ່ງລວມທັງສຸຂະພາບຂອງແມ່ ແລະເດັກ, ພະຍາດຕິດຕໍ່ ແລະບໍ່ຕິດຕໍ່ຕ່າງໆ; ແລະ (iii) ການໂພຊະນາການ. ໂຄງສ້າງ ຫຼືເຄົ້າໂຄງປົກກະຕິຂອງພາກນີ້ ແມ່ນ "ສິດທິຕໍ່ກັບການພັດທະນາ"[59] ເພື່ອຂັບເຄື່ອນເປົ້າໝາຍການພັດທະນາທີ່ໄດ້ຮັບການຕົກລົງຢ່າງເປັນສາກົນແລ້ວ ເຊັ່ນ: ການສຶກສາເພື່ອທຸກຄົນ, ການສາທາລະນາສຸກເພື່ອທຸກຄົນ, ການໂພຊະນາການ ແລະການຄໍ້າປະກັນດ້ານສະບຽງອາຫານເພື່ອທຸກຄົນ ຊຶ່ງປັດຈຸບັນນີ້ແມ່ນຖືກເອົາເຂົ້າຢູ່ໃນວາລະເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຮອດປີ 2030 ຂອງບັນດາຜູ້ນຳໂລກແລ້ວ, ໂດຍທີ່ລັດຖະບານ ແຫ່ງ ສປປ ລາວ ກໍ່ໄດ້ມີພັນທະສັນຍາຮັບຮອງເອົາບັນດາເປົ້າໝາຍເຫຼົ່ານີ້ແລ້ວ.

## ການສຶກສາ

ຢູ່ໃນສ່ວນນີ້, ແມ່ນໄດ້ສຸມໃສ່ທັງປະລິມານ ແລະຄຸນນະພາບຂອງການສຶກສາ ຢູ່ໃນ ສປປ ລາວ. ຢູ່ໃນພາກທີ 1 ແມ່ນໄດ້ເວົ້າວ່າ ສປປ ລາວ ມີຄວາມຄືບໜ້າດີຢູ່ໃນບາງແງ່ມູມຂອງການສຶກສາ ເຊັ່ນ: ການເຂົ້າຮຽນຊັ້ນປະຖົມ, ແຕ່ວ່າມັນກໍ່ຍັງມີຄວາມຊັກຊ້າຢູ່ຫຼາຍອັນ ໂດຍສະເພາະແມ່ນໃນແງ່ມູມມິຕິດ້ານຄຸນນະພາບຢູ່ໃນທຸກລະດັບຊັ້ນຂອງການສຶກສາ. ຍັງຂາດສີມືທີ່ພຽງພໍ, ເປັນຕົ້ນແມ່ນຍັງມີຄວາມສາມາດຕໍ່າຢ່າງແຜ່ຫຼາຍ ເນື່ອງຈາກຄວາມບໍ່ຮູ້ໜັງສື ແລະບໍ່ຮູ້ຄຳນວນຂອງກຳລັງແຮງງານ ຊຶ່ງຖືວ່າເປັນອຸປະສັກອັນໃຫຍ່ຫຼວງຕໍ່ກັບພາກທຸລະກິດ. ດັ່ງທີ່ທະນາຄານໂລກໄດ້ລາຍງານໄປແລ້ວ ຢູ່ໃນບົດລາຍງານການພັດທະນາຂອງລາວ (ທະນາຄານໂລກ, 2014), ເກືອບປະມານເຄິ່ງໜຶ່ງຂອງຈຳນວນວິສາຫະກິດທີ່ຖືກສຳຫຼວດ ຢູ່ໃນ ສປປ ລາວ ໄດ້ບອກວ່າເຂົາເຈົ້າບໍ່ມີ ຫຼືມີຜູ້ສະໝັກເຂົ້າເຮັດວຽກໜ້ອຍຫຼາຍ ແມ່ນແຕ່ວຽກທີ່ບໍ່ຕ້ອງການສີມືສູງກໍ່ຕາມ ຊຶ່ງຖ້າທຽບກັບປະເທດເພື່ອນບ້ານແລ້ວ ແມ່ນມີອັດຕາສ່ວນໃນການໃຫ້ຄຳຕອບຂອງບັນດາວິສາຫະກິດທີ່ຖືກສຳຫຼວດນັ້ນສູງຫຼາຍ (50%) ຊຶ່ງອັນນີ້ມັນສະແດງໃຫ້ເຖິງບັນຫາທີ່ໜັກກໜ່ວງດ້ານໂຄງສ້າງຂອງແຮງງານ ເຊັ່ນວ່າ: ລະດັບຂອງການຮູ້ໜັງສື ແລະຮູ້ຄຳນວນຂອງກຳລັງແຮງງານລາວແມ່ນຍັງຕໍ່າຫຼາຍ. ຕົວຢ່າງ: ຢູ່ໃນການສຳຫຼວດການປະເມີນຜົນການອ່ານ ແມ່ນເຫັນວ່າຜູ້ທີ່ຈົບລະດັບທີ່ສູງກວ່າຊັ້ນມັດທະຍົມ ຢູ່ໃນ ສປປ ລາວ ແມ່ນສາມາດອ່ານອອກ, ຂຽນໄດ້ ແລະ ຄຳນວນເປັນ ເທົ່າໆກັບຜູ້ທີ່ຈົບຊັ້ນປະຖົມ ຢູ່ໃນ ສສ ຫວຽດນາມ.[60]

### ການພັດທະນາ ແລະການສຶກສາຂອງເດັກກ່ອນໄວຮຽນ

ການເອົາໃຈໃສ່ຕໍ່ການພັດທະນາເດັກກ່ອນໄວຮຽນ (ECD) ຖືວ່າເປັນໝາກຫົວໃຈທີ່ສຳຄັນ ຍ້ອນວ່າມັນເປັນການເປີດຫູເປີດຕາໃນທາງຊີວະວິທະຍາທີ່ຈຳເປັນໃຫ້ແກ່ເດັກນ້ອຍທີ່ຢູ່ໃນເກນອາຍຸທີ່ເໝາະສົມ ຊຶ່ງມັນເປັນການສ້າງພື້ນຖານໃຫ້ແກ່ການສຶກສາໃນທຸກລະດັບ. ກ່ອງທີ 3.1 ໄດ້ຊີ້ໃຫ້ເຫັນວ່າ ການເຕີບໂຕຂອງເດັກນ້ອຍເລີ່ມແຕ່ຕົ້ນຈົນຮອດອາຍຸ 3-4 ປີ ແມ່ນເຂົາເຈົ້າສາມາດຮຽນຮູ້ດ້ານຊີວະວິທະຍາ, ສາມາດເຂົ້າໃຈ ແລະມີສະຕິປັນຍາດ້ານມັນສະໝອງແລ້ວ. ຢູ່ໃນປະເທດກຳລັງພັດທະນາທີ່ມີລາຍຮັບຕໍ່າ ແມ່ນຍັງມີຄວາມຮຽກຮ້ອງຕ້ອງການທີ່ສຳຄັນກ່ຽວກັບການໂພຊະນາການທີ່ສົມດູນ ຊຶ່ງແຜນງານຂອງ ECD ກຳລັງສະໜອງໃຫ້ຢູ່. ຢູ່ໃນສິ່ງທີ່ຂາດໄປຂອງມັນນັ້ນ ແມ່ນເຫັນວ່າການເຕີບໂຕຂອງເດັກນ້ອຍອາດຈະຖືກປ່ອຍປະໃຫ້ມີຄວາມບົກພ່ອງ ແລະອັນນີ້ແມ່ນສະເພາະຢູ່ໃນລະຫວ່າງຜູ້ປົກຄອງເດັກທີ່ທຸກຍາກ ແລະ/ຫຼືເດັກນ້ອຍທີ່ດຳລົງຊີວິດຢູ່ໃນບັນດາບ້ານທີ່ຢູ່ຫ່າງໄກສອກຫຼີກ ເນື່ອງຈາກເຂົາເຈົ້າບໍ່ສາມາດມີເງິນພຽງພໍ ຫຼືຂາດ (ບໍ່ມີ) ຄວາມຮູ້ທີ່ມີຄວາມຈຳເປັນອັນແນ່ນອນສຳລັບການເຕີບໂຕຂອງເດັກນ້ອຍ. ເພາະສະນັ້ນ, ECD ຈຶ່ງເປັນຂັ້ນຕອນແຫ່ງການກ້າວໄປສູ່ຜົນສຳເລັດທີ່ຂາດບໍ່ໄດ້ ສຳລັບການບັນລຸໄດ້ການພັດທະນາມະນຸດທີ່ສູງຂຶ້ນກວ່າເກົ່າ.

ເຖິງແມ່ນວ່າ, ບັນດາແຜນງານຂອງ ECD ແມ່ນພວກມັນມີຄວາມກ້າວໜ້າທັງໝົດ, ແຕ່ກໍ່ບໍ່ເປັນທີ່ມີຊື່ສຽງ

ຫຼືຊື່ນຊອບຫຼາຍ ຢູ່ໃນ ສປປ ລາວ ໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ ທີ່ຜູ້ຄົນມັກໃຫ້ເດັກນ້ອຍຢູ່ໃນເຮືອນ. ກະຊວງສຶກສາ ແລະ ກິລາໄດ້ລາຍງານວ່າ ມີພຽງແຕ່ 39,2% ຂອງເດັກນ້ອຍທີ່ຢູ່ໃນເກນອາຍຸ 3-5 ປີ ໃນທົ່ວປະເທດ ທີ່ໄດ້ເຂົ້າຮ່ວມແຜນງານ ECD ໃນປີ 2013-2014. ເຖິງແມ່ນວ່າອັນນີ້ອາດຈະເປັນການຄາດຄະເນເກີນກວ່າຄວາມເປັນຈິງກໍ່ຕາມ, ແຕ່ພວກເຮົາກໍ່ບໍ່ໄດ້ມີຄວາມແຕກຕ່າງກ່ຽວກັບອັດຕາການເຂົ້າຮຽນຂອງເດັກຍິງ ແລະເດັກຊາຍແຕ່ຢ່າງໃດ (ຮູບທີ 3.1).[61, 62] ການເຂົ້າໂຮງຮຽນຂອງເດັກນ້ອຍອາຍຸລຸ່ມ 5 ປີ ແມ່ນປະມານ 61%, ຊຶ່ງອັນນີ້ແມ່ນຊີ້ໃຫ້ເຫັນວ່າບັນດາພໍ່ແມ່ຜູ້ປົກຄອງຂອງເຂົາເຈົ້າ ແມ່ນບໍ່ຢາກທີ່ຈະສົ່ງລູກຫຼານຂອງເຂົາເຈົ້າທີ່ມີອາຍຸຕໍ່າກວ່າ 5 ປີ ອອກນອກເຮືອນ (ນອກບ້ານ) ຂອງເຂົາເຈົ້າ.

ເຖິງແມ່ນວ່າການເຂົ້າຮຽນຢູ່ໃນແຜນງານ ECD ຈະເພີ່ມຂຶ້ນຫຼາຍກວ່າ 4 ເທົ່າ,ຖ້າສົມທຽບກັບທົດສະວັດທີ່ຜ່ານມາ,ແຕ່ມັນກໍ່ຍັງມີຊ່ອງວ່າງຄວາມແຕກໂຕນກັນທີ່ໃຫຍ່ໂຕຫຼາຍ ຢູ່ໃນລະຫວ່າງຂົງເຂດ ແລະກຸ່ມທີ່ມີລາຍໄດ້ຕ່າງໆ. ຂໍ້ມູນຈາກ LECS-5 (ສໍາລັບປີ 2012-2013) ໄດ້ສະແດງໃຫ້ເຫັນບັນດາຄວາມແຕກຕ່າງດັ່ງຕໍ່ໄປນີ້:

- ຊ່ອງວ່າງຄວາມແຕກຕ່າງລະຫວ່າງຊົນນະບົດ ແລະ ຕົວເມືອງ: ຢູ່ໃນລະຫວ່າງກຸ່ມເດັກນ້ອຍກ່ອນໄວເຂົ້າໂຮງຮຽນ ທີ່ມີອາຍຸລະຫວ່າງ 3-5 ປີ ທີ່ຢູ່ໃນເຂດຊົນນະບົດ ແມ່ນມີແຕ່ 14,7% ທີ່ໄດ້ເຂົ້າໂຮງຮຽນອະນຸບານ ແລະ ຫ້ອງ ປ ກຽມ, ໃນຂະນະທີ່ຢູ່ໃນເຂດຕົວເມືອງແມ່ນມີຫຼາຍກວ່າ 50%. ມີປະມານ 60% ຂອງຈໍານວນເດັກນ້ອຍຢູ່ໃນເຂດຕົວເມືອງ ແມ່ນໄດ້ເຂົ້າຮຽນຫ້ອງ ປ ກຽມກ່ອນທີ່ຈະເຂົ້າຮຽນຕໍ່ໃນຊັ້ນປະຖົມປີທີ 1, ຊຶ່ງຖ້າສົມທຽບກັບເຂດຊົນນະບົດແມ່ນມີພຽງແຕ່ 19% ເທົ່ານັ້ນ.

- ຊ່ອງວ່າງຄວາມແຕກຕ່າງທີ່ກ່ຽວພັນກັບລາຍຮັບ: ການເຂົ້າໂຮງຮຽນອະນຸບານຂອງເດັກນ້ອຍຢູ່ໃນຄົວເຮືອນທີ່ຮັ່ງມີທີ່ສຸດຈໍານວນ 25% ນັ້ນ ແມ່ນມີເຖິງ 47% ຊຶ່ງສົມທຽບກັບຈໍານວນຄົວເຮືອນທີ່ທຸກຍາກທີ່ສຸດ 25% ນັ້ນ ແມ່ນມີພຽງແຕ່ 11% ເທົ່ານັ້ນ.

**ກ່ອງທີ 3.1: ຊີວິດຂອງເດັກຢູ່ໃນ 28 ວັນທໍາອິດທີ່ແຮກເກີດ**

28 ວັນທໍາອິດຂອງເດັກເກີດໃໝ່ມີຊີວິດແມ່ນມີຄວາມສໍາຄັນທີ່ສຸດ, ຖ້າຫາກເຂົາເຈົ້າສາມາດມີຊີວິດຢູ່ໃນຊ່ວງໄລຍະເວລາດັ່ງກ່າວນີ້, ຄວາມອັນຕະລາຍຂອງແມ່ກໍ່ຈະຫລຸດລົງ ໂດຍທີ່ແມ່ຈະມີສະເຖຍລະພາບຫຼາຍຂຶ້ນ ໃນຂະນະທີ່ເດັກນ້ອຍມີອາຍຸເຖິງ 5 ປີ. ການກໍ່ຕົວດ້ານສະໝອງ, ການພັດທະນາຄວາມສາມາດດ້ານການຮັບຮູ້ ແລະການສ້າງຄວາມແຂງແກ່ນ/ກະດູກ ແມ່ນຈະສໍາເລັດລົງຢູ່ໃນຊຸມປີຕົ້ນໆໃນການມີຊີວິດຂອງຜູ້ຄົນ. ຕົວເລກຂ້າງລຸ່ມນີ້ສະແດງໃຫ້ເຫັນເຖິງຄວາມຮູ້ສຶກ, ວິໄສທັດ, ການໄດ້ຍິນ, ພາສາ, ແລະຫຼັງຈາກນັ້ນກໍ່ແມ່ນຄວາມສາມາດໃນການຮັບຮູ້ທີ່ສູງຂຶ້ນ ຊຶ່ງທັງໝົດນີ້ແມ່ນເລີ່ມມີການພັດທະນາມາຕັ້ງແຕ່ຕົ້ນ ຈົນເຖິງອາຍຸ 5 ໂດຍສິ່ງຕ່າງໆທັງໝົດເຫຼົ່ານີ້ ແມ່ນໄດ້ຮັບການພັດທະນາຢ່າງເຕັມສ່ວນ. ເພາະສະນັ້ນ, ການເຮັດໃຫ້ມີສຸຂະພາບທີ່ດີ ແລະການຖ່າຍທອດວິທີການໃນການດໍາລົງມີຊີວິດຂັ້ນພື້ນຖານໃຫ້ແກ່ເດັກໃນໄວເຍົາແມ່ນສິ່ງທີ່ດີທີ່ສຸດ.

**ການພັດທະນາສະໝອງຂອງມະນຸດ**




ແຫຼ່ງຂໍ້ມູນ: ແຜນປະຕິບັດງານຂອງລັດຖະບານສະຫະລັດອາເມລິກາ ສຳລັບການລ້ຽງດູເດັກນ້ອຍ, ວໍຊິງຕັນ, D.C. (2012); Nelson (2000).

ຂໍ້ມູນຂອງກະຊວງສຶກສາທິການ ແລະກິລາ ໃນປີ 2013-2014 ໄດ້ຊີ້ໃຫ້ເຫັນວ່າ ການອອກໂຮງຮຽນ ແລະການຄ້າງຫ້ອງໃນຊັ້ນ ປ1 ແມ່ນຂ້ອນຂ້າງສູງຫຼາຍ ຄືຢູ່ທີ່ 15% ແລະ 10% ຕາມລຳດັບ, ຊຶ່ງສູງກວ່າຊັ້ນອື່ນໆທີ່ຕາມມາ. ສາເຫດທີ່ພາໃຫ້ມີອັດຕາການອອກ ແລະຄ້າງຫ້ອງ ປ1 ສູງຄືແນວນີ້ ອາດຈະເປັນຍ້ອນວ່າເດັກນ້ອຍຂາດການກຽມພ້ອມມາກ່ອນໄວຮຽນ ຊຶ່ງແຜນງານ ECD ຈະຕ້ອງໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອ. ມີເດັກນ້ອຍຈຳນວນຫຼາຍໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ (ແລະຈາກຊຸມຊົນໆເຜົ່າທີ່ຢູ່ໃນເຂດຊົນນະບົດເປັນສ່ວນຫຼາຍ) ໄດ້ເຂົ້າໂຮງຮຽນປະຖົມດ້ວຍລະດັບການກຽມພ້ອມທີ່ຕ່ຳ ຍ້ອນເຂົາເຈົ້າບໍ່ໄດ້ເຂົ້າຮ່ວມໃນບັນດາແຜນງານ ECD ຊຶ່ງເຂົາເຫຼົ່ານັ້ນກໍ່ມັກຈະເສັງຕົກ ແລະຄ້າງຫ້ອງຫຼາຍ.

ມັນມີຄວາມຫຍຸ້ງຍາກຕ່າງໆດ້ານເບື້ອງຄວາມຕ້ອງການ ຈຶ່ງເຮັດໃຫ້ມີການເຂົ້າຮ່ວມໃນແຜນງານ ECD ຕ່ຳ, ເປັນຕົ້ນແມ່ນຄວາມທຸກຍາກ, ບັນດາພໍ່ແມ່ຜູ້ປົກຄອງມີຄວາມຮັບຮູ້ຕ່ຳ ຫຼືບໍ່ມີເລີຍ ຕໍ່ກັບຄຸນຄ່າຂອງ ECD, ແລະບັນດາຄວາມເຊື່ອທາງດ້ານຮີດຄອງປະເພນີກໍ່ມີສ່ວນ. ມັນມີຄວາມຈຳເປັນຕ້ອງໄດ້ມີການດຳເນີນການໂຄສະນາຊວນເຊື່ອ ເພື່ອໃຫ້ເກີດຄວາມຕ້ອງການດ້ານການສຶກສາຫຼາຍຂຶ້ນ ຄືກັນກັບທີ່ໄດ້ເຮັດຢູ່ໃນແຜນງານສຸຂະອະນາໄມລວມທີ່ນຳໂດຍຊຸມຊົນ (CLTS)[63], ເພື່ອຂ້າມຜ່ານບັນຫານີ້.

ສ່ວນເບື້ອງການສະໜອງກໍ່ມີຄວາມຫຍຸ້ງຍາກເຊັ່ນກັນ ຊຶ່ງມັນມີຄວາມຈຳເປັນ ທີ່ຈະຕ້ອງໄດ້ມີການເອົາໃຈໃສ່ຢ່າງຮີບດ່ວນ. ຕົວຢ່າງ: ບໍ່ມີໂຮງລ້ຽງເດັກ ແລະສິ່ງອຳນວຍຄວາມສະດວກກ່ອນໄວຮຽນທີ່ພຽງພໍ, ໂດຍສະເພາະແມ່ນຢູ່ໃນບັນດາເຂດຊົນນະບົດ. ອີງຕາມຂໍ້ມູນປີ 2013-2014 ຂອງກະຊວງສຶກສາທິການ ແລະກິລາ ເຫັນວ່າມີໂຮງຮຽນລ້ຽງເດັກ, ອະນຸບານ ແລະກຽມປະຖົມທັງໝົດຢູ່ໃນທົ່ວປະເທດ ຈຳນວນ 2.125 ແຫ່ງ, ຊຶ່ງມີຢູ່ 5.486 ຫ້ອງຮຽນ (ລວມທັງຂອງເອກະຊົນທີ່ເກັບຄ່າທຳນຽມຕ່າງໆ ແລະຂອງລັດ). ເຖິງແນວໃດກໍ່ຕາມ, ຈຳນວນໂຮງຮຽນເຫຼົ່ານີ້ກໍ່ຍັງເຫັນວ່າໜ້ອຍກວ່າຈຳນວນໂຮງຮຽນປະຖົມເຖິງສີ່ເທົ່າ. ຈາກການສັງເກດການພາກສະໜາມຢູ່ແຂວງເຊກອງ ໄດ້ສະແດງໃຫ້ເຫັນວ່າມີພຽງແຕ່ 19 ຫ້ອງຮຽນ ສຳລັບໂຮງລ້ຽງເດັກ ແລະໂຮງຮຽນອະນຸບານ ຢູ່ໃນແຂວງ ໃນເດືອນພຶດສະພາ 2015.

ຄຸນນະພາບ (ຕ່ຳ) ຂອງແຜນງານ ECD ສ່ວນຫຼາຍກໍ່ແມ່ນປັດໄຈຂໍ້ຫຍຸ້ງຍາກອີກອັນໜຶ່ງ. ນາຍຄູ (ບັນດາຜູ້ອຳນວຍຄວາມສະດວກ) ສ່ວນຫຼາຍທີ່ຢູ່ໃນລະດັບຊັ້ນການສຶກສານີ້ ແມ່ນບໍ່ມີ ຫຼືມີໂອກາດຈຳກັດຫຼາຍ ສຳລັບ

ການໄດ້ຮັບການຝຶກອົບຮົມໃນດ້ານທີ່ຈຳເປັນ ແລະມີຄວາມຕ້ອງການ. ໃນຕົວຈິງແລ້ວ, ແມ່ນເຂົາເຈົ້າມີຄວາມຫຍຸ້ງຍາກຫຼາຍດ້ານ ໃນການເຮັດໃຫ້ເດັກໜຸ່ມທີ່ຢູ່ໃນເກນອາຍຸ ແລະມີຄວາມສາມາດທີ່ແຕກຕ່າງກັນ ຮຽນຜ່ານການຫຼິ້ນ ແລະການເວົ້າ. ຂາດແຄນອຸປະກອນເຄື່ອງຫຼິ້ນທີ່ສຳຄັນຕ່າງໆ (ຕົວຢ່າງ: ເຄື່ອງຫຼິ້ນຕ່າງໆ, ກະດານດຳ ແລະສໍຂາວ) ແລະການສະໜອງການໂພຊະນາການ ທີ່ຢູ່ໃນລະຫວ່າງສິ່ງອື່ນໆເຫຼົ່ານັ້ນ ກໍ່ເປັນອີກປັດໄຈຈຳກັດໜຶ່ງທີ່ແຜນງານ ECD ກຳລັງປະເຊີນຢູ່.

## ການສຶກສາຊັ້ນປະຖົມ

ລະດັບການເຂົ້າຮຽນສຸດທິໃນຊັ້ນປະຖົມ ແມ່ນໃກ້ຄຽງກັບລະດັບຂອງສາກົນແລ້ວ (ຮູບທີ 3.1); ຊຶ່ງມັນໄດ້ເພີ່ມຂຶ້ນຈາກປະມານ 84% ໃນປີ 2005-2006 ມາເປັນປະມານ 98% ໃນປີ 2013-2014, ໂດຍເພີ່ມຂຶ້ນ 14% ໃນທົດສະວັດທີ່ຜ່ານມາ ແລະຄ່າໃກ້ຄຽງກັນຂອງການເຂົ້າຮຽນຢູ່ໃນບັນດາແຂວງຕ່າງໆກໍ່ເຫັນວ່ານ້ອຍຫຼາຍ (ບໍ່ແຕກຕ່າງກັນຫຼາຍ). ເພາະສະນັ້ນ, ລະດັບການເຂົ້າຮຽນລວມຂອງປະເທດຈຶ່ງບໍ່ຄ່ອຍປະກົດມີບັນຫາປານໃດ. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງມີຊ່ອງວ່າງຄວາມແຕກຕ່າງກັນຫຼາຍ ກ່ຽວກັບອັດຕາການເຂົ້າຮຽນຢູ່ໃນກຸ່ມຕ່າງໆທີ່ມີລາຍໄດ້ຕ່າງກັນ, ເຂດຊົນນະບົດ ແລະຕົວເມືອງ, ແລະກຸ່ມຊົນເຜົ່າຕ່າງໆ (ຕາຕະລາງ 3.1).

ອັດຕາການອອກໂຮງຮຽນກໍ່ເປັນໄປຕາມທິດທາງດຽວກັນນີ້ ຊຶ່ງຂຶ້ນຢູ່ກັບສະພາບທາງເສດຖະກິດ, ສະຖານທີ່ຕັ້ງຂອງໂຮງຮຽນ ແລະກຸ່ມຊົນເຜົ່າ, ໂດຍບັນຫານີ້ແມ່ນມີຫຼາຍຢູ່ໃນເຂດຊົນນະບົດ ແລະເຂດຫ່າງໄກສອກຫຼີກທີ່ມີກຸ່ມຊົນເຜົ່າຈຳນວນຫຼາຍດຳລົງຊີວິດ ແລະອາໄສຢູ່. ຍັງມີປະມານ 23% ຂອງບັນດາໂຮງຮຽນປະຖົມແມ່ນຍັງເປັນໂຮງຮຽນມູນ (ບໍ່ທັນເປັນສົມບູນ) ຊຶ່ງສ່ວນຫຼາຍແມ່ນຢູ່ໃນ ແຂວງສາລະວັນ, ເຊກອງ ແລະ ຜົ້ງສາລີ ໂດຍບັນດາແຂວງພູດອຍທັງໝົດ ແມ່ນເປັນບ່ອນທີ່ມີອັດຕາການເຂົ້າ ແລະອອກໂຮງຮຽນສູງກວ່າບ່ອນອື່ນ.[64] ສຳລັບຈຳນວນຜູ້ທີ່ອອກໂຮງຮຽນ ແລະຄ້າງຫ້ອງ ຢູ່ໃນ ສປປ ລາວ, ຖ້າສົມທຽບກັບຫວຽດນາມ ແລະ ກຳປູເຈຍ ແມ່ນຂ້ອນຂ້າງທີ່ຈະບໍ່ເປັນຜົນດີປານໃດ ເນື່ອງຈາກເຂົາເຈົ້າມີການຄ້າງຫ້ອງຕ່ຳກວ່າຫຼາຍ.[65]

ໃນເບື້ອງທີ່ເປັນທາງບວກ, ແມ່ນ ສປປ ລາວ ມີຈຳນວນໂຮງຮຽນປະຖົມຫຼາຍເທົ່າໆກັບຈຳນວນບ້ານ ຫຼືຫຼາຍກວ່ານັ້ນ. ຈຳນວນໂຮງຮຽນປະຖົມສົມບູນແມ່ນເປັນຂໍ້ຫຍຸ້ງຍາກທີ່ສຳຄັນອັນໜຶ່ງ ຕໍ່ກັບການເຂົ້າໂຮງຮຽນຂອງເດັກນ້ອຍ ເນື່ອງຈາກພວກມັນໄດ້ຫລຸດລົງຈາກປະມານ 44,2% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ (ທີ່ມີໂຮງຮຽນປະຖົມສົມບູນ) ມາເປັນ 22,8% ໃນລະຫວ່າງ ປີ 2005/2006 ແລະ 2013/2014.[66] ບັນດາປັດໄຈເຫຼົ່ານີ້ແມ່ນຂ້ອນຂ້າງປະກອບສ່ວນຫຼາຍ ຕໍ່ກັບການຫລຸດລົງຂອງອັດຕາການເຂົ້າຮຽນລວມໃນທົ່ວປະເທດ.

**ຮູບທີ 3.1: ບັນດາແນວໂນ້ມຂອງການເຂົ້າຮຽນຕາມລະດັບຊັ້ນຕ່າງໆ**




ແຫຼ່ງຂໍ້ມູນ: EMIS, ກະຊວງສຶກສາທິການ ແລະກິລາ, ນະຄອນຫຼວງວຽງຈັນ.

ເລື່ອງຕ່າງໆດ້ານຄວາມຕ້ອງການ ເບິ່ງຄ້າຍກັບວ່າຈະເປັນປັດໄຈສໍາຄັນ ທີ່ກະທົບຕໍ່ກັບການດໍາເນີນການ, ຊຶ່ງບາງອັນໃນນີ້ ແມ່ນມີດັ່ງນີ້:

- ໃນເວລາທີ່ເດັກນ້ອຍເຂົ້າຮຽນຢູ່ໃນລະດັບຊັ້ນຮຽນຕ່າງໆນັ້ນແມ່ນເຂົາເຈົ້າມີອາຍຸເກີນ ຍ້ອນວ່າເຂົາເຈົ້າເຂົ້າຮຽນຊ້າ ແລະຮຽນຄ້າງຫ້ອງ, ຊຶ່ງບໍ່ເໝາະສົມກັບຫ້ອງທີ່ເຂົາຮຽນຢູ່ (ເກີດຄວາມໜ້າອາຍ);

- ຜູ້ທີ່ເຂົ້າຮຽນຮຸ່ນທໍາອິດກໍ່ບໍ່ມີຄວາມຄຸ້ນເຄີຍກັບລະບົບການສຶກສາ ແລະເປັນຜູ້ທີ່ບໍ່ໄດ້ເຂົ້າຮ່ວມໃນແຜນງານ ECD ຊຶ່ງອັນນີ້ໄດ້ປະກອບສ່ວນເຮັດໃຫ້ມີອັດຕາການເຂົ້າຮຽນຕໍ່າ ແລະມີອັດຕາການອອກໂຮງຮຽນສູງ (ເບິ່ງຢູ່ໃນກ່ອງທີ 3.2);

- ເປັນຜູ້ທີ່ທຸກຍາກ ແລະເປັນກຸ່ມຊົນເຜົ່າຈໍານວນໜຶ່ງ (ເຊັ່ນ: ຈີນ-ຕິເບດ, ມອນ-ຂະແມ) ທີ່ອາໄສດໍາລົງຊີວິດຢູ່ໃນເຂດພູສູງ ແລະຫ່າງໄກສອກຫຼີກ ເປັນຈໍານວນຫຼາຍ ຊຶ່ງບໍ່ພຽງແຕ່ວ່າມີໂຮງຮຽນທີ່ຕັ້ງຢູ່ຫ່າງໄກຈາກບ້ານຂອງເຂົາເຈົ້າເທົ່ານັ້ນ, ແຕ່ໂຄງລ່າງພື້ນຖານອື່ນໆ ແລະ ການຄົມມະນາຄົມຂົນສົ່ງ ກໍ່ຍັງຂາດແຄນ ແລະບໍ່ພຽງພໍຢູ່ດີ;

- ການດຶງ (ຖອນ) ເອົານັກຮຽນອອກຈາກໂຮງຮຽນໃນລະດູການເກັບກ່ຽວ ແມ່ນເປັນສິ່ງປົກກະຕິທໍາມະດາຢູ່ໃນສັງຄົມລາວໃນປັດຈຸບັນ ແລະຄູສອນບາງຈໍານວນກໍ່ເປັນເຊັ່ນນັ້ນຄືກັນ ຊຶ່ງເຮັດໃຫ້ສະຖານະການຮ້າຍແຮງຂຶ້ນຕື່ມອີກ. ສິ່ງດັ່ງກ່າວນີ້ແມ່ນເກີດຂຶ້ນຢູ່ທຸກທີ່ ໃນ ສປປ ລາວ, ແຕ່ໂດຍສະເພາະແມ່ນຢູ່ໃນເຂດທີ່ມີການປູກເຂົ້າ ເນື່ອງຈາກມັນຕ້ອງການແຮງງານສໍາລັບການເກັບກ່ຽວ;

- ພາສາກໍ່ແມ່ນສິ່ງກີດຂວາງທີ່ສໍາຄັນສໍາລັບເດັກນ້ອຍຜູ້ທີ່ (ແລະພໍ່ແມ່ຜູ້ປົກຄອງທີ່) ບໍ່ສາມາດເວົ້າພາສາລາວໄດ້ ຄືກັນກັບພາສາທີໜຶ່ງ (ພາສາແມ່) ຂອງເຂົາເຈົ້າ (ກ່ອງທີ 3.3). ເຖິງແມ່ນວ່າ, ຈໍານວນນາຍຄູທີ່ສອນຢູ່ຊັ້ນປະຖົມ ທີ່ເປັນຊົນເຜົ່າຕົ້ນກໍາເນີດດັ່ງເດີມຂອງເຂົາເຈົ້າ ແມ່ນໄດ້ຮັບການຝຶກອົບຮົມ ແລະຖືກບັນຈຸເຂົ້າເປັນພະນັກງານຄູທີ່ມີເງິນລ່ວງເວລາ, ແຕ່ຄວາມສາມາດ ແລະຄຸນນະພາບຂອງເຂົາເຈົ້າແມ່ນຍັງຂາດແຄນຢູ່ຫຼາຍ.[67]

ບັນດາປັດໄຈດ້ານການສະໜອງກໍ່ມີປະຕິກິລິຍາຕໍ່ກັບເລື່ອງຕ່າງໆດ້ານການສະໜອງ ເຊັ່ນວ່າ: ການຈັດຝຶກອົບຮົມທີ່ມີຄຸນນະພາບຕໍ່າໃຫ້ແກ່ນາຍຄູ; ເພາະສະນັ້ນ, ຈຶ່ງສົ່ງເສີມເຮັດໃຫ້ການສິດສອນຂີ້ຮ້າຍລົງ. ບັນດາຖານຂໍ້ມູນຂອງ EMIS ໄດ້ສະແດງໃຫ້ເຫັນວ່າ ມີຢູ່ປະມານໜຶ່ງສ່ວນສີ່ຂອງຈໍານວນໂຮງຮຽນປະຖົມທີ່ມີການສອນຫ້ອງຄວບ ເນື່ອງຈາກມີຈໍານວນນັກຮຽນໜ້ອຍ ແລະມີຄວາມຈໍາກັດດ້ານສິ່ງອໍານວຍຄວາມສະດວກຕ່າງໆ.[68] ສິ່ງທີ່ເຮັດໃຫ້ເລື່ອງຕ່າງໆເຫຼົ່ານີ້ຂີ້ຮ້າຍລົງນັ້ນ ແມ່ນຍ້ອນພະນັກງານຄູສ່ວນຫຼາຍບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການສອນຫ້ອງຄວບ.[69] ປະມານເຄິ່ງໜຶ່ງຂອງນາຍຄູສອນຊັ້ນປະຖົມແມ່ນບໍ່ເຄີຍຜ່ານໂຮງຮຽນສ້າງຄູ ຫຼືວິທະຍາໄລມາກ່ອນ, ຊຶ່ງອັນນີ້ແມ່ນມີຢູ່ໃນເຂດຊົນນະບົດ ແລະຫ່າງໄກສອກຫຼີກ ຫຼາຍກວ່າຢູ່ໃນເຂດຕົວເມືອງ (ບົດລາຍງານຂອງ EMIS ໃນປີt 2013-2014).

ຕາມທັດສະນະຂອງບັນດາບັນຫາຕ່າງໆທີ່ກ່າວມາຂ້າງເທິງນີ້, EMIS ໄດ້ຊີ້ໃຫ້ເຫັນວ່າ ມີພຽງແຕ່ສາມສ່ວນສີ່ຂອງຈໍານວນເດັກນ້ອຍທີ່ສາມາດຮຽນຈົບຊັ້ນປະຖົມ ໃນປີ 2013-2014. ໂດຍສະເພາະຢູ່ໃນບັນດາເມືອງທີ່ທຸກຍາກ ແມ່ນມີພຽງແຕ່ 50% ຂອງເດັກນ້ອຍທີ່ຮຽນຈົບຊັ້ນປະຖົມ.

**ຕາຕະລາງ 3.1: ກະແສການເຂົ້າຮຽນໃນຊັ້ນປະຖົມ (ອາຍຸ 6-10 ປີ), 2012-2013**

| ຕາມກຸ່ມ | ການເຂົ້າຮຽນ | ການອອກໂຮງຮຽນ |
|---|---|---|
| ກຸ່ມທີ 1 (ທຸກຍາກທີ່ສຸດ) | 77,96 | 1,48 |
| ກຸ່ມທີ 2 | 85,45 | 1,16 |
| ກຸ່ມທີ 3 | 88,80 | 0,88 |
| ກຸ່ມທີ 4 | 89,35 | 0,88 |
| ກຸ່ມທີ 5 (ຮັ່ງມີທີ່ສຸດ) | 95,95 | 0,18 |
| ລວມທັງໝົດ | 85,70 | 1,05 |
| **ຕາມເຂດຊົນນະບົດ ແລະຕົວເມືອງ** | | |
| ເຂດຕົວເມືອງ | 94,32 | 1,15 |
| ເຂດຊົນນະບົດ | 83,80 | 0,56 |
| **ຕາມຕົວເມືອງທີ່ມີຄວາມສະດວກ** | | |
| ເຂດຕົວເມືອງ | 94,32 | 0,56 |
| ເຂດຊົນນະບົດທີ່ມີຖະໜົນເຂົ້າເຖິງ | 83,96 | 1,21 |
| ເຂດຊົນນະບົດທີ່ບໍ່ມີຖະໜົນເຂົ້າເຖິງ | 82,20 | 0,70 |
| **ຕາມກຸ່ມພາສາຊົນເຜົ່າ** | | |
| ລາວ-ໄຕ | 91,50 | 0,92 |
| ມອນ-ຂະແມ | 81,34 | 1,13 |
| ຈີນ-ຕີເບດ | 68,15 | 1,56 |
| ມົ້ງ-ອີມຽນ | 83,00 | 1,10 |
| **ຕາມພາກ** | | |
| ນະຄອນຫຼວງວຽງຈັນ | 98,10 | 0,40 |
| ພາກເໜືອ | 85,70 | 1,10 |
| ພາກກາງ | 87,20 | 1,00 |
| ພາກໃຕ້ | 80,76 | 1,40 |

ແຫຼ່ງຂໍ້ມູນ: LECS-5.

**ກ່ອງທີ 3.2: ການອອກຈາກໂຮງຮຽນປະຖົມ – ການວິໄຈຕາມຕົວປ່ຽນ ແລະກໍລະນີສຶກສາ ການວິໄຈໃນຫຼາຍຕົວປ່ຽນ (ຫຼາຍສ່ວນ ຫຼືຫຼາຍແງ່ມູມ)**

ການວິໄຈທີ່ນຳໃຊ້ວິທີການຄຳນວນທາງເສດຖາມິຕິ ແລະສະຖິຕິ ທີ່ຈັດຂຶ້ນໃນປີ 2012-2013 ດ້ວຍການນຳໃຊ້ຂໍ້ມູນຈາກ LECS-5 ໃນປີ 2012/2013 ເພື່ອກຳນົດຄ່າການປ່ຽນແປງຂອງການເຂົ້າ ແລະອອກໂຮງຮຽນຊັ້ນປະຖົມ. ຜົນຂອງການສຶກສານີ້ໄດ້ສະແດງໃຫ້ເຫັນວ່າເດັກນ້ອຍທີ່ມີອາຍຸເກີນ, ລາຍໄດ້ຂອງຄົວເຮືອນ ແລະ ຂະໜາດຂອງຄົວເຮືອນ ແມ່ນເປັນສາມຕົວກຳນົດທີ່ສຳຄັນຕໍ່ກັບການເຂົ້າໂຮງຮຽນຂອງເດັກນ້ອຍ ນອກຈາກນີ້ກໍ່ແມ່ນການສຶກສາຂອງພໍ່ແມ່ຜູ້ປົກຄອງຂອງເຂົາເຈົ້າ. ໃນເມື່ອເດັກນ້ອຍຕ້ອງໄດ້ມີລາຍຈ່າຍສຳລັບການການເຂົ້າໂຮງຮຽນ ແລະບັນດາແຜນງານການຊ່ວຍເຫຼືອທາງສັງຄົມກໍ່ຍັງຈຳກັດຢູ່ນີ້ ແມ່ນຂ້ອນຂ້າງເປັນບັນຫາລວມທີ່ບັນດາຄົວເຮືອນທີ່ທຸກຍາກກວ່າ ຫຼືຄົວເຮືອນທີ່ມີອັດຕາການເອື້ອອີງແຮງງານສູງ ມັກຈະໃຫ້ເດັກນ້ອຍຂອງເຂົາເຈົ້າອອກໂຮງຮຽນຢູ່ໃນໄວອາຍຸທີ່ຍັງອ່ອນນ້ອຍ. LECS-5 ໄດ້ຄາດຄະເນວ່າລາຍຈ່າຍຕໍ່ກັບການສຶກສາຂອງຄົວເຮືອນ ແມ່ນເທົ່າກັບປະມານ 1,3% ຂອງລາຍຈ່າຍທັງໝົດຂອງຄົວເຮືອນໂດຍສະເລ່ຍ, ແຕ່ສຳລັບບັນດາຄົວເຮືອນທີ່ມີເດັກນ້ອຍໃນເກນອາຍຸລະຫວ່າງ 6-17 ປີ ແມ່ນມີລາຍຈ່າຍຕໍ່ກັບການສຶກສາ ເທົ່າກັບ 6,6% ຂອງລາຍຈ່າຍທັງໝົດຂອງຄົວເຮືອນ.

ການວິໄຈທາງເສດຖາມິຕິຍັງຊີ້ໃຫ້ເຫັນອີກວ່າ ເຫດການຊ໊ອກກະທັນຫັນ ກໍ່ສາມາດເປັນຜົນກະທົບທີ່ບໍ່ດີ ຕໍ່ກັບຄວາມຈື່ຈຳຂອງເດັກນ້ອຍຢູ່ໃນໂຮງຮຽນ.

**ກໍລະນີສຶກສາ**

ຄອບຄົວຂອງ ທ່ານ ຄຳ ແລະ ນາງ ຈູມສີ ຢູ່ບ້ານດັກເລ, ເມືອງດັກຈຶງ, ແຂວງເຊກອງ ມີເດັກນ້ອຍ (ລູກ) 6 ຄົນ ໂດຍເດັກນ້ອຍສອງຄົນທຳອິດຂອງເຂົາເຈົ້າ ແມ່ນບໍ່ໄດ້ສືບຕໍ່ເຂົ້າໂຮງຮຽນອີກ ພາຍຫຼັງທີ່ເຂົາເຈົ້າຮຽນຈົບຊັ້ນປະຖົມແລ້ວ. ເຫດຜົນສຳຄັນຕົ້ນຕໍທີ່ເດັກນ້ອຍຜູ້ທີ່ໃຫຍ່ກວ່າສອງຄົນນັ້ນໄດ້ອອກໂຮງຮຽນໄປ ແມ່ນເປັນຍ້ອນພໍ່ແມ່ຜູ້ປົກຄອງຂອງເຂົາເຈົ້າບໍ່ມີຄວາມສາມາດຈ່າຍໃຫ້ເຂົາເຈົ້າເຂົ້າໂຮງຮຽນອີກຕໍ່ໄປໄດ້ ຊຶ່ງເດັກນ້ອຍສອງຄົນນີ້ໄດ້ຖືກຮຽກຮ້ອງໃຫ້ເອົາ (ດູແລ) ນ້ອງຜູ້ທີ່ຍັງນ້ອຍກວ່າ ແລະເຂົາເຈົ້າເຫຼົ່ານີ້ກໍ່ຍັງສາມາດຊ່ວຍເຮັດວຽກເພື່ອໃຫ້ໄດ້ລາຍໄດ້ເພີ່ມມາສູ່ຄອບຄົວນຳອີກ. ໃນປັດຈຸບັນນີ້, ເດັກນ້ອຍສອງຄົນທີ່ໄດ້ອອກຈາກໂຮງຮຽນໄປແລ້ວນັ້ນ ໄດ້ຊ່ວຍເຫຼືອຄອບຄົວຂອງເຂົາເຈົ້າໃນການເຮັດກິດຈະກຳຕ່າງໆຢູ່ໃນໄຮ່ສວນ ແລະທັງຍັງເອົານ້ອງສອງຄົນທີ່ຍັງນ້ອຍກວ່າໝູ່ຂອງເຂົາເຈົ້າ ຊຶ່ງຍັງບໍ່ທັນໄດ້ເລີ່ມເຂົ້າໂຮງຮຽນເທື່ອ. ສ່ວນເດັກນ້ອຍອີກສອງຄົນກາງທີ່ກຳລັງຮຽນຢູ່ໃນຊັ້ນປະຖົມນັ້ນ ກໍ່ຍັງຖືກບີບໃຫ້ຂາດໂຮງຮຽນເປັນຫຼາຍອາທິດ ໃນລະຫວ່າງຊ່ວງໄລຍະເວລາຂອງການປູກເຂົ້າໄຮ່ ເນື່ອງຈາກເຂົາເຈົ້າມີຄວາມຈຳເປັນຕ້ອງໄດ້ຮ່ວມກັບພໍ່ແມ່ຜູ້ປົກຄອງ ແລະເອື້ອຍ-ອ້າຍຜູ້ທີ່ໃຫຍ່ກວ່າຂອງເຂົາເຈົ້າ ເຮັດວຽກຢູ່ໃນໄຮ່ສວນ ທີ່ຢູ່ໄກຈາກບ້ານເຮືອນຂອງເຂົາເຈົ້າ ອັນເປັນເຫດເຮັດໃຫ້ການຮຽນຂອງເຂົາເຈົ້າບໍ່ເປັນການຕໍ່ເນື່ອງ. ໃນເມື່ອເຂົາເຈົ້າກັບຄືນມາໂຮງຮຽນ ແມ່ນເຂົາເຈົ້າເຫັນວ່າບໍ່ສາມາດຮຽນທັນຜູ້ອື່ນໄດ້ ແລະປັດຈຸບັນນີ້ ເຂົາເຈົ້າກໍ່ຍັງສົງໄສ ແລະ ຖາມຕົນເອງວ່າ ຍັງດົນປານໃດທີ່ເຂົາເຈົ້າຈະສາມາດຢູ່ໃນໂຮງຮຽນຕໍ່ໄປຈົນເຖິງທີ່ສຸດໄດ້. ເຫດຜົນທີ່ຄອບຄົວຂອງ ທ່ານ ຄຳ ຈະຕ້ອງໄດ້ເດີນທາງໄປໄຮ່ສວນທີ່ຢູ່ໄກນັ້ນ ແມ່ນຍ້ອນບ້ານເກົ່າຂອງລາວໄດ້ຖືກຈັດສັນໃຫ້ຍ້າຍໄປຕັ້ງຢູ່ບ່ອນໃໝ່, ແຕ່ໄຮ່ສວນຂອງລາວແມ່ນຍັງຢູ່ໃນບໍລິເວນໃກ້ຄຽງກັບບ້ານເດີມ. ຢູ່ໃນຂອບເຂດໃກ້ຄຽງກັບບ້ານໃໝ່ ແມ່ນມີເນື້ອທີ່ດິນທີ່ເໝາະສົມກັບການປູກຝັງໜ້ອຍຫຼາຍ; ດັ່ງນັ້ນ, ມັນຈຶ່ງບໍ່ແມ່ນເລື່ອງງ່າຍປານໃດທີ່ຈະຫາຕອນດິນໃໝ່ສຳລັບການປູກຝັງໄດ້. ນອກຈາກນັ້ນ, ທ່ານ ຄຳ ຍັງເປັນຜູ້ຖືຄອງທີ່ດິນຂະໜາດນ້ອຍທີ່ທຸກຍາກຜູ້ໜຶ່ງ ທີ່ໄດ້ຮັບຄວາມທຸກທໍລະມານຈາກການຂາດເຂົ້າກິນເປັນເວລາຫຼາຍເດືອນ ຊຶ່ງໄດ້ກົດດັນໃຫ້ລາວເອົາເດັກນ້ອຍຜູ້ທີ່ໃຫຍ່ກວ່າຂອງລາວອອກຈາກໂຮງຮຽນ ເພື່ອຊ່ວຍວຽກຄອບຄົວໃຫ້ມີລາຍໄດ້ເພີ່ມຕື່ມ.

**ກ່ອງທີ 3.3: ເລື່ອງກ່ຽວກັບພາສາ - ການສັງເກດການຢູ່ພາກສະໜາມ**

ການສຳພາດຫົວໜ້າໜວດໂຮງຮຽນ ຢູ່ບ້ານໜຶ່ງໃນເມືອງຄຳ, ແຂວງຊຽງຂວາງ ໄດ້ຊີ້ໃຫ້ເຫັນວ່າ ສິ່ງກີດຂວາງດ້ານພາສາ ປະກົດວ່າເປັນປັດໄຈຂໍ້ຫຍຸ້ງຍາກສຳລັບການສອນເດັກນ້ອຍຢູ່ໃນໂຮງຮຽນ ຊຶ່ງມັນແມ່ນສາເຫດທີ່ເຮັດໃຫ້ອັດຕາການເຂົ້າໂຮງຮຽນທີ່ຕ່ຳ ແລະ ອັດຕາການອອກໂຮງຮຽນທີ່ສູງ. ສຳລັບເລື່ອງສຳຄັນກ່ຽວກັບສິ່ງກີດຂວາງດ້ານພາສາ ແມ່ນສັງລວມໄວ້ຂ້າງລຸ່ມນີ້:

ຄວາມສາມາດຂອງນັກຮຽນທີ່ມາຈາກຊຸມຊົນໆເຜົ່າຕ່າງໆ ເບິ່ງແລ້ວເຫັນວ່າຂ້ອນຂ້າງຕ່ຳຫຼາຍ, ຖ້າສົມທຽບກັບນັກຮຽນທີ່ບໍ່ແມ່ນມາຈາກກຸ່ມຊົນເຜົ່າຕ່າງໆ. ແຕ່ເຖິງຢ່າງໃດກໍ່ຕາມ, ການສັງເກດການນີ້ແມ່ນອາດຈະບໍ່ກວມເອົາຈຳນວນຫຼາຍ ແລະເລິກເຊິ່ງພໍ. ໃນຄວາມເປັນຈິງແລ້ວ, ຂໍ້ຫຍຸ້ງຍາກທີ່ສຳຄັນຕົ້ນຕໍໃນການສອນແລະການຝຶກອົບຮົມເດັກນ້ອຍທີ່ເປັນກຸ່ມຊົນເຜົ່ານັ້ນ ແມ່ນເລື່ອງກ່ຽວກັບພາສາ. ໃນຕົວຈິງ, ຫຼັກສູດການຮຽນ-ການສອນທັງໝົດແມ່ນຂຽນເປັນພາສາລາວ ຊຶ່ງນັກຮຽນທີ່ມາຈາກຊຸມຊົນໆເຜົ່າຕ່າງໆ ແມ່ນມີຄວາມເຂົ້າໃຈຍາກ

ນາຍຄູ (ທີ່ເປັນຊົນເຜົ່າ) ຈຳນວນຫຼາຍຢູ່ໃນບັນດາໂຮງຮຽນເຫຼົ່ານີ້ ແມ່ນມີຄວາມສາມາດເວົ້າພາສາລາວໄດ້ບໍ່ແຈ້ງປານໃດ ຊຶ່ງຕ່ຳກວ່າຄວາມຕ້ອງການຕົວຈິງ ເນື່ອງຈາກເຂົາເຈົ້າບໍ່ຄຸ້ນເຄີຍກັບມັນປານໃດ. ອີກອັນໜຶ່ງ, ບັນດານາຍຄູທີ່ເວົ້າໄດ້ພຽງແຕ່ພາສາລາວນັ້ນ ພັດສອນຢູ່ໃນຫ້ອງຮຽນທີ່ເຕັມໄປດ້ວຍນັກຮຽນຊົນເຜົ່າ ຊຶ່ງກາຍເປັນສິ່ງກີດຂວາງດ້ານການສື່ສານກັບນັກຮຽນ. ສິ່ງທີ່ຕາມມາ, ແມ່ນເຮັດໃຫ້ບັນດານັກຮຽນທີ່ມາຈາກກຸ່ມຊົນເຜົ່າຕ່າງໆນັ້ນ ບໍ່ສາມາດປັບປຸງຍົກລະດັບພາສາລາວຂອງເຂົ້າເຈົ້າໄດ້ຢ່າງສົມບູນ ຕາມທີ່ເຂົາເຈົ້າຄວນຈະເປັນ.

ລະດັບຂອງການຮຽນທີ່ຕ່ຳນັ້ນໄດ້ຫລຸດຜ່ອນຄວາມພໍໃຈຂອງພໍ່ແມ່ຜູ້ປົກຄອງ ໃນການສົ່ງເດັກນ້ອຍຂອງເຂົາເຈົ້າໄປເຂົ້າໂຮງຮຽນ, ຊຶ່ງຮອບວຽນ (ຫຼືວົງຈອນອຸບາດອັນນີ້) ແມ່ນຍັງຈະສືບຕໍ່ໄປສູ່ນັກຮຽນຮຸ່ນຕໍ່ໆໄປນຳອີກ.

ແຫຼ່ງຂໍ້ມູນ: ການສັງເກດການພາກສະໜາມຢູ່ ແຂວງຊຽງຂວາງ, ເດືອນພະຈິກ 2015.

## ການສຶກສາຊັ້ນມັດທະຍົມ

ລວມຍອດອັດຕາການເຂົ້າຮຽນສຸດທິຢູ່ໃນລະດັບຊັ້ນມັດທະຍົມຕອນຕົ້ນ ໃນປີ 2013-2014 ແມ່ນ 74,4% (ເພີ່ມຂຶ້ນຈາກ 51,7% ໃນປີ 2005-2006), ແຕ່ວ່າມັນກໍ່ຍັງຕ່ຳກວ່າລະດັບຊັ້ນປະຖົມຢູ່ປະມານ 20% ກວ່າໆ. ສ່ວນລວມຍອດອັດຕາການເຂົ້າຮຽນສຸດທິຢູ່ໃນລະດັບຊັ້ນມັດທະຍົມຕອນປາຍແມ່ນ 41,3%, ຊຶ່ງຕ່ຳກວ່າລະດັບຊັ້ນມັດທະຍົມຕອນຕົ້ນປະມານ 30% (ຮູບທີ 3.1). ສຳລັບອັດຕາການຂ້າມຜ່ານຈາກລະດັບຊັ້ນປະຖົມໄປສູ່ລະດັບຊັ້ນມັດທະຍົມຕອນຕົ້ນໃນຊຸມປີຜ່ານມານີ້ ແມ່ນບໍ່ໄດ້ມີການປັບປຸງປານໃດ ຄືເພີ່ມຂຶ້ນຈາກ 85% ໃນປີ 2007-2008 ມາເປັນ 89,4% ໃນປີ 2013-2014.

ສ່ວນອັດຕາການຂ້າມຜ່ານຈາກລະດັບຊັ້ນມັດທະຍົມຕອນຕົ້ນ ໄປສູ່ລະດັບຊັ້ນມັດທະຍົມຕອນປາຍ ໃນປີ 2013-2014 ແມ່ນປະມານ 85%. ໃນທຸກໆນັກຮຽນ 100 ຄົນໃດທີ່ໄດ້ເຂົ້າຮຽນຫ້ອງ ປ 1 ແມ່ນມີພຽງແຕ່ປະມານ 41-42 ຄົນເທົ່ານັ້ນ ທີ່ສາມາດລອດເຫຼືອຮອດຫ້ອງ 10 (ກ້າວເຂົ້າສູ່ມັດທະຍົມຕອນປາຍ) ໂດຍອັດຕາສ່ວນດັ່ງກ່າວນີ້ແມ່ນມີຕ່ຳຫຼາຍຢູ່ໃນລະຫວ່າງກຸ່ມຜູ້ທີ່ທຸກຍາກ ແລະຊຸມຊົນໆເຜົ່າຕ່າງໆ, ຖ້າສົມທຽບກັບກຸ່ມຜູ້ທີ່ຮັ່ງມີ ແລະ ກຸ່ມພາສາ ລາວ-ໄຕ. ອີງຕາມຂໍ້ມູນຂອງ LECS-5 ເຫັນວ່າອັດຕາການເຂົ້າຮຽນຢູ່ໃນລະດັບຊັ້ນມັດທະຍົມຕອນຕົ້ນຂອງກຸ່ມຜູ້ທີ່ຮັ່ງມີ ແມ່ນ 80%, ຖ້າສົມທຽບກັບກຸ່ມຜູ້ທີ່ທຸກຍາກທີ່ສຸດແມ່ນ 45%. ມັນກໍ່ຄ້າຍຄືກັນນີ້, ຖ້າສົມທຽບອັດຕາການເຂົ້າຮຽນລະດັບຊັ້ນມັດທະຍົມຕອນຕົ້ນ ຢູ່ໃນລະຫວ່າງກຸ່ມພາສາ ຈີນ-ຕິເບດ ແມ່ນ 28%, ສ່ວນກຸ່ມພາສາ ລາວ-ໄຕ ແມ່ນ 72%.[70]

ມັນມີຄວາມແຕກຕ່າງກັນຫຼາຍ ກ່ຽວກັບການເຂົ້າໂຮງຮຽນລະດັບຊັ້ນມັດທະຍົມຢູ່ໃນບັນດາແຂວງໃນປະເທດ. ໃນປີ 2013-2014, ຕົວສຳປະສິດກ່ຽວກັບການປ່ຽນແປງ (COV) ສຳລັບການເຂົ້າຮຽນໃນຊັ້ນລະດັບມັດທະຍົມຕອນຕົ້ນຂອງທຸກໆແຂວງໃນທົ່ວປະເທດແມ່ນ 19%, ໃນຂະນະທີ່ການເຂົ້າຮຽນລະດັບຊັ້ນມັດທະຍົມ

ຕອນປາຍແມ່ນ 25%.

ມັນຍັງມີຄວາມບໍ່ເທົ່າທຽມກັນຫຼາຍ ກ່ຽວກັບຄຸນນະພາບຂອງການເຂົ້າໂຮງຮຽນຢູ່ໃນທົ່ວທຸກຂົງເຂດພື້ນທີ່ຕ່າງໆ ໂດຍສະເພາະແມ່ນກ່ຽວກັບຈຳນວນນາຍຄູຕໍ່ໂຮງຮຽນ (ຫຼືນັກຮຽນ), ຄຸນວຸດທິຂອງນາຍຄູ ແລະອຸປະກອນສໍາລັບການຮຽນ-ການສອນຕ່າງໆທີ່ມີຢູ່. ສໍາລັບການເຂົ້າໂຮງຮຽນຂອງບັນດາຄົວເຮືອນທີ່ທຸກຍາກ, ບັນດາຄົວເຮືອນທີ່ຢູ່ໃນເຂດຊົນນະບົດ ແລະບາງກຸ່ມຊົນເຜົ່າ ແມ່ນເຂົາເຈົ້າມີຄວາມຕ້ອງການຕໍ່າ (ບໍ່ເຂົ້າໂຮງຮຽນ).[71]

## ການຝຶກອົບຮົມນາຍຄູ

ຂໍ້ມູນກ່ຽວກັບຄຸນວຸດທິຂອງນາຍຄູສອນຊັ້ນປະຖົມແມ່ນຫາໄດ້ຍາກ, ແຕ່ສໍາລັບຄຸນວຸດທິຂອງນາຍຄູສອນຊັ້ນມັດທະຍົມແມ່ນພໍຫາໄດ້. ບັນດານາຍຄູທັງໝົດແມ່ນຄວນຈະຕ້ອງມີວຸດທິພໍສໍາລັບສອນລະດັບຊັ້ນມັດທະຍົມ, ຖ້າຫາກວ່າເຂົາເຈົ້າໄດ້ຮຽນ ຫຼືໄດ້ຮັບການຝຶກອົບຮົມເຖິງລະດັບຊັ້ນ 12+3 ປີ ເປັນຢ່າງໜ້ອຍ ແລະ/ຫຼື ໄດ້ເຂົ້າຮ່ວມຊຸດຝຶກອົບຮົມນາຍຄູ (ໂຮງຮຽນສ້າງຄູ) ຊຶ່ງອັນນີ້ແມ່ນຍັງບໍ່ມີມາດຕະຖານ ຫຼືບັນທັດຖານສໍາລັບ ສປປ ລາວ (ຍັງເຮັດບໍ່ໄດ້) ເທື່ອ. ຂໍ້ມູນຈາກ EMIS ສະແດງໃຫ້ເຫັນວ່າ ມີປະມານ 14% ຂອງຈໍານວນນາຍຄູທີ່ສອນຢູ່ໃນລະດັບຊັ້ນມັດທະຍົມ ແມ່ນຍັງບໍ່ທັນບັນລຸໄດ້ມາດຖານຄຸນວຸດທິເຫຼົ່ານີ້ເທື່ອ. ນອກຈາກນີ້, ນາຍຄູຈໍານວນຫຼາຍກໍ່ຍັງຂາດການພັດທະນາທາງດ້ານວິຊາຊີບຢ່າງຕໍ່ເນື່ອງ. ສຸດທ້າຍ, ແມ່ນກ່ຽວກັບເລື່ອງວິທີການສອນ ກໍ່ເຫັນວ່າວິທີການຮຽນ-ການສອນຍັງມີແນວໂນ້ມທີ່ເປັນໄປຕາມວິທີເກົ່າ ແບບຖືເອົາການທ່ອງຈໍາເປັນສໍາຄັນ; ບັນດານາຍຄູຍັງບໍ່ມີຄວາມສາມາດພໍ ໃນການນໍາໃຊ້ບັນດາວິທີການສອນທີ່ເປັນການດຶງດູດໃຈ ເນື່ອງຈາກເຂົາເຈົ້າຂາດແຄນບັນດາອຸປະກອນການຮຽນ-ການສອນ ຫຼືບາງກໍລະນີຈໍານວນໜ້ອຍໜຶ່ງ ແມ່ນມີຈໍານວນນັກຮຽນຢູ່ໃນຫ້ອງນັ້ນຫຼາຍໂພດ.

ສໍາລັບການປະຈໍາການ ຫຼືການເຮັດໜ້າທີ່ຂອງບັນດານາຍຄູຢູ່ໃນທົ່ວປະເທດ ກໍ່ຍັງພົບວ່າບໍ່ມີຄວາມພຽງພໍ ແລະສະເໝີພາບກັນ ຊຶ່ງຢູ່ໃນບາງເຂດ (ເຂດຕົວເມືອງ) ມີການສະໜອງນາຍຄູເກີນກວ່າຄວາມຕ້ອງການ, ແຕ່ກົງກັນຂ້າມຢູ່ໃນບາງເຂດພັດຂາດແຄນ (ຕົ້ນຕໍແມ່ນເຂດຊົນນະບົດ). ຄວາມຈິງທີ່ຍັງມີຢູ່ນັ້ນ, ແມ່ນບັນດານາຍຄູທີ່ໄດ້ຮັບການຝຶກອົບຮົມໃຫ້ມີຄຸນນະພາບສູງແລ້ວ ພັດບໍ່ຢາກໄປປະຈໍາການຢູ່ໃນເຂດຊົນນະບົດ. ເພາະສະນັ້ນ, ບັນດາໂຮງຮຽນມັດທະຍົມຈໍານວນຫຼາຍທີ່ຢູ່ໃນເຂດຫ່າງໄກສອກຫຼີກ ແລະເປັນເຂດທີ່ຊຸມຊົນໆເຜົ່າອາໄສຢູ່ ແມ່ນບໍ່ມີຈໍານວນນາຍຄູທີ່ພຽງພໍຕໍ່ໂຮງຮຽນ. ອັນນີ້ແມ່ນເປັນເລື່ອງຂອງການແຈກຢາຍຈໍານວນນາຍຄູທີ່ບໍ່ສົມດູນກັນ ສໍາລັບການສອນວິຊາຕ່າງໆທີ່ແຕກຕ່າງກັນຢູ່ໃນຂອບເຂດທົ່ວປະເທດ.

## ການສຶກສາທີ່ບໍ່ເປັນທາງການຢູ່ນອກໂຮງຮຽນ (ການສຶກສາສໍາລັບຜູ້ໃຫຍ່)

ລັດຖະບານໄດ້ສ້າງບັນດາແຜນງານຕ່າງໆຂຶ້ນຢູ່ໃນແຂວງຕ່າງໆທີ່ໄດ້ຖືກຄັດເລືອກ ເພື່ອເຂົ້າເຖິງບັນດາຜູ້ຄົນຜູ້ທີ່ໄດ້ຮຽນຈົບຊັ້ນປະຖົມແລ້ວ ແຕ່ບໍ່ໄດ້ສືບຕໍ່ຮຽນ ຫຼືໄດ້ອອກຈາກໂຮງຮຽນມັດທະຍົມຕອນຕົ້ນ. ບັນດານາຍຄູທີ່ຖືກແຕ່ງຕັ້ງໃຫ້ດໍາເນີນການຕາມຈຸດປະສົງນີ້ ແມ່ນເປັນທີ່ຮູ້ກັນວ່າ "ນາຍຄູເຄື່ອນທີ່"; ດັ່ງນັ້ນເຂົາເຈົ້າຈຶ່ງເຮັດວຽກເປັນຊ່ວງໄລຍະເວລາ ແລະເດີນທາງໄປສູ່ພື້ນທີ່ຕ່າງໆທີ່ແຕກຕ່າງກັນ ເພື່ອດໍາເນີນການຈັດຕັ້ງຫ້ອງຮຽນສໍາລັບຜູ້ໃຫຍ່ຂຶ້ນ. ໃນຂະນະທີ່ຍັງບໍ່ທັນມີການປະເມີນຜົນເທື່ອນັ້ນ, ທີມງານຈຶ່ງໄດ້ເຮັດການສໍາພາດພາກສະໜາມຢູ່ໃນບາງເຂດພື້ນທີ່ຂອງ ແຂວງຊຽງຂວາງ ແລະ ແຂວງເຊກອງ ໂດຍອີງໃສ່ການສັງເກດການຕ່າງໆດັ່ງຕໍ່ໄປນີ້:[72]

- ແຜນງານນາຍຄູເຄື່ອນທີ່ ແມ່ນໄດ້ດໍາເນີນການພຽງແຕ່ສໍາລັບ 6 ເດືອນຕໍ່ປີ ແລະການຮຽນ-ການສອນແມ່ນໄດ້ຈັດໃສ່ພຽງແຕ່ວັນທ້າຍອາທິດ (ເສົາ+ທິດ). ການເປີດໂອກາດທີ່ນ້ອຍໆນີ້ ແມ່ນບໍ່ສາມາດເຮັດໃຫ້ນາຍຄູສອນທຸກໆຫົວຂໍ້ທີ່ສໍາຄັນ ຊຶ່ງຈໍາເປັນຕໍ່ການຍົກລະດັບສີມືສໍາລັບການດໍາລົງຊີວິດ ແລະຄວາມຄາດຫວັງການຮຽນໃນເລື່ອງທີ່ມີຄວາມສໍາຄັນຂອງນັກຮຽນໄດ້;

- ການຂຶ້ນຫ້ອງສອນແມ່ນບໍ່ມີຄວາມແນ່ນອນ (ບໍ່ປົກກະຕິ) ຊຶ່ງຂຶ້ນຢູ່ກັບການມີໜ້າຂອງນັກຮຽນ;

- ການຈ່າຍຄ່າແຮງງານໃຫ້ແກ່ນາຍຄູເຄື່ອນທີ່ ແມ່ນບໍ່ພຽງຕໍ່ກັບການກະຕຸ້ນໃຫ້ເຂົາເຈົ້າລົງໄປບ້ານ ເພື່ອຈັດຕັ້ງການຮຽນ-ການສອນໄດ້;

- ຂາດແຄນນາຍຄູຜູ້ທີ່ໄດ້ຮັບການຝຶກອົບຮົມ ແລະບັນດາອຸປະກອນການຮຽນ-ການສອນ. ບັນດານາຍຄູເຄື່ອນທີ່ຈຳນວນຫຼາຍ ແມ່ນບໍ່ໄດ້ມີການປັບປຸງ ຫຼືພັດທະນາບົດສອນຂອງເຂົາເຈົ້າ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງບັນດາຫ້ອງຮຽນສຳລັບຜູ້ໃຫຍ່ທີ່ຮູ້ໜັງສື (ອ່ານອອກ-ຂຽນໄດ້) ແດ່ແລ້ວ.

## ການສຶກສາວິຊາຊີບ (ອາຊີວະສຶກສາ)

ຈຳນວນຂອງສະຖາບັນການສຶກສາ ແລະການຝຶກອົບຮົມວິຊາຊີບ ແລະເຕັກນິກ (TVET) ແມ່ນໄດ້ມີການເພີ່ມຂຶ້ນຢູ່ໃນທົດສະວັດທີ່ຜ່ານມາ ໂດຍສະເພາະແມ່ນຢູ່ໃນບັນດາຕົວເມືອງໃຫຍ່ຕ່າງໆ ຊຶ່ງໃນປີ 2013-2014 ສປປ ລາວ ມີໂຮງຮຽນວິຊາຊີບ ແລະເຕັກນິກທັງໝົດ 37 ແຫ່ງ; ໃນນັ້ນ, ແມ່ນມີພຽງແຕ່ 1/3 ຂອງຈຳນວນສະຖາບັນເຫຼົ່ານີ້ທີ່ໃຫ້ວຸດທິສິນີທາງດ້ານເຕັກນິກໃນລະດັບໃບປະກາດສະນີຍະບັດ (diploma); ສ່ວນທີ່ເຫຼືອນັ້ນແມ່ນຍັງໃຫ້ເປັນໃບຢັ້ງຢືນ (certificates) ຊຶ່ງມີວຸດທິຕ່ຳກວ່າໃບປະກາດສະນີຍະບັດ. ສະຖາບັນ TVET ເຫຼົ່ານີ້ ສ່ວນຫຼາຍແມ່ນຍັງບໍ່ທັນຄົບຖ້ວນສົມບູນໃນດ້ານໃດໜຶ່ງ ຫຼືຫຼາຍດ້ານ ເປັນຕົ້ນແມ່ນເຂົາເຈົ້າມີສິ່ງອຳນວຍຄວາມສະດວກທີ່ບໍ່ພຽງພໍ ແລະ/ຫຼືບັນດາພະນັກງານຄູສອນ ແມ່ນມີວຸດທິບໍ່ສູງພໍ ຫຼືຕ່ຳກວ່າທີ່ຮຽກຮ້ອງຕ້ອງການ. ພ້ອມກັນນັ້ນກໍ່ຍັງມີຫຼາຍແຂວງທີ່ບໍ່ທັນມີສະຖາບັນ TVET ເທື່ອ.

ມັນມີການຂາດແຄນແຮງງານທີ່ມີສີມືຢູ່ພາຍໃນປະເທດຢ່າງຮຸນແຮງ. ບັນດານັກຮຽນ-ນັກສຶກສາທີ່ເຂົ້າຮຽນຢູ່ໃນ TVET ສ່ວນຫຼາຍແມ່ນຮຽນການບັນຊີ, ການຄຸ້ມຄອງບໍລິຫານ ແລະການຕ້ອນຮັບ ຫຼາຍກວ່າດ້ານວິສະວະກຳ ແລະເຕັກນິກ ທີ່ປະເທດມີຄວາມຮຽກຮ້ອງຕ້ອງການຫຼາຍຢູ່ໃນປັດຈຸບັນນີ້. ນອກຈາກນີ້, ໃນຂະນະທີ່ການຮັບນັກຮຽນ-ນັກສຶກສາເຂົ້າ TVET ໄດ້ເພີ່ມຂຶ້ນໃນຊຸມປີຜ່ານມານີ້ ແຕ່ຄວາມຮັບຮູ້ ຫຼືການຍອມຮັບກ່ຽວກັບ TVET ແມ່ນຍັງຕ່ຳຢູ່ ຍ້ອນຄຸນນະພາບຂອງການສຶກສາຍັງຕ່ຳ ເນື່ອງຈາກຂາດແຄນນາຍຄູທີ່ມີຄຸນວຸດທິ ແລະໄດ້ຮັບການຝຶກອົບຮົມ, ຫຼັກສູດຂອງການສອນຍັງບໍ່ດີພໍ, ຂາດແຄນບັນດາອຸປະກອນການຮຽນ-ການສອນ ແລະຂາດແຄນສິ່ງອຳນວຍຄວາມສະດວກອື່ນໆ.

## ການໃຊ້ຈ່າຍຂອງພາກລັດຕໍ່ກັບການສຶກສາ

ອັດຕາສ່ວນການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ ຕໍ່ລາຍຈ່າຍທັງໝົດຂອງພາກລັດຢູ່ໃນປະເທດໄດ້ເພີ່ມຂຶ້ນຈາກ 7,4% ໃນປີ 2000-2001 ມາເປັນ 12,2% ໃນປີ 2013-2014. ເມື່ອເບິ່ງໃນອັດຕາສ່ວນຕໍ່ GDP ແມ່ນເພີ່ມຂຶ້ນຈາກ 1,9% ໃນປີ 2000-2001 ມາເປັນປະມານ 4% ໃນປີ 2012-2013 (ລວມທັງການປະກອບສ່ວນຂອງຄູ່ຮ່ວມພັດທະນາ, ເບິ່ງຢູ່ໃນຮູບທີ 3.2). ເຖິງແມ່ນວ່າການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາແມ່ນເຫັນວ່າມີແນວໂນ້ມທີ່ເພີ່ມຂຶ້ນ ແຕ່ມັນກໍ່ຍັງຕ່ຳກວ່າບາງປະເທດເພື່ອນບ້ານ. ຕົວຢ່າງ: ຫວຽດນາມແມ່ນປະມານ 6,3% ຂອງ GDP ຫຼື 21% ຂອງລວມຍອດລາຍຈ່າຍທັງໝົດຂອງພາກລັດ; ສ່ວນ ສ.ເກົາຫຼີ ແລະມາເລເຊຍ ແມ່ນຫຼາຍກວ່ານັ້ນ. ມັນເປັນສິ່ງສຳຄັນຫຼາຍທີ່ຕ້ອງໄດ້ຈັດສັນລາຍຈ່າຍເຂົ້າໃນຂະແໜງການນີ້ໃຫ້ຫຼາຍຂຶ້ນ ໂດຍຕ້ອງມີການອະທິບາຍດ້ວຍເຫດ ແລະຜົນ ສຳລັບການເພີ່ມຜົນຮັບທີ່ສູງສຸດ.

ຮູບທີ 3.2: ການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ ຕໍ່ກັບງົບປະມານຂອງລັດ ແລະ GDP




## ການປັບປຸງການເຂົ້າຮ່ວມໃນການສຶກສາ: ບາງຂໍ້ສະເໜີທີ່ສາມາດຈັດຕັ້ງປະຕິບັດໄດ້

ໂດຍລວມແລ້ວ, ເຖິງແມ່ນວ່າລະບົບການສຶກສາຂອງ ສປປ ລາວ ໄດ້ມີຄວາມຄືບໜ້າໃນບາງດ້ານພໍສົມຄວນແລ້ວກໍ່ຕາມ ແຕ່ມັນຍັງບໍ່ທັນພຽງພໍທັງດ້ານປະລິມານ ແລະຄຸນນະພາບເທື່ອ. ຄວາມດ້ອຍຄຸນນະພາບ ແລະຄວາມບໍ່ເທົ່າທຽມກັນ (ຢູ່ໃນລະຫວ່າງບັນດາເຂດພື້ນທີ່ ແລະກຸ່ມຊົນເຜົ່າຕ່າງໆ, ລວມທັງລະດັບຂອງລາຍໄດ້) ແມ່ນເລື່ອງຈຳເປັນທີ່ຈະຕ້ອງໄດ້ເອົາໃຈໃສ່ຢ່າງຮີບດ່ວນ, ຕ້ອງຮັກສາທັດສະນະໃໝ່ຂອງການຫລຸດພົ້ນອອກຈາກ LDC ແລະ ບັນດາພັນທະສັນຍາກ່ຽວກັບ SDGs ຂອງ ສປປ ລາວ ໃຫ້ໄດ້. ລັດຖະບານ ແຫ່ງ ສປປ ລາວ ໄດ້ຕັ້ງບັນດາຈຸດປະສົງ ແລະເປົ້າໝາຍຕ່າງໆໄວ້ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ສຳລັບການຂົນສົ່ງສາທາລະນະທີ່ດີຂຶ້ນ, ການສະໜັບສະໜູນທາງການເງິນ, ການຝຶກອົບຮົມ ແລະການໃຫ້ໜ້າທີ່ຕຳແໜ່ງຕໍ່ກັບນາຍຄູຫຼາຍຂຶ້ນ, ສະໜອງບັນດາອຸປະກອນການສິດສອນທີ່ມີຄຸນນະພາບຕ່າງໆ ແລະອື່ນໆອີກ. ບັນດາຍຸດທະສາດຕ່າງໆຂອງລັດຖະບານ ແມ່ນມີຄວາມຈຳເປັນຕ້ອງສະໜັບສະໜູນເສີມຕື່ມຄວາມພະຍາຍາມຕັ້ງໃຈຕ່າງໆທີ່ອີງໃສ່ຊຸມຊົນ ເພື່ອທັນບັນດາທ່າໄດ້ປຽບດ້ານການສຶກສາໃຫ້ເປັນສາທາລະນະ ແລະກຳຈັດປັດເປົ່າບັນດາຄວາມເຊື່ອຖືຕ່າງໆທີ່ຫຼ້າຫຼັງງົມງາຍ.

ຜົນຂອງການຄົ້ນພົບຕ່າງໆທີ່ໄດ້ລາຍງານຢູ່ໃນກ່ອງທີ 3.2 ແມ່ນຜົນຕາມມາທາງດ້ານນະໂຍບາຍທີ່ມີຄວາມສຳຄັນ. ດັ່ງທີ່ປະສົບປະການຢູ່ໃນບັນດາປະເທດຕ່າງໆໄດ້ສະແດງໃຫ້ເຫັນວ່າ ການຖ່າຍໂອນເງິນສົດທີ່ມີເງື່ອນໄຂກ່ຽວພັນກັບການເຂົ້າໂຮງຮຽນ ແມ່ນສາມາດເປັນເຄື່ອງມືທາງດ້ານນະໂຍບາຍທີ່ສຳຄັນ ສຳລັບການເພີ່ມການເຂົ້າຮ່ວມການສຶກສາຂອງເດັກນ້ອຍຈາກບັນດາຄົວເຮືອນທີ່ທຸກຍາກ. ດັ່ງນັ້ນ, ເທົ່າທີ່ເປັນໄປໄດ້ ການພັດທະນາເດັກນ້ອຍກ່ອນໄວຮຽນ, ການສຶກສາຊັ້ນປະຖົມ ແລະຊັ້ນມັດທະຍົມ ແມ່ນຄວນຈະຕ້ອງຖືກປະກາດໃຫ້ເປັນ "ສິດທິ" ແລະຄວນຈະຕ້ອງຢູ່ພາຍໃຕ້ອຳນາດຂອງລັດຖະບານ ເນື່ອງຈາກຈຳນວນປະຊາກອນສ່ວນຫຼາຍ ແມ່ນບໍ່ສາມາດມີເງິນພໍທີ່ຈະຈ່າຍຄ່າຮຽນຢູ່ໃນໂຮງຮຽນເອກະຊົນໄດ້.

ດັ່ງທີ່ກ່ອງ 3.3 ໄດ້ສະແດງໃຫ້ເຫັນວ່າ ມັນໄດ້ມີບັນຫາຕ່າງໆເກີດຂຶ້ນກັບທັງບັນດານັກຮຽນ ແລະນາຍຄູທີ່ມາຈາກບັນດາຊຸມຊົນໆເຜົ່າຕ່າງໆ ຊຶ່ງເຂົາເຈົ້າບໍ່ສາມາດສື່ສານເປັນພາສາລາວໄດ້ຢ່າງຄ່ອງແຄ້ວ ແລະທັງມີບັນຫາດ້ານອຸປະກອນການສອນນຳອີກ. ລັດຖະບານ ແຫ່ງ ສປປ ລາວ ໄດ້ມີນະໂຍບາຍເພີ່ມຈຳນວນຜູ້ຄົນທີ່ມາຈາກຊຸມຊົນໆເຜົ່າຕ່າງໆ ເຂົ້າໃນບັນດາແຜນງານການຝຶກອົບຮົມນາຍຄູ ຊຶ່ງອັນນີ້ແມ່ນລວມທັງບາງສິ່ງຈູງໃຈທາງດ້ານການເງິນທີ່ມີຄວາມຈຳເປັນເພື່ອເສີມຕື່ມໃຫ້ແກ່ບັນດາສິ່ງອຳນວຍຄວາມສະດວກຕ່າງໆດ້ານທີ່ພັກອາໄສ ທີ່ລັດຖະບານໄດ້

ສະໜອງໃຫ້.

ເລື່ອງບັນຫາພາສານັ້ນ, ແມ່ນຮຽກຮ້ອງຕ້ອງການໆແກ້ບັນຫາກ່ຽວກັບບຸລິມມະສິດຂັ້ນພື້ນຖານ ເພື່ອແກ້ໄຂບັນຫາທາງດ້ານໂຄງສ້າງໃຫ້ເລິກເຊິ່ງຫຼາຍຂຶ້ນ ໃນເລື່ອງທີ່ມັນບໍ່ນຳໄປສູ່ການສ້າງສີມືທີ່ແທດເໝາະ (ຕອບສະໜອງໄດ້) ກັບຄວາມຮຽກຮ້ອງຕ້ອງການ ເຊັ່ນ: ຄວາມສາມາດເຂົ້າໃຈຂອງກຳລັງແຮງງານລາວແມ່ນຍັງຕໍ່າ. ຕ້ອງໄດ້ສ້າງສິ່ງອຳນວຍຄວາມສະດວກຕ່າງໆສຳລັບການຮຽນ-ການສອນຂອງໂຮງຮຽນໃຫ້ຫຼາຍຂຶ້ນ ໂດຍເຮັດໃຫ້ນາຍຄູທີ່ເວົ້າສອງພາໄດ້ນັ້ນຕ້ອງໄດ້ຮັບການຝຶກອົບຮົມ ແລະຕ້ອງມີບັນດາອຸປະກອນການສອນທີ່ພຽງພໍ ເພື່ອຄຸ້ມຄອງປ້ອງກັນອັດຕາການອອກໂຮງຮຽນ ແລະການຄ້າງຫ້ອງ, ແລະເພື່ອຍົກລະດັບຄວາມຮູ້ໜັງສື ແລະຮູ້ຄຳນວນໃຫ້ສູງຂຶ້ນ.

ພວກເຮົາຕ້ອງຮັບຮູ້ສະພາບຄວາມເປັນຈິງທີ່ວ່າ ພາສາອັງກິດແມ່ນພາສາທີ່ໃຊ້ໃນການເຊື່ອມຕໍ່ຢູ່ໃນກຸ່ມ ASEAN; ສະນັ້ນ, ການສອນພາສາອັງກິດຢູ່ໃນໂຮງຮຽນແມ່ນຈະເປັນປະໂຫຍດຫຼາຍ. ບັນດານັກຮຽນຄວນຈະຕ້ອງໄດ້ໃຊ້ພາສາຕ່າງປະເທດແດ່ຢູ່ໃນໂຮງຮຽນຊັ້ນມັດທະຍົມ. ດັ່ງທີ່ໄດ້ກ່າວໄວ້ຢູ່ໃນພາກທີ 2, ການຮ່ວມມືແບບສາກົນກັບບັນດາປະເທດ ASEAN ຈະຊ່ວຍໃນການຍົກລະດັບຄຸນນະພາບຂອງພາສາອັງກິດຢູ່ໃນ ສປປ ລາວ.

ບັນດາສະຖາບັນ TVET ຈຳເປັນຈະຕ້ອງໄດ້ຮັບການປັບປຸງໃໝ່ໃຫ້ສົມບູນກ່ຽວກັບຄຸນນະພາບຂອງມັນ ແລະໃຫ້ເຊື່ອມໂຍງກັບຄວາມຕ້ອງການຕົວຈິງ. ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ເຊື່ອມໂຍງເອົາການຝຶກອົບຮົມວິຊາຊີບເຂົ້າກັບຫຼັກສູດການຮຽນໃນຊັ້ນຮຽນມັດທະຍົມ (ໂດຍສະເພາະແມ່ນຊັ້ນມັດທະຍົມຕອນຕົ້ນ).

ການສຶກສາບໍ່ແມ່ນກິດຈະກຳ "ທີ່ຢູ່ໂດດດ່ຽວ"; ເປັນຢ່າງໜ້ອຍມັນກໍ່ຈະຕ້ອງມີການເຊື່ອມໂຍງກັບການສາທາລະນະສຸກ, ການກະສິກຳ, ການຂະຫຍາຍການບໍລິການ ແລະໂຄງລ່າງພື້ນຖານ/ການຂົນສົ່ງ. ດັ່ງນັ້ນ, ການດຳເນີນການພັດທະນາທີ່ຄົບຖ້ວນສົມບູນແບບເປັນຊຸດຂອງມັນແມ່ນມີຄວາມສຳຄັນຫຼາຍ. ໃນຂະນະທີ່ບັນດາປັດໄຈສຳຄັນທີ່ເຮັດໃຫ້ການສຶກສາຊ້າລົງນັ້ນແມ່ນຄວາມທຸກຍາກ, ການເປັນຊົນເຜົ່າ ແລະຄວາມຫ່າງໄກສອກຫຼີກ; ດັ່ງນັ້ນ, ບັນດາຄວາມພະຍາຍາມຕໍ່ໄປແມ່ນມີຄວາມຈຳເປັນຕ້ອງກ້າວໄປເຖິງສ່ວນຕ່າງໆ ກ່ຽວກັບຄຸນລັກສະນະຂອງປະຊາກອນຕາມບັນດາປັດໄຈເຫຼົ່ານີ້ ແລະດຳເນີນການເປັນຊຸດຂອງມັນດັ່ງທີ່ໄດ້ກ່າວມາຂ້າງເທິງນີ້.

## ການສາທາລະນາສຸກ

### ສຸຂະພາບຂອງແມ່ ແລະ ເດັກເກີດໃໝ່:[73]

ຕາຕະລາງ 3.2 ສະແດງເຖິງບັນດາຕົວຊີ້ບອກດ້ານຜົນໄດ້ຮັບທີ່ສຳຄັນກ່ຽວກັບອັດຕາການຕາຍຂອງເດັກ ແລະ ເດັກອ່ອນ: ອັດຕາການຕາຍຂອງເດັກເກີດໃໝ່ (NMR), ອັດຕາການຕາຍຂອງເດັກອ່ອນອາຍຸລຸ່ມ 1 ປີ (IMR) ແລະ ອັດຕາການຕາຍຂອງເດັກອາຍຸລຸ່ມ 5 ປີ (U5MR). ຢູ່ໃນຮອບສະຕະວັດທີ່ຜ່ານມາ ການດຳເນີນການກ່ຽວກັບບັນດາຕົວຊີ້ບອກເຫຼົ່ານີ້ຂອງປະເທດແມ່ນຍັງຂີ້ຮ້າຍຫຼາຍ, ແຕ່ມັນໄດ້ມີຄວາມຄືບໜ້າເປັນຢ່າງດີຜ່ານທົດສະວັດຫຼັງນີ້ ຈົນຮອດປີ 2011. ເປົ້າໝາຍ MDG ກ່ຽວກັບອັດຕາການຕາຍຂອງເດັນອາຍຸລຸ່ມ 5 ປີ ແມ່ນເກືອບຈະບັນລຸໄດ້ແລ້ວ, ແຕ່ວ່າເປົ້າໝາຍກ່ຽວກັບອັດຕາການຕາຍຂອງເດັກອ່ອນ ແມ່ນປະກົດວ່າຍັງເປັນສິ່ງທ້າທາຍຢູ່ໜ້ອຍໜຶ່ງ, ເຖິງແມ່ນວ່າມັນອາດຈະສາມາດບັນລຸໄດ້ກໍ່ຕາມ.[74] ສິ່ງສຳຄັນຢູ່ໃນການຫລຸດຜ່ອນອັດຕາການຕາຍຂອງເດັກເກີດໃໝ່ນັ້ນແມ່ນຍ້ອນຄວາມບອບບາງຂອງເດັກອ່ອນຍັງມີຢູ່ສູງທີ່ສຸດ ຢູ່ໃນຊ່ວງໄລຍະ 28 ມື້ທຳອິດຫຼັງຈາກທີ່ເດັກເກີດອອກມາມີຊີວິດ (ຊ່ວງໄລຍະອັດຕາການຕາຍຂອງເດັກເກີດໃໝ່).

ໃນແຕ່ລະຢ່າງຂອງສາມຕົວຊີ້ບອກນີ້ ແມ່ນມີການປ່ຽນແປງຫຼາຍຢູ່ໃນລະຫວ່າງແຂວງຕ່າງໆ. ໃນປີ 2010-2011 ຄ່າສຳປະສິດຂອງການປ່ຽນແປງຢູ່ໃນແຂວງຕ່າງໆໃນທົ່ວປະເທດແມ່ນ 37% ສຳລັບເດັກເກີດໃໝ່, 75% ສຳລັບເດັກອ່ອນ ແລະ 88% ສຳລັບເດັກລຸ່ມ 5 ປີ. ລະຫວ່າງສາມຊຸດຂອງຕົວຊີ້ວັດນີ້ແມ່ນຍັງມີຄວາມສຳພັນກັນສູງ (ຄ່າສຳປະສິດຂອງຄວາມສຳພັນກັນແມ່ນເກີນກວ່າ 0,85). ການປ່ຽນແປງນີ້ (ຢູ່ໃນແຂວງ) ທຳອິດແມ່ນໄດ້ເລີ່ມຕົ້ນຂຶ້ນຢູ່ໃນຊ່ວງໄລຍະອັດຕາການຕາຍຂອງເດັກເກີດໃໝ່ ແລະຕໍ່ຈາກນັ້ນຊ່ອງວ່າງນີ້ແມ່ນມີຢູ່ກວ້າງຕາມອາຍຸຂອງເດັກນ້ອຍ. ອັນນີ້ໝາຍຄວາມວ່າ, ຖ້າຫາກມີການເລີ່ມຕົ້ນດຳເນີນການຮັກສາສຸຂະພາບຂອງເດັກນ້ອຍຢູ່ໃນໄລຍະ

ຫາກໍ່ເກີດໃໝ່ (ຕົວຢ່າງ: ເດືອນທຳອິດ) ແລະ ຄວາມພະຍາຍາມນີ້ຫາກຖືກດຳເນີນຕໍ່ໄປ ແມ່ນຜົນຮັບຂອງມັນຈະເປັນທີ່ເພິ່ງປາຖະໜາຫຼາຍຂຶ້ນ. ໃນລະຫວ່າງບັນດາແຂວງທີ່ມີການດຳເນີນການໄດ້ຂີ້ຮ້າຍກວ່າໝູ່ ໃນແງ່ອັດຕາການຕາຍຂອງເດັກນ້ອຍ/ເດັກອ່ອນ ແມ່ນ: ແຂວງຜົ້ງສາລີ, ຫົວພັນ, ຄຳມ່ວນ ແລະສາລະວັນ. ຢ່າງໜ້ອຍທັງສາມແຂວງນີ້ແມ່ນເປັນແຂວງທີ່ມີປະຊາກອນທີ່ເປັນຊົນເຜົ່າຈຳນວນຫຼາຍ ຊຶ່ງອັນນີ້ມັນສະແດງໃຫ້ເຫັນວ່າ ຈຳນວນປະຊາກອນເຫຼົ່ານີ້ແມ່ນບໍ່ມີການບໍລິການສາທາລະນາສຸກທີ່ທັນສະໄໝເຂົ້າເຖິງເຂົາເຈົ້າ ຫຼືເຂົາເຈົ້າບໍ່ມີຄວາມສາມາດເຂົ້າເຖິງດ້ວຍຕົວຂອງເຂົາເຈົ້າເອງ (ຍ້ອນຄວາມທຸກຍາກ). ສ່ວນຫຼາຍຂອງເດັກອ່ອນ ຫຼືເດັກນ້ອຍທີ່ຕາຍຢູ່ໃນເຂດຊົນນະບົດແມ່ນມາຈາກບັນດາຄົວເຮືອນຊົນເຜົ່າ ຫຼືບັນດາຄົວເຮືອນທີ່ທຸກຍາກວ່າ (ຕາຕະລາງ 3.3).

**ຕາຕະລາງ 3.2: ອັດຕາການຕາຍຂອງເດັກເກີດໃໝ່, ເດັກອ່ອນ ແລະເດັກອາຍຸລຸ່ມ 5 ປີ**

| ປີ/ຕົວຊີ້ບອກ | ອັດຕາການຕາຍຂອງເດັກເກີດໃໝ່ (NMR) | ອັດຕາການຕາຍຂອງເດັກອ່ອນ (IMR) | ອັດຕາການຕາຍຂອງເດັກລຸ່ມ 5 ປີ (U5MR) |
|---|---|---|---|
| 2001 | 52 | 116 | 146 |
| 2003 | 53 | 104 | 131 |
| 2005 | 46 | 91 | 115 |
| 2007 | 42 | 87 | 106 |
| 2009 | 34 | 75 | 88 |
| 2011 | 32 | 68 | 79 |
| 2015 (ເປົ້າໝາຍ) | - | 45 | 70 |

ແຫຼ່ງຂໍ້ມູນ: ບົດລາຍງານຄວາມຄືບໜ້າກ່ຽວກັບ MDG ສຳລັບ ສປປ ລາວ, 2013.

ໝາຍເຫດ: ບັນດາການສຳຫຼວດທີ່ຈັດຂຶ້ນ ໃນປີ 1995, 2005 ແລະ 2010/2011. ສຳລັບປີອື່ນໆທັງໝົດນັ້ນແມ່ນເປັນການຄາດຄະເນ.

**ຕາຕະລາງ 3.3: ອັດຕາການຕາຍຂອງເດັກເກີດໃໝ່, ເດັກອ່ອນ ແລະ ເດັກລຸ່ມ 5 ປີ ແບ່ງຕາມຂົງເຂດພື້ນທີ່, ຄວາມຮັ່ງມີ ແລະກຸ່ມຊົນເຜົ່າ, 2010/2011**

| ປີ | ອັດຕາການຕາຍຂອງເດັກເກີດໃໝ່ (NMR) | ອັດຕາການຕາຍຂອງເດັກອ່ອນ (IMR) | ອັດຕາການຕາຍຂອງເດັກລຸ່ມ 5 ປີ (U5MR) |
|---|---|---|---|
| ແບ່ງຕາມຕາມເຂດພື້ນທີ່ | | | |
| ພາກເໜືອ | 48 | 86 | 104 |
| ພາກກາງ | 26 | 63 | 73 |
| ພາກໃຕ້ | 36 | 88 | 101 |
| ຕົວເມືອງ | 22 | 39 | 45 |
| ຊົນນະບົດ | 39 | 85 | 100 |
| ຊົນນະບົດທີ່ມີຖະໜົນ | 39 | 82 | 94 |
| ຊົນນະບົດທີ່ບໍ່ມີຖະໜົນ | 39 | 108 | 136 |
| ແບ່ງຕາມດັດຊະນີຄວາມຮັ່ງມີ | | | |

| | | | |
|---|---|---|---|
| ກຸ່ມທີ 1 (ທຸກຍາກທີ່ສຸດ) | 40 | 95 | 120 |
| ກຸ່ມທີ 2 | 47 | 98 | 109 |
| ກຸ່ມທີ 3 | 43 | 77 | 85 |
| ກຸ່ມທີ 4 | 17 | 47 | 53 |
| ກຸ່ມທີ 5 (ຮັ່ງມີທີ່ສຸດ) | 18 | 27 | 33 |
| ແບ່ງຕາມກຸ່ມຊົນເຜົ່າ (ກຸ່ມພາສາ) | | | |
| ລາວ-ໄຕ | 32 | 70 | 76 |
| ມອນ-ຂະແມ | 43 | 88 | 108 |
| ມົ້ງ-ອິມຽນ | 27 | 58 | 74 |
| ຈີນ-ຕິເບດ | 62 | 131 | 160 |

ແຫຼ່ງຂໍ້ມູນ: LSIS 2010/2011.

ຮູບທີ 3.3 ສະແດງໃຫ້ເຫັນວ່າ ອັດຕາການຕາຍຂອງແມ່ (MMR) ໄດ້ຫລຸດລົງຢ່າງໄວວາ ແຕ່ກໍ່ຍັງມີຢູ່ສູງຫຼາຍ ແລະຍັງຫ່າງໄກຈາກເປົ້າໝາຍຂອງ MDG/NSEDP ຢູ່. ການຫລຸດຜ່ອນອັດຕາການຕາຍຂອງແມ່ແມ່ນມີຄວາມຫຍຸ້ງຍາກຫຼາຍ ເນື່ອງຈາກມີຫຼາຍກໍລະນີທີ່ມີໂຮງໝໍ ຫຼືສຸກສາລາເພື່ອຊ່ວຍໃນການເອົາລູກອອກຢູ່ໃນເຂດນັ້ນແລ້ວແຕ່ເຂົາເຈົ້າພັດຂາດຄວາມສາມາດ ແລະເຄື່ອງມືໃນການຜ່າຕັດ ແລະການໃຫ້ເລືອດ. ສຸກສາລາສ່ວນຫຼາຍແມ່ນສາມາດດຳເນີນການຊ່ວຍເອົາລູກອອກແບບປົກກະຕິທຳມະດາເທົ່ານັ້ນ. ດັ່ງນັ້ນ, ໃນເມື່ອມີກໍລະນີຮ້າຍແຮງແມ່ນໄດ້ສົ່ງຕໍ່ໃຫ້ໂຮງໝໍເມືອງ ແຕ່ວ່າບັນດາໂຮງໝໍເມືອງເຫຼົ່ານັ້ນກໍ່ມີພຽງແຕ່ປະມານ 12-15% ເທົ່ານັ້ນ ທີ່ມີຄວາມສາມາດແລະມີເຄື່ອງມືພຽງພໍ ເພື່ອດຳເນີນການຜ່າຕັດເອົາລູກອອກໄດ້. ໃນຕົວຈິງແລ້ວ, ປະມານ 40% ຂອງແພດໝໍທີ່ເປັນຜູ້ຊ່ວຍໃນການເອົາລູກອອກນັ້ນ ພັດແມ່ນຜູ້ທີ່ບໍ່ໄດ້ຮັບການຝຶກອົບຮົມໃນດ້ານນີ້ມາກ່ອນ. ສະນັ້ນ, ການຊ່ວຍເອົາລູກອອກໃນສະພາບປົກກະຕິທຳມະດາຢູ່ໃນບັນດາໂຮງໝໍນັ້ນ ກໍ່ເຫັນວ່າຍັງມີຄວາມຫຍຸ້ງຍາກຫຼາຍຢູ່.[75]

**ຮູບທີ 3.3: ອັດຕາການຕາຍຂອງແມ່**




ແຫຼ່ງຂໍ້ມູນ: ບົດລາຍງານຄວາມຄືບໜ້າກ່ຽວກັບ MDG ສໍາລັບ ສປປ ລາວ, 2013.

ໝາຍເຫດ: ບັນດາການສໍາຫຼວດທີ່ຈັດຂຶ້ນໃນປີ 1995, 2005 ແລະ 2010/2011. ສໍາລັບປີອື່ນໆທັງໝົດນັ້ນ ແມ່ນເປັນການຄາດຄະເນ. ອົງການ WHO ກໍ່ໄດ້ເຮັດການຄໍານວນ ແລະຄາດຄະເນຂອງຕົນ, ແຕ່ຫາກບໍ່ໄດ້ນໍາມາສະເໜີຢູ່ໃນນີ້ ຍ້ອນເຫັນວ່າແຫຼ່ງຂໍ້ມູນຂອງລັດຖະບານແມ່ນສາມາດເຊື່ອຖືໄດ້.

ໃນປັດຈຸບັນນີ້, ແມ່ນມີບາງແຫຼ່ງທຶນທີ່ໄດ້ຮັບຈາກຄູ່ຮ່ວມພັດທະນາ ສໍາລັບໃຫ້ການບໍລິການດ້ານສຸຂະພາບແກ່ແມ່ ແລະເດັກເກີດໃໝ່ (MNCH) ທີ່ກວມເອົາທັງການຝາກທ້ອງ, ລວມທັງການເດີນທາງໄປຫາສຸກສາລາ ຫຼືໂຮງໝໍ (ບັນດາສູນບໍລິການດ້ານສຸຂະພາບ). ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງມີຊ່ອງວ່າງຄວາມແຕກຕ່າງທີ່ກວ້າງຢູ່ສໍາລັບການກວມເອົາພື້ນທີ່ໆກວ້າງຂວາງຢູ່ໃນທົ່ວປະເທດ.[76]

## ການປັບປຸງສະຖານະພາບດ້ານສາທາລະນາສຸກ: ເລື່ອງສໍາຄັນບາງຢ່າງ

- ໃນຂະນະທີ່ບັນດາເມືອງທັງໝົດໃນທົ່ວປະເທດ ແມ່ນມີສູນບໍລິການສາທາລະນາສຸກຫຼາຍກວ່າໜຶ່ງແຫ່ງ (ລວມທັງໂຮງໝໍ ແລະສຸກສາລາ) (ເອກະສານຊ້ອນທ້າຍ 3.2) ແຕ່ວ່າເຂົາເຈົ້າພັດບໍ່ສາມາດໃຫ້ການບໍລິການທີ່ມີຄຸນນະພາບໄດ້ຕາມທີ່ຕ້ອງການ. ສະຖິຕິອັນໜຶ່ງໄດ້ສະແດງໃຫ້ເຫັນວ່າ ມີພຽງແຕ່ 5% ຂອງພະນັກງານສາທາລະນາສຸກທີ່ຈົບລະດັບປະລິນຍາຕີ ຫຼືສູງກວ່ານັ້ນ.[77] ສ່ວນຫຼາຍຂອງສູນບໍລິການສາທາລະນາສຸກ ແມ່ນບໍ່ມີພະນັກງານແພດໝໍລະດັບອື່ນທີ່ເໜືອໄປກວ່າພະຍາບານ (nurses) ຊຶ່ງອັນນີ້ແມ່ນໄດ້ສົ່ງຜົນກະທົບຕໍ່ການສະໜອງການບໍລິການທີ່ມີຄຸນນະພາບຢ່າງຫຼີກລ່ຽງບໍ່ໄດ້.

- ການສະໜອງເຄື່ອງມືຈາກບັນດາຄູ່ຮ່ວມພັດທະນາຕ່າງໆແມ່ນເຮັດໂດຍຫຼາຍໆບໍລິສັດ (foreign). ສະນັ້ນ, ຈຶ່ງເຮັດໃຫ້ມີຫຍຸ້ງຍາກຫຼາຍທີ່ຈະເຮັດໃຫ້ການບໍລິການເຫຼົ່ານັ້ນມີປະສິດທິພາບ. ດັ່ງນັ້ນ, ມັນຈຶ່ງເປັນເລື່ອງທີ່ບໍ່ຜິດປົກກະຕິທີ່ໄດ້ຮັບເຄື່ອງມືບໍ່ເປັນໄປຕາມປົກກະຕິ.

- ຢາປົວພະຍາດຂັ້ນພື້ນຖານແມ່ນສາມາດພໍຫາໄດ້ ຖ້າຫາກເປັນການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ, ຖ້າບໍ່ດັ່ງນັ້ນກໍ່ຕ້ອງມີລາຄາເປັນຄ່າໃຊ້ຈ່າຍ ແຕ່ກໍ່ເຫັນວ່າບໍ່ມີຫຍັງອີກເລີຍທີ່ສາມາດຫາໄດ້ ນອກເໜືອໄປຈາກຢາປົວພະຍາດຂັ້ນພື້ນຖານເທົ່ານັ້ນ.

- ຢູ່ໃນ ສປປ ລາວ, ແມ່ນມີປະມານ 8.600 ບ້ານ ແຕ່ປະມານ 12% ຂອງຈໍານວນບ້ານນັ້ນ ແມ່ນບໍ່ມີເສັ້ນທາງເຊື່ອມຕໍ່. ນອກຈາກນັ້ນ, ຫຼາຍໆບ້ານກໍ່ມີພຽງແຕ່ເສັ້ນທາງດິນແດງ/ເປີເປື້ອນ (ພາຫານະບໍ່ສາມາດແລ່ນຜ່ານໄດ້ຕະຫຼອດປີ) ເຊື່ອມຕໍ່ເທົ່ານັ້ນ. ຫຼາຍກວ່າເຄິ່ງໜຶ່ງຂອງບັນດາແຂວງຢູ່ໃນທົ່ວປະເທດແມ່ນເປັນພື້ນທີ່ເຂດພູສູງ ຊຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເດີນທາງ, ເຖິງແມ່ນວ່າມີເສັ້ນທາງເຊື່ອມຕໍ່ເຖິງບ້ານຕ່າງໆແລ້ວກໍ່ຕາມ. ການຂົນສົ່ງສາທາລະນະຢູ່ໃນທົ່ວປະເທດແມ່ນຍັງບໍ່ດີພໍ ຊຶ່ງເຮັດໃຫ້ຜູ້ຄົນອີງອາໄສໃສ່ສິ່ງອໍານວຍຄວາມສະດວກດ້ານການຂົນສົ່ງຂອງພາກເອກະຊົນທີ່ຍັງບໍ່ທັນເປັນປົກກະຕິ, ບໍ່ຕິດຕໍ່ໜໍ່ເນື່ອງ ແລະມີລາຄາສູງ. ໃນຈໍານວນ 24 ບ້ານ, ຢູ່ໃນ 12 ເມືອງ ຂອງ 6 ແຂວງ ທີ່ຢູ່ໃນກໍລະນີສຶກສາຂອງ NERI ນັ້ນ, ເຫັນວ່າການເຊື່ອມຕໍ່ທາງຖະໜົນແມ່ນເປັນດັ່ງຕໍ່ໄປນີ້: 29,1% ຂອງຈໍານວນຄົວເຮືອນຕົວຢ່າງໄດ້ລາຍງານວ່າ ເຂົາເຈົ້າມີຖະໜົນປູຢາງເຂົ້າເຖິງ, 50% ແມ່ນມີຖະໜົນເປີເປື້ອນເຂົ້າເຖິງ ແຕ່ກໍ່ສາມາດທຽວໄດ້ຕະຫຼອດປີ, 12,5% ແມ່ນມີຖະໜົນເປີເປື້ອນເຂົ້າເຖິງ ແຕ່ທຽວໄດ້ພຽງແຕ່ໃນລະດູແລ້ງ ແລະ 8,3% ແມ່ນບໍ່ມີຖະໜົນເຂົ້າເຖິງເລີຍ.[78] ການປັບປຸງສະພາບຖະໜົນ ແລະການເຊື່ອມຕໍ່, ແລະການສະໜອງການຂົນສົ່ງສາທາລະນະທີ່ເໝາະສົມແມ່ນເປັນສິ່ງສໍາຄັນຫຼາຍສໍາລັບການປັບປຸງການເຂົ້າເຖິງສູນບໍລິການດ້ານສາທາລະນາສຸກ ແລະການປັບສະຖານະພາບດ້ານສຸຂະພາບຢູ່ໃນຊຸມຊົນຊົນນະບົດ (ກ່ອງທີ 3.4 ແລະ 3.5).

**ກ່ອງ 3.4: ການບໍລິການສາທາລະນາສຸກຢູ່ ແຂວງຊຽງຂວາງ ແລະ ເຊກອງ – ບົດລາຍງານການລົງພື້ນທີ່ພາກສະໜາມ**

ການບໍລິການດູແລຮັກສາສຸຂະພາບຢູ່ໃນ ແຂວງຊຽງຂວາງ (North) ແມ່ນຂ້ອນຂ້າງມີຄວາມເພິ່ງພໍໃຈຫຼາຍ, ຖ້າທຽບກັບຫຼາຍໆແຂວງຢູ່ໃນເຂດພາກເໜືອ. ເຖິງຢ່າງໃດກໍ່ຕາມ, ຢູ່ໃນ ແຂວງເຊກອງ (South) ແມ່ນເຂົາເຈົ້າຍັງບໍ່ທັນໄດ້ມາດຕະຖານເທື່ອ ແລະຍັງບໍ່ທັນທຽບກັບແຂວງອື່ນໆຢູ່ໃນພາກໃຕ້ໄດ້. ໃນຂະນະທີ່ການປົກຄຸມຂອງເຄືອຂ່າຍດ້ານສາທາລະນາສຸກດ້ວຍຕົວເອງແມ່ນຂ້ອນຂ້າງສູງ ແຕ່ບັນດາສູນດູແລຮັກສາສຸຂະພາບສ່ວນຫຼາຍ ກໍ່ສາມາດໃຫ້ການບໍລິການພຽງແຕ່ໄດ້ລື່ມກອງທຶນຢາຂອງບ້ານໜ້ອຍໜຶ່ງເທົ່ານັ້ນ. ຈາກການສຳພາດບັນດາຊຸມຊົນຕ່າງໆທີ່ເປັນຜູ້ຊົມໃຊ້ສູນດູແລຮັກສາສຸຂະພາບດັ່ງກ່າວໄດ້ສະແດງໃຫ້ເຫັນວ່າ ການປັບປຸງເລື່ອງຄຸນນະພາບຂອງການບໍລິການສາທາລະນາສຸກ ໂດຍສະເພາະແມ່ນສິ່ງອຳນວຍຄວາມສະດວກຕ່າງໆທັງໝົດຂອງພາກລັດແມ່ນຍັງມີຄວາມຈຳເປັນຢູ່ ສຳລັບບັນດາສູນຮັກສາດູແລຮັກສາສຸຂະພາບ (ສຸກສາລາ), ບັນດາໂຮງໝໍເມືອງ ແລະແມ່ນແຕ່ໂຮງໝໍແຂວງ. ນອກຈາກນັ້ນ, ການທີ່ມີປະຊາກອນດຳລົງຊີວິດຢູ່ໃນເຂດຊົນນະບົດ ແລະ/ຫຼືເຂດຫ່າງໄກສອກຫຼີກທີ່ບໍ່ມີ ຫຼືມີພຽງແຕ່ຖະໜົນທີ່ຂີ້ຮ້າຍເຂົ້າເຖິງນັ້ນກໍ່ມີຄວາມສຳຄັນເຊັ່ນກັນ ຊຶ່ງການເຊື່ອມຕໍ່ບັນດາບ້ານເຫຼົ່ານີ້ໃຫ້ເຂົ້າເຖິງສູນດູແລຮັກສາສຸຂະພາບ ຫຼືໂຮງໝໍນັ້ນ ມັນບໍ່ແມ່ນເລື່ອງງ່າຍພໍປານໃດ. ການຂາດແຄນການຂົນສົ່ງລະຫວ່າງບັນດາບ້ານຕ່າງໆເພື່ອໄປຫາສູນດູແລຮັກສາ ຫຼືສິ່ງອຳນວຍຄວາມສະດວກດ້ານສຸຂະພາບຕ່າງໆນັ້ນ ແມ່ນເຮັດໃຫ້ເລື່ອງດັ່ງກ່າວນັ້ນຂີ້ຮ້າຍລົງຕື່ມອີກ, ໃນຂະນະທີ່ຜູ້ຄົນສ່ວນຫຼາຍບໍ່ໄດ້ມີພາຫານະເປັນຂອງຕົນເອງນັ້ນ ກໍ່ຍັງພົບອີກວ່າຄ່າຈ້າງ ຫຼືເໝົາພາຫານະຂອງຜູ້ອື່ນນັ້ນແມ່ນມີລາຄາແພງຫຼາຍ. ຕົວຢ່າງທີ່ໄດ້ຮັບຈາກການອ້າງອີງຢູ່ໃນພາກສະໜາມ (ແຂວງເຊກອງ) ນັ້ນແມ່ນ: ທ່ານຄິດວ່າມັນມີຄວາມຫຍຸ້ງຍາກ ແລະອັນຕະລາຍພຽງໃດ, ຖ້າຫາກວ່ານຳເອົາຜູ້ຍິງທີ່ຖືພາຄົນໜຶ່ງເພື່ອໄປອອກລູກຢູ່ໃນສຸກສາລາທີ່ຫ່າງໄກຈາກບ້ານພຽງແຕ່ 3-5 ກມເທົ່ານັ້ນ ໂດຍທີ່ນັ່ງຊ້ອນທ້າຍລົດຈັກໄປຕາມທາງທີ່ເປັນດິນປະສົມແຮ່ຫລຸບໂນນ ແລະພູສູງ ?

ໃນໄລຍະທີ່ຜ່ານມາ, ຈຳນວນພະນັກງານສາທາລະນາສຸກທີ່ປະຈຳການໃນລະບົບສາທາລະນາສຸກຂອງລັດຢູ່ຂັ້ນຕ່າງໆແມ່ນໄດ້ມີການເພີ່ມຂຶ້ນເລື້ອຍໆ ແຕ່ວ່າພະນັກງານສາທາລະນາສຸກທີ່ມີຄຸນວຸດທິ ໂດຍສະເພາະແມ່ນທ່ານໝໍທີ່ໄດ້ຮັບການຝຶກອົບຮົມ ແມ່ນຂ້ອນຂ້າງມີຢູ່ແຕ່ໃນໂຮງໝໍໃຫຍ່ໆຫຼາຍກວ່າ. ນອກຈາກນັ້ນ, ອັດຕາສ່ວນຂອງພະນັກງານແພດໝໍຕໍ່ກັບຈຳນວນປະຊາກອນຢູ່ໃນເຂດຊົນນະບົດທີ່ມີຄົນທຸກຍາກອາໄສຢູ່ຫຼາຍນັ້ນແມ່ນຂ້ອນຂ້າງຕ່ຳຫຼາຍ. ດັ່ງນັ້ນ, ໃນຂະນະທີ່ຈຳນວນພະນັກງານແພດໝໍຢູ່ໃນສຸກສາລາ ທີ່ຄາດວ່າຈະມີເຖິງ 5-7 ຄົນ ນັ້ນ, ແຕ່ໃນຄວາມເປັນຈິງດັ່ງທີ່ເຫັນຢູ່ໃນເຂດພູດອຍ ແມ່ນມີພຽງແຕ່ 2-3 ຄົນ ເທົ່ານັ້ນ ຊຶ່ງເຂົາເຈົ້າເຫຼົ່ານັ້ນແມ່ນມີຄຸນວຸດທິບາງຢ່າງ ແຕ່ພັດຂາດສີມືໃນການເຮັດວຽກຕົວຈິງ.

ແຫຼ່ງຂໍ້ມູນ: ການສັງເກດການໃນພາກສະໜາມ ຢູ່ໃນ 10 ບ້ານ ແລະ ກຸ່ມບ້ານ, ພະຈິກ 2015.

- ລັດຖະບານໄດ້ມີແຜນງານໃນການສ້າງບ້ານສາທາລະນາສຸກຕົວແບບ.[79] ໃນປັດຈຸບັນນີ້, ແມ່ນມີບ້ານສາທາລະນາສຸກຕົວແບບ ຈຳນວນ 5.492 ບ້ານ ຊຶ່ງກວມເອົາ 64,8% ຂອງຈຳນວນບ້ານທັງໝົດຢູ່ໃນທົ່ວປະເທດ. ແຜນງານນີ້ແມ່ນໄດ້ຖືກຈັດຕັ້ງປະຕິບັດມາຕັ້ງແຕ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ຊຶ່ງມາຮອດປັດຈຸບັນນີ້ແມ່ນມີອາຍຸຫຼາຍກວ່າໜຶ່ງທົດສະວັດແລ້ວ. ບັນດາເປົ້າໝາຍຂອງແຜນງານນີ້ ແມ່ນເພື່ອພັດທະນາບ້ານສຸຂະອະນາໄມຕົວແບບ ສຳລັບປັບປຸງສຸຂະພາບຂອງຊຸມຊົນບ້ານ ໂດຍສະເພາະແມ່ນສຸຂະພາບຂອງແມ່ ແລະເດັກ ໂດຍຜ່ານການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນຢູ່ໃນການຮັກສາສຸຂະພາບຂັ້ນຕົ້ນ.[80] ມັນມີຄວາມຈຳເປັນສຳລັບການປະເມີນຜົນໃຫ້ເລິກເຊິ່ງກ່ຽວກັບແຜນງານ ແລະອອກແບບບັນດາຍຸດທະສາດເພື່ອເຮັດໃຫ້ແຜນງານບ້ານສາທາລະນາສຸກຕົວແບບມີປະສິດທິຜົນຫຼາຍຂຶ້ນ.

- ທະນາຄານພັດທະນາອາຊີໄດ້ລົງທຶນຢູ່ໃນບັນດາແຂວງພາກເໜືອ, ໃນຂະນະທີ່ຄູ່ຮ່ວມພັດທະນາອື່ນໆໄດ້ລົງທຶນຢູ່ໃນແຂວງອື່ນໆ. ເຖິງຢ່າງໃດກໍ່ຕາມ, ຜົນກະທົບຂອງມັນໃນເລື່ອງຂອງຜົນໄດ້ຮັບຕ່າງໆເບິ່ງຄືວ່າມີໜ້ອຍດຽວ, ຈົນຮອດດຽວນີ້ແມ່ນຮູ້ສຶກວ່າບັນດາແຂວງພາກເໜືອຫາກໍ່ມີການປັບປຸງບັນດາຕົວຊີ້

ບອກກ່ຽວກັບຜົນຮັບດ້ານສຸຂະພາບໄດ້ພຽງໜ້ອຍດຽວ. ອັນທີ່ສຳຄັນກວ່ານັ້ນ, ມັນເບິ່ງຄືກັບວ່າການດຳເນີນໂຄງການນີ້ຢ່າງໂດດດ່ຽວແມ່ນບໍ່ສາມາດມີປະສິດທິຜົນໄດ້, ນອກຈາກວ່າມັນຫາກຖືກລວມເຂົ້າກັບບັນດາແຜນງານການສຶກສາ ແລະການກະຈາຍລາຍໄດ້, ແລະບັນດາແຜນງານທີ່ສຸມໃສ່ບັນດາກຸ່ມເປົ້າໝາຍທີ່ມີຄວາມສ່ຽງຈາກສະພາບແວດລ້ອມພາຍນອກ ແລະທັງເພີ່ມອຳນາດໃຫ້ເຂົາເຈົ້າໃຊ້ປະໂຫຍດຂອງແຜນງານນັ້ນໄດ້ຢ່າງເຕັມທີ່.

- ຈຳນວນປະຊາກອນລາວທີ່ສາມາດເຂົ້າເຖິງນ້ຳສະອາດ ແລະສຸຂະອະນາໄມໄດ້ ແມ່ນມີປະມານ 70% ແລະ 59%, ຕາມລຳດັບ. ການຖ່າຍທ່ອທິບສິ່ງຜົນເຮັດໃຫ້ນ້ຳໃຕ້ດິນ-ໜ້າດິນເປິເປື້ອນ ແລະເກີດພະຍາດຕິດແປດ.

- ຫຼາຍໆແຜນງານພັດທະນາທີ່ເຮັດວຽກຮ່ວມກັບແຜນງານອື່ນໆ ແມ່ນເຫັນວ່າມີປະສິດທິຜົນເປັນສ່ວນໃຫຍ່. ເຖິງຢ່າງໃດກໍ່ຕາມ, ກໍ່ຍັງມີຫຼາຍໆແຜນງານ ຫຼືໂຄງການທີ່ຖືກຈັດຕັ້ງປະຕິບັດຢ່າງໂດດດ່ຽວຢູ່ ຈຶ່ງເຮັດໃຫ້ຜົນທີ່ເກີດຈາກການຮ່ວມມືກັນເຮັດແມ່ນມີໜ້ອຍຫຼາຍ. ການປະສານງານກັນລະຫວ່າງອົງການ

ກົມກອງຕ່າງໆຢູ່ພາຍໃນຈະເພີ່ມປະສິດທິພາບ ແລະ ໃຫ້ຜົນຮັບໄດ້ດີກວ່າ; ການຈຸ້ມເຂົ້າຫາຈຸດດຽວກັນຂອງໂຄງການຕ່າງໆຢູ່ໃນລະດັບເມືອງແມ່ນເຫັນວ່າຈະມີປະສິດທິພາບຫຼາຍ.

## ການປັບປຸງຄຸນນະພາບຂອງບຸກຄະລາກອນ: ບາງຂໍ້ສະເໜີທີ່ສາມາດດຳເນີນການໄດ້

ເນື່ອງຈາກພວກເຮົາຍັງຂາດແຄນບຸກຄະລາກອນຢູ່ຂັ້ນທ້ອງຖິ່ນໃນເຂດຊົນນະບົດຫ່າງໄກ. ເພາະສະນັ້ນ, ທາງເລືອກທີໜຶ່ງແມ່ນຕ້ອງໄດ້ບັນຈຸ ແລະຝຶກອົບຮົມບຸກຄະລາກອນສາທາລະນະສຸກທີ່ມາຈາກບັນດາບ້ານ/ບັນດາເຂດນັ້ນໆເນື່ອງຈາກເຂົາເຈົ້າເຂົ້າໃຈພາສາ ແລະວັດທະນະທຳດຽວກັນເພື່ອຈັດຕັ້ງດຳເນີນການສົ່ງເສີມການໂຄສະນາຊວນເຊື່ອຕ່າງໆ ເຊັ່ນ: WASH (ນ້ຳ, ສຸຂະອະນາໄມ ແລະການຮັກສາອະນາໄມປ້ອງກັນພະຍາດ) ແລະໃຫ້ຄຳແນະນຳປະຊາຊົນກ່ຽວກັບຂໍ້ດີ ຫຼືຜົນປະໂຫຍດຂອງການນຳໃຊ້ບັນດາສິ່ງອຳນວຍຄວາມສະດວກດ້ານສາທາລະນະສຸກທີ່ທັນສະໄໝຕ່າງໆ. ບັນດານັກສຶກສາທີ່ກຳລັງຮຽນວິຊາແພດສາດ (ການແພດ ຫຼືຜູ້ຊ່ວຍແພດ) ຢູ່ ກໍ່ຄວນຈະຖືກສົ່ງໄປສູ່ເຂດຊົນນະບົດ ໂດຍໃຫ້ເປັນພາກສ່ວນໜຶ່ງຢູ່ໃນການຝຶກອົບຮົມຂອງເຂົາເຈົ້າ ແລະເຂົາເຈົ້າຍັງຄວນຈະເລືອກຮັບເອົາໜ້າທີ່ເປັນຜູ້ຊ່ວຍປິ່ນປົວສ່ວນໜຶ່ງຢູ່ໃນການສົ່ງເສີມດັ່ງກ່າວນີ້. ຂໍ້ສະເໜີດັ່ງກ່າວ, ແມ່ນເປັນພາກສ່ວນໜຶ່ງຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ແລະຍັງສືບຕໍ່ຈັດຕັ້ງປະຕິບັດຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ຕໍ່ໄປ.

ການສຶກສາດ້ານແພດສາດທັງໝົດ (ສຳລັບທ່ານໝໍ, ໝໍຜ່າຕັດ, ພະຍາບານ, ແພດພະດຸງຄັນ ແລະພະນັກງານສາທາລະນະສຸກອື່ນໆ) ແມ່ນຈຳເປັນຕ້ອງໃຫ້ກາຍເປັນວິຊາຊີບຫຼາຍຂຶ້ນ ແລະເຄັ່ງຄັດກັບການປະຕິບັດຕົວຈິງ/ການຝຶກເຮັດຕົວຈິງ (ແລະການຝຶກອົບຮົມຢູ່ພາກສະໜາມໃນເຂດຊົນນະບົດດີກວ່າ). ອັນນີ້ແມ່ນອາດຈະຮຽກຮ້ອງຕ້ອງການຊັບພະຍາກອນຕ່າງໆເປັນຈຳນວນຫຼາຍຊຶ່ງຂົງເຂດນີ້ແມ່ນບັນດາຄູ່ຮ່ວມພັດທະນາຄວນຈະຕ້ອງໄດ້ປະກອບສ່ວນ ເພື່ອການສ້າງມະຫາວິທະຍາໄລແພດສາດທີ່ມີຄຸນນະພາບສູງຢູ່ໃນ ສປປ ລາວ ແລະວິທະຍາໄລແພດອື່ນໆຢູ່ໃນແຕ່ລະແຂວງ ຫຼາຍກວ່າການໃຫ້ທຶນການສຶກສາຕ່າງໆແກ່ບັນດານັກສຶກສາເພື່ອໄປຮຽນວິຊາແພດສາດຢູ່ຕ່າງປະເທດ. ສິ່ງທີ່ກ່າວມານີ້ອາດຈະເປັນຂໍ້ສະເໜີສຳລັບໄລຍະກາງ ແລະໄລຍະຍາວ ແຕ່ມັນກໍ່ຮຽກຮ້ອງຕ້ອງການໃຫ້ມີການດຳເນີນການ ແລ້ວຜົນປະໂຫຍດທີ່ໄດ້ຈາກມັນກໍ່ຈະເພີ່ມຂຶ້ນ.

ການທີ່ໃຫ້ມີບຸກຄະລາກອນວິຊາຊີບທີ່ໄດ້ຮັບການຝຶກອົບຮົມຍອມໄປປະຈຳການຢູ່ໃນເຂດຊົນນະບົດນັ້ນແມ່ນເປັນສິ່ງທ້າທາຍບໍ່ພຽງແຕ່ຢູ່ໃນ ສປປ ລາວ ເທົ່ານັ້ນ ແຕ່ຢູ່ໃນຫຼາຍໆປະເທດກຳລັງພັດທະນາ ແລະປະເທດທີ່ພັດທະນາແລ້ວກໍ່ເປັນເຊັ່ນດຽວກັນນີ້;[81] ຊຶ່ງມັນບໍ່ແມ່ນເລື່ອງງ່າຍສຳລັບການແກ້ໄຂສິ່ງທ້າທາຍນີ້. ເຖິງຢ່າງໃດກໍ່ຕາມ, ວິທີການຕ່າງໆເຫຼົ່ານີ້ແມ່ນສາມາດເຮັດໄດ້ ດ້ວຍການສະໜອງສິ່ງຈູງໃຈຕ່າງໆໃຫ້ແກ່ບັນດາວິຊາການຜູ້ຊ່ຽວຊານເຫຼົ່ານີ້ ເພື່ອໃຫ້ເຂົາເຈົ້າເຮັດວຽກຢູ່ພາຍໃນໄດ້ຢ່າງເລິກເຊິ່ງເຖິງຖອງ. ຕົວຢ່າງ, ຖ້າຫາກວ່າແພດໜຸ່ມທີ່ຈົບວິຊາແພດສາດ ແລະ ຖືກໄປປະຈຳການຢູ່ໃນເຂດຊົນນະບົດ 3-5 ປີ ແມ່ນຄວນຈະຕ້ອງໄດ້ຮັບບຸລິມະສິດ ໃນການເຂົ້າ

ຮ່ວມໃນແຜນງານການສຶກສາສາທາງການແພດທີ່ສູງກວ່ານັ້ນ (ຢູ່ໃນ ສປປ ລາວ ຫຼືຕ່າງປະເທດກໍ່ໄດ້), ທາງເລືອກໃນການເຂົ້າປະຈຳການຂອງເຂົາເຈົ້າ ຫຼືການພິຈາລະນາສຳລັບການສົ່ງເສີມເພີ່ມເຕີມໄວກ່ອນກຳນົດ ແມ່ນຕ້ອງຢູ່ໃນລະຫວ່າງທາງເລືອກອື່ນນຳ. ນອກຈາກນັ້ນ, ເຂົາເຈົ້າຍັງຈະຕ້ອງໄດ້ຮັບການຊ່ວຍເຫຼືອດ້ານເຮືອນຢູ່ເປັນຫຼັງທີ່ມີຄວາມເໝາະສົມພໍສົມຄວນ (ບໍ່ແມ່ນທີ່ຢູ່ທີ່ເປັນທີ່ພັກແບບງ່າຍດາຍດັ່ງທີ່ເປັນມາ) ຢູ່ໃນບ່ອນທີ່ເຂົາຖືກປະຈຳການຢູ່, ສິ່ງທີ່ນອກເໜືອຈາກນັ້ນກໍ່ແມ່ນການຂົນສົ່ງ (ພາຫານະ).

**ກ່ອງທີ 3.5: ການຕັ້ງບ້ານໃໝ່ເພື່ອຈຸດປະສົງໃຫ້ມີການເຊື່ອມຕໍ່ທີ່ດີຂຶ້ນ**

ຢູ່ໃນບັນດາປະເທດທີ່ພັດທະນາແລ້ວ ແລະບັນດາເຂດເສດຖະກິດທີ່ພັດທະນາໃໝ່/ເກີດໃໝ່ຕ່າງໆນັ້ນ, ການຫັນເປັນຕົວເມືອງໄດ້ກາຍເປັນພະລັງຂັບເຄື່ອນທີ່ສຳຄັນ ຕໍ່ກັບການປັບປຸງດ້ານສາທາລະນາສຸກ ແລະການສຶກສາຂອງປະຊາລາດຊະດອນ. ເຫດຜົນຂອງການຕັດສິນໃຈດຳເນີນການກ່ຽວກັບເລື່ອງນີ້ ແມ່ນການຕັ້ງຖິ່ນຖານບ້ານຊ່ອງທີ່ກວ້າງໃຫຍ່ຂຶ້ນນັ້ນ ມັນເຮັດໃຫ້ຂ້ອນຂ້າງງ່າຍຕໍ່ກັບການສະໜອງດ້ານສາທາລະນາສຸກ, ການສຶກສາ ແລະການບໍລິການອື່ນໆ ເຊັ່ນ: ນ້ຳລິນ ແລະສຸຂະອະນາໄມ ເນື່ອງຈາກການບໍລິການ ແລະສິ່ງອຳນວຍຄວາມສະດວກແຕ່ລະຢ່າງເຫຼົ່ານີ້ ແມ່ນຄວາມຮຽກຮ້ອງຕ້ອງການຂັ້ນຕ່ຳທີ່ສຳຄັນຂອງປະຊາກອນຈຳນວນຫຼາຍ. ຢູ່ໃນ ສປປ ລາວ ລັດຖະບານໄດ້ມີແຜນການສຳລັບການ "ໂຮມບ້ານ" ເປັນບາງຄັ້ງຄາວ. ສະນັ້ນ, ການຕັ້ງຖິ່ນຖານຢູ່ໃນແຕ່ລະບ່ອນ ຫຼືແຕ່ລະເທື່ອນັ້ນ ແມ່ນຄວນໃຫ້ກາຍເປັນບ້ານທີ່ຂ້ອນຂ້າງໃຫຍ່ ແລະຈຳນວນຂອງການຕັ້ງຖິ່ນຖານບ້ານຊ່ອງນັ້ນແມ່ນຕ້ອງໃຫ້ມີໜ້ອຍລົງ (ບໍ່ເຮັດຫຼາຍ), ດ້ວຍວິທີນີ້ເທົ່ານັ້ນ ຈິ່ງຈະເຮັດໃຫ້ການວາງເປົ້າໝາຍກ່ຽວກັບການສະໜອງການບໍລິການຕ່າງໆໃຫ້ແກ່ຖິ່ນຖານບ້ານຊ່ອງນັ້ນ ມີປະສິດທິພາບຫຼາຍຂຶ້ນ ເຊັ່ນ: ການສຶກສາ, ສາທາລະນາສຸກ, ສະຫວັດດີການສັງຄົມ ແລະ ອື່ນໆ. ໃນໄລຍະຜ່ານມາ, ໂຄງການໂຮມບ້ານນີ້ແມ່ນຍັງບໍ່ທັນປະສົບຜົນສຳເລັດຫຼາຍເທົ່າທີ່ຄວນ ແຕ່ກໍ່ຈະຕ້ອງໄດ້ດຳເນີນການຕໍ່ໄປຢ່າງຮີບດ່ວນຫຼາຍຂຶ້ນ ແລະດ້ວຍການເອົາໃຈໃສ່ຕໍ່ຄວາມຮູ້ສຶກຂອງທ້ອງຖິ່ນຫຼາຍຂຶ້ນ ເນື່ອງຈາກທີ່ຜ່ານມາສິ່ງເຫຼົ່ານີ້ແມ່ນເປັນສາເຫດສຳຄັນທີ່ນຳໄປສູ່ຜົນສຳເລັດທີ່ຕ່ຳ.

ແຫຼ່ງຂໍ້ມູນ: ບົດລາຍງານການພັດທະນາມະນຸດແຫ່ງຊາດ ເຫຼັ້ມທີ 4 ຂອງ ສປປ ລາວ.

**ກ່ອງທີ 3.6: ສຸຂະພາບຂອງແມ່ ແລະ ເດັກອ່ອນ ຢູ່ ແຂວງຊຽງຂວາງ ແລະເຊກອງ – ບົດລາຍງານຈາກການລົງພາກສະໜາມ**

ຄວາມເປັນຫ່ວງທີ່ສຳຄັນອັນໜຶ່ງ ກ່ຽວກັບດ້ານສາທາລະນາສຸກຢູ່ໃນ ແຂວງຊຽງຂວາງ ແລະເຊກອງນັ້ນແມ່ນການຕາຍຂອງແມ່ ແລະເດັກອ່ອນ. ຕັ້ງແຕ່ປີ 2011 ເປັນຕົ້ນມາ, ແມ່ນໄດ້ມີການຈັດຕັ້ງປະຕິບັດຫຼາຍໂຄງການທີ່ໄດ້ຮັບທຶນຈາກພາຍນອກ ເພື່ອຫລຸດຜ່ອນອັດຕາການຕາຍຂອງແມ່ ແລະເດັກອ່ອນ/ເດັກອາຍຸລຸ່ມ 5 ປີ.

**ດ້ານບວກ:**

ໂຄງການທີ່ໃຫ້ຜົນດີຫຼາຍທີ່ສຸດ ແມ່ນຢູ່ພາຍໃຕ້ລຳດັດ ເລກທີ 273/ນຍ, ທີ່ໄດ້ສະໜອງການບໍລິການແລະການປິ່ນປົວພະຍາດແບບບໍ່ເສຍຄ່າໃຫ້ແກ່ເດັກນ້ອຍທີ່ມີອາຍຸລຸ່ມ 5 ປີ. ໂຄງການນີ້ໄດ້ສະໜອງການບໍລິການແບບບໍ່ເສຍຄ່າໃຫ້ແກ່ແມ່ຍິງທີ່ຖືພາ ເຊັ່ນ: ການຝາກທ້ອງ, ການຊັກຢາວັກຊິນທີ່ຈຳເປັນຕ່າງໆ, ການໃຫ້ອາຫານແລະຄ່າຂົນສົ່ງສຳລັບການໄປຫາສຸກສາລາ/ບ່ອນອຳນວຍຄວາມສະດວກອື່ນໆ. ຢູ່ໃນບາງເຂດຂອງ ແຂວງເຊກອງ ອຳນາດການປົກຄອງ/ເຈົ້າໜ້າທີ່ຕ່າງໆໄດ້ໃຫ້ເປັນເຂົ້າ ຈຳນວນ 10 ກິໂລກຣາມ ແກ່ແມ່ຍິງຜູ້ທີ່ຖືພາທີ່ໄປອອກລູກຢູ່ໂຮງໝໍ/ສຸກສາລາ. ຊຸມຊົນບ້ານຕ່າງໆໄດ້ແຈ້ງໃຫ້ທີມງານຄົ້ນຄວ້າຮູ້ວ່າ ດ້ວຍການຈັດຕັ້ງປະຕິບັດໂຄງການນີ້ ໄດ້ເຮັດໃຫ້ປະຊາຊົນຜູ້ທີ່ທຸກຍາກໄປຫາໂຮງໝໍ/ສຸກສາລາມີຈຳນວນເພີ່ມຂຶ້ນ.

**ດ້ານລົບ:**

ເຖິງວ່າການບໍລິການແມ່ນບໍ່ໄດ້ເສຍຄ່າກໍ່ຕາມ ແຕ່ປະຊາຊົນບາງສ່ວນ ໂດຍສະເພາະແມ່ນຜູ້ທີ່ມາຈາກຊຸມຊົນໆເຜົ່າຕ່າງໆກໍ່ຍັງບໍ່ໄປໃຊ້ບໍລິການຂອງໂຮງໝໍ/ສຸກສາລາເທື່ອ ຍ້ອນເຂົາເຈົ້າຍັງບໍ່ທັນຄຸ້ນເຄີຍກັບຜົນປະໂຫຍດທີ່ບໍ່ມຊ້ອນຕ່າງໆ, ບັນດາສິ່ງກີດຂວາງທາງດ້ານພາສາ, ວັດທະນະທຳ ແລະວິທີປະຕິບັດທາງດ້ານວັດທະນະທຳຕ່າງໆ, ການເຮັດວຽກຢູ່ໃນຊ່ວງໄລຍະລະດູການປູກຝັງ, ແລະການບໍ່ມີເງິນທີ່ພໍໃຊ້ຈ່າຍສຳລັບການບໍລິການ (ໃນບາງກໍລະນີ ແມ່ນຕ້ອງໄດ້ມີຄ່າໃຊ້ຈ່າຍເຂົ້າມາກ່ຽວຂ້ອງນຳ). ການສັກຢາປ້ອງກັນພະຍາດໃຫ້ແກ່ເດັກນ້ອຍກໍ່ຍັງເປັນບັນຫາຢູ່ໃນທັງສອງແຂວງ ໂດຍສະເພາະແມ່ນໃນລະຫວ່າງຊຸມຊົນໆເຜົ່າຕ່າງໆ. ເຖິງວ່າການບໍລິການເຫຼົ່ານີ້ແມ່ນໄດ້ສະໜອງໃຫ້ແກ່ທຸກໆບ້ານ ໂດຍບໍ່ມີຄ່າໃຊ້ຈ່າຍໃດໆກໍ່ຕາມ ແຕ່ວ່າການໃຊ້ການບໍລິການເຫຼົ່ານີ້ແມ່ນຍັງຕ່ຳຢູ່ດ້ວຍຫຼາຍເຫດຜົນຕ່າງໆນາໆ, ລວມທັງຄວາມເຊື່ອເບື້ອງຜົນກະທົບຂອງການສັກຢາວັກຊິນ (ຕົວຢ່າງ: ການເປັນໄຂ້ໃນ 2-3 ມື້ ພາຍຫຼັງທີ່ສັກຢາວັກຊິນ), ສິ່ງກີດ ຂວາງດ້ານພາສາ, ການຂາດຄວາມຮັບຮູ້ກ່ຽວກັບຜົນປະໂຫຍດຂອງມັນ, ຄວາມເຊື່ອກ່ຽວກັບຄວາມສ່ຽງຂອງການສັກຢາວັກຊິນ (ຕົວຢ່າງ: ເຈັບ/ໄຄ່ບວມຈາກການສັກຢາ) ແລະຄຸນນະພາບ ກໍ່ຄືຊ່ວງໄລຍະເວລາຂອງການສັກຢາ. ບັນດາພະນັກງານແພດໝໍເອງກໍ່ຍອມຮັບວ່າເຂົາເຈົ້າຂາດສີມືໃນການສື່ສານ ເພື່ອໂນ້ມນ້າວໃຫ້ບັນດາຄອບຄົວທີ່ມາຈາກກຸ່ມຊົນເຜົ່າຕ່າງໆ ນຳເອົາເດັກນ້ອຍຂອງເຂົາເຈົ້າມາສັກຢາປ້ອງກັນພະຍາດ. ຢູ່ ແຂວງເຊກອງ ແມ່ນມີກຸ່ມຊົນເຜົ່າຕ່າງໆທີ່ແຕກຕ່າງກັນເປັນຈຳນວນຫຼາຍ ຊຶ່ງປັດຈຸບັນນີ້ແມ່ນມີພຽງແຕ່ 43% ຂອງຈຳນວນເດັກນ້ອຍເທົ່ານັ້ນ ທີ່ໄດ້ຮັບການສັກຢາວັກຊິນ.

ແຫຼ່ງຂໍ້ມູນ: ການສັງເກດການພາກສະໜາມ ຢູ່ໃນຈຳນວນ 10 ບ້ານ ແລະ ກຸ່ມບ້ານ, ພະຈິກ 2015.

**ກ່ອງ 3.7: ຂໍ້ມູນສຳລັບການຕິດຕາມ ແລະປະເມີນຜົນ – ປະສົບປະການຂອງ ສປປ ລາວ ແລະ ກຳປູເຈຍ**

ການຕິດຕາມ ແລະປະເມີນຜົນເປັນປະຈຳແມ່ນມີຄວາມສຳຄັນຫຼາຍສຳລັບບັນດາແຜນງານ ແລະ ຍຸດທະສາດທີ່ອີງໃສ່ຫຼັກຖານ. ອັນນີ້ແມ່ນມີຄວາມສຳຄັນຫຼາຍຢູ່ໃນບັນດາຂະແໜງການຕ່າງໆທີ່ມີຫຼາຍອົງການ/ໜ່ວຍງານດຳເນີນງານຢູ່ ໂດຍສະເພາະແມ່ນບັນດາອົງການ/ໜ່ວຍງານທີ່ໃຫ້ທຶນໂດຍບັນດາຄູ່ຮ່ວມພັດທະນາ. ການມີຂໍ້ມູນທີ່ເຊື່ອຖືໄດ້ ແລະແຍກກັນຕາມເຫດ ແລະຜົນຢູ່ເລື້ອຍໆນັ້ນ ແມ່ນມີຄວາມສຳຄັນຫຼາຍສຳລັບການປະເມີນປະສິດທິຜົນຂອງຕົ້ນທຶນ ແລະປະສິດທິພາບໃນການດຳເນີນງານຂອງຫຼາຍໆໂຄງການ ພາຍໃນໂຄງສ້າງການຕິດຕາມ ແລະປະເມີນຜົນທີ່ອີງໃສ່ຜົນໄດ້ຮັບ ຫຼືໝາກຜົນ.

ການສຳຫຼວດຕ່າງໆຂອງ ສປປ ລາວ ແມ່ນໄດ້ຖືຈັດຂຶ້ນຢູ່ເລື້ອຍໆ ຕາມຊ່ວງໄລຍະເວລາຂອງການມີທຶນຄືດັ່ງທີ່ສະແດງໄວ້ຂ້າງລຸ່ມນີ້:

- ການສຳຫຼວດກຸ່ມຕົວຊີ້ບອກຫຼາຍຕົວ (MICS) ແມ່ນໄດ້ຈັດຂຶ້ນໃນປີ 1996, 2000 ແລະ 2006 ຊຶ່ງສຸມໃສ່ບັນດາຕົວຊີ້ບອກທີ່ກ່ຽວພັນກັບເດັກນ້ອຍ ເຊັ່ນ: ການສຶກສາ, ສາທາລະນະສຸກ, ການໂພຊະນາການ, ນ້ຳແລະສຸຂະອະນາໄມ, ການພັດທະນາເດັກນ້ອຍ, ການປົກປ້ອງເດັກນ້ອຍ ແລະ HIV/AIDS. ບາງຂໍ້ມູນກ່ຽວກັບສຸຂະພາບຂອງແມ່ກໍ່ໄດ້ມີການເກັບກຳເຊັ່ນກັນ;
- ການສຳຫຼວດສຸຂະພາບຈະເລີນພັນຂອງລາວ (LRHS) ແມ່ນໄດ້ຈັດຂຶ້ນໃນປີ 1995, 2000 ແລະ 2005 ຊຶ່ງສຸມໃສ່ກ່ຽວກັບສຸຂະພາບຈະເລີນພັນ, ການຄຸມກຳເນີດ ແລະພຶດຕິກຳທາງເພດສຳພັນຂອງປະຊາກອນລາວ;

- ການສຳຫຼວດປະຊາກອນ ແລະທີ່ຢູ່ອາໄສ ແມ່ນໄດ້ຈັດຂຶ້ນໃນປີ 1995, 2005 ແລະ 2015 (ຜົນຂອງມັນແມ່ນຍັງຕິດຄ້າງຢູ່ ຫຼືບໍ່ທັນອະນຸຍາດໃຫ້ໃຊ້ໄດ້). ຢູ່ໃນການສຳຫຼວດເຫຼົ່ານີ້ແມ່ນປະກອບດ້ວຍຂໍ້ມູນດ້ານປະຊາກອນ ແລະບັນດາຕົວຊີ້ບອກທີ່ສຳຄັນກ່ຽວກັບການສຶກສາ ແລະສາທາລະນາສຸກ. MICS ແລະ LRHS ແມ່ນໄດ້ມີການຈັດຂຶ້ນໃນຊ່ວງໄລຍະເວລາໃກ້ຄຽງກັນ ແຕ່ຫາກໄດ້ຜະລິດບັນດາຂໍ້ມູນລະດັບຊາດທີ່ແຕກຕ່າງກັນກ່ຽວກັບບັນດາຕົວຊີ້ບອກອັນດຽວກັນ ແລະສ້າງໃຫ້ມີຄວາມຜິດປົກກະຕິຕ່າງໆ. ເພາະສະນັ້ນ, ເພື່ອສ້າງຜົນຮັບຈາກຊັບພະຍາກອນຂອງລັດ ແລະຄູ່ຮ່ວມພັດທະນາໃຫ້ໄດ້ສູງສຸດ ແລະທັງສ້າງ

ໃຫ້ໄດ້ຊຸດຂໍ້ມູນຕົວເລກລະດັບຊາດກ່ຽວກັບບັນດາຕົວຊີ້ວັດທາງສັງຄົມທີ່ເປັນອັນໜຶ່ງອັນດຽວກັນ ແລະເຊື່ອຖືໄດ້ນັ້ນ, ການສຳຫຼວດຕ່າງໆເຫຼົ່ານີ້ໃນປັດຈຸບັນແມ່ນຍັງມີການສືບຕໍ່ ແລະຖືກລວມເຂົ້າກັນເປັນການສຳຫຼວດຕົວຊີ້ບອກທາງສັງຄົມຂອງລາວ (LSIS). LSIS ແມ່ນເປັນການສຳຫຼວດທີ່ອີງໃສ່ຄົວເຮືອນ ໂດຍການນຳໃຊ້ໂຄງສ້າງທາງດ້ານເຕັກນິກຂອງ MICS ແລະການສຳຫຼວດສຸຂະພາບຂອງປະຊາກອນ (DHS) ຊຶ່ງເປົ້າໝາຍຂອງມັນແມ່ນເພື່ອຜະລິດສະຖິຕິທີ່ດີ ແລະສາມາດສົມທຽບກັບສາກົນໄດ້ ເພື່ອຄາດຄະເນກ່ຽວກັບການຈັດລຽງອັນດັບຂອງບັນດາຕົວຊີ້ບອກທີ່ກ່ຽວພັນກັບສຸຂະພາບ. LSIS ແມ່ນປະກອບດ້ວຍຄຳຖາມຕ່າງໆທີ່ກ່ຽວກັບນ້ຳ, ສຸຂະອະນາໄມ, ການແຕ່ງງານ ແລະພຶດຕິກຳທາງເພດສຳພັນ, ຄວາມສາມາດມີລູກໄດ້, ສຸຂະພາບຈະເລີນພັນ, ການຕາຍຂອງແມ່, ສຸຂະພາບຂອງເດັກນ້ອຍ, ການໂພຊະນາການ, ການສຶກສາ, ການຕາຍຂອງເດັກນ້ອຍ, ການພັດທະນາເດັກນ້ອຍ, ການປົກປ້ອງເດັກນ້ອຍ, HIV/AIDS ແລະການສື່ສານມວນຊົນ. ໃນປັດຈຸບັນນີ້, LSIS ໄດ້ມີການລາຍງານຜົນຮັບດ້ານສາທາລະນາສຸກໃນທຸກໆ 5 ປີ ແລະມີການສຳຫຼວດປະຊາກອນໃນທຸກໆ 10 ປີ.

ຂໍ້ມູນກ່ຽວກັບປັດໄຈນຳເຂົ້າ (ການໃຊ້ຈ່າຍຕ່າງໆ) ແລະຜົນຜະລິດທີ່ອອກມາແມ່ນໄດ້ມີການລາຍງານໂດຍກະຊວງເປັນລາຍປີ ແລະໄດ້ມີການຄາດຄະເນ, ຈັດພິມຈຳໜ່າຍ ແລະຍັງໄດ້ເອົາເຂົ້າຢູ່ເວບໄຊຂອງລະບົບຂໍ້ມູນຂ່າວສານທາງດ້ານສາທາລະນາສຸກ (HIS) ແລະ ສຳລັບຂໍ້ມູນດ້ານການສຶກສາກໍ່ຄ້າຍຄືກັນນີ້. ເຖິງຢ່າງໃດກໍ່ຕາມ, ສິ່ງຕ່າງໆເຫຼົ່ານີ້ແມ່ນບໍ່ໄດ້ຈັດພິມຈຳໜ່າຍເປັນລາຍປີ ແລະກໍ່ບໍ່ໄດ້ມີຕະຫຼອດໄປ. ເຖິງແມ່ນວ່າລະບົບຂອງການລາຍງານເບິ່ງຄືວ່າຍັງເປັນລະບຽບຮຽບຮ້ອຍຢູ່ ແຕ່ການເຮັດໜ້າທີ່ຂອງມັນແມ່ນມີບັນຫາ ແລະຈຳເປັນຕ້ອງໄດ້ເຮັດໃຫ້ມັນມີປະສິດທິພາບ ແລະໂປ່ງໃສຫຼາຍຂຶ້ນກວ່າເກົ່າ.

ຢູ່ໃນ ກຳປູເຈຍ, ຕັ້ງແຕ່ປີ 2003 ເປັນຕົ້ນມາ ແມ່ນທຸກໆບ້ານ ແລະຕາແສງ (ຊຶ່ງຄ້າຍຄືກັນກັບກຸ່ມບ້ານ) ໄດ້ມີການເກັບກຳຂໍ້ມູນກ່ຽວກັບບັນດາຕົວປ່ຽນທາງເສດຖະກິດ ແລະສັງຄົມທີ່ສຳຄັນ. ບັນດາຈຸດສຳຄັນຂອງຂໍ້ມູນພື້ນຖານແມ່ນຂຶ້ນກັບຕົວປ່ຽນຂອງບ້ານ ແລະຕາແສງ, ສຳລັບການປ້ອນຂໍ້ມູນເຂົ້າໃສ່ປຶ້ມບັນທຶກຂອງບ້ານ ຫຼືຕາແສງນັ້ນ ແມ່ນນາຍບ້ານ ຫຼືຫົວໜ້າຕາແສງເປັນຜູ້ເຮັດ. ຕໍ່ຈາກນັ້ນ, ບັນດາຂໍ້ມູນເຫຼົ່ານີ້ແມ່ນໄດ້ຖືກກວດທຽບໃຫ້ສອດຄ່ອງກັນຢູ່ພາຍໃນປະເທດ ດ້ວຍການແຍກກັນຢ່າງຈະແຈ້ງຕາມລະດັບແຂວງ, ເມືອງ, ຕາແສງ ແລະບ້ານ, ແລະຕໍ່ຈາກນັ້ນຈຶ່ງປ້ອນເຂົ້າໃນເວບໄຊ. ຢູ່ໃນຊຸດຂໍ້ມູນນີ້ແມ່ນປະກອບດ້ວຍຂໍ້ມູນກ່ຽວກັບປະຊາກອນ, ສາທາລະນາສຸກ, ສຶກສາ, ກະສິກຳ ແລະກິດຈະກຳທາງເສດຖະກິດອື່ນໆ, ທີ່ດິນ ແລະຊັບສິນ, ແລະອື່ນໆ ຊຶ່ງພວກມັນເຫຼົ່ານີ້ແມ່ນມີຄ່າຫຼາຍສຳລັບການຕິດຕາມ ແລະການວາງແຜນລະດັບທ້ອງຖິ່ນ. ແຜນງານນີ້ແມ່ນໄດ້ຮັບການສະໜັບສະໜູນໂດຍ UNDP ແລະອື່ນໆ ເຊັ່ນ: ອົງການຮ່ວມມືພັດທະນາລະຫວ່າງປະເທດຂອງ ສະວີເດັນ (Sida) ກໍ່ໄດ້ຮ່ວມຢູ່ໃນນີ້ (ກໍ່ໄດ້ຮ່ວມເປັນສ່ວນໜຶ່ງຢູ່ໃນການສະໜັບສະໜູນຂອງ UNDP).

ສປປ ລາວ ກໍ່ໄດ້ເລີ່ມຕົ້ນຂະບວນການເກັບກຳ ແລະການກວດທຽບຂໍ້ມູນເຊັ່ນດຽວກັນນີ້ ດ້ວຍການສະໜັບສະໜູນຂອງ UNDP ຢູ່ໃນລະຫວ່າງປີ 2012-2013 ແຕ່ມັນພັດບໍ່ໄດ້ມີການສືບຕໍ່ອີກ ຊຶ່ງເຫັນວ່າມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການເລີ່ມຕົ້ນຄືນໃໝ່. ມັນອາດຈະເປັນປະໂຫຍດຫຼາຍສຳລັບການວາງແຜນ ແລະຕິດຕາມດ້ານສາທາລະນາສຸກ, ລວມທັງການວາງແຜນຢູ່ໃນຂະແໜງການ.

**ກ່ອງທີ 3.8: ການປະສານການສະໜັບສະໜູນຂອງຜູ້ໃຫ້ທຶນ**

ສປປ ລາວ ແມ່ນຍັງອີງໃສ່ການຊ່ວຍເຫຼືອຈາກພາຍນອກສໍາລັບການຈັດຕັ້ງປະຕິບັດແຜນງານການບໍລິການສາທາລະນາສຸກຕົວຈິງ (ລວມທັງສິ່ງກໍ່ສ້າງ, ວັດຖຸອຸປະກອນ, ການເດີນທາງ, ແລະສິ່ງອື່ນໆ). ແຕ່ລະໂຄງການທີ່ເປັນການໃຫ້ທຶນຈາກພາຍນອກນັ້ນແມ່ນມີການກໍານົດໃຫ້ຈໍາກັດຢູ່ໃນເຂດພື້ນທີ່ໃດໜຶ່ງ, ມີວິທີການສົ່ງມອບການບໍລິການທີ່ແຕກຕ່າງກັນ ແລະມີໂຄງສ້າງໄລຍະເວລາທີ່ແຕກຕ່າງກັນ. ບັນດາໂຄງການເຫຼົ່ານີ້ແມ່ນຖືກລິເລີ່ມຂຶ້ນ ແລະສິ້ນສຸດລົງໃນເວລາທີ່ແຕກຕ່າງກັນ ຊຶ່ງບັນດາປັດໄຈຕ່າງໆທັງໝົດນີ້ໄດ້ສົ່ງຜົນເຮັດໃຫ້ບໍ່ມີການປະສານກັນຢູ່ໃນທົ່ວທຸກຂົງເຂດພື້ນທີ່ທາງພູມສາດ (ພູມສັນຖານ).

ອັນທີໜຶ່ງ, ມັນແມ່ນສິ່ງສໍາຄັນທີ່ຈະຕ້ອງຮັບປະກັນໃຫ້ການປະສານງານກັບຄູ່ຮ່ວມພັດທະນາ ໃຫ້ເປັນໄປຕາມທີ່ໄດ້ສະເໜີໃຫ້ (ຮັບປາກ) ໄວ້ກ່ຽວກັບເລື່ອງປະເພດ ຫຼືຊະນິດຂອງວັດຖຸອຸປະກອນ, ຮູບແບບຂອງການໃຫ້ ການບໍລິການ ແລະການຝຶກອົບຮົມບຸກຄະລາກອນ ຊຶ່ງເລື່ອງດັ່ງກ່າວນີ້ແມ່ນຄວນຈະຕ້ອງໄດ້ຍົກຂຶ້ນຢູ່ໃນການສົນທະນາຂອງກຸ່ມເຮັດວຽກໃນຂະແໜງການ (Sector Working Groups).

ອັນທີສອງ, ໃນປັດຈຸບັນນີ້ລາຍຈ່າຍງົບປະມານຂອງລັດໃຫ້ແກ່ຂະແໜງສາທາລະນາສຸກແມ່ນໜ້ອຍກວ່າ 1% ຂອງ GDP ຊຶ່ງໃນຂະນະທີ່ຄວາມຕ້ອງການຕໍ່າສຸດຂອງມັນແມ່ນປະມານ 2-3% ເນື່ອງຈາກ ສປປ ລາວ ເປັນປະເທດທີ່ມີຄວາມຫຍຸ້ງຍາກດ້ານພູມສັນຖານ ແລະເປັນບ່ອນທີ່ການບໍລິການຂອງພາກເອກກະຊົນບໍ່ໄປເຖິງອັດ ຕາສ່ວນຂອງຈໍານວນປະຊາກອນສ່ວນໃຫຍ່ເທື່ອ. ຖ້າການໃຊ້ຈ່າຍຂອງພາກລັດຮ່ວມກັບການສະໜັບສະໜູນຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາຫາກເພີ່ມຂຶ້ນສອງ-ສາມເທົ່າ (ເຖິງແມ່ນວ່າໃນໄລຍະຫຼັງມານີ້ການລົງທຶນຂອງພາກລັດໄດ້ຄ່ອຍໆເພີ່ມຂຶ້ນກໍ່ຕາມ) ກໍ່ອາດຈະເຮັດຜົນໄດ້ຮັບຕ່າງໆນັ້ນດີຂຶ້ນ.

ອັນທີສາມ, ເຖິງແມ່ນວ່າໃນປັດຈຸບັນນີ້ໄດ້ມີໂຄງການສາທາລະນາສຸກທີ່ໄດ້ຮັບການອຸດໜູນ ຊຶ່ງເຮັດໃຫ້ ການກວມເອົາຂອງການບໍລິການສາທາລະນາສຸກເພີ່ມຂຶ້ນກໍ່ຕາມ ແຕ່ວ່າມັນກໍ່ຍັງບໍ່ທັນທົ່ວເຖິງ ແລະຈໍານວນທຶນທີ່ໄດ້ຈັດສັນໃຫ້ແກ່ການປິ່ນປົວຕໍ່ຄັ້ງນັ້ນແມ່ນຍັງໜ້ອຍ. ພ້ອມກັນນັ້ນ, ການປ່ຽນແປງຈໍານວນ ຫຼືຂະໜາດຂອງການໃຊ້ຈ່າຍອຸດໜູນນັ້ນກໍ່ປ່ຽນແປງໄປຕາມການໃຫ້ທຶນຂອງຄູ່ຮ່ວມພັດທະນາເຊັ່ນກັນ. ມັນໄດ້ມີການສະເໜີວ່າ ຈະຕ້ອງໄດ້ມີການດໍາເນີນການສຶກສາ-ຄົ້ນຄວ້າທີ່ຄົບຖ້ວນສົມບູນ ເພື່ອພິຈາລະນາເບິ່ງການອຸດໜູນຕ່າງໆໃຫ້ແກ່ວຽກງານສາທາລະນາສຸກໃນປັດຈຸບັນ ແລະສະເໜີບັນດາທາງເລືອກສໍາລັບການເພີ່ມການກວມເອົາ ແລະການຮັບ ປະກັນການປິ່ນປົວທີ່ມີປະສິດທິພາບ.

ອັນທີສີ່, ການຮ່ວມມືລະຫວ່າງພາກລັດ ແລະເອກະຊົນສໍາລັບການສະໜອງການບໍລິການສາທາລະນາສຸກ ກໍ່ສາມາດເປັນອີກທາງເລືອກໜຶ່ງ. ໃນກໍລະນີທີ່ບັນດາຕຶກອາຄານສຸກສາລາຕ່າງໆຂອງລັດຖະບານທີ່ໄດ້ສ້າງຂຶ້ນແລ້ວ ແຕ່ຂາດທັງອຸປະກອນເຄື່ອງມື ແລະພະນັກງານກໍ່ບໍ່ພຽງພໍນັ້ນ, ບາງທີສິ່ງອໍານວຍຄວາມສະດວກຕ່າງໆເຫຼົ່ານີ້ກໍ່ອາດຈະສາມາດໃຫ້ແພດໝໍ ຫຼື ຜູ້ຊ່ວຍແພດທີ່ເປັນເອກະຊົນເຊົ່າກໍ່ໄດ້ ເພື່ອໃຫ້ເຂົາເຈົ້າສະໜອງການບໍລິການຕ່າງໆດ້ວຍຕົວຂອງເຂົາເຈົ້າເອງ ແຕ່ຜູ້ດໍາເນີນການເອກະຊົນນັ້ນກໍ່ຕ້ອງຄິດໄລ່ຄ່າບໍລິການຈາກລູກຄ້າ (ຄົນເຈັບ) ຕາມຄ່າທີ່ຖືກຮັບຮອງຈາກພາກລັດ (ບໍ່ແມ່ນຄິດໄດ້ຄິດເອົາ). ລັດຖະບານຄວນຈະຕ້ອງອອກໃບບົງ (coupons) ໃຫ້ກັບຜູ້ທີ່ທຸກຍາກ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າໃຊ້ບໍລິການຢູ່ໃນສຸກສາລາ/ໂຮງໝໍເຫຼົ່ານັ້ນໄດ້, ຫຼັງຈາກນັ້ນຜູ້ດໍາເນີນການຕ່າງໆເຫຼົ່ານັ້ນ ຈຶ່ງນໍາໃບບົງນັ້ນໄປແລກເງິນສົດຄືນຈາກຄັງເງິນຂອງລັດຖະບານ ຫຼືທະນາຄານເປັນລາຍອາທິດ ຫຼືລາຍເດືອນກໍ່ໄດ້ (ເວົ້າງ່າຍໆກໍ່ແມ່ນເຮັດແບບບົງນໍ້າມັນຂອງລັດນັ້ນ). ອັນນີ້ແມ່ນເປັນວິທີການອັນໃໝ່ ແລະຍັງບໍ່ໄດ້ຖືກທົດລອງເທື່ອ; ເພາະສະນັ້ນ, ມັນຄວນຈະຕ້ອງຖືກຮັບຮອງເປັນເທື່ອທໍາອິດ ເພື່ອເປັນການທົດລອງນໍາຮ່ອງກ່ອນທີ່ຈະມີການດໍາເນີນການຕໍ່ໄປ.

## ການໂພຊະນາການ

ການໂພຊະນາການ ແມ່ນເປັນອົງປະກອບທີ່ຈຳເປັນຂອງ HAI ຊຶ່ງພາກທີ 1 ແລະ ພາກທີ 2 ແມ່ນໄດ້ມີການສົນທະນາກ່ຽວກັບວ່າ ການໂພຊະນາການທີ່ໄດ້ຮັບການປັບປຸງຍົກລະດັບຈະຊ່ວຍໃນການປັບປຸງຄ່າຂອງ HAI ໄດ້ໄວ ແລະກ້າວໄປສູ່ການຫລຸດພົ້ນອອກຈາກສະຖານະພາບ LDC ຂອງປະເທດໄດ້ໄວຂຶ້ນຄືແນວໃດ.

ຈຳນວນເດັກນ້ອຍທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ (ອາຍຸຕ່ຳກວ່າ 5 ປີ ຫຼື U5) ແມ່ນຍັງມີຢູ່ປະມານ 27% ຂອງຈຳນວນເດັກນ້ອຍທັງໝົດຢູ່ໃນກຸ່ມເປົ້າໝາຍ ໃນປີ 2010-2011 (ຕາຕະລາງ 3.4) ໂດຍເປົ້າໝາຍນີ້ແມ່ນໃຫ້ບັນລຸໄດ້ 22% ພາຍໃນປີ 2015 ຊຶ່ງເຫັນວ່າຈະສາມາດບັນລຸໄດ້ ເນື່ອງຈາກອັດຕາການຫລຸດລົງຂອງດັດຊະນີນີ້ແມ່ນມີຢູ່ປະມານ 2% ຕໍ່ປີ. ຈຳນວນເດັກນ້ອຍທີ່ບໍ່ໄດ້ມາດຕະຖານດ້ານຄວາມສູງນັ້ນ (ຍ້ອນຂາດສານອາຫານ) ແມ່ນເຫັນວ່າຍັງມີຢູ່ສູງ ຊຶ່ງຢູ່ທີ່ປະມານ 43-45% ໂດຍອັນນີ້ໄດ້ສະແດງໃຫ້ເຫັນຢູ່ໃນການເພີ່ມຂຶ້ນຕົວຈິງຈາກການຄາດຄະເນເບື້ອງຕົ້ນ (ຈາກ MICS, 2006). ໃນເປົ້າໝາຍນີ້ສຳລັບປີ 2015 ແມ່ນ 34% ຊຶ່ງເຫັນວ່າມັນຍັງຢູ່ຫ່າງໄກຈາກເປົ້າໝາຍຫຼາຍ, ເຖິງແມ່ນວ່າຜົນຂອງການສຳຫຼວດຍັງບໍ່ທັນອອກມາກໍ່ຕາມ.

**ຕາຕະລາງ 3.4: ສະພາບການໂພສະນາການຂອງເດັກນ້ອຍ ອາຍຸລຸ່ມ 5 ປີ, 2010-2011**

| ແບ່ງຕາມປະເພດຕ່າງໆ | ນ້ຳໜັກຕ່ຳກວ່າ ມາກຕະຖານ (%) | ຄວາມສູງຕ່ຳກວ່າ ມາດຕະຖານ (%) | ຈ່ອຍຜອມກວ່າ ມາດຕະຖານ (%) |
|---|---|---|---|
| ຊາຍ | 26,7 | 45,7 | 6,4 |
| ຍິງ | 26,4 | 42,6 | 5,4 |
| | | | |
| ພາກເໜືອ | 26,2 | 51,4 | 5,3 |
| ພາກກາງ | 23,1 | 38,1 | 5,4 |
| ພາກໃຕ້ | 34,7 | 46,6 | 7,9 |
| | | | |
| ໃນຕົວເມືອງ | 16,1 | 27,4 | 5,4 |
| ໃນເຂດຊົນນະບົດ | 29,3 | 48,6 | 6,1 |
| ເຂດຊົນນະບົດທີ່ມີຖະໜົນ | 29,0 | 47,8 | 6,1 |
| ເຂດຊົນນະບົດບໍ່ມີຖະໜົນ | 31,6 | 53,8 | 5,7 |

ແຫຼ່ງຂໍ້ມູນ: LSIS 2010/2011.

ມັນມີຄວາມແຕກຕ່າງ ຫຼືຄວາມບໍ່ສະເໝີພາບສູງ: ອີງຕາມ LSIS ຂອງປີ 2010-2011 ພົບວ່າມັນຍັງມີຄວາມແຕກຕ່າງກັນໜ້ອຍໜຶ່ງໃນລະຫວ່າງຈຳນວນເດັກນ້ອຍທີ່ມີຄວາມສູງ ແລະນ້ຳໜັກບໍ່ໄດ້ມາດຕະຖານຢູ່ໃນບັນດາຄົວເຮືອນທີ່ຮັ່ງມີທີ່ສຸດ ແລະທຸກຍາກທີ່ສຸດ. ສຳລັບຄວາມສູງທີ່ບໍ່ໄດ້ມາດຕະຖານຂອງເດັກນ້ອຍນັ້ນແມ່ນພົບເຫັນຫຼາຍຢູ່ໃນເຂດຊົນນະບົດ ແລະໃນລະຫວ່າງຊຸມຊົນໆເຜົ່າຕ່າງໆທີ່ດຳລົງຊີວິດຢູ່ໃນເຂດພູດອຍຫ່າງໄກສອກຫຼີກແມ່ນມີຫຼາຍກວ່າຊຸມຊົນຕ່າງໆໃນຕະກູນພາສາ ລາວ-ໄຕ ທີ່ດຳລົງຊີວິດຢູ່ໃນເຂດທົ່ງພຽງ ຊຶ່ງໃນບາງດ້ານກໍ່ແມ່ນເປັນຍ້ອນສະພາບຄວາມທຸກຍາກ ແລະການຢູ່ໂດດດ່ຽວຫ່າງໄກໃນອາດີດ (ຕາຕະລາງ 3.4).

ການຂາດສານອາຫານແມ່ນບໍ່ໄດ້ຖືກຈຳກັດຢູ່ໃນແຕ່ເດັກນ້ອຍຢ່າງດຽວ: ຢູ່ໃນບັນດາຜູ້ໃຫຍ່ນັ້ນກໍ່ມີການຂາດສານອາຫານເຊັ່ນດຽວກັນ, ລວມທັງກຸ່ມທີ່ມີຄວາມບອບບາງຕ່າງໆ ເຊັ່ນ: ແມ່ຍິງຜູ້ທີ່ກຳລັງຖືພາ ແລະເກີດລູກໃໝ່ (ຜູ້ທີ່ກຳລັງມີລູກກິນນົມ). ຢູ່ໃນລະຫວ່າງເພດຍິງວັດແທກໂດຍດັດຊະນີຂະໜາດຂອງຮ່າງກາຍ ຫຼື body mass index (BMI) ເຫັນວ່າມີພຽງແຕ່ 14,4% ຂອງເຂົາເຈົ້າທີ່ຢູ່ໃນລະດັບບໍ່ຮຸນແຮງສຳລັບນ້ຳໜັກທີ່ຕ່ຳຫຼາຍຕໍ່ກັບຄວາມສູງຂອງເຂົາເຈົ້າ.[82] ອັນນີ້ແມ່ນເປັນເລື່ອງທີ່ຮ້າຍແຮງຫຼາຍ ເນື່ອງຈາກ BMI ທີ່ຕ່ຳຢູ່ໃນລະຫວ່າງເພດຍິງນັ້ນແມ່ນກ່ຽວພັນກັບຄວາມສ່ຽງສູງທີ່ເຂົາເຈົ້າເກີດລູກອອກມາຈະມີນ້ຳໜັກຕ່ຳກວ່າມາດຕະຖານ. ການຖ່າຍທອດ

(ສືບທອດ) ການຂາດສານອາຫານລະຫວ່າງຮຸ່ນຕໍ່ຮຸ່ນແມ່ນມີຄວາມເປັນໄປໄດ້ສະເພາະ: ການບໍາລຸງທີ່ບໍ່ພຽງພໍ/ແມ່ທີ່ບໍ່ແຂງແຮງເມື່ອເກີດລູກອອກມາເດັກກໍ່ຈະບໍ່ແຂງແຮງເຊັ່ນກັນ. ພ້ອມກັນນັ້ນ, ການໃຫ້ທາດອາຫານຜ່ານນົມແມ່ກໍ່ຈະບໍ່ພຽງພໍຕື່ມອີກ ແລ້ວກໍ່ສືບຕໍ່ຂາດທາດບໍາລຸງຕໍ່ໄປ ຊຶ່ງອັນນີ້ເຮົາເອີ້ນວ່າວົງຈອນອຸບາດ. ໃນປີ 2010-2011 ໄດ້ພົບວ່າມີເດັກອ່ອນປະມານ 10,8% ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານໃນມື້ແຮກເກີດ.

ອີງຕາມມາດຖານຕ່າງໆຂອງ WHO ແລະບັນດາການສໍາຫຼວດທີ່ມີຢູ່ ເຫັນວ່າ ສປປ ລາວ ແມ່ນປະເຊີນກັບຫຼາຍບັນຫາທີ່ກ່ຽວພັນກັບສຸຂະພາບ ແລະການໂພຊະນາການ ຊຶ່ງມັນມີຄວາມຈໍາເປັນທີ່ຈະຕ້ອງໄດ້ດໍາເນີນການແກ້ໄຂຢ່າງຮີບດ່ວນ. ໃນສິ່ງຕ່າງໆເຫຼົ່ານີ້ແມ່ນລວມມີ:

- ອັດຕາການລ້ຽງລູກດ້ວຍນົມແມ່ຕໍ່າ: ມີເດັກອ່ອນທີ່ມີອາຍຸຕໍ່າກວ່າ 6 ເດືອນ ຈໍານວນປະມານ 40% ເທົ່ານັ້ນທີ່ໄດ້ກິນນົມແມ່ແຕ່ຢ່າງດຽວ (ແຫຼ່ງຂໍ້ມູນ: LSIS 2010/2011);

- ການຂາດວິຕາມິນ A: ມີຫຼາຍກວ່າ 45% ຂອງຈໍານວນເດັກນ້ອຍທີ່ມີອາຍຸລຸ່ມ 5 ປີ ແລະ 23% ຂອງຈໍານວນແມ່ຍິງທີ່ມີອາຍຸໃນລະຫວ່າງ 12-49 ປີ ແມ່ນປະສົບກັບບັນຫາການຂາດວິຕາມິນ A (ແຫຼ່ງຂໍ້ມູນ: ຍຸດທະສາດການໂພຊະນາການແຫ່ງຊາດ 2010-2015);[83]

- ພະຍາດເລືອດຈາງ: ປະມານ 41% ຂອງຈໍານວນເດັກນ້ອຍອາຍຸລຸ່ມ 5 ປີ ແລະ 63,5% ຂອງຈໍານວນເດັກນ້ອຍທີ່ມີອາຍຸລຸ່ມ 2 ປີ ແມ່ນປະສົບກັບບັນຫາເລືອດຈາງ (ແຫຼ່ງຂໍ້ມູນ: ຍຸດທະສາດການໂພຊະນາການແຫ່ງຊາດ 2010-2015);

- ການຂາດທາດເຫຼັກ: ປະມານ 22,5% ຂອງຈໍານວນແມ່ຍິງທີ່ມີອາຍຸ 15-49 ປີ ແມ່ນປະສົບກັບບັນຫາການຂາດທາດເຫຼັກ (ແຫຼ່ງຂໍ້ມູນ: ຍຸດທະສາດການໂພຊະນາການແຫ່ງຊາດ 2010-2015);

- ການຕິດເຊື້ອກາຝາກ: ປະມານ 54% ຂອງຈໍານວນເດັກນ້ອຍແມ່ນປະສົບກັບການຕິດແປດພະຍາດແມ່ທ້ອງຈາກຄວາມເປິເປື້ອນ (ແຫຼ່ງຂໍ້ມູນ: ຍຸດທະສາດການໂພຊະນາການແຫ່ງຊາດ 2010-2015);

- ການຂາດແຄນການຄໍ້າປະກັນດ້ານສະບຽງອາຫານ ແລະຄວາມຫຼາກຫຼາຍຂອງມັນ: ປະມານ 20,1% ຂອງຈໍານວນປະຊາກອນ ແມ່ນຂາດແຄນ ຫຼືມີອາຫານບໍ່ພຽງພໍ (ແຫຼ່ງຂໍ້ມູນ: LECS, 2012-2013).

ຮູບທີ 3.4 ແມ່ນເສັ້ນອັດຕາຄວາມທຸກຍາກ ແລະຄວາມສູງທີ່ບໍ່ໄດ້ມາດຕະຖານຢູ່ໃນທົ່ວປະເທດ. ສາຍພົວພັນລະຫວ່າງອັດຕາຄວາມທຸກຍາກ ແລະຄວາມສູງທີ່ບໍ່ໄດ້ມາດຕະຖານແມ່ນເປັນທີ່ຈະແຈ້ງແນ່ນອນ, ເຖິງແມ່ນວ່າໃນຄວາມເປັນຈິງແລ້ວຂໍ້ມູນສໍາລັບສອງຊຸດນີ້ແມ່ນເອົາມາຈາກແຫຼ່ງທີ່ຕ່າງກັນ ແລະບັນດາຕົວຢ່າງນັ້ນກໍ່ຢູ່ໃນປີທີ່ຕ່າງກັນກໍ່ຕາມ. ຄວາມທຸກຍາກແມ່ນຕົວກໍານົດທີ່ສໍາຄັນຂອງການຂາດສານອາຫານ.

**ຮູບທີ 3.4: ອັດຕາຄວາມທຸກຍາກ (2012-2013) ແລະຄວາມສູງທີ່ບໍ່ໄດ້ມາດຕະຖານຂອງເດັກນ້ອຍທີ່ມີອາຍຸລຸ່ມ 5 ປີ (2010-2011)**




ແຫຼ່ງຂໍ້ມູນ: ຄຳນວນຈາກຂໍ້ມູນກ່ຽວກັບຄວາມທຸກຍາກຢູ່ໃນ LECS-5 ສຳລັບປີ 2012-2013 ແລະຂໍ້ມູນກ່ຽວກັບຄວາມສູງທີ່ບໍ່ໄດ້ມາດຕະຖານຢູ່ໃນ LSIS 2010-2011.

## ການປັບປຸງການໂພຊະນາການ: ບາງຂໍ້ສະເໜີທີ່ສາມາດດຳເນີນການໄດ້

ການປັບປຸງການໂພຊະນາການຜ່ານການຮັບປະກັນການຄ້ຳປະກັນດ້ານສະບຽງອາຫານ ແລະມາດຕະການອື່ນໆ ແມ່ນບໍ່ອາດສາມາດທີ່ຈະເປັນຄວາມຮັບຜິດຊອບຂອງໜ່ວຍງານ ຫຼືກະຊວງດຽວໄດ້: ມັນຮຽກຮ້ອງຕ້ອງການໆຮ່ວມມືທີ່ມີປະສິດທິພາບ ແລະບັນດາຄວາມຮັບຜິດຊອບຮ່ວມກັນຢູ່ໃນລະຫວ່າງອົງການທີ່ກ່ຽວຂ້ອງຕ່າງໆ, ລວມທັງສາທາລະນາສຸກ, ການສຶກສາ, ກະສິກຳ, ສະພາບແວດລ້ອມ, ອຸດສາຫະກຳ ແລະການຄ້າ. ລັດຖະບານໄດ້ສ້າງຕັ້ງຄະນະກຳມະການສຳລັບການໂພຊະນາການແຫ່ງຊາດຂຶ້ນ ໂດຍຜ່ານບັນດາຄວາມພະຍາຍາມເຫຼົ່ານີ້ ຈຶ່ງໄດ້ເຮັດໃຫ້ມັນກ້າວໄປສູ່ການມີການສົ່ງເສີມການສຸຂະອະນາໄມ ແລະ ປ້ອງກັນພະຍາດ. ມັນໄດ້ສົ່ງເສີມການປະຕິບັດຫຼັກອະນາໄມ "ສາມສະອາດ" ເຊັ່ນ: ດື່ມນ້ຳທີ່ຕົ້ມແລ້ວ, ກິນອາຫານທີ່ສຸກ ແລະນຳໃຊ້ວິດຖ່າຍທີ່ສະອາດ. ນອກຈາກນັ້ນ, ຍັງເນັ້ນໜັກໃຫ້ຈັດການສົ່ງເສີມນິດໄສການກິນຂອງເດັກນ້ອຍໃຫ້ດີຂຶ້ນ ເຊັ່ນ: ການກິນອາຫານທີ່ຄົບຖ້ວນສົມດູນ (ຄົບໝວດໝູ່) ພືດຜັກ, ໝາກໄມ້, ຊີ້ນ, ປາ, ຈຳພວກນ້ຳຕານ ແລະແປ້ງ, ແລະອາຫານປະເພດອື່ນໆ ແລະຍັງຕ້ອງສະໜອງນ້ຳນົມ ແລະອາຫານເສີມໃຫ້ແກ່ເດັກນ້ອຍຢູ່ໃນໂຮງຮຽນ, ຢູ່ໃນສຸກສາລາ ແລະຢູ່ໃນເຮືອນ. ພ້ອມກັນນັ້ນ, ກໍ່ຍັງມີຄວາມພະຍາຍາມອື່ນໆອີກ, ລວມທັງການແຈກຢາຍວິຕາມິນ A, ຢາຂ້າແມ່ທ້ອງ, ທາດເຫຼັກ ແລະທາດສັງກະສີໃຫ້ແກ່ເດັກນ້ອຍ ແລະຜູ້ຍິງທີ່ຢູ່ໃນກຸ່ມໄວອາຍຸສຸຂະພາບຈະເລີນພັນ.

ບັນດາຂົງເຂດຂອງການແຊກແຊງທີ່ສຳຄັນທັງໝົດນີ້ ແມ່ນໄດ້ກຳນົດໄວ້ຢູ່ໃນຍຸດທະສາດການໂພຊະນາການແຫ່ງ, 2010-2015:

1. ການຫຼີກເວັ້ນການກິນອາຫານທີ່ເປັນອັນຕະລາຍຕໍ່ສຸຂະພາບ;
2. ການສົ່ງເສີມການກິນອາຫານທີ່ຄົບໝວດໝູ່ (ລວມທັງຈຸນລະສານອາຫານຂະໜາດນ້ອຍທັງໝົດທີ່ຮ່າງກາຍຕ້ອງການ); ເພີ່ມການລ້ຽງລູກດ້ວຍນົມແມ່ສຳລັບຊ່ວງໄລຍະເວລາ 6 ເດືອນແຮກເກີດ ຈາກ 40% ໃຫ້ຂຶ້ນເປັນ 100% (ກວມເອົາທັງໝົດ);
3. ການສະໜອງການໂພຊະນາການທີ່ພຽງພໍໃຫ້ແກ່ແມ່ ແລະຜູ້ຍິງທີ່ຖືພາ (ໂດຍສະເພາະແມ່ນວິຕາມິນຕ່າງໆ

ແລະ ຢາທີ່ມີທາດເຫຼັກ);

4. ການສະໜອງນໍ້າທີ່ປອດໄພ (ຈາກ 70% ໃຫ້ເປັນ 100% ໃນທີ່ສຸດ), ແລະສຸຂະອະນາໄມ (ຈາກ 59% ໃຫ້ໃກ້ຄຽງກັບ 100% ໃນທີ່ສຸດ);

5. ການສົ່ງເສີມການສຶກສາຂອງແມ່ ແລະການສຶກສາຊຸມຊົນ ໂດຍສະເພາະແມ່ນກ່ຽວກັບການໂພຊະນາການ ແລະການອະນາໄມປ້ອງກັນພະຍາດ.

ການບໍລິການໃຫ້ການຊ່ວຍເຫຼືອທີ່ມີປະສິດທິພາບແມ່ນຍັງເປັນເລື່ອງທີ່ສຳຄັນ ແລະຮຽກຮ້ອງໃຫ້ມີການເອົາໃຈໃສ່ຢ່າງຮີບດ່ວນ. ຢູ່ໃນສະພາບເງື່ອນໄຂນີ້, ແມ່ນຈະຕ້ອງໄດ້ມີການລວມເອົາແຜນງານຕ່າງໆທີ່ແຕກຕ່າງກັນ ມາເຂົ້າເປັນອັນດຽວກັນ (ແຜນງານຮ່ວມ) ແລະທັງອອກແບບການຮ່ວມມືກັນທີ່ມີປະສິດທິຜົນຫຼາຍຂຶ້ນ. ບາງຕົວຢ່າງຈຳນວນໜ້ອຍໜຶ່ງແມ່ນໄດ້ສະແດງໄວ້ຂ້າງລຸ່ມນີ້:

- ບັນດາແຜນງານ (ການໂພຊະນາການ) ອາຫານໂຮງຮຽນແມ່ນຈະມີຜົນກະທົບທີ່ດີທີ່ສຸດ, ຖ້າຫາກວ່າຈຳນວນເດັກນ້ອຍທັງໝົດໄດ້ເຂົ້າຮຽນໃນທຸກໆຊັ້ນປີຮຽນຫຼາຍຂຶ້ນ (ກ່ຽວພັນກັບໂຮງຮຽນ);

- ບັນດາແຜນງານເສີມວິຕາມິນ ແລະທາດເຫຼັກໃຫ້ແກ່ຜູ້ທີ່ຖືພາ ແລະຜູ້ທີ່ຢູ່ໃນໄລຍະຂອງການໃຫ້ນົມລູກແມ່ນຈະມີຜົນກະທົບທີ່ດີທີ່ສຸດ, ຖ້າເຂົາເຈົ້າຫາກໄປຫາໂຮງໝໍ/ສຸກສາລາ ຫຼືບ່ອນທີ່ມີການແຈກຈ່າຍຢາຢ່າງເປັນປົກກະຕິ (ກ່ຽວພັນກັບສາທາລະນາສຸກ);

- ຜູ້ຄົນຂ້ອນຂ້າງຈະດື່ມນໍ້າທີ່ປອດໄພຫຼາຍຂຶ້ນ, ຖ້າຫາກມີການສາທິດໃຫ້ແກ່ເຂົາເຈົ້າຢ່າງພຽງພໍ (ກ່ຽວພັນກັບການສົ່ງເສີມ);

- ຜູ້ຄົນຂ້ອນຂ້າງຈະນຳໃຊ້ຫ້ອງນໍ້າທີ່ສະອາດຫຼາຍຂຶ້ນ, ຖ້າຫາກມີການສາທິດໃຫ້ແກ່ເຂົາເຈົ້າຢ່າງພຽງພໍ ແລະມີການວັດສະດຸກໍ່ສ້າງຟຣີໃຫ້ແກ່ເຂົາເຈົ້າ (ຢ່າງໜ້ອຍກໍ່ລິເລີ່ມຢູ່ໃນບ່ອນທີ່ມີຄວາມເປັນໄປໄດ້) ແລະຜູ້ຄົນກໍ່ຍັງເວົ້າເຖິງເລື່ອງທີ່ວ່າຈະສາມາດຫັນປ່ຽນສິ່ງເສດເຫຼືອຈາກມະນຸດໃຫ້ເປັນຝຸ່ນຊີວະພາບ ດ້ວຍການນຳໃຊ້ວິທີການທາງວິທະຍາສາດໄດ້ຄືແນວໃດ;[84]

- ຜູ້ເປັນແມ່ຂ້ອນຂ້າງຈະໃຫ້ລູກຂອງເຂົາເຈົ້າກິນນົມແມ່ເຖິງ 6 ເດືອນ, ຖ້າຫາກມີພະນັກງານສາທາລະນາສຸກລົງໄປໃຫ້ຄຳແນະນຳແກ່ເຂົາເຈົ້າ (ກ່ຽວພັນກັບການສົ່ງເສີມ);

- ດ້ວຍອັດຕາຜົນຜະລິດຈາກທີ່ດິນ ແລະລາຍໄດ້ທີ່ເພີ່ມຂຶ້ນ, ຜູ້ຄົນຂ້ອນຂ້າງຈະເດີນທາງເພື່ອໄປສູ່ຕະຫຼາດຫຼາຍຂຶ້ນ ສຳລັບເຂດທີ່ມີຖະໜົນ ແລະການຂົນສົ່ງແລ້ວ. ເຂົາເຈົ້າຂ້ອນຂ້າງຈະຮັບເອົາຄວາມເຄີຍຊິນກັບອາຫານທີ່ເປັນທາງເລືອກ ໃນເມື່ອເຂົາເຈົ້າໄດ້ລອງລົດຊາດຂອງອາຫານຕ່າງໆທີ່ໄດ້ມາຈາກແວດລ້ອມນອກບ້ານຂອງເຂົາເຈົ້າແລ້ວ (ກ່ຽວພັນກັບລາຍໄດ້, ການສົ່ງເສີມກະສິກຳ ແລະການເດີນທາງ/ການຂົນສົ່ງ);

- ແຜນງານການໂພຊະນາການຈຳນວນຫຼາຍ ແມ່ນໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ. ແຕ່ລະຄູ່ຮ່ວມພັດທະນາ/NGO ແມ່ນມີຮູບແບບການດຳເນີນໂຄງການຕ່າງໆເປັນຂອງຕົນເອງ ແລະແຕ່ລະອົງການກໍ່ມີການຈຳກັດເຂດພື້ນທີ່ທາງພູມີປະເທດຂອງການກວມເອົາ (ເຂົ້າເຖິງ) ແລະມີໂຄງສ້າງດ້ານໄລຍະເວລາທີ່ແຕກຕ່າງກັນ. ການປະສານງານລະຫວ່າງບັນດາຄູ່ຮ່ວມພັດທະນາຕ່າງໆຈະຊ່ວຍເຮັດໃຫ້ບັນດາແຜນງານໂພຊະນາການຕ່າງໆສືບຕໍ່ມີປະສິດທິພາບຫຼາຍຂຶ້ນ (ກ່ອງທີ 3.8).

ໃນເມື່ອຊັບພະຍາກອນຕ່າງໆທີ່ຕ້ອງການສຳລັບການຈັດຕັ້ງປະຕິບັດບັນດາໂຄງການມີຢູ່ຢ່າງຈຳກັດ ແຕ່ການຂາດແຄນຊັບພະຍາກອນຕ່າງໆກໍ່ບໍ່ແມ່ນວ່າຈະແກ້ໄຂໄດ້ພຽງແຕ່ຢູ່ໃນຈຸດທີ່ວ່າຍ້ອນມັນມີຕົ້ນທຶນເທົ່ານັ້ນ. ຕົວຢ່າງທີ່ປະສົບຜົນສຳເລັດກ່ຽວກັບການເຮັດໃຫ້ນໍ້າສະອາດແຕ່ມີລາຄາຕໍ່ານັ້ນ ແມ່ນໄດ້ສະເໜີໄວ້ຢູ່ໃນກ່ອງທີ 3.9.

**ກ່ອງທີ 3.9: ນ້ຳດື່ມທີ່ປອດໄພ**

ໃນປັດຈຸບັນນີ້, ເຫັນວ່າຢູ່ໃນຫຼາຍບ່ອນຫຼາຍທີ່ແມ່ນຍັງມີການຊົມໃຊ້ (ດື່ມ) ນ້ຳດິບຈາກແມ່ນ້ຳ ແລະ ຫ້ວຍຮ່ອງຢູ່ ໂດຍມີຫຼາຍຄົວເຮືອນແມ່ນໄດ້ຕອງນ້ຳດ້ວຍຜ້າແພ ຫຼືເຄື່ອງຕອງບາງຢ່າງ ແລ້ວນຳມາບັນຈຸໃສ່ໄຫດິນໄວ້ສຳລັບດື່ມ. ເຖິງຢ່າງໃດກໍ່ຕາມ, ສະພາບຂອງໄຫນັ້ນຈະສະອາດ ຫຼືຖືກຫຼັກອະນາໄມຫຼືບໍ່ນັ້ນ ແມ່ນບໍ່ເປັນທີ່ຮູ້ໄດ້ ແລະປະເພດນ້ຳດິບຢູ່ໃນລະດູການທີ່ແຕກຕ່າງກັນນັ້ນດີພໍຫຼືບໍ່ ກໍ່ເປັນພຽງແຕ່ການຄາດເດົາຂອງໃຜຜູ້ໜຶ່ງເທົ່ານັ້ນ, ໃນຂະນະທີ່ທຳມະຊາດຂອງການປົນເປື້ອນຢູ່ໃນແຫຼ່ງນ້ຳແມ່ນມີຄວາມແຕກຕ່າງກັນຕາມຊ່ວງໄລຍະເວລາທີ່ແຕກຕ່າງກັນຂອງປີໜຶ່ງໆ. ຈາກການສັງເກດການໜຶ່ງຢູ່ໃນບ້ານເຮືອນຂອງປະຊາຊົນທີ່ຕັ້ງຢູ່ເທິງພູ ພົບວ່ານ້ຳນັ້ນເປັນນ້ຳຂຸ່ນ (ມີການປົນເປື້ອນດ້ວຍຂີ້ຕົມ) ຊຶ່ງອັນນັ້ນກໍ່ເປັນພຽງແຕ່ຮູບແບບໜຶ່ງດຽວຂອງການເຈືອປົນທີ່ສາມາດຮັບຮູ້ໄດ້ດ້ວຍຕາເປົ່າ ສ່ວນເຊື້ອບັກເຕຣີ ຫຼືເຊື້ອພະຍາດນັ້ນ ແມ່ນຍັງບໍ່ໄດ້ເວົ້າເຖິງເທື່ອ.

ໃນປັດຈຸບັນນີ້, ແມ່ນມີຄວາມສາມາດເຮັດໃຫ້ນ້ຳສະອາດໄດ້ ດ້ວຍການນຳໃຊ້ເຕັກໂນໂລຢີທີ່ມີຕົ້ນທຶນຕ່ຳ ຫາ ຕ່ຳທີ່ສຸດ. ຕົວຢ່າງ: ຖ້າຫາກນ້ຳດິບມີການເຈືອປົນດ້ວຍສານປະລາສະຕິກສັງເຄາະ (polyethylene terephthalate ຫຼື PET) ແມ່ນໃຫ້ເອົານ້ຳນັ້ນບັນຈຸໃສ່ກອດແກ້ວທຳມະດາແລ້ວຕາກແດດໄວ້ 24 ຊົ່ວໂມງ (ສຳລັບກໍລະນີທີ່ຟ້າບົດ-ແດດບໍ່ແຮງ ແມ່ນ 48) ມັນກໍ່ຈະບໍ່ມີການເຈືອປົນອີກ ຍ້ອນມັນຖືກກັ່ນຕອງຜ່ານລັງສີຂອງແສງຕາເວັນ ຊຶ່ງລັງສີກາຍອິດຈາກແສງຕາເວັນ (Ultraviolet) ຈະຂ້າເຊື້ອຈຸລິນຊີທີ່ເປັນອັນຕະລາຍ. ນອກຈາກນັ້ນ, ການນຳໃຊ້ສານສົ້ມ (alum) ຫຼື ໂປຕັດຊຽມດ່າງທັບທິມ (potassium permanganate) ກໍ່ເປັນອີກວິທີທາງເລືອກໜຶ່ງອີກທີ່ມີຕົ້ນທຶນບໍ່ສູງ.

ບັນດາພະນັກງານສົ່ງເສີມພາກສະໜາມແມ່ນຈຳເປັນຈະຕ້ອງໄດ້ຮັບການຝຶກອົບຮົມ ເພື່ອເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບປະເພດເຕັກໂນໂລຢີທີ່ມີຕົ້ນທຶນຕ່ຳ ແລະສາມາດຫາໄດ້ງ່າຍນີ້, ພ້ອມກັບສາທິດວິທີການເຮັດຕົວຈິງໃຫ້ແກ່ປະຊາຊົນ.

ແຫຼ່ງຂໍ້ມູນ: http://sodis.ch.

## ສະຫລຸບ: ຜົນຕາມມາທາງດ້ານນະໂຍບາຍ

ໃນຂະນະທີ່ ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງໂດດເດັ່ນ ທັງດ້ານການສຶກສາ ແລະສາທາລະນາສຸກນັ້ນ, ມັນກໍ່ຍັງມີສິ່ງທ້າທາຍຫຼາຍຢ່າງທີ່ຈະຕ້ອງໄດ້ແກ້ໄຂຕໍ່ໄປ ເປັນຕົ້ນແມ່ນການຍົກສູງຄຸນນະພາບຂອງທຶນມະນຸດຢູ່ໃນໝູ່ປະຊາລາດສະດອນ ແລະເພີ່ມອຳນາດໃຫ້ແກ່ຜູ້ຄົນ ເພື່ອເຮັດໜ້າທີ່ໃຈກາງໃນການສະແຫວງຫາການຍົກລະດັບການພັດທະນາມະນຸດ (ຄ່າຂອງ HAI) ແລະຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ. ຄວາມບໍ່ສະເໝີພາບ ແລະຄວາມແຕກຕ່າງອື່ນໆໃນການບັນລຸການສຶກສາ ແລະສາທາລະນາສຸກຢູ່ໃນລະຫວ່າງຂົງເຂດ ແລະຊຸມຊົນໆເຜົ່າຕ່າງໆ ແມ່ນບັນດາປັດໄຈສຳຄັນທີ່ເຮັດໃຫ້ການຍົກສູງ HAI ມີຄວາມຊັກຊ້າ ຊຶ່ງພວກມັນມີຄວາມກ່ຽວພັນຢ່າງແໜ້ນແຟ້ນກັບຄວາມບໍ່ສະເໝີພາບດ້ານກາລະໂອກາດ ແລະ ການບໍລິການຕ່າງໆ.

ເພື່ອແກ້ໄຂບັນຫານີ້, ລັດຖະບານ ແຫ່ງ ສປປ ລາວ ອາດຈະພິຈາລະນາບັນດາຫຼັກການຕ່າງໆດັ່ງຕໍ່ໄປນີ້:

- ນຳໃຊ້ບົດຮຽນທີ່ຮຽນຮູ້ຈາກການຈັດຕັ້ງປະຕິບັດ MDGs ແລະ ໃຊ້ບັນດາຍຸດທະສາດຕ່າງໆທີ່ຍັງບໍ່ທັນສຳເລັດໜ້າທີ່ ເຊັ່ນ: ເພີ່ມທະວີຄວາມພະຍາຍາມເພື່ອໃຫ້ບັນລຸເປົ້າໝາຍການເຂົ້າເຖິງນ້ຳດື່ມທີ່ປອດໄພ ແລະສຸຂະອະນາໄມໄດ້ 100%;
- ຮັບເອົາວິທີທາງທີ່ອີງໃສ່ສິດທິໃນການເຂົ້າເຖິງການສຶກສາ, ສາທາລະນາສຸກ ແລະການໂພຊະນາການຕາມເປົ້າໝາຍການພັດທະນາທີ່ສາກົນໄດ້ຕົກລົງແລ້ວ ໂດຍສະເພາະແມ່ນວາລະຂອງ SDGs ຮອດປີ 2030;
- ຮັບຮອງເອົາວິທີການທີ່ເຮັດຮ່ວມກັນເປັນໜຶ່ງດຽວ ເພື່ອອອກແບບບັນດານະໂຍບາຍຕ່າງໆ ແລະການຈັດຕັ້ງປະຕິບັດບັນດາຍຸດທະສາດເພື່ອໃຫ້ໄດ້ຜົນຮັບຮ່ວມກັນສູງສຸດໃນລະຫວ່າງບັນດາແຜນງານການສຶກສາ,

ສາທາລະນາສຸກ ແລະການໂພຊະນາການ ດັ່ງທີ່ໄດ້ເນັ້ນໜັກໄວ້ຢູ່ໃນວາລະຂອງ SDGs ຮອດປີ 2030;

- ເພີ່ມທະວີການປະສານງານລະຫວ່າງໜ່ວຍງານ/ກະຊວງຕ່າງໆ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນ, ຫລຸດຜ່ອນການຊໍ້າຊ້ອນ ແລະສິ້ນເປືອງ;
- ອໍານວຍຄວາມສະດວກໃຫ້ແກ່ການປະສານງານຜູ້ໃຫ້ທຶນ ເພື່ອປະສົມປະສານການຊ່ວຍເຫຼືອຂອງຜູ້ໃຫ້ທຶນກັບບັນດາຍຸດທະສາດຕ່າງໆຂອງລັດຖະບານ ແລະຮັບປະກັນຄວາມຍືນຍົງຂອງໂຄງການທີ່ໄດ້ຮັບທຶນຈາກພາຍນອກ;
- ສ້າງຖານຂໍ້ມູນທີ່ເຂັ້ມແຂງສໍາລັບການຕິດຕາມ ແລະປະເມີນຜົນດ້ານຜົນໄດ້ຮັບ.

ລັດຖະບານຍັງສາມາດຈັດລຽງບູລິມະສິດ ໄປຕາມປະຕິບັດການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ -ສັງຄົມ 5 ປີ ຄັ້ງທີ VIII:

- ຊຸກຍູ້ຢ່າງແຂງແຮງໃນການປັບປຸງສິ່ງອໍານວຍຄວາມສະດວກໃຫ້ແກ່ການພັດທະນາເດັກກ່ອນໄວຮຽນທີ່ມີຢູ່ແລ້ວ ແລະຂະຫຍາຍກວ້າງອອກຕື່ມ, ຈັດວາງຈຸດເນັ້ນໜັກກ່ຽວກັບການພັດທະນາການຮັບຮູ້ຢູ່ໃນບັນດາສິ່ງອໍານວຍຄວາມສະດວກເຫຼົ່ານັ້ນ;
- ອອກແບບຫຼັກສູດການຮຽນ-ການສອນຂັ້ນປະຖົມຄືນໃໝ່ ດ້ວຍການເນັ້ນໜັກໃສ່ສີມືການຮູ້ໜັງສື ແລະຮູ້ຄໍານວນຂັ້ນພື້ນຖານ;
- ຂະຫຍາຍການຝຶກອົບຮົມນາຍຄູ ດ້ວຍການສຸມໃສ່ສີມືການຮູ້ຄໍານວນ, ພາສາ ແລະການສື່ສານ;
- ເພີ່ມຈໍານວນໂຮງຮຽນມັດທະຍົມຕອນຕົ້ນທີ່ມີການຝຶກອົບຮົມວິຊາຊີບຂຶ້ນຕື່ມ;
- ອອກແບບບັນດາມາດຕະການຈູງໃຈເພື່ອໃຫ້ນາຍຄູທີ່ໄດ້ຮັບການອົບຮົມ ແລະພະນັກງານແພດໝໍທີ່ສໍານານງານໄປປະຕິບັດໜ້າທີ່ຢູ່ເຂດຊົນນະບົດ/ຫ່າງໄກສອກຫຼີກ;
- ສະໜອງອຸປະກອນເຄື່ອງມືໃຫ້ແກ່ໂຮງໝໍ/ສຸກສາລາຫຼາຍຂຶ້ນ; ບັນຈຸຊັບຊ້ອນ ແລະຝຶກອົບຮົມບຸກຄະລາກອນ; ຈັດວາງ ແລະສົ່ງບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມໄປສູ່ເຂດຊົນນະບົດທີ່ຍັງຂາດເຂີນ;
- ປັບປຸງຖະໜົນ/ສິ່ງເຊື່ອມຕໍ່ອື່ນໆ ເພື່ອໃຫ້ສາມາດເຂົ້າເຖິງໂຮງໝໍ/ສຸກສາລາໄດ້ດີຂຶ້ນ;
- ອອກແບບ ແລະຈັດຕັ້ງປະຕິບັດບັນດາແຜນງານການໂອນເງິນສົດທີ່ມີເງື່ອນໄຂ ເພື່ອຊຸກຍູ້ສົ່ງເສີມ ແລະເຮັດໃຫ້ກຸ່ມຜູ້ທີ່ທຸກຍາກ ແລະດ້ອຍໂອກາດ ສາມາດເຂົ້າເຖິງສິ່ງອໍານວຍຄວາມສະດວກດ້ານການສຶກສາ ແລະສາທາລະນາສຸກໄດ້;
- ປັບປຸງການຕິດຕາມ ແລະປະເມີນຜົນຂະແໜງສາທາລະນາສຸກ (ເຮັດຄືກັນກັບ EMIS).

**ເອກະສານຊ້ອນທ້າຍ 3.1: ການຄາດຄະເນແບບ Probit (ເດັກນ້ອຍທີ່ມີອາຍຸ 6-15 ປີ)**

| ຕົວປ່ຽນ | ສໍາປະສິດ (ການເຂົ້າຮຽນ) ຮູບແບບທີ 1 | ສໍາປະສິດ (ການອອກຮຽນ) ຮູບແບບທີ 2 |
|---|---|---|
| ອາຍຸ | -0,024*** | 0,27*** |
| ເພດຍິງ | -0,111*** | 0,19*** |
| ຂະໜາດຂອງຄົວເຮືອນ | -0,25*** | -0,004 |
| ລາວ-ໄຕ (ລາວ-ໄຕ=1, ເຜົ່າອື່ນ=0) | 0,23*** | 0,06 |

| | | |
|---|---|---|
| Log ກ່ຽວກັບລາຍຮັບຂອງຄົວເຮືອນ | 0,005* | -0,30*** |
| ກຳມະສິດໃນທີ່ດິນ (ເຮັກຕາ) | 0,0004 | -0,0002 |
| ອາຍຸຂອງຫົວໜ້າຄົວເຮືອນ | 0,006*** | -0,002 |
| ຫົວໜ້າຄົວເຮືອນ (ເພດຍິງ=1, ເພດຊາຍ=0) | 0,07 | 0,13 |
| ການສຶກສາຂອງຫົວໜ້າຄົວເຮືອນ | 0,04*** | -0,02*** |
| ເຂດຕົວເມືອງ (ຕົວເມືອງ=1, ຊົນນະບົດ=0) | 0,29*** | -0,36*** |
| ໄລຍະທາງໄປຫາໂຮງຮຽນປະຖົມ | -0,02* | 0,002 |
| ໄລຍະທາງໄປຫາໂຮງຮຽນມັດທະຍົມ | -0,005* | 0,01*** |
| ສະມາຊິກຂອງຄົວເຮືອນມີການເຈັບເປັນ | -0,10* | 0,18* |
| ຕົວ Dummy ຂອງແຂວງ | | |
| ຜົ້ງສາລີ | -0,27* | 0,17 |
| ຫຼວງນ້ຳທາ | 0,008 | 0,18 |
| ອຸດົມໄຊ | -0,28* | 0,14 |
| ບໍ່ແກ້ວ | -0,04 | -0,015 |
| ຫຼວງພະບາງ | 0,09 | 0,05 |
| ຫົວພັນ | -0,06 | -0,25 |
| ໄຊຍະບູລີ | -0,20 | 0,32* |
| ຊຽງຂວາງ | -0,03 | 0,11 |
| ວຽງຈັນ | -0,11 | 0,34* |
| ບໍລິຄຳໄຊ | -0,38** | 0,47* |
| ສະຫວັນນະເຂດ | -0,57*** | 0,58*** |
| ສາລະວັນ | -0,59*** | 0,49*** |
| ເຊກອງ | -0,67*** | 0,39* |
| ຈຳປາສັກ | 0,02 | -0,15 |
| ອັດຕະປື | -0,67*** | 0,69*** |
| ຈຳນວນຄົງທີ່ | -0,40*** | 0,12 |
| ຈຳນວນຂອງການສັງເກດການ | 9122 | 9122 |
| Pseudo R square | 0.18 | 0.32 |
| P value | 0.000 | 0.000 |

ໝາຍເຫດ: ການຄາດຄະເນຂອງຜູ້ຂຽນດ້ວຍການນຳໃຊ້ຂໍ້ມູນຂອງ LECS 5.

### ເອກະສານຊ້ອນທ້າຍ 3.2: ສະຖານະພາບຂອງພະຍາດຕ່າງໆ

ຈຳນວນຂອງສະຖານທີ່ (ບ່ອນ) ທີ່ໄດ້ປຶກສາຫາລືກ່ຽວກັບ HIV/AIDS ແລະ STDs ອື່ນໆ ແມ່ນຂະຫຍາຍເປັນ 165 ແຫ່ງຢູ່ໃນທົ່ວປະເທດ (55 ແຫ່ງຢູ່ໃນຂັ້ນແຂວງ, 89 ແຫ່ງຢູ່ໃນຂັ້ນເມືອງ ແລະ 21 ແຫ່ງແມ່ນໂຮງໝໍ/ສຸກສາລາ). ອັດຕາການຕິດເຊື້ອ HIV ໄດ້ຫລຸດລົງຮອດລະດັບເປົ້າໝາຍທີ່ວາງເອົາໄວ້, ເຖິງແມ່ນວ່າເລື່ອງນີ້ແມ່ນບໍ່ມີຂອບເຂດສຳລັບຄວາມພໍໃຈຂອງຕົນເອງກໍ່ຕາມ.

- ໃນປັດຈຸບັນ, ອັດຕາການຕິດເຊື້ອ HIV ຢູ່ໃນລະຫວ່າງປະຊາກອນທົ່ວໄປຕາມການຄາດຄະເນແມ່ນຢູ່ທີ່ 0,3% (ເປົ້າໝາຍຂອງ 2015 ແມ່ນ < 1%).
- ອັດຕາການຕິດເຊື້ອ HIV ຢູ່ໃນລະຫວ່າງກຸ່ມສາວບໍລິການທີ່ມີອາຍຸລະຫວ່າງ 15-49 ແມ່ນຄາດຄະເນວ່າມີຢູ່ 1,2% (ເປົ້າໝາຍ 2015 ແມ່ນ <5%).

ເຖິງແມ່ນວ່າໄດ້ມີບັນດາເປົ້າໝາຍສຳລັບການປ້ອງກັນ ແລະປິ່ນປົວຮັກສາກໍ່ຕາມ, ແຕ່ກໍ່ຍັງບໍ່ທັນສາມາດບັນລຸໄດ້ເທື່ອ:

- ອັດຕາສ່ວນສາວບໍລິການທີ່ໃຊ້ຖົງຢາງອະນາໄມແມ່ນ 92,5% (ເປົ້າໝາຍ 2015 ແມ່ນ 95%).
- ອັດຕາສ່ວນຂອງຜູ້ໃຫຍ່ ແລະເດັກນ້ອຍທີ່ຕິດເຊື້ອ HIV ທີ່ໄດ້ຮັບການປິ່ນປົວດ້ວຍການປ້ອງກັນໄວຣັດສ໌ ແມ່ນ 53,4% (ເປົ້າໝາຍ 2015 ແມ່ນ >90%).

ຈຳນວນຕົວເລກເຫຼົ່ານີ້ແມ່ນໄດ້ມາຈາກແຫຼ່ງຂອງລັດຖະບານ; ດັ່ງນັ້ນ, ຈິ່ງສະຫລຸບໄດ້ວ່າມັນເປັນຂໍ້ມູນທີ່ເກົ່າໜ້ອຍໜຶ່ງ.

ຍຸດທະສາດການຄວບຄຸມໄຂ້ມາເລເຣຍເບິ່ງຄືວ່າມີປະສິດທິພາບພໍສົມຄວນ ຊຶ່ງເປັນຜົນມາຈາກທີ່ມີການນຳໃຊ້ມຸ້ງນອນສຳລັບຜູ້ໃຫຍ່ ແລະເດັກນ້ອຍຢ່າງກວ້າງຂວາງ. ການສຳຫຼວດການນຳໃຊ້ມຸ້ງນອນແຫ່ງຊາດ (2011-2012) ພົບວ່າ 81% ຂອງເດັກນ້ອຍອາຍຸລຸ່ມ 5 ປີ ແມ່ນນອນໃນມຸ້ງກວມຕຽງ ແລະ 98% ຂອງເດັກນ້ອຍແມ່ນນອນໃນມຸ້ງກວມຕຽງ ຫຼືອື່ນໆ.[85] ເຖິງຢ່າງໃດກໍ່ຕາມ, ການລະບາດຂອງໄຂ້ມາເລເຣຍ ໃນປີ 2011 ຢູ່ໃນ 5 ແຂວງພາກໃຕ້ແມ່ນເກີດມາຈາກການທີ່ບໍ່ນອນໃນມຸ້ງ. ໃນຄວາມເປັນຈິງແລ້ວ, ທັງອາງໂຕ່ງ ແລະລະບົບຊົນລະປະທານແມ່ນມີການເພີ່ມຂຶ້ນທາງດ້ານຈຳນວນ. ສະນັ້ນ, ການເກີດຂຶ້ນໃໝ່ຂອງພະຍາດລະບາດແມ່ນບໍ່ຄ່ອຍມີປານໃດ ແຕ່ເລື່ອງນີ້ກໍ່ຍັງສືບຕໍ່ມີຄວາມສະຫຼັບຊັບຊ້ອນຢູ່ ເພາະວ່າໃນປັດຈຸບັນນີ້ແມ່ນພວກເຮົາມີຢາຕ້ານເຊື້ອພະຍາດໃສ່ໃນຮ່ອງນ້ຳຕ່າງໆ.

ການສຳຫຼວດກ່ຽວກັບພະຍາດປອດແຫ້ງທີ່ຄົບຖ້ວນສົມບູນແມ່ນໄດ້ຈັດຂຶ້ນເປັນເທື່ອທຳອິດໃນປີ 2012. ຜົນຂອງມັນໄດ້ສະແດງໃຫ້ເຫັນວ່າ ການແຜ່ຫຼາຍຂອງພະຍາດນີ້ສະເພາະຢູ່ໃນປີນັ້ນ (ຢູ່ໃນກໍລະນີທີ່ມີຢູ່) ແມ່ນຢູ່ທີ່ 514/100.000 ຄົນຂອງຈຳນວນປະຊາກອນ, ໃນຂະນະທີ່ອັດຕາທີ່ເກີດຂຶ້ນຂອງມັນ (ກໍລະນີທີ່ຄົ້ນພົບໃໝ່) ແມ່ນ 204/100.000 ຄົນ, ອັດຕາການຕາຍຍ້ອນພະຍາດປອດແຫ້ງ ແມ່ນ 11/100.000 ຄົນ. ແນວໂນ້ມກ່ຽວກັບການເກີດຂຶ້ນຂອງພະຍາດນີ້ໄດ້ສະແດງໃຫ້ເຫັນວ່າ ບັນດາເປົ້າໝາຍ MDG ແມ່ນມີຄວາມເປັນໄປໄດ້ທີ່ຈະບັນລຸໄດ້, ເຖິງແມ່ນວ່າພະຍາດເຫຼົ່ານີ້ມີທ່າອ່ຽງວ່າຈະສາມາດເກີດຂຶ້ນໃໝ່ໄດ້ກໍ່ຕາມ.

**ເອກະສານຊ້ອນທ້າຍ 3.3: ສິ່ງອຳນວຍຄວາມສະດວກດ້ານການບໍລິການສາທາລະນະສຸກ**

ມັນມີຄວາມກ້າວໜ້າຢ່າງໂດດເດັ່ນ ກ່ຽວກັບການຂະຫຍາຍການບໍລິການສາທາລະນາສຸກຂັ້ນຕົ້ນ ໄປສູ່ປະຊາລາດຊະດອນທີ່ຫຼາຍຂຶ້ນໃນຊຸມປີຜ່ານມານີ້ ໂດຍສະເພາະແມ່ນຢູ່ໃນເຂດຫ່າງໄກສອກຫຼີກ. ໃນເລື່ອງຂອງຈຳນວນ, ໃນຕົ້ນປີ 2015 ແມ່ນມີປະມານ 985 ໂຮງໝໍ/ສຸກສາລາ, ຊຶ່ງສ່ວນຫຼາຍໃນນີ້ ແມ່ນເຂົາເຈົ້າໄດ້ໃຫ້ການບໍລິການຂັ້ນພື້ນຖານແກ່ການຕັ້ງທ້ອງ, ການມີລູກ ແລະ ການເປັນແມ່. ໃນທີ່ນີ້, ແມ່ນໄດ້ມີການຄາດຄະເນວ່າ ມີຈຳນວນ 840 ຂອງເຂົາເຈົ້າ ແມ່ນມີຄວາມສາມາດຊ່ວຍໃນການບໍລິການເອົາລູກອອກແບບປົກກະຕິໄດ້.

ຢູ່ໃນປະເທດພວກເຮົາມີ 135 ໂຮງໝໍເມືອງ ແຕ່ມີພຽງແຕ່ 20 ແຫ່ງຈາກຈຳນວນນີ້ທີ່ສາມາດເຮັດການຜ່າຕັດຕ່າງໆໄດ້. ນອກຈາກນີ້, ກໍ່ຍັງມີ 17 ໂຮງໝໍແຂວງທີ່ສາມາດດຳເນີນບັນດາກິດຈະກຳການປິ່ນປົວທົ່ວໄປ, ສາມາດດຳເນີນການຜ່າຕັດທົ່ວໄປ ແລະຮີບດ່ວນ, ແລະສາມາດຮັບຄົນເຈັບ (ສຸກເສີນ) ທີ່ສົ່ງມາຈາກບັນດາໂຮງໝໍເມືອງສຳລັບການຜ່າຕັດເອົາລູກອອກ (ເອົາລູກອອກດ້ວຍການຜ່າຕັດ). ບາງໂຮງໝໍແຂວງກໍ່ໄດ້ມີການປັບປຸງການບໍລິການຂອງເຂົາເຈົ້າ ແລະສາມາດໃຫ້ການບໍລິການທີ່ມີຄຸນນະພາບເທົ່າກັບບັນດາໂຮງໝໍເຂດ ຫຼືໂຮງໝໍສູນກາງ. ສິ່ງອຳນວຍຄວາມສະດວກເຫຼົ່ານີ້ແມ່ນຄາດວ່າຈະຕ້ອງໄດ້ສືບຕໍ່ປັບປຸງໃຫ້ໄດ້ເທົ່າກັບລະດັບຂອງໂຮງໝໍເຂດໃນຊຸມປີທີ່ຈະມານີ້. ພວກເຮົາມີໂຮງໝໍສູນກາງ 5 ແຫ່ງ, ສູນປິ່ນປົວບຳບັດສະເພາະ 3 ແຫ່ງ ແລະໂຮງໝໍເອກະຊົນ 16 ແຫ່ງທີ່ດຳເນີນງານສອດຄ່ອງກັບລະບຽບກົດໝາຍຂອງລັດ (10 ແຫ່ງຢູ່ໃນນະຄອນຫຼວງວຽງຈັນ ແລະ 6 ແຫ່ງ ຢູ່ຕ່າງແຂວງ ຊຶ່ງອັນນີ້ສະແດງໃຫ້ເຫັນວ່າມັນມີການອ່ຽງເອນໄປທາງຂົງເຂດ/ຕົວເມືອງໃຫຍ່ຫຼາຍກວ່າ).

ລັດຖະບານໄດ້ສຸມໃສ່ການສ້າງບ້ານສາທາລະນາສຸກຕົວແບບຢ່າງແຂງແຮງ. ໃນປັດຈຸບັນນີ້ແມ່ນມີແລ້ວ 5.492 ບ້ານສາທາລະນາສຸກຕົວແບບກວມເອົາປະມານ 64,8% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ.

ປະມານ 85% ຂອງຈຳນວນເດັກນ້ອຍອາຍຸລຸ່ມ 1 ປີ ແມ່ນໄດ້ຮັບການສີດຢາວັກຊີນໃນປີ 2013. ໃນປີ 2014 ຈຳນວນຜູ້ຍິງຖືພາທີ່ໄດ້ຮັບການກວດທ້ອງ ແລະໄດ້ຮັບຢາວິຕາມິນຢ່າງພຽງພໍ ແລະເປັນປົກກະຕິ ແມ່ນມີຢູ່ປະມານ 46%. ເຖິງແມ່ນວ່າມັນຍັງຕ່ຳກວ່າລະດັບເປົ້າໝາຍທີ່ວາງໄວ້ຢູ່ທີ່ 69% ນັ້ນກໍ່ຕາມ ແຕ່ວ່າມັນກໍ່ໄດ້ມີການປັບປຸງໄວຢູ່ໃນຊຸມປີໃກ້ໆມານີ້. ອາຍຸຍືນສະເລ່ຍກໍ່ໄດ້ຮັບການປັບປຸງ-ຍົກສູງຈາກ 40 ປີ ໃນປີ 1960 ມາເປັນ 74 ປີ ໃນປີ 2012.

ແຫຼ່ງຂໍ້ມູນ: ລັດຖະບານ ແຫ່ງ ສປປ ລາວ (GOL) (2011), ບົດລາຍງານສະຖິຕິການສາທາລະນາສຸກແຫ່ງຊາດ 2009-2010, ກະຊວງສາທາລະນາສຸກ; GOL (2015), ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການ 2013-2014, ກົມຮັກສາສຸຂະພາບ, ກະຊວງສາທາລະນາສຸກ; GOL (2015), ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 2016-2020, ຜທ, ນະຄອນຫຼວງວຽງຈັນ; GOL (2015), ບົດລາຍງານກ່ຽວກັບການສ້າງບ້ານສາທາລະນາສຸກ 2013-2014, ກົມອະນາໄມ ແລະສົ່ງເສີມສຸຂະພາບ, ກະຊວງສາທາລະນາສຸກ; GOL (2015), ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະປ້ອງກັນ HIV/AIDS ແລະ STD (2014).

# ພາກທີ 4

## ເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ຖານການຜະລິດ

ໃນການບັນລຸມາດຖານການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ ນັ້ນເຫັນວ່າ EVI ແມ່ນຍັງຕາມຫຼັງຕົວຊີ້ສອງບອກອື່ນຢູ່ ຄື: GNI ແລະ HAI. ການເສີມສ້າງຄວາມສາມາດດ້ານການຜະລິດຂອງປະເທດເປັນຂໍກຸນແຈສຳຄັນໃນການຫລຸດຜ່ອນຄວາມສ່ຽງດ້ານເສດຖະກິດ. ການເພີ່ມຜົນຜະລິດຂອງຟາຣ໌ມ ແລະຄວາມຫຼາກຫຼາຍທາງເສດຖະກິດຢູ່ໃນກິດຈະກຳທີ່ບໍ່ແມ່ນການກະສິກຳ ແລະມີມູນຄ່າເພີ່ມສູງນັ້ນ ຈະຊ່ວຍໃຫ້ສາມາດບັນລຸໄດ້ຢ່າງໜ້ອຍກໍ່ແມ່ນ 5 ໃນ 7 ຕົວຊີ້ບອກຍ່ອຍຢູ່ໃນ EVI. ນອກຈາກຈະຊ່ວຍຫລຸດຜ່ອນຄວາມສ່ຽງທາງດ້ານເສດຖະກິດແລ້ວ, ກໍ່ຍັງເປັນການກະຈາຍອຳນາດການຫັນເປັນອຸດສາຫະກຳເພື່ອສ້າງງານໃນການຜະລິດ, ການກະຈາຍສິນີ ແລະການປັບປຸງລາຍໄດ້ຂອງປະຊົນທີ່ມີຄວາມແຕກຕ່າງກັນຢູ່ພາຍໃນປະເທດ ຊຶ່ງຈະເປັນການຫລຸດຜ່ອນຄວາມແຕກໂຕນລະຫວ່າງຊົນເຜົ່າຕ່າງໆລົງ. ການອະນຸລັກຊັບພະຍາກອນທຳມະຊາດ ແມ່ນເປັນໃຈກາງໃນການຫລຸດຜ່ອນຄວາມອ່ອນໄຫວຕໍ່ກັບການເກີດໄພທຳມະຊາດ.

ດັ່ງທີ່ໄດ້ກ່າວໄວ້ໃນພາກທີ 2, ສປປ ລາວ ຕົກຢູ່ໃນສະຖານະພາບທີ່ມີ EVI ບໍ່ໄດ້ຕາມຄ່າມາດຖານ, ຊ່ອງວ່າງລະຫວ່າງຄ່າມາດຖານ ແລະຄ່າຕົວຈິງຂອງ EVI ກໍ່ສູງກວ່າໝູ່ ເມື່ອທຽບກັບ GNI ແລະ HAI. ໃນເມື່ອທຽບກັບບັນດາປະເທດດ້ອຍພັດທະນາອື່ນໆ, ເຫັນວ່າ ສປປ ລາວ ກໍ່ຄ້າຍຄືກັນກັບເຂົາເຈົ້າທີ່ມີ EVI ຂີ້ລ້າຍກວ່າ GNI ແລະ HAI. ໃນນັ້ນ, ມີ 16 ປະເທດທີ່ມີ EVI ຕ່ຳກວ່າ ສປປ ລາວ, ມີ 12 ປະເທດທີ່ມີ HAI ສູງກວ່າ ສປປ ລາວ ແລະ ມີ 15 ປະເທດທີ່ມີ GNI ສູງກວ່າ ສປປ ລາວ.

ທັງສອງດັດຊະນີ: EVI ແລະ GNI ແມ່ນເປັນພື້ນຖານຂອງເສດຖະກິດ. ເຖິງແມ່ນວ່າ ສປປ ລາວ ມີຄ່າ GNI ເກືອບຈະບັນລຸໄດ້ຕາມລະດັບມາດຖານແລ້ວກໍ່ຕາມ ແຕ່ມັນກໍ່ຍັງມີຄວາມຜັນແປໄດ້ງ່າຍ ຍ້ອນມີຄວາມສ່ຽງທາງດ້ານເສດຖະກິດສູງ. ທັງ EVI ແລະ GNI ຕ່າງກໍ່ມີມາດຖານຂອງມັນເອງ ໃນການບັນລຸເງື່ອນໄຂຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແຕ່ EVI ແມ່ນມີຜົນກະທົບໂດຍກົງກັບ GNI. ດັ່ງນັ້ນ, ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ເພື່ອເຮັດໃຫ້ຄ່າ EVI ຕ່ຳລົງ.

ດັດຊະນີຄວາມບອບບາງທາງເສດຖະກິດແມ່ນປະກອບດ້ວຍ 8 ຕົວດັດຊະນີຍ່ອຍ (ເບິ່ງຢູ່ໃນກ່ອງທີ 0.1, ຢູ່ໃນພາກສະເໜີ). ໃນກໍລະນີ ຂອງ ສປປ ລາວ, ສຳລັບ 8 ຕົວດັດຊະນີຍ່ອຍນັ້ນແມ່ນສາມາດລວມເຂົ້າກັນ ແລະແຍກອອກເປັນ 4 ກຸ່ມຄື:

1. ຄວາມເຂັ້ມແຂງ ແລະການຈະເລີນເຕີບໂຕຂອງຂະແໜງກະສິກຳ;

2. ຄວາມທັນສະໄໝຂອງຂະແໜງທີ່ບໍ່ແມ່ນການກະສິກຳ;

3. ພື້ນຖານໂຄງລ່າງທີ່ໄດ້ຮັບການປັບປຸງຍົກລະດັບ;

4. ການປົກປ້ອງປະຊາຊົນທີ່ມີຄວາມສ່ຽງຕໍ່ໄພທຳມະຊາດ ຫຼືຜົນກະທົບຈາກໄພພິບັດທາງທຳມະຊາດ.

ຖ້າຂະແໜງກະສິກຳຫາກມີຊີວິດຊີວາ ແລະສາມາດຟື້ນຕົວໄດ້ໄວໃນເມື່ອປະສົບກັບບັນຫາ ແລະກິດຈະກຳທີ່ບໍ່ແມ່ນການກະສິກຳກໍ່ມີຄວາມຫຼາກຫຼາຍ; ບັນດາຕົວດັດຊະນີຍ່ອຍທີ່ກ່ຽວພັນກັບການສົ່ງອອກສິນຄ້າຕ່າງໆທີ່ ກະຈຸກຕົວ (ເຂັ້ມຂຸ້ນ) ຢູ່ໃນຂະແໜງການໃດໜຶ່ງ (ເປັນຕົ້ນແມ່ນຂະແໜງຊັບພະຍາກອນທຳມະຊາດ), ອັດຕາສ່ວນຂອງຂະແໜງກະສິກຳ-ປ່າໄມ້ ແລະການປະມົງຢູ່ໃນ GDP, ການສົ່ງອອກ ແລະການຜະລິດກະສິກຳທີ່ບໍ່ມີຄວາມໝັ້ນຄົງນັ້ນຫາກຖືກແກ້ໄຂ ແມ່ນຈະສາມາດບັນລຸໄດ້ຢ່າງເຕັມສ່ວນ ຫຼືຢ່າງໜ້ອຍກໍ່ໄດ້ໃນສ່ວນໃດສ່ວນໜຶ່ງຂອງ EVI. ໂຄງລ່າງພື້ນຖານທີ່ໄດ້ຮັບການປັບປຸງຍົກລະດັບ ກໍ່ຈະເປັນແນວທາງໃນການແກ້ໄຂບັນຫາຕົວດັດຊະນີຍ່ອຍທີ່ກ່ຽວພັນກັບເຂດຊົນນະບົດຫ່າງໄກສອກຫຼີກ ແລະບ່ອນທີ່ມີຈຳນວນປະຊາກອນອາໄສຢູ່ໜ້ອຍ.[86] ພ້ອມກັນນັ້ນ, ການປັບປຸງໂຄງລ່າງພື້ນຖານຍັງສາມາດຊ່ວຍຫລຸດຜ່ອນຜົນກະທົບຈາກໄພທຳມະຊາດຕໍ່ກັບການດຳລົງຊີວິດຂອງມະນຸດນຳ. ສ່ວນດັດຊະນີຍ່ອຍທີ່ເວົ້າເຖິງອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ໃນຊາຍຝັ່ງທະເລຕໍ່ານັ້ນ ແມ່ນບໍ່ໄດ້ຢູ່ໃນກໍລະນີຂອງ ສປປ ລາວ ຍ້ອນວ່າ ສປປ ລາວ ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ. ຖ້າຫາກເສດຖະກິດມີການຂະຫຍາຍຕົວແບບມີສ່ວນຮ່ວມ (ເພື່ອທຸກຄົນ) ແລະຢູ່ພາຍໃຕ້ການປ່ຽນແປງໂຄງສ້າງທີ່ມີຄວາມພ້ອມໃນການພັດທະນາຊັບພະຍາກອນມະນຸດ ສປປ ລາວ ກໍ່ຈະສາມາດກ້າວອອກຈາກສະຖານະພາບປະເທດດ້ອຍພັດທະນາໄດ້ຢ່າງລາບລື່ນ ແລະຄວາມຄືບໜ້າດັ່ງກ່າວກໍ່ຈະເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ມີຄວາມເຂັ້ມແຂງຢູ່ໃນ AEC.

ເພາະສະນັ້ນ, ພາກນີ້ຈະພິຈາລະນາເຖິງບັນດາຍຸດທະສາດຂອງ ສປປ ລາວ ໃນປັດຈຸບັນ ເພື່ອຫລຸດຜ່ອນຄວາມສ່ຽງທາງດ້ານເສດຖະກິດ. ໂດຍສະເພາະແມ່ນຈະໄດ້ເບິ່ງເຖິງວິທີການທີ່ ສປປ ລາວ ຈະເສີມສ້າງຄວາມເຂັ້ມແຂງຂອງພື້ນຖານເສດຖະກິດ ໂດຍຜ່ານການປັບປຸງຜະລິດຕະພາບຂອງການກະສິກຳ, ຄວາມຫຼາກຫຼາຍຂອງກິດຈະກຳອຸດສາຫະກຳ ແລະການຫລຸດຜ່ອນຄວາມສ່ຽງໄພຈາກໄພພິບັດທາງທຳມະຊາດ.

## ການພັດທະນາກະສິກຳ

ການກະສິກຳຂອງ ສປປ ລາວ ມີລັກສະນະທີ່ມີຜະລິດຕະພາບຂອງງານຕໍ່າ ແລະອັດຕາຜົນຜະລິດກໍ່ຕໍ່າ.[87] ໃນສ່ວນນີ້ຈະໄດ້ພິຈາລະນາເຖິງບາງປັດໄຈສຳຄັນທີ່ສົ່ງຜົນເຮັດໃຫ້ກະສິກຳຂອງ ສປປ ລາວ ມີຜະລິດຕະພາບຕໍ່າ ແລະໃຫ້ການແນະນຳກ່ຽວກັບບັນດາຍຸດທະສາດທີ່ນຳໃຊ້ເຂົ້າໃນການແຊກແຊງ ໂດຍອີງໃສ່ປະສົບການຂອງປະເທດຕ່າງໆ.

### ຕອນດິນ ແລະຂະໜາດຂອງມັນ

ສຳລັບທຸກໆການຫັນເປັນທັນສະໄໝໃນຂະແໜງກະສິກຳທີ່ເກີດຂຶ້ນຜ່ານການນຳໃຊ້ຊົນລະປະທານ, ນຳໃຊ້ເມັດພັນຄຸນນະພາບສູງທີ່ຫຼາກຫຼາຍ, ນຳໃຊ້ຝຸ່ນ ແລະອື່ນໆ ທີ່ສຳຄັນແມ່ນຟາຣ໌ມຈະຕ້ອງບໍ່ເປັນບ່ອນທີ່ມີຂະໜາດນ້ອຍເກີນໄປ. ການແບ່ງດິນເປັນຕອນນ້ອຍໆຫຼາຍເກີນໄປ ແມ່ນເປັນອຸປະສັກຕໍ່ກັບຄວາມພະຍາຍາມຂອງການຫັນເປັນທັນສະໄໝ ຍ້ອນວ່າທຸກໆການນຳໃຊ້ເຕັກໂນໂລຢີແມ່ນຂຶ້ນຢູ່ກັບການປະຢັດຕໍ່ຂະໜາດ.

ໂດຍທົ່ວໄປແລ້ວ, ການຖືຄອງທີ່ດິນຢູ່ໃນຂະແໜງກະສິກຳຂອງ ສປປ ລາວ ແມ່ນມີຂະໜາດນ້ອຍໂດຍສະເລ່ຍແລ້ວແມ່ນມີປະມານ 2,4 ເຮັກຕາຕໍ່ຄົວເຮືອນ (ຕາຕະລາງ 4.1). ຮ້າຍແຮງໄປກວ່ານັ້ນ, ການຖືຄອງທີ່ດິນກໍ່ຍັງເປັນດິນຕອນນ້ອຍຫຼາຍຕອນທີ່ກະແຈກກະຈາຍຢູ່ ໂດຍສະເລ່ຍແລ້ວແມ່ນມີປະມານ 2,7 ຕອນຕໍ່ຄົວເຮືອນ (ເພີ່ມຂຶ້ນຈາກ 2,1 ຕອນໃນທົດສະວັດຜ່ານມາ ຊຶ່ງສະແດງວ່າການກະຈາຍຂອງຕອນດິນໄດ້ເພີ່ມຂຶ້ນ).

ໃນແຕ່ລະຕອນດິນແມ່ນມີເນື້ອທີ່ປະມານ 0,9 ເຮັກຕາ ແຕ່ຖ້າເບິ່ງຈາກຄ່າສະເລ່ຍດັ່ງກ່າວແລ້ວແມ່ນບໍ່ສາມາດສະທ້ອນໃຫ້ເຫັນເຖິງພາບລວມໄດ້ ເຊັ່ນ: ໃນປີ 2010-2011 ແມ່ນມີປະມານ 20% ຂອງການຖືຄອງທີ່ດິນ ທີ່ຖືກແຍກອອກເປັນຕອນນ້ອຍໆເຖິງ 4 ຕອນ ຫຼືຫຼາຍກວ່ານັ້ນ. ພ້ອມກັນນັ້ນ, ດິນແຕ່ລະຕອນແມ່ນບໍ່ໄດ້ຕັ້ງຢູ່ບ່ອນທີ່ເຊື່ອມຕໍ່ກັນ. ດັ່ງນັ້ນ, ການນໍາໃຊ້ວິທີການເຮັດການຜະລິດກະສິກໍາທີ່ທັນສະໄໝແມ່ນມີຄວາມເປັນໄປໄດ້ຍາກ. ສະຫລຸບແລ້ວ, ແມ່ນເປັນການຍາກທີ່ຈະເພີ່ມຜະລິດຕະພາບຂອງງານ ຖ້າວ່າຫາກບໍ່ມີການລວມຕອນດິນນ້ອຍໆເຫຼົ່ານັ້ນເຂົ້າກັນ. ຖ້າຫາກການຖືຄອງທີ່ດິນມີຂະໜາດໃຫຍ່ຂຶ້ນ ມັນກໍ່ຈະເປັນການຊ່ວຍເລັ່ງການຫັນເປັນທັນສະໄໝຢູ່ໃນຂະແໜງກະສິກໍາໄດ້ດີຂຶ້ນ.

**ຕາຕະລາງ 4.1: ສະຖິຕິກ່ຽວກັບຂະໜາດຂອງຕອນດິນ, 2010-2011**

| ການຖືຄອງດິນ | ພາກເໜືອ | ພາກກາງ | ພາກໃຕ້ | ສປປ ລາວ |
|---|---|---|---|---|
| (1) | (2) | (3) | (4) | (5) |
| ຂະໜາດຂອງການຖືຄອງໂດຍສະເລ່ຍຕໍ່ຄົວເຮືອນ (ເຮັກຕາ) | 2,3 | 2,6 | 2,3 | 2,4 |
| ຈໍານວນຕອນດິນໂດຍສະເລ່ຍຕໍ່ຄົວເຮືອນ | 3,1 | 2,5 | 2,4 | 2,7 |
| ຂະໜາດຂອງແຕ່ລະຕອນດິນໂດຍສະເລ່ຍ (ເຮັກຕາ) | 0,72 | 1,05 | 0,97 | 0,9 |
| ອັດຕາສ່ວນຂອງຄົວເຮືອນທີ່ຖືຄອງທີ່ດິນຈໍານວນ 1 ຕອນ (%) | 12,2 | 16,6 | 17,7 | 15,2 |
| ອັດຕາສ່ວນຂອງຄົວເຮືອນທີ່ຖືຄອງທີ່ດິນຈໍານວນ 2-3 ຕອນ (%) | 55,2 | 70 | 70,6 | 64,7 |
| ອັດຕາສ່ວນຂອງຄົວເຮືອນທີ່ຖືຄອງທີ່ດິນຈໍານວນ 4 ຫາ 5 ຕອນ (%) | 24,5 | 11,1 | 9,8 | 15,8 |
| ອັດຕາສ່ວນຂອງຄົວເຮືອນທີ່ຖືຄອງທີ່ດິນຫຼາຍກວ່າ 6 ຕອນ (%) | 8,1 | 2,3 | 1,9 | 4,3 |
| **ລວມ** | **100** | **100** | **100** | **100** |

ແຫຼ່ງຂໍ້ມູນ: ການສໍາຫຼວດກະສິກໍາ ຂອງ ສປປ ລາວ, 2010-2011

ກ່ອງທີ 4.1 ສະແດງເຖິງບາງວິທີການຈໍານວນໜ້ອຍໜຶ່ງທີ່ໄດ້ຖືກຈັດຕັ້ງປະຕິບັດຕົວຈິງຢູ່ໃນຕ່າງປະເທດ ແຕ່ເນື່ອງຈາກ ສປປ ລາວ ເປັນປະເທດທີ່ມີຄວາມແຕກຕ່າງທາງດ້ານໂຄງສ້າງພູມສັນຖານຂອງມັນ; ສະນັ້ນຈຶ່ງຮຽກຮ້ອງໃຫ້ມີການນໍາໃຊ້ວິທີການທີ່ແຕກຕ່າງກັນ ແລະຄ່ອຍເປັນຄ່ອຍໄປຕາມຊ່ວງໄລຍະເວລາໃດໜຶ່ງ. ມັນຈະເປັນການດີທີ່ຈະລິເລີ່ມໂຄງການທົດລອງກ່ອນເພື່ອປະເມີນເບິ່ງບັນດາສິ່ງທ້າທາຍຕ່າງໆຢູ່ໃນການຈັດຕັ້ງປະຕິບັດຕົວຈິງ. ສປປ ລາວ ມີອົງການຄຸ້ມຄອງທີ່ດິນແຫ່ງຊາດ ທີ່ເຮັດໜ້າທີ່ໃນການອອກໃບຕາດິນ, ບັນທຶກ ແລະເກັບຮັກສາຂໍ້ມູນກ່ຽວກັບທີ່ດິນພ້ອມດ້ວຍການດໍາເນີນກິດຈະກໍາອື່ນໆນໍາ ແຕ່ການຈັດສັນຕອນດິນ ຫຼືການໂຮມຕອນດິນນ້ອຍໆເຂົ້າກັນນັ້ນແມ່ນບໍ່ໄດ້ຢູ່ໃນພາລະບົດບາດຂອງອົງການດັ່ງກ່າວ ຊຶ່ງມັນມີຄວາມຈໍາເປັນທີ່ຈະຕ້ອງໄດ້ທົບທວນຄືນໃໝ່.

**ກ່ອງທີ 4.1: ການໂຮມທີ່ດິນເຂົ້າກັນ - ບາງບົດຮຽນຂອງສາກົນ**

ການໂຮມທີ່ດິນເຂົ້າກັນແມ່ນໄດ້ຖືກຮັບຮູ້ມາຫຼາຍກວ່າ 150 ປີແລ້ວ ເນື່ອງຈາກມີຄວາມຈຳເປັນສຳລັບການຈັດໃຫ້ມີການລົງທຶນຂະໜາດໃຫຍ່ (ຕົວຢ່າງ: ຊົນລະປະທານ), ການເພີ່ມຜະລິດຕະພາບຂອງການຜະລິດ ແລະເຮັດໃຫ້ຊີວິດການເປັນຢູ່ຂອງຊາວກະສິກອນດີຂຶ້ນ. ບັນດານະໂຍບາຍການໂຮມທີ່ດິນທີ່ເປັນທາງການຄັ້ງທຳອິດແມ່ນເກີດຂຶ້ນໃນປີ 1847 ຊຶ່ງອຳນາດການປົກຄອງອານານິຄົມຂອງອັງກິດໄດ້ປະກາດໃຊ້ເປັນກົດໝາຍຢູ່ໃນ ແຂວງບົມເບ, ປະເທດອິນເດຍໃນປະຈຸບັນ. ມາຮອດຊຸມປີ 1950 ແລະຊຸມປີ 1960, ປະເທດແບນຊິກ, ຈີລີ, ເອຢິບ, ອິນເດຍ, ອີຣັກ, ຍີ່ປຸ່ນ, ລີບັງ, ແມັກຊິກໂກ ແລະຊີຣີ ກໍ່ໄດ້ມີການຮັບຮອງກົດໝາຍການໂຮມທີ່ດິນຢ່າງເປັນທາງການ.

ແຕ່ລະປະເທດແມ່ນມີປະຫວັດສາດ ແລະລະບົບນິເວດກະສິກຳຂອງທີ່ດິນທີ່ແຕກຕ່າງກັນ ດັ່ງນັ້ນ, ຂະໜາດຂອງການໂຮມທີ່ດິນ, ບັນດາວິທີຂອງການໂຮມທີ່ດິນ ແລະລະດັບຄວາມສຳເລັດຂອງບັນດານະໂຍບາຍດັ່ງກ່າວຈຶ່ງມີຄວາມແຕກຕ່າງກັນ. ຕົວຢ່າງຂ້າງລຸ່ມນີ້ສະແດງເຖິງວິທີການ ແລະປະສົບປະການຂອງປະເທດຕ່າງໆ:

- ເຈົ້າໜ້າທີ່ອອກໃບຕາດິນຈະປະຕິເສດການລົງທະບຽນເປັນທີ່ດິນກະສິກຳ, ຖ້າຫາກວ່າເນື້ອທີ່ຂອງຕອນດິນນັ້ນມີໜ້ອຍກວ່າຂະໜາດຂັ້ນຕ່ຳສຸດທີ່ໄດ້ກຳນົດໄວ້. ດັ່ງນັ້ນ, ຖ້າຫາກຕອນດິນຖືກແບ່ງເປັນສອງ ຫຼືຫຼາຍຕອນກວ່ານັ້ນ (ດ້ວຍເຫດຜົນຈາກການແບ່ງປັນມູນມໍລະດົກ ຫຼືເຫດຜົນອື່ນກໍ່ຕາມ) ໃນທາງກົດໝາຍແລ້ວ ບັນດາຕອນດິນທີ່ແບ່ງອອກມານັ້ນຈະຖືກບັນທຶກເປັນດິນກະສິກຳໄດ້ ກໍ່ຕໍ່ເມື່ອມັນມີເນື້ອທີ່ຢ່າງໜ້ອຍຕ້ອງເທົ່າກັບຂະໜາດຂັ້ນຕ່ຳສຸດທີ່ໄດ້ກຳນົດໄວ້, ສ່ວນຕອນດິນທີ່ມີເນື້ອທີ່ໜ້ອຍກວ່າຂະໜາດຂັ້ນຕ່ຳສຸດທີ່ກຳນົດໄວ້ນັ້ນ ຈະຖືກລົງທະບຽນເປັນດິນກະສິກຳໄດ້ກໍ່ຕໍ່ເມື່ອມັນໄດ້ໄປລວມກັບດິນຕອນອື່ນທີ່ຕິດກັນ (ກໍລະນີຢູ່ອິນເດຍ).
- ໂຮມທີ່ດິນຕອນນ້ອຍທີ່ເປັນຂອງລັດຖະບານ ແລະບໍ່ທັນມີການນຳໃຊ້ເຂົ້າກັນ ແລ້ວຈຶ່ງຈັດສັນ ແລະແບ່ງປັນໃຫ້ແກ່ຜູ້ທີ່ຖືຄອງທີ່ດິນຂະໜາດນ້ອຍໆ ແລະຜູ້ທີ່ຍັງບໍ່ທັນມີທີ່ດິນນຳໃຊ້ (ກໍລະນີຢູ່ອິນເດຍ).
- ການໂຮມທີ່ດິນສຳລັບຈຸດປະສົງຂອງການຈັດສັນທີ່ດິນຄືນໃໝ່ນັ້ນແມ່ນຕ້ອງໃຫ້ມີນ້ຳຊົນລະປະທານໄປຮອດໄປເຖິງທີ່ດິນເຫຼົ່ານັ້ນ. ທຳອິດແມ່ນຕ້ອງໂຮມທີ່ດິນເຂົ້າກັນກ່ອນ ຫຼັງຈາກນັ້ນຈຶ່ງເຮັດການຈັດສັນ ແລະແບ່ງປັນຄືນໃໝ່ (ໂດຍບໍ່ຈຳເປັນຕ້ອງມີຂະໜາດເທົ່າກັນກັບຕອນດິນທີ່ຖືກໂຮມເຂົ້າກັນກ່ອນນີ້ກໍ່ໄດ້). ດັ່ງນັ້ນ, ທຸກໆຕອນດິນກໍ່ຈະໄດ້ຜົນປະໂຫຍດຈາກກະແສນ້ຳໜ້າດິນ (ກໍລະນີຢູ່ ສ. ເກົາຫຼີ).
- ຖ້າຫາກຕອນດິນຂອງຊາວກະສິກອນມີຂະໜາດນ້ອຍຫຼາຍເນື່ອງຈາກຕອນດິນທີ່ໄດ້ມານັ້ນແມ່ນເພື່ອຈຸດປະສົງທີ່ບໍ່ແມ່ນການກະສິກຳ ຫຼືເພື່ອຈຸດປະສົງການພັດທະນາອື່ນໆ ຊຶ່ງທາງເລືອກຕໍ່ໄປນີ້ແມ່ນຖືກນຳໃຊ້ຢູ່ ສປ ຈີນ ແລະອາຊີໃຕ້: (ກ) ການທົດແທນຄືນດ້ວຍທີ່ດິນຢູ່ບ່ອນອື່ນ, (ຂ) ການຈ້າງງານ (ແຮງງານບໍ່ມີສີມື) ຢູ່ໃນບັນດາໂຄງການພັດທະນາຕ່າງໆ, ແລະ (ຄ) ໃຫ້ການຝຶກອົບຮົມ ຫຼືໃຫ້ເງິນກູ້/ເງິນຊ່ວຍເຫຼືອຂະໜາດນ້ອຍ ເພື່ອໃຊ້ເຂົ້າໃນກິດຈະກຳອື່ນທີ່ບໍ່ແມ່ນການກະສິກຳ.

ແຫຼ່ງຂໍ້ມູນ: ບົດລາຍງານການພັດທະນາມະນຸດຂອງ ກຳປູເຈຍ, 2007

ໃນໄລຍະມໍ່ໆຜ່ານມານີ້, ວິທີການຈັດຕັ້ງປະຕິບັດການຫັນເປັນອຸດສາຫະກຳຕົວຈິງຢູ່ໃນຂະແໜງກະສິກຳແມ່ນບໍ່ໄດ້ຖືກຂັບເຄື່ອນໂດຍລັດຖະບານ (ດັ່ງທີ່ໄດ້ສະແດງໄວ້ຢູ່ໃນກ່ອງທີ 4.1) ແຕ່ຫາກຖືກຂັບເຄື່ອນໂດຍບັນດາຊາວກະສິກອນເອງ ຊຶ່ງໄດ້ມີການສັງເກດການຢູ່ໃນຫຼາຍໆພາກຂອງ ສປ ຈີນ, ອິນເດຍ ແລະກຳປູເຈຍ; ຢູ່ໃນທີ່ໆບັນດາຊາວກະສິກອນໄດ້ປະກອບສ່ວນຊັບພະຍາກອນຕ່າງໆ ເຊັ່ນ: ການຈ້າງການບໍລິການລົດຕຣາກເຕີ ຫຼືອຸປະກອນເຄື່ອງມືຊົນລະປະທານ ເພື່ອຂ້າມຜ່ານຂໍ້ຫຍຸ້ງຍາກທາງເສດຖະກິດຂອງການນຳໃຊ້ເຕັກໂນໂລຢີທີ່ທັນສະໄໝ ເນື່ອງຈາກຕອນດິນກະສິກຳຂອງເຂົາເຈົ້າມີຂະໜາດນ້ອຍ. ໂດຍຄວາມເປັນຈິງແລ້ວ, ແມ່ນເຂົາເຈົ້າໄດ້ມີ 'ການແບ່ງປັນ' ຊັບພະຍາກອນທີ່ແບ່ງກັນບໍ່ໄດ້, (ຕົວຢ່າງ: ປ້ຳນ້ຳຊົນລະປະທານ ຫຼືລົດຕຣາກເຕີ) ດ້ວຍການຈ່າຍຄ່າບໍລິການທີ່ເຂົ້າ

ເຈົ້າໄດ້ຮັບຢູ່ໃນຕອນດິນຂອງໃຜລາວ ແທນທີ່ຈະເປັນການຊື້ອຸປະກອນເຄື່ອງມືເຫຼົ່ານັ້ນດ້ວຍຕົນເອງ.

ການຈັດຕັ້ງກຸ່ມຊາວກະສິກອນຖືວ່າມີຄວາມສຳຄັນຢູ່ໃນທີ່ນີ້ ຍ້ອນວ່າການຈັດຕັ້ງກຸ່ມຊາວກະສິກອນຢູ່ໃນ ສປປ ລາວ ແມ່ນເປັນສ່ວນໜຶ່ງໃນນະໂຍບາຍການຜະລິດກະສິກຳຂອງລັດຖະບານ ຊຶ່ງການຈັດຕັ້ງປະຕິບັດຕົວຈິງເຊັ່ນນີ້ ຖ້າຫາກວ່າໄດ້ຮັບການສົ່ງເສີມຢ່າງໄວວາ ກໍ່ຈະສາມາດຊ່ວຍຍົກຜະລິດຕະພາບຂອງຟາມ ແລະອັດຕາຜົນຜະລິດຈາກທີ່ດິນໃຫ້ສູງຂຶ້ນ.[88] ຢູ່ໃນ ສປປ ລາວ ນະໂຍບາຍນີ້ແມ່ນເພື່ອສະໜັບສະໜູນສະມະຄົມຊາວນາ ແຕ່ສະມາຄົມເຫຼົ່ານີ້ສ່ວນໃຫຍ່ແມ່ນເປັນສະເພາະກິດ (ເບິ່ງໃນກ່ອງທີ 4.6). ດັ່ງນັ້ນ, ການສ້າງຄວາມເຂັ້ມແຂງ ແລະຂະຫຍາຍຂອບເຂດຂອງສະມາຄົມຊາວກະສິກອນໃຫ້ກວ້າງອອກແມ່ນຄວນຈະຖືເປັນສິ່ງສຳຄັນອັນດັບສຳຄັນຕົ້ນໆຢູ່ໃນ ສປປ ລາວ.

## ຊົນລະປະທານ

ໃນຂະນະທີ່ທົ່ວ ສປປ ລາວ ມີຝົນຕົກຫຼາຍ ຊຶ່ງຢູ່ໃນລະດັບທີ່ຫຼາຍກວ່າ 1.800 ມມ/ປີ ແຕ່ເຂດເນື້ອທີ່ປູກເຂົ້າທັງໝົດທີ່ຢູ່ພາຍໃຕ້ການປົກຄຸມຂອງຊົນລະປະທານແມ່ນມີພຽງແຕ່ 20% ເທົ່ານັ້ນ ດັ່ງທີ່ໄດ້ສະແດງໄວ້ຢູ່ໃນ (ຖັນທີ 2 ຂອງຕາຕະລາງ 4.2).[89] ການມີຊົນລະປະທານປົກຄຸມທີ່ຈຳກັດນັ້ນ ແມ່ນເປັນສາເຫດໜຶ່ງທີ່ເຮັດໃຫ້ອັດຕາຜົນຜະລິດຂ້ອນຂ້າງຕໍ່າ ແລະການທີ່ບໍ່ມີເມັດພັນທີ່ໃຫ້ຜົນຜະລິດສູງຢ່າງຫຼາກຫຼາຍ ກໍ່ເຮັດໃຫ້ບໍ່ໄດ້ຮັບຜົນຜະລິດສູງເຊັ່ນກັນ[90]. ຕາຕະລາງ 4.3 ສະແດງໃຫ້ເຫັນວ່າ ມີຊາວກະສິກອນຈຳນວນປະມານ 60% ໄດ້ບອກວ່າ ການຂາດແຄນຊົນລະປະທານແມ່ນເປັນຂໍ້ຈຳກັດສຳລັບການຂະຫຍາຍ ຫຼືເພີ່ມຄວາມລຳບາກໃຫ້ແກ່ກິດຈະກຳກະສິກຳຫຼາຍຂຶ້ນ ໂດຍສະເພາະແມ່ນຢູ່ໃນເຂດພາກກາງທີ່ເປັນອູ່ເຂົ້າຂອງປະເທດ.

**ຕາຕະລາງ 4.2: ອັດຕາສ່ວນຂອງເນື້ອທີ່ນາເຂົ້າທີ່ໄດ້ຊົມໃຊ້ນ້ຳຊົນລະປະທານ**

| ຊື່ແຂວງ | % ຂອງເນື້ອນາທີ່ໄດ້ຮັບນ້ຳຊົນລະປະທານ |
|---|---|
| ຜົ້ງສາລີ | 30,6 |
| ຫຼວງນ້ຳທາ | 34,3 |
| ອຸດົມໄຊ | 20,6 |
| ບໍ່ແກ້ວ | 34,8 |
| ຫຼວງພະບາງ | 21,1 |
| ຫົວພັນ | 35,6 |
| ໄຊຍະບູລີ | 38,4 |
| ນະຄອນຫຼວງວຽງຈັນ | 28,9 |
| ຊຽງຂວາງ | 39,5 |
| ແຂວງວຽງຈັນ | 37,9 |
| ບໍລິຄຳໄຊ | 16,6 |
| ຄຳມ່ວນ | 9,7 |
| ສະຫວັນນະເຂດ | 8,1 |
| ສາລະວັນ | 12,1 |
| ເຊກອງ | 22,8 |
| ຈຳປາສັກ | 8,6 |
| ອັດຕະປື | 7,8 |
| **ສປປ ລາວ** | **19,4** |

ແຫຼ່ງຂໍ້ມູນ: ການສຳຫຼວດກະສິກຳ, 2010-2011

| ຕາຕະລາງ 4.3: ອັດຕາສ່ວນຂອງຊາວກະສິກອນທີ່ບອກວ່າການຊົນລະປະທານເປັນອຸປະສັກຕົ້ນຕໍ່ຕໍ່ການກະສິກໍາ | |
|---|---|
| **ແບ່ງຕາມພາກ** | **ອັດຕາສ່ວນຂອງຊາວກະສິກອນທີ່ບອກວ່າການຊົນລະປະທານເປັນອຸປະສັກຕົ້ນຕໍ່ກັບການຜະລິດກະສິກໍາ (%)** |
| ພາກເໜືອ | 48,7 |
| ພາກກາງ | 64,2 |
| ພາກໃຕ້ | 70,9 |
| ຊົນນະບົດມີເສັ້ນທາງ | 60,0 |
| ຊົນນະບົດບໍ່ມີເສັ້ນທາງ | 53,5 |
| ເຂດທົ່ງພຽງ | 66,8 |
| ເຂດພູດອຍ | 49,6 |
| ເຂດພູພຽງ | 62,4 |
| ເຂດທີ່ມີການປະສົມປະສານຂອງປະເພດທີ່ດິນ | 53,6 |
| **ສປປ ລາວ** | **58,9** |

ແຫຼ່ງຂໍ້ມູນ: ສະຖິຕິການສໍາຫຼວດກະສິກໍາ, 2010-2011

ຕໍ່ໄປນີ້ແມ່ນບັນດາສາເຫດຕ່າງໆທີ່ເຮັດໃຫ້ມີລະດັບຊົນລະປະທານຕໍ່າ:

- ພື້ນທີ່ຂອງປະເທດແມ່ນເປັນເຂດພູສູງຫຼາຍ, ຕອນດິນກະສິກໍາມີຂະໜາດນ້ອຍ ແລະຢູ່ກະແຈກກະຈາຍຊຶ່ງບໍ່ມີຄວາມສະດວກໃນການສົ່ງນໍ້າຊົນລະປະທານໃຫ້ໄປຮອດໄປເຖິງ (ໂດຍສະເພາະແມ່ນການສ້າງຄອງເໝືອງ) ທີ່ເປັນວິທີການຊົນລະປະທານທີ່ນໍາໃຊ້ທົ່ວໄປຫຼາຍທີ່ສຸດ.

- ໄດ້ມີການສຸມໃສ່ການກໍ່ສ້າງບັນດາອ່າງເກັບນໍ້າຂະໜາດໃຫຍ່ເກີນໄປ. ຕາຕະລາງ 4.4 ສະແດງໃຫ້ເຫັນວ່າມີພຽງແຕ່ 7,5% ຂອງຈໍານວນບ້ານໃນທົ່ວປະເທດທີ່ໄດ້ຊົມໃຊ້ນໍ້າຊົນລະປະທານຈາກຈັກດູດນໍ້າ[91]. ໃນສະພາບຂອງພູມມີປະເທດ ຫຼືຮູບແບບການກະຈາຍຂອງທີ່ດິນ (ຕອນດິນ) ເປັນຄືແນວນັ້ນ, ການສ້າງອ່າງເກັບນໍ້າຂະໜາດໃຫຍ່ແມ່ນເປັນການສິ້ນເປືອງ ເນື່ອງຈາກພວກມັນບໍ່ມີປະສິດທິພາບໃນການແຈກຢາຍນໍ້າໄປໃສ່ພື້ນທີ່ການຜະລິດ.

- ຈົນມາຮອດປັດຈຸບັນນີ້, ການໃຊ້ຈ່າຍລົງທຶນເຂົ້າໃນຂະແໜງຊົນລະປະທານ ແມ່ນຍັງມີໜ້ອຍກວ່າຄວາມຮຽກຮ້ອງຕ້ອງການຢູ່.

ສໍາລັບການປ່ອຍນໍ້າເຂົ້າໃສ່ທີ່ດິນກະສິກໍາແມ່ນມີຢູ່ຫຼາຍວິທີ ຊຶ່ງຂຶ້ນຢູ່ກັບແຫຼ່ງຂອງນໍ້າ, ພູມມີປະເທດ ແລະຂະໜາດຂອງພື້ນທີ່ດິນທີ່ຈະເອົານໍ້າເຂົ້າໃສ່ (ການກະຈາຍແຈກຢາຍຂອງທີ່ດິນ. ມີບາງເທື່ອກໍ່ມີປັດໄຈເພີ່ມເຕີມອີກອັນໜຶ່ງ ເຊັ່ນ: ຕ້ອງໄດ້ພິຈາລະນາເຖິງພືດທີ່ເຮົາປູກນໍາວ່າມັນມັກການໃຫ້ນໍ້າແບບໃດ.[92] ສໍາລັບ ສປປ ລາວ ແມ່ນຮຽກຮ້ອງໃຫ້ມີການປະສົມປະສານກັນກ່ຽວກັບການຄວບຄຸມນໍ້າ ແລະລະບົບຊົນລະປະທານທີ່ມີຄວາມເໝາະສົມທີ່ສຸດຕໍ່ກັບແຕ່ລະເຂດພື້ນທີ່ຢູ່ໃນປະເທດ ຊຶ່ງລະບົບຊົນລະປະທານຈາກນໍ້າໜ້າດິນທີ່ມີຂະໜາດນ້ອຍ ແລະຈຸນລະຊົນລະປະທານນັ້ນ ແມ່ນເຫັນວ່າມີຄວາມເໝາະສົມຫຼາຍກວ່າ ໂດຍສະເພາະແມ່ນສໍາລັບເຂດພື້ນທີ່ສູງຊັນ.[93] ຈະຕ້ອງໄດ້ມີຄວາມພະຍາຍາມໃນການນໍາໃຊ້ທ່າແຮງຂອງຊົນລະປະທານຂະໜາດນ້ອຍ ແລະຈຸນລະຊົນລະປະທານ (ຂຶ້ນຢູ່ກັບແຫຼ່ງນໍ້າ) ແລະທ່າແຮງຂອງການນໍາໃຊ້ນໍ້າໃຕ້ດິນດ້ວຍການເຈາະບາດານ ຫຼືຂຸດສ້າງຫຼາຍຂຶ້ນແທນທີ່ຈະສ້າງໂຄງການເກັບກັກນໍ້າຂະໜາດໃຫຍ່ຫຼາຍຂຶ້ນ. ຢູ່ໃນບັນດາເຂດທີ່ຂາດແຄນນໍ້າໜ້າດິນນັ້ນ, ທາງເລືອກອັນໜຶ່ງແມ່ນຈະຕ້ອງໄດ້ຂຸດເປັນໜອງ ຫຼືສ້າງເປັນຖັງ ເພື່ອເກັບກັກນໍ້າໃນຍາມຝົນໄວ້ຢູ່ທາງເທິງ ແລ້ວຈຶ່ງຄ່ອຍປ່ອຍ

ຊົນລົງໃສ່ດິນປູກຝັງຢູ່ຂ້າງລຸ່ມ. ຢູ່ໃນບ່ອນທີ່ມີນ້ຳໜ້າດິນຫຼາຍແມ່ນຄວນຈະຕ້ອງໄດ້ນຳໃຊ້ຈັກສູບນ້ຳໄຟຟ້າຂະໜາດນ້ອຍທີ່ມີກຳລັງແຮງປະມານ 3-5 ແຮງມ້າ.[94] ອີກອັນໜຶ່ງທີ່ຈະຕ້ອງຈົດຈຳໄວ້ນັ້ນ ແມ່ນໂຄງການຊົນລະປະທານຂະໜາດນ້ອຍ ແລະຈຸນລະຊົນລະປະທານ ແມ່ນມີຜົນກະທົບຕໍ່ລະບົບນິເວດໜ້ອຍທີ່ສຸດ ຫຼືບໍ່ກໍ່ບໍ່ມີເລີຍ.

ບັນດາອົງການຕ່າງໆຢູ່ພາຍໃນປະເທດ ໄດ້ມີການກະກຽມແຕ້ມແຜນທີ່ລະອຽດກ່ຽວກັບອຸທົກກວິທະຍາແລ້ວ; ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ຍັງບໍ່ເປັນທີ່ຮູ້ຈັກວ່າມັນໄດ້ລວມເອົາແຫຼ່ງນ້ຳໜ້າດິນເຂົ້ານຳຫຼືບໍ່. ການແຕ້ມແຜນທີ່ນີ້ຈະຊ່ວຍໃນການຊຸກຍູ້ການປະສົມປະສານວິທີທາງເລືອກກ່ຽວກັບການຊົນລະປະທານ.

ສິ່ງທ້າທາຍທີ່ສຳຄັນນັ້ນ, ແມ່ນການປະສານງານກັນລະຫວ່າງຄູ່ຮ່ວມພັດທະນາຕ່າງໆ. ໃນປັດຈຸບັນນີ້, ຊຸມຊົນຄູ່ຮ່ວມພັດທະນາໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອໃນການລົງທຶນຕ່າງໆເປັນຈຳນວນຫຼາຍ ສຳລັບການພັດທະນາບັນດາໂຄງການຊົນລະປະທານ. ແຕ່ລະຄູ່ຮ່ວມພັດທະນາແມ່ນມີວິທີການຂອງຕົນເອງຢູ່ໃນຂົງເຂດໂຄງການທີ່ເຂົາເຈົ້າໄດ້ໃຫ້ບໍລິການໃຫ້ທຶນ. ການປະສານທຶນຂອງຜູ້ໃຫ້ທຶນແມ່ນມີຄວາມຈຳເປັນສຳລັບການພັດທະນາ "ວິທີການຂອງຂະແໜງການ" ຫຼາຍກວ່າ "ວິທີການຂອງໂຄງການ".

ຜົນສຳເລັດຂອງການຊົນລະປະທານຢູ່ບັນດາປະເທດທີ່ມີຟາມຂະໜາດນ້ອຍນັ້ນ ແມ່ນຍ້ອນໄດ້ມີການສ້າງຕັ້ງສະມາຄົມຜູ້ຊົມໃຊ້ນ້ຳທີ່ມີປະສິດທິຜົນ ຊຶ່ງເຂົາເຈົ້າໄດ້ເປັນຜູ້ຕັດສິນໃຈກ່ຽວກັບການແຈກຈ່າຍນ້ຳ (ລວມທັງປະລິມານ ແລະເວລາ), ການຫຼີກລ່ຽງການສິ້ນເປືອງ, ການສ້ອມແປງ, ການຈ່າຍ, ການເກັບຄ່າທຳນຽມ, ການປັບໃໝ່ ແລະອື່ນໆ. ດັ່ງທີ່ໄດ້ກ່າວມາກ່ອນນັ້ນ, ກ່ຽວກັບສາຍສຳພັນຂອງການໂຮມທີ່ດິນນັ້ນ ບັນດາສະມາຄົມຊາວກະສິກອນແມ່ນມີຄວາມຈຳເປັນຕ້ອງໄດ້ຮັບການເພີ່ມທະວີຄວາມເຂັ້ມແຂງ ແລະເຮັດໃຫ້ເປັນປະຈຳ. ບັນດາພະນັກງານທີ່ເຮັດວຽກກ່ຽວກັບການພັດທະນາໂດຍໄດ້ຜ່ານການຝຶກອົບຮົມເປັນຢ່າງດີນັ້ນ ແມ່ນສາມາດເຮັດວຽກກ່ຽວກັບເລື່ອງນີ້ໄດ້ດີ.

**ຕາຕະລາງ 4.4: ອັດຕາສ່ວນຂອງຈຳນວນບ້ານທີ່ໄດ້ຊົມໃຊ້ຊົນລະປະທານປະເພດຕ່າງໆ**

| ຂົງເຂດ/ປະເພດ/ ບ້ານ | ຝາຍນ້ຳລົ້ນຖາວອນ(%) | ອ່າງເກັບນ້ຳ (%) | ຈັກສູບນ້ຳ (%) | ປະຕູນ້ຳ/ຄູກັນນ້ຳ (%) | ຝາຍປະຖົມປະຖານ(%) | ຝາຍກອຍຫີນ (%) |
|---|---|---|---|---|---|---|
| ພາກເໜືອ | 25,3 | 2,4 | 1,6 | 3,5 | 47,9 | 10,6 |
| ພາກກາງ | 11,6 | 7,5 | 10,9 | 3,1 | 16,8 | 4,9 |
| ພາກໃຕ້ | 7,6 | 1,5 | 14 | 1,8 | 11,6 | 2,2 |
| **ສປປ ລາວ** | **16,7** | **4,1** | **7,5** | **3** | **29,3** | **6,8** |
| ເຂດຊົນນະບົດທີ່ມີຖະໜົນ | 18,6 | 4,8 | 7,7 | 3,2 | 30,1 | 7,1 |
| ເຂດຊົນນະບົດທີ່ບໍ່ມີຖະໜົນ | 8,0 | 0,7 | 6,4 | 2,1 | 25,4 | 5,7 |
| ເຂດທົ່ງພຽງ | 10,7 | 6,4 | 18,5 | 2,9 | 14,8 | 2,2 |
| ເຂດພູດອຍ | 15,6 | 1,7 | 0,5 | 2,6 | 34,4 | 8,7 |
| ເຂດພູພຽງ | 28 | 4,7 | 2,5 | 4,1 | 42,3 | 10,8 |
| ເຂດປະສົມ | 10,7 | 7,1 | 3,6 | n.a. | 14,3 | n.a. |

ແຫຼ່ງຂໍ້ມູນ: ການສຳຫຼວດກະສິກຳຂອງລາວ, 2010-2011 (ວິໄຈໂດຍກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ).

ໝາຍເຫດ: ຈຳນວນຕົວເລກທີ່ຢູ່ໃນຕາຕະລາງນີ້ແມ່ນບໍ່ໄດ້ຕັ້ງໃຈທີ່ຈະເພີ່ມໃຫ້ມັນເປັນ 100 ເນື່ອງຈາກພວກມັນໄດ້ສະແດງໃຫ້ເຫັນພຽງແຕ່ຈຳນວນບ້ານທີ່ໄດ້ຊົມໃຊ້ບໍລິການຊົນລະປະທານເທົ່ານັ້ນ (ມີຫຼາຍບ້ານແມ່ນບໍ່ໄດ້ຊົມໃຊ້ຊົນລະປະທານເລີຍ).

## ການລົງທຶນໃສ່ການກະສິກຳ: ເງິນກູ້ເພື່ອການປູກພືດ

ການເຮັດການກະສິກຳກໍ່ຄືກັບທຸລະກິດອື່ນໆ ແມ່ນມີຄວາມຮຽກຮ້ອງຕ້ອງການສິນເຊື່ອສຳລັບທຶນຄົງທີ່ (ເຄື່ອງມື ແລະອື່ນໆ) ແລະທຶນໝູນວຽນ (ເມັດພັນ, ຝຸ່ນ, ແຮງງານ ແລະຫຼືຈ້າງເຄື່ອງຈັກຕາມຊ່ວງເວລາເງິນກູ້ເພື່ອປູກພືດຕາມລະດູການ). ນອກຈາກນັ້ນ, ເຂົາເຈົ້າກໍ່ຍັງຕ້ອງການສິນເຊື່ອເພື່ອໃຊ້ຈ່າຍສຳລັບການດຳລົງຊີວິດກ່ອນທີ່ຈະໄດ້ຂາຍຜົນລະປູກ (ເພື່ອລ້ຽງກຸ່ມຕົນເອງ) ຖ້າຫາກເຂົາເຈົ້າບໍ່ມີເງິນທ້ອນປະຢັດທີ່ພຽງພໍຈາກລະດູການຜ່ານມາ ໂດຍສະເພາະແມ່ນການກະສິກຳທີ່ເປັນຟາມຂະໜາດນ້ອຍ. ຢູ່ໃນຫຼາຍປະເທດກຳລັງພັດທະນາ, ສິນເຊື່ອສອງປະເພດທີ່ມາຈາກຂະແໜງການທີ່ເປັນທາງການ ຫຼືສະຖາບັນການເງິນສະເພາະຂອງລັດຖະບານ ທີ່ໄດ້ໃຫ້ແກ່ຊາວກະສິກອນນັ້ນແມ່ນ: ເງິນກູ້ຕາມກຳນົດເພື່ອການປັບປຸງຖານຂອງທຶນ ແລະເງິນກູ້ເພື່ອການປູກພືດຕາມຄວາມຮຽກຮ້ອງຕ້ອງການຕາມລະດູການ. ນອກຈາກນັ້ນ, ບັນດາສະຖາບັນການເງິນຈຸລະພາກກໍ່ໄດ້ໃຫ້ເງິນກູ້ແກ່ ຜູ້ທີ່ທຸກຍາກ ເພື່ອສະໜັບສະໜູນຊ່ວຍເຫຼືອຄວາມຈຳເປັນອັນຮີບດ່ວນຂອງເຂົາເຈົ້າ ລວມທັງເພື່ອຊ່ວຍເຂົາເຈົ້າໃນການລິເລີ່ມທຸລະກິດຂະໜາດນ້ອຍທີ່ບໍ່ແມ່ນການກະສິກຳ. ສະຖາບັນການເງິນສະເພາະຂອງລັດເພື່ອການສົ່ງເສີມຂະແໜງການກະສິກຳໂດຍສະເພາະ, ຕາມປົກກະຕິແລ້ວແມ່ນໄດ້ໃຫ້ເງິນກູ້ໃນອັດຕາທີ່ມີການອຸດໜູນ (ຖືກຊຸມ).

ດັ່ງທີ່ຢູ່ໃນຫຼາຍໆປະເທດກຳລັງພັດທະນາ, ຂະແໜງການທະນາຄານຕາມປະເພນີນິຍົມຢູ່ໃນ ສປປ ລາວ ຕາມປົກກະຕິແລ້ວ ແມ່ນບໍ່ຄ່ອຍຈະໃຫ້ເງິນກູ້ແກ່ຟາມກະສິກຳຂະໜາດນ້ອຍ. ເງິນກູ້ທີ່ໃຫ້ແກ່ການກະສິກຳແມ່ນຖືກພິຈາລະນາວ່າມີຄວາມສ່ຽງ ເນື່ອງຈາກຊາວກະສິກອນສ່ວນຫຼາຍແມ່ນບໍ່ມີໃບຕາດິນ (ບໍ່ມີຫຼັກຊັບຄ້ຳປະກັນ), ບັນດາຊາວກະສິກອນແມ່ນຂຶ້ນກັບຄວາມບໍ່ແນ່ນອນຂອງທຳມະຊາດ ແລະບໍ່ມີການຄວບຄຸມເໜືອຕະຫຼາດ, ຮູບແບບການກະສິກຳກຸ່ມຕົນເອງໄດ້ເຮັດໃຫ້ມີຄວາມແຕກຕ່າງກັນໜ້ອຍໜຶ່ງລະຫວ່າງທຸລະກິດ ແລະການໃຊ້ຈ່າຍຂອງຄົວເຮືອນ ແລະການດຳເນີນງານຂອງແຕ່ລະຟາມ (ເງິນກູ້ມີຂະໜາດນ້ອຍ) ແມ່ນນ້ອຍຫຼາຍສຳລັບການສ້າງກຳໄລຂອງທະນາຄານ.[95] ບັນຫານີ້ແມ່ນໄດ້ສະແດງໄວ້ຂ້າງລຸ່ມນີ້:

- ທະນາຄານສົ່ງເສີມກະສິກຳ ແມ່ນມັກຈະໃຫ້ເງິນກູ້ແກ່ການລົງທຶນພາກທຸລະກິດ ແລະການໃຊ້ຈ່າຍສ່ວນບຸກຄົນເປັນສ່ວນຫຼາຍ ເຊັ່ນ: ການຊື້ພາຫານະ (ລົດຍົນ, ລົດຈັກ), ການປິ່ນປົວໃນໂຮງໝໍ, ການສຶກສາ, ການແຕ່ງງານ, ການໃຊ້ຈ່າຍພາກຄົວເຮືອນ ຫຼືເຄື່ອງໃຊ້ຫ້ອງການ, ແລະ ອື່ນໆ.[96] ດັ່ງນັ້ນ, ຈຶ່ງສັງເກດເຫັນວ່າບໍ່ມີການກ່າວເຖິງເງິນກູ້ເພື່ອການປູກຝັງຢູ່ໃນບັນຊີນີ້. ນອກຈາກນັ້ນ, ໜຶ່ງໃນບັນດາເງື່ອນໄຂຕ່າງໆສຳລັບການຂະຫຍາຍເງິນກູ້ອອກໄປນັ້ນ ແມ່ນບັນດາຜູ້ກູ້ມີທີ່ດິນທີ່ຕົນເອງຖືຄອງຖືກຕ້ອງຕາມກົດໝາຍໜ້ອຍ ຊຶ່ງຊາວກະສິກອນລາວຈຳນວນຫຼາຍ ໂດຍສະເພາະແມ່ນຊາວກະສິກອນຂະໜາດນ້ອຍ ແລະຜູ້ທີ່ຢູ່ໃນເຂດຊົນນະບົດຫ່າງໄກແມ່ນບໍ່ມີທີ່ດິນເປັນກຳມະສິດຂອງຕົນເອງເລີຍ.

- ທະນາຄານ ACLEDA ທີ່ມີເຄືອຂ່າຍສາຂາຢູ່ 14 ແຫ່ງນັ້ນ ໄດ້ໃຫ້ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ, ແຕ່ກໍ່ບໍ່ຈຳເປັນວ່າຕ້ອງໃຫ້ແກ່ກິດຈະການທີ່ດຳເນີນການດ້ານກະສິກຳ ແລະບໍ່ແມ່ນເງິນກູ້ເພື່ອການປູກຝັງໂດຍສະເພາະ. ທະນາຄານນີ້ກໍ່ຮຽກຮ້ອງສິ່ງຄ້ຳປະກັນເປັນໃບຕາດິນ ເພື່ອການອະນຸມັດເງິນກູ້ເຊັ່ນກັນ.[97]

- ທະນາຄານນະໂຍບາຍ ທີ່ມີສາຂາຢູ່ 7 ແຂວງ ແລະມີໜ່ວຍບໍລິການຢູ່ 49 ແຫ່ງ ໄດ້ສະໜອງສິນເຊື່ອໃຫ້ແກ່ຊາວກະສິກອນຢູ່ໃນ 64 ເມືອງທີ່ທຸກຍາກທີ່ສຸດ.[98] ໄດ້ໃຫ້ເງິນກູ້ເພື່ອສະໜັບສະໜູນການຜະລິດກະສິກຳເປັນສິນຄ້າ (ການປູກຝັງ ແລະລ້ຽງສັດ) ແລະການປ່າໄມ້, ອຸດສາຫະກຳຂະໜາດນ້ອຍ (ລວມທັງການປຸງແຕ່ງກະສິກຳ), ຫັດຖະກຳ ແລະການບໍລິການຢູ່ໃນເຂດຊົນນະບົດ. ລູກຄ້າແມ່ນຊາວກະສິກອນສ່ວນບຸກຄົນ (ລວມທັງຜູ້ທີ່ເປັນຊົນເຜົ່າ) ຜູ້ທີ່ຢູ່ໃນເຂດຊົນນະບົດຫ່າງໄກເປັນຕົ້ນຕໍ. ທະນາຄານນີ້ປ່ອຍເງິນກູ້ໂດຍກົງໃຫ້ແກ່ບັນດາຊາວກະສິກອນຜູ້ທີ່ຢູ່ໃນບັນຊີຄອບຄົວທຸກຍາກ. ອັດຕາດອກເບ້ຍຕໍ່ປີແມ່ນ 3-7% ຊຶ່ງເຫັນວ່າຕ່ຳກວ່າສະຖາບັນການເງິນອື່ນໆ. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງບໍ່ໄດ້ກ່າວເຖິງເງິນກູ້ເພື່ອການປູກຝັງຢ່າງຈະແຈ້ງເທື່ອ ແລະກໍ່ບໍ່ແມ່ນເງິນກູ້ທີ່ຕັ້ງໃຈຈະໃຫ້ແກ່ຊາວກະສິກອນທັງໝົດ.

- ສິນເຊື່ອຈຸລະພາກ ແມ່ນໄດ້ມີການກ່າວເຖິງຫຼາຍ ແລະບັນດາຄູ່ຮ່ວມພັດທະນາສາກົນ ແລະ NGOs ຈຳນວນໜຶ່ງກໍ່ໄດ້ສະໜອງເງິນກູ້ຢູ່ພາຍໃຕ້ຄັນຮົ່ມນີ້. ອັດຕາດອກເບ້ຍຕໍ່ປີແມ່ນປະມານ 18%. ເຖິງຢ່າງໃດກໍ່ຕາມ, ສິນ

ເຊື່ອຂະໜາດນ້ອຍນີ້ກໍ່ບໍ່ແມ່ນເງິນກູ້ເພື່ອການປູກຝັງ. ມັນເປັນເງິນກູ້ທີ່ເໝາະສົມສຳລັບໄລຍະສັ້ນ ແລະເພື່ອທຸລະກິດຂະໜາດນ້ອຍທີ່ມີລາຍໄດ້ສູງ ຫຼືຊື້ຊັບສິນຂະໜາດນ້ອຍ ແຕ່ບໍ່ແມ່ນເພື່ອການລົງທຶນສຳລັບການປູກພືດເປັນລະດູການ.

ໃນແຫຼ່ງເງິນກູ້ສິນເຊື່ອຕ່າງໆທັງໝົດນີ້ ແມ່ນມີແຕ່ທະນາຄານນະໂຍບາຍເທົ່ານັ້ນທີ່ໃຫ້ເງິນກູ້ກ້ອນນ້ອຍ (ວົງເງິນກູ້ໜ້ອຍ) ແກ່ບັນດາກຸ່ມຜູ້ກູ້ທີ່ຖືກເລືອກ ແລະບໍ່ມັກທີ່ຈະໃຫ້ເງິນກູ້ແກ່ຊາວກະສິກອນຂະໜາດນ້ອຍ ຫຼືຊາວກະສິກອນຜູ້ທີ່ບໍ່ມີເອກະສານທີ່ດິນ (ໃບຕາດິນທີ່ເປັນທາງການ). ມັນບໍ່ໜ້າປະຫຼາດໃຈເລີຍທີ່ວ່າ ລວມທັງໝົດທຸກໆແຫຼ່ງເງິນກູ້ເຫຼົ່ານີ້ເຂົ້າກັນ ແມ່ນສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານການເງິນຂອງການກະສິກຳໃນອັດຕາສ່ວນທີ່ນ້ອຍເທົ່ານັ້ນ. ແຫຼ່ງເງິນກູ້ຂອງຊາວກະສິກອນສ່ວນຫຼາຍແມ່ນມາຈາກພໍ່ຄ້າເງິນກູ້ເອກະຊົນ ສຳລັບຄວາມຮຽກຮ້ອງຕ້ອງການເປັນຊ່ວງໄລຍະ ຫຼືເປັນລະດູການ ທີ່ມີອັດຕາດອກເບັ້ຍຕໍ່ປີສູງເຖິງ 30%.

ເພື່ອແກ້ໄຂເລື່ອງດັ່ງກ່າວນີ້, ຂັ້ນຕອນອັນຮີບດ່ວນແມ່ນຈະຕ້ອງໄດ້ຂະຫຍາຍຂອບເຂດການປົກຄຸມຂອງທະນາຄານນະໂຍບາຍ ເພື່ອໃຫ້ກວມເອົາທົ່ວປະເທດ ແລະຊາວກະສິກອນທຸກຄົນ, ທັງສຸມໃສ່ສະເພາະເງິນກູ້ເພື່ອການກະສິກຳ (ປູກຝັງ) ຕາມລະດູການ. ການຂະຫຍາຍໂຄງການອອກໃບຕາດິນຢ່າງໄວວາ ກໍ່ຈະຊ່ວຍສະໜັບສະໜູນຂະບວນການນີ້ເຊັ່ນກັນ.

## ການລົງທຶນໃສ່ການກະສິກຳ: ການປະກັນໄພພືດ

ເພື່ອຫລຸດຜ່ອນບັນດາຄວາມສ່ຽງທີ່ຊາວກະສິກອນປະເຊີນຢູ່ນັ້ນ ບາງປະເທດທີ່ກຳລັງພັດທະນາແມ່ນໄດ້ນຳໃຊ້ການປະກັນໄພພືດ. ເຂົາເຈົ້າໄດ້ວາງເປົ້າໝາຍໃສ່ສອງຕົວປ່ຽນ ຄື: ຜົນຜະລິດ ແລະລາຄາ. ຖ້າຫາກວ່າອັດຕາຜົນຜະລິດ ຫຼືລາຄາຕົກຕ່ຳກວ່າຂັ້ນຕ່ຳຢ່າງຮ້າຍແຮງ ແມ່ນຜູ້ຮັບປະກັນໄພຈະໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ຊາວກະສິກອນ.

ໃນປັດຈຸບັນນີ້, ແມ່ນຍັງບໍ່ທັນມີການປະກັນໄພພືດຢູ່ໃນ ສປປ ລາວ. ປະສົບປະການຂອງປະເທດ ອິນເດຍ ທີ່ເປັນປະເທດກຳລັງພັດທະນາໜຶ່ງຢູ່ໃນອາຊີ ຊຶ່ງຂ້ອນຂ້າງປະສົບຜົນສຳເລັດຫຼາຍກ່ຽວກັບເລື່ອງນີ້ (ເບິ່ງຢູ່ໃນກ່ອງທີ 4.2). ຖ້າບັນດາອົງການຕ່າງໆຢູ່ໃນ ສປປ ລາວ ຫາກມີຄວາມປະສົງທີ່ຈະປະກາດໃຊ້ໂຄງການໆປະກັນໄພພືດ ແມ່ນຈະຕ້ອງໄດ້ມີການດຳເນີນການສຶກສາຈຳນວນໜຶ່ງກ່ຽວກັບຄວາມເປັນໄປໄດ້ຂອງມັນ ໂດຍເລີ່ມຈາກການກວມເອົາ (ການປົກຄຸມ) ແລະລາຍລະອຽດຕ່າງໆກ່ຽວກັບການດຳເນີນງານຂອງມັນ.

**ກ່ອງທີ 4.2: ການປະກັນໄພທາງດ້ານການກະສິກຳ - ບັນດາປະສົບປະການໃນປະເທດອິນເດຍ**

ການກະສິກຳຢູ່ໃນ ອິນເດຍ ແມ່ນມີຄວາມອ່ອນໄຫວຕໍ່ກັບຄວາມສ່ຽງສູງ ເຊັ່ນ: ແຫ້ງແລ້ງ ແລະນ້ຳຖ້ວມ. ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການປົກປ້ອງຊາວກະສິກອນຈາກໄພພິບັດທາງທຳມະຊາດຕ່າງໆ ແລະຮັບປະກັນໃຫ້ສິນເຊື່ອຂອງເຂົາເຈົ້າເປັນໄປຕາມກົດເກນຢູ່ໃນລະດູການຕໍ່ໄປ ເພື່ອເຮັດໃຫ້ລາຍຮັບຂອງຊາວກະສິກອນມີຄວາມໝັ້ນຄົງ. ສອງອົງປະກອບກ່ຽວກັບລາຍໄດ້ຂອງຊາວກະສິກອນນັ້ນແມ່ນຜົນຜະລິດ ແລະ ລາຄາ. ໂຄງການປະກັນໄພດ້ານກະສິກຳຢູ່ໃນ ອິນເດຍ ແມ່ນມີເປົ້າໝາຍໃສ່ສອງອົງປະກອບນີ້ ໂດຍຜ່ານນະໂຍບາຍປະກັນໄພຢ່າງດຽວ ເພື່ອຮັບປະກັນໃຫ້ຊາວກະສິກອນສາມາດໄດ້ຮັບການຄ້ຳປະກັນລາຍໄດ້ຂອງເຂົາເຈົ້າ. ການກວມເອົາຂອງມັນແມ່ນສຳລັບລະດູການຜະລິດດຽວ.

ໂຄງການນີ້ໄດ້ໃຫ້ການປົກປ້ອງລາຍໄດ້ທີ່ຮັບປະກັນຂອງຊາວກະສິກອນ ດ້ວຍການປະກັນໄພຄວາມສ່ຽງດ້ານການຜະລິດ ແລະຕະຫຼາດ ຊຶ່ງເຮັດໃຫ້ຄ່າສະເລ່ຍຂອງຜົນຜະລິດເພີ່ມຂຶ້ນຕາມລາຄາທີ່ຄາດໄວ້. ຖ້າລາຍໄດ້ຕົວຈິງຫາກຕໍ່າກວ່າລາຍໄດ້ທີ່ໄດ້ຄໍ້າປະກັນໄວ້ ແມ່ນຊາວກະສິກອນທີ່ໄດ້ເຮັດການປະກັນຕົນນັ້ນຈະໄດ້ຮັບຄ່າຊົດເຊີຍຕາມຈຳນວນທີ່ຂາດໄປນັ້ນ. ໃນທຳອິດ, ໂຄງການນີ້ແມ່ນກວມເອົາພຽງແຕ່ເຂົ້າ ແລະເຂົ້າບະເລເທົ່ານັ້ນ ແຕ່ວ່າພາຍຫຼັງມາກໍ່ໄດ້ຂະຫຍາຍໄປສູ່ພືດອື່ນນຳ.

ບໍລິສັດໄດ້ດຳເນີນການຕາມພື້ນຖານຂອງ "ວິທີການຕາມຂົງເຂດ" ຊຶ່ງເຂດຕ່າງໆແມ່ນໄດ້ຖືກກຳນົດໄວ້ສຳລັບແຕ່ລະພືດທີ່ໄດ້ແຈ້ງໃຫ້ຊາບ ແມ່ນແຕ່ຢູ່ໃນເຂດທີ່ມີໄພພິບັດແຜ່ຫຼາຍກໍ່ຕາມ (ເຊັ່ນ: ພາຍຸໝາກເຫັບ, ດິນຖະຫຼົ່ມ, ພາຍຸໄຊໂຄຼນ ແລະນໍ້າຖ້ວມ). ພາຍໃຕ້ໂຄງການນີ້, ແຕ່ລະໜ່ວຍງານທ້ອງຖິ່ນຂອງລັດຖະບານ ໄດ້ຖືກຮຽກຮ້ອງໃຫ້ມີການກຳນົດ "ເຂດຕ່າງໆເປັນອັນດຽວກັນ" ເພື່ອຈຸດປະສົງຂອງການກຳນົດອັດຕາຜົນຜະລິດ ແລະລວມທັງການກຳນົດຄ່າຜິດດ່ຽງຢູ່ພາຍໃນຂອງພວກມັນກໍ່ຕ້ອງໄດ້ມີການພິຈາລະນາ "ຕາມປົກກະຕິ". ຖ້າຜົນຜະລິດລາຍໄດ້ຫາກຕົກຕໍ່າລົງກວ່າຂອບເຂດທີ່ກຳນົດໄວ້ນັ້ນ ແມ່ນຈະຕ້ອງໄດ້ມີການຈ່າຍຄ່າຊົດເຊີຍຄືນ.

ແຫຼ່ງຂໍ້ມູນ: ຖືກຮັບຮອງຈາກ Vyas ແລະ Singh (2006).

## ການບໍລິການສົ່ງເສີມຟາມ

ການສົ່ງເສີມການກະສິກຳແມ່ນເປັນການໃຫ້ການບໍລິການສຳລັບການນຳເອົາຜົນຂອງການສຶກສາທາງວິທະຍາສາດ ແລະຄວາມຮູ້ໃໝ່ມານຳໃຊ້ເຂົ້າໃນການເຮັດການກະສິກຳຕົວຈິງ ໂດຍຜ່ານການໃຫ້ການສຶກສາຄວາມຮູ້ແກ່ຊາວກະສິກອນ. ມັນປະກອບດ້ວຍບັນດາກິດຈະກຳການຮຽນ-ການສອນ ແລະການສື່ສານທີ່ກວ້າງຂວາງ ແລະຫຼາກຫຼາຍ ທີ່ດຳເນີນການໂດຍພະນັກງານສົ່ງເສີມ (ບັນດາຜູ້ຊ່ຽວຊານ) ຢູ່ໃນການກະສິກຳ ແລະບັນດາກິດຈະກຳທີ່ກ່ຽວພັນກັບມັນ. ຄວາມຮູ້ທາງດ້ານວິທະຍາສາດແມ່ນເປັນສິ່ງສຳຄັນເທົ່າໆກັບບັນດາປັດໃຈທີ່ນຳເຂົ້າຮັບໃຊ້ອື່ນໆ ແລະຢູ່ໃນບາງປະເທດແມ່ນເຫັນວ່າຊາວກະສິກອນເຕັມໃຈທີ່ຈະຈ່າຍໃຫ້ແກ່ມັນ ຫຼືມີຂໍ້ສະເໜີເພື່ອປ່ຽນແປງການບໍລິການສົ່ງເສີມນັ້ນ.[99]

ການບໍລິການສົ່ງເສີມຟາມໃນມິຕິໃໝ່ທີ່ລວບລວມໄດ້ໃນປັດຈຸບັນນີ້ ແມ່ນເຂົາເຈົ້າບໍ່ຖືກຈຳກັດການແນະນຳໃຫ້ແກ່ຊາວກະສິກອນ (ຢູ່ໃນລັກສະນະທາງດຽວ) ແຕ່ຫາກຍັງຂະຫຍາຍໄປສູ່ການຊອກຫາຄຳຕອບຕໍ່ບັນຫາສະເພາະຂອງຊາວກະສິກອນທີ່ເຂົາເຈົ້າປະສົບພົບພໍ້ຈາກພະນັກງານສົ່ງເສີມ (ການສົນທະນາສອງທາງ).[100] ໃນເຫດຜົນ ຫຼືຄວາມໝາຍນີ້, ພະນັກງານສົ່ງເສີມກໍ່ໄດ້ຮຽນຮູ້ຈາກຊາວກະສິກອນເຊັ່ນດຽວກັນ. ການບໍລິການສົ່ງເສີມ ຈາກປະເທດໜຶ່ງ (ເວລາໜຶ່ງ) ໄປສູ່ປະເທດອື່ນແມ່ນມີຄວາມແຕກຕ່າງກັນ. ຕົວຢ່າງ: ພະນັກງານສົ່ງເສີມຢູ່ໃນປະເທດອິນເດຍ ແມ່ນໄດ້ແຈກຢາຍບັນດາຕົວຢ່າງຂອງເມັດພັນປະສົມທີ່ຫຼາກຫຼາຍ ແລະຝຸ່ນ (ປະມານ 1 ກິໂລກຣາມ ຕໍ່ຄອບຄົວ) ໃຫ້ຟຼີ ຊຶ່ງອັນນີ້ໝາຍຄວາມວ່າແມ່ນທັງການໃຫ້ການສາທິດ ແລະອຸດໜູນພ້ອມ.

ຢູ່ໃນ ສປປ ລາວ, ອົງການຂັ້ນສູງສຸດທີ່ເປັນຜູ້ກຳນົດຄວາມຕ້ອງການທາງດ້ານເຕັກນິກຂອງຟາມນັ້ນແມ່ນສະຖາບັນຄົ້ນຄວ້າກະສິກຳ ແລະປ່າໄມ້ ແຫ່ງຊາດ (NAFRI) ຊຶ່ງເປັນສະຖາບັນຄົ້ນຄວ້າ ແລະສົ່ງເສີມທີ່ຂຶ້ນກັບກະຊວງກະສິກຳ ແລະປ່າໄມ້. ບັນດາແຂວງ ແລະເມືອງຕ່າງໆກໍ່ມີພະແນກ ແລະ ຫ້ອງການສົ່ງເສີມຂອງເຂົາເຈົ້າເພື່ອຮ່າງ "ຊຸດຄວາມຮູ້" ກ່ຽວກັບພືດກະສິກຳ ແລະສັດລ້ຽງທີ່ອີງໃສ່ພູມມິປະເທດຂອງທ້ອງຖິ່ນ. ຢູ່ໃນລະດັບບ້ານກໍ່ມີອາສາສະໝັກທີ່ໄດ້ຮັບການຝຶກອົບຮົມເພື່ອເຮັດວຽກງານທີ່ຈຳເປັນ. ອັນນີ້ແມ່ນມີຄວາມຄ້າຍຄືກັນກັບລະບົບການຝຶກອົບຮົບ ແລະການລົງຢ້ຽມຢາມພື້ນທີ່ (T&V) ທີ່ຮູ້ກັນດີ ດ້ວຍການນຳພາຊາວກະສິກອນທີ່ຖືກເລືອກໄປຝຶກອົບຮົມ ແລ້ວມາເຮັດການສາທິດທີ່ມີຄວາມຈຳເປັນໃຫ້ແກ່ຊາວກະສິກອນຜູ້ອື່ນໆ. ເຖິງຢ່າງໃດກໍ່ຕາມ, ອັນທີ່ບໍ່ຄືກັນກັບລະບົບ T&V ນັ້ນ ແມ່ນມັນບໍ່ມີການສາທິດທົດລອງ (ນຳທາງ) ເພື່ອສາທິດຕົວຈິງກ່ຽວກັບຜົນກະທົບຂອງບັນດາເຕັກໂນໂລຢີໃໝ່ໆ ຫຼືບໍ່ກໍ່ຕ້ອງມີການໃຫ້ຕົວຢ່າງທີ່ຟຼີ, ຍົກເວັ້ນກໍລະນີທີ່ເຂົາເຈົ້າຫາກສາມາດຫາໄດ້ຈາກການລິເລີ່ມຂອງບັນດາຄູ່ຮ່ວມພັດທະນາ ຫຼືອົງການ NGO ຕ່າງໆ.

ບັນດາສິ່ງທ້າທາຍຕ່າງໆທີ່ມີຢູ່ໃນປັດຈຸບັນນີ້ ແມ່ນເປັນການປະເຊີນກັບເລື່ອງຕ່າງໆກ່ຽວກັບການສົ່ງເສີມຟາມທີ່ມີປະສິດທິພາບຢູ່ໃນ ສປປ ລາວ ແລະຄວາມເປັນໄປໄດ້ທີ່ຈະຕອບສະໜອງໃຫ້ແກ່ເຂົາເຈົ້າ ດັ່ງທີ່ມີຢູ່ຂ້າງລຸ່ມນີ້:

- ຍ້ອນຂາດແຄນຊັບພະຍາກອນຕ່າງໆ, ລັດຖະບານຈຶ່ງຕ້ອງອີງໃສ່ການສະໜັບສະໜູນຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ ສໍາລັບບັນດາກິດຈະກໍາທີ່ກ່ຽວພັນກັບການສົ່ງເສີມການກະສິກໍາ. ເນື່ອງຈາກຊັບພະຍາກອນຂອງຄູ່ຮ່ວມພັດທະນາສ່ວນໃຫຍ່ແມ່ນໃຫ້ແກ່ໂຄງການ ຫຼາຍກວ່າທີ່ຈະໃຫ້ແກ່ຂະແໜງການ, ແຕ່ລະໂຄງການສົ່ງເສີມຢູ່ໃນເຂດທີ່ໂຄງການກໍາລັງດໍາເນີນການຢູ່ນັ້ນແມ່ນບໍ່ຄືກັນກັບຂອງຜູ້ອື່ນ. ໂດຍຄວາມເປັນຈິງແລ້ວ, ຢູ່ໃນປະເທດແມ່ນມີບັນດາລະບົບສົ່ງເສີມທີ່ດໍາເນີນການຢ່າງເອກະລາດ (ແລະສິ່ງອໍານວຍຄວາມສະດວກດ້ານການກະສິກໍາອື່ນໆ) ເປັນຈໍານວນຫຼາຍ ຊຶ່ງແຕ່ລະລະບົບແມ່ນມີການຝຶກອົບຮົມ ແລະ ກົນໄກຂໍ້ມູນຂ່າວສານກ່ຽວກັບຮູບແບບວິທີຈອງການປູກພືດ, ການຄວບຄຸມສັດຕູພືດ, ການຄຸ້ມຄອງນໍ້າ ແລະທຸກໆຢ່າງທີ່ກ່ຽວກັບການພັດທະນາກະສິກໍາທີ່ແຍກກັນພໍໃຜພໍມັນ. ຮູບແບບຕ່າງໆຂອງລະບົບການສົ່ງເສີມນີ້ອາດຈະບໍ່ເປັນລາງດີປານໃດສໍາລັບການສ້າງນະໂຍບາຍສົ່ງເສີມແຫ່ງຊາດ ເນື່ອງຈາກການປະສານງານທີ່ຢູ່ໃນລະດັບຊາດບໍ່ມີປະສິດທິພາບ. ນອກຈາກນັ້ນ, ແຕ່ລະໂຄງການກໍ່ມີອາຍຸຊ່ວງໄລຍະດໍາເນີນງານທີ່ຈໍາກັດ (ສູງສຸດກໍ່ແມ່ນ 2-5 ປີ). ຮູ້ຢູ່ວ່າອັນນີ້ແມ່ນເປັນໜ້າທີ່ອັນໜັກໜ່ວງ ແຕ່ລະບົບເຫຼົ່ານີ້ແມ່ນໜ້າຈະຮຽກຮ້ອງຕ້ອງການບາງການປະສົມປະສານກັນ ຢູ່ໃນການປະສານງານກັບຄູ່ຮ່ວມພັດທະນາຕ່າງໆ.

**ຮູບທີ 4.1: ອັດຕາສ່ວນຂອງຈໍານວນບ້ານທີ່ພະນັກງານສົ່ງເສີມໄດ້ລົງຢ້ຽມຢາມ, 2012/2013**




ແຫຼ່ງຂໍ້ມູນ: LECS-5.

- ຕາມຂໍ້ມູນຂອງ LECS-5 ແມ່ນເຫັນວ່າການບໍລິການສົ່ງເສີມກະສິກໍາໄດ້ຂະຫຍາຍໄປເຖິງບໍ່ເກີນກວ່າ 55-60% ຂອງຈໍານວນຊາວກະສິກອນທັງໝົດ (ຮູບທີ 4.1). ເຖິງຢ່າງໃດກໍ່ຕາມ, ຕົວເລກນີ້ບາງທີ່ອາດຈະເປັນການຄາດຄະເນສູງເກີນໄປຄືກັນ, ໃນຂະນະທີ່ການສໍາຫຼວດກະສິກໍາ ປີ 2010-2011 ໄດ້ສະແດງໃຫ້ເຫັນວ່າມັນມີອັດຕາສ່ວນໜ້ອຍຫຼາຍ ຄືມີພຽງແຕ່ 18% ເທົ່ານັ້ນ.[101] ລັດຖະບານຈໍາເປັນທີ່ຈະຕ້ອງໄດ້ຂະຫຍາຍຂອບເຂດພື້ນທີ່ຂອງການບໍລິການສົ່ງເສີມຕ່າງໆຕື່ມອີກ. ເພື່ອລົງມືເຮັດອັນນີ້, ກໍ່ຕໍ່ເມື່ອມັນມີບຸກຄະລາກອນທີ່ໄດ້ຮັບການອົບຮົມ, ມີການຄໍານວນລາຍຈ່າຍທີ່ເໝາະສົມ ແລະມີການຈັດສັນຊັບພະຍາກອນຢູ່ພາຍໃນປະເທດຢ່າງພຽງພໍເສຍກ່ອນ ຊຶ່ງໃນປັດຈຸບັນນີ້ແມ່ນຍັງບໍ່ມີແນວນັ້ນເທື່ອ ແລະອັນນີ້ແມ່ນເປັນສິ່ງສໍາຄັນທີ່ສຸດທີ່ຈະຕ້ອງໄດ້ເຮັດ.

- ວຽກງານສົ່ງເສີມຢູ່ໃນເຂດພູດອຍແມ່ນເຮັດໄດ້ຍາກຫຼາຍ ຍ້ອນພື້ນທີ່ພູມມີປະເທດທຸລະກັນດານ ແລະບໍ່ມີເສັ້ນທາງໄປເຖິງ. ພະນັກງານສົ່ງເສີມ ແລະແມ່ນແຕ່ອາສາສະໝັກ ກໍ່ພົບວ່າມີຄວາມຫຍຸ້ງຍາກຫຼາຍທີ່ຈະໄປໃຫ້ຮອດໃຫ້ເຖິງບັນດາໝູ່ບ້ານນ້ອຍໆໄດ້. ລັດຖະບານໄດ້ມີແຜນງານການສ້າງເສັ້ນທາງເຊື່ອມຕໍ່ໄປສູ່ທົ່ວເຂດພູດອຍ, ເຖິງແມ່ນວ່າຈະເປັນເສັ້ນທາງທີ່ຍັງທຽວບໍ່ໄດ້ທັງສອງລະດູກໍ່ຕາມ ຊຶ່ງແຜນງານນີ້ອາດຈະຊ່ວຍເຮັດໃຫ້ພະນັກງານສົ່ງເສີມສາມາດໄປເຖິງບັນດາເຂດເຫຼົ່ານັ້ນໄດ້.

- ການທີ່ຈະໃຫ້ເຂົ້າເຖິງບັນດາກຸ່ມຊົນເຜົ່າຕ່າງໆນັ້ນໄດ້ກໍ່ເຫັນວ່າມີຄວາມຫຍຸ້ງຍາກຫຼາຍ ເນື່ອງຈາກເຂົາເຈົ້າບໍ່ສາມາດເວົ້າພາສາລາວໄດ້. ບັນດາຄວາມພະຍາຍາມທີ່ຈະບັນຈຸພະນັກງານສົ່ງເສີມທີ່ສາມາດເວົ້າສອງພາສາໄດ້ເຂົ້າຢູ່ໃນໜ່ວຍງານສົ່ງເສີມກະສິກໍາ ແມ່ນມີຄວາມຈໍາເປັນ ແລະ ຮຽກຮ້ອງຕ້ອງການຫຼາຍ ເພື່ອໃຫ້ສາມາດເຂົ້າເຖິງບັນດາຊຸມຊົນເຫຼົ່ານັ້ນໄດ້.

- ສປປ ລາວ ໄດ້ເຮັດການທົດລອງກ່ຽວກັບ "ການຮ່ວມການໂຮມ" ບ້ານຕ່າງໆເຂົ້າກັນ ເພື່ອໃຫ້ເປັນບ້ານທີ່ໃຫຍ່ຂຶ້ນ ແລະຈໍານວນບ້ານຢູ່ໃນປະເທດໜ້ອຍລົງ. ໃນດ້ານຫຼັກການແລ້ວ, ອັນນີ້ແມ່ນເປັນຂັ້ນຕອນທີ່ມີຄວາມຄືບໜ້າ ແຕ່ໃນເມື່ອນໍາເຂົາເຈົ້າມາໂຮມເຂົ້າກັນແລ້ວ ເຫັນວ່າບັນດາຊຸມຊົນຊົນເຜົ່າທີ່ແຕກຕ່າງກັນແມ່ນມີຄວາມຫຍຸ້ງຍາກໃນການຄົບຄ້າກັນ, ການສື່ສານລະຫວ່າງກັນ ຫຼືການກາຍເປັນສະມາຊິກສະມາຄົມຊາວກະສິກອນ ຫຼືສະມາຄົມອື່ນໆທີ່ເຂັ້ມແຂງ ຊຶ່ງອັນສໍາຄັນໃນທີ່ນີ້ແມ່ນສິ່ງກີດຂວາງດ້ານພາສາ. ສໍາລັບນະໂຍບາຍ 2 ຫຼື 3 ພາສານັ້ນ ແມ່ນໄດ້ມີການທົດລອງເຮັດແລ້ວຢູ່ໃນປະເທດອື່ນໆ ຊຶ່ງເຫັນວ່າຄວນຈະໄດ້ນໍາມາທົດລອງຢູ່ໃນ ສປປ ລາວ ເຊັ່ນກັນ. ຄວາມພະຍາຍາມນີ້ແມ່ນຈະຕ້ອງໄດ້ເຮັດດ້ວຍການແຕ່ງຕັ້ງ ຫຼືເລືອກເອົາຜູ້ນໍາຈາກຊຸມຊົນໆເຜົ່າຕ່າງໆເຂົ້າຢູ່ໃນຄະນະນໍາຂອງບ້ານ (ແລະເມືອງ) ແລະພະຍາຍາມນໍາເອົາເຂົາເຈົ້າເຂົ້າຮ່ວມຢູ່ໃນກະແສ ຫຼືຂະບວນການສໍາຄັນອື່ນຕື່ມອີກ.

- ການສໍາຫຼວດກະສິກໍາຂອງລາວ ໃນປີ 2010-2011 ໄດ້ສະແດງໃຫ້ເຫັນວ່າ ຍັງມີຢູ່ປະມານ 18% ຂອງເນື້ອທີ່ດິນປູກຝັງ ແມ່ນຖືກນໍາໃຊ້ເຂົ້າໃນການປູກເຂົ້າໄຮ່ (ໄຮ່ເລື່ອນລອຍ) ຊຶ່ງສ່ວນຫຼາຍຂອງພວກມັນແມ່ນຢູ່ໃນເຂດພູດອຍ ແລະບັນດາບ້ານທີ່ບໍ່ມີຖະໜົນຫົນທາງເຂົ້າເຖິງ. ລັດຖະບານໄດ້ມີຄວາມພະຍາຍາມຢ່າງຂະຫຍັນຂັນແຂງເພື່ອລຶບລ້າງກິດຈະກໍາທີ່ມີຜະລິດຕະພາບຕໍ່າ ແລະເປັນອັນຕະລາຍຕໍ່ລະບົບນິເວດນີ້ ແຕ່ວ່າຜົນສໍາເລັດຂອງມັນກໍ່ຍັງຈໍາກັດຢູ່.[102] ເຫດຜົນສໍາລັບອັນນີ້ແມ່ນ: ເຂດພື້ນທີ່ເຫຼົ່ານີ້ເປັນເຂດພູດອຍຫ່າງໄກສອກຫຼີກ ແລະເຂົ້າເຖິງໄດ້ຍາກ, ປະຊາຊົນບໍ່ຄຸ້ນເຄີຍກັບການເວົ້າພາສາລາວ ແລະວັດທະນາທໍາຕ່າງໆຂອງຊຸມຊົນເຂົາເຈົ້າ, ລວມທັງການເຮັດການກະສິກໍາ ແລະການດໍາລົງຊີວິດຂອງເຂົາເຈົ້າແມ່ນມີຄວາມແຕກຕ່າງໄປຈາກຜູ້ຄົນທີ່ດໍາລົງຊີວິດຢູ່ໃນເຂດທົ່ງພຽງ ຊຶ່ງມັນບໍ່ແມ່ນເລື່ອງງ່າຍປານໃດທີ່ຈະແກ້ໄຂບັນດາເລື່ອງລາວເຫຼົ່ານີ້ໃຫ້ໄດ້ຢ່າງມີປະສິດທິພາບ. ບາງທີການຄົ້ນຄວ້າທາງດ້ານມະນຸດວິທະຍາ (ແລະການສຶກສາ KAP) ອາດຈະສາມາດຊ່ວຍໃນການເຂົ້າໃຈກ່ຽວກັບວິທີປະຕິບັດທີ່ຍັງບໍ່ທັນສາມາດຮູ້ໄດ້ຈົນເຖິງບັດນີ້.

**ກ່ອງທີ 4.3: ບາງສິ່ງປະດິດສ້າງໃໝ່ທີ່ສາມາດເຮັດໃຫ້ເກີດຂຶ້ນໄດ້ໂດຍຜ່ານການສົ່ງເສີມວິທີການທີ່ເປັນລະບົບຟາມ**

ອົງປະກອບທີ່ສຳຄັນອັນໜຶ່ງຂອງການສົ່ງເສີມການກະສິກຳ ແມ່ນວິທີການທີ່ເຮັດໃຫ້ລະບົບ (ຟາມ) ເປັນທີ່ນິຍົມຊົມຊອບກັນທົ່ວໄປ. ລະບົບຟາມ, ແມ່ນຖືກກຳນົດໃຫ້ເປັນການທ້ອນໂຮມລະບົບຟາມທີ່ເປັນສ່ວນບຸກຄົນ, ເປັນຮູບແບບວິສາຫະກິດ, ເປັນການດຳລົງຊີວິດຂອງຄົວເຮືອນ ແລະຂໍ້ຫຍຸ້ງຍາກຕ່າງໆ ທີ່ມີຖານຊັບພະຍາກອນຕ່າງໆຄ້າຍຄືກັນເຂົ້າຮ່ວມກັນ ເພື່ອເຮັດໃຫ້ບັນດາຍຸດທະສາດການພັດທະນາ ແລະການແຊກແຊງຕ່າງໆ ມີຄວາມເໝາະສົມຫຼາຍຂຶ້ນ. ມັນຂຶ້ນກັບຂອບເຂດ ຫຼືຂະໜາດຂອງການວິໄຈ ຊຶ່ງລະບົບຟາມແມ່ນສາມາດປະກອບຂຶ້ນດ້ວຍຜູ້ຄົນ (ຊາວກະສິກອນ) ຈຳນວນໜຶ່ງ ຫຼືປະກອບດ້ວຍຫຼາຍພັນຄົວເຮືອນກໍ່ເປັນໄດ້.

ການຈັດປະເພດຂອງລະບົບຟາມແມ່ນອີງໃສ່ມາດຖານດັ່ງຕໍ່ໄປນີ້:

- ຖານຊັບພະຍາກອນທຳມະຊາດທີ່ສາມາດຫາໄດ້ ຫຼືມີຢູ່: ລວມທັງນ້ຳ, ທີ່ດິນ, ເຂດທົ່ງຫຍ້າ ແລະປ່າໄມ້, ພູມອາກາດ, ຄວາມສູງຈາກລະດັບນ້ຳທະເລ, ລັກສະນະຂອງໜ້າດິນ (ລວມທັງຄວາມຄ້ອງຊັນ), ຂະໜາດຂອງຟາມ, ການຄອບຄອງທີ່ດິນ ແລະອົງການຈັດຕັ້ງ ແມ່ນເປັນຕົວກຳນົດຈຳນວນໜຶ່ງທີ່ສຳຄັນຫຼາຍຢູ່ໃນນີ້.

- ຮູບແບບທີ່ສຳຄັນຂອງບັນດາກິດຈະກຳຟາມ ແລະການດຳລົງຊີວິດຂອງຄົວເຮືອນ ລວມທັງພື້ນທີ່ສຳລັບການປູກພືດ, ລ້ຽງສັດ, ປູກໄມ້, ລ້ຽງສັດນ້ຳ, ການລ້ຽງ ແລະລ່າສັດໃນປ່າ, ການປຸງແຕ່ງ ແລະບັນດາກິດຈະກຳທີ່ບໍ່ແມ່ນການກະສິກຳ, ແລະການເອົາໃຈໃສ່ໃນການນຳໃຊ້ເຕັກໂນໂລຢີທີ່ສຳຄັນຕົ້ນຕໍ ເພື່ອການເພີ່ມຜົນຜະລິດ ແລະການເຊື່ອມໂຍງກັນຂອງການປູກພືດຕ່າງໆ, ການລ້ຽງສັດ ແລະກິດຈະກຳອື່ນໆເຂົ້າກັນ.

ວິທີການທີ່ເປັນລະບົບຟາມ ໄດ້ສະເໜີໃຫ້ມີການເລືອກນຳໃຊ້ຊັບພະຍາກອນທີ່ມີຢູ່ສຳລັບບັນດາກິດຈະກຳທີ່ຢູ່ໃນຮອບວຽນໜຶ່ງປີ ຕາມວິທີການທີ່ມີຄວາມຍືນຍົງ. ຢູ່ໃນ ສປປ ລາວ, ຕົວຢ່າງ: ຢູ່ໃນເຂດທົ່ງພຽງແມ່ນຍັງມີຊັບພະຍາກອນທີ່ອຸດົມສົມບູນຢູ່ ເຊັ່ນ: ດິນທີ່ຊຸ່ມຊື່ນ, ນ້ຳ, ປ່າໄມ້, ເຄື່ອງປ່າຂອງດົງ ແລະປູປານາ້ຳ. ຢູ່ໃນລະບົບນີ້, ແມ່ນມັນມີຄວາມເປັນໄປໄດ້ທີ່ຈະເກັບກ່ຽວໄດ້ 2-3 ຮອບຕໍ່ປີ, ນຳໃຊ້ສັດລ້ຽງທີ່ຢູ່ໃນບ້ານ ເພື່ອເພີ່ມພະລັງອຳນາດໃນການຜະລິດຊີ້ນ, ໄຂ່, (ບາງທີ) ນົມ ແລະທັງຜົນໄດ້ຮັບຈາກການຈັບປາທຳມະຊາດຈຳນວນໜຶ່ງ.

**ການເພີ່ມຜົນຜະລິດເຂົ້າຢ່າງເປັນລະບົບ:**

ລະບົບຂອງການເພີ່ມຜົນຜະລິດເຂົ້າ (SRI) ແມ່ນວິທີການກະສິກຳນິເວດ ສຳລັບການເພີ່ມຜະລິດຕະພາບຂອງການຜະລິດເຂົ້າທີ່ໃຊ້ການຊົນລະປະທານ ດ້ວຍການປ່ຽນແປງການຄຸ້ມຄອງການປູກ, ທີ່ດິນ, ນ້ຳ ແລະສານອາຫານຕ່າງໆ. ມັນຈຳເປັນຕ້ອງໄດ້ເຮັດດັ່ງນີ້:

- ຖອນຕົ້ນເບ້ຍເຂົ້າກິບດຽວ (ຈາກຕາກ້າ) ທີ່ມີສອງໃບແລ້ວ (ມີອາຍຸ 8-12 ມື້) ໄປປູກ (ດຳ) ໃສ່ທົ່ງນາ ຫຼືເອີ້ນວ່າປູກກ້າກິບດຽວ

- ດຳຕົ້ນກ້ານັ້ນໃຫ້ຫ່າງກັນ 25 ຊັງຕີແມັດມົນທົນ ຫຼືຫຼາຍກວ່ານັ້ນ;
- ຮັກສາດິນໃຫ້ຊຸ່ມຊື່ນ ແລະໃຫ້ມີອາກາດລ່ອງດີ;
- ໃຊ້ຝຸ່ນທີ່ຈຳເປັນໃຫ້ຖືກກັບກາລະເວລາຂອງມັນ.

ວິທີການ SRI ແມ່ນຕ້ອງໄດ້ອີງໃສ່ສີ່ຫຼັກການ ດັ່ງນີ້: ອັນທຳອິດແມ່ນການດຳເນີນການປູກຕ້ອງທັນຕາມລະດູການ, ມີການຮັກສາຄວາມແຂງແຮງ (ສຸຂະພາບ) ຂອງຕົ້ນກ້າ, ປັບປຸງສະພາບຂອງດິນດ້ວຍການນຳໃຊ້ຝຸ່ນຊີວະພາບທີ່ຫຼາກຫຼາຍ, ແລະ ການນນຳໃຊ້ນ້ຳກໍ່ຕ້ອງມີການຫລຸດຜ່ອນ ແລະຄວບຄຸມເປັນຢ່າງດີ.

ການປັບປ່ຽນ ຫຼືການປັບຕົວແມ່ນຈະຕ້ອງໄດ້ເຮັດຢູ່ເລື້ອຍໆ ເພື່ອດັດປັບໃຫ້ເຂົ້າກັບການປ່ຽນແປງບັນດາຮູບແບບຂອງການປ່ຽນແປງສະພາບຂອງຝົນຟ້າອາກາດ, ສະພາບຂອງດິນ, ການມີແຮງງານ, ການຄວບຄຸມນ້ຳ, ການເຂົ້າເຖິງບັນດາປັດໄຈການຜະລິດຊີວະພາບ ແລະການຕັດສິນໃຈກ່ຽວກັບວ່າຈະເຮັດການຜະລິດກະສິກຳແບບຊີວະຫຼືບໍ່. ນອກຈາກຖືກນຳໃຊ້ເຂົ້າຢູ່ໃນການປູກເຂົ້າດ້ວຍລະບົບນ້ຳຊົນລະປະທານແລ້ວ, ບັນດາຫຼັກການຂອງ SRI ກໍ່ຍັງຖືກນຳໃຊ້ຢູ່ໃນການປູກເຂົ້າດ້ວຍນ້ຳຟ້າ ກໍ່ຄືການປູກພືດອື່ນໆອີກ ຊຶ່ງອັນນີ້ແມ່ນໄດ້ສະແດງໃຫ້ເຫັນຢູ່ໃນຜະລິດຕະພາບຂອງການຜະລິດທີ່ເພີ່ມຂຶ້ນ ຢູ່ໃນການປູກຝັງຕົວຈິງໃນປັດຈຸບັນນີ້. ຜົນໄດ້ຮັບຈາກ SRI ແມ່ນລວມມີ: ຜົນຜະລິດທີ່ເພີ່ມຂຶ້ນຈາກ 20%-100% ຫຼືຫຼາຍກວ່ານັ້ນ, ຈຳນວນເມັດພັນທີ່ຕ້ອງການສຳລັບການປູກໃນເນື້ອທີ່ເດີມກໍ່ຫລຸດລົງເຖິງ 90%, ແລະປະຢັດນ້ຳໄດ້ເຖິງ 50%.

ແຫຼ່ງຂໍ້ມູນ: ສຳລັບຄຳອະທິບາຍກ່ຽວກັບວິທີການລະບົບຟາມທີ່ກ່າວກ່ອນນັ້ນ ແມ່ນເບິ່ງຢູ່ໃນ www.fao.org/farmingsystems / description_en.htm.

ສຳລັບ SRI, ໃຫ້ເບິ່ງຢູ່ໃນ SRI International Network and Resource Centre, Cornell University College of Agricultural and Life Sciences, http://sri.cals.cornell.edu/aboutsri/origin/index.html.

## ຕະຫຼາດ ແລະລາຄາ

ໃນເມື່ອບັນດາຊາວກະສິກອນຊື່ນຊົມຍິນດີຕໍ່ກັບລາຄາ (ທີ່ສູງຂຶ້ນ) ພືດພັນຂອງເຂົາເຈົ້າ ແລ້ວເຂົາເຈົ້າກໍ່ຈະເພີ່ມການຜະລິດຫຼາຍຂຶ້ນ. ຜົນກະທົບໃນທີ່ນີ້ແມ່ນເຫັນໄດ້ຕາມຄວາມລ້າຊ້າຂອງເວລາ, ຍ້ອນບັນດາຊາວກະສິກອນໄດ້ໃຊ້ເວລາດົນນານຈຶ່ງເຫັນຜົນປະໂຫຍດ ແລະບັນດາພືດພັນນັ້ນກໍ່ໃຊ້ເວລາໃນການເຕີບໂຕດົນ.[103] ການໃຫ້ການຊ່ວຍເຫຼືອເພື່ອເຮັດໃຫ້ລາຄາມີຄວາມໝັ້ນຄົງ (ແລະສາມາດພະຍາກອນໄດ້) ແມ່ນສິ່ງຈຳເປັນສະເພາະ ເນື່ອງຈາກມັນຢູ່ເໜືອການຄວບຄຸມຂອງຊາວກະສິກອນຂະໜາດນ້ອຍ ຢູ່ໃນບັນດາປະເທດກຳລັງພັດທະນາ ໃນບ່ອນທີ່ບັນດາຜູ້ຜະລິດມີຄວາມສາມາດໜ້ອຍສຳລັບການຟື້ນຟູຄືນສູ່ສະພາບເດີມໄດ້ ໃນເມື່ອໄດ້ຮັບຜົນກະທົບເນື່ອງຈາກເຫດການຊ໊ອກກະທັນຫັນຈາກພາຍນອກ. ທັງໝົດບັນດາປະເທດທີ່ຜະລິດອາຫານເປັນຈຳນວນຫຼາຍນັ້ນ ລວມທັງປະເທດກຳລັງພັດທະນາ ແລະປະເທດທີ່ພັດທະນາແລ້ວ ໄດ້ມີການຈັດກຽມບາງຮູບແບບຂອງລາຄາ ຫຼື ການສະໜັບສະໜູນອື່ນໆໃຫ້ແກ່ຊາວກະສິກອນຂອງເຂົາເຈົ້າ.

ຢູ່ໃນ ສປປ ລາວ ແມ່ນບັນດາຜູ້ຄ້າເອກະຊົນເປັນຜູ້ຄວບຄຸມຕະຫຼາດຜົນຜະລິດກະສິກຳທັງໝົດ. ມັນບໍ່ມີການຄວບຄຸມລາຄາ ຫຼືບັນດາມາດຕະການທີ່ເຮັດໃຫ້ລາຄາມີຄວາມໝັ້ນຄົງ ເພື່ອຮັບປະກັນລາຍໄດ້ທີ່ໝັ້ນຄົງແລະສະໜໍ່າສະເໝີໃຫ້ແກ່ບັນດາຊາວກະສິກອນ. ຢູ່ໃນກໍລະນີເຫດການທີ່ລາຄາຫລຸດລົງຫຼາຍ ແມ່ນເຮັດໃຫ້ບັນດາຊາວກະສິກອນໄດ້ຮັບຜົນເສຍຫາຍເປັນຈຳນວນຫຼາຍ. ຊາວກະສິກອນຂະໜາດທີ່ນ້ອຍກວ່າທີ່ບໍ່ມີຄວາມສາມາດໃນການຟື້ນຟູທາງການເງິນຄືນສູ່ສະພາບເດີມໄດ້ແທ້ໆນັ້ນ ແມ່ນສາມາດລົ້ມລະລາຍທາງດ້ານການເງິນໄດ້. ບັນດາຊາວກະສິກອນ (ໂດຍສະເພາະຊາວກະສິກອນຂະໜາດນ້ອຍ) ແມ່ນໄດ້ຮັບຄວາມເຈັບປວດຫຼາຍຕໍ່ກັບການຜັນແປຂອງລາຄາ ເນື່ອງຈາກເຂົາເຈົ້າບໍ່ສາມາດແກ້ໄຂໃຫ້ຖືກຕ້ອງຢູ່ໃນໄລຍະກາງທາງໄດ້ ເຊັ່ນ: ພືດຕາມລະດູການແຕ່ລະຊະ

ນິດ ແມ່ນມີຊ່ວງໄລຍະເວລາຂອງການຈະເລີນເຕີບໂຕ ຢ່າງໜ້ອຍກໍ່ 4 ປີ ແລະ ພືດຍາວນານຕ່າງໆ (ເຊັ່ນ: ຢາງພາລາ) ແມ່ນເປັນຫຼາຍປີ ຊຶ່ງບາງການສະໜັບສະໜູນຊ່ວຍເຫຼືອດ້ານລາຄາແມ່ນຈະຕ້ອງໄດ້ມີຢ່າງແນ່ນອນ.

ຢູ່ໃນບັນດາແຂວງທີ່ມີຊາຍແດນຕິດກັບປະເທດໄທລຽບຕາມລຳແມ່ນ້ຳຂອງແມ່ນ້ຳຂອງ, ໃນປັດຈຸບັນນີ້ແມ່ນສາມາດມີເຂົ້າເຫຼືອກິນສຳລັບຂາຍເຂົ້າຕະຫຼາດ (ຕົວຢ່າງ: ແຂວງສະຫວັນນະເຂດ). ນອກຈາກນັ້ນ, ກໍ່ຍັງມີການປູກພືດຕາມລະດູການ ແລະພືດໄລຍະຍາວຈຳນວນໜຶ່ງສຳລັບເປັນສິນຄ້າ ຂອງບັນດາຄົວເຮືອນຜູ້ທີ່ຖືຄອງທີ່ດິນຂະໜາດນ້ອຍ (ເຊັ່ນ: ສາລີ, ຢາງພາລາ ແລະ ຕົ້ນໄມ້ໃຫ້ໝາກ). ໃນຂະນະດຽວກັນກໍ່ຍັງມີການການຈັດການດ້ານລາຄາທີ່ໝັ້ນຄົງສຳລັບບັນດາພືດທີ່ຖືກເລືອກ ພາຍໃຕ້ການຜະລິດກະສິກຳຕາມສັນຍາ ຊຶ່ງຜົນຜະລິດສ່ວນໃຫຍ່ແມ່ນໄດ້ຂາຍໃຫ້ແກ່ຜູ້ຄ້າ ແລະ “ຜູ້ຄ້ານີກາງ”. ບັນດາຊາວກະສິກອນຂະໜາດນ້ອຍ ແມ່ນໄດ້ຂາຍຜົນຜະລິດສ່ວນຫຼາຍຂອງເຂົາເຈົ້າຢູ່ໃນຊ່ວງໄລຍະເວລາທີ່ເກັບກ່ຽວດ້ວຍລາຄາທີ່ຕ່ຳ. ບັນດາຜູ້ຄ້າໄດ້ພະຍາຍາມເພື່ອດຶງລາຄາໃຫ້ຕ່ຳລົງ ຊຶ່ງເປັນຂໍ້ເສຍປຽບຫຼາຍສຳລັບຊາວກະສິກອນ, ໃນຂະນະດຽວກັນຊາວກະສິກອນຂະໜາດນ້ອຍຈຳນວນຫຼາຍ ໄດ້ສະເໜີຂາຍຜົນຜະລິດຂອງເຂົາເຈົ້າໃຫ້ແກ່ຜູ້ຊື້ທີ່ມີຈຳນວນໜ້ອຍ ຢູ່ໃນຊ່ວງໄລຍະເວລາທີ່ສັ້ນຫຼາຍ. ຮູບທີ 4.4 ການຜັນແປຂອງລາຄາເຂົ້າເປືອກຢູ່ ແຂວງສະຫວັນນະເຂດ ທີ່ເປັນແຂວງອູ່ເຂົ້າຂອງ ສປປ ລາວ.

**ຮູບທີ 4.2: ລາຄາເຂົ້າເປືອກ, ການປ່ຽນແປງຂຶ້ນ-ລົງຂອງລາຄາເຂົ້າເປືອກຕາມແຕ່ລະເດືອນ ຢູ່ໃນແຂວງສະຫວັນນະເຂດ, 2011-2015**




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະການຄ້າ, ລັດຖະບານ ແຫ່ງ ສປປ ລາວ.

ໝາຍເຫດ: ຕົວເລກນີ້ແມ່ນສະແດງເຖິງລາຄາຂາຍຍົກໂດຍສະເລ່ຍຂອງແຂວງ (ບໍ່ແມ່ນລາຄາຈາກທົ່ງນາ) ຊຶ່ງເຫັນວ່າມັນມີການຜັນແປຫຼາຍ, ແລະ ລາຄາຢູ່ໃນຕະຫຼາດພາຍໃນແມ່ນດີກວ່າ.

ຮູບທີ 4.2 ຢ່າງໜ້ອຍກໍ່ສະແດງໃຫ້ເຫັນສອງຈຸດເດັ່ນ ຄື: (i) ໃນລະຫວ່າງປີ 2011-2015 ລາຄາຂອງເຂົ້າເປືອກແມ່ນບໍ່ໄດ້ເພີ່ມຂຶ້ນຄືກັນຢູ່ໃນຊ່ວງໄລຍະເວລາເດືອນດຽວກັນຂອງແຕ່ລະປີ, ເຖິງແມ່ນວ່າດັດຊະນີຜູ້ຊົມໃຊ້ປະຈຳປີ (ອັດຕາເງິນເຟີ້) ແມ່ນຢູ່ໃນຂອບເຂດ 5-5,5% ຄືກັນກໍ່ຕາມ; (ii) ມັນມີການຜັນແປເປັນລາຍເດືອນກ່ຽວກັບເລື່ອງທີ່ອະທິບາຍບໍ່ໄດ້ຢູ່ໃນຄວາມຮູ້ສຶກ ຫຼືເຫດຜົນທີ່ວ່າ ເຂົາເຈົ້າບໍ່ໄດ້ໃຫ້ການສະແດງເຫດຜົນກ່ຽວກັບການທີ່ມັນຫລຸດລົງຢູ່ໃນບັນດາເດືອນທີ່ມີການເກັບກ່ຽວ. ຕົວຢ່າງ: ໃນເດືອນສິງຫາ 2012 ແມ່ນເຫັນວ່າລາຄາເຂົ້າເປືອກນັ້ນຕ່ຳທີ່ສຸດ, ໃນຂະນະທີ່ເດືອນສິງຫາ 2013 ພັດສູງ ແລະອີກອັນໜຶ່ງ ຢູ່ໃນເດືອນມິຖຸນາ-ຕຸລາ 2015 ກໍ່ສູງເຊັ່ນກັນ ແລະອື່ນໆ. ສິ່ງເຫຼົ່ານີ້ແມ່ນສາມາດເປັນຄວາມບໍ່ສະດວກໃຫ້ແກ່ການຄຳນວນທາງດ້ານການເງິນຂອງຊາວກະສິກອນໄດ້.

ບັນດາປະເທດຕ່າງໆແມ່ນໄດ້ນໍາໃຊ້ບັນດາທາງເລືອກທີ່ແຕກຕ່າງກັນ ເພື່ອຮັບປະກັນການສະໜອງທີ່ສະໝໍ່າສະເໝີຂອງຜົນຜະລິດທາງດ້ານກະສິກໍາ ແລະໃນເວລາດຽວກັນນັ້ນກໍ່ຮັບປະກັນລາຍໄດ້ທີ່ສະໝໍ່າສະເໝີໃຫ້ແກ່ຊາວກະສິກອນ. ບາງສິ່ງບາງຢ່າງທີ່ໄດ້ມີການສົນທະນາໂດຍຫຍໍ້ແມ່ນມີຢູ່ຂ້າງລຸ່ມນີ້.

**<u>ພືດປະເພດເຂົ້າ ແລະພືດທາງການຄ້າອື່ນໆ</u>**

ບັນດາຊາວກະສິກອນສ່ວນບຸກຄົນແມ່ນບໍ່ມີການຄວບຄຸມເໜືອລາຄາແຕ່ຢ່າງໃດ ແຕ່ວ່າເຂົາເຈົ້າກໍ່ສາມາດລວມກຸ່ມກັນເພື່ອເຮັດໃຫ້ພືດຕ່າງໆຂອງເຂົາເຈົ້າໄດ້ຮັບລາຄາດີຂຶ້ນ. ໃນເລື່ອງນີ້ແມ່ນອົງການຈັດຕັ້ງຂອງຊາວກະສິກອນສາມາດຊ່ວຍໃນການໂຕ້ວາທີກ່ຽວກັບອໍານາດການຕໍ່ລອງຂອງຊາວກະສິກອນ. ວິທີການໜຶ່ງທີ່ບັນດາອົງການ (ສະມາຄົມ) ເຫຼົ່ານີ້ຈະຕ້ອງໄດ້ເຮັດຕາມນັ້ນ ແມ່ນການສ້າງສິ່ງອໍານວຍຄວາມສະດວກຕ່າງໆເພື່ອເກັບທ້ອນເຂົ້າໄວ້ຢູ່ໃນສາງ ຊຶ່ງບັນດາຊາວກະສິກອນສ່ວນບຸກຄົນເຫຼົ່ານັ້ນສາມາດຢືມຖອນເຂົ້າຂອງເຂົາເຈົ້າຄືນໄດ້ ໃນເມື່ອມີຄວາມຈໍາເປັນຕ້ອງໄດ້ຂາຍພວກມັນອອກເພື່ອແກ້ໄຂບັນຫາຕ່າງໆ ຫຼືໃນເມື່ອທີ່ເຂົ້າມີລາຄາສູງຂຶ້ນ. ການທົດລອງຕ່າງໆເຫຼົ່ານີ້ແມ່ນໄດ້ເຮັດຢູ່ໃນ ກໍາປູເຈຍ ແລະ ເຫັນວ່າຄວນຈະຕ້ອງໄດ້ມີການພິຈາລະນາຢ່າງຈິງຈັງສໍາລັບການຈັດຕັ້ງປະຕິບັດມັນໃຫ້ເກີດເປັນຈິງຂຶ້ນຢູ່ໃນ ສປປ ລາວ.[104]

**<u>ເຂົ້າເປືອກ</u>**:

ອັນນີ້ຢ່າງໜ້ອຍກໍ່ແມ່ນສໍາລັບເຂົ້າເປືອກ, ເຫັນວ່າບັນດາຊາວກະສິກອນສາມາດຮ່ວມກັນເຮັດສັນຍາເປັນກຸ່ມກັບໂຮງສີເຂົ້າສໍາລັບລາຄາທີ່ໄດ້ເຈລະຈາກັນແລ້ວ ຊຶ່ງໃນທີ່ນີ້ແມ່ນບັນດາຊາວກະສິກອນຈະຕ້ອງໄດ້ຂາຍເຂົ້າຕາມພັນທະສັນຍາໃຫ້ແກ່ໂຮງສີເຂົ້າຫຼັງຈາກທີ່ເກັບກ່ຽວໄດ້ແລ້ວ (ກ່ອງທີ 4.4). ສໍາລັບສັນຍາທີ່ເຮັດກັບໂຮງສີເຂົ້າ (ດີກວ່າມີໂຮງສີເຂົ້າແຫ່ງດຽວທີ່ຜູກຂາດ) ແມ່ນຈະຕ້ອງໄດ້ຕໍ່ອາຍຸ (ຫຼືເຮັດໃໝ່) ໃນທຸກໆລະດູການ ເພື່ອວ່າໃຫ້ມັນສາມາດໄດ້ຜົນປະໂຫຍດຮ່ວມກັນທີ່ເປັນໜຶ່ງດຽວ ຫຼືເອກະພາບກັນ ລະຫວ່າງບັນດາຊາວກະສິກອນດ້ວຍກັນ. ຢູ່ໃນທີ່ນີ້, ແມ່ນບັນດາຊາວກະສິກອນບໍ່ຈໍາເປັນຕ້ອງໄດ້ເກັບເຂົ້າໄວ້ຢູ່ໃນເລົ້າ/ສາງຂອງຕົນ ກ່ອນທີ່ຈະຂົນສົ່ງໄປຫາໂຮງສີເຂົ້າ (ຟາດແລ້ວສົ່ງໄດ້ເລີຍ) ຊຶ່ງຜົນສໍາເລັດກ່ຽວກັບເລື່ອງນີ້ແມ່ນຂຶ້ນຢູ່ກັບລາຍລະອຽດຂອງຂໍ້ຕົກລົງທີ່ຈະສາມາດສົ່ງໄປຮອດໂຮງສີເຂົ້າໄດ້ຄືແນວໃດ. ບັນດາຂໍ້ຕົກລົງເຊັ່ນວ່ານີ້ໄດ້ເກີດຂຶ້ນຢູ່ໃນເຂດພາກເໜືອຂອງປະເທດແລ້ວດ້ວຍການຮ່ວມມືກັບນັກທຸລະກິດຈີນ ຊຶ່ງອັນນີ້ແມ່ນໝາຍຄວາມວ່າມັນເປັນທາງເລືອກຕົວຈິງ.

**ກ່ອງທີ 4.4: ການຕະຫຼາດຂອງເຂົ້າ - ຈາກການສັງເກດການຢູ່ໃນ ແຂວງສະຫວັນນະເຂດ**

ໃນກໍລະນີຂອງແຂວງສະຫວັນນະເຂດ ຊຶ່ງມີເຂົ້າເປືອກສ່ວນເກີນທີ່ສາມາດຂາຍເປັນສິນຄ້າໄດ້ເພີ່ມຂຶ້ນ ສະນັ້ນ, ການຕະຫຼາດຖືວ່າມີຄວາມສຳຄັນຫຼາຍ. ການຕະຫຼາດທີ່ເຮັດໃຫ້ເຂົ້າເປືອກມີລາຄາທີ່ສົມເຫດສົມຜົນນັ້ນ ແມ່ນເປັນບັນຫາທີ່ຊາວກະສິກອນປະເຊີນໜ້າຕະຫຼອດມາ ເນື່ອງຈາກການຜະລິດກະສິກຳຕາມສັນຍາສຳລັບເຂົ້າເປືອກນັ້ນແມ່ນກວມເອົາຂອບເຂດ ແລະໃນອັດຕາສ່ວນໜ້ອຍທີ່ສຸດ. ດັ່ງໃນປັດຈຸບັນນີ້, ບັນດາຊາວກະສິກອນໄດ້ຂາຍເຂົ້າເປືອກໂດຍກົງໃຫ້ແກ່ໂຮງສີເຂົ້າ ຫຼືຜູ້ພໍ່ຄ້າມີກາງ (ຜູ້ທີ່ເກັບທ້ອນເຂົ້າເປືອກໄວ້ເພື່ອຂາຍ) ຢ່າງໃດຢ່າງໜຶ່ງເທົ່ານັ້ນ ຫຼືບໍ່ເຂົາເຈົ້າກໍ່ນຳເຂົ້າເປືອກຂອງຕົນໄປສີເອງແລ້ວກໍ່ຂາຍເຂົ້າສານໃຫ້ແກ່ຜູ້ຂາຍຍ່ອຍ. ສ່ວນລາຄາຂອງທັງເຂົ້າເປືອກ ແລະເຂົ້າສານແມ່ນມີການຂຶ້ນລົງຕາມລະດູການ/ຕາມເດືອນ ແຕ່ວ່າລາຄາຂອງມັນກໍ່ບໍ່ໄດ້ເພີ່ມຂຶ້ນຈິງແທ້ ຢູ່ໃນຊ່ວງໄລຍະເວລາ 4-5 ປີຜ່ານມານີ້.

ການເຮັດນາແມ່ນກຳລັງເຂັ້ມຂຸ້ນຫຼາຍຂຶ້ນໃນແຕ່ລະປີ ເພາະສະນັ້ນ, ຄວາມອຸດົມສົມບູນທາງທຳມະຊາດຂອງດິນໄດ້ຄ່ອຍໆຫລຸດລົງ. ດັ່ງນັ້ນ, ການໃສ່ຝຸ່ນທີ່ເພີ່ມຫຼາຍຂຶ້ນນັ້ນຈິ່ງເປັນສິ່ງສຳຄັນ ແລະໃນຂະນະດຽວກັນນັ້ນ ມັນກໍ່ເປັນການເພີ່ມຕົ້ນທຶນຂອງການເຮັດນາໄປພ້ອມໆກັນ. ໃນເວລາດຽວກັນນັ້ນ, ບັນດາຊາວກະສິກອນກໍ່ຍັງໄດ້ຈ່າຍຄ່າໄຟຟ້າ (ສຳລັບນ້ຳຊົນລະປະທານ) ທີ່ສູງຢູ່. ດ້ວຍການເພີ່ມຂຶ້ນຂອງຕົ້ນທຶນການຜະລິດໂດຍທີ່ລາຄາເຂົ້າຍັງເໝືອນເດີມນັ້ນ ແມ່ນເຮັດໃຫ້ຊາວກະສິກອນເປັນຜູ້ເສຍຫາຍ.

ດັ່ງນັ້ນ, ຊາວກະສິກອນບາງຄົນ ໂດຍສະເພາະແມ່ນຜູ້ທີ່ມີສະພາບການດຳລົງຊີວິດບໍ່ຄ່ອຍດີປານໃດນັ້ນຈິ່ງໄດ້ປະວາງທົ່ງນາຂອງຕົນແລ້ວຂ້າມຊາຍແດນໄປເຮັດວຽກຢູ່ປະເທດໄທ ຫຼືປ່ຽນໄປເຮັດອາຊີບທາງເລືອກອື່ນຢ່າງໃດຢ່າງໜຶ່ງ ຊຶ່ງສິ່ງເຫຼົ່ານີ້ແມ່ນຊຸມຊົນຊາວກະສິກອນບໍ່ສາມາດທຳນາຍໄດ້ວ່າອະນາຄົດຕໍ່ໜ້າຈະເປັນໄປຄືແນວໃດ.

ແຫຼ່ງຂໍ້ມູນ: ການສົນທະນາກັບປະຊາຊົນຊາວບ້ານຢູ່ແຂວງສະຫວັນນະເຂດ, ວັນທີ 14 ທັນວາ 2015.

## ພືດສວນ ແລະໝາກໄມ້

ໃນກໍລະນີຂອງຜົນຜະລິດພືດສວນ ແລະໝາກໄມ້, ການເຮັດສັນຍາທີ່ເປັນທາງການລະຫວ່າງຊາວກະສິກອນ ແລະບໍລິສັດປຸງແຕ່ງ ແມ່ນສາມາດເຮັດໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ຊຶ່ງການເຮັດສັນຍາກັບຊາວກະສິກອນແມ່ນສາມາດເຮັດໄດ້ຫຼາຍແບບ ແລະດັດປັບໄດ້ຕາມກຳນົດເວລາທີ່ລະບຸໄວ້. ຊາວກະສິກອນສາມາດເຮັດສັນຍາໂດຍກົງກັບບໍລິສັດ ຫຼືສະຫະກອນການຕະຫຼາດທີ່ໃຫຍ່ກໍ່ໄດ້ ແຕ່ສະຫະກອນນັ້ນຈະຕ້ອງໄດ້ເຮັດສັນຍາກັບບໍລິສັດໃດໜຶ່ງ. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຕ້ອງໄດ້ສະໜອງຜົນຜະລິດໃຫ້ແກ່ບໍລິສັດຕາມປະລິມານ ແລະຄຸນນະພາບຂັ້ນຕ່ຳທີ່ໄດ້ຕົກລົງກັນໄວ້. ສຳລັບເລື່ອງນີ້, ບັນດາຊາວກະສິກອນແມ່ນຈະຕ້ອງໄດ້ລວມກຸ່ມກັນ ເພື່ອຮັບປະກັນໃຫ້ໄດ້ຕາມປະລິມານຜົນຜະລິດຂັ້ນຕ່ຳທີ່ໄດ້ຕົກລົງກັນນັ້ນ, ຖ້າບໍ່ດັ່ງນັ້ນບໍລິສັດກໍ່ອາດຈະບໍ່ສາມາດປະຕິບັດຕາມສັນຍາທີ່ໄດ້ເຊັນກັນໄວ້ນັ້ນໄດ້. ຊາວກະສິກອນຕ້ອງເປັນເຈົ້າຕົນເອງ (ເປັນເຈົ້າການ) ດ້ານສິ່ງອຳນວຍຄວາມສະດວກຕ່າງໆເຊັ່ນ: ການຄຸ້ມຄອງຊົນລະປະທານ ແລະການຈັດຕັ້ງປະຕິບັດກົນໄກຕ່າງໆ ເພື່ອຮັບປະກັນໃຫ້ໄດ້ຜົນຜະລິດຕາມເປົ້າໝາຍ. ການຈັດຕັ້ງອົງກອນຊາວກະສິກອນ ແລະການດຳເນີນງານຂອງອົງກອນດັ່ງກ່າວ ແມ່ນເປັນເງື່ອນໄຂກ່ອນອື່ນໝົດສຳລັບຜົນສຳເລັດ. ໃນກໍລະນີຂອງ ສປປ ລາວ ແມ່ນໄດ້ມີນະໂຍບາຍໃນການສ້າງຕັ້ງກຸ່ມຊາວກະສິກອນແລ້ວ ແຕ່ມັນກໍ່ມີຄວາມຈຳເປັນທີ່ຈະຕ້ອງໄດ້ເພີ່ມຄວາມເຂັ້ມແຂງຂຶ້ນຕື່ມອີກ (ກ່ອງທີ 4.5).

**ກ່ອງທີ 4.5: ອົງການຈັດຕັ້ງຂອງຊາວກະສິກອນ - ການສັງເກດການຢູ່ແຂວງສະຫວັນນະເຂດ**

ໃນຊຸມປີໃກ້ໆຜ່ານມານີ້, ໄດ້ມີການຊຸກຍູ້ສົ່ງເສີມໃຫ້ຊາວກະສິກອນລວມກຸ່ມກັນ ແລະຈັດຕັ້ງເປັນອົງກອນເພື່ອແກ້ໄຂບັນຫາຕ່າງໆທີ່ເຂົາເຈົ້າແກ້ໄຂເປັນສ່ວນບຸກຄົນໄດ້ຍາກ. ອັນນີ້ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກຊາວກະສິກອນແມ່ນເປັນຜູ້ຖືຄອງທີ່ດິນຂະໜາດນ້ອຍ ແລະບໍ່ສາມາດຊອກຫາຕະຫຼາດຮ່ວມທີ່ມີຄວາມເພິ່ງພໍໃຈດ້ວຍຕົວຂອງເຂົາເຈົ້າເອງໄດ້ ໂດຍສະເພາະແມ່ນໃນເມື່ອຜົນຜະລິດກະສິກຳຂອງເຂົາເຈົ້າກາຍເປັນສິນຄ້າແລ້ວ. ການມີກຸ່ມຜະລິດຕະພັນ (ເຂົ້າ, ພືດຜັກ, ອ້ອຍ ແລະອື່ນໆ) ແມ່ນຊາວກະສິກອນມີຄວາມສາມາດຕໍ່ລອງດ້ານລາຄາໄດ້ດີຂຶ້ນ, ກຸ່ມນຳໃຊ້ເຕັກໂນໂລຢີທີ່ທັນສະໄໝແມ່ນສາມາດຮ້ອງຂໍການສົ່ງເສີມການບໍລິການໄດ້, ກຸ່ມນຳໃຊ້ນ້ຳກໍ່ສາມາດຕັດສິນໃຈໃນການແຈກຢາຍນ້ຳຊົນລະປະທານ, ຄ່າທຳນຽມ, ເລື່ອງອື່ນໆທີ່ພົວພັນກັບນ້ຳ ແລະອື່ນໆ. ໃນຂະນະທີ່ເລື່ອງນີ້ແມ່ນເປັນວິທີການທີ່ດີ ແລະເປັນປະໂຫຍດຕໍ່ກັບຊາວກະສິກອນກໍ່ຕາມ ແຕ່ມັນກໍ່ຍັງມີຊ່ອງວ່າງຢູ່ສອງຢ່າງ ຄື:

- ແຕ່ລະກຸ່ມບໍ່ໄດ້ລວມຢູ່ໃນສະມາຄົມຊາວກະສິກອນທີ່ຖືກສ້າງຂຶ້ນປະຈຳປີ (ທີ່ມີຄ່າທຳນຽມສະມາຊິກ). ເຂົາເຈົ້າບໍ່ໄດ້ມີການຈົດທະບຽນພາຍໃຕ້ລະບຽບກົດໝາຍໃດໜຶ່ງ ຊຶ່ງເຮັດໃຫ້ເຂົາເຈົ້າຢູ່ໃນຖານະທີ່ບໍ່ຖືກ ຕ້ອງຕາມກົດໝາຍ. ອີກອັນໜຶ່ງແມ່ນຊາວກະສິກອນໃດໜຶ່ງອາດສາມາດທີ່ຈະອອກ ຫຼືຂ້າຮ່ວມກຸ່ມກໍ່ໄດ້. ກຸ່ມແບບນີ້ແມ່ນເປັນກຸ່ມສະເພາະກິດ ຊຶ່ງເຮັດໃຫ້ເຂົາເຈົ້າເຮັດຕາມຄວາມຄິດເຫັນ ຫຼືຕາມການຄາດຄະເນຫຼາຍກວ່າຕົວຈິງ.

- ບັນດາກຸ່ມເຫຼົ່ານີ້ແມ່ນມີຫົວເລື່ອງສະເພາະຂອງເຂົາເຈົ້າ ແລະບໍ່ຈຳເປັນເຂົ້າຮ່ວມຢູ່ໃນສະມາຄົມຕ່າງໆຂອງຊາວກະສິກອນທີ່ທຸກໆເລື່ອງທັງໝົດແມ່ນຕ້ອງຢູ່ພາຍໃຕ້ຮົ່ມເງົາຂອງຄັນຮົ່ມອັນດຽວກັນ.

ມັນມີຄວາມສຳຄັນຫຼາຍ, ຖ້າບັນດາຊາວກະສິກອນຫາກເຂົ້າຮ່ວມຢູ່ໃນສະມາຄົມຂອງຊາວກະສິກອນທີ່ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະຖືກຕ້ອງຕາມລະບຽບກົດໝາຍເປັນຈຳນວນຫຼາຍຂຶ້ນ. ຢູ່ພາຍໃນສິ່ງເຫຼົ່ານີ້, ຖ້າຊາວກະສິກອນຫາກຂາຍ ຫຼືປະຖິ້ມທີ່ດິນຂອງເຂົາເຈົ້າ ແມ່ນສະມາຊິກກະພາບຂອງເຂົາເຈົ້າກໍ່ຈະຖືກຖ່າຍໂອນໄປໃຫ້ເຈົ້າຂອງທີ່ດິນຜູ້ໃໝ່ທີ່ເຂົ້າມາແທນທີ່ນັ້ນ ເພາະສະນັ້ນ, ທີ່ດິນຕອນນັ້ນຈຶ່ງຍັງສືບຕໍ່ຮັກສາໄວ້ຢູ່ໃນສະມາຄົມຕໍ່ໄປ. ສະມາຄົມຈະຕ້ອງສາມາດແກ້ໄຂເລື່ອງຕ່າງໆທັງໝົດ ຊຶ່ງບໍ່ແມ່ນຈະເຂັ້ມງວດໃສ່ພຽງແຕ່ໜຶ່ງຫຼືສອງເລື່ອງເທົ່ານັ້ນ.

ແຫຼ່ງຂໍ້ມູນ: ການສົນທະນາຮ່ວມກັບປະຊາຊົນຊາວບ້ານຢູ່ໃນແຂວງສະຫວັນນະເຂດ, ວັນທີ 14 ທັນວາ 2015.

ບັນດາຂໍ້ສະເໜີແນະທັງໝົດທີ່ໄດ້ລະບຸໄວ້ນັ້ນແມ່ນມີຄວາມຮຽກຮ້ອງຕ້ອງການຊັບພະຍາກອນຕ່າງໆ. ປະເທດທີ່ເຮັດການກະສິກຳເປັນສ່ວນຫຼາຍຄືກັບ ສປປ ລາວ ແມ່ນມີຄວາມຈຳເປັນຕ້ອງໄດ້ຈ່າຍງົບປະມານໃຫ້ແກ່ການກະສິກຳຫຼາຍຂຶ້ນເພື່ອເຮັດໃຫ້ມີການບໍລິການສົ່ງເສີມຫຼາຍຂຶ້ນ ເຊັ່ນ: ການຊົນລະປະທານ, ການບໍລິການໆຕະຫຼາດ ແລະອື່ນໆ. ໃນເມື່ອມັນບໍ່ມີມາດຕະຖານທີ່ເປັນສາກົນກ່ຽວກັບວ່າລັດຖະບານຄວນຈະຈ່າຍໃຫ້ແກ່ຂະແໜງການນີ້ຫຼາຍປານໃດນັ້ນ, ສະພາບພູມສັນຖານ ແລະການແຜ່ຂະຫຍາຍຂອງຈຳນວນປະຊາກອນຢູ່ພາຍໃນປະເທດແມ່ນເປັນຕົວສຳຄັນທີ່ເຮັດໃຫ້ມີການໃຊ້ຈ່າຍໃນເລື່ອງນີ້ເພີ່ມຫຼາຍຂຶ້ນ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຈາກລັດຖະບານໃນປັດຈຸບັນນີ້ໄດ້ສະແດງໃຫ້ເຫັນວ່າ ຄ່າໃຊ້ຈ່າຍຂອງລັດຖະບານເຂົ້າໃນຂະແໜງກະສິກຳແມ່ນໄດ້ຫລຸດລົງ, ຖ້າເບິ່ງຕາມອັດຕາສ່ວນການໃຊ້ຈ່າຍງົບປະມານທັງໝົດຂອງລັດຖະບານ ຊຶ່ງມີຢູ່ປະມານ 13% ໃນຊ່ວງໄລຍະປີ 2000-2001 ຫາ 2003-2004 (ໂດຍສະເລ່ຍ) ຊຶ່ງຫລຸດລົງປະມານ 5% ຢູ່ໃນຊ່ວງໄລຍະປີ 2010-2011 ຫາ 2012-2013 (ໂດຍສະເລ່ຍ). ອັດຕາສ່ວນລາຍຈ່າຍສຳລັບການລົງທຶນເຂົ້າໃນຂະແໜງການກະສິກຳ ຕໍ່ກັບລາຍຈ່າຍທັງໝົດຂອງຂະແໜງການນີ້ ກໍ່ເຫັນວ່າຫລຸດລົງຢູ່ໃນຊ່ວງໄລຍະເວລາດຽວກັນຄື: ຈາກປະມານ 95% ມາເປັນ 82%, ການຫລຸດລົງເຊັ່ນນີ້ແມ່ນຮຽກຮ້ອງໃຫ້ມີການທົບທວນຄືນໃໝ່.

### ກ່ອງທີ 4.6: ການປະກັນລາຄາໃຫ້ແກ່ຊາວກະສິກອນ - ປະສົບປະການຂອງສາກົນ ແລະ ສປປ ລາວ

**ປະສົບປະການຂອງສາກົນ**

ຢູ່ໃນຫຼາຍໆປະເທດ (ຕົ້ນຕໍແມ່ນຢູ່ໃນອາຊີໃຕ້, ອາຊີຕາເວັນອອກ ແລະຢູຣົບ) ຜົນຜະລິດກະສິກຳຢ່າງໜ້ອຍແມ່ນຕ້ອງໄດ້ຮັບການຄ້ຳປະກັນສ່ວນໜຶ່ງຂອງຜົນຕອບແທນຂັ້ນຕ່ຳ ໂດຍຜ່ານການຊ່ວຍເຫຼືອດ້ານລາຄາຂັ້ນຕ່ຳ (MSP) ແລະ/ຫຼືການອຸດໜູນດ້ານປັດໄຈນຳເຂົ້າສູ່ການຜະລິດ. ລະບອບ MSP ແມ່ນບໍ່ຈຳເປັນຕ້ອງແມ່ນການຊື້ໂດຍລັດຖະບານຄືດັ່ງທີ່ເປັນມາຢູ່ໃນ ສປປ ລາວ ໃນຊຸມປີ 1980 ຊຶ່ງຜົນຜະລິດທັງໝົດແມ່ນໄດ້ຂາຍໃຫ້ແກ່ລັດຖະບານຕາມລາຄາທີ່ໄດ້ກຳນົດໄວ້ກ່ອນນັ້ນ. MSP ແມ່ນເປັນພຽງແຕ່ການຕັ້ງລາຄາຂັ້ນຕ່ຳໄວ້ ເພື່ອປ້ອງກັນຊາວກະສິກອນຈາກລາຄາຜົນຜະລິດຕົກຕ່ຳໃນລະດູການ. ມັນເປັນການດຳເນີນການຜ່ານຜູ້ຄ້າເອກະຊົນ ໂດຍທີ່ລັດຖະບານຈະຊົດເຊີຍສຳລັບຊ່ອງວ່າງລະຫວ່າງລາຄາຕະຫຼາດທີ່ເປັນຈິງ ແລະ MSP ແມ່ນເປັນພຽງແຕ່ການຄ້ຳປະກັນ ເມື່ອລາຄາຕະຫຼາດຫາກຕ່ຳກວ່າລາຄາຂັ້ນຕ່ຳທີ່ໄດ້ກຳນົດໄວ້. ໃນທາງກົງກັນຂ້າມ, ຖ້າຫາກລາຄາເພີ່ມຂຶ້ນເກີນກວ່າລະດັບທີ່ແນ່ນອນໃດໜຶ່ງຫຼາຍແມ່ນຈະໄດ້ມີການເກັບອາກອນ. ອັນນີ້ແມ່ນຖືວ່າການຊ່ວຍເຫຼືອດ້ານລາຄາ ແລະອາກອນ ເພື່ອໄວ້ຊົດເຊີຍໃຫ້ແກ່ກໍລະນີອື່ນທີ່ຈະເກີດຂຶ້ນຕາມການເວລາ. ໃນທຳອິດແມ່ນຕ້ອງໄດ້ມີການສ້າງຊັບພະຍາກອນກອງກາງ (ກອງທຶນ) ຂຶ້ນ ເພື່ອການດຳເນີນຂະບວນການອັນນີ້.

ເຖິງຢ່າງໃດກໍ່ຕາມ, ລະບົບປະເພດ MSP ກໍ່ມີຂໍ້ເສຍຂອງມັນ ເຊັ່ນ: ມັນສາມາດເຮັດໃຫ້ເປັນການທໍ້ຖອຍໃຈໃນການຊຸກຍູ້ເຮັດໃຫ້ປະສິດທິພາບສູງຂຶ້ນ ແລະການສົ່ງເສີມການປູກພືດທີ່ຫຼາກຫຼາຍ. ມັນຍັງເປັນສາເຫດຂອງຄວາມບໍ່ຍືນຍົງທີ່ເຮັດໃຫ້ຂາດດູນງົບປະມານຢູ່ໃນບາງປະເທດ ບ່ອນທີ່ມີຕົ້ນທຶນສູງສຳລັບຂອງການຜະລິດພືດໄລຍະຍາວຍ້ອນເຫດຜົນຂອງການກະສິກຳນິເວດ.

**ປະສົບປະການຂອງ ສປປ ລາວ**

ກະຊວງອຸດສາຫະກຳ ແລະການຄ້າຂອງ ສປປ ລາວ ເປັນຜູ້ຮັບຜິດຊອບໃນການອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກສິນຄ້າຈາກ ສປປ ລາວ ຊຶ່ງມັນໄດ້ສ້າງບັນດານະໂຍບາຍຕ່າງໆ, ດຳເນີນການສຶກສາຜົນກະທົບຂອງການເຊື່ອມໂຍງທາງການຄ້າ ແລະຕິດຕາມຜົນຂອງມັນ, ເຊັນສັນຍາ ແລະສົນທິສັນຍາກ່ຽວກັບການຄ້າກັບປະເທດຕ່າງໆ ແລະອົງການຮ່ວມມືຫຼາຍຝ່າຍ ແລະ ເຮັດວຽກທາງການຄ້າອື່ນໆອີກ. ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງບໍ່ໄດ້ຮ່ວມເຮັດວຽກກັບບັນດາຊາວກະສິກອນຜູ້ທີ່ຫັນໄປສູ່ການຊ່ວຍເຫຼືອຂອງບັນດາອົງກອນ/ໜ່ວຍງານສົ່ງເສີມກະສິກຳເທື່ອ ຊຶ່ງບັນດາອົງກອນສົ່ງເສີມກະສິກຳເຫຼົ່ານີ້ແມ່ນມີຄວາມດ້ານຮູ້ດ້ານຕະຫຼາດ ແລະລາຄາໜ້ອຍຫຼາຍ. ນັ້ນເປັນເຫດຜົນທີ່ພາໃຫ້ຊາວກະສິກອນມີຄວາມຮູ້ໜ້ອຍຫຼາຍກ່ຽວກັບວ່າຈະປູກຫຍັງດີທີ່ສຸດ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດຈາກຕະຫຼາດສາກົນ, ນອກຈາກທີ່ເຂົາເຈົ້າໄດ້ຟັງ ແລະໄດ້ຍິນຈາກບັນດາຜູ້ຄ້າທີ່ມາຊື້ບັນດາຜະລິດຕະພັນຂອງເຂົາເຈົ້າ.

ຕາມວິທີທາງຢູ່ໃນປະເທດອື່ນໆທີ່ມີປະຊາກອນຈຳນວນຫຼາຍເປັນຊາວກະສິກອນຂະໜາດນ້ອຍນັ້ນແມ່ນເຂົາເຈົ້າໄດ້ສ້າງຕັ້ງກົມການຕະຫຼາດຂຶ້ນຢູ່ໃນກະຊວງກະສິກຳ ເພື່ອເຮັດໜ້າທີ່ຕິດຕໍ່ປະສານງານກັບຊາວກະສິກອນ (ໂດຍກົງ ຫຼືຜ່ານອົງການສົ່ງເສີມຕ່າງໆ) ແລະກະຊວງການຄ້າ ຊຶ່ງອັນນີ້ຈະຊ່ວຍໃຫ້ຊາວກະສິກອນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບຕະຫຼາດສາກົນ ແລະລາຄາໄດ້ລ່ວງໜ້າ.

ແຫຼ່ງຂໍ້ມູນ: ດັດປັບມາຈາກ NHDR, 2007, ກຳປູເຈຍ.

## ສະຫລຸບ

ບັນດາສາເຫດທີ່ເຮັດໃຫ້ອັດຕາຜົນຜະລິດ ແລະຜະລິດຕະພາບຂອງງານໃນຜະລິດການກະສິກຳຕ່ຳນັ້ນອາດສາມາດເວົ້າໄດ້ວ່າມັນເປັນຍ້ອນຂະໜາດຂອງການຖືຄອງທີ່ດິນນ້ອຍ, ມີການແຍກຕອນດິນຫຼາຍເກີນໄປ ແລະລະດັບການປົກຄຸມຂອງຊົນລະປະທານຕ່ຳ ຊຶ່ງທັງໝົດເຫຼົ່ານີ້ໄດ້ເຮັດໃຫ້ຄວາມເຂັ້ມຂຸ້ນ(ເຂັ້ມແຂງ)ຂອງຟາມຕ່ຳ ແລະເຮັດໃຫ້ລາຍໄດ້ຂອງຊາວກະສິກອນຕ່ຳຕາມມາ. ສຳລັບສະພາບເງື່ອນໄຂອື່ນໆແມ່ນຖືກຊ້ຳເຕີມ

ດ້ອຍການເໜັງຕີງຂອງລາຄາ, ການອີງໃສ່ສະພາບຂອງຝົນຟ້າອາກາດຫຼາຍເກີນໄປ, ຄວາມບໍ່ສະເໝີພາບໃນການເຂົ້າເຖິງການເງິນ ແລະການບໍລິການ ການຕະຫຼາດ ກໍຄືການບໍລິການໆສິ່ງເສີມທີ່ບໍ່ພຽງພໍ.

ບັນດາມາດຕະການ ຫຼືຂັ້ນຕອນຕ່າງໆ ເຊັ່ນ: ການດຳເນີນການດ້ານເອກະສານທີ່ດິນໃນການອອກໃບຕາດິນທີ່ເປັນທາງການໃກ້ແກ່ຊາວກະສິກອນ, ການປັບປຸງການເຂົ້າເຖິງການບໍລິການທາງການເງິນຂອງຊາວກະສິກອນ (ເງິນຝາກປະຢັດ, ສິນເຊື່ອ ແລະການປະກັນໄພ) ແລະການສະໜອງການເຊື່ອມໂຍງກັບຕະຫຼາດທີ່ດີຂຶ້ນ ແມ່ນຂ້ອນຂ້າງຈະປະກອບສ່ວນເຮັດໃຫ້ລາຍໄດ້ຂອງຊາວກະສິກອນສູງຂຶ້ນ ແລະມີຄວາມໝັ້ນຄົງ. ບັນດາມາດຕະການຕ່າງໆ ເຊັ່ນ: ການເຮັດໃຫ້ຟາມທີ່ບໍ່ເປັນເສດຖະກິດມີຄວາມເຂັ້ມແຂງຂຶ້ນ, ການເຮັດເປັນຟາມທີ່ມີຄວາມທັນສະໄໝ, ການອອກແບບລະບົບຊົນລະປະທານເພື່ອໃຫ້ເໝາະສົມກັບພື້ນທີ່ພູມສັນຖານ ແລະການບໍລິການສິ່ງເສີມທີ່ດີຂຶ້ນ ແມ່ນມີຄວາມຈຳເປັນສຳລັບການປັບປຸງຜະລິດຕະພາບຂອງຟາມ ແລະບັນດາອົງການຕ່າງໆຂອງຊາວກະສິກອນທີ່ເຂັ້ມແຂງຂຶ້ນ ກໍ່ມີຄວາມສຳຄັນ ແລະເປັນປະໂຫຍດເຊັ່ນດຽວກັນ. ເຖິງຢ່າງໃດກໍ່ຕາມ, ຈຸດເລີ່ມຕົ້ນນັ້ນ ແມ່ນຕ້ອງພະຍາຍາມບໍ່ໃຫ້ແນວໂນ້ມການລົງທຶນຂອງລັດເຂົ້າໃນຂະແໜງກະສິກຳຕົກຕ່ຳລົງ.

ສຸດທ້າຍ, ແມ່ນຕ້ອງຮັກສາພາບຄຳໝັ້ນສັນຍາ ຂອງ ສປປ ລາວ ຕໍ່ກັບ SDGs ຊຶ່ງຍຸດທະສາດນີ້ແມ່ນຈະຕ້ອງພັດທະນາການກະສິກຳແບບຍືນຍົງ ທີ່ເຄົາລົບນັບຖືວິຖີທາງການດຳເນີນຊີວິດຕາມຮີດຄອງປະເພນີທີ່ຖືກຕ້ອງຂອງປະຊາຊົນ, ພິຈາລະນາເຖິງຄວາມຫຼາກຫຼາຍຂອງລະບົບນິເວດວິທະຍາ ແລະຮັບຮູ້ເຖິງຄວາມບໍ່ໝັ້ນຄົງຂອງສະພາບແວດລ້ອມ.

## ການພັດທະນາອຸດສາຫະກຳ ແລະໂຄງລ່າງພື້ນຖານ

ບັນດາອຳນາດການປົກຄອງ ແລະອົງການຂອງລັດໃນລະດັບຂັ້ນຕ່າງໆຢູ່ ສປປ ລາວ ແມ່ນໄດ້ສຸມໃສ່ການຫັນເປັນອຸດສາຫະກຳ ແລະທັນສະໄໝໃນຂະແໜງການຕ່າງໆ ຕັ້ງແຕ່ໄດ້ມີການຮັບຮອງເອົາກົນໄກເສດຖະກິດໃໝ່ (NEM) ໃນປີ 1986 ເປັນຕົ້ນມາ. ຕັ້ງແຕ່ນັ້ນມາ ສປປ ລາວ ແມ່ນໄດ້ມີແຜນການ 5 ປີ 6 ສະບັບ,[105] ແລະທ້າຍທີ່ສຸດແມ່ນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020).[106] ແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ແມ່ນໄດ້ມີການວາງຄາດໝາຍເພື່ອບັນລຸການເຕີບໂຕແບບຍືນຍົງ ແລະການຫລຸດຜ່ອນຄວາມທຸກຍາກ ໃນຂະນະທີ່ໄດ້ມີການຄ່ອຍໆປ່ຽນແປງ ສປປ ໄປສູ່ເສດຖະກິດເປີດກວ້າງ, ເພີ່ມທະວີຄວາມສາມາດໃນການຜະລິດຂອງຂະແໜງການເອກະຊົນ, ກຳນົດບຸລິມະສິດເພື່ອການບັນລຸ MDGs ໃນປີ 2015. ສືບຕໍ່ກ້າວເດີນຕາມເສັ້ນທາງສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານການຜະລິດຂອງປະເທດ ແລະສ້າງຄວາມຫຼາກຫຼາຍທາງເສດຖະກິດ, ແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ໄດ້ຕັ້ງເປົ້າໝາຍໄວ້ຢ່າງຈະແຈ້ງທີ່ຈະນຳພາ ສປປ ລາວ ໃຫ້ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020. ນອກຈາກນັ້ນ, ຍຸດທະສາດພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ໄດ້ລວມເອົາ 7 ຍຸດທະສາດ ຊຶ່ງໜຶ່ງໃນນັ້ນແມ່ນຍຸດທະສາດການຫັນເປັນອຸດສາຫະກຳ ແລະທັນສະໄໝ. ຂົງເຂດ ຫຼືຂະແໜງການຕົ້ນຕໍທີ່ຖືກກຳນົດເຂົ້າຢູ່ໃນນີ້ ແມ່ນປະກອບດ້ວຍ:

- ອຸດສາຫະກຳໄຟຟ້າ;
- ອຸດສາຫະກຳປຸງແຕ່ງກະສິກຳ;
- ອຸດສາຫະກຳທ່ອງທ່ຽວ;
- ອຸດສາຫະກຳບໍ່ແຮ່;
- ອຸດສາຫະກຳວັດສະດຸກໍ່ສ້າງ.

ນອກຈາກນີ້, ລັດຖະບານກໍ່ຍັງມີຍຸດທະສາດການພັດທະນາມະນຸດ, ວິທະຍາສາດ ແລະເຕັກໂນໂລຢີ ແລະໂຄງລ່າງພື້ນຖານ, ພ້ອມກັນນັ້ນກໍ່ຕ້ອງຮັບປະກັນຄວາມໝັ້ນຄົງທາງດ້ານເສດຖະກິດ ແລະການເມືອງ.

**ກ່ອງທີ 4.7: ການຫັນເປັນອຸດສາຫະກໍາ ແລະທັນສະໄໝ - ວິໄສທັດ ຮອດປີ 2030**

**ວິໄສທັດ:**

ຮອດປີ 2030, ສປປ ລາວ ຕ້ອງຫລຸດພົ້ນອອກຈາກປະເທດລາຍໄດ້ປານກາງຕໍ່າ ແລະກ້າວໄປສູ່ປະເທດລາຍໄດ້ປານກາງສູງ ໂດຍຄາດຄະເນວ່າ GNI ຕໍ່ຫົວຄົນຈະເພີ່ມຂຶ້ນປະມານສີ່ເທົ່າຈາກປີ 2015 ແລະ ຈະຕ້ອງບັນລຸໄດ້ SDGs. ນອກຈາກນັ້ນ, ກໍ່ຍັງຄາດວ່າ ສປປ ລາວ ຈະເປັນປະເທດເສດຖະກິດທີ່ອີງໃສ່ຄວາມຮູ້.

**ບັນດາຈຸດປະສົງ ແລະເປົ້າໝາຍ:**

- ຮັບປະກັນໄດ້ການພັດທະນາແບບຍືນຍົງ ແລະ ເລັ່ງການເຕີບໂຕທາງເສດຖະກິດ;
- ບັນລຸໄດ້ບັນດາເປົ້າໝາຍຂອງຍຸດທະສາດການພັດທະນາໄລຍະຍາວ ໂດຍສະເພາະແມ່ນຍຸດທະສາດການພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025), ວິໄສທັດ 2030 ແລະແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020);
- ຫລຸດພົ້ນອອກຈາກສະຖານະພາບ LDC ໃນປີ 2020 ຫຼືປະມານໃກ້ໆນັ້ນ.

**ວິທີການຕ່າງໆ:**

- ກໍານົດບັນດາບຸລິມະສິດ, ທ່າແຮງ ແລະກາລະໂອກາດຕ່າງໆສໍາລັບກາຫັນເປັນອຸດສາຫະກໍາ ແລະຫັນເປັນທັນສະໄໝ;
- ສ້າງບັນດາເສົາຄໍ້າສໍາລັບການພັດທະນາ ແລະການເຕີບໂຕທາງເສດຖະກິດ;
- ສະເໜີນະໂຍບາຍ ແລະໂຄງສ້າງສະຖາບັນສໍາລັບການຫັນເປັນອຸດສາຫະກໍາ ແລະຫັນເປັນທັນສະໄໝ;
- ສະເໜີບັນດາມາດຕະການໃນການຈັດຕັ້ງປະຕິບັດຍຸດທະສາດ.

**ສິ່ງສໍາຄັນສໍາລັບການບັນລຸການຫັນເປັນອຸດສາຫະກໍາ ແລະຫັນເປັນທັນສະໄໝ ຮອດປີ 2030**

- GDP ຫຼາຍກວ່າ 7% ຕໍ່ປີ; ເພື່ອໃຫ້ບັນລຸໄດ້ຄາດໝາຍນີ້ແມ່ນຕ້ອງຮັບປະກັນການລົງທຶນໃຫ້ໄດ້ປະມານ 30% ຂອງ GDP, ລວມທັງການລົງທຶນຂອງລັດ, FDI ແລະການລົງທຶນຂອງພາກເອກະຊົນພາຍໃນ;
- ສຸມໃສ່ບັນດາຂະແໜງການບຸລິມະສິດ ເຊັ່ນ: ບັນດາເສົາຄໍ້າຂອງເສດຖະກິດລາວ ຄື: ພະລັງງານໄຟຟ້ານໍ້າຕົກ ແລະພະລັງງານໄຟຟ້າຖ່ານຫີນ, ການປຸງແຕ່ງກະສິກໍາ, ບໍ່ແຮ່ ແລະການປຸງແຕ່ງຜະລິດຕະພັນແຮ່ທາດ, ເຄື່ອງອາໄຫຼ່, ອຸດສາຫະກໍາປະກອບ, ການທ່ອງທ່ຽວ ແລະການຫັນເປັນທັນສະໄໝໃນຂະແໜງກະສິກໍາ;

- ຫັນເປັນທັນສະໄໝໃນຂະແໜງການໂທລະຄົມມະນາຄົມ, ການຂົນສົ່ງ ແລະລະບົບການຕິດຕໍ່ສື່ສານ, ລະບົບສາທາລະນາສຸກ ແລະການສຶກສາ, ລະບົບທະນາຄານ ແລະການຄ້າ, ທັງປັບປຸງຍົກລະດັບຄຸນນະພາບຂອງການປົກຄອງ
- ພັດທະນາຕົວເມືອງ ແລະແລວເສດຖະກິດຕ່າງໆ, ແລະບັນດາສິ່ງອຳນວຍຄວາມສະດວກດ້ານໂຄງລ່າງພື້ນຖານອື່ນໆ
- ພັດທະນາຊັບພະຍາກອນມະນຸດ ພັດທະນາແຮງງານສີມື, ນັກວິຊາວະກອນຜູ້ຊ່ຽວຊານທາງດ້ານເຕັກນິກ, ນັກຄຸ້ມຄອງບໍລິຫານ, ນັກຄົ້ນຄວ້າ ແລະນັກວິທະຍາສາດ, ທັງລົງທຶນເຂົ້າໃສ່ການຄົ້ນຄວ້າ ແລະການພັດທະນາ (R&D) ໃຫ້ຫຼາຍຂຶ້ນ;
- ພັດທະນາ ແລະຍົກສູງຄວາມສາມາດຂອງສະຖາບັນຄົ້ນຄວ້າຕ່າງໆ.

**ບັນດາມາດຕະການໃນການຈັດຕັ້ງປະຕິບັດ:**

- ຮັບຮອງເອົານະໂຍບາຍ (ຍຸດທະສາດ) ພາຍໃນປີ 2016;
- ເຊື່ອມສານເອົາຍຸດທະສາດ, ວິໄສທັດ (ຮອດປີ 2030) ເຂົ້າຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີສະບັບປັດຈຸບັນ ແລະ ສະບັບທີ່ຕາມມາ
- ສະແຫວງຫາການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນໄດ້ເສຍ (takeholders);
- ພັດທະນາການຮ່ວມມືກັບຄູ່ຮ່ວມພັດທະນາອື່ນໆ.

## ຂະແໜງພະລັງງານ

ກຳລັງຕິດຕັ້ງພະລັງງານໄຟຟ້າຂອງບັນດາໂຄງການໄຟຟ້ານ້ຳຕົກໃນປີ 2015 ແມ່ນ 3.2446 ເມກາວັດ (MW) ຊຶ່ງສາມາດກະຈາຍພະລັງງານໄຟຟ້າໄດ້ 50.278,91 ກິໂລວັດໂມງ (kWh) ຜ່ານຊ່ວງໄລຍະປີ 2011-2015 ໂດຍແຕ່ລະປີແມ່ນເພີ່ມຂຶ້ນປະມານ 30%. ໃນນັ້ນ, ກຳລັງຕິດຕັ້ງພະລັງງານໄຟຟ້າ 390,7 MW (11,6%) ແມ່ນເປັນເຈົ້າກຳມະສິດໂດຍລັດຖະບານ, ສ່ວນທີ່ເຫຼືອ 2.853,9 MW (88.83%) ແມ່ນເປັນເຈົ້າກຳມະສິດໂດຍຂະແໜງການເອກະຊົນ (ຕົ້ນຕໍແມ່ນຕ່າງປະເທດ). ພະລັງງານໄຟຟ້າທີ່ຊົມໃຊ້ຢູ່ພາຍໃນແມ່ນມີພຽງແຕ່ 20% (83% ຂອງຈຳນວນບ້ານແມ່ນມີໄຟຟ້າໃຊ້ແລ້ວ), ສ່ວນທີ່ເຫຼືອອີກ 80% ນັ້ນແມ່ນເປັນສິ່ງອອກ. ລັດຖະບານໄດ້ເຊັນສັນຍາກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດຫຼາຍກວ່າ 71 ໂຄງການ ດ້ວຍກຳລັງຕິດຕັ້ງເພີ່ມອີກ 21.668 MW. ໃນຈຳນວນນີ້ແມ່ນໄດ້ມີການສຶກສາຄວາມເປັນໄປໄດ້ແລ້ວ 31 ໂຄງການ, ໃນນັ້ນໄດ້ມີເຮັດສັນຍາແລ້ວ 21 ໂຄງການ ໂດຍ 19 ໂຄງການແມ່ນຢູ່ພາຍໃຕ້ສັນຍາສຳປະທານ (ແລະຢູ່ໃນຂະບວນການກໍ່ສ້າງ). ຕາມການຄາດຄະເນແລ້ວແມ່ນມີປະມານ 13.000 ຄົວເຮືອນ, ຢູ່ໃນປະມານ 320 ບ້ານ ແມ່ນໄດ້ເຊື່ອມຕໍ່ກັບພະລັງງານໄຟຟ້າແສງຕາເວັນ. ສະຖານີພະລັງງານໄຟຟ້າຊີວະພາບທີ່ນຳໃຊ້ເຫຍື່ອອ້ອຍເພື່ອການຜະລິດ ຊຶ່ງມີກຳລັງຕິດຕັ້ງ 3 MW ໄດ້ສຳເລັດແລ້ວໃນປີ 2011 ຢູ່ແຂວງສະຫວັນນະເຂດ ແລະຄາດວ່າຈະເພີ່ມຂຶ້ນເປັນ 8 MW ໃນທ້າຍປີ 2015.[107] ໂຮງງານຜະລິດໄຟຟ້າອີຕານອນ (ethanol) ຢູ່ແຂວງອັດຕະປື ໄດ້ເປີດດຳເນີນການ ໃນປີ 2013 ຊຶ່ງສາມາດສະໜອງເຊື້ອໄຟໃຫ້ແກ່ໂຮງງານໄຟຟ້າໄດ້ 30 MW.

ຄວາມຍາວຂອງສາຍສົ່ງໄຟຟ້າຢູ່ໃນທົ່ວປະເທດແມ່ນມີຢູ່ 47.242,08 ກມ. ໃນນັ້ນ, ສາຍສົ່ງໄຟຟ້າແຮງສູງ 230 KV ເພື່ອເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງແມ່ນມີຄວາມຍາວ 481,4 ແລະມີປະມານ 4.868 ກມຂອງສາຍສົ່ງໄຟຟ້າ 115 KV ທີ່ເຊື່ອມຕໍ່ກັບສາຍສົ່ງແຫ່ງຊາດຢູ່ໃນປະເທດ, ລວມທັງການຕິດຕັ້ງໄຟຟ້າຊົນນະບົດ.

## ອຸດສາຫະກໍາປຸງແຕ່ງກະສິກໍາ:

ໃນຊ່ວງໄລຍະປີ 2001-2012, ອຸດສາຫະກໍາປຸງແຕ່ງກະສິກໍາໄດ້ມີການຂະຫຍາຍຕົວຢ່າງໄວວາເຊັ່ນ: ການສີເຂົ້າໄດ້ເພີ່ມຂຶ້ນ 1,6 ເທົ່າ, ການຜະລິດຊີ້ນເພີ່ມຂຶ້ນ 9,2 ເທົ່າ, ນໍ້າຕານເພີ່ມຂຶ້ນ 22,8 ເທົ່າ, ເສັ້ນເຝີ-ໝີ່-ລ້ອນ-ເຂົ້າປຽກເພີ່ມຂຶ້ນ 12 ເທົ່າ, ຜະລິດຕະພັນເຂົ້າຈີ່-ເຂົ້າໜົມເພີ່ມຂຶ້ນ 6 ເທົ່າ, ເບຍເພີ່ມຂຶ້ນ 4,6 ເທົ່າ, ເຫຼົ້າເພີ່ມຂຶ້ນ 3,2 ເທົ່າ ແລະກາເຟເພີ່ມຂຶ້ນ 3 ເທົ່າ. ໃນຊ່ວງໄລຍະປີ 2008-2012, ແປ້ງມັນຕົ້ນເພີ່ມຂຶ້ນ 3,7 ເທົ່າ ແລະແປ້ງສາລີເພີ່ມຂຶ້ນ 12,2 ເທົ່າ. ໃນປີ 2012, ແມ່ນພວກເຮົາມີ 9.561 ໂຮງງານທີ່ປຸງແຕ່ງກະສິກໍາຢູ່ໃນທົ່ວປະເທດ, ກວມເອົາປະມານ 74% ຂອງອາຫານສໍາເລັດຮູບທັງໝົດ; ສ່ວນທີ່ເຫຼືອນັ້ນແມ່ນປຸງແຕ່ງຢູ່ນອກໂຮງງານ (ຕົ້ນຕໍແມ່ນຢູ່ເຮືອນ). ຢູ່ໃນຂະແໜງການໂຮງງານນີ້, ສ່ວນຫຼາຍແມ່ນເປັນໂຮງສີເຂົ້າ (ຊຶ່ງມີຢູ່ 9.174 ຫົວໜ່ວຍ), ຕໍ່ມາແມ່ນໂຮງງານນໍ້າກ້ອນ (203), ໂຮງງານເສັ້ນເຝີ-ໝີ່-ລ້ອນ-ເຂົ້າປຽກ (41), ໂຮງງານຂ້າສັດ (28), ໂຮງງານອົບສາລີ-ໂຮງງານນໍ້າຕານ-ໂຮງງານນໍ້າໝາກໄມ້ (27), ແລະ ໂຮງງານຕັດເສັ້ນເຝີ-ໝີ່-ລ້ອນ-ເຂົ້າປຽກ (26) ແຕ່ສ່ວນຫຼາຍໃນຈໍານວນນີ້ແມ່ນເປັນໂຮງງານຂະໜາດນ້ອຍ.

## ຂະແໜງການອຸດສາຫະກໍາການຜະລິດ

ຂະແໜງອຸດສາຫະກໍາການຜະລິດຢູ່ໃນ ສປປ ລາວ ແມ່ນມີການເຊື່ອມໂຍງເບື້ອງຫຼັງທີ່ຍັງອ່ອນນ້ອຍ ໂດຍສະເພາະແມ່ນການເຊື່ອມໂຍງກັບຂະແໜງການບໍລິການ. ການສະໜອງທາງດ້ານການເງິນທີ່ບໍ່ພຽງພໍ ແລະການບໍລິການດ້ານໂທລະຄົມມະນາຄົມສື່ສານທີ່ກວມເອົາພຽງແຕ່ 3% ຂອງປັດໄຈການບໍລິການທັງໝົດທີ່ນໍາເຂົ້າສູ່ອຸດສາຫະກໍາການຜະລິດນັ້ນ ອາດຈະເປັນຂໍ້ຫຍຸ້ງຍາກ (ຈໍາກັດ) ຕໍ່ກັບຄວາມຫຼາກຫຼາຍ ແລະການປັບປຸງຍົກລະດັບຂອງວິສາຫະກິດ ທັງເປັນການກີດກັນເຂົາເຈົ້າໃນການກ້າວໄປສູ່ຕ່ອງໂສ້ລາຄາ.

ມູນຄ່າເພີ່ມພາຍໃນ (49%) ຢູ່ໃນການສົ່ງອອກຈາກຂະແໜງອຸດສາຫະກໍາການຜະລິດຂອງ ສປປ ລາວ ແມ່ນຕໍ່າກວ່າລະດັບທີ່ຢູ່ໃນປະເທດອື່ນໆ ເຊັ່ນ: ບັງກະລາເດັດ (88%), ກໍາປູເຈຍ (76%), ໄທ (80%) ແລະຫວຽດນາມ (64%). ຢູ່ໃນ ສປປ ລາວ, ແມ່ນມີບັນດາກິດຈະກໍາອຸດສາຫະກໍາການຜະລິດພຽງຈໍານວນໜ້ອຍໜຶ່ງເທົ່ານັ້ນ (ໂລຫະ, ເລື່ອຍໄມ້, ຕັດຫຍິບ, ອາຫານ ແລະເຄື່ອງດື່ມ, ອາຫານສໍາເລັດຮູບ) ທີ່ປະສົບຜົນສໍາເລັດໃນການສ້າງມູນຄ່າເພີ່ມພາຍໃນທັງໃນທາງກົງ ຫຼືທາງອ້ອມ ໂດຍຜ່ານຄວາມຕ້ອງການປັດໄຈນໍາເຂົ້າສູ່ການຜະລິດຂອງເຂົາເຈົ້າ ຊຶ່ງອັນນີ້ແມ່ນແຕກຕ່າງຈາກສະຖານະການຢູ່ໃນປະເທດຕ່າງໆ ເຊັ່ນ: ໄທ ແລະຫວຽດນາມທີ່ມີຖານອຸດສາຫະກໍາການຜະລິດທີ່ຫຼາກຫຼາຍກວ່າ.[108]

ຢູ່ໃນ ສປປ ລາວ, 51% ຂອງມູນຄ່າເພີ່ມອຸດສາຫະກໍາການຜະລິດທີ່ສ້າງຂຶ້ນຢູ່ພາຍໃນປະເທດ ແມ່ນປະກອບຂຶ້ນດ້ວຍປັດໄຈນໍາເຂົ້າຕ່າງໆຈາກຂະແໜງການຂັ້ນຕົ້ນ ຊຶ່ງບໍ່ແມ່ນມາຈາກຕົວອຸດສາຫະກໍາການຜະລິດເອງ ຫຼືມາຈາກຂະແໜງການກະສິກໍາ ຫຼືການບໍລິການ. ອັນນີ້ແມ່ນມີອັດຕາສ່ວນທີ່ສູງກວ່າຢູ່ໃນປະເທດບັງກະເດັດ, ກໍາປູເຈຍ, ເນປານ, ໄທ ແລະຫວຽດນາມ ຊຶ່ງເຂົາເຈົ້າທັງໝົດແມ່ນມີການເຊື່ອມໂຍງລະຫວ່າງຂະແໜງການກະສິກໍາ ແລະອຸດສາຫະກໍາການຜະລິດທີ່ເຂັ້ມແຂງກວ່າ. ໃນເລື່ອງດັ່ງກ່າວນີ້, ປະເທດທີ່ມີຄວາມໃກ້ຄຽງກັບ ສປປ ລາວ ນັ້ນແມ່ນ ມົງໂກລີ ຢູ່ທີ່ 48%.

ຄວາມອ່ອນແອຂອງການເຊື່ອມໂຍງເບື້ອງຫຼັງ ແລະເບື້ອງໜ້າຂອງຂະແໜງການອຸດສາຫະກໍາການຜະລິດນັ້ນ ແມ່ນບໍ່ໄດ້ຊ່ວຍສົ່ງເສີມການພັດທະນາ SMEs ເລີຍ. ການເຂົ້າເຖິງບັນດາຂະແໜງການບໍລິການພາຍໃນສະເພາະທີ່ບໍ່ສະເໝີພາບກັນນັ້ນ ປະກົດວ່າເປັນປັດໄຈຂໍ້ຫຍຸ້ງຍາກສໍາລັບອຸດສາຫະກໍາການຜະລິດ ແລະມັນສະເໜີໃຫ້ມີບ່ອນ (ຫ້ອງ) ສໍາລັບນະໂຍບາຍ (ກ່ອງທີ 5.2). ຕົວຢ່າງ: ການຂາດແຄນທາງດ້ານການເງິນຂອງວິສາຫະກິດອຸດສາຫະກໍາການຜະລິດ ແມ່ນເລື່ອງທີ່ກ່ຽວພັນກັບຄວາມເໝາະສົມດ້ານການບັນຊີ ແລະສິນເຊື່ອຂອງເຂົາເຈົ້າ. ບັນດາປະເທດກໍາລັງພັດທະນາ ເຊັ່ນ: ບັງກະລາເດັດ ແລະອິນເດຍ ໄດ້ປະສົບຜົນສໍາເລັດໃນການພັດທະນາບັນດາອົງການຈັດລະດັບສິນເຊື່ອທີ່ມີເປົ້າໝາຍໃສ່ SMEs.

## ອຸດສາຫະກຳທ່ອງທ່ຽວ

ຕາມການສຳຫຼວດໃນປີ 2013, ສປປ ລາວ ມີແຫຼ່ງທ່ອງທ່ຽວຢູ່ 1.807 ແຫ່ງໃນທົ່ວປະເທດ ໃນນັ້ນ, 1.042 ແມ່ນເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, 501 ເປັນແຫຼ່ງທ່ອງທ່ຽວວັດທະນະທຳ ແລະ 264 ເປັນແຫຼ່ງທ່ອງທ່ຽວປະຫວັດສາດ. ໃນຈຳນວນແຫຼ່ງທ່ອງທ່ຽວທັງໝົດນັ້ນແມ່ນໄດ້ມີການສຳຫຼວດແລ້ວຈຳນວນ 141 ແຫ່ງ, 230 ແຫ່ງ ແມ່ນກຳລັງດຳເນີນການສຳຫຼວດຢູ່ ແລະ 1.436 ແຫ່ງ ແມ່ນຍັງບໍ່ທັນມີການສຳຫຼວດເທື່ອ. ໃນປີ 2012, ມີນັກທ່ອງທ່ຽວປະມານ 3,3 ລ້ານຄົນ ທີ່ໄດ້ເຂົ້າມາໃນ ສປປ ລາວ ຊຶ່ງເພີ່ມຂຶ້ນປະມານ 4 ເທົ່າຂອງປີ 2001. ລາຍຮັບຈາກການທ່ອງທ່ຽວໃນປີ 2012 ແມ່ນປະມານ 513 ໂດລາສະຫະລັດ, ເພີ່ມຂຶ້ນປະມານ 3,9 ເທົ່າຂອງປີ 2001.

ເຖິງແມ່ນວ່າຂະແໜງການທ່ອງທ່ຽວໄດ້ມີການຂະຫຍາຍຕົວສູງກໍ່ຕາມ ແຕ່ມັນກໍ່ຍັງເປັນການທ່ອງທ່ຽວທີ່ບໍ່ມີມູນຄ່າສູງ. ການໃຊ້ຈ່າຍຕໍ່ຫົວຄົນຂອງນັກທ່ອງທ່ຽວແມ່ນຍັງຕ່ຳຫຼາຍ ຊຶ່ງຢູ່ໃນໄລຍະຫຼາຍປີຜ່ານມານີ້ ແມ່ນມີການໃຊ້ຈ່າຍຂອງນັກທ່ອງທ່ຽວປະມານ 50 ໂດລາສະຫະລັດ ຕໍ່ຄົນຕໍ່ມື້. ອັນທີ່ພາໃຫ້ເປັນແນວນີ້, ກໍ່ຍ້ອນວ່ານັກທ່ອງທ່ຽວຈຳນວນຫຼາຍແມ່ນມາຈາກປະເທດທີ່ມີຊາຍແດນຕິດກັນ ແລະມາທ່ອງທ່ຽວແລ້ວກັບພາຍໃນມື້ດຽວກັນເປັນຕົ້ນແມ່ນມາຈາກໄທ ແລະຈີນ. ນອກຈາກນັ້ນ, ສປປ ລາວ ແມ່ນມີການສະໜອງທາງເລືອກຂອງການທ່ອງທ່ຽວທີ່ມີມູນຄ່າສູງນັ້ນໜ້ອຍຫຼາຍ.

ການທ່ອງທ່ຽວແມ່ນຖືກນຳໃຊ້ເປັນເຄື່ອງມືສຳລັບການພັດທະນາເສດຖະກິດຢູ່ໃນທົ່ວໂລກ. ສະນັ້ນ, ນະໂຍບາຍຂອງລັດຖະບານ ແມ່ນສາມາດເຮັດບົດບາດທີ່ສຳຄັນໃນການພັດທະນາຂະແໜງການທ່ອງທ່ຽວຂອງປະເທດ. ພຽງແຕ່ຢູ່ໃນຊ່ວງໄລຍະເວລາໜ້ອຍກວ່າ 2 ທົດສະວັດເທົ່ານັ້ນ, ປະເທດເຄບເວີດ ກໍ່ສາມາດຂ້າມຜ່ານສິ່ງກີດຂວາງດ້ານສະພາບແວດລ້ອມ ແລະພູມສັນຖານຂອງປະເທດໄດ້ເປັນຢ່າງດີ, ພ້ອມທັງສາມາດປ່ຽນແປງເສດຖະກິດຂອງມັນໄດ້ເປັນຢ່າງດີ (ກ່ອງທີ 5.3).

## ອຸດສາຫະກຳບໍ່ແຮ່

ໃນຊ່ວງໄລຍະປີ 2001-2012, ລັດຖະບານໄດ້ອະນຸມັດຈຳນວນ 95 ໂຄງການບໍ່ແຮ່ ດ້ວຍເງິນລົງທຶນປະມານ 5,5 ຕື້ໂດລາສະຫະລັດ ຊຶ່ງເພີ່ມຂຶ້ນເຖິງ 30 ເທົ່າ ໃນຊ່ວງໄລຍະປີ 1989-2000. ໃນນັ້ນ, 13 ໂຄງການແມ່ນ ແຮ່ເຫຼັກ, 12 ໂຄງການ ແມ່ນແຮ່ຄຳ ແລະທອງແດງ, 11 ໂຄງການ ແມ່ນແຮ່ຫີນປູນ, 10 ໂຄງການແມ່ນແຮ່ກົ່ວ, 5 ໂຄງການ ແມ່ນແຮ່ເກືອກາລີ, 3 ໂຄງການ ແມ່ນແຮ່ຫີນກາວ, 1 ໂຄງການ ແມ່ນແຮ່ຖ່ານຫີນລິກໄນ ແລະ 35 ໂຄງການ ແມ່ນແຮ່ປະເພດອື່ນໆ. ດັ່ງນັ້ນ, ສິ່ງທີ່ຕາມມາຈຶ່ງເຮັດໃຫ້ການຜະລິດດ້ານບໍ່ແຮ່ມີການເຕີບໂຕຢ່າງໄວວາ. ໃນລະຫວ່າງປີ 2011 ແລະ 2004, ການຜະລິດຫີນປູນໄດ້ເພີ່ມຂຶ້ນເຖິງ 1.988 ເທົ່າ, ທອງແດງ ເພີ່ມຂຶ້ນ 8 ເທົ່າ, ຫີນກາວເພີ່ມຂຶ້ນ 2,9 ເທົ່າ ແລະຖ່ານຫີນລິກໄນເພີ່ມຂຶ້ນ 1,7 ເທົ່າ.

## ອຸດສາຫະກຳຜະລິດວັດສະດຸກໍ່ສ້າງ

ໃນປີ 2011, ແມ່ນພວກເຮົາມີໂຮງງານຊີມັງ 8 ແຫ່ງທີ່ມີກຳລັງການຜະລິດ 2,4 ລ້ານໂຕນຕໍ່ປີ ຊຶ່ງຕອບສະໜອງຄວາມຕ້ອງການພາຍໃນໄດ້ທັງໝົດປະມານ 60-70%. ນອກຈາກນັ້ນ, ກໍ່ຍັງມີເຕົາເຜົາດິນຈີ່ 376 ເຕົາ, ມີໂຮງປະສົມຊີມັງ 64 ແຫ່ງ, ໂຮງງານຊີມັງບຼັອກ 53 ແຫ່ງ, ໂຮງງານອຸປະກອນມຸງຫຼັງຄາ 37 ແຫ່ງ, ໂຮງງານຫຼໍ່ເສົາເຮືອນ, ເສົາຮົ້ວ ແລະເສົາໄຟຟ້າ 37 ແຫ່ງ, ໂຮງງານເຫຼັກເສັ້ນ-ເຫຼັກແທ່ງ 17 ແຫ່ງ ແລະໂຮງງງານຫຼອມເຫຼັກ 16 ແຫ່ງ. ໃນລະຫວ່າງປີ 2001 ແລະ 2011, ການຜະລິດຊີມັງແມ່ນເພີ່ມຂຶ້ນ 23,2 ເທົ່າ, ດິນຈີ່ເພີ່ມຂຶ້ນ 12,6 ເທົ່າ, ຊີມັງບຼັອກເພີ່ມຂຶ້ນ 9,4 ເທົ່າ, ເຫຼັກເສັ້ນ-ແທ່ງເພີ່ມຂຶ້ນ 4,1 ເທົ່າ, ເສົາໄຟຟ້າເພີ່ມຂຶ້ນ 2,7 ເທົ່າ ແລະອຸປະກອນມຸງຫຼັງຄາເພີ່ມຂຶ້ນ 2,6 ເທົ່າ.

## ສະຫລຸບ

ອັດຕາການເຕີບໂຕຂອງ GDP ແມ່ນເຫັນວ່າມີຢູ່ສູງ ແລະການເຕີບໂຕຂອງຂະແໜງການທີ່ຄາດຄະເນໄວ້ຢູ່ໃນວິໄສທັດ 2030 ກໍ່ເຫັນວ່າຈະສາມາດປະຕິບັດໄດ້. ເຖິງຢ່າງໃດກໍ່ຕາມ, ດັ່ງທີ່ໄດ້ກ່າວໄວ້ຢູ່ໃນພາກຕ່າງໆຜ່ານມານັ້ນ ເຫັນວ່າອັດຕາຄວາມໄວຂອງການຫລຸດຜ່ອນຄວາມທຸກຍາກແມ່ນຍັງຊ້າຢູ່ ຖ້າທຽບກັບອັດຕາການເຕີບໂຕທາງເສດຖະກິດຂອງ ສປປ ລາວ ແລະ ຄວາມບໍ່ສະເໝີພາບກໍ່ເພີ່ມຂຶ້ນ. ອັນນີ້ໄດ້ຊີ້ໃຫ້ເຫັນວ່າ ການເຕີບໂຕຂອງ ສປປ ລາວ ແມ່ນບໍ່ທົ່ວເຖິງ ແລະມັນບໍ່ໄດ້ສ້າງການຈ້າງງານກ່ຽວກັບການຜະລິດທີ່ພຽງພໍ. ມັນມີການຫັນເປັນເຕັກໂນໂລຢີຢູ່ໃນທ້ອງຖິ່ນໜ້ອຍຫຼາຍ ແລະການເອື່ອຍອີງໃສ່ຜູ້ຊ່ຽວຊານທີ່ມາຈາກຕ່າງປະເທດ ແລະບັນດາບໍລິສັດ ແມ່ນຍັງມີຢູ່ສູງ.

ເພາະສະນັ້ນ, ບັນດາຍຸດທະສາດໄລຍະຍາວ ແມ່ນມີຄວາມຈຳເປັນເພື່ອເຮັດໃຫ້ການຫັນເປັນອຸດສາຫະກຳມີຄວາມທົ່ວເຖິງ ແລະມີການຈ້າງງານກ່ຽວກັບການຜະລິດທີ່ເຂັ້ມຂຸ້ນຫຼາຍຂຶ້ນ, ແລະເພື່ອເຮັດໃຫ້ເຕັກໂນໂລຢີທີ່ທັນສະໄໝເກີດຂຶ້ນຢູ່ພາຍໃນທ້ອງຖິ່ນ ແລະມີການຄວບຄຸມຫຼາຍຂຶ້ນ ໂດຍສະເພາະແມ່ນເພື່ອຊຸກຍູ້ສົ່ງເສີມໃຫ້ບໍລິສັດຕ່າງປະເທດໄດ້ມີການຖ່າຍໂອນເຕັກໂນໂລຢີ, ການຄຸ້ມຄອງ ແລະສີມືດ້ານການຕະຫຼາດໃຫ້ແກ່ຄົນລາວ. ສິ່ງດັ່ງກ່າວນີ້ແມ່ນຈະຕ້ອງຖືກຈັດຕັ້ງປະຕິບັດໂດຍບັນດາຍຸດທະສາດຕ່າງໆເພື່ອພັດທະນາທຶນມະນຸດ ໂດຍສະເພາະແມ່ນສີມືຕ່າງໆດ້ານການຄຸ້ມຄອງ ແລະການເປັນຜູ້ປະກອບການພາຍໃນ, ພ້ອມກັນນັ້ນກໍ່ຕ້ອງມີຂະແໜງການເງິນທີ່ດີເພື່ອລະດົມເງິນຝາກພາຍໃນ ແລະຊຸກຍູ້ສົ່ງເສີມການລົງທຶນພາຍໃນ.

ເສດຖະກິດທີ່ມີຄວາມຫຼາກຫຼາຍນັ້ນ ແມ່ນມີຄວາມຈຳເປັນຫຼາຍຢູ່ໃນສະພາບທີ່ໄດ້ຮັບການສະໜັບສະໜູນດ້ວຍການປັບປຸງຍົກລະດັບທຶນມະນຸດຢ່າງເປັນປະຈຳ. ການສ້າງສີມື, ລວມທັງການຮູ້ໜັງສື ແລະຮູ້ຄຳນວນຂັ້ນພື້ນຖານກໍ່ມີຄວາມຈຳເປັນຫຼາຍ, ຖ້າຫາກ ສປປ ລາວ ຕ້ອງການກ້າວໄປສູ່ການບໍລິການ ແລະການຜະລິດອຸດສາຫະກຳການຜະລິດສະໄໝໃໝ່. ຕົວຢ່າງ: ເພື່ອປັບປຸງຍົກລະດັບຢູ່ໃນຂະແໜງການຕໍ່າແຜ່ນ ແລະຕັດຫຍິບ ແມ່ນບັນດາບໍລິສັດຈຳເປັນຈະຕ້ອງເພິ່ງພາອາໄສກຳລັງແຮງງານທີ່ສາມາດເຮັດການອອກແບບ, ການບັນຊີ ແລະການຕະຫຼາດດ້ວຍຕົນເອງ.

ທ້າຍທີ່ສຸດ, ແມ່ນຈະຕ້ອງມີບັນດາຍຸດທະສາດ ເພື່ອຫຼີກລ່ຽງການຫັນເປັນອຸດສາຫະກຳ ແລະຫັນເປັນທັນສະໄໝທີ່ຈະສ້າງຄວາມເສຍຫາຍໃຫ້ແກ່ສິ່ງແວດລ້ອມ, ນຳໄປສູ່ການຫັນເປັນຕົວເມືອງທີ່ບໍ່ມີຄວາມຍືນຍົງ, ສ້າງຄວາມບໍ່ສະເໝີພາບ ແລະສິ່ງຜົນກະທົບຕໍ່ຄວາມອ່ອນໄຫວທາງດ້ານວັດທະນະທຳສັງຄົມ. ດັ່ງນັ້ນ, ບັນດາຍຸດທະສາດກ່ຽວກັບການຫັນເປັນອຸດສະກຳ ແລະການຫັນເປັນທັນສະໄໝ ແມ່ນມີຄວາມຈຳເປັນທີ່ຈະຕ້ອງໄດ້ເຊື່ອມສານເຂົ້າກັບບັນຍຸດທະສາດກ່ຽວກັບ SDGs ຂອງ ສປປ ລາວ ຊຶ່ງປະສົບປະການຈາກ MDGs ຂອງ ສປປ ລາວ ແມ່ນສາມາດເປັນປະໂຫຍດຫຼາຍຕໍ່ກັບເລື່ອງນີ້.

## ໄພພິບັດທາງທຳມະຊາດຕ່າງໆ

ການວິໄຈກ່ຽວກັບການເກີດຂຶ້ນຂອງໄພພິບັດທາງທຳມະຊາດ (ນ້ຳຖ້ວມ ແລະແຫ້ງແລ້ງ) ຢູ່ໃນຊ່ວງໄລຍະລະຫວ່າງປີ 1966- 2002 ໄດ້ສະແດງໃຫ້ເຫັນວ່າ ໃນແຕ່ລະປີຢູ່ໃນບາງພາກຂອງປະເທດ ແມ່ນໄດ້ຮັບຜົນກະທົບຈາກໄພແຫ້ງແລ້ງ ຫຼືນ້ຳຖ້ວມຢ່າງໃດຢ່າງໜຶ່ງ ຫຼືທັງສອງຢ່າງໃນປີດຽວກັນ. ຕົວຢ່າງ: ຢູ່ໃນເຂດພາກກາງ ແລະພາກໃຕ້ທີ່ເປັນເຂດປູກເຂົ້າຫຼາຍນັ້ນ, ຈາກການສຶກສາພົບວ່າໃນ 36 ປີຜ່ານມາ ແມ່ນມີເຖິງ 32 ປີ ທີ່ເກີດໄພນ້ຳຖ້ວມ ຫຼືໄພແຫ້ງແລ້ງຢູ່ໃນບາງເຂດຂອງພາກ.[109] ການສຳຫຼວດກະສິກຳຂອງລາວໃນປີ 2010-2011 ໄດ້ລາຍງານວ່າ ຊາວບ້ານຢູ່ໃນຫຼາຍກວ່າ 80% ຂອງຈຳນວນບ້ານ ບອກວ່າເຂົາເຈົ້າໄດ້ປະເຊີນກັບໄພພິບັດທາງທຳມະຊາດໃນບາງຮູບແບບ.

ພູມສັນຖານຂອງ ສປປ ລາວ ສ່ວນຫຼາຍແມ່ນເປັນຄື້ນ (ພູສະຫຼັບຮ່ອມ) ແລະຫຼາຍເຂດແມ່ນມັກຈະເກີດໄພແຫ້ງແລ້ງ, ນ້ຳຖ້ວມ ແລະດິນຖະຫຼົ່ມ. ປັດໄຈໜຶ່ງທີ່ມີສ່ວນຊ່ວຍກິດຈະກຳຂອງມະນຸດນັ້ນ ແມ່ນການຄົງຢູ່ຂອງ

ການເຮັດໄຮ່ປູກເຂົ້າ. ການເຮັດໄຮ່ໃສ່ດິນທີ່ມີຄຸນນະພາບໜ້ອຍດຽວ ແລະການຕັດໄມ້ແບບຜິດກົດໝາຍ ແມ່ນເຮັດໃຫ້ປະເທດມັກຈະເກີດໄພພິບັດທາງທຳມະຊາດເພີ່ມຂຶ້ນ.

**ຕາຕະລາງທີ 4.5: ບັນດາບ້ານທີ່ເຮັດໄຮ່ ແລະຜົນກະທົບຂອງມັນ**

| ທີ່ຕັ້ງ/ປະເພດ ຂອງບ້ານ | ບັນດາບ້ານທີ່ເຮັດໄຮ່ (ປູກເຂົ້າ) ເລື່ອນລອຍ ແລະໄດ້ຮັບຜົນກະທົບຈາກການເຊື່ອມໂຊມຂອງດິນ (%) | | | |
|---|---|---|---|---|
| | ໄຮ່ເລື່ອນລອຍ | ການເຊື່ອມໂຊມຂອງດິນ | | |
| | | ໜ້ອຍ | ປານກາງ | ຮຸນແຮງ |
| ພາກເໜືອ | 21,0 | 23,1 | 9,3 | 1,1 |
| ພາກກາງ | 17,8 | 17,7 | 6,1 | 1,0 |
| ພາກໃຕ້ | 11,8 | 19,9 | 10,1 | 1,9 |
| **ສປປ ລາວ** | **18,0** | **20,5** | **8,3** | **1,2** |
| ຊົນນະບົດມີຖະໜົນ | 16,0 | 19,9 | 8,0 | 1,0 |
| ຊົນນະບົດບໍ່ມີຖະໜົນ | 27,4 | 23,3 | 9,5 | 1,7 |
| ທົ່ງພຽງ | 5,4 | 17,1 | 4,6 | 0,6 |
| ພູສູງ | 28,7 | 24,9 | 10,9 | 1,3 |
| ພູພຽງ | 19,5 | 18,4 | 9,7 | 1,7 |
| ເຂດປະສົມ | 14,3 | 10,7 | 7,1 | n.a. |

ແຫຼ່ງຂໍ້ມູນ: ການສຳຫຼວດກະສິກຳຂອງລາວ, 2010-2011.

ຕາຕະລາງທີ 4.5 ສະແດງໃຫ້ເຫັນວ່າ ມັນຍັງມີການເຮັດໄຮ່ (ປູກເຂົ້າ) ແບບເລື່ອນລອຍຢູ່ໃນຫຼາຍບ່ອນໃນທົ່ວປະເທດ ຊຶ່ງສອດຄ່ອງກັບອັນທີ່ວ່າມັນມີການເຊື່ອມໂຊມຂອງດິນ (ດິນເຊາະເຈື່ອນ).[110] ໃນປັດຈຸບັນນີ້, ການເຊື່ອມໂຊມຂອງດິນແມ່ນມີຢູ່ໜ້ອຍຫາປານກາງ ແຕ່ວ່າມັນກໍ່ສາມາດຮຸນແຮງຂຶ້ນໄດ້ ຖ້າຫາກວ່າການເຮັດໄຮ່ຍັງສືບຕໍ່ມີຢູ່ຕໍ່ໄປ. ສະນັ້ນ, ການຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍ ແມ່ນເປັນບຸລິມະສິດສູງສຸດຂອງລັດຖະບານ. ທ້າຍທີ່ສຸດ, ການຕັດໄມ້ແບບຜິດກົດໝາຍ ແມ່ນເປັນຜົນກະທົບທີ່ສ້າງຄວາມເສຍຫາຍຢ່າງຮ້າຍແຮງ.[111]

ຕາມຄວາມເຂົ້າໃຈຂອງຊຸມຊົນບ້ານກ່ຽວກັບການປ່ຽນແປງຂອງດິນຟ້າອາດ, ເຖິງແມ່ນວ່າບໍ່ມີການຢືນຢັນຕາມຫຼັກວິທະຍາສາດກໍ່ຕາມ ແຕ່ກໍ່ໄດ້ສະແດງໄວ້ຢູ່ໃນຕາຕະລາງທີ 4.6 ຈຸດທີ່ໜ້າສົນໃຈນັ້ນແມ່ນການຕົກລົງທີ່ບໍ່ເປັນເອກະພາບກັນ ໂດຍທີ່ນາຍບ້ານສ່ວນໃຫຍ່ໄດ້ບອກວ່າຝົນເລີ່ມຕົກໜ້ອຍລົງ ແລະມາຊ້າກ່ອນລະດູການ ຖ້າສົມທຽບກັບແຕ່ກ່ອນທີ່ຕົກຫຼາຍ ແລະມາຕາມລະດູການ.

ສປປ ລາວ ຈະຕ້ອງຕໍ່ສູ້ກັບການປ່ຽນແປງຂອງດິນຟ້າອາກາດຢູ່ໃນພື້ນທີ່ພູມມິປະເທດຂອງຕົນເອງ ໂດຍຜ່ານການປົກປັກຮັກສາປ່າໄມ້, ສ່ວນສຳຄັນຕ່າງໆຂອງແມ່ນ້ຳລຳທານ ແລະການກະສິກຳນິເວດ.[112] ລັດຖະບານຄວນຈະຕ້ອງໄດ້ພິຈາລະນາບາງລະບຽບຫຼັກການງ່າຍໆ ດັ່ງນີ້:

- ຢຸດຕິການເຮັດໄຮ່ເລື່ອນລອຍຢ່າງຊິ້ນເຊີງ
- ຢຸດຕິການຕັດໄມ້ທີ່ຜິດກົດໝາຍຢ່າງຂາດຕົວ ແລະເລີ່ມຕົ້ນການປູກໄມ້ຄືນໃໝ່
- ເພີ່ມຄວາມຂະຫຍັນຂັນແຂງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃນເວລາທີ່ມີການພິຈາລະນາຮັບຮອງບັນດາໂຄງການພະລັງງານໄຟຟ້ານ້ຳຕົກ ແລະບໍ່ແຮ່

- ສ້າງຕັ້ງລະບົບເຕືອນໄພລ່ວງໜ້າຢູ່ໃນລະດັບພື້ນທີ່ ສໍາລັບການເກີດນໍ້າຖ້ວມ ແລະອື່ນໆ
- ຕັ້ງບັນດາມາດຕະຖານສໍາລັບການກໍ່ສ້າງຕຶກອາຄານ ແລະທີ່ຢູ່ອາໄສ ກ່ຽວກັບຮາກຖານ, ວັດສະດຸກໍ່ສ້າງ ແລະອື່ນໆ ເພື່ອຮັບປະກັນວ່າພວກມັນຈະບໍ່ຖືກທໍາລາຍງ່າຍຈາກໄພນໍ້າຖ້ວມ ຫຼືການເກີດຂຶ້ນຂອງໄພພິບັດທາງທໍາມະຊາດອື່ນໆ
- ສ້າງສິ່ງອໍານວຍຄວາມສະດວກຕ່າງໆສໍາລັບການໃຫ້ຄໍາແນະນໍາແກ່ຊາວກະສິກອນ ກ່ຽວກັບວ່າຈະປູກຫຼືບໍ່ປູກຫຍັງ ຕາມເຫດການທີ່ມີການຄາດຄະເນກ່ຽວກັບໄພນໍ້າຖ້ວມ ຫຼືໄພແຫ້ງແລ້ງໄວ້ແລ້ວ (ຕົວຢ່າງ: ພືດຕ່າງໆທີ່ມີຄວາມຕ້ານທານຕໍ່ກັບໄພແຫ້ງແລ້ງ, ພືດທີ່ສາມາດປູກໄດ້ຫຼັງເຫດການໄພພິບັດທາງທໍາມະຊາດ ແລະອື່ນໆ)
- ສ້າງຖະໜົນຫົນທາງຢູ່ໃນທຸກໆຂົງເຂດໃຫ້ສໍາເລັດຢ່າງໄວວາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການເຄື່ອນຍ້າຍຜູ້ຄົນໄດ້ຢ່າງທັນການ ໃນເມື່ອເກີດຜົນກະທົບຈາກໄພພິບັດທາງທໍາມະຊາດຢ່າງຮ້າຍແຮງ.

**ຕາຕະລາງທີ 4.6: ຄວາມຄິດເຫັນຂອງບັນດານາຍບ້ານກ່ຽວກັບເລື່ອງຂອງຝົນຕົກ**

| ຂົງເຂດ/ບ້ານ/ປະເພດດິນ | ລະດູຝົນໃນຊຸມປີມໍ່ໆຜ່ານມານີ້ | | |
|---|---|---|---|
| | **ແຫ້ງກວ່າເກົ່າ** | **ປົກກະຕິຄືເກົ່າ** | **ຊຸ່ມຊື່ນກວ່າແຕ່ເກົ່າ** |
| | 80,5 | 10,8 | 8,7 |
| | 71,7 | 16,6 | 11,7 |
| | 87,1 | 5,9 | 7 |
| **ສປປ ລາວ** | **78,5** | **12,0** | **9,5** |
| ຂົງເຂດ/ບ້ານ/ປະເພດດິນ | Recent years' wet season timing | | |
| | **ມາກ່ອນປົກກະຕິ** | **ມາຕາມເວລາປົກກະຕິ** | **ມາຊ້າກ່ອນປົກກະຕິ** |
| ພາກເໜືອ | 14,4 | 12,3 | 73,3 |
| ພາກກາງ | 13,3 | 15,9 | 70,8 |
| ພາກໃຕ້ | 13,0 | 9,0 | 78,0 |
| **ສປປ ລາວ** | **13,7** | **13,0** | **73,3** |
| ຂົງເຂດ/ບ້ານ/ປະເພດດິນ | **ລະດູຝົນ, 2010** | | |
| | **ແຫ້ງກວ່າເກົ່າ** | **ປົກກະຕິຄືເກົ່າ** | **ຊຸ່ມຊື່ນກວ່າແຕ່ເກົ່າ** |
| ພາກເໜືອ | 81,7 | 8,2 | 10,1 |
| ພາກາງ | 74,0 | 10,9 | 15,1 |
| ພາກໃຕ້ | 87,6 | 4,4 | 8,0 |
| **ສປປ ລາວ** | **80,0** | **8,4** | **11,5** |

# ຂໍ້ສະຫລຸບ ແລະນະໂຍບາຍທີ່ຕາມມາ

## ການພັດທະນາກະສິກໍາ

ເຫດຜົນທີ່ສໍາຄັນອັນໜຶ່ງສໍາລັບຄວາມບອບບາງທາງເສດຖະກິດທີ່ ສປປ ລາວ ກໍາລັງປະເຊີນຢູ່ນັ້ນ ແມ່ນຄວາມຫຼ້າຫຼັງຂອງການກະສິກໍາ ຊຶ່ງມັນໄດ້ປະກອບສ່ວນເຮັດໃຫ້ເກີດມີຊ່ອງວ່າງຢູ່ໃນຄ່າຂອງ GNI ແລະ HAI ອີກດ້ວຍ. ມັນມີຫຼາຍໆເຫດຜົນສໍາລັບຄວາມຫຼ້າຫຼັງຂອງການກະສິກໍາ ເຊັ່ນ: ການຖືຄອງທີ່ດິນຂະໜາດນ້ອຍ ແລະຫຼາຍຕອນເກີນໄປ (ບໍ່ຕິດຕໍ່ກັນ), ມີລະດັບຊົນລະປະທານຂ້ອນຂ້າງຕໍ່າ (ມີໜ້ອຍ), ມີການນໍາໃຊ້ປັດໄຈນໍາເຂົ້າ

ສູ່ການຜະລິດທີ່ທັນສະໄໝ ແລະໃຫ້ຜົນຜະລິດສູງໜ້ອຍ, ມີຂໍ້ຫຍຸ້ງຍາກ ແລະຂໍ້ຈໍາກັດໃນການໃຫ້ການບໍລິການສົ່ງເສີມຕ່າງໆ, ມີການໃຫ້ສິນເຊື່ອແກ່ຟາມບໍ່ພຽງພໍ ແລະລາຄາຜົນຜະລິດຈາກຟາມບໍ່ມີຄວາມແນ່ນອນ ແຕ່ລັດຖະບານກໍ່ໄດ້ມີການຮັບຮອງເອົາບັນດາຍຸດທະສາດສໍາລັບການພັດທະນາຂະແໜງການກະສິກໍາແລ້ວ. ອີງຕາມການວິໄຈຢູ່ໃນພາກນີ້, ການປະຕິບັດການທີ່ເປັນບຸລິມະສິດຕໍ່ໄປນີ້ ແມ່ນໄດ້ໃຫ້ຂໍ້ແນະນໍາສໍາລັບການພິຈາລະນາຂອງລັດຖະບານ ໂດຍສະເພາະແມ່ນຢູ່ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ມີດັ່ງນີ້:

- ຫັນປ່ຽນ ຫຼື ແກ້ໄຂເພື່ອບໍ່ໃຫ້ການລົງທຶນຂອງລັດເຂົ້າໃນຂະແໜງການກະສິກໍາມີການຫລຸດລົງອີກ

- ດໍາເນີນການເລັ່ງດ່ວນເລື່ອງເອກະສານທີ່ດິນ ໃນການອອກໃບຕາດິນທີ່ຈໍາເປັນໃຫ້ແກ່ຊາວກະສິກອນ ເພື່ອຮັບປະກັນໃຫ້ແກ່ເຂົາເຈົ້າເຂົ້າເຖິງທະນາຄານ ແລະສິ່ງອໍານວຍຄວາມສະດວກຕ່າງໆໄດ້. ໃນຂະນະດຽວກັນກັບທີ່ດໍາເນີນການເອກະສານດ້ານທີ່ດິນນັ້ນ ແມ່ນຈະຕ້ອງເຮັດໃຫ້ເປັນໄປໄດ້ໃນການດໍາເນີນມາດຕະການຕ່າງໆສໍາລັບການລວມຕອນດິນຕ່າງໆທີ່ບໍ່ເປັນເສດຖະກິດນັ້ນເຂົ້າກັນນໍາ

- ພິຈາລະນາເລື່ອງຊົນລະປະທານ ແລະວິທີການຄຸ້ມຄອງນໍ້າຄືນໃໝ່. ການຊົນລະປະທານບໍ່ຈໍາເປັນວ່າຕ້ອງເປັນເຄື່ອນຂະໜາດໃຫຍ່ຢ່າງດຽວ; ມັນຮຽກຮ້ອງຕ້ອງການໃຫ້ມີການປະເມີນລະບົບຊົນລະປະທານປະເພດຕ່າງໆທີ່ມີຄວາມເໝາະສົມ, ການສ້າງຕັ້ງອົງກອນຊາວກະສິກອນ ແລະການມອບໝາຍຄວາມຮັບຜິດ ຊອບຕ່າງໆໃຫ້ແກ່ອົງການຈັດຕັ້ງຂອງຊາວກະສິກອນ ກ່ຽວກັບເລື່ອງການແຈກຢາຍແບ່ງປັນນໍ້າ, ການເກັບຄ່າທໍານຽມຕ່າງໆ, ດູແລຮັກສາໂຄງສ້າງການຄຸ້ມຄອງນໍ້າ, ແລະເລື່ອງອື່ນໆອີກ. ຂະຫຍາຍການຊົນລະປະທານ ດ້ວຍການປະສົມປະສານບັນດາວິທີການຊົນລະປະທານຂະໜາດນ້ອຍ, ຂະໜາດກາງ ແລະຂະໜາດໃຫຍ່

- ຂະຫຍາຍບັນດາເຕັກໂນໂລຢີທີ່ທັນສະໄໝດ້ານແນວພັນຝຸ່ນ; ນໍາເອົາວິທີການຕ່າງໆກ່ຽວລະບົບຟາມ ແລະວິທີການການປະດິດສ້າງໃໝ່ເຂົ້າມາໃຊ້ ເຊັ່ນ: SRI ແລະອື່ນໆ ໂດຍຜ່ານການສົ່ງເສີມກະສິກໍາທີ່ເຊື່ອມໂຍງແລະເປັນອັນໜຶ່ງອັນດຽວກັນ.

- ເພີ່ມຕື່ມບັນດາມາດຕະການຕ່າງໆສໍາລັບການເງິນເພື່ອທຸກຄົນ (ທຸກຄົນເຂົ້າເຖິງໄດ້) ເພື່ອປັບປຸງການບໍລິການທາງການເງິນໃຫ້ແກ່ຊາວກະສິກອນ ຊຶ່ງອັນນີ້ຈະຕ້ອງລວມທັງຂອບເຂດຂອງການບໍລິການທາງການເງິນ ເຊັ່ນ: ການຝາກປະຢັດ, ສິນເຊື່ອ ແລະການປະກັນໄພ

- ດໍາເນີນບັນດາມາດຕະການຕ່າງໆ ເຊັ່ນ: ການສະໜັບສະໜູນຊ່ວຍເຫຼືອເພື່ອການເຕີບໂຕຂອງອົງການຈັດຕັ້ງຊາວກະສິກອນ ເພື່ອເຊື່ອມຕໍ່ບັນດາຊາວກະສິກອນເຂົ້າກັບຕະຫຼາດ ແລະປັບປຸງພະລັງອໍານາດໃນການຕໍ່ລອງກັບບັນດາພໍ່ຄ້າ, ໂຮງສີເຂົ້າ ແລະບໍລິສັດຜູ້ຜະລິດສິນຄ້າ.

## ການຫັນເປັນອຸດສາຫະກໍາ

ຍຸດທະສາດການຫັນເປັນທັນສະໄໝຢູ່ໃນວິໄສທັດ 2030 ປະກົດວ່າຍັງຂາດອົງປະກອບດ້ານການພັດທະນາມະນຸດ. ຄໍາຢືນຢັນຢູ່ໃນວິໄສທັດ 2030 ເຫັນວ່າເປັນການວາງເປົ້າໝາຍທາງວັດຖຸທີ່ສູງ ແຕ່ວ່າມັນກໍ່ຍັງບໍ່ມີຄວາມແຈ່ມແຈ້ງເທົ່າທີ່ຄວນກ່ຽວກັບເປົ້າໝາຍຕ່າງໆຕາມທິດທາງພັດທະນາຊັບພະຍາກອນມະນຸດ. ເພື່ອຫັນເປັນອຸດສາຫະກໍາແມ່ນເຫັນວ່າ ສປປ ລາວ ຈໍາເປັນຕ້ອງມີບັນດາຍຸດທະສາດດັ່ງນີ້:

- ເພີ່ມທະວີການເຊື່ອມໂຍງກັບຫຼັງ ແລະໄປໜ້າໃຫ້ຫຼາຍຂຶ້ນ

- ຂະຫຍາຍການຈ້າງງານໃນການຜະລິດ

- ພັດທະນາສີມືການເປັນຜູ້ປະກອບການແຫ່ງຊາດ

- ເຮັດໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງມີການເຕີບໂຕ

- ຖ່າຍໂອນເຕັກໂນໂລຢີທີ່ທັນສະໄໝ ແລະຫັນເປັນເຕັກໂນໂລຢີຂອງພາຍໃນທ້ອງຖິ່ນ.

## ໄພພິບັດທາງທຳມະຊາດຕ່າງໆ

ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ປະກົດວ່າມີຄວາມສຳຄັນຫຼາຍສຳລັບການຫລຸດຜ່ອນການປະເຊີນກັບໄພພິບັດທາງທຳມະຊາດ. ປ່າໄມ້, ທີ່ດິນ ແລະນ້ຳ ແມ່ນມີຄວາມຈຳເປັນສຳລັບການປ້ອງກັນ ເພື່ອຈຸດປະສົງຂອງການຫລຸດຜ່ອນໄພພິບັດທາງທຳມະຊາດ. ບັນດາຍຸດທະສາດທີ່ສຳຄັນຕ່າງໆ ແມ່ນມີດັ່ງນີ້:

- ຢຸດຕິການຖາງປ່າເຮັດໄຮ່ໂດຍຊິ້ນເຊີງ

- ຢຸດຕິການຕັດໄມ້ແບບຜິດກົດໝາຍຢ່າງຊິ້ນເຊີງ

- ດຳເນີນການປະເມີນຜົນກະທົບດ້ານສິ່ງແວດລ້ອມຢ່າງຮີບດ່ວນ ກ່ຽວກັບບັນດາໂຄງການພະລັງງານໄຟຟ້ານ້ຳຕົກ ແລະບໍ່ແຮ່

- ຕັ້ງມາດຕະຖານສຳລັບການກໍ່ສ້າງ, ລະບົບເຕືອນໄພລ່ວງໜ້າ ແລະມາດຕະການດ້ານຊົນລະປະທານອື່ນໆ.

ການພັດທະນາການກະສິກຳ ແລະການຫັນເປັນອຸດສາຫະກຳ ແມ່ນຈະຕ້ອງໄດ້ສືບຕໍ່ດຳເນີນການຕໍ່ໄປໃນເວລາດຽວກັນ, ແກ່ດຶງຊຶ່ງກັນ ແລະກັນ ເພື່ອພ້ອມກັນຂະຫຍາຍຕົວເພີ່ມຂຶ້ນ. ບັນດາຍຸດທະສາດການພັດທະນາປະເທດແມ່ນຈະຕ້ອງໄດ້ເອົາໃຈໃສ່ບັນດາການເຊື່ອມໂຍງກັນລະຫວ່າງອຸດສາຫະກຳ ແລະກະສິກຳ ໃນເລື່ອງຕ່າງໆກ່ຽວກັບຄວາມຮັບຮູ້ດ້ານການສະໜອງອາຫານ ເຊັ່ນ: ສິນຄ້າຄ່າຈ້າງ (ສິນຄ້າແຮງງານ) ສຳລັບຜູ້ຄົນທີ່ກຳລັງເຮັດວຽກຢູ່ໃນອຸດສາຫະກຳ, ການສົ່ງອອກສິນຄ້າກະສິກຳທີ່ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າເພື່ອການຫັນເປັນອຸດສາຫະກຳ, ການສະໜອງແຮງງານຈາກຂະແໜງກະສິກຳໄປສູ່ຂະແໜງອຸດສາຫະກຳ, ສ່ວນເກີນຂອງຂະແໜງກະສິກຳທີ່ປະກອບສ່ວນຕໍ່ການລົງທຶນຢູ່ໃນອຸດສາຫະກຳ ແລະລາຍໄດ້ຂອງຂະແໜງກະສິກຳທີ່ປະກອບເປັນຄວາມຕ້ອງການສຳລັບສິນຄ້າອຸດສາຫະກຳ. ໃນດ້ານນີ້, ແມ່ນປະສົບປະການຂອງປະເທດຍີ່ປຸ່ນໄດ້ໃຫ້ຄວາມຮູ້ແກ່ພວກເຮົາ ຊຶ່ງການປ່ຽນແປງການກະສິກຳດ້ວຍການເພີ່ມຜະລິດຕະພາບຂອງເຂົາເຈົ້າ ແມ່ນໄດ້ເກີດຂຶ້ນຢູ່ໃນສະພາບເງື່ອນໄຂຂອງໂຄງສ້າງແບບປະເພນີນິຍົມ ກ່ຽວກັບການຜະລິດກະສິກຳຂະໜາດນ້ອຍ ດ້ວຍການປະສົມປະສານການພັດທະນາກະສິກຳ ແລະອຸດສາຫະກຳເຂົ້າດ້ວຍກັນ.

ທ້າຍທີ່ສຸດ, ບັນດາຍຸດທະສາດກ່ຽວກັບການພັດທະນາການກະສິກຳ, ການຫັນເປັນອຸດສາຫະກຳ ແລະການຫລຸດຜ່ອນໄພພິບັດທາງທຳມະຊາດ ຈະຕ້ອງຖືກເຊື່ອມສານເຂົ້າກັບບັນດາຍຸດທະສາດຂອງ ສປປ ລາວ ເພື່ອໃຫ້ບັນລຸໄດ້ບັນດາເປົ້າໝາຍການພັດທະນາແບບຍືນຍົງຂອງໂລກທີ່ຖືເອົາຜູ້ຄົນເປັນໃຈກາງ. ການພັດທະນາມະນຸດແມ່ນເຄື່ອງມືທີ່ສຳຄັນຫຼາຍຢູ່ໃນທີ່ນີ້ ແລະແມ່ນເປົ້າໝາຍໜຶ່ງຢູ່ໃນຕົວຂອງມັນເອງ.

## ເອກະສານຊ້ອນທ້າຍ 4.1: ການວິໄຈທາງດ້ານສະຖານະພາບ

### ພູມສັນຖານ ແລະການເຕີບໂຕ

ກິດຈະກຳທີ່ເປັນປະເພນີນິຍົມຢູ່ໃນ ສປປ ລາວ ແມ່ນການຜະລິດກະສິກຳ. ຫຼັງຈາກທີ່ມີການຈັດຕັ້ງປະຕິບັດກົນໄກເສດຖະກິດໃໝ່ (NEM) ໃນປີ 1986, ອັດຕາສ່ວນຂອງຂະແໜງອຸດສາຫະກຳ ແລະການບໍລິການຢູ່ໃນ GDP ໄດ້ເລີ່ມມີການເພີ່ມຂຶ້ນ. ຂະແໜງກະສິກຳໄດ້ຄ່ອຍໆມີການຫັນເປັນທັນສະໄໝຫຼາຍຂຶ້ນ ໂດຍທີ່ສ່ວນໃຫຍ່ຂອງມັນແມ່ນຍັງສືບຕໍ່ດຳເນີນການຕາມຮູບແບບກະສິກຳຂະໜາດນ້ອຍ ແລະກຸ້ມຕົນເອງ. ຢູ່ໃນບາງພາກຂອງປະ

ເຫດເຫັນວ່າຍັງມີການສືບຕໍ່ວິທີການເຮັດໄຮ່ປູກເຂົ້າແບບເລື່ອນລອຍຢູ່.

ເນື້ອທີ່ດິນທັງໝົດຂອງ ສປປ ລາວ ແມ່ນມີຢູ່ປະມານ 23,7 ລ້ານເຮັກຕາ ໃນນັ້ນ, ຄາດວ່າມີປະມານ 1/5 (ປະມານ 4,5-5 ລ້ານເຮັກຕາ) ແມ່ນເປັນດິນທີ່ມີຄວາມເໝາະສົມສໍາລັບການປູກຝັງ. ເນື້ອທີ່ປູກພືດຕົວຈິງໃນປີ 2010-2011 ແມ່ນມີຢູ່ປະມານ 1,9 ລ້ານເຮັກຕາ ຊຶ່ງເຫັນວ່າຍັງໜ້ອຍກວ່າເຄິ່ງໜຶ່ງຂອງເນື້ອທີ່ດິນທີ່ເໝາະສົມສໍາລັບການປູກຝັງ ແຕ່ກໍ່ເຫັນວ່າມັນຫຼາຍຂຶ້ນກວ່າປີ 1998-1999 ທີ່ມີຢູ່ປະມານ 1,0 ລ້ານເຮັກຕາ. ເຖິງຢ່າງໃດກໍ່ຕາມ, ຜົນຕາມມາທາງດ້ານນິເວດວິທະຍາຂອງການຂະຫຍາຍເນື້ອທີ່ດິນປູກຝັງນີ້ ແມ່ນຍັງບໍ່ທັນເປັນທີ່ຮັບຮູ້ໄດ້ເທື່ອ. ອີງຕາມການສໍາຫຼວດກະສິກໍາໃນປີ 2010-2011 ເຫັນວ່າທີ່ດິນທີ່ນໍາໃຊ້ເຂົ້າໃນການປູກພືດຕາມລະດູການຊົ່ວຄາວ (ເຂົ້າ, ສາລີ, ພືດຜັກ ແລະອື່ນໆ) ແມ່ນມີຢູ່ປະມານ 1,2 ລ້ານເຮັກຕາ; ຊຶ່ງໃນນັ້ນ, ໃຊ້ເຂົ້າໃນການປູກເຂົ້າແມ່ນຫຼາຍກວ່າໝູ່ (>80% ຂອງເນື້ອທີ່ດິນທີ່ຢູ່ພາຍໃຕ້ການປູກພືດຕາມລະດູການ ຊຶ່ງການສຸມໃສ່ການປູກພືດປະເພດຕ່າງໆນີ້ຢ່າງຫຼວງຫຼາຍ ແມ່ນຈະເພີ່ມຄວາມສ່ຽງຕໍ່ກັບຄວາມຫຼົ່ມເຫຼວຂອງການຜະລິດພືດ (ໃນເມື່ອມີເຫດການໄພພິບັດທາງທໍາມະຊາດເກີດຂຶ້ນ). ຄວາມເອົາຈິງເອົາຈັງ (ຄວາມເຂັ້ມຂຸ້ນ) ໃນການປູກຝັງຂອງປີ 2010-2011 ແມ່ນຄາດຄະເນວ່າມີຢູ່ປະມານ 86% ຊຶ່ງຕໍ່າກວ່າປີ 1998-1999 ໜ້ອຍໜຶ່ງ. ເນື້ອທີ່ດິນທີ່ໃຊ້ເຂົ້າໃນການປູກຝັງໄດ້ເພີ່ມຂຶ້ນປະມານ 6% (ຫຼາຍຂຶ້ນໃນແຕ່ລະປີ) ລະຫວ່າງ ປີ 1998-1999 ແລະ2010-2011 ຊຶ່ງເພີ່ມຂຶ້ນປະມານ 80% ໃນໜຶ່ງທົດສະວັດ.

ພູມສັນຖານຂອງປະເທດ ແມ່ນປະກອບດ້ວຍພູສູງ, ພູພຽງ ແລະທົ່ງພຽງ ຊຶ່ງອູ່ເຂົ້າທີ່ສໍາຄັນຂອງປະເທດແມ່ນຢູ່ໃນເຂດທົ່ງພຽງທີ່ມີທັງນາຊົນລະປະທານ ແລະນານໍ້າຟ້າ. ສໍາລັບເຂດພູພຽງ (ພູພຽງບໍລະເວນ) ທີ່ຢູ່ໃນພາກໃຕ້ແມ່ນມີການປູກກາເຟ ແລະຊາດຶ່ມ. ເຂດພູສູງ ຫຼືເຂດພູດອຍແມ່ນມີຢູ່ຫຼາຍໃນເຂດພາກເໜືອ ແລະພາກຕາເວັນອອກ ຊຶ່ງເປັນເຂດທີ່ຍັງມີການເຮັດໄຮ່ປູກເຂົ້າເລື່ອນລອຍຢູ່.

ໃນຂະນະທີ່ການປູກພືດທົ່ວໄປ ແລະການລ້ຽງສັດເພີ່ມຂຶ້ນປະມານ 3% (ຫຼາຍຂຶ້ນໃນແຕ່ລະປີ) ຈາກປີ 1998-1999 ຫາປີ 2010-2011, ຜະລິດຕະພາບຂອງການຜະລິດເຂົ້າໂດຍສະເລ່ຍ (ອັດຕາຜົນຜະລິດ) ໃນປີ 2010-2011 ແມ່ນຍັງບໍ່ມີການປ່ຽນແປງຕັ້ງແຕ່ປີ 2002-2003 ເປັນຕົ້ນມາ ຊຶ່ງຢູ່ທີ່ປະມານ 2,2 ໂຕນ/ເຮັກຕາ(ຄາດຄະເນຈາກ LECS-3), ນັ້ນແມ່ນໝາຍເຖິງຜະລິດຕະພັນທັງໝົດຂອງການຜະລິດເຂົ້າຢູ່ໃນຊຸມປີໃກ້ໆຜ່ານມານີ້ ແມ່ນໄດ້ພຽງແຕ່ປະມານ 2,6 ລ້ານໂຕນ/ປີ ເທົ່ານັ້ນ (ໃນປີ 2012-2013, ແຫຼ່ງຂໍ້ມູນ: LECS-5) ຊຶ່ງອັນນັ້ນກໍ່ແມ່ນຍ້ອນມີການເພີ່ມເນື້ອທີ່ຜະລິດເຂົ້າຂຶ້ນເທົ່ານັ້ນ, ສ່ວນຜະລິດຕະພາບຂອງການຜະລິດເຂົ້າແມ່ນຍັງເໝືອນເດີມ. ໃນດ້ານຫຼັກການແລ້ວ, ການຂະຫຍາຍເນື້ອທີ່ການປູກພືດຕ່າງໆ (ດິນເທົ່າທີ່ດິນທີ່ບໍ່ແມ່ນການປູກເຂົ້າໄຮ່)ເປັນມາດຕະການ ຫຼືຂັ້ນຕອນທີ່ຍິນດີຕ້ອນຮັບໄດ້. ອັນນີ້ແມ່ນພາກສ່ວນໜຶ່ງກ່ຽວກັບນະໂຍບາຍ ແຕ່ບັນຫາຕ່າງໆກໍ່ຈະເພີ່ມຂຶ້ນ ໃນເມື່ອເກີດມີການຂະຫຍາຍຂອບເຂດທີ່ດິນປູກຝັງ ແລະຜົນຜະລິດຕໍ່ກັບອັດຕາສ່ວນຂອງຜູ້ອອກແຮງງານ (ຜະລິດຕະພາບຂອງງານ) ແລະດ້ວຍເຫດນີ້ລາຍໄດ້ຂອງຊາວກະສິກອນຈຶ່ງບໍ່ເພີ່ມຂຶ້ນ. ໃນລະຫວ່າງປີ 1998-99 ແລະ 2010-2011, ຈໍານວນຄົວເຮືອນທີ່ເຮັດການກະສິກໍາໄດ້ເພີ່ມຂຶ້ນ 17% ຊຶ່ງເຫັນວ່າມັນເພີ່ມຂຶ້ນຫຼາຍກວ່າການເພີ່ມຂຶ້ນຂອງຜົນຜະລິດພືດ ແລະສັດລ້ຽງ.

ທ້າຍທີ່ສຸດ, ເນື້ອທີ່ຂອງປ່າໄມ້ ແລະເນື້ອທີ່ການປູກພືດໄລຍະຍາວຢູ່ໃນຂະແໜງການຄົວເຮືອນຊາວກະສິກອນ (ອີງຕາມການສໍາຫຼວດກະສິກໍາໃນປີ 2010,2011) ແມ່ນມີຢູ່ປະມານ 247.000 ເຮັກຕາ ຫຼືປະມານ 13% ຂອງເນື້ອທີ່ດິນກະສິກໍາທັງໝົດຢູ່ໃນຂະແໜງການຄົວເຮືອນຊາວກະສິກອນ. ເຖິງຢ່າງໃດກໍ່ຕາມ, ການປະກອບສ່ວນຂອງມັນຕໍ່ກັບຜົນຜະລິດຈາກການກະສິກໍາ ແລະກິດຈະກໍາຕ່າງໆທີ່ກ່ຽວຂ້ອງ ແມ່ນມີໜ້ອຍກວ່າ 10% ແລະຕໍ່າກວ່າຂະແໜງການປູກຝັງ (ຕາມທິດທາງກຸ້ມຕົນເອງເປັນສ່ວນໃຫຍ່).

**ການນໍາໃຊ້ເຕັກໂນໂລຢີການກະສິກໍາ**

ອັນທີ່ຈຳເປັນໃນການຍົກລະດັບອັດຕາຜົນຜະລິດ ແລະລາຍໄດ້ໃນຂະແໜງກະສິກຳໃຫ້ສູງຂຶ້ນນັ້ນ ແມ່ນການເຮັດໃຫ້ມີເມັດພັນພືດທີ່ຫຼາກຫຼາຍ ແລະໃຫ້ຜົນຜະລິດສູງ (HYV) ດ້ວຍການນຳໃຊ້ຝຸ່ນ ຮ່ວມກັບການນຳໃຊ້ຊົນລະປະທານທີ່ໄດ້ຮັບການຄວບຄຸມ ຢູ່ໃນເຂດດິນຟ້າອາກາດການກະສິກຳ ເຊັ່ນ: ຢູ່ໃນ ສປປ ລາວ.

ເມັດພັນ HYV ແມ່ນໄດ້ມີການປູກຢູ່ໃນປະມານ 45% ຂອງເຂດການປູກຝັງໃນທົ່ວປະເທດ. ນັ້ນສະແດງໃຫ້ເຫັນວ່າເຂດພື້ນທີ່ທີ່ໄດ້ນຳໃຊ້ເມັດພັນ HYV ເຂົ້າໃນການເພາະປູກນັ້ນ ແມ່ນມີຢູ່ໜ້ອຍກວ່າ 50% ຊຶ່ງອັນນີ້ໄດ້ຊີ້ບອກວ່າ ຍັງອີກດົນກ່ອນທີ່ເມັດພັນເຫຼົ່ານີ້ຈະສາມາດຂະຫຍາຍໄປປົກຄຸມເອົາດິນກະສິກຳທັງໝົດໃນຂອບເຂດທົ່ວປະເທດໄດ້. ມັນມີຄວາມແຕກຕ່າງຢ່າງກວ້າງຂວາງຢູ່ໃນບັນດາແຂວງໃນທົ່ວປະເທດ: ຢູ່ໃນແຂວງຈຳປາສັກ ແມ່ນມີຫຼາຍກວ່າ 81% ຂອງເຂດພື້ນທີ່ການປູກຝັງທີ່ໄດ້ນຳໃຊ້ເມັດພັນ HYV ແລ້ວ, ໃນຂະນະທີ່ຢູ່ໃນ ແຂວງຊຽງຂວາງ ແມ່ນມີພຽງແຕ່ 1,6% ເທົ່ານັ້ນ.

ການນຳໃຊ້ຝຸ່ນແມ່ນມີຢູ່ກວ້າງຂວາງຫຼາຍໃນປັດຈຸບັນນີ້: ມີຢູ່ປະມານ 42,1% ຂອງຊາວກະສິກອນ (ບໍ່ແມ່ນທີ່ດິນສຳລັບການປູກຝັງ) ທີ່ໄດ້ນຳໃຊ້ຝຸ່ນເຄມີຢູ່ໃນທີ່ດິນຂອງເຂົາເຈົ້າ ໃນປີ 2010-2011 ຊຶ່ງຖ້າສົມທຽບກັບປີ 1998-1999 ແມ່ນມີພຽງແຕ່ 28,5% ເທົ່ານັ້ນ. ອີກອັນໜຶ່ງ, ແມ່ນມັນມີຄວາມແຕກຕ່າງກັນຫຼາຍຢູ່ໃນລະຫວ່າງຂົງເຂດຕ່າງໆຂອງປະເທດ: ຊາວກະສິກອນຢູ່ໃນເຂດພາກໃຕ້ ແລະພາກກາງ ແມ່ນໄດ້ນຳໃຊ້ຝຸ່ນຫຼາຍກວ່າຢູ່ໃນພາກເໜືອເຖິງສາມເທົ່າ. ນອກຈາກນັ້ນ, ປະລິມານຂອງການນຳໃຊ້ຝຸ່ນກໍ່ຍັງມີໜ້ອຍຢູ່ ເຊັ່ນ: ໃນປີ 2010-2011 ແມ່ນເຂົາເຈົ້ານຳໃຊ້ຝຸ່ນໂດຍສະເລ່ຍກໍ່ມີພຽງແຕ່ 10 ກິໂລກຣາມ/ເຮັກຕາ ຊຶ່ງສົມທຽບກັບຫວຽດນາມ ແມ່ນຫຼາຍກວ່າ 290 ກິໂລກະຣາມ/ເຮັກຕາ ແລະປະເທດໄທກໍ່ຫຼາຍກວ່າ 150 ກິໂລກະຣາມ/ເຮັກຕາ. ທ້າຍທີ່ສຸດ, ຝຸ່ນຊີວະພາບແມ່ນໄດ້ຮັບຜົນປະໂຫຍດຫຼາຍໃນປັດຈຸບັນນີ້ ຊຶ່ງມີຢູ່ປະມານ 40,9% ຂອງຊາວກະສິກອນ ແມ່ນກຳລັງນຳໃຊ້ຝຸ່ນນີ້ຢູ່ ໃນປີ 2010-2011, ຖ້າສົມທຽບກັບປີ 1998-1999 ແມ່ນມີພຽງແຕ່ 33,3% ເທົ່ານັ້ນ.

ສປປ ລາວ ແມ່ນມີທ່າແຮງຫຼາຍທີ່ສຸດໃນການຫັນເປັນທັນສະໄໝຢູ່ໃນຂະແໜງການກະສິກຳ. ເຖິງຢ່າງໃດກໍ່ຕາມ, ການມີຂະໜາດຂອງຕອນດິນທີ່ນ້ອຍ ແລະແບ່ງເປັນຫຼາຍຕອນເກີນໄປນັ້ນ ແມ່ນຈະເຮັດໃຫ້ການຂະຫຍາຍຊົນລະປະທານ ແລະການນຳໃຊ້ເຄື່ອງກົນຈັກກະສິກຳມີຄວາມຫຍຸ້ງຍາກ ຊຶ່ງມັນຈະຈຳກັດການຫັນເປັນອຸດສາຫະກຳໃນຂະແໜງກະສິກຳໄປໃນຕົວ.

**ການຕະຫຼາດ ແລະການກຸ້ມຕົນເອງ**

ໂດຍປະເພນີແລ້ວ, ບັນດາຊາວກະສິກອນຢູ່ໃນ ສປປ ລາວ ແມ່ນເປັນຊາວກະສິກອນແບບຫາລ້ຽງກຸ້ມຕົນເອງ, ຕົວຢ່າງ: ຜະລິດເພື່ອພຽງແຕ່ສຳລັບການຊົມໃຊ້ຂອງເຂົາເຈົ້າເອງເທົ່ານັ້ນ (ບໍ່ແມ່ນເພື່ອຂາຍ); ແຕ່ໃນ 3-4 ປີຫຼັງຜ່ານມານີ້ ແມ່ນເຂົາເຈົ້າໄດ້ຄ່ອຍໆມີການປ່ຽນແປງໄປສູ່ການເກັບກ່ຽວຜົນໄດ້ຮັບຈາກຊັບພະຍາກອນຂອງເຂົາເຈົ້າຫຼາຍຂຶ້ນ ຊຶ່ງເປັນຜົນເຮັດໃຫ້ການຜະລິດຂອງເຂົາເຈົ້າກ້າວໄປເກີນກວ່າລະດັບການຜະລິດເພື່ອລ້ຽງກຸ້ມຕົນເອງແລ້ວ (ຕົວຢ່າງ: ເພື່ອຂາຍໃນຕະຫຼາດ).

ຂໍ້ມູນກ່ຽວກັບສ່ວນເກີນຂອງຕະຫຼາດຈາກການກະສິກຳຢູ່ໃນລະບົບສະຖິຕິຂອງ ສປປ ລາວ ແມ່ນບໍ່ສາມາດຫາໄດ້. ເຖິງຢ່າງໃດກໍ່ຕາມ, ການສຳຫຼວດກະສິກຳຂອງລາວ ແມ່ນໄດ້ມີການເກັບກຳຂໍ້ມູນກ່ຽວກັບຄົວເຮືອນຊາວກະສິກອນທີ່ໄດ້ຂາຍບາງສ່ວນຂອງຜົນການຜະລິດກະສິກຳຂອງເຂົາເຈົ້າຢູ່ໃນຕະຫຼາດ. ຕົວເລກຂ້າງລຸ່ມນີ້ແມ່ນໄດ້ສະເໜີກ່ຽວກັບເລື່ອງນີ້ໄວ້ ສຳລັບປີ 1998-1999 ແລະ 2010-2011.

**ຮູບທີ 4.3: ອັດຕາສ່ວນຄົວເຮືອນຊາວກະສິກອນທີ່ຂາຍຜົນຜະລິດຂອງເຂົາເຈົ້າໃຫ້ແກ່ຕະຫຼາດ**




ແຫຼ່ງຂໍ້ມູນ: ການວິໄຈການສຳຫຼວດກະສິກຳຂອງລາວ ໃນປີ 2010-2011 (ການລາຍງານສຳລັບທັງສອງປີ), ກະຊວງກະສິກຳ ແລະປ່າໄມ້, ນະຄອນຫຼວງວຽງຈັນ.

ໂດຍລວມກັນແລ້ວ, ແມ່ນບໍ່ເກີນກວ່າ 30% ຂອງບັນດາຄົວເຮືອນຊາວກະສິກອນທັງໝົດ ທີ່ໄດ້ຂາຍຜົນຜະລິດບາງສ່ວນຂອງເຂົາເຈົ້າໃຫ້ແກ່ຕະຫຼາດ ແລະມັນກໍ່ບໍ່ມີຮູບແບບທີ່ເປັນຈິງ ຫຼືເອກະພາບກັນ ຢູ່ໃນບັນດາແຂວງໃນທົ່ວປະເທດ. ສຳລັບການປູກພືດເປັນສິນຄ້າເພື່ອຂາຍໃຫ້ແກ່ຕະຫຼາດພຽງຢ່າງດຽວນັ້ນ ແມ່ນໄດ້ມີການເພີ່ມຂຶ້ນຫຼາຍຢູ່ໃນລະຫວ່າງປີ 1998-1999 ແລະ2010-2011. ຕົວຢ່າງ: ໃນປີ 2010-2011, ເນື້ອທີ່ການປູກສາລີເປັນສິນຄ້າ (ສາລີອາຫານສັດ) ຢູ່ໃນ ສປປ ລາວ ແມ່ນມີຢູ່ 134.000 ເຮັກຕາ ຊຶ່ງເພີ່ມຂຶ້ນຈາກ 25.000 ເຮັກຕາ ໃນປີ 1998/1999. ຈາກການສັງເກດການເຫັນວ່າ ການປູກາເຟ, ມັນຕົ້ນ ແລະພືດອື່ນໆກໍ່ມີການເພີ່ມຂຶ້ນທັງໃນດ້ານຂອງເນື້ອທີ່ ແລະຜົນຜະລິດ ເຊັ່ນດຽວກັນ. ໃນປີ 1998-1999 ເຫັນວ່າເນື້ອທີ່ດິນສຳລັບການປູກເຂົ້າ ແມ່ນກວມເອົາປະມານ 96% ຂອງເນື້ອທີ່ການປູກພືດຕາມລະດູການທັງໝົດ ແຕ່ໃນປີ 2010-2011 ພັດຫລຸດລົງມາເປັນ 80%. ບັນດາຕົວຢ່າງອື່ນໆ: ໃນປັດຈຸບັນນີ້, ແຂວງໄຊຍະບູລີ ແມ່ນມີການປູກສາລີເປັນຈຳນວນຫຼວງຫຼາຍ; ແຂວງຈຳປາສັກ ແມ່ນປູກໝາກກ້ວຍ, ກາເຟ ແລະໝາກມ່ວງຫຼາຍກວ່າ; ສຳລັບ ແຂວງຫຼວງພະບາງ ແລະແຂວງຫຼວງນ້ຳທາ ແມ່ນມີຊື່ສຽງດ້ານປູກຢາງພາລາ ແລະຕົ້ນໄມ້ໃຫ້ໝາກ. ດັ່ງນັ້ນ, ຈິ່ງເວົ້າໄດ້ວ່າ ນອກຈາກການປູກເຂົ້າແລ້ວ ບັນດາຄົວເຮືອນຕ່າງໆກໍ່ຍັງໄດ້ປູກພືດທາງການຄ້າອື່ນໆ ເພື່ອຂາຍຢູ່ໃນຕະຫຼາດນຳອີກ.

ການນຳຜົນຜະລິດສ່ວນເກີນຈາກການນຳໃຊ້ທີ່ດິນເພື່ອປູກພືດທາງການຄ້າໄປຂາຍໃຫ້ແກ່ຕະຫຼາດ ແມ່ນເປັນການສະທ້ອນໃຫ້ເຫັນເຖິງແນວໂນ້ມຂອງການກ້າວໄປສູ່ຕະຫຼາດ. ເຖິງແນວໃດກໍ່ຕາມ, ອັນນີ້ກໍ່ຍັງບໍ່ແມ່ນກໍລະນີຂອງເຂົ້າເທື່ອ. ສຳລັບອັນທີໜຶ່ງນັ້ນ, ແມ່ນເຂົ້າຖືກນຳໄປຂາຍເປັນສິນຄ້າໄດ້ ກໍ່ພຽງແຕ່ມາຈາກບາງເຂດທີ່ຢູ່ລຽບຕາມແຄມຝັ່ງແມ່ນ້ຳຂອງເທົ່ານັ້ນ ແລະບໍ່ແມ່ນວ່າຢູ່ໃນທົ່ວທຸກບ່ອນຂອງປະເທດແມ່ນມີເຂົ້າພໍຂາຍ. ອັນທີສອງ, ໂດຍລວມແລ້ວອັດຕາຂອງຜົນຜະລິດເຂົ້າແມ່ນບໍ່ໄດ້ເພີ່ມຂຶ້ນ ຊຶ່ງອັນນີ້ກໍ່ໝາຍຄວາມວ່າເຂົ້າທີ່ສາມາດນຳໄປຂາຍໄດ້ນັ້ນ ແມ່ນມີຈຳນວນປະລິມານໜ້ອຍເທົ່ານັ້ນ. ໃນເມື່ອເຂົ້າແມ່ນເປັນພືດທີ່ສຳຄັນທີ່ສຸດນັ້ນ ເຫັນວ່າ ສປປ ລາວ ແມ່ນຍັງມີບາງຫົນທາງເພື່ອກ້າວຕໍ່ໄປ ກ່ອນທີ່ "ການຜະລິດເພື່ອຕະຫຼາດ" ຈະເກີດຂຶ້ນຢ່າງເຕັມສ່ວນ.

ໝາຍເຫດ 1: ການປູກຝັງທີ່ເຂັ້ມຂຸ້ນຈິງຈັງນັ້ນ ແມ່ນຈະເຮັດໃຫ້ອັດຕາສ່ວນຂອງເນື້ອທີ່ດິນປູກຝັງຕົວຈິງ ຕໍ່ກັບເນື້ອທີ່ດິນທີ່ມີຄວາມເໝາະ

ສົມສຳລັບການປູກຝັງສູງຂຶ້ນ.

ໝາຍເຫດ 2: ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ໄດ້ແຈ້ງຕົວເລກກ່ຽວການຜະລິດເຂົ້າ ໃນປີ 2011 ວ່າໄດ້ຢູ່ປະມານ 3 ລ້ານໂຕນ, ຊຶ່ງເປັນທີ່ເຊື່ອວ່າແຜນນີ້ແມ່ນຖືກສ້າງຂຶ້ນດ້ວຍຕົວເລກຂອງມັນ ທີ່ມາຈາກກະຊວງກະສິກຳ ແລະປ່າໄມ້, ຊຶ່ງຕົວເລກເຫຼົ່ານີ້ແມ່ນບໍ່ສອດຄ່ອງກັບຈຳນວນຕົວເລກທີ່ຢູ່ໃນ LECS-5. ຢູ່ໃນບົດລາຍງານສະບັບນີ້ ແມ່ນໄດ້ມີການອີງໃສ່ຖານຂໍ້ມູນຂອງ LECS ແລະLSIS ເປັນຫຼັກ, ຊຶ່ງມັນມີຂໍ້ມູນ, ຕົວຢ່າງ, ຂະໜາດຂອງການກວມເອົາ, ບັນດາຂັ້ນຕອນຂອງຂະບວນການເກັບກຳຂໍ້ມູນທີ່ກວ້າງຂວາງ ແລະອື່ນໆຢູ່ໃນວົງການຂອງລັດ ທີ່ສາມາດຫາມາໃຊ້ໄດ້. ພ້ອມກັນນັ້ນ, ບັນດາຂໍ້ມູນເຫຼົ່ານີ້ແມ່ນໄດ້ຖືກເກັບກຳເປັນໄລຍະໄລຍະ ຊຶ່ງພວກມັນສາມາດນຳມາໃຊ້ສຳລັບເປັນການສົມທຽບກ່ຽວກັບເວລາໄດ້ ແລະບໍ່ຄືກັນກັບບັນດາຖານຂໍ້ມູນດຽວເທົ່ານັ້ນ.

ແຫຼ່ງຂໍ້ມູນ: ບົດລາຍງານການສຳຫຼວດກະສິກຳຂອງລາວ, 1998-1999 ແລະ 2010-2011; ກະຊວງກະສິກຳ ແລະປ່າໄມ້ (2010), ຍຸດທະສາດການພັດທະນາກະສິກຳ 2011-2020, ນະຄອນຫຼວງວຽງຈັນ.

# ພາກທີ 5

## ເສັ້ນທາງທີ່ຈະກ້າວຕໍ່ໄປ - ການພິຈາລະນາກ່ຽວກັບ ການພັດທະນາມະນຸດສໍາລັບການຫລຸດພົ້ນອອກ LDC ຢ່າງລາບລື່ນ

ເພື່ອບັນລຸໄດ້ການພັດທະນາແບບຍືນຍົງ ແລະເພື່ອທຸກຄົນ ສໍາລັບການຫລຸດພົ້ນອອກຈາກສະຖານະພາບ LDC ນັ້ນ, ສປປ ລາວ ຈໍາເປັນຈະຕ້ອງໄດ້ຄວ້າຫາໂອກາດ ແລະສ້າງທ່າແຮງໄດ້ປຽບໂດຍສົມທຽບ ຢູ່ໃນຜະລິດຕະພັນຊ່ອງວ່າງທີ່ມີມູນຄ່າເພີ່ມສູງ ເພື່ອດຶງເອົາກໍາລັງແຮງງານທີ່ມີຢູ່ຢ່າງຫຼວງຫຼາຍໃນພາກກະສິກໍາ ໄປສູ່ພາກອຸດສາຫະກໍາການຜະລິດ ແລະການບໍລິການທີ່ມີຜະລິດຕະພາບສູງໄດ້ຢ່າງໄວວາ ແລະທັງເພື່ອຍົກສູງຜະລິດຕະພາບຂອງຂະແໜງການກະສິກໍາ ທີ່ມີປະຊາກອນຈໍານວນຫຼວງຫຼາຍດໍາລົງຊີວິດ ແລະເຮັດວຽກຢູ່. ອັນນີ້ແມ່ນມັນຮຽກຮ້ອງຕ້ອງການໃຫ້ມີການລົງທຶນເຂົ້າໃສ່ການສຶກສາທີ່ມີຄຸນນະພາບ, ລວມທັງການພັດທະນາສີມືແຮງງານ. ແນ່ນອນ, ຈຸດເລີ່ມຕົ້ນຂອງມັນແມ່ນຈະຕ້ອງໄດ້ປັບປຸງເລື່ອງການຮູ້ໜັງສື ແລະຮູ້ຄໍານວນເສຍກ່ອນ, ລວມທັງລະດັບການໂພຊະນາການຂອງກໍາລັງແຮງງານທີ່ກໍາລັງເຕີບໂຕ.

ສປປ ລາວ ໄດ້ມີຄວາມກ້າວໜ້າທາງດ້ານເສດຖະກິດ-ສັງຄົມຢ່າງໜ້າເພິ່ງພໍໃຈ ນັບຕັ້ງແຕ່ໄດ້ມີການຮັບຮອງເອົາກົນໄກເສດຖະກິດໃໝ່ (NEM) ໃນປີ 1986 ເປັນຕົ້ນມາ ເພື່ອຫັນປ່ຽນເສດຖະກິດຈາກລະບົບວາງແຜນຈາກສູນກາງ ໄປສູ່ເສດຖະກິດທີ່ຂັບເຄື່ອນໂດຍຕະຫຼາດຫຼາຍຂຶ້ນ. ດ້ວຍການນໍາໜ້າຂອງຂະແໜງຊັບພະຍາກອນທໍາມະຊາດ ໄດ້ເຮັດໃຫ້ເສດຖະກິດມີການເຕີບໂຕປະມານ 8% ຕໍ່ປີ ໃນທົດສະວັດຜ່ານມາ ແລະເຫັນວ່າ ສປປ ລາວ ຍັງຮັກສາໄດ້ການຫລຸດລົງຂອງຄວາມທຸກຍາກ ແລະການຍົກລະດັບການພັດທະນາມະນຸດ. ໃນປັດຈຸບັນນີ້, ສປປ ລາວ ໄດ້ກາຍເປັນປະເທດລາຍຮັບປານກາງຕໍ່າ ແລະ ຄ່າ HDI ຢູ່ທີ່ 0,575 (ໃນປີ 2014) ໄດ້ຍົກ ສປປ ລາວ ຂຶ້ນຈາກປະເທດທີ່ມີລະດັບການພັດທະນາມະນຸດຕໍ່າ ໄປສູ່ປະເທດທີ່ມີລະດັບການພັດທະນາມະນຸດປານກາງ. ສປປ ລາວ ໄດ້ເປັນສະມາຊິກສົມບູນຂອງ WTO ແລະປະຊາຄົມເສດຖະກິດອາຊຽນ (AEC) ແລະມັນຍັງມີເປົ້າໝາຍຫລຸດພົ້ນອອກຈາກສະຖານະພາບ LDC ໃນປີ 2020.

ເຖິງຢ່າງໃດກໍ່ຕາມ, ດັ່ງທີ່ຢູ່ໃນພາກຕ່າງໆຜ່ານມາໄດ້ສະແດງໃຫ້ເຫັນວ່າ ຄວາມກ້າວໜ້າຂອງ ສປປ ລາວ ແມ່ນມີການຂຶ້ນລົງບໍ່ສະໝໍ່າສະເໝີ. ໂດຍສະເພາະ, ອັດຕາຄວາມໄວຂອງການຫລຸດຜ່ອນຄວາມທຸກຍາກ ແມ່ນບໍ່ໄດ້ສັດສ່ວນກັບອັດຕາການເຕີບໂຕຂອງເສດຖະກິດ ເນື່ອງຈາກຜະລິດຕະພາບຂອງງານ ແລະໜ້າວຽກທີ່ເໝາະສົມຍັງມີໜ້ອຍ. ອັນສໍາຄັນທີ່ສຸດ, ແມ່ນອັດຕາຄວາມທຸກຍາກບໍ່ໄດ້ຫລຸດລົງໃນລະດັບດຽວກັນທັງໝົດ ຢູ່ໃນລະຫວ່າງຂົງ

ເຂດ ແລະກຸ່ມຊົນເຜົ່າຕ່າງໆ, ແລະມັນຍັງມີການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບໃນແນວຕັ້ງ (ລະຫວ່າງບຸກຄົນຕ່າງໆ) ແລະແນວນອນ (ລະຫວ່າງຂົງເຂດ ແລະກຸ່ມຊົນເຜົ່າ) ກ່ຽວກັບລາຍໄດ້ ແລະການພັດທະນາມະນຸດ. ອັນນີ້ແມ່ນໝາຍເຖິງການເຕີບໂຕທີ່ບໍ່ແມ່ນເພື່ອທຸກຄົນ ແລະຜົນກະທົບຂອງການເຕີບໂຕຕໍ່ກັບການຫລຸດຜ່ອນຄວາມທຸກຍາກແມ່ນຍັງຕໍ່າຫຼາຍ. ບັນຫານີ້ແມ່ນລັດຖະບານ ແຫ່ງ ສປປ ລາວ ກໍ່ໄດ້ຮັບຮູ້ດີກ່ຽວກັບການຕັ້ງບັນດາເປົ້າໝາຍແລະຍຸດທະສາດຕ່າງໆ ສໍາລັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020).

ນອກຈາກນັ້ນ, ເຖິງແມ່ນວ່າການປະຕິຮູບ ແລະການປ່ຽນແປງໂຄງສ້າງແມ່ນມີຄວາມສໍາຄັນ ແຕ່ຂະແໜງການຊັບພະຍາກອນທໍາມະຊາດກໍ່ຍັງເປັນຕົວຂັບເຄື່ອນເສດຖະກິດທີ່ສໍາຄັນ ຂອງ ສປປ ລາວ ແລະການກະສິກໍາທີ່ມີຜະລິດຕະພາບຕໍ່າ ແມ່ນຍັງເປັນຕົວດູດດຶງກໍາລັງແຮງງານທີ່ສໍາຄັນຢູ່ (ຫຼາຍກວ່າ 65% ຂອງການຈ້າງງານ). ພື້ນຖານອຸດສາຫະກໍາການຜະລິດຂອງປະເທດແມ່ນຍັງແຄບ ແລະການສົ່ງອອກກໍ່ຍັງບໍ່ມີຄວາມຫຼາກຫຼາຍ ທັງສ່ວນປະກອບຂອງຜະລິດຕະພັນ ແລະຕະຫຼາດ. ອັນນີ້ໄດ້ເຮັດໃຫ້ເສດຖະກິດຂອງ ສປປ ລາວ ມີຄວາມບອບບາງຕໍ່ກັບທັງເຫດການຊ໊ອກຈາກພາຍນອກ ແລະໄພພິບັດທາງທໍາມະຊາດ.

ລັດຖະບານ ແຫ່ງ ສປປ ລາວ ໄດ້ຕັ້ງບັນດາເປົ້າໝາຍ ແລະຍຸດທະສາດຕ່າງໆ ສໍາລັບເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ໄປພ້ອມກັບການພັດທະນາເສດຖະກິດ-ສັງຄົມສໍາລັບທຸກຄົນ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການເປັນສະມາຊິກ AEC ແລະເພື່ອຮັບປະກັນໃຫ້ການຂ້າມຜ່ານອອກຈາກສະຖານະພາບການເປັນ LDC ຂອງມັນໄດ້ຢ່າງລາບລື່ນ. ພາກນີ້ໄດ້ພິຈາລະນາບັນດາຂົງເຂດສໍາຄັນຕ່າງໆ ກ່ຽວກັບສິ່ງທ້າທາຍທີ່ ສປປ ລາວ ປະເຊີນຢູ່ ແລະໃຫ້ຂໍ້ສະເໜີແນະຕ່າງໆ ທີ່ອີງໃສ່ບົດຮຽນຈາກອະດີດຜ່ານມາຂອງ ສປປ ລາວ ເອງ ແລະຈາກບ່ອນອື່ນໆນໍາ. ການລົງທຶນເຂົ້າໃນການພັດທະນາມະນຸດ-ການສຶກສາ (ການຮູ້ໜັງສື, ຮູ້ຄໍານວນ, ການພັດທະນາເດັກໃນໄວເຍົາ ແລະການໄດ້ມາຊຶ່ງສີມືແຮງງານ ແລະອື່ນໆ) ແລະສາທາລະນະສຸກ (ການຮັບປະກັນດ້ານສະບຽງອາຫານ, ການໂພຊະນາການ, ສຸຂະພາບຂອງເດັກ ແລະ ແມ່ ແລະອື່ນໆ) ມັນມີບົດບາດສໍາຄັນຫຼາຍສໍາລັບການຂ້າມຜ່ານສິ່ງທ້າທາຍຕ່າງໆເຫຼົ່ານີ້.

ການສົນທະນາກ່ຽວກັບນະໂຍບາຍ ແລະຂໍ້ສະເໜີແນະຕ່າງໆ ແມ່ນໄດ້ສະແດງໄວ້ເປັນສອງລະດັບຄື:ລະດັບທົ່ວໄປ ແລະລະດັບມະຫາພາກກ່ຽວກັບທາງເລືອກຕ່າງໆ ເພື່ອສ້າງສະພາບແວດລ້ອມໃຫ້ສາມາດເຮັດໄດ້ ແລະວາລະການດໍາເນີນງານສະເພາະ ເພື່ອສົ່ງເສີມບົດບາດທາງດ້ານເຄື່ອງມືກ່ຽວກັບການພັດທະນາມະນຸດ ຊຶ່ງມັນແມ່ນສິ່ງຈໍາເປັນເພື່ອບັນລຸການພັດທະນາແບບຍືນຍົງ ແລະເພື່ອທຸກຄົນ ສໍາລັບການຫລຸດພົ້ນອອກຈາກສະຖານະພາບ LDC ຢ່າງລາບລື່ນ.

## ສະພາບ ແລະບັນດາຄໍາຖາມທີ່ສໍາຄັນຕ່າງໆ

ສປປ ລາວ ປະເຊີນກັບສິ່ງທ້າທາຍ ກ່ຽວກັບການຫລຸດພົ້ນອອກຈາກສະຖານະພາບ LDC ຢ່າງລາບລື່ນຢູ່ພາຍໃນສະພາບຂອງການຂ້າມຜ່ານຢ່າງເປັນລະບົບ ໄປສູ່ເສດຖະກິດຕະຫຼາດ, ເສດຖະກິດເຊື່ອມໂຍງກັບຂົງເຂດແລະໂລກຫຼາຍຂຶ້ນ, ລວມທັງແຜນງານການກະຈາຍອໍານາດໃນການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະການເກັບລາຍຮັບຢູ່ໃນຂັ້ນແຂວງ, ເມືອງ ແລະບ້ານ. ມັນບໍ່ມີແຜນຕໍາລາລະອຽດສໍາລັບການຂ້າມຜ່ານ; ມັນຮຽກຮ້ອງໃຫ້ມີການຈັດລຽງລໍາດັບ ແລະການກໍານົດຢ່າງລະມັດລະວັງ ກ່ຽວກັບບາດກ້າວພື້ນຖານ ຫຼືອັດຕາຄວາມໄວຕາມສະພາບຂອງປະເທດເອງ ແລະບັນດາປະສົບປະການອື່ນໆ ກ່ຽວກັບສະຖານະພາບທີ່ຄ້າຍຄືກັນນີ້. ການເຊື່ອມໂຍງໃນຂົງເຂດ ແລະໃນໂລກ ແມ່ນມີໃຫ້ທັງກາລະໂອກາດ ແລະສິ່ງທ້າທາຍ. ຄວາມເຂົ້າໃຈກ່ຽວກັບເລື່ອງເຫຼົ່ານີ້ແມ່ນມີຄວາມສໍາຄັນຫຼາຍ ເນື່ອງຈາກມັນມີບັນດາສິ່ງກີດຂວາງຕ່າງໆດ້ານໂຄງສ້າງຂອງ ສປປ ລາວ ເຊັ່ນ: ກໍາລັງແຮງງານທີ່ມີໜ້ອຍ ປະກອບກັບພື້ນຖານສີມືແຮງງານທີ່ຕໍ່າ (ລວມທັງການຮູ້ໜັງສື ແລະຮູ້ຄໍານວນກໍ່ຍັງຕໍ່າ), ການເຊື່ອມຈອດກໍ່ມີຄວາມຫຍຸ້ງຍາກ ຍ້ອນເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ແລະມີພື້ນຖານເສດຖະກິດທີ່ແຄບ ຊຶ່ງຖືກຄອບງໍາໂດຍການກະສິກໍາທີ່ມີຜະລິດຕະພາບຕໍ່າ ແລະຂະແໜງການຊັບພະຍາກອນທໍາມະຊາດທີ່ເຂັ້ມທຶນ.

ສປປ ລາວ ໄດ້ປະສົບພົບພໍ້ກັບບາງຄວາມອັນຕະລາຍທີ່ແອບແຝງຢູ່ ກ່ຽວກັບການຂ້າມຜ່ານໄປສູ່ເສດຖະ

ກິດຕະຫຼາດ ເຊັ່ນ: ການເຕີບໂຕທີ່ບໍ່ມີຄວາມສະເໝີພາບ ແລະຄວາມແຕກຕ່າງກັນລະຫວ່າງຂົງເຂດ ຊຶ່ງມັນສາມາດທີ່ຈະຖືກຊໍ້າເຕີມຕື່ມຈາກການເຊື່ອມໂຍງກັບຂົງເຂດ ແລະໂລກຢ່າງໄວວາ. ການເປີດກວ້າງ ແລະການຫລຸດຜ່ອນລະບຽບການຢ່າງຟ້າວຟັ່ງ ອາດຈະເຮັດໃຫ້ມີຄວາມບອບບາງທາງເສດຖະກິດເພີ່ມຂຶ້ນ ຍ້ອນການແຜ່ລາມຂອງເຫດ ການຊ໊ອກທາງເສດຖະກິດຂອງໂລກ ແລະຂົງເຂດ. ບົດຮຽນໜຶ່ງຈາກວິກິດການງເງິນອາຊີ ໃນປີ 1997-1998 ນັ້ນ ແມ່ນການຫລຸດຜ່ອນລະບຽບການຂອງຂະແໜງການເງິນຢ່າງຟ້າວຟັ່ງ, ໂດຍສະເພາະແມ່ນໃນສະພາບທີ່ມີການເປີດບັນຊີທຶນ ແລະມີຄວາມອ່ອນແອຂອງສະຖາບັນຕ່າງໆ ອາດສາມາດເພີ່ມຄວາມອ່ອນແອຂອງຂະແໜງການເງິນ ແລະຄວາມບອບບາງດ້ານວິກິດການງເງິນ ຊຶ່ງຈະເປັນຜົນສະທ້ອນເຮັດໃຫ້ຄວາມທຸກຍາກ ແລະຄວາມບໍ່ສະເໝີພາບ, ລວມທັງຄວາມໝັ້ນຄົງທາງດ້ານການເມືອງ-ສັງຄົມຂີ້ຮ້າຍ,[113] ໂດຍສະເພາະແມ່ນຢູ່ໃນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແລະພູມມີສາດປະເທດທີ່ສະຫຼັບຊັບຊ້ອນ ຄືດັ່ງ ສປປ ລາວ. ນອກຈາກນັ້ນ, ມັນກໍ່ຍັງມີຂໍ້ຫຍຸ້ງຍາກທາງດ້ານການເງິນ ແລະນະໂຍບາຍ ອັນເປັນຜົນເນື່ອງມາຈາກການຫລຸດຜ່ອນອັດຕາພາສີ ແລະອາກອນທຸລະກິດໃຫ້ເປັນໜຶ່ງດຽວກັນ. ມັນມີບາງຄໍາຖາມທີ່ສໍາຄັນສໍາລັບການຫລຸດພົ້ນອອກຈາກສະຖານະພາບ LDC ຢ່າງລາບລື່ນ ດັ່ງນີ້:

- ສປປ ລາວ ຈະເຮັດຕາມຄໍາສັ່ງ ຫຼືການບົ່ງການຂອງຕະຫຼາດ ແລະການແບ່ງປັນແຮງງານສາກົນບໍ?
- ທາງເລືອກດ້ານນະໂຍບາຍນັ້ນ ຈະປ່ອຍປະລະຖິ້ມຄວາມຫຼາກຫຼາຍຂະໜາດຍ່ອຍ ທີ່ເປັນຜົນດີຕໍ່ເສດຖະກິດລາວນັ້ນ ໄປເລີຍບໍ?
- ທາງເລືອກດ້ານນະໂຍບາຍນັ້ນ ຈະສອດຄ່ອງກັບການພັດທະນາແບບຍືນຍົງ ແລະເພື່ອທຸກຄົນບໍ?

ບັນດາຄໍາຕອບຕໍ່ກັບບັນດາຄໍາຖາມເຫຼົ່ານີ້ ຈະນໍາໄປສູ່ການສົນທະນາກ່ຽວກັບທາງເລືອກດ້ານນະໂຍບາຍ ເພື່ອ:

- ເຕັ້ນຂ້າມ ແລະເລັ່ງການປັບປຸງປ່ຽນແປງໂຄງສ້າງ ແລະຂະຫຍາຍບັນດາຂະແໜງການບໍລິມະສິດຕາມແບບທີ່ຍືນຍົງ ແລະເພື່ອທຸກຄົນ;
- ດູນດ່ຽງຄວາມຕ້ອງການໃນການຂະຫຍາຍວຽກເຮັດງານທໍາ ກັບຄວາມຕ້ອງການໃນການຍົກລະດັບຜະລິດຕະພາບຂອງງານ;
- ມຸ່ງເຮັດໃຫ້ມີການດູນດ່ຽງຢ່າງຖືກຕ້ອງ ລະຫວ່າງຄວາມຈໍາເປັນສໍາລັບບັນດາລະບຽບການທີ່ມອບ ແລະຄວາມຕ້ອງການຫລຸດຜ່ອນລະບຽບການ ເພື່ອສົ່ງເສີມຂະແໜງການເອກະຊົນ, ໂດຍສະເພາະແມ່ນການລົງທຶນຂອງຕ່າງປະເທດຢູ່ໃນບັນດາຂະແໜງການບໍລິມະສິດ ແລະຕ້ອງບັນລຸໃຫ້ໄດ້ບັນດາຄວາມຮຽກຮ້ອງຕ້ອງການຂອງ AEC;
- ສົ່ງເສີມສະພາບຄ່ອງທາງດ້ານງົບປະມານການເງິນ ແລະຄວາມຫຼາກຫຼາຍທາງດ້ານນະໂຍບາຍ ເພື່ອແກ້ໄຂຄວາມບອບບາງ ແລະການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ, ໂດຍສະເພາະແມ່ນຢູ່ໃນການພັດທະນາມະນຸດ.

ໃນທັງໝົດນີ້, ພົບວ່າບົດບາດທີ່ເໝາະສົມຂອງລັດຖະບານ ແລະການສົ່ງເສີມບັນດາຄວາມອາດສາມາດໃນການປົກຄອງແມ່ນມີຄວາມສໍາຄັນຫຼາຍ.

## ບັນດາທາງເລືອກທາງດ້ານນະໂຍບາຍ

### ການເຕັ້ນຂ້າມໄປສູ່ຄວາມຫຼາກຫຼາຍ

ລະດັບທີໜຶ່ງ, ການຫັນເປັນອຸດສາຫະກໍາຂອງບັນດາປະເທດອຸດສາຫະກໍາໃໝ່ໃນອາຊີຕາເວັນອອກສ່ຽງໃຕ້

ເຊັ່ນ: ມາເລເຊຍ, ໄທ ແລະອິນໂດເນເຊຍ ສ່ວນໃຫຍ່ແມ່ນດໍາເນີນຕາມແບບວິທີ "ຝູງຫ່ານບິນ" ທີ່ມີຊື່ສຽງ ໂດ່ງດັງ.[114] ເຂົາເຈົ້າເປັນເຂດເສດຖະກິດທີ່ມີແຮງງານສ່ວນເກີນ ທີ່ຖືວ່າແມ່ນຂໍ້ໄດ້ປຽບຂອງການເພີ່ມຕົ້ນທຶນແຮງງານຢູ່ໃນບັນດາປະເທດທີ່ກໍາລັງໃຫຍ່ໂຕໃນຂົງເຂດ. ປະເທດຍີ່ປຸ່ນ ເປັນຜູ້ນໍາຢູ່ໃນກຸ່ມຂອງຝູງຫ່ານບິນ ຊຶ່ງມັນໄດ້ມີຄວາມກ້າວໜ້າໃນການເຄື່ອນຍ້າຍການຜະລິດໃນສາຍປະກອບຂອງຜະລິດຕະພັນທີ່ໄດ້ມາດຕະຖານຂອງມັນ ໄປສູ່ມາເລເຊຍ, ໄທ ແລະອິນໂດເນເຊຍ ທີ່ມີຕົ້ນທຶນການຜະລິດຕໍ່າກວ່າ. ສສ ຫວຽດນາມ ແລະກໍາປູເຈຍ ກໍ່ເປັນປະເທດໃໝ່ທີ່ສຸດຢູ່ໃນກຸ່ມນີ້ (ຮູບທີ 5.1).

**ຮູບທີ 5.1: ການປ່ຽນແປງໂຄງສ້າງຢູ່ໃນອາຊີ**




ໝາຍເຫດ: 1=ການກ້າວໄປຂ້າງໜ້າຂອງ ຍີ່ປຸ່ນ ຈາກຕັດຫຍິບໄປສູ່ການຜະລິດທີ່ນໍາໃຊ້ເຕັກໂນໂລຢີສູງ; 2= ການເຄື່ອນຍ້າຍຜະລິດຕະພັນຕັດຫຍິບຈາກ ຍີ່ປຸ່ນ ໄປສູ່ເຂດເສດຖະກິດທີ່ມີແຮງງານສ່ວນເກີນ ແລະມີຕົ້ນທຶນຕໍ່າ; 3=ການແບ່ງປັນແຮງງານລະຫວ່າງປະເທດ.

ບັນດາປະເທດເຫຼົ່ານີ້ແມ່ນມີຂໍ້ໄດ້ປຽບໂດຍສົມທຽບ ທີ່ເຂົາເຈົ້າມີກໍາລັງແຮງງານຫຼາຍ ແລະກໍາລັງແຮງງານເຫຼົ່ານັ້ນກໍ່ຮູ້ໜັງສື ແລະຮູ້ຄໍານວນພໍສົມຄວນ. ສ່ວນ ສປປ ລາວ ແມ່ນເປັນເຂດເສດຖະກິດທີ່ບໍ່ມີກໍາລັງແຮງງານຫຼາຍ ຊຶ່ງຈໍານວນປະຊາກອນ 6,5 ລ້ານຄົນ ຂອງ ສປປ ລາວ ນັ້ນ ແມ່ນໜ້ອຍກວ່າເຄິ່ງໜຶ່ງຂອງ ກໍາປູເຈຍ ທີ່ມີປະຊາກອນເຖິງ 15,6 ລ້ານຄົນ. ຈໍານວນປະຊາກອນຂອງ ຫວຽດນາມ ແມ່ນຫຼາຍກວ່າ ສປປ ລາວ ເຖິງ 13 ເທື່ອ ແລະປະເທດສະມາຊິກອາຊຽນໃໝ່ທີ່ສຸດ ຄື: ມຽນມາ ທີ່ເປັນປະເທດ LDC ຄືກັນ ກໍ່ມີຈໍານວນປະຊາກອນເຖິງ 53,9 ລ້ານຄົນ.

ແຕ່ວ່າ ສປປ ລາວ ແມ່ນມີປະຊາກອນໜຸ່ມທີ່ສຸດຢູ່ໃນຂົງເຂດ ຊຶ່ງຄາດວ່າມັນຈະໄດ້ຮັບຜົນປະໂຫຍດຈາກການປ່ຽນແປງຂອງຈໍານວນປະຊາກອນ. ອັດຕາສ່ວນຂອງຈໍານວນປະຊາກອນທີ່ຢູ່ໃນໄວອອກແຮງງານ (ອາຍຸ 15-64 ປີ) ຂອງ ສປປ ລາວ ແມ່ນຄາດວ່າຈະເພີ່ມຂຶ້ນເປັນ 69% ໃນປີ 2050 ຊຶ່ງແຕກຕ່າງຈາກ 65% ຢູ່ກໍາປູເຈຍ, 62% ຢູ່ຫວຽດນາມ ແລະ 68% ຢູ່ມຽນມາ. ເຖິງຢ່າງໃດກໍ່ຕາມ, ຈໍານວນແຮງງານຂອງ ສປປ ລາວ ກໍ່ຈະມີພຽງແຕ່ 7 ລ້ານຄົນ ເທົ່ານັ້ນ ຊຶ່ງເພີ່ມຂຶ້ນ 2,8 ລ້ານຄົນ; ກົງກັນຂ້າມກັບ 14,8 ລ້ານຄົນ ຢູ່ໃນກໍາປູເຈຍ, 69,6 ລ້ານຄົນ ຢູ່ໃນຫວຽດນາມ ແລະ 43,1 ລ້ານຄົນ ຢູ່ໃນມຽນມາ.[115]

ເພາະສະນັ້ນ, ສປປ ລາວ ແມ່ນບໍ່ມີຄວາມໄດ້ປຽບໂດຍສົມທຽບຢູ່ໃນບັນດາກິດຈະກໍາທີ່ເຂັ້ມງານຫຼາຍກວ່າບັນດາຄູ່ແຂ່ງທີ່ເປັນເພື່ອນບ້ານໃກ້ຄຽງທີ່ສຸດຢູ່ໃນຂົງເຂດນີ້. ນອກຈາກນັ້ນ, ການເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ແມ່ນເປັນຂໍ້ເສຍປຽບດ້ານພູມມີສາດ, ຖ້າສົມທຽບກັບສອງປະເທດ LDCs (ກໍາປູເຈຍ ແລະມຽນມາ) ທີ່ມີທາງອອກສູ່ທະເລຂອງ AEC. ທີ່ສໍາຄັນກວ່ານັ້ນ, ກໍາລັງແຮງງານຂອງເຂົາແມ່ນຮູ້ໜັງສື ແລະຮູ້ຄໍານວນໄດ້ໜ້ອຍໜຶ່ງ, ອີງຕາມບົດລາຍງານການພັດທະນາຂອງ ສປປ ລາວ, ທະນາຄານໂລກ, 2014 (ໜ້າ 12):

ຕາມການປະເມີນລະດັບການອ່ານຂັ້ນປະຖົມ, ເຫັນວ່າມີຫຼາຍກວ່າ 30% ຂອງຜູ້ທີ່ຈົບ ປ2 ແມ່ນບໍ່ສາ

ມາດອ່ານຄຳສັບດ່ຽວໄດ້ ແລະ 57% ຂອງກຸ່ມທີ່ສາມາດອ່ານໄດ້ນັ້ນ ແມ່ນບໍ່ເຂົ້າໃຈໃນເລື່ອງທີ່ເຂົາເຈົ້າຫາກໍ່ໄດ້ອ່ານນັ້ນ. ການປະເມີນການຮູ້ໜັງສືຂອງຜູ້ໃຫຍ່ທີ່ດຳເນີນຢູ່ໃນ 6 ປະເທດໃນໂລກ ລວມທັງຫວຽດນາມ, ແຂວງຢຸນນານ (ຈີນ), ແລະ ສປປ ລາວ; ຜູ້ໃຫຍ່ຢູ່ໃນ ສປປ ລາວ ແມ່ນມີຄວາມຮູ້ໜັງສືໜ້ອຍທີ່ສຸດ ຢູ່ໃນກຸ່ມຜູ້ໃຫຍ່ທີ່ໄດ້ຖືກທົດລອງປະເມີນນັ້ນ. ຜູ້ທີ່ຈົບສູງກວ່າຊັ້ນມັດທະຍົມຢູ່ໃນ ສປປ ລາວ ແມ່ນມີຄວາມຮູ້ພຽງແຕ່ພໍໆກັບຜູ້ທີ່ຈົບຊັ້ນປະຖົມຢູ່ໃນຫວຽດນາມ. ຄວາມສາມາດໃນການອ່ານແມ່ນມີຄວາມສຳຄັນຕໍ່ການຮຽນຮູ້ການພັດທະນາສີມືທີ່ກ້າວໜ້າກວ່າ, ການຮູ້ໜັງສືຂັ້ນພື້ນຖານໃນລະດັບທີ່ຕໍ່າຫຼາຍ ແມ່ນເປັນຜົນສະທ້ອນຮ້າຍແຮງຕໍ່ກັບຜະລິດຕະພາບຂອງງານ, ການເຕີບໂຕ ແລະຄວາມສາມາດໃນການແຂ່ງຂັນຂອງປະເທດ.

ຍ້ອນແນວນັ້ນ, ສປປ ລາວ ຈຶ່ງບໍ່ສາມາດຫວັງຜົນຈາກການເຄື່ອນຍ້າຍເຂົ້າມາຂອງບັນດາກິດຈະກຳທີ່ເຂັ້ມງານຈາກບັນດາປະເທດຝູງຫ່ານບິນໄດ້ ຄືກັນກັບ ຈີນ, ກຳປູເຈຍ, ມຽນມາ ແລະຫວຽດນາມ ທີ່ເຂົາເຈົ້າມີຄວາມໄດ້ປຽບກວ່າ. ດັ່ງນັ້ນ, ມັນຈຶ່ງບໍ່ແມ່ນສິ່ງທີ່ແປກປະຫຼາດເລີຍ ທີ່ການລົງທຶນຂອງພາກເອກະຊົນ, ຕົ້ນຕໍແມ່ນການລົງທຶນຂອງຕ່າງປະເທດຢູ່ໃນ ສປປ ລາວ ແມ່ນເຂົາເຈົ້າຈະສຸມຢູ່ໃນຂະແໜງຊັບພະຍາກອນທຳມະຊາດ ທີ່ມັນມີຄວາມໄດ້ປຽບໂດຍສົມທຽບ. ສະນັ້ນ, ດ້ວຍການບົ່ງການຂອງຕະຫຼາດ ຫຼືຄວາມໄດ້ປຽບໂດຍສົມທຽບແບບງ່າຍໆນີ້ ແມ່ນ ສປປ ລາວ ບໍ່ສາມາດເຮັດໃຫ້ເສດຖະກິດຂອງມັນມີຄວາມຫຼາກຫຼາຍຢ່າງພຽງພໍໄດ້. ປ່ອງຢ້ຽມ ຫຼືໂອກາດຂອງມັນກ່ຽວກັບບັນດາໂອກາດຕ່າງໆເພື່ອທີ່ຈະເຮັດຕາມ ຫຼືສະແຫວງຫາເສັ້ນທາງການເຕີບໂຕຂອງບັນດາເຂດເສດຖະກິດອຸດສາຫະກຳໃໝ່ຊັ້ນໜຶ່ງຂອງອາຊີຕາເວັນອອກ ໂດຍຜ່ານຜະລິດຕະພັນທີ່ເຂັ້ມງານເພື່ອການສົ່ງອອກແມ່ນມີໜ້ອຍຫຼາຍ.

ເພາະສະນັ້ນ, ສປປ ລາວ ຈຳເປັນຕ້ອງໄດ້ເຕັ້ນຂ້າມໄປຫາ ຫຼືສ້າງທ່າແຮງໄດ້ປຽບໂດຍສົມທຽບຢູ່ໃນບັນດາຜະລິດຕະພັນຊ່ອງວ່າງທີ່ມີມູນຄ່າເພີ່ມສູງ ເພື່ອດູດດຶງເອົາກຳລັງແຮງງານກະສິກຳທີ່ມີຢູ່ຢ່າງຫຼວງຫຼາຍນັ້ນ ໄປສູ່ບັນດາກິດຈະກຳທີ່ບໍ່ແມ່ນການກະສິກຳຢູ່ໃນຂະແໜງການຜະລິດ ແລະການບໍລິການທີ່ມີຜະລິດຕະພາບສູງໄດ້ຢ່າງໄວວາ, ໃນເວລາດຽວກັນນັ້ນ ກໍ່ຕ້ອງໄດ້ຍົກຜະລິດຕະພາບຂອງຂະແໜງການກະສິກຳ ທີ່ມີຜູ້ທຸກຍາກຈຳນວນຫຼາຍອາໄສ ແລະເຮັດວຽກຢູ່. ບາງຂົງເຂດຊ່ອງວ່າງນັ້ນແມ່ນການທ່ອງທ່ຽວນິເວດ ແລະວັດທະນະທຳ, ຫັດຖະກຳ, ການກະສິກຳປູກຝັງແບບນິເວດ (organic), ການປຸງແຕ່ງກະສິກຳ (ໂດຍສະເພາະແມ່ນກາເຟ, ເບິ່ງຢູ່ໃນກ່ອງທີ 2.5) ແລະຜະລິດຕະພັນໄມ້ຂັ້ນສອງທີ່ມີມູນຄ່າເພີ່ມສູງ ທີ່ລັດຖະບານ ແຫ່ງ ສປປ ລາວ ໄດ້ກຳນົດໄວ້ແລ້ວ.

ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ສາມາດເຕັ້ນຂ້າມໄປຫາສິ່ງດັ່ງກ່າວນັ້ນ ສປປ ລາວ ຈຳເປັນຕ້ອງໄດ້ມີນະໂຍບາຍທີ່ເໝາະສົມ, ລວມທັງບັນດາຄວາມອາດສາມາດໃນການບໍລິຫານຄຸ້ມຄອງ ເພື່ອຕອບສະໜອງກັບລະບຽບກົດໝາຍ ແລະນະໂຍບາຍ ທີ່ໃຫ້ການສະໜັບສະໜູນແກ່ການເກີດຂຶ້ນຂອງບັນດາກິດຈະກຳຊ່ອງວ່າງ ແລະມີມູນຄ່າເພີ່ມສູງ. ປະສົບປະການຂອງປະເທດສິງກະໂປ ໃນຊຸມປີ 1980, ດ້ວຍການຫັນເປັນອຸດສາຫະກຳ ແລະການປັບປຸງໂຄງສ້າງເພື່ອກ້າວໄປສູ່ບັນດາກິດຈະກຳເຂັ້ມສີມືທີ່ມີມູນຄ່າເພີ່ມສູງກວ່າ ໂດຍຜ່ານບັນດານະໂຍບາຍທີ່ກ່ຽວຂ້ອງກັບຄ່າແຮງງານ, ການຝາກປະຢັດແບບບັງຄັບ ແລະການພັດທະນາສີມື ແມ່ນສາມາດເປັນບົດຮຽນສຳລັບ ສປປ ລາວ ໄດ້.[116]

## ບັນດາລະບຽບການ ແລະການປະຕິຮູບຕ່າງໆສຳລັບຄວາມຫຼາກຫຼາຍ

ສ່ວນໜຶ່ງໃນການປ່ຽນແປງໄປສູ່ເສດຖະກິດຕະຫຼາດ ແລະເສດຖະກິດເປີດ ຂອງ ສປປ ລາວ ແມ່ນມັນໄດ້ເລີ່ມຕົ້ນດຳເນີນການປະຕິຮູບທີ່ສຳຄັນບາງອັນແລ້ວ. ຕົວຢ່າງ, ການຫັນເປັນສະຫະກອນແມ່ນຖືກຍົກເລີກແລ້ວ, ບັນດາຂໍ້ຈຳກັດຕໍ່ກັບການຄ້າພາຍໃນກໍ່ຖືກລຶບລ້າງ ແລະໄດ້ມີການນຳໃຊ້ຕະຫຼາດເສລີສຳລັບຜົນຜະລິດກະສິກຳ. ບັນດາມາດຕະການຈຳນວນຫຼາຍ ແມ່ນໄດ້ຖືກນຳມາໃຊ້ ເພື່ອລຶບລ້າງບັນດາສິ່ງກີດຂວາງດ້ານເສດຖະກິດມະຫາພາກ, ການຈຳກັດການຜະລິດຂອງພາກເອກະຊົນ ແລະເພື່ອສົ່ງເສີມການລົງທຶນຂອງຕ່າງປະເທດ ຊຶ່ງລວມມີໂຄງສ້າງລະບຽບກົດໝາຍທາງການຄ້າ, ກົດໝາຍວ່າດ້ວຍການຄ້າ ແລະກົດໝາຍວ່າດ້ວຍແຮງງານ ແລະລວມທັງການຫັນລັດວິສາຫະກິດໄປສູ່ເອກະຊົນ, ໂດຍຍົກເວັ້ນ ປະມານ 20 ຫົວໜ່ວຍລັດວິສາຫະກິດ ທີ່ຖືວ່າເປັນ “strategic”. ໃນປັດຈຸບັນນີ້, ແມ່ນໄດ້ເອົາໃຈໃສ່ຢ່າງໃກ້ສິດ ຕໍ່ກັບຄວາມໝັ້ນຄົງດ້ານເສດຖະກິດມະຫາພາກ ຊຶ່ງໄດ້ມີການປັບປຸງບັນດານະໂຍບາຍການເງິນ ແລະເງິນຕາ. ສປປ ລາວ ຍັງໄດ້ນຳໃຊ້ໂຄງສ້າງອາກອນໃໝ່, ລວມທັງອາກອນມູນຄ່າເພີ່ມ

(VAT) ນຳ.

ຢ່າງໃດກໍ່ຕາມ, ສປປ ລາວ ກໍ່ຍັງຖືກຕຳນິຕິຕຽນຢູ່ເລື້ອຍໆ ວ່າຍັງບໍ່ໄດ້ດຳເນີນການປະຕິຮູບຢ່າງພຽງພໍ ແລະສິ່ງທີ່ໄດ້ເຮັດນັ້ນ ສ່ວນຫຼາຍກໍ່ແມ່ນຍັງເປັນອັນພື້ນໆຢູ່ ກ່ຽວກັບການເຮັດໃຫ້ການດຳເນີນທຸລະກິດມີຄວາມງ່າຍດາຍຂຶ້ນ, ຖ້າສົມທຽບກັບບັນດາປະເທດອື່ນທີ່ຢູ່ໃນຂົງເຂດພາກພື້ນນີ້.[117] ເພາະສະນັ້ນ, ມັນໄດ້ມີການຕົກລົງເກືອບວ່າເປັນອັນໜຶ່ງອັນດຽວກັນຂອງບັນດາຜູ້ສັງເກດການຕ່າງໆກ່ຽວກັບ ສປປ ລາວ ວ່າບັນດາສິ່ງກີດຂວາງຕໍ່ກັບການດຳເນີນທຸລະກິດ ຢູ່ໃນ ສປປ ລາວ ແມ່ນຈະຕ້ອງໄດ້ຖືກລົບລ້າງ ເພື່ອສົ່ງເສີມການລົງທຶນ ແລະກະຕຸ້ນການເຕີບໂຕຂອງຜະລິດຕະພາບຂອງງານ ຢູ່ໃນຂະແໜງການຕ່າງໆທີ່ຫຼາກຫຼາຍ ເພື່ອຊ່ວຍສ້າງບັນດາກິດຈະກຳການຈ້າງງານຢູ່ນອກຂະແໜງການກະສິກຳຫຼາຍຂຶ້ນ. ທະນາຄານໂລກ ໄດ້ສະເໜີໃຫ້ມີການດຳເນີນການໃນສາມແນວຮັບ ດັ່ງນີ້:[118]

1. ເຮັດໃຫ້ທຸລະກິດ ແລະຕົ້ນທຶນການຜະລິດ ເປັນໄປຕາມລະບຽບກົດໝາຍທີ່ທັນສະໄໝ ແລະງ່າຍດາຍຂຶ້ນ, ຮ່ວມກັບລັດຖະບານດຳເນີນການສ້າງສະພາບແວດລ້ອມທີ່ເປັນມິດກັບທຸລະກິດຫຼາຍຂຶ້ນ;

2. ປັບປຸງຄວາມໂປ່ງໃສໃນການສະໜອງການບໍລິການຂອງຂະແໜງສາທາລະນະ ໃຫ້ແກ່ທຸລະກິດ ໂດຍຜ່ານບັນດາມາດຕະການຕ່າງໆ ເຊັ່ນ: ການຈັດພິມເຜີຍແຜ່ບັນດາລາຍການຄ່າທຳນຽມ, ການອະນຸຍາດ ແລະໃບອະນຸຍາດຕ່າງໆ ທີ່ລັດຖະບານມີຄວາມຮຽກຮ້ອງໃຫ້ມີ ເພື່ອເຜີຍແຜ່ໃຫ້ແກ່ພາກທຸລະກິດ;

3. ສ້າງສະໜາມການຫຼິ້ນທີ່ສາມາດຄາດການ ຫຼືພະຍາກອນໄດ້ ໃຫ້ແກ່ຂະແໜງການເອກະຊົນ ດ້ວຍການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະຂໍ້ບັງຄັບຕ່າງໆທີ່ເປີດເຜີຍ ແລະໝັ້ນຄົງ ລວມທັງການຫລຸດຜ່ອນບັນດາລະບຽບການ ແລະຂັ້ນຕອນຕ່າງໆທີ່ບໍ່ຈຳເປັນລົງ.

ເຖິງແນວໃດກໍ່ຕາມ, ສປປ ລາວ ຈຳເປັນຈະຕ້ອງໄດ້ຄົ້ນຫາການດູນດ່ຽງທີ່ຖືກຕ້ອງ ຢູ່ໃນໂຄງສ້າງນະໂຍບາຍຂອງມັນ. ມັນມີຄວາມຈຳເປັນຕ້ອງມີບັນດາລະບຽບການທີ່ຮັດກຸມ ແລະຮອບຄອບ ເພື່ອຮັບປະກັນຄວາມໝັ້ນຄົງຂອງຂະແໜງການເງິນ ແລະການເງິນເພື່ອທຸກຄົນໄດ້ປະໂຫຍດ.[119] ການເຂົ້າເຖິງການເງິນ ແມ່ນເປັນຂໍ້ຫຍຸ້ງຍາກທີ່ສຳຄັນຕົ້ນຕໍ ສຳລັບ SMEs. ທະນາຄານໃຫຍ່ຂອງເອກະຊົນ, ໂດຍສະເພາະທະນາຄານຕ່າງປະເທດ ແມ່ນເຂົາເຈົ້າຈະບໍ່ມັກໃຫ້ເງິນກູ້ແກ່ SMEs. ສະນັ້ນ, ຫຼາຍໆປະເທດ ເຂົາເຈົ້າຈິ່ງມີສະຖາບັນການເງິນຂອງລັດສະເພາະ ສຳລັບໃຫ້ເງິນກູ້ແກ່ SMEs ແລະຂະແໜງການກະສິກຳ.

ລະບຽບກົດໝາຍທີ່ມີຄວາມເໝາະສົມ ແມ່ນມີຄວາມຈຳເປັນເພື່ອປ້ອງກັນມາດຕະຖານຂອງແຮງງານ ແລະຄວາມສົມບູນຂອງສະພາບແວດລ້ອມ ລວມທັງເພື່ອຮອງຮັບການລົງທຶນຂອງພາກເອກະຊົນ ໂດຍສະເພາະແມ່ນການລົງທຶນຂອງຕ່າງປະເທດ, ມັນບໍ່ພຽງແຕ່ປະກອບສ່ວນຕໍ່ການເຕີບໂຕຂອງເສດຖະກິດເທົ່ານັ້ນ ແຕ່ຫາກຍັງປະກອບ ສ່ວນເຮັດໃຫ້ການພັດທະນາມີຄວາມຍືນຍົງ ແລະເພື່ອທຸກຄົນ.

ລະບຽບການໆແຂ່ງຂັນທີ່ເໝາະສົມ ແລະຕ້ານການຜູກຂາດ ແມ່ນມີຄວາມຈຳເປັນເພື່ອປົກປ້ອງຜົນປະໂຫຍດ ຂອງຜູ້ຊົມໃຊ້ ແລະປ້ອງກັນບັນດາອຸດສາຫະກຳເຄືອຂ່າຍທີ່ເປັນຂອງເອກະຊົນ (ເຊັ່ນ: ໂທລະຄົມສື່ສານ) ຈາກການເຂັ້ມງວດ ຫຼືການຈຳກັດການເຂົ້າເຖິງ ແລະການເກັບຄ່າບໍລິການຈາກຜູ້ຊົມໃຊ້ທີ່ແພງໂພດ.

ອັນນີ້, ມັນເປັນການກະທຳ ຫຼືການປະພຶດທີ່ແຕກຫັກໄດ້ງ່າຍ ກ່ຽວກັບການດູນດ່ຽງ, ໂດຍສະເພາະແມ່ນຢູ່ໃນສັງຄົມທີ່ມີຫຼາຍຊົນເຜົ່າ ຊຶ່ງເປັນບ່ອນທີ່ບັນດາກິດຈະກຳທຸລະກິດຕ່າງໆ ຈະຕ້ອງໄດ້ເຄົາລົບຄຸນຄ່າທາງດ້ານຮີດຄອງປະເພນີ ແລະສິດທິຂອງຜູ້ຄົນເຫຼົ່ານັ້ນ.

ສ່ວນໜຶ່ງໃນຄວາມພະຍາຍາມ ເພື່ອຮັບປະກັນ ຫຼືຮັກສາຄວາມເປັນສະມາຊິກກະພາບ ຂອງ WT, ສປປ ລາວ ກໍ່ດັດແກ້ລະບຽບກົດໝາຍຈຳນວນໜຶ່ງ ຢູ່ໃນບັນດາຂົງເຂດຕ່າງໆ, ລວມທັງອາກອນ, ການຄ້າ ແລະຊັບສິນທາງປັນຍາ.[120] ນອກຈາກນັ້ນ, ສປປ ລາວ ກໍ່ໄດ້ລົງນາມໃນຂໍ້ຕົກລົງກ່ຽວກັບການຄ້າກັບ ກຳປູເຈຍ, ຈີນ, ຍີ່ປຸ່ນ, ສ. ເກົາຫຼີ, ສະຫະລັດອາເມລິກາ ແລະປະເທດອື່ນໆ. ເພື່ອໃຫ້ສອດຄ່ອງກັບຂະບວນການເຊື່ອມໂຍງ AEC, ສປປ ລາວ ຄາດວ່າຈະຫລຸດຜ່ອນອັດຕາພາສີຂອງຕົນລົງເປັນສູນ ໃນປີ 2018 ສຳລັບສິນຄ້າທີ່ນຳເຂົ້າຈາກບັນດາປະເທດ ASEAN countries ແລະລົບລ້າງສິ່ງກີດຂວາງທີ່ບໍ່ແມ່ນພາສີອື່ນໆນຳ.

ເຖິງຢ່າງໃດກໍ່ຕາມ, ໃນທາງປະຫວັດສາດແລ້ວ ພາສີແມ່ນເປັນເຄື່ອງມືທີ່ສຳຄັນຂອງນະໂຍບາຍອຸດສາຫະກຳ ເພື່ອສະໜັບສະໜູນຄວາມປາຖະໜາ ຫຼືຄວາມຕ້ອງການຂອງບັນດາກິດຈະກຳຕ່າງໆຢູ່ໃນຂັ້ນເລີ່ມຕົ້ນ. ສປປ ລາວ ແມ່ນຢືນຢູ່ໃນຈຸດທີ່ຈະສູນເສຍເຄື່ອງມືທາງດ້ານນະໂຍບາຍນີ້ ຍ້ອນຂໍ້ຕົກລົງດ້ານການຄ້າເສລີ ແລະການເຊື່ອມໂຍງ AEC. ເນື່ອງຈາກຄວາມຈຳກັດດ້ານຄວາມອາດສາມາດໃນການຜະລິດ ແລະທ່າແຮງໄດ້ປຽບໂດຍສົມທຽບທີ່ຢູ່ນອກຂະແໜງການຊັບພະຍາກອນທຳມະຊາດຂອງມັນ, ສປປ ລາວ ແມ່ນບໍ່ມີຫຼາຍຜະລິດຕະພັນ ເພື່ອສະໜອງໃຫ້ແກ່ບັນດາຄູ່ຮ່ວມທາງການຄ້າທີ່ເສລີຂອງຕົນ, ໃນຂະນະທີ່ຂະແໜງການອຸດສາຫະກຳການຜະລິດພາຍໃນຂອງມັນ ກໍ່ຂ້ອນຂ້າງປະເຊີນກັບການແຂ່ງຂັນທີ່ເຂັ້ມຂຸ້ນ ຊຶ່ງອັນນີ້ແມ່ນເປັນສິ່ງທ້າທາຍ ສຳລັບຄວາມພະຍາຍາມເພື່ອເຮັດໃຫ້ເສດຖະກິດ (ທຸລະກິດ) ມີຄວາມຫຼາກຫຼາຍຂຶ້ນ ໃນ ສປປ ລາວ.

ແຕ່ວ່າ, ສປປ ລາວ ສາມາດຮຽນຮູ້ບົດຮຽນທີ່ສຳຄັນ ຈາກຜົນສຳເລັດຂອງອາຊີຕາເວັນອອກ ດ້ວຍການນຳໃຊ້ເຄື່ອງມືນະໂຍບາຍທາງດ້ານອຸດສາຫະກຳ. ສປປ ລາວ ຈະຕ້ອງໄດ້ຄົ້ນຫາບັນດາເຄື່ອງມືທີ່ເປັນທ່າແຮງ ຫຼາຍກວ່າມາດຕະການດ້ານພາສີ ແລະບໍ່ແມ່ນພາສີ (ຕົວຢ່າງໃບອະນຸຍາດ “license”) ທີ່ບໍ່ແມ່ນອຳນາດການຕັດສິນໃຈດ້ວຍຕົນເອງ ເພື່ອສະໜັບສະໜູນບັນດາກິດຈະກຳ “ຕາເວັນຂຶ້ນ”. ສ່ວນເຄື່ອງມືອີກອັນໜຶ່ງ ແມ່ນການລົງທຶນເຂົ້າໃນການຄົ້ນຄວ້າ ແລະການພັດທະນາ (R&D) ຊຶ່ງອັນນີ້ແມ່ນຮຽກຮ້ອງໃຫ້ມີການລົງທຶນໃສ່ການສຶກສາທີ່ມີຄຸນນະພາບ, ລວມທັງການພັດທະນາສີມືແຮງງານ. ແນ່ນອນ, ຈຸດເລີ່ມຕົ້ນນັ້ນ ແມ່ນການປັບປຸງຄວາມຮູ້ໜັງສື ແລະຮູ້ຄຳນວນລວມທັງລະດັບການໂພຊະນາການຂອງກຳລັງແຮງງານທີ່ກຳລັງເພີ່ມຂຶ້ນ (ຂອງລາວ).

## ການສົ່ງເສີມສະພາບຄ່ອງທາງດ້ານການເງິນ ສຳລັບການພັດທະນາມະນຸດ

ລາຍຈ່າຍຂອງລັດຖະບານຕໍ່ກັບການສຶກສາ ແລະສາທາລະນາສຸກ ແມ່ນຍັງບໍ່ທັນພຽງພໍ, ຖ້າສົມທຽບກັບຄ່າສະເລ່ຍຂອງບາງຄູ່ແຂ່ງຢູ່ໃນຂົງເຂດ ແລະປະເທດ. ຕົວຢ່າງ: ລັດຖະບານ ແຫ່ງ ສປປ ລາວ ໄດ້ໃຊ້ຈ່າຍ 2,8% ຂອງ GDP ເຂົ້າໃນການສຶກສາ ໃນຊ່ວງໄລຍະປີ 2005-2014, ໃນຂະນະທີ່ການໃຊ້ຈ່າຍຂອງລັດຖະບານເຂົ້າໃນການສຶກສາຂອງ ຫວຽດນາມ ແມ່ນ 6,3% ຂອງ GDP ແລະປະເທດເນປານ ແລະພູຖານ ທີ່ເປັນປະເທດ LDC ຄືກັບ ສປປ ລາວ ກໍ່ຢູ່ທີ່ປະມານ 4,7% ແລະ 5,5% ຂອງ GDP, ຕາມລຳດັບ ແລະຄ່າສະເລ່ຍຂອງ LDCs ແມ່ນ 3,4% ຂອງ GDP ຊຶ່ງເຫັນວ່າຍັງຫຼາຍກວ່າ ສປປ ລາວ ຢູ່. ສຳລັບການໃຊ້ຈ່າຍຂອງລັດຖະບານເຂົ້າໃນຂະແໜງສາທາລະນະສຸກ ແມ່ນມີຄວາມຄ້າຍຄືກັນ ຢູ່ໃນບັນດາປະເທດເຫຼົ່ານີ້. ໃນປີ 2013, ລັດຖະບານແຫ່ງ ສປປ ລາວ ໄດ້ໃຊ້ຈ່າຍເຂົ້າໃນການສາທາລະນະສຸກ ແມ່ນ 2% ຂອງ GDP ຊຶ່ງຕໍ່າກວ່າ 6% ຂອງ ຫວຽດນາມ ແລະເນປານ, ແລະສຳລັບຄ່າສະເລ່ຍຂອງບັນດາປະເທດ LDCs ແມ່ນ 5,2%.[121]

ອີງຕາມຂໍ້ມູນທີ່ຫາໄດ້ລ່າສຸດ ຈາກດັດຊະນີການປົກປ້ອງທາງສັງຄົມ (SPI), ADB ໄດ້ຈັດໃຫ້ ສປປ ລາວ ຢູ່ໃນອັນດັບທີ 4 ໃນລະຫວ່າງບັນດາປະເທດອາຊີ-ປາຊີຟິກ.[122] ການໃຊ້ຈ່າຍຈາກພາກລັດຂອງ ສປປ ລາວ ເຂົ້າໃນການປົກປ້ອງທາງສັງຄົມ ແມ່ນ 0,9% ຂອງ GDP ຊຶ່ງຕໍ່າກວ່າ ກຳປູເຈຍ (1,0%), ພູຖານ (1,2%), ເນປານ (2,1%), ໄທ (3,6%) ແລະຫວຽດນາມ (4,7%).

ການເພີ່ມການໃຊ້ຈ່າຍຂອງພາກລັດເຂົ້າໃນການສຶກສາ, ສາທາລະນາສຸກ ແລະການປົກປ້ອງທາງສັງຄົມແມ່ນຮຽກຮ້ອງໃຫ້ມີສະພາບຄ່ອງທາງດ້ານການເງິນ. ສປປ ລາວ ຍັງອີງໃສ່ການຊ່ວຍເຫຼືອຂອງຕ່າງປະເທດຫຼາຍສຳລັບການໃຊ້ຈ່າຍເຂົ້າໃນດ້ານສັງຄົມ ໂດຍສະເພາະແມ່ນການສຶກສາ ແລະສາທາລະນະສຸກ. ການຫລຸດພົ້ນອອກຈາກ LDC ສາມາດກະທົບຕໍ່ການເຂົ້າເຖິງການຊ່ວຍເຫຼືອລ້າ ແລະການອະນຸໂລມຜ່ອນຜັນດ້ານເງິນກູ້ຕ່າງໆ. ເຖິງຢ່າງໃນກໍ່ຕາມ, ເນື່ອງຈາກຄຳໝັ້ນສັນຍາຂອງບັນດາຄູ່ຮ່ວມພັດທະນາ ຕໍ່ກັບວາລະຮອດປີ 2030 ສຳລັບ SDGs ແລະຄວາມກ້າວໜ້າຂອງ ສປປ ລາວ ກ່ຽວກັບການບັນລຸ MDGs ແມ່ນເຂົາເຈົ້າເຫັນດີສະໜັບສະໜູນ ສປປ ລາວ ຕໍ່ໄປ, ເຖິງວ່າມັນຈະຫລຸດພົ້ນອອກຈາກສະຖານະພາບ LDC ຂອງມັນແລ້ວກໍ່ຕາມ.

ເຖິງແມ່ນວ່າ, ສປປ ລາວ ໄດ້ມີການສົ່ງເສີມຄວາມພະຍາຍາມໃນການລະດົມຊັບພະຍາກອນພາຍໃນ ແລະໄດ້ມີຄວາມກ້າວໜ້າໃນຫຼາຍດ້ານກໍ່ຕາມ, ແຕ່ຄວາມອາດສາມາດຂອງ ສປປ ລາວ ໃນການສືບຕໍ່ລະດົມລາຍໄດ້

ແມ່ນຍັງມີຄວາມຈຳກັດຢູ່ ເນື່ອງຈາກເສດຖະກິດທີ່ອີງໃສ່ທຳມະຊາດ ແລະບໍ່ເປັນທາງການ ແລະຍັງຢູ່ໃນຖານະທີ່ສູນເສຍຊັບພະຍາກອນລາຍໄດ້ທີ່ສຳຄັນ ຍ້ອນການຫລຸດຜ່ອນພາສີ-ອາກອນຕ່າງໆ ຊຶ່ງ ສປປ ລາວ ແມ່ນກຳລັງນຳໃຊ້ ແລະຂະຫຍາຍຖານພາສີມູນຄ່າເພີ່ມ ເພື່ອຊົດເຊີຍໃຫ້ແກ່ການສູນເສຍດັ່ງກ່າວນັ້ນ; ແຕ່ວ່າຫຼາຍໆປະເທດກຳລັງພັດທະນາ ທີ່ສູນເສຍລາຍໄດ້ຍ້ອນການຫັນເປັນເສລີທາງການຄ້າ ແລະການລຶບລ້າງອາກອນຕ່າງໆທີ່ກ່ຽວກັບການຄ້າ ແມ່ນມີໜ້ອຍ ຫຼືຫາຍາກທີ່ຈະຖືກຊົດເຊີຍໂດຍອາກອນທາງກົງຕ່າງໆ ເຊັ່ນ: VAT. ຜົນການສຶກສາຂອງ IMF ພົບວ່າ, ໃນຂະນະທີ່ບັນດາປະເທດທີ່ຮັ່ງມີຕ່າງໆ ແມ່ນສາມາດລຶບລ້າງການຫລຸດຜ່ອນພາສີກ່ຽວກັບລາຍໄດ້ດ້ານພາສີ ດ້ວຍການເພີ່ມລາຍໄດ້ອາກອນພາຍໃນຂອງເຂົາເຈົ້າຂຶ້ນ ແຕ່ອັນນີ້ແມ່ນບໍ່ຄ່ອຍປະກົດມີຢູ່ໃນຫຼາຍໆປະເທດທີ່ກຳລັງພັດທະນາ. ສ່ວນຢູ່ໃນບັນດາປະເທດລາຍໄດ້ປານກາງ ແມ່ນພົບວ່າມັນກວມເອົາສູງສຸດພຽງແຕ່ 60% ຂອງລາຍໄດ້ຈາກພາສີທີ່ສູນເສຍໄປເທົ່ານັ້ນ ແລະຢູ່ໃນບັນດາປະເທດລາຍໄດ້ຕ່ຳ ແມ່ນກວມເອົາພຽງແຕ່ຫຼາຍກວ່າ 30% ໜ້ອຍໜຶ່ງເທົ່ານັ້ນ.[123]

ດ້ວຍການເຊື່ອມໂຍງເຖິງຢ່າງໃດກໍ່ຕາມ, ມັນເປັນທີ່ຮູ້ດີນຳກັນແລ້ວວ່າ ການຜ່ອນຜັນອາກອນໂດຍກົງນັ້ນຈະມີຜົນກະທົບໜ້ອຍຕໍ່ກັບການປ່ຽນແປງການລົງທຶນຂອງຕ່າງປະເທດ,[124] ແຕ່ການດຶງດູດການລົງທຶນຈາກຕ່າງປະເທດດ້ວຍການຫລຸດຜ່ອນອາກອນໂດຍກົງພຽງຢ່າງດຽວ ແມ່ນອາດຈະບໍ່ຈຳເປັນຕ້ອງສູນເສຍລາຍໄດ້ພໍປານໃດ. ໃນຄວາມເປັນຈິງແລ້ວ, ໃນສອງສາມປີຜ່ານມານີ້ ແມ່ນ ສປປ ລາວ ໄດ້ນຳໃຊ້ການຜ່ອນຜັນດ້ານອາກອນເພື່ອດຶງດູດການລົງທຶນຂະໜາດໃຫຍ່ແລ້ວ.

ເພາະສະນັ້ນ, ສປປ ລາວ ຈະຕ້ອງໄດ້ພິຈາລະນາຢ່າງລະມັດລະວັງ ແລະລະອຽດຮອບຄອບ ກ່ຽວກັບຕົ້ນທຶນ ແລະຜົນປະໂຫຍດຂອງການຫລຸດຜ່ອນພາສີ ແລະອາກອນສືບຕໍ່ໄປ. ແນ່ນອນ, ມັນອາດຈະຈຳເປັນຕ້ອງໄດ້ພິຈາລະນາກ່ຽວກັບການຍົກເວັ້ນອາກອນ ແລະໃຫ້ໄລຍະເວລາຂອງການປອດອາກອນ. ພ້ອມກັນນັ້ນ, ມັນຍັງຈະຕ້ອງໄດ້ຍົກສູງການຄຸ້ມຄອງບໍລິຫານດ້ານອາກອນຂອງມັນ ແລະການປິດຊ່ອງວ່າງຂອງລະບຽບກົດໝາຍ ເພື່ອປ້ອງກັນການລົບຫຼີກນຳອີກ. ມັນຈຳເປັນຈະຕ້ອງໄດ້ເອົາໃຈໃສ່ສະເພາະ ກ່ຽວກັບການເພີ່ມທະວີລະບຽບການ ຫຼືວິທີການກວດສອບ ເພື່ອຮັບປະກັນຄວາມໂປ່ງໃສ ຊຶ່ງຜົນສຳເລັດທີ່ສຳຄັນກ່ຽວກັບເລື່ອງນີ້ ແມ່ນການບັງຄັບໃຊ້ການກວດສອບຈາກພາຍນອກຂອງພາກເອກະຊົນ ຕໍ່ກັບບັນດາວິສາຫະກິດທີ່ມີລາຍໄດ້ຫຼາຍ. ສປປ ລາວ ແມ່ນມີຄວາມຈຳເປັນ ຫຼືຕ້ອງການໆຊ່ວຍເຫຼືອດ້ານວິຊາການ ເພື່ອພັດທະນາຄວາມສາມາດໃນການປັບປຸງການຄຸ້ມຄອງບໍລິຫານດ້ານອາກອນ.

ເນື່ອງຈາກ SMEs ໄດ້ປະກອບສ່ວນໃນອັດຕາສ່ວນທີ່ໃຫຍ່ທີ່ສຸດຢູ່ໃນເສດຖະກິດ ຂອງ ສປປ ລາວ ຊຶ່ງພວກມັນຈະກາຍເປັນແຫຼ່ງທ່າແຮງຂອງການເພີ່ມລາຍໄດ້ດ້ານອາກອນ. ໃນປັດຈຸບັນນີ້, SMEs ສ່ວນຫຼວງຫຼາຍແມ່ນຍັງບໍ່ເປັນທາງການ ແລະບໍ່ໄດ້ຖືບັນຊີທີ່ຖືກຕ້ອງເໝາະສົມ. ສະນັ້ນ, ມັນຈຳເປັນຈະຕ້ອງໄດ້ສ້າງສະພາບແວດລ້ອມທີ່ເອື້ອອຳນວຍພວກມັນມີການເຕີບໂຕດ້ານຂະໜາດ, ຄຸນນະພາບ ແລະການເປັນທາງການຫຼາຍຂຶ້ນ.

ໃນປັດຈຸບັນນີ້, ແມ່ນມັນໄດ້ຖືກຮັບຮອງວ່າ ປະສິດທິພາບຂອງບັນດາວິສາຫະກິດ ແມ່ນບໍ່ຂຶ້ນຢູ່ກັບຄວາມເປັນເຈົ້າກຳມະສິດແຕ່ຢ່າງໃດ ແລະການຫັນລັດວິສາຫະກິດ ກໍບໍ່ຈຳເປັນວ່າເພື່ອຢາກໃຫ້ມີກຳໄລ ແລະລາຍໄດ້ຈາກອາກອນທີ່ເພີ່ມຂຶ້ນເທົ່ານັ້ນ. ລັດວິສາຫະກິດເອງກໍ່ສາມາດມີປະສິດທິຜົນ ແລະເປັນແຫຼ່ງລາຍໄດ້ທີ່ກຳໄດ້ ໂດຍຜ່ານການປະຕິຮູບການຄຸ້ມຄອງບໍລິຫານຕ່າງໆ; ໂດຍທີ່ເຂົາເຈົ້າຈະຕ້ອງດຳເນີນການຕາມບັນດາຫຼັກການທາງການຄ້າຫຼາຍກວ່າການຕິດຕາມຫຼາຍໆເປົ້າໝາຍດ້ານເສດຖະກິດມະຫາພາກທີ່ມີຄວາມຫຍຸ້ງຍາກ, ຊຶ່ງໃນເມື່ອອັນໜຶ່ງປະສົບຄວາມລົ້ມເຫຼວ ມັນກໍ່ສາມາດປົດບັງຜົນສຳເລັດຂອງອັນອື່ນນຳ, ໂດຍທີ່ ສປປ ລາວ ສາມາດຮຽນຮູ້ໄດ້ຈາກປະສົບປະການແຫ່ງຜົນສຳເລັດຂອງ ສິງກະໂປ ທີ່ເປັນຄູ່ຮ່ວມຢູ່ໃນ ASEAN.

ດ້ວຍຄວາມຕ້ອງການຊັບພະຍາກອນທຳມະຊາດທີ່ສືບຕໍ່ເພີ່ມສູງຂຶ້ນ, ໂດຍສະເພາະແມ່ນຄວາມຕ້ອງການດ້ານພະລັງງານໄຟຟ້ານ້ຳຕົກ ຂອງບັນດາຄູ່ຮ່ວມໃນ ASEAN, ສປປ ລາວ ຈະຕ້ອງໄດ້ພິຈາລະນາໃນຫຼາຍທາງເລືອກ ສຳລັບການເພີ່ມລາຍໄດ້ຈາກຂະແໜງການຊັບພະຍາກອນທຳມະຊາດ.

ມັນມີຂໍ້ໂຕ້ແຍ່ງບາງອັນວ່າ: ບັນດາປະເທດກຳລັງພັດທະນາ ຄວນຈະຂາຍສິດທິໃນການຂຸດຄົ້ນຊັບພະຍາກອນທຳມະຊາດໃຫ້ແກ່ບໍລິສັດຂ້າມຊາດ ເນື່ອງຈາກເຂົາເຈົ້າຂາດຄວາມສາມາດ ສຳລັບການຂຸດຄົ້ນ

ຊັບພະຍາກອນທຳມະຊາດດ້ວຍຕົວຂອງເຂົາເຈົ້າເອງ. ເຖິງຢ່າງໃດກໍ່ຕາມ, ອັນນີ້ແມ່ນເປັນພຽງແຕ່ປ້ອງກັນບໍ່ໃຫ້ມີການສໍ້ລາດບັງຫຼວງພາຍໃນເທົ່ານັ້ນ, ແຕ່ການຂາດຄວາມສາມາດພາຍໃນ ສຳລັບການອອກແບບ ຫຼືການຮ່າງສັນຍາ ກໍ່ຈະພາໃຫ້ເກີດມີຄວາມເສຍປຽບໄດ້ເຊັ່ນກັນ.

ມັນມີຫຼາຍຮູບແບບ ແລະສີສັນ ລະຫວ່າງ ກຳມະສິດຂອງລັດ ແລະການຫັນເປັນເອກະຊົນຢ່າງເຕັມສ່ວນ ເຊັ່ນ: ບັນດາລະບົບຂອງໂຄງສ້າງກ່ຽວກັບການມີສ່ວນຮ່ວມໃນບາງສ່ວນຢູ່ໃນບໍລິສັດບໍ່ແຮ່ ແລະບັນດາຮູບແບບຕ່າງໆຂອງການຈ່າຍ. ການຂຸດຄົ້ນຊັບພະຍາກອນທຳມະຊາດໂດຍກົງ ໂດຍຜ່ານການຮ່ວມທຶນ ຫຼືການຫຸ້ນສ່ວນໃນການຜະລິດ ຫຼືການຂຸດຄົ້ນໂດຍລັດວິສາຫະກິດ ແມ່ນບັນດາທາງເລືອກທີ່ເປັນທີ່ໜ້າສົນໃຈ. ຢູ່ໃນຫຼາຍໆປະເທດ, ແມ່ນຂະແໜງການເອກະຊົນເປັນຜູ້ນຳໃນການຂຸດຄົ້ນຊັບພະຍາກອນທຳມະຊາດ. ໃນຕົວຈິງແລ້ວ, ລັດຖະບານແມ່ນບໍ່ໄດ້ມີສ່ວນຮ່ວມໃນການເສຍຄ່າເຊົ່າ ຫຼືຄ່າສຳປະທານບໍ່ແຮ່ທາດແຕ່ຢ່າງໃດ ເນື່ອງຈາກມັນໄດ້ຮັບສ່ວນໜຶ່ງຈາກຮູບຂອງອາກອນຕ່າງໆ ດັ່ງຕໍ່ໄປນີ້ແລ້ວ:

- ອາກອນຕາມຜະລິດຕະພັນ: ຕໍ່ຫົວໜ່ວຍ ຫຼືຕາມຄ່າພາກຫຼວງຕ່າງໆ, ອາກອນການຂາຍ, ພາສີຂາອອກ ແລະຂາເຂົ້າ, ອາກອນມູນຄ່າເພີ່ມ, ຄ່າເຊົ່າທີ່ດິນ, ອາກອນຊັບສິນ, ອາກອນເງິນເດືອນ, ຄ່າທຳນຽມໃນການຈົດທະບຽນ ແລະພາສີສະແຕມ (ເຄື່ອງໝາຍ);[125]
- ອາກອນກຳໄລ: ອາກອນລາຍໄດ້, ອາກອນຄ່າເຊົ່າຊັບພະຍາກອນ, ອາກອນທີ່ໄດ້ຈາກຜົນທີ່ບໍ່ຄາດຫວັງ, ຊ່ວງເວລາຂອງການຍົກເວັ້ນອາກອນ, ຊ່ວງເວລາຂອງການຫັກຄ່າຫລຸ້ຍຫ້ຽນ, ຄ່າທຳນຽມຂອງການສົ່ງກຳໄລກັບບ້ານ, ຄ່າໃຊ້ຈ່າຍດ້ານຕົ້ນທຶນຂອງທຶນ, ອາກອນເງິນປັນຜົນ, ກຳໄລຂອງຄ່າພາກຫຼວງ, ອາກອນສ່ວນເພີ່ມຂອງທຶນ;
- ອາກອນສະພາບແວດລ້ອມ ເພື່ອຊົດເຊີຍໃຫ້ແກ່ຜົນກະທົບທາງລົບຕໍ່ກັບສະພາບແວດລ້ອມ ທີ່ເກີດຈາກບັນດາກິດຈະກຳຂອງບໍລິສັດບໍ່ແຮ່.

ສຳລັບຂໍ້ໄດ້ປຽບ ແລະຂໍ້ເສຍປຽບຂອງອາກອນແຕ່ລະປະເພດນັ້ນ ແມ່ນຕ້ອງໄດ້ມີການພິຈາລະນາຢ່າງລະມັດລະວັງ ແລະຮອບຄອບ. ໂດຍທົ່ວໄປແລ້ວ, ບັນດາປະເທດຕ່າງໆ ແມ່ນບໍ່ໄດ້ນຳໃຊ້ພຽງແຕ່ຢ່າງໜຶ່ງຢ່າງດຽວຂອງບັນດາເຄື່ອງມືຕ່າງໆທີ່ຍົກຂຶ້ນມານັ້ນ, ແຕ່ເຂົາເຈົ້າໄດ້ປະສົມປະສານພວກມັນເຂົ້າກັນຢູ່ໃນຫຼາຍລະດັບຂັ້ນທີ່ແຕກຕ່າງກັນ ຊຶ່ງຂຶ້ນກັບສະພາບການເມືອງ, ສະຖາບັນ, ປະຫວັດສາດ ແລະພູມມິສາດຂອງເຂົາເຈົ້າ.[126]

**ກ່ອງທີ່ 5.1: ການເປັນຄູ່ຮ່ວມ ລະຫວ່າງ ລັດ ແລະເອກະຊົນ ສປປ ລາວ ຕ້ອງການໆສະໜັບສະໜູນໃນການສ້າງຂີດຄວາມອາດສາມາດ**

ການເປັນຄູ່ຮ່ວມ ລະຫວ່າງ ລັດ ແລະເອກະຊົນ (PPP) ແມ່ນໄດ້ຮັບການສົ່ງເສີມໃຫ້ເປັນເຄື່ອງມືທີ່ສຳຄັນ ເພື່ອເຕີມເຕັມໃຫ້ແກ່ການຂາດແຄນທາງການເງິນ ສໍາລັບການລົງທຶນເຂົ້າໃນການພັດທະນາໂຄງລ່າງພື້ນຖານ. ມັນມີການກ່າວຂານກັນວ່າ PPP ແມ່ນມີປະສິດທິພາບຫຼາຍກວ່າ, ມີການຖ່າຍໂອນຄວາມສ່ຽງທີ່ດີກວ່າ ແລະ ເປັນສັນຍາລັກຄ່າຂອງເງິນທີ່ດີກວ່າ. ເຖິງຢ່າງໃດກໍ່ຕາມ, ບັນດານັກຄົ້ນຄວ້າສ່ວນຫຼາຍໄດ້ພົບວ່າ ບັນດາຂໍ້ກ່າວຂານກ່ຽວກັບຂໍ້ໄດ້ປຽບຂອງ PPP ນັ້ນ ແມ່ນຍັງບໍ່ມີຫຼັກຖານສະໜັບສະໜູນເທື່ອ.

ການສ້າງໂຮງໝໍ 425 ຕຽງ ຢູ່ໃນ Lesotho ໃນມໍ່ໆມານີ້ ທີ່ດໍາເນີນການຕາມໂຄງການ PPP ໂດຍ ອົງການຮ່ວມມືທາງການເງິນລະຫວ່າງປະເທດ (IFC) ຂອງທະນາຄານໂລກ ໄດ້ສະແດງໃຫ້ເຫັນເປັນຕົວຢ່າງວ່າ ຜົນສໍາເລັດຂອງໂຄງການ PPP ນັ້ນ, ເບິ່ງຄ້າຍກັບວ່າ ມັນສາມາດມີຜົນກະທົບທາງລົບຕໍ່ກັບຄວາມເປັນໄປໄດ້ຂອງໜີ້ສິນທາງງົບປະມານການເງິນທີ່ບໍ່ໂປ່ງໃສ ແລະຕໍ່ກັບຄວາມພະຍາຍາມໃນການພັດທະນາສັງຄົມໂດຍລວມ. ການສຶກສາຂອງ Oxfam ໃນປີ 2014 ກໍ່ພົບວ່າ ໂຮງໝໍນີ້ກໍາລັງຈະນໍາມາຊຶ່ງການລົ້ມລະລາຍຂອງງົບປະມານດ້ານສາທາລະນະສຸກທີ່ທຸກຍາກຂາດເຂີນຢູ່ແລ້ວ ຂອງປະເທດອາຟຣິກາ, ເພາະວ່າຫຼາຍກວ່າເຄິ່ງໜຶ່ງຂອງງົບປະມານດ້ານສາທາລະນະສຸກທັງໝົດຂອງປະເທດ (51%) ແມ່ນໄດ້ຈ່າຍໃຫ້ແກ່ກຸ່ມບໍລິສັດເອກະຊົນ ທີ່ສ້າງ ແລະດໍາເນີນການບໍລິຫານຈັດການໂຮງໝໍແຫ່ງນີ້ ຢູ່ໃນນະຄອນຫຼວງຂອງປະເທດ. ຕົ້ນທຶນທີ່ຈ່າຍໃຫ້ແກ່ໂຮງໝໍ PPP ແຫ່ງນີ້ແມ່ນເທົ່າກັບ 67 ລ້ານໂດລາ ຕໍ່ປີ ຢ່າງໜ້ອຍກໍ່ເທົ່າກັບສາມເທື່ອຂອງຕົ້ນທຶນທີ່ຈ່າຍໃຫ້ແກ່ໂຮງໝໍເກົ່າຂອງລັດໃນທຸກມື້ນີ້ ແລະມັນໄດ້ຊົມໃຊ້ຫຼາຍກວ່າເຄິ່ງໜຶ່ງຂອງງົບດ້ານສາທາລະນະສຸກຂອງລັດຖະບານ.

ການສຶກສາຂອງທະນາຄານໂລກ ກ່ຽວກັບການມີສ່ວນຮ່ວມຂອງພາກເອກະຊົນໃນການພັດທະນາໄຟຟ້າ ແລະນໍ້າຢູ່ໃນບັນດາປະເທດກໍາລັງພັດທະນາ ຢູ່ໃນບ່ອນທີ່ຂາດແຄນການລົງທຶນຂອງພາກລັດ ໄດ້ມີການສະຫລຸບວ່າ ຜູ້ລົງທຶນເອກະຊົນໄດ້ເກັບກ່ຽວຜົນໄດ້ຮັບ ດ້ວຍການສະສົມໃນຮູບແບບຂອງກໍາໄລທີ່ສູງຫຼາຍ ໂດຍປັດສະຈາກການແບ່ງປັນຜົນປະໂຫຍດ (ກໍາໄລ) ໃຫ້ແກ່ຜູ້ຊົມໃຊ້.

ໃນປີ 2014, ກຸ່ມປະເມີນຜົນເອກະລາດຂອງທະນາຄານໂລກ ໄດ້ໃຫ້ການສະຫລຸບວ່າ ການປະເມີນຜົນທີ່ມີຫຼາຍຂຶ້ນນັ້ນ ແມ່ນຈໍາເປັນຈະຕ້ອງໄດ້ເຂົ້າໃຈໃນແງ່ຕ່າງໆທີ່ສໍາຄັນ ຂອງການສະໜອງການບໍລິການສາທາລະນະສຸກ, ຕົວຢ່າງ: ການເຂົ້າເຖິງ, ແງ່ຕ່າງໆຂອງຄົນຜູ້ທີ່ທຸກຍາກ ແລະຄຸນນະພາບຂອງການສະໜອງການບໍລິການ. ອັນທີ່ຄ້າຍຄືກັນນັ້ນ, ການທົບທວນເອກະສານບົດຄົ້ນຄວ້າຕ່າງໆຂອງ IFC ໄດ້ໃຫ້ຂໍ້ສະຫລຸບວ່າ: ເຖິງແມ່ນວ່າມີຄໍາໝັ້ນສັນຍາລະດັບນະໂຍບາຍ ແຕ່ກໍ່ມີຫຼັກຖານໜ້ອຍຫຼາຍກ່ຽວກັບບັນດາໂຄງການກໍ່ສ້າງໂຄງລ່າງພື້ນຖານແບບ PPP ທີ່ມີຜົນກະທະທົບດ້ານດີຕໍ່ກັບບົດບາດ ຍິງ-ຊາຍ, ແຕ່ບັນດາໂຄງການ PPP ຢູ່ໃນຂະແໜງສາທາລະນາສຸກ, ໂດຍສະເພາະແມ່ນບັນດາໜ່ວຍງານທີ່ມັກຊ່ວຍເຫຼືອເພື່ອມະນຸດ ແລະບັນດາຜູ້ໃຫ້ທຶນ ແມ່ນມີລັກສະນະເປັນດາບສອງຄົມ. ເຖິງແມ່ນວ່າເຂົາເຈົ້າສາມາດສະໜອງເງິນຈໍານວນຫຼວງຫຼາຍໃຫ້ກໍ່ຕາມ, ແຕ່ໂດຍທົ່ວໄປແລ້ວແມ່ນເຂົາເຈົ້າຈະບໍ່ໃຫ້ແບບເປັນອັນລວມ ແກ່ການດູແລຮັກສາສຸຂະພາບທົ່ວໄປທີ່ປະເທດປະເຊີນຢູ່, ໝາຍຄວາມວ່າໃຫ້ເປັນແຕ່ລະໂຄງການໄປ.

ຈາກສັນຍານຂ້າງເທິງ, ໃນມໍ່ໆມານີ້ ກົມກິດຈະການເສດຖະກິດ ແລະສັງຄົມ ຂອງ UN ໄດ້ຈັດພິມເອກະສານການເຮັດວຽກ (working paper) ທີ່ອີງໃສ່ຜົນຂອງການຄົ້ນພົບ ກ່ຽວກັບ PPPs ຢູ່ໃນຮອບໂລກ.

ຜົນຂອງການຄົ້ນພົບທີ່ສຳຄັນສະດຸດຕາ ກ່ຽວກັບ PPPs:

ເຂົາເຈົ້າຍັງຂາດຄຳນິຍາມທີ່ຈະແຈ້ງ ແລະໂຄງສ້າງການບັນຊີທີ່ເປັນໜຶ່ງດຽວກັນ;

ເຂົາເຈົ້າຄິດໄລ່ເກັບຄ່າບໍລິການທີ່ແພງ ແລະເກັບເປັນໄລຍະເວລາທີ່ຍາວຫຼາຍ;

ການຄິດໄລ່ຄວາມສ່ຽງສຳລັບການຖ່າຍໂອນແມ່ນຜິດພາດ (ຂີ້ຕົວະ);

ມັນມີການຄັດເລືອກທີ່ບໍ່ຍຸດຕິທຳ (ເອນອ່ຽງໄປທາງໃດໜຶ່ງ);

ເຂົາເຈົ້າມີການບິດເບືອນຂະບວນການຈັດຊື້-ຈັດຈ້າງ;

ເຂົາເຈົ້າມັກຈະຈັບເອົາການຜູກຂາດ;

ມັນມີການຂາດຄວາມໂປ່ງໃສ ແລະຄວາມຮັບຜິດຊອບ ຫຼືຄວາມສາມາດກວດສອບໄດ້ ຊຶ່ງນຳໄປສູ່ການສໍ້ລາດບັງຫຼວງ;

ພວກມັນບໍ່ມີຜົນກະທົບຕໍ່ກັບຄວາມທຸກຍາກ, ຄວາມບໍ່ສະເໝີພາບ ແລະການພັດທະນາແບບຍືນຍົງທີ່ແນ່ນອນ.

ຂໍ້ສະຫລຸບສັງລວມ:

PPPs ບໍ່ແມ່ນຢາວິເສດ ຫຼື "ກະສູນເງິນ" ເພື່ອເຕີມຕື່ມໃຫ້ແກ່ຊ່ອງວ່າງ ຫຼືຄວາມຂາດແຄນທາງດ້ານການເງິນ. ສະນັ້ນ, ຂໍ້ທີ່ຄວນລະມັດລະວັງໃນການນຳໃຊ້ PPPs ເພື່ອແກ້ໄຂຂໍ້ຜູກພັນຕ່າງໆກ່ຽວກັບ SDG PPPs ນັ້ນແມ່ນຕ້ອງໄດ້ມີການອອກແບບຢ່າງລະມັດລະວັງ ແລະຮອບຄອບ ດ້ວຍການແບ່ງຮ່ວມຮັບຜິດຊອບຄວາມສ່ຽງຢ່າງເໝາະສົມ ເພື່ອປ້ອງກັນໜີ້ສິນທາງການເງິນທີ່ອາດຈະເກີດຂຶ້ນ ແລະເພື່ອຮັບປະກັນການເຂົ້າເຖິງຂອງໝົດທຸກຄົນ ຫຼືເພື່ອທຸກຄົນ. ບັນດາໂຄງການ PPP ທີ່ໄດ້ຮັບການສະເໜີນັ້ນ ແມ່ນຈະຕ້ອງໄດ້ສົມທຽບກັບທາງເລືອກຂອງການສົ່ງມອບຂອງຂະແໜງການເອກະຊົນດ້ວຍການຄາດຄະເນມູນຄ່າຂອງເງິນຢ່າງກວ້າງໆເພື່ອລວມເອົາການວິໄຈຜົນກະທົບຕໍ່ສາທາລະນະຢ່າງເຕັມສ່ວນ.

ນອກຈາກການແບ່ງຮ່ວມຮັບຜິດຊອບຄວາມສ່ຽງແລ້ວ, ບໍລິສັດຫຸ້ນສ່ວນຍັງຈະຕ້ອງໄດ້ປັບປຸງ ຫຼືຍົກລະດັບການປະກອບສ່ວນຂອງຂະແໜງເອກະຊົນຕໍ່ການພັດທະນາແບບຍືນຍົງ ໂດຍຜ່ານການຈັດຕັ້ງປະຕິບັດບັນດາຫຼັກການແລະຂໍ້ແນະນຳທີ່ໄດ້ຕົກລົງໂດຍອົງການສາກົນ, ລວມທັງບັນດາຫຼັກການຂໍ້ແນະນຳຂອງ UN ກ່ຽວກັບທຸລະກິດແລະສິດທິມະນຸດ. ກ່ຽວກັບເລື່ອງນີ້ ແມ່ນໜ້າທີ່ຮ່ວມກັນຮັບຜິດຊອບທາງສັງຄົມຂອງບັນດາຄູ່ຮ່ວມພາກເອກະຊົນ (CSR), ລວມທັງຂໍ້ຜູກພັນທີ່ບໍ່ກ່ຽວຂ້ອງກັບການປ່ຽນແປງອາກອນ ຜ່ານການຖ່າຍໂອນລາຄາທີ່ບໍ່ເໝາະສົມກໍ່ມີຄວາມສຳຄັນເຊັ່ນກັນ. ເພື່ອຮັບປະກັນໃຫ້ PPPs ເປັນເຄື່ອງມືທີ່ສຳຄັນໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງນັ້ນ ທີ່ສຳຄັນແມ່ນບັນດາປະເທດນັ້ນໆ ຕ້ອງມີຄວາມອາດສາມາດ ຫຼືຄວາມເຂັ້ມແຂງດ້ານສະຖາບັນເພື່ອສ້າງ, ການຄຸ້ມຄອງ ແລະປະເມີນຜົນຂອງ PPPs, ໂດຍສະເພາະແມ່ນຄວາມສຳພັນກັບແຫຼ່ງທຶນອື່ນໆທີ່ເປັນໄປໄດ້. ສຳລັບບັນດາປະເທດກຳລັງພັດທະນາຈຳນວນໜຶ່ງ ເຊັ່ນ: ສປປ ລາວ ແມ່ນຕ້ອງການໆຊ່ວຍເຫຼືອຈາກຊຸມຊົນສາກົນ ໃນຮູບຂອງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະການສ້າງຂີດຄວາມອາດສາມາດ.

ແຫຼ່ງຂໍ້ມູນ: "Public–Private Partnerships and the 2030 Agenda for Sustainable Development: Fit for purpose?", UN-DESA Working Paper, No. 148:

http://www.un.org/esa/desa/papers/2016/wp148_2016.pdf.

## ບັນດານະໂຍບາຍເສດຖະກິດມະຫາພາກສຳລັບການພັດທະນາ ມະນຸດ ແລະຄວາມຫຼາກຫຼາຍ

ການຮັກສາການເຕີບໂຕຂອງ ສປປ ລາວ ໃນຊຸມປີມໍ່ໆຜ່ານມານີ້ ແມ່ນໄດ້ຮັບການສະໜັບສະໜູນຄ້ຳຊູ ໂດຍສະພາບແວດລ້ອມຂອງເສດຖະກິດມະຫາພາກທີ່ໝັ້ນຄົງ ດ້ວຍລັກສະນະຂອງອັດຕາເງິນ ແລະການຂາດດູນ ງົບປະມານທີ່ຕ່ຳ. ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ໄດ້ຖືກວາງອອກ ຊຶ່ງມີທິດທາງໃນການຄຸ້ມ ຄອງເສດຖະກິດມະຫາພາກ ດັ່ງຕໍ່ໄປນີ້ (ໜ້າ. 95):

- ຮັກສາອັດຕາເງິນເຟີ້ໃຫ້ຢູ່ໃນລະດັບທີ່ສົມເຫດສົມຜົນ;
- ຄຸ້ມຄອງອັດຕາແລກປ່ຽນ ເພື່ອຮັກສາສະພາບເງິນຕາໃຫ້ໝັ້ນຄົງ ແລະສະຖານະທີ່ເປັນປະໂຫຍດສຳລັບ ຄວາມສາມາດໃນການແຂ່ງຂັນ;
- ຄຸ້ມຄອງໜີ້ສິນພາຍໃນ (ໜີ້ລັດຖະບານ ແລະໜີ້ສາທາລະນະ) ແລະຫລຸດຜ່ອນໜີ້ສິນຕ່າງປະເທດລົງ ເທື່ອ ລະກ້າວ;
- ປັບປຸງ ແລະບັງຄັບໃຊ້ບັນດາມາດຕະການຕ່າງໆ ເພື່ອສົ່ງເສີມສະພາບຄ່ອງທາງດ້ານການເງິນ ແລະເງິນຕາ;
- ເພີ່ມຄັງສຳຮອງເງິນຕາຕ່າງປະເທດ;
- ສ້າງຄັງສຳຮອງຂອງລັດ ເພື່ອຮັບປະກັນການໃຊ້ຈ່າຍຢ່າງບັງເອີນ ແລະຮີບດ່ວນ ເຊັ່ນ: ຫຼັງໄພພິບັດທາງທຳ ມະຊາດ.

ໂຄງສ້າງແບບກວ້າງໆນີ້ ເບິ່ງຄືວ່າມັນສອດຄ່ອງກັບການເຮັດໃຫ້ບັງເກີດການດູນດ່ຽງ ລະຫວ່າງ ຄວາມ ໝັ້ນຄົງ ແລະບັນດາຈຸດປະສົງຂອງການພັດທະນາ ຂອງບັນດານະໂຍບາຍເສດຖະກິດມະຫາພາກ. ຕົວຢ່າງ: ມາດຕາ IV ຂອງ IMF's ໄດ້ກຳນົດວ່າ "ແຕ່ລະປະເທດສະມາຊິກຈະຕ້ອງ: (i) ພະຍາຍາມຄວບຄຸມບັນດານະໂຍບາຍທາງ ເສດຖະກິດ ແລະການເງິນຂອງຕົນ ເພື່ອກ້າວໄປສູ່ຈຸດປະສົງຂອງການຊຸກຍູ້ສົ່ງເສີມການເຕີບໂຕທາງເສດຖະກິດທີ່ ມີຄວາມສະຫງົບ ແລະເປັນລະບຽບຮຽບຮ້ອຍ ດ້ວຍຄວາມມີສະເຖຍລະພາບໃນດ້ານທີ່ສົມເຫດສົມຜົນ ຕາມ ສະພາບທີ່ເໝາະສົມຂອງມັນ; (ii) ພະຍາຍາມສົ່ງເສີມຄວາມໝັ້ນຄົງ ດ້ວຍການຊຸກຍູ້ສົ່ງເສີມສະພາບເງື່ອນໄຂທາງ ເສດຖະກິດ ແລະການເງິນ ທີ່ເປັນຮາກຖານໃຫ້ແກ່ຄວາມສະຫງົບ ແລະເປັນລະບຽບຮຽບຮ້ອຍ ແລະ ລະບົບເງິນຕາ ທີ່ບໍ່ໂນ້ມອ່ຽງໄປສູ່ຄວາມບໍ່ແນ່ນອນໃນການແຕກຫັກ ..."

ນະໂຍບາຍເງິນຕາທີ່ຮັດກຸມ ເພື່ອຮັກສາເປົ້າໝາຍເງິນເຟີ້ຕາມທີ່ໄດ້ກຳນົດໄວ້ນັ້ນ ໂດຍບໍ່ມີການເອົາໃຈໃສ່ຕໍ່ ແຫຼ່ງຂອງເງິນເຟີ້ ອາດຈະເປັນການກີດຂວາງຄວາມຕ້ອງການເງິນຕາເກີນຄວນ ແມ່ນແຕ່ຄວາມຈຳເປັນໃນການລົງທຶນ ດ້ານອຸດສາຫະກຳໃນໄລຍະຍາວ; ແລະມັນກໍ່ຈະເປັນການກີດຂວາງການເຕີບໂຕທາງເສດຖະກິດ. ຫຼັງຈາກວິກິດ ການໆເງິນໂລກ ໃນປີ 2008-2009, ທັງ Dominique Strauss-Kahn, ອະດີດຜູ້ອຳນວຍການ ແລະ Olivier Blanchard, ອະດີດຫົວໜ້າຝ່າຍເສດຖະກິດຂອງ IMF ໄດ້ວິພາກວິຈານແບບກົງໄປກົງມາ ກ່ຽວກັບວິທີການ ໜຶ່ງ ນະໂຍບາຍ ໜຶ່ງເຄື່ອງມື ທີ່ນຳໃຊ້ອັດຕາດອກເບ້ຍ ເພື່ອພະຍາຍາມແກ້ບັນຫາທຸກປະເພດຂອງເງິນເຟີ້. ເຂົາເຈົ້າຍັງໄດ້ ຍົກໃຫ້ເຫັນຄວາມບໍ່ແນ່ນອນໃຈ ກ່ຽວກັບຄວາມຄິດຕາມແບບປະເພນີນິຍົມຂອງຍຸດທະສາດເງິນເຟີ້ຕ່ຳອີກດ້ວຍ.[127]

ຄະນະກຳມະການພັດທະນາຮ່ວມຂອງທະນາຄານໂລກ ແລະ IMF ໄດ້ອອກບາງຂໍ້ແນະນຳສຳລັບການອອກ ແບບນະໂຍບາຍການເງິນທີ່ດູນດ່ຽງການເຮັດໃຫ້ມີສະເຖຍລະພາບ ແລະບັນດາບົດບາດຂອງການພັດທະນາຕ່າງໆ. ມັນໄດ້ໃຫ້ຂໍ້ສັງເກດວ່າ "ການຂາດດູນການເງິນ ແມ່ນຕົວຊີ້ບອກທີ່ສຳຄັນສຳລັບຈຸດປະສົງຕ່າງໆ ສຳລັບການເຮັດ ໃຫ້ມີສະເຖຍລະພາບ ແລະການຄວບຄຸມການເຕີບໂຕຂອງໜີ້ສິນລັດຖະບານ, ແຕ່ມັນກໍ່ໄດ້ສະເໜີໃຫ້ເຫັນໜ້ອຍ ໜຶ່ງ ກ່ຽວກັບຜົນກະທົບໄລຍະຍາວ ຕໍ່ກັບຊັບສິນຂອງລັດຖະບານໃນໄລຍະຍາວ ຫຼືຕໍ່ກັບການເຕີບໂຕທາງເສດຖະ ກິດ...ນະໂຍບາຍການເງິນທີ່ບໍ່ໄດ້ເອົາໃຈໃສ່ຕໍ່ກັບຜົນກະທົບເຫຼົ່ານີ້ ແມ່ນເປັນການສ່ຽງໄພຕໍ່ກັບການບັນລຸຄວາມມີ ສະເຖຍລະພາບ, ໃນຂະນະທີ່ການເຕີບໂຕໃນໄລຍະຍາວ ແລະການຫລຸດຜ່ອນຄວາມທຸກຍາກ ແມ່ນມີຄວາມເປັນ

ໄປໄດ້ທີ່ຈະອ່ອນແອລົງ."[128]

ເພາະສະນັ້ນ, ສປປ ລາວ ແມ່ນຈຳເປັນຈະຕ້ອງໄດ້ຫຼີກລ້ຽງການວາງເປົ້າໝາຍເງິນເຟີ້ ແລະໜີ້ສິນ (ຂາດດຸນ) ແບບຕາຍຕົວ ໂດຍຈະຕ້ອງໄດ້ວາງເປົ້າໝາຍທີ່ອີງໃສ່ສະພາບທີ່ເປັນຢູ່ທົ່ວໄປ. ສິ່ງທີ່ດີທີ່ສຸດ, ແມ່ນຈະຕ້ອງພະຍາຍາມຕັ້ງນະໂຍບາຍໃຫ້ຖືກຕ້ອງ ໂດຍວາງເປົ້າໝາຍເງິນເຟີ້ເປັນຂອບເຂດໄວ້ ຈະດີກວ່າວາງເປັນຈຸດຕາມການຄາດຄະເນ, ການເອົາໃຈໃສ່ບັນດາບົດບາດຂອງລາຄາທີ່ກ່ຽວພັນກັບຂະແໜງການ (ຕົວຢ່າງ: ເລື່ອງການຄ້າພາຍໃນລະຫວ່າງ ການກະສິກຳ ແລະອຸດສາຫະກຳການຜະລິດ) ແລະການເຂົ້າເຖິງການເງິນ (ໂດຍສະເພາະແມ່ນ SMEs) ຢູ່ໃນຄວາມຫຼາກຫຼາຍຂອງເສດຖະກິດ.

ບັນດາເປົ້າໝາຍດ້ານເງິນເຟີ້ ແລະໜີ້ສິນ (ການຂາດດຸນ) ທີ່ຖືກສະເໜີ ແລະແນະນຳຢູ່ເລື້ອຍໆນັ້ນ ແມ່ນອີງໃສ່ບາງຄ່າກາງ ຫຼືບັນດາທັດຖານທາງປະຫວັດສາດ ແລະບໍ່ແມ່ນຈາກການນຳໃຊ້ປະສົບປະການຢ່າງເຄັ່ງຄັດແຕ່ຢ່າງໃດ; ພວກມັນກໍ່ບໍ່ໄດ້ໝາຍເຖິງອັນທີ່ໄດ້ຜົນດີທີ່ສຸດໃດໜຶ່ງເທົ່ານັ້ນ. ທີ່ສຳຄັນທີ່ສຸດ, ການຍຶດຕິດຢ່າງເຄັ່ງຂັດກັບບາງເປົ້າໝາຍທີ່ກຳນົດໄວ້ລ່ວງໜ້ານັ້ນ ຈະເຮັດໃຫ້ບັນດານະໂຍບາຍເສດຖະກິດມະຫາພາກຕ່າງໆນັ້ນໝູນຮອບຢູ່ເລື້ອຍໆ ແລະເຮັດໃຫ້ຄວາມບອບບາງຂີ້ຮ້າຍລົງ, ດັ່ງທີ່ເຫັນໄດ້ຢູ່ໃນວິກິດການໆເງິນອາຊຽນ ໃນລະຫວ່າງ ປີ 1997-1998 ແລະວິກິດການໆເງິນໂລກໃນມໍ່ໆມານີ້. ການຄົ້ນຄວ້າຂອງ IMF ໃນມໍ່ໆມານີ້ໄດ້ໃຫ້ຂໍ້ສະຫລຸບວ່າ ບັນດານະໂຍບາຍເສດຖະກິດມະຫາພາກທີ່ໝູນຮອບຢູ່ຕໍ່ໄປຢູ່ຄືແນວນັ້ນ ໄດ້ປະກອບສ່ວນໃນການເພີ່ມຄວາມບອບບາງ ແລະເພີ່ມຄວາມບໍ່ສະເໝີພາບ.[129]

ຢູ່ໃນ ວາລະສານມອງເສດຖະກິດໂລກ (World Economic Outlook), 2012 , IMF ໄດ້ສັງເກດວ່າ "ມັນບໍ່ມີການພົວພັນທີ່ງ່າຍດາຍ ລະຫວ່າງ ໜີ້ສິນ ແລະການເຕີບໂຕ. ຕາມຄວາມເປັນຈິງແລ້ວ, ການວິໄຈຂອງພວກເຮົາ ແມ່ນເນັ້ນໃສ່ອັນທີ່ວ່າມັນມີຫຼາຍປັດໄຈທີ່ເປັນບັນຫາຕໍ່ກັບການເຕີບໂຕຂອງປະເທດ ແລະການເຮັດໃຫ້ເກີດມີໜີ້ສິນ. ນອກຈາກນັ້ນ, ແມ່ນມັນບໍ່ມີມາດຖານຂັ້ນຕໍ່າພຽງໜຶ່ງດຽວ ສຳລັບບັນດາອັດຕາສ່ວນຂອງໜີ້ສິນ ທີ່ສາມາດອະທິບາຍ 'ສິ່ງທີ່ບໍ່ດີ' ຈາກ 'ສິ່ງທີ່ດີ'." ຢູ່ໃນ ວາລະສານມອງເສດຖະກິດໂລກ 2015, IMF ກໍ່ຍັງໄດ້ລາຍງານວ່າ ໜີ້ສິນທີ່ໃຫ້ແກ່ການລົງທຶນຂອງລັດເຂົ້າໃນຂະແໜງການໂຄງລ່າງພື້ນຖານ, ການສຶກສາ, ສາທາລະນາສຸກ ແລະການປົກປ້ອງທາງສັງຄົມ ໄດ້ຊ່ວຍຊຸກຍູ້ສົ່ງເສີມຄວາມຕ້ອງການ ແລະຜະລິດຕະພາບໂດຍລວມຂອງມັນ.

ເພາະສະນັ້ນ, ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງສຸມໃສ່ໃຊ້ໜີ້ສາທາລະນະໃຫ້ມີປະສິດທິພາບ ແລະບໍ່ພຽງແຕ່ກ່ຽວກັບມູນຄ່າລວມຂອງມັນເທົ່ານັ້ນ. ສິ່ງສຳຄັນແມ່ນຍັງຈະຕ້ອງໄດ້ເບິ່ງ ຫຼືຕິດຕາມໜີ້ຕ່າງປະເທດນຳອີກ ເນື່ອງຈາກມັນມີຄວາມສ່ຽງສູງ ຍ້ອນການປ່ຽນແປງຢ່າງກະທັນຫັນຂອງເສດຖະກິດໂລກ ທີ່ສາມາດເຮັດໃຫ້ອັດຕາດອກເບ້ຍເພີ່ມຂຶ້ນສູງຫຼາຍ ຊຶ່ງເຮັດໃຫ້ລາຍໄດ້ຈາກການສົ່ງອອກຫລຸດລົງ ຫຼືອັດຕາແລກປ່ຽນເຊື່ອມຖອຍ.

ທາງເລືອກ ລະຫວ່າງ ນະໂຍບາຍການເງິນ ແລະເງິນຕາ ແມ່ນບໍ່ຈຳເປັນຕ້ອງອີງໃສ່ເສດຖະກິດພຽງແຕ່ຢ່າງດຽວ, ແຕ່ຍັງຈະຕ້ອງອີງໃສ່ການພິຈາລະນາທາງດ້ານການເມືອງ ແລະສັງຄົມນຳອີກ. ໃນຂະນະທີ່ທັງສອງຊຸດ (ສອງຢ່າງ)ຂອງນະໂຍບາຍນີ້ ໄດ້ສົ່ງຜົນກະທົບຕໍ່ຄວາມຕ້ອງການທີ່ມີປະສິດທິພາບ, ເບິ່ງຄືວ່າພວກມັນຂ້ອນຂ້າງຈະສ້າງຜົນກະທົບສຳຄັນທີ່ແຕກຕ່າງກັນ ຕໍ່ກັບທຸກອົງປະກອບຂອງຊຸມຊົນຢ່າງແທ້ຈິງ. ດັ່ງນັ້ນ, ອັນນີ້ແມ່ນຮຽກຮ້ອງຕ້ອງການໃຫ້ການສຶກສາທີ່ຖືເອົາປະສົບປະການເປັນຫຼັກຢ່າງເຄັ່ງຂັດ ກ່ຽວກັບການແຈກຢາຍທີ່ເປັນຜົນຕາມມາຈາກບັນດາເຄື່ອງມືດ້ານນະໂຍບາຍການເງິນ ແລະເງິນຕາ, ໂດຍສະເພາະແມ່ນໃນເວລາທີ່ ສປປ ລາວ ກຳລັງປະສົບຫຼືມີແນວໂນ້ມຂອງການເພີ່ມຂຶ້ນ ກ່ຽວກັບຄວາມບໍ່ສະເໝີພາບ ຢູ່ທັງແນວຕັ້ງ ແລະແນວນອນ.

ບົດຄົ້ນຄວ້າຢູ່ພາຍໃນພົບວ່າ ການເປີດເສລີບັນຊີທຶນໄດ້ ກະທົບຕໍ່ສະຖຽນລະພາບທາງດ້ານການເງິນ (ວິກິດການ) ແລະການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ.[130] ການຄຸ້ມຄອງການໄຫຼຂອງເງິນທຶນ ແມ່ນເປັນສິດທິຂອງເຈົ້າຂອງປະເທດທີ່ມີອຳນາດອະທິປະໄຕ ພາຍໃຕ້ມາດຕາ VI ຂອງຕົກລົງ IMF. ໃນປັດຈຸບັນນີ້, ທັງ IMF ແລະWorld Bank ໄດ້ຮັບຮູ້ການຄຸ້ມຄອງການໄຫຼຂອງທຶນ ວ່າເປັນເຄື່ອງມືນະໂຍບາຍເສດຖະກິດມະຫາພາກທີ່ສຳຄັນ,[131] ແລະ IMF ໄດ້ໃຫ້ຂໍ້ສະເໜີແນະໃນເລື່ອງຂອບເຂດຂອງເຄື່ອງມື ສຳລັບການຄຸ້ມຄອງການໄຫຼຂອງທຶນ.[132]

ບັນດາປະເທດອາຊີ-ປາຊີຟິກ ໄດ້ມີການນຳໃຊ້ບັນດາມາດຕະການຕ່າງໆ ເພື່ອຄຸ້ມຄອງການໄຫຼຂອງທຶນໃນໄລຍະຍາວທີ່ຫຼາຍເກີນໄປ, ໃນຂະນະທີ່ຍັງມີການສົ່ງເສີມ FDI ຢູ່. ເພາະສະນັ້ນ, ການເປີດບັນຊີທຶນ ແມ່ນຄວນຈະບໍ່ຖືກພິຈາລະນາວ່າເປັນຄືກັນທັງໝົດ ຫຼືບໍ່ເປັນການສະເໜີ ແລະບໍ່ແມ່ນແຜນການເລີຍ. ບັນຊີທຶນ ແມ່ນສາມາດເປີດໃຫ້ແກ່ການໄຫຼຂອງມູນຄ່າຊັບສິນ ທັງຫຼັກຊັບຂອງການລົງທຶນ ແລະ FDI ແມ່ນແຕ່ວ່າມັນມີການຄຸ້ມຄອງການໄຫຼຂອງເງິນ ແລະພັນທະບັດກໍ່ຕາມ.

ຫຼາຍໆປະເທດອາຊີ-ປາຊີຟິກ, ລວມທັງ ປະເທດບັງກະລາເດັດ ກໍ່ໄດ້ມີການສະສົມຄັງສຳຮອງເງິນຕາຕ່າງປະເທດ ເພື່ອເປັນມາດຕະການປ້ອງກັນກະແສການໄຫຼຂອງທຶນທີ່ບໍ່ແນ່ນອນ (ທີ່ປ່ຽນແປງໄດ້ງ່າຍ). ເຖິງຢ່າງໃດກໍ່ຕາມ, ມັນກໍ່ຍັງມີຕົ້ນທຶນກາລະໂອກາດຄັງສຳຮອງເງິນຕາຕ່າງປະເທດ ຄວນຈະຖືກນຳໃຊ້ສຳລັບການລົງທຶນທາງສັງຄົມ.

ສປປ ລາວ ອາດຈະບໍ່ຈຳເປັນສະສົມຄັງສຳຮອງເງິນຕາຕ່າງປະເທດ ສຳລັບການປ້ອງກັນບັນດາເຫດຜົນເຫຼົ່ານັ້ນ ຫຼາຍເກີນກວ່າຄວາມຈຳເປັນທີ່ຕ້ອງກຸ້ມກັບການນຳເຂົ້າຂອງມັນ. ໂດຍລວມແລ້ວ, ບັນດາປະເທດທີ່ມີລາຍໄດ້ຕ່ຳ ຄວນຈະຕ້ອງມີຄັງສຳຮອງເງິນຕາຕ່າງປະເທດ ຢ່າງໜ້ອຍກໍ່ກຸ້ມການນຳເຂົ້າໄດ້ 3 ເດືອນ. ເນື່ອງຈາກບັນດາປະເທດສະມາຊິກ ASEAN ໄດ້ພັດທະນາຕາໜ່າງຄວາມປອດໄພດ້ານການເງິນຂອງຂົງເຂດ ໂດຍຜ່ານຂໍ້ລິເລີ່ມຊຽງໃໝ່ທີ່ຫັນເປັນຫຼາຍຝ່າຍ (Chiang Mai Initiative Multilateralization), ສປປ ລາວ ຈະຕ້ອງມີໂອກາດເຂົ້າເຖິງສະພາບຄ່ອງທາງດ້ານການເງິນ ຖ້າຫາກວ່າມີຄວາມຈຳເປັນ; ແຕ່ວ່າການສະສົມຄັງສຳຮອງ ແມ່ນເພື່ອໃຫ້ບັນດາປະເທດຮັກສາອັດຕາແລກປ່ຽນໃຫ້ອ່ອນຄ່າ ເພື່ອຊຸກຍູ້ສົ່ງເສີມການສົ່ງອອກ ຊຶ່ງອັດຕາແລກປ່ຽນທີ່ອ່ອນຄ່ານັ້ນ ສາມາດເປັນເຄື່ອງມືທີ່ຊົງພະລັງອຳນາດ ສຳລັບຄວາມຫຼາກຫຼາຍທາງເສດຖະກິດ.

ມັນມີການໂຕ້ແຍ່ງທີ່ສຳຄັນ ກ່ຽວກັບຄວາມມີປະສິດທິພາບຂອງນະໂຍບາຍອຸດສາຫະກຳ, ໂດຍສະເພາະແມ່ນບັນດາເຄື່ອງມືນະໂຍບາຍ ເຊັ່ນ: ການຫລຸດອາກອນ ແລະການຖົມຊຸມຕ່າງໆ ຫຼືການຈັດຊື້-ຈັດຈ້າງຂອງລັດຖະບານ ໃນການເລືອກ “ຜູ້ຊະນະ”. ບັນດາເຄື່ອງມືນະໂຍບາຍເຫຼົ່ານີ້ ແມ່ນມີຄວາມຫຍຸ້ງຍາກແກ່ກຸ່ມຜູ້ທີ່ສົນໃຈ ແລະສາມາດນຳໄປສູ່ການຮົ່ວໄຫຼໄດ້. ການວິຈານກ່ຽວກັບນະໂຍບາຍອຸດສາຫະກຳ ສ່ວນຫຼາຍແມ່ນຊີ້ໃສ່ບັນດາຄວາມລົ້ມເຫຼວຕ່າງໆ ຊຶ່ງອັນຕົ້ນຕໍແມ່ນຄຸນລັກສະນະທີ່ໄປໄດ້ຂອງການຮົ່ວໄຫຼ ແລະຂໍ້ຫຍຸ້ງຍາກຕ່າງໆໃນການຄັດເລືອກຜູ້ຊະນະ.

ເຖິງຢ່າງໃດກໍ່ຕາມ, ດັ່ງປະສົບປະການຂອງບັນດາປະເທດຕ່າງໆທີ່ປະສົບຜົນສຳເລັດມາແລ້ວນັ້ນ ໄດ້ສະແດງໃຫ້ເຫັນວ່າ ການນຳໃຊ້ອັດຕາແລກປ່ຽນເປັນເຄື່ອງມືນະໂຍບາຍທາງດ້ານອຸດສາຫະກຳ ແມ່ນສາມາດຫຼີກລ່ຽງອັນຕະລາຍທີ່ແອບແຝງຢູ່ສິ່ງເຫຼົ່ານີ້ໄດ້. ອັດຕາແລກປ່ຽນໄດ້ສົ່ງຜົນກະທົບຕໍ່ເສດຖະກິດທັງໝົດ ເນື່ອງຈາກວ່າມັນໄດ້ນຳໃຊ້ຄືກັນທັງໝົດໃນທົ່ວປະເທດ, ອັດຕາແລກປ່ຽນທີ່ອ່ອນຄ່າ ສາມາດກະຕຸ້ນໃຫ້ຜູ້ຜະລິດເພື່ອສົ່ງອອກທັງໝົດ ສາມາດຂາຍໄດ້ ແລະຈ່າຍຄ່າແຮງງານຕົວຈິງໄດ້ (ມີການຊົມໃຊ້) ແລ້ວມັນກໍ່ຈະກະຕຸ້ນຂະແໜງບໍລິການໄປພ້ອມກັນ. ການທີ່ສາມາດນຳໃຊ້ອັດຕາແລກປ່ຽນທີ່ອ່ອນຄ່ານັ້ນ ແມ່ນເປັນເຄື່ອງມືນະໂຍບາຍທາງດ້ານອຸດສາຫະກຳທີ່ມີປະສິດທິພາບ; ເຖິງຢ່າງໃດກໍ່ຕາມ, ປະເທດກໍ່ຈຳເປັນຕ້ອງໃຫ້ສາມາດສະສົມຄັງສຳຮອງເງິນຕາຕ່າງປະເທດໄດ້ ແລະຄຸ້ມຄອງພວກມັນຢ່າງຮອບຄອບ ແລະສະຫຼຽວສະຫຼາດ.

**ກ່ອງທີ 5.2: ເລື່ອງລາວຂອງສອງປະເທດທີ່ບໍ່ມີທາງອອກສູ່ທະເລ ແມ່ນຫຍັງ ທີ່ ສປປ ລາວ ສາມາດຮຽນຮູ້ໄດ້?**

**ບອດສະວານາ**

ປະເທດບອດສະວານາ ເປັນປະເທດຮັ່ງມີທີ່ບໍ່ມີທາງອອກສູ່ທະເລ, ມີຈຳນວນປະຊາກອນສອງລ້ານຄົນ ແລະຫລຸດພົ້ນອອກຈາກສະຖານະພາບ LDC ໃນປີ 1994. ສຳລັບບັນດານະໂຍບາຍເສດຖະກິດມະຫາພາກຕາມແບບປະເພນີນິຍົມ ທີ່ໄດ້ວາງເປົ້າໝາຍເງິນເຟີ້ບໍ່ໃຫ້ເກີນ 5% ແລະການບັນລຸງົບປະມານທີ່ເກີນດູນຂອງມັນ ແມ່ນໄດ້ຮັບການຍົກຍ້ອງ, ຖ້າຫາກເປັນໄປໄດ້. ຄວາມມີສະເຖຍລະພາບທາງດ້ານເສດຖະກິດ ໄດ້ສະໜັບສະໜູນເຮັດໃຫ້ການເຕີບໂຕທາງເສດຖະກິດຂອງ ບອດສະວານາ ແຂງແຮງຂຶ້ນ ແລະປ່ຽນແປງມັນຈາກໜຶ່ງໃນບັນດາປະເທດທີ່ທຸກຍາກທີ່ສຸດ ຢູ່ໃນ ທະວີບອາຟລິກກາ ໄປເປັນໜຶ່ງໃນເຂດເສດຖະກິດທີ່ມີການເຕີບໂຕໄວທີ່ສຸດ ຢູ່ໃນໂລກ ຊຶ່ງມັນໄດ້ເຄື່ອນຍ້າຍໄປສູ່ອັນດັບປະເທດທີ່ມີລາຍຮັບປານກາງສູງ. ຢູ່ໃນບົດລາຍງານການປະເມີນປະເທດຄັ້ງລ້າສຸດນັ້ນ, ທະນາຄານໂລກໄດ້ອະທິບາຍວ່າ ມັນເປັນ “ປະຫວັດສາດແຫ່ງຜົນສຳເລັດຂອງການພັດທະນາ”.[a]

ເຖິງຢ່າງໃດກໍ່ຕາມ, ການຢຶດໝັ້ນຢ່າງເຂັ້ມງວດຕໍ່ກັບການກຳນົດເປົ້າໝາຍເງິນເຟີ້ ແລະການຂາດດູນໄວ້ລ່ວງໜ້າ ຂອງ ບອດສະວານາ ໄດ້ເຮັດໃຫ້ການເຕີບໂຕຂອງມັນບໍ່ມີສະເຖຍລະພາບ ແລະຄຸ້ມຄອງບໍ່ໄດ້ ຊຶ່ງເພີ່ມຂຶ້ນຈາກ 0,25% ໃນປີ 2001 ເປັນ 8,7% ໃນປີ 2007, ແຕ່ພັດຫລຸດລົງເປັນ -7,6% ໃນປີ 2009 ໃນເວລາທີ່ເສດຖະກິດໂລກຖືກກະທົບກະເທືອນໂດຍວິກິດການງເງິນ. ຫຼັງຈາກທີ່ມີການຟື້ນຕົວຄືນມາເປັນ 9,3% ໃນປີ 2013, ມັນພັດຕົກວູບລົງເປັນ -0,3% ໃນປີ 2015. ໂຄງສ້າງທາງເສດຖະກິດຂອງ ບອດສະວານາ ແມ່ນຍັງຮັກສາໄວ້ ຊຶ່ງຄວາມຫຼາກຫຼາຍທີ່ບໍ່ສະເໝີພາບ,ໂດຍທີ່ອຸດສາຫະກຳການຜະລິດປະກອບສ່ວນໃນ GDP ພຽງແຕ່ 4,2% ແລະຂະແໜງບໍ່ແຮ່ປະກອບສ່ວນ 30,2%; ໃນນັ້ນ, ເພັດໄດ້ປະກອບສ່ວນເກືອບ 70% ຂອງມູນຄ່າ ການສົ່ງອອກທັງໝົດ. ການປ່ອຍທາດອາຍພິດ $CO_2$ ໄດ້ເພີ່ມຂຶ້ນຈາກ 1,513 ໂຕນຕໍ່ຫົວຄົນ ໃນປີ 1991 ມາເປັນ 2,323 ໂຕນຕໍ່ຫົວຄົນ ໃນປີ 2011.

ບອດສະວານາ, ຍັງມີການຈ່າຍທີ່ໜັກໜ່ວງຫຼາຍ ຕໍ່ກັບລະດັບຄວາມບໍ່ພຽງພໍໃນການພັດທະນາມະນຸດ. ອາຍຸຍືນສະເລ່ຍຂອງປະເທດໄດ້ຫລຸດລົງຢ່າງໄວວາ ຄືຈາກ 64,3 ປີ ໃນປີ 1998 ມາເປັນ 48,69 ປີ ໃນປີ 2001, ໃນລະຫວ່າງຊ່ວງໄລຍະເວລາ ທີ່ມີຄວາມເຂັ້ມແຂງ ແລະໝັ້ນຄົງທາງດ້ານງົບປະມານການເງິນນັ້ນ ລາຍຈ່າຍຂອງລັດໃຫ້ແກ່ດ້ານສາທາລະນະສຸກພັດຖືກຕັດລົງ ເຮັດໃຫ້ບໍ່ພຽງພໍຕໍ່ການຮັບມືກັບການລະບາດຂອງ HIV/AIDS. ຄວາມມີອາຍຸຍືນທີ່ຖືກປັບປຸງໃຫ້ສູງຂຶ້ນນັ້ນ ພັດຕ່ຳລົງກວ່າຊຸມປີກ່ອນທີ່ມີການລະບາດຂອງ HIV/.

ການຫລຸດລົງຂອງລາຍຈ່າຍທາງສັງຄົມຂອງລັດນັ້ນແມ່ນເຫັນໄດ້ຈາກການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ຊຶ່ງເຮັດໃຫ້ມັນເປັນໜຶ່ງໃນບັນດາປະເທດທີ່ມີຄວາມບໍ່ສະເໝີພາບສູງຢູ່ໃນໂລກ ໂດຍທີ່ຕົວສຳປະສິດ Gini ຢູ່ທີ່ 0,61. ການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບນັ້ນ ໄດ້ຕັດຫລຸດຄ່າ HAI ຂອງມັນລົງ 38,2% ຄືຈາກ 0,698 ມາເປັນ 0,431.

**ອູສະເບັກກິສະຖານ**

ອີກອັນໜຶ່ງ, ປະເທດ ອູສະເບັກກິສະຖານ ເປັນໜຶ່ງໃນສອງ (ໃນເມື່ອເປັນປະເທດເອກະລາດ) ປະເທດທີ່ບໍ່ມີທາງອອກສູ່ທະເລ ກໍ່ປະສົບກັບບັນຫາຄວາມຫຍຸ້ງຍາກຫຼາຍ ພາຍຫຼັງທີ່ສະຫະພາບໂຊວຽດໄດ້ລົ້ມລະລາຍ ຊຶ່ງໄດ້ມີການຫົດຕົວລົງ 11% ໃນປີ 1992; ແຕ່ເສດຖະກິດຂອງມັນກໍ່ເລີ່ມມີການເຕີບໂຕ ແຕ່ປີ 1996 ເປັນຕົ້ນມາ, ໂດຍສະເລ່ຍແລ້ວ ຕັ້ງແຕ່ປີ 1997 ເປັນຕົ້ນມາ ແມ່ນໄດ້ມີການເຕີບໂຕຫຼາຍກວ່າ 4% ແລະໃນປີ 2001 GDP ຂອງມັນແມ່ນສູງກວ່າລະດັບ ໃນປີ 1989 ເຖິງ 3%. ໃນປັດຈຸບັນນີ້, ເສດຖະກິດຂອງມັນແມ່ນມີຄວາມຫຼາກຫຼາຍໆຂຶ້ນ

ໂດຍການປະກອບສ່ວນຂອງຂະແໜງອຸດສາຫະກຳ ຕໍ່ກັບ GDP ໄດ້ເພີ່ມຂຶ້ນເປັນປະມານ 10% ໃນໄລຍະຫຼັງຊຸມປີ 1990 ມາເປັນ 24% ໃນປີ 2015. ການອີງໃສ່ການກະສິກຳ (ຝ້າຍ) ຂອງປະເທດໄດ້ຫລຸດລົງຢ່າງໄວວາ. ອັ້ນນັ້ນແມ່ນເປັນຍ້ອນການເຕີບໂຕຂອງມັນມີສະເຖຍລະພາບຫຼາຍຂຶ້ນ ຊຶ່ງໄດ້ມີການຫລຸດລົງພຽງໜ້ອຍດຽວຈາກ 9,5% ໃນປີ 2007 ມາເປັນ 8,1% ໃນປີ 2009. ຕັ້ງແຕ່ເກີດວິກິດການໆເງິນໂລກມາ ອູສະເບັກກິສະຖານກໍ່ຍັງສາມາດຮັກສາອັດຕາການເຕີບໂຕໂດຍສະເລ່ຍຕໍ່ປີ ຢູ່ທີ່ປະມານ 8% ແລະການປ່ອຍທາດອາຍພິດ $CO_2$ ຂອງມັນ ກໍ່ຫລຸດລົງຈາກ 5,467 ໂຕນຕໍ່ຫົວຄົນ ໃນປີ 1993 ມາເປັນ 3,693 ໂຕນຕໍ່ຫົວຄົນ ໃນປີ 2010.

ອູສະເບັກກິສະຖານ ກໍ່ຍັງປະສົບຜົນສຳເລັດທີ່ສຳຄັນໃນການພັດທະນາມະນຸດ ຊຶ່ງມັນບໍ່ຄືກັບບັນດາປະເທດອະດີດສະຫະພາບໂຊວຽດອື່ນໆ ໂດຍທີ່ປະເທດນີ້ແມ່ນບໍ່ປະສົບກັບການຫລຸດລົງຂອງອາຍຸຍືນສະເລ່ຍ, ກົງກັນຂ້າມແມ່ນມັນຍັງຄ່ອຍໆເພີ່ມຂຶ້ນເປັນ 73 ປີ ໃນປີ 2012. ສຳລັບຄວາມບໍ່ສະເໝີພາບຢູ່ໃນ ອູສະເບັກກິສະຖານ ແມ່ນມີແນວໂນ້ມເພີ່ມຂຶ້ນ, ຊຶ່ງອີງຕາມການຄາດຄະເນຂອງທະນາຄານໂລກ ເຫັນວ່າຕົວສຳປະສິດ Gini ຂອງ ອູສະເບັກກິສະຖານ ແມ່ນຢູ່ໃນລະຫວ່າງ 0,35-0,36 ໃນປີ 2002-2003.

ອູສະເບັກກິສະຖານ ໄດ້ປະສົບຜົນສຳເລັດໃນເລື່ອງເຫຼົ່ານີ້ຢ່າງໜ້າເພິ່ງພໍໃຈ ແລະເປັນທີ່ຍອມຮັບໂດຍທົ່ວໄປ. ມັນໄດ້ເລືອກຕັດສິນໃຈບໍ່ເຮັດຕາມລັກສະນະຂອງບັນດານະໂຍບາຍຮັດສາຍແອວທີ່ເຂັ້ມງວດ ດ້ວຍການຕັດລາຍຈ່າຍທາງສັງຄົມ. ແທນທີ່ອັນນັ້ນ, ມັນພັດຂະຫຍາຍໂຄງການສະໜັບສະໜູນຊ່ວຍເຫຼືອທາງສັງຄົມ ເພື່ອປົກປ້ອງບັນດາມາດຖານການດຳລົງຊີວິດຂອງຜູ້ຄົນ, ໂດຍສະເພາະແມ່ນຜູ້ທີ່ທຸກຍາກ ແລະຜູ້ສູງອາຍຸ. ພ້ອມກັນນັ້ນ, ມັນກໍ່ບໍ່ໄດ້ຮີບຮ້ອນທັງໃນການຫັນເປັນເສລີ, ການຫລຸດຜ່ອນລະບຽບການ ແລະການຫັນເປັນເອກກະຊົນແຕ່ຢ່າງໃດ.

ແທນທີ່ຈະເຮັດຄືແນວນັ້ນ, ມັນພັດສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອບັນດາກິດຈະກຳການຜະລິດ ໂດຍຜ່ານການລົງທຶນເຂົ້າໃສ່ໂຄງລ່າງພື້ນຖານສາທາລະນະ, ໃຫ້ສິນເຊື່ອດອກເບ້ຍຕ່ຳແກ່ບັນດາຂະແໜງການບໍລິມະສິດ ແລະຄ້ຳປະກັນລາຄາໃຫ້ແກ່ການຜະລິດສະບຽງອາຫານ ແລະພືດອື່ນໆ ຕາມໂກຕ້າທີ່ລັດຖະບານກຳນົດໃຫ້.

ເຖິງຢ່າງໃດກໍ່ຕາມ, ການຂາດດູນງົບປະມານຂອງ ອູສະເບັກກິສະຖານ ກໍ່ຍັງມີຢູ່, ແຕ່ມັນກໍ່ໄດ້ຫລຸດລົງຈາກ 18,3% ຂອງ GDP ໃນປີ 1992 ມາເປັນ 3% ຂອງ GDP ຫຼັງຈາກປີ 1996. ອັດຕາເງິນເຟີ້ຂອງປະເທດໄດ້ຫລຸດລົງຈາກຈຸດສູງສຸດ ຢູ່ທີ່ 1.457% ໃນປີ 1994 ມາເປັນປະມານ 18% ໃນປີ 1998. ໜີ້ສິນຕ່າງປະເທດຂອງມັນໄດ້ຄ່ອຍໆຫລຸດລົງ ຈາກ 49% ຂອງ GDP ໃນປີ 2003 ມາເປັນ 17% ໃນປີ 2014, ຊຶ່ງມີຄວາມຕ້ອງການພຽງແຕ່ 5% ຂອງລາຍໄດ້ຈາກການສົ່ງອອກ ກໍ່ຈະສາມາດປົວແປງ ຫຼືກຸ້ມກັບໜີ້ສິນດັ່ງກ່າວໄດ້. ໃນປີ 1993, ທະນາຄານໂລກໄດ້ແຈ້ງເຕືອນວ່າ "ຢູ່ໃນໄລຍະກາງນີ້ ແມ່ນບໍ່ຈຳເປັນຕ້ອງຫຍຸ້ງຍາກລຳບາກນຳເລື່ອງປະຊາກອນ, ເຖິງແມ່ນວ່າການຊົມໃຊ້ຕໍ່ຫົວຄົນ ໃນປີ 1997 ໄດ້ຫລຸດລົງກໍ່ຕາມ, ແຕ່ມັນກໍ່ຍັງບໍ່ທັນຕ່ຳກວ່າ 30% ເທື່ອ" ຍ້ອນບັນດານະໂຍບາຍທີ່ບໍ່ເປັນໄປຕາມປະເພນີນິຍົມຄືກັນກັບປະເທດອື່ນ ຂອງ ອູສະເບັກກິສະຖານ.[b] ແຕ່ວ່າໃນປີ 2000 ມັນໄດ້ຖືກຮັບຮູ້ວ່າ ການດຳເນີນງານທາງດ້ານເສດຖະກິດ ຂອງ ອູສະເບັກກິສະຖານ ແມ່ນເປັນທີ່ສຸດຍອດ ແລະດີກວ່າບັນດາປະເທດທີ່ຂ້າມຜ່ານອື່ນໆທີ່ນຳໃຊ້ບັນດານະໂຍບາຍຕາມແບບປະເພນີນິຍົມ ຢູ່ໃນຂົງເຂດນີ້.[c] ໃນປີ 1998, IMF ໄດ້ອະທິບາຍວ່າ ການດຳເນີນງານຂອງ ອູສະເບັກກິສະຖານ ແມ່ນເປັນທີ່ "ເຂົ້າໃຈຍາກ" ເຖິງແມ່ນວ່າມັນເປັນ "ການປະຕິຮູບທີ່ລັ່ງເລໃຈ ແລະມີລັກສະນະທີ່ແປກປະຫຼາດ" ກໍ່ຕາມ.[d]

ໃນເບື້ອງຄວາມຕ້ອງການ, ການຫົດຕົວຂອງ ອູສະເບັກກິສະຖານ ໃນຫຼັງປີ 1992 ນັ້ນ ແມ່ນເປັນຍ້ອນການລົງທຶນຂອງພາກລັດທີ່ເພີ່ມຂຶ້ນ, ການໃຊ້ຈ່າຍຂອງລັດຖະບານມີການຫລຸດລົງໜ້ອຍໜຶ່ງ ແລະມີການຂະຫຍາຍການປົກປ້ອງທາງສັງຄົມ ແລະການຖ່າຍໂອນລາຍໄດ້. ແຕ່ມັນກໍ່ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອ ດ້ວຍການຄວບຄຸມການນຳເຂົ້າສິນຄ້າຟູມເຟືອຍ ຊຶ່ງເປັນການຂະຫຍາຍການບັງຄັບໃຫ້ຊົນຊັ້ນກາງ ໃຊ້ຈ່າຍຊື້ສິນຄ້າທີ່ຜະລິດຢູ່ພາຍໃນຫຼາຍຂຶ້ນ.

ໃນເບື້ອງການສະໜອງ, ອູສະເບັກກິສະຖານ ໄດ້ຊຸກຍູ້ສົ່ງເສີມການເຕີບໂຕຜ່ານນະໂຍບາຍອຸດສາຫະກຳ ດ້ວຍການໃຫ້ສິນເຊື່ອດອກເບ້ຍຕໍ່າຈາກທະນາຄານຂອງລັດ, ສະໜັບສະໜູນການເຂົ້າເຖິງການແລກປ່ຽນເງິນຕາຕ່າງປະເທດສຳລັບການນຳເຂົ້າວັດຖຸດິບທາງດ້ານອຸດສາຫະກຳ ແລະສິນຄ້າທຶນ; ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອໂດຍນະໂຍບາຍການກະສິກຳ ກ່ຽວກັບການຈັດຊື້-ຈັດຈ້າງຂອງພາກລັດ, ມີການຄ້ຳປະກັນດ້ານລາຄາ ແລະການຖົມຊຸມດ້ານປັດໄຈນຳເຂົ້າສູ່ການຜະລິດ. ພ້ອມກັນນັ້ນ, ກໍ່ຍັງໄດ້ຮັບການຊ່ວຍເຫຼືອໃນການເຮັດໃຫ້ອັດຕາແລກປ່ຽນອ່ອນຄ່າ ດ້ວຍການສະສົມເງິນຕາຕ່າງປະເທດຜ່ານການຊຸກຍູ້ສົ່ງເສີມການສົ່ງອອກ.

ຜົນສຳເລັດທີ່ບໍ່ອາດໂຕ້ແຍ່ງໄດ້ຂອງ ອູສະເບັກກິສະຖານ ຢູ່ໃນຊ່ວງໄລຍະເວລາຂອງການ (ປ່ຽນແປງ) ຂ້າມຜ່ານນັ້ນ ແມ່ນການບັນລຸໄດ້ດູນງົບປະມານໂດຍບໍ່ກະທົບຕໍ່ຜູ້ທີ່ທຸກຍາກ ຫຼືການໃຊ້ຈ່າຍຂອງພາກລັດຕໍ່ກັບເລື່ອງຄວາມທຸກຍາກຫຼາຍເກີນໄປ ຊຶ່ງເປັນທີ່ຮູ້ຈັກວ່າ ຢູ່ທີ່ຫຼາຍກວ່າ 22% ຂອງ GDP ໃນປີ 1995.[e] ການໃຊ້ຈ່າຍພາກລັດຕໍ່ກັບການປົກປ້ອງສັງຄົມຂອງປະເທດນີ້ ແມ່ນຢູ່ທີ່ 11,16% ຂອງ GDP ໃນປີ 2010 ຊຶ່ງສົມທຽບກັບຂອງ ປະເທດບອດສະວານາ ແມ່ນຢູ່ທີ່ 6,59% ຂອງ GDP ໃນປີດຽວກັນນີ້. ມັນມີຂອບເຂດການປົກຄຸມຂອງລະບຽບກົດໝາຍທີ່ກວ້າງຂວາງ ຢູ່ໃນທັງໝົດແປດຂົງເຂດຂອງການປົກປ້ອງທາງສັງຄົມ ຊຶ່ງກົງກັນຂ້າມກັບ

ປະເທດບອດສະວານາ ທີ່ມີລະບຽບກົດໝາຍກວມເອົາພຽງແຕ່ຈຳກັດຢູ່ໃນສີ່ຂົງເຂດເທົ່ານັ້ນ.

ໝາຍເຫດ:

a. http://www.worldbank.org/en/country/botswana/overview (Last Updated: 12 April, 2016).

b. ທະນາຄານໂລກ (1993a, ໜ້າ. xx).

c. Alam ແລະ Banerji (2000).

d. Zettelmeyer (1998).

e. Cornia (2004).

## ແຜນປະຕິບັດງານການພັດທະນາມະນຸດ ແລະການຫລຸດພົ້ນອອກຈາກ LDC ຢ່າງລາບລື່ນ

ໃນສາມມາດຖານຂອງການຫລຸດພົ້ນອອກຈາກ LDC ນັ້ນ, ເຫັນວ່າ ສປປ ລາວ ແມ່ນຍັງຂາດດ້ານຄວາມບອບບາງທາງດ້ານເສດຖະກິດຫຼາຍກວ່າໝູ່ ແລະຕາມມາດ້ວຍຊັບສິນມະນຸດ. ການພັດທະນາມະນຸດ ແມ່ນມີບົດບາດສຳຄັນຫຼາຍຕໍ່ກັບການແກ້ໄຂທັງສອງຢ່າງທີ່ກ່າວມາຂ້າງເທິງນີ້. ໃນຂະນະທີ່ບັນດາອົງປະກອບຂອງການພັດທະນາມະນຸດ ທັບຊ້ອນກັນກັບບັນດາຕົວຊີ້ບອກຂອງຊັບສິນມະນຸດ; ສະນັ້ນ, ສປປ ລາວ ຈຳເປັນຈະຕ້ອງໄດ້ພັດທະນາທຶນມະນຸດ ເພື່ອເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ເພື່ອຫລຸດຜ່ອນຄວາມບອບບາງທາງເສດຖະກິດ. ແຜນປະຕິບັດງານຂ້າງລຸ່ມນີ້ ແມ່ນຖືກຖອດດຶງອອກມາຈາກບັນດາຜົນຕາມມາຂອງນະໂຍບາຍ ທີ່ໄດ້ຖືກກຳນົດຢູ່ໃນແຕ່ລະພາກດັ່ງທີ່ໄດ້ກ່າວມາແລ້ວນັ້ນ, ຊຶ່ງພວກມັນກ່ຽວພັນກັບການສົ່ງເສີມການພັດທະນາມະນຸດ, ຊັບສິນມະນຸດ ແລະຄວາມຫຼາກຫຼາຍທາງເສດຖະກິດ ສຳລັບການຫລຸດພົ້ນອອກຈາກສະຖານະພາບ LDC ຂອງ ສປປ ລາວ ໄດ້ຢ່າງລາບລື່ນ.

### ການຍົກລະດັບຊັບສິນມະນຸດ ດ້ວຍການນຳໃຊ້ການປັນຜົນດ້ານປະຊາກອນ

<u>ການພັດທະນາເດັກກ່ອນໄວຮຽນ</u>:

- ຂະຫຍາຍ ແລະເພີ່ມທະວີການພັດທະນາເດັກກ່ອນໄວຮຽນ ແລະການສຶກສາ ເພື່ອຊ່ວຍພັດທະນາສີມື, ພື້ນຖານຄວາມຮູ້ ແລະພຶດຕິກຳ ໃນການກຽມພ້ອມເຂົ້າຮຽນ

- ເພີ່ມຄວາມພະຍາຍາມໃນການຫລຸດຜ່ອນການຂາດສານອາຫານຢ່າງສະໝໍ່າສະເໝີ ເນື່ອງຈາກເລື່ອງນີ້ມັນເປັນການຄຸກຄາມການພັດທະນາພື້ນຖານຄວາມຮູ້;

- ຮັບປະກັນໃຫ້ເດັກນ້ອຍໝົດທຸກຄົນທີ່ຈົບຊັ້ນ ປ2 ສາມາດອ່ານໄດ້, ເຮັດໃຫ້ການອ່ານເປັນການຫຼິ້ງໄຫຼ ໄຝ່ຝັນ (ເປັນຄວາມມັກຮັກ) ແຫ່ງຊາດ ເພື່ອເຮັດໃຫ້ ສປປ ລາວ ສາມາດສ້າງສີມື ແລະກຳລັງແຮງງານທີ່ມີປະສິດທິພາບ.

<u>ຊ່ອງວ່າງດ້ານສີມື ແລະຄຸນນະພາບຂອງການສຶກສາ</u>:

- ພັດທະນານະໂຍບາຍທີ່ກວມເອົາກິດຈະກຳຕ່າງໆກ່ຽວກັບກັບຊາວໜຸ່ມ ເພື່ອເຮັດໃຫ້ທ່າແຮງບົ່ມຊ້ອນຢ່າງເຕັມສ່ວນຂອງຊາວໜຸ່ມ ແລະບັນດາກາລະໂອກາດດ້ານປະຊາກອນປະກົດຜົນເປັນຈິງ;

- ແກ້ໄຂບັນຫາການຈັບຄູ່ທີ່ບໍ່ເໝາະສົມໃນປັດຈຸບັນນີ້ ລະຫວ່າງຄວາມຕ້ອງການຂອງຕະຫຼາດແຮງງານ ແລະການສຶກສາ ກໍ່ຄືສີມືຂອງຄົນໜຸ່ມ;

- ຍົກລະດັບການສຶກສາ ແລະສີມືຂອງປະຊາກອນໜຸ່ມ ເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການແຮງງານທີ່ມີສີມືໃນລະດັບກາງ ແລະສູງ ສຳລັບການເຂົ້າຮ່ວມໃນ AEC;

- ຖືເປັນບົດບາດຍຸດທະສາດຫຼາຍຂຶ້ນ ກ່ຽວກັບການພັດທະນາສີມືວິຊາຊີບ ດ້ວຍການພັດທະນານະໂຍບາຍ ແລະຕັ້ງມາດຕະຖານເອົາໄວ້;

- ຍົກລະດັບ ແລະປັບປຸງຄຸນນະພາບຂອງຄູອາຈານ, ບັນດາແຜນງານຝຶກອົບຮົມຄູອາຈານ ແລະການແຈກຢາຍຄູອາຈານ;

- ລົງທຶນເຂົ້າໃສ່ອຸປະກອນການຝຶກອົບຮົມ ແລະຄູອາຈານ ທັງດຳເນີນການປະເມີນຜົນການຝຶກອົບຮົມຢ່າງ

ເປັນປົກກະຕິ.

<u>ສຸຂະພາບ ແລະໂພສະນາການ</u>:

- ເພີ່ມຄວາມເຂັ້ມແຂງໃຫ້ແກ່ບັນດາໂຄງການກອງທຶນແຫ່ງຄວາມທ່ຽງທຳ (ສະເໝີພາບ) ດ້ານສຸຂະພາບ (HEF) ແລະການເກີດລູກຂອງແມ່, ເດັກເກີດໃໝ່ ແລະການດູແລສຸຂະພາບຂອງເດັກແບບບໍ່ໄດ້ຈ່າຍ ທີ່ມີຢູ່ໃນປັດຈຸບັນ (“free MNCH”);

- ເພີ່ມຄວາມພະຍາຍາມເພື່ອບັນລຸບັນດາເປົ້າໝາຍ ຂອງການປະຕິຮູບຂະແໜງສາທາລະນາສຸກທີ່ກຳລັງດຳເນີນການຢູ່ໃນປັດຈຸບັນ, ໂດຍສະເພາະແມ່ນກ່ຽວກັບການພັດທະນາຊັບພະຍາກອນມະນຸດ, ການລົງທຶນໃສ່ສຸຂະພາບ ແລະການຄຸ້ມຄອງລະບົບສາທາລະນາສຸກ;

- ວາງພື້ນຖານສຳລັບແຜນງານແຫ່ງຊາດດ້ານສາທາລະນາສຸກ ແລະກ້າວໄປສູ່ສາທາລະນາສຸກເພື່ອທຸກຄົນຫຼາຍຂຶ້ນ.

<u>ຄວາມທຸກຍາກ ແລະຄວາມບອບບາງທາງດ້ານເສດຖະກິດ:</u>

- ພັດທະນາພື້ນຖານການປົກປ້ອງທາງສັງຄົມທົ່ວໄປໃຫ້ມີຄວາມຍືນຍົງ ເພື່ອປົກປ້ອງບັນດາຄົວເຮືອນບໍ່ໃຫ້ຕົກເຂົ້າສູ່ຄວາມທຸກຍາກຄືນໃໝ່ ແລະຄຸ້ມຄອງປ້ອງກັນຄວາມຄືບໜ້າທີ່ເຮັດໄດ້ມາແລ້ວ;

- ພິຈາລະນາຢ່າງຮີບດ່ວນ ຕໍ່ບັນດາຂໍ້ສະເໜີແນະຕ່າງໆ ຈາກການປະເມີນຜົນການສົນທະນາລະດັບຊາດກ່ຽວກັບການປົກປ້ອງທາງສັງຄົມ (ABND) ທີ່ດຳເນີນການພາຍໃຕ້ການຄວບຄຸມດູແລຂອງຄະນະກຳມະການຮ່າງຍຸດທະສາດການປົກປ້ອງທາງສັງຄົມຂອງລັດຖະບານ;

- ພະຍາຍາມແກ້ໄຂບັນຫາການສູນເສຍຕ່າງໆທັງຫຼາຍນັ້ນ ດ້ວຍການປັບປຸງແງ່ຕ່າງໆກ່ຽວກັບສະຫວັດດີການຂອງມະນຸດ ທີ່ມີຜົນກະທົບຕໍ່ຄວາມທຸກຍາກມາເປັນໄລຍະເວລາດົນນານ;

- ລົງທຶນໃສ່ການເຊື່ອມຕໍ່ຊ່ອງວ່າງທີ່ເກີດຂຶ້ນໃນການພັດທະນາມະນຸດ ເຊັ່ນວ່າ: ການເຂົ້າໂຮງຮຽນ ແລະສຸຂະພາບ, ແມ່ນແຕ່ໃນເວລາທີ່ຄວາມທຸກຍາກດ້ານເງິນຕາໄດ້ຫລຸດລົງກໍ່ຕາມ.

## ການເຮັດໃຫ້ເສດຖະກິດມີຄວາມຫຼາກຫຼາຍ ເພື່ອຫລຸດຜ່ອນຄວາມບອບບາງຂອງມັນ

<u>ຜະລິດຕະພາບຂອງການກະສິກຳ</u>:

- ເພີ່ມການໃຊ້ຈ່າຍພາກລັດເຂົ້າໃນການຊົນລະປະທານ, ເສັ້ນທາງຊົນນະບົດ, ການຄົ້ນຄວ້າດ້ານການກະສິກຳ, ການສົ່ງເສີມການບໍລິການ ແລະສິນຄ້າສາທາລະນະອື່ນໆ;

- ສົ່ງເສີມການຫັນເປັນການກະສິກຳຜ່ານການຂະຫຍາຍຊົນລະປະທານ, ການຂະຫຍາຍບັນດາເຕັກໂນໂລຢີແນວພັນຝຸ່ນທີ່ທັນສະໄໝ, ການນຳເອົາບັນດາລະບົບຟາມມາໃຊ້ ແລະອື່ນໆ;

- ພິຈາລະນາວິທີການໃໝ່ໃນການຂະຫຍາຍຊົນລະປະທານ, ຊຶ່ງການຊົນລະປະທານແມ່ນບໍ່ຄວນທີ່ຈະເປັນເຂື່ອນຂະໜາດໃຫຍ່ພຽງຢ່າງດຽວ; ວິທີການປະສົມປະສານແບບຊົນລະປະທານຂະໜາດນ້ອຍ, ຂະໜາດກາງ ແລະຂະໜາດໃຫຍ່ ແມ່ນມີຄວາມຈຳເປັນຫຼາຍ, ໂດຍສະເພາະແມ່ນປະເທດລາວ;

- ນອກຈາກນັ້ນ, ຕ້ອງຂະຫຍາຍການບໍລິການຕ່າງໆ ເພື່ອເຮັດໃຫ້ຊາວກະສິກອນເຂົ້າເຖິງການບໍລິການດ້ານການຕະຫຼາດ ລວມທັງຂໍ້ມູນຂ່າວສານດ້ານຕະຫຼາດ, ການຫຸ້ມຫໍ່ ແລະການຢັ້ງຢືນຕ່າງໆ. ມັນຈຳເປັນຈະຕ້ອງໄດ້ມີການກຳນົດຢ່າງຈະແຈ້ງ ກ່ຽວກັບບົດບາດ ແລະຄວາມຮັບຜິດຊອບ ລະຫວ່າງ ອົງການຕ່າງໆທີ່ສົ່ງເສີມດ້ານການກະສິກຳ ແລະບັນດາອົງການຕ່າງໆ ໃນການສະໜອງການບໍລິການຕ່າງໆເຫຼົ່ານີ້;

- ຕ້ອງມີການພິຈາລະນາການສຳປະທານທີ່ດິນກະສິກຳທີ່ມີຂອບເຂດກວ້າງຂວາງ ຢ່າງລະມັດລະວັງ ແລະຮອບຄອບ ເນື່ອງຈາກເຂົາເຈົ້າມີການຈ້າງງານໜ້ອຍ ແລະເບິ່ງຄືວ່າບໍ່ມີການສົ່ງເສີມການເຄື່ອນຍ້າຍແຮງງານກະສິກຳ ໄປສູ່ວຽກທີ່ບໍ່ແມ່ນກະສິກຳ ແລະບໍ່ກໍ່ໃຫ້ເກີດຜົນກະທົບສ່ວນເຫຼືອຕໍ່ຜູ້ຖືຄອງທີ່ດິນຂະໜາດນ້ອຍຫຼາຍປານໃດ, ເປັນຕົ້ນແມ່ນ ຜ່ານການຖ່າຍໂອນເຕັກໂນໂລຢີ;

- ຊ່ວຍເຫຼືອຊາວນາລາວ ໃຫ້ຄ່ອຍໆມີຄວາມຫຼາກຫຼາຍຂຶ້ນ ສຳລັບການຜະລິດເຂົ້າ ແລະພືດອື່ນໆທີ່ມີມູນຄ່າສູງ ເຊັ່ນ: ກາເຟ ແລະບັນດາຜະລິດຕະພັນພືດປອດສານພິດອື່ນໆ;

- ດຳເນີນມາດຕະການຕ່າງໆ ເຊັ່ນ: ການອອກໃບຕາດິນ ເພື່ອເປັນເອກະສານຢັ້ງຢືນສິດນຳໃຊ້ທີ່ດິນໃຫ້ແກ່ຊາວກະສິກອນ, ການປັບປຸງການເຂົ້າເຖິງການບໍລິການທາງການເງິນຂອງຊາວກະສິກອນ (ການຝາກປະຢັດ, ສິນເຊື່ອ ແລະການປະກັນໄພ) ແລະເຮັດໃຫ້ມີການເຊື່ອມໂຍງກັບຕະຫຼາດທີ່ດີຂຶ້ນ ຊຶ່ງຈະເປັນການປະກອບສ່ວນເຮັດໃຫ້ລາຍຮັບຂອງການກະສິກຳສູງຂຶ້ນ ແລະມີຄວາມຍືນຍົງ.

<u>ການພັດທະນາຂະແໜງການອຸດສາຫະກຳການຜະລິດ</u>:

- ປ້ອງກັນຄວາມກົດດັນຄ່າແຮງງານທີ່ເພີ່ມຂຶ້ນ ແລະອັດຕາແລກປ່ຽນທີ່ມາຈາກການໄຫຼເຂົ້າຂອງ FDI ເປັນຈຳນວນຫຼາຍ ຢູ່ໃນຂະແໜງຊັບພະຍາກອນທຳມະຊາດ, ຮັບປະກັນໃຫ້ມີການຂຶ້ນເງິນຄ່າແຮງງານຢ່າງເໝາະສົມກັບຜະລິດຕະພາບທີ່ໄດ້ຮັບ ເພື່ອປ້ອງກັນການເພີ່ມຂຶ້ນຂອງຕົ້ນທຶນແຮງງານຕໍ່ໜ່ວຍ ແລະເຮັດໃຫ້ການມີດ້ານກຳໄລຫລຸດລົງ;

- ສ້າງຄັງສຳຮອງເງິນຕາຕ່າງປະເທດ ຈາກໂຊກລາບທີ່ໄດ້ມາຈາກຂະແໜງການຊັບພະຍາກອນທຳມະຊາດໂດຍບໍ່ຄາດຝັນ ເພື່ອຮັກສາອັດຕາແລກປ່ຽນທີ່ອ່ອນຄ່າ ເພື່ອສະໜັບສະໜູນສົ່ງເສີມການສົ່ງອອກຂອງຂະແໜງອຸດສາຫະກຳການຜະລິດ;

- ປັບປຸງການເຂົ້າເຖິງການເງິນ ແລະການບໍລິການທີ່ທັນສະໄໝອື່ນໆ ເຊັ່ນ: ໄຟຟ້າ, ໂດຍສະເພາະແມ່ນສຳລັບ SMEs;

- ເພີ່ມທະວີການເຊື່ອມໂຍງເບື້ອງຫຼັງ ແລະເບື້ອງໜ້າ ດ້ວຍການຊຸກຍູ້ສົ່ງເສີມບໍລິສັດອຸດສາຫະກຳການຜະລິດທີ່ໃຫຍ່, ໂດຍສະເພາະແມ່ນວິສາຫະກິດທີ່ເປັນການລົງທຶນຂອງຕ່າງປະເທດ ໃຫ້ມີການຈັດຊື້-ຈັດຈ້າງຢູ່ພາຍໃນ ເປັນຕົ້ນແມ່ນຈາກ SMEs.

<u>ການຍົກລະດັບຂະແໜງການບໍລິການຕ່າງໆ</u>:

- ປັບປຸງຄຸນນະພາບ ແລະຂະໜາດຂອງການບໍລິການຕ່າງໆ ເພື່ອໃຫ້ບັນລຸໄດ້ຜົນປະໂຫຍດທາງເສດຖະກິດຢ່າງກວ້າງຂວາງ ກ່ຽວກັບຜະລິດຕະພາບ ແລະຄວາມສາມາດໃນການແຂ່ງຂັນ;

- ລົງທຶນໃສ່ໂຄງລ່າງພື້ນຖານທີ່ເປັນວັດຖຸ ແລະບໍ່ແມ່ນວັດຖຸ (ສະຖາບັນ), ໂດຍສະເພາະແມ່ນການຂົນສົ່ງ ແລະພະລັງງານ ລວມທັງໄຟຟ້າ, ນ້ຳ ແລະການເຊື່ອມຕໍ່ທາງອິນເຕີເນັດ;

- ເຮັດໃຫ້ໄດ້ບັນດາພັນທະສັນຍາກ່ຽວກັບການຫັນເປັນເສລີຂອງຂົງເຂດ, ຕົວຢ່າງ: ຂໍ້ຕົກລົງຂອບຂ່າຍວຽກ ASEAN ກ່ຽວກັບການບໍລິການ (AFAS) ສາມາດເຂົ້າກັນກັບການຮ່ວມມືຫຼາຍຝ່າຍອື່ນໆ (ກັບ GATS/WTO);

- ເຮັດໃຫ້ການເປີດກວ້າງມີຄວາມສົມບູນດ້ວຍການປັບປຸງລະບຽບກົດໝາຍໃຫ້ດີຂຶ້ນ ເພື່ອຊ່ວຍໃຫ້ໄດ້ຮັບປະໂຫຍດຢ່າງແທ້ຈິງ;

- ສະໜັບສະໜູນການຈັດຕັ້ງປະຕິບັດການປະຕິຮູບຂະແໜງການບໍລິການ ດ້ວຍການເພີ່ມອຳນາດໃຫ້ແກ່ບັນດາອົງການທີ່ກ່ຽວຂ້ອງຕ່າງໆ ເພື່ອໃຫ້ມີຊັບພະຍາກອນທາງການເງິນ ແລະບຸກຄະລາກອນທີ່ມີສີມື ຢ່າງ

ພຽງພໍ.

<u>ການຄວບຄຸມບໍລິຫານ</u>:

1. ເຮັດໃຫ້ທຸລະກິດມີຄວາມສະດວກວ່ອງໄວ, ມີປະສິດທິພາບຫຼາຍຂຶ້ນ ແລະມີຕົ້ນທຶນການຜະລິດທີ່ສົມເຫດສົມຜົນຕາມລະບຽບກົດໝາຍຂອງລັດ, ຮ່ວມກັບລັດຖະບານດຳເນີນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແລະເປັນມິດກັບທຸລະກິດຫຼາຍຂຶ້ນ;

2. ປັບປຸງຄວາມໂປ່ງໃສໃນການສະໜອງການບໍລິການຂອງຂະແໜງສາທາລະນະ ໃຫ້ແກ່ທຸລະກິດ ໂດຍຜ່ານບັນດາມາດຕະການຕ່າງໆ ເຊັ່ນ: ການຈັດພິມເຜີຍແຜ່ບັນດາລາຍການຄ່າທຳນຽມ, ການອະນຸຍາດ ແລະໃບອະນຸຍາດຕ່າງໆ ທີ່ລັດຖະບານມີຄວາມຮຽກຮ້ອງໃຫ້ມີ ເພື່ອເຜີຍແຜ່ໃຫ້ແກ່ພາກທຸລະກິດ;

3. ສ້າງສະໜາມການຫຼິ້ນທີ່ສາມາດຄາດການ ຫຼືພະຍາກອນໄດ້ ໃຫ້ແກ່ຂະແໜງການເອກະຊົນ ດ້ວຍການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະຂໍ້ບັງຄັບຕ່າງໆທີ່ເປີດເຜີຍ ແລະໝັ້ນຄົງ ລວມທັງການຫລຸດຜ່ອນບັນດາລະບຽບການ ແລະຂັ້ນຕອນຕ່າງໆທີ່ບໍ່ຈຳເປັນລົງ.

# ເອກະສານອ້າງອີງ


ADB (2013), ດັດຊະນີການປົກປ້ອງທາງສັງຄົມ: ຜົນຂອງການປະເມີນສຳລັບອາຊີ ແລະປາຊີຟິກ. ມານີລາ: ທະນາຄານພັດທະນາອາຊີ.

ADB (2015), ສປປ ລາວ: ການພັດທະນາບ້ານສາທາລະນາສຸກຕົວຢ່າງຢູ່ໃນພາກເໜືອຂອງ ສປປ ລາວ (ເອກະສານໂຄງການ, ທຶນຊ່ວຍເຫຼືອລ້າ 9137-LAO).

Akamatsu, Kaname (1961),"ທິດສະດີກ່ຽວກັບການເຕີບໂຕທີ່ບໍ່ສົມດູນຢູ່ໃນເສດຖະກິດໂລກ". Welt-wirtschaftliches Archiv, No.86, pp.196-217.

Akamatsu, Kaname (1962),"ຮູບແບບທາງປະຫວັດສາດຂອງການເຕີບໂຕທາງເສດຖະກິດຢູ່ໃນບັນດາປະເທດກຳລັງພັດທະນາ". ບັນດາເຂດເສດຖະກິດທີ່ກຳລັງພັດທະນາ, ເລື່ອງ No.1, ໜ້າ 3-25.

Akyeampong, Sabates R, K., J. Westbrook ແລະ F. Hunt (2010), "ການອອກໂຮງຮຽນ: ຮູບແບບ, ສາເຫດ, ການປ່ຽນແປງ ແລະບັນດານະໂຍບາຍ", ເອກະສານປະຫວັດຄວາມເປັນມາທີ່ໄດ້ກະກຽມໄວ້ກ່ຽວກັບການສຶກສາ ສຳລັບບົດລາຍງານການຕິດຕາມໃນທົ່ວໂລກ 2011, http://unesdoc. unesco.org/images/0019/001907/190771e.pdf.

Alam, Asad ແລະ Arup Banerji (2000), "ອູສະເບັກກິສະຕານ ແລະກາສັກສະຖານ: ເລື່ອງລາວກ່ຽວກັບສອງເສັ້ນທາງຂອງການຂ້າມຜ່ານ" ເອກະສານວຽກງານການຄົ້ນຄວ້ານະໂຍບາຍຂອງທະນາຄານໂລກ, 2472.

Alonso, Jos Antonio, Ana Luiza Cortez ແລະ Stephan Klasen (2014), "ບັນດາປະເທດກຳລັງພັດທະນາ ແລະກຸ່ມປະເທດອື່ນໆ: ບັນດາວິທີການຕ່າງໆໃນປັດຈຸບັນນີ້ ແມ່ນມັນມີຄວາມສຳຄັນຄືແນວໃດ ຕໍ່ກັບການກຳນົດບັນດາປະເທດຢູ່ໃນການພັດທະນາຂອງໂລກທີ່ມີຫຼາຍແບບທີ່ແຕກຕ່າງກັນຫຼາຍ" ເອກະສານປະຫວັດຄວາມເປັນມາຂອງ CDP No. 21 ST/ESA/2014/CDP/21, ນິວຢັອກ: UN, http://www.un.org/en/development/desa/ policy/ cdp/cdp_background_papers/bp2014_21.pdf.

Atkinson, AB (2015), ຄວາມບໍ່ສະເໝີພາບແມ່ນຫຍັງທີ່ຈະສາມາດເຮັດກັບມັນໄດ້? Cambridge (Massachusetts): ສິ່ງພິມຂອງມະຫາວິທະຍາໄລ Harvard.

Barker, R. ແລະ F. Molle (2004), ການປະເມີນຜົນເລື່ອງຊົນລະປະທານຢູ່ໃນອາຊີໃຕ້ ແລະອາຊີຕາເວັນອອກສ່ຽງໃຕ້, Colombo: ສະຖາບັນການຄຸ້ມຄອງນ້ຳສາກົນ.

Baunsgaard, Thomas ແລະ Michael Keen (2005),"ລາຍຮັບຈາກພາສີ ແລະການຫັນເປັນເສລີທາງການຄ້າ", ເອກະສານວຽກງານຂອງ IMF No. 05/112, https://www.imf.org/external/pubs/ft/wp/2005/wp05112.pdf.

Becker Gary S (1962),"ການລົງທຶນເຂົ້າໃສ່ທຶນມະນຸດ: ການວິໄຈທາງທິດສະດີ". ວາລະສານກ່ຽວກັບເສດຖະກິດການເມືອງ, 70 (5), ໜ້າ 9–49.

Becker Gary S (1993), ທຶນມະນຸດ: A ການວິໄຈທາງທິດສະດີ ແລະການຖືເອົາປະສົບປະການເປັນຫຼັກ, ດ້ວຍການອ້າງອີງໃສ່ການສຶກສາເປັນຫຼັກ, Chicago: ສິ່ງພິມຂອງມະຫາວິທະຍາໄລ Chicago.

Blanchard, Olivier (2012), ນະໂຍບາຍເງິນຕາຢູ່ໃນຄື້ນຂອງວິກິດການ. ຢູ່ໃນ: Blanchard O,

Romer D, Spence M, ແລະອື່ນໆ. (eds) ຢູ່ໃນຄື້ນຂອງວິກິດການ: ບັນດາຜູ້ນຳທາງເສດຖະກິດໄດ້ທົບທວນນະໂຍບາຍເສດຖະກິດຄືນໃໝ່. Cambridge, MA: ສິ່ງພິມຂອງ MI, ໜ້າ 8–13.

Boudreaux, Karol (2011),"ການຫັນເປັນເສລີທາງດ້ານເສດຖະກິດ ຢູ່ໃນຂະແໜງກາເຟຂອງ ປະເທດຣໍວັນດາ: ການຊີງກາເຟທີ່ດີເພື່ອຄວາມສຳເລັດ", ຢູ່ Punam Chuhan-Pole, Manka Angwafo (eds). ແມ່ນແລ້ວ, ອາຟຼິກກາສາມາດ: ປະສົບຜົນສຳເລັດເປັນປະຫວັດການ ຈາກພະລັງທີ່ເຮັດໃຫ້ມີການປ່ຽນແປງຢູ່ໃນທະວີບ. ວໍຊິງຕັນ DC: ກຸ່ມທະນາຄານໂລກ.

Chai, Jingqing ແລະRishi Goyal (2008), "ການຜ່ອນຜັນດ້ານພາສີ ແລະການລົງທຶນໂດຍກົງຂອງຕ່າງປະເທດ ຢູ່ໃນສະຫະພັນເງິນຕາຂອງພາກຕາເວັນອອກຄາຣິບບຽນ", ເອກະສານວຽກງານຂອງ IMF (WP/08/257), https://www.imf.org/external/pubs/ft/wp/2008/wp08257.pdf.

Chapman KR (n.d.), ເລື່ອງ ແລະການແຊກແຊງຕ່າງໆ (Coffee), FAO ເອກະສານຂອງບໍລິສັດ (ຄວາມຮັບຜິດຊອບ), http://www.fao.org/docrep/003/x6938e/x6938e07.htm#bm7.2.

Chenery, Hollis B. (1960),"ບັນດາຮູບແບບຂອງການເຕີບໂຕທາງດ້ານອຸດສາຫະກຳ", ການທົບທວນເສດຖະກິດຂອງອາເມລິກາ, 1960, 50, ໜ້າ 624–653.

Chenery, Hollis B. and T.N. Srinivasan (eds) (1988), ປຶ້ມຄູ່ມືກ່ຽວກັບເສດຖະສາດການພັດທະນາ, ເຫຼັ້ມທີ 1, Amsterdam ແລະ New York: ພາກເໜືອຂອງໂຮນລັງ, ພາກທີ 7, ໜ້າ 203–273.

Chowdhury, Anis ແລະ Iyanatul Islam (1993), ເຂດເສດຖະກິດອຸດສາຫະກຳໃໝ່ຂອງອາຊີຕາເວັນອອກ. ລອນດອນ: Routledge.

Christie, I., E. Fernandes, H. Messerli, ແລະL. Twining-Ward (2013), ການທ່ອງທ່ຽວຢູ່ອາຟຼິກກາ: ການຄວບຄຸມການທ່ອງທ່ຽວເພື່ອການເຕີບໂຕ ແລະປັບປຸງຊີວິດການເປັນຢູ່, ວໍຊິງຕັນ, DC: ທະນາຄານໂລກ.

Clark, Colin (1957), ບັນດາສະພາບເງື່ອນໄຂຂອງຄວາມກ້າວໜ້າທາງດ້ານເສດຖະກິດ, 3 ed., ລອນດອນ: Macmillan.

ຄະນະກຳມະການນະໂຍບາຍການພັດທະນາ (2015), ບົດລາຍງານການປະຊຸມຄັ້ງທີ 17 ຂອງຄະນະກຳມະການເສດຖະກິດ ແລະສັງຄົມ, ໜ້າເພີ່ມເຕີມ #13, ນິວຢ໋ອກ: ອົງການສະຫະປະຊາຊາດ.

Cornia, Giovanni Andrea (2004), 'ບັນດານະໂຍບາຍເສດຖະກິດມະຫາພາກ, ຄວາມບໍ່ສະເໝີພາບດ້ານລາຍໄດ້ ແລະຄວາມທຸກຍາກ: ອູສະເບັກກິສະຖານ, 1991-2002' http://www.networkideas.org/featart/mar2004/ uzbekistan_1991_2002.pdf.

Das S.B., J. Menon, R. Severino ແລະ O.L. Shrestha (Eds.) (2014), ປະຊາຄົມເສດຖະ ກິດ ASEAN, ມານີລາ: ທະນາຄານພັດທະນາອາຊີ ແລະສິງກະໂປ: ISEAS.

Dasgupta, Partha (1995), ການສືບສວນເຂົ້າໄປໃນສະຫວັດດີພາບ ແລະຄວາມທຸກຍາກຂາດເຂີນ, Oxford: ສິ່ງພິມຂອງມະຫາວິທະຍາໄລ Oxford.

Demirg -Kunt, Asli ແລະ Enrica Detragiache (1998), "ການຫັນເປັນເສລີທາງດ້ານການ

ເງິນ ແລະຄວາມອ່ອນແອທາງດ້ານການເງິນ". ເອກະສານວຽກງານຂອງກອງທຶນການເງິນສາກົນ, No. WP/98/83.

ດວງຄຳ ແລະ ແດນກາຍາພິຈິດ (n.d.),"ການຜະລິດຊາ ແລະກາເຟ ຢູ່ປາກຊ່ອງ, ພູພຽງບໍລະເວນ, ພາກໃຕ້ຂອງລາວ"http://unctad.org/meetings/en/Presentation/aldc2014_PaksongLaos.pdf;https:// www.teaguardian.com/quality-varieties/tea-varieties/laos-shengcha/9/.

Epprecht, Michael, Nicholas Minot, Reno Dewina, Peter Messerli ແລະ Andreas Heinimann (2008), ພູມີສາດກ່ຽວກັບຄວາມທຸກຍາກ ແລະຄວາມບໍ່ສະເໝີພາບ ຢູ່ໃນ ສປປ ລາວ. Berne, Switzerland: Swiss National Centre of Competence in Research (NCCR) North-South, Geographical Bernensia, International Food Policy Research Institute (IFPRI).

Falola A, B. I. Kayode ແລະ U.P. Omonlumhen (2012),"ຄວາມເຕັມໃຈທີ່ຈະຈ່າຍສຳລັບການບໍລິການສົ່ງເສີມກະສິກຳ ໂດຍຊາວກະສິກອນຜູ້ທີ່ລ້ຽງປາ ຢູ່ປະເທດໄນເຈີເຣຍ: ກໍລະນີສຶກສາຂອງລັດກາວາ, ປະເທດໄນເຈີເຣຍ", ວາລະສານການພັດທະນາແບບຍືນຍົງຢູ່ອາຟຼິກາ (ເຫຼັ້ມທີ 14, No.5).

Foster J, J Greer ແລະ E Thorbecke (1984), ປະເພດຂອງບັນດາມາດຕະການກ່ຽວກັບຄວາມທຸກຍາກທີ່ສາມາດສະຫຼາຍຕົວໄດ້, ເສດຖາມິຕິ 52 (3).

Furceri, Davide ແລະ Prakash Loungani (2013), "ແມ່ນໃຜເປັນຜູ້ອະນຸຍາດໃຫ້ຄ່າສຳປະສິດ Gini ອອກໄປ?",ການເງິນ ແລະການພັດທະນາ, ທັນວາ 2013, ເຫຼັ້ມທີ 50, No.4).

ລັດຖະບານ ແຫ່ງ ສປປ ລາວ (2009), ຍຸດທະສາດການໂພຊະນາການແຫ່ງຊາດ, 2011-2015, ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະການລົງທຶນ.

ລັດຖະບານ ແຫ່ງ ສປປ ລາວ (2010), ການສຳຫຼວດການໃຊ້ຈ່າຍ ແລະການຊົມໃຊ້ຂອງຄົວເຮືອນ (LECS-3) 2007-2008, ນະຄອນຫຼວງວຽງຈັນ: ສູນສະຖິຕິ, ກະຊວງແຜນການ ແລະການລົງທຶນ, ແລະກະຊວງສາທາລະນາສຸກ.

ລັດຖະບານ ແຫ່ງ ສປປ ລາວ (2012), ການສຳຫຼວດຕົວຊີ້ວັດທາງສັງຄົມຂອງລາວ 2011-2012, ນະຄອນ ຫຼວງວຽງຈັນ: ສູນສະຖິຕິ, ກະຊວງແຜນການ ແລະການລົງທຶນ.

ລັດຖະບານ ແຫ່ງ ສປປ ລາວ (2014), ການສຳຫຼວດການຊົມໃຊ້ ແລະການໃຊ້ຈ່າຍຂອງຄົວເຮືອນ ຂອງ ສປປ ລາວ (LECS-5) 2013-2014, ນະຄອນຫຼວງວຽງຈັນ: ສູນສະຖິຕິ, ກະຊວງແຜນການ ແລະການລົງທຶນ.

ລັດຖະບານ ແຫ່ງ ສປປ ລາວ (2014a), ຜົນການວິໄຈກ່ຽວກັບການສຳຫຼວດກະສິກຳ ອຂງ ສປປ ລາວ, 2010-2011 (LAC 2010-2011), ນະຄອນຫຼວງວຽງຈັນ: ສູນສະຖິຕິ, ກະຊວງແຜນການ ແລະການລົງທຶນ.

ລັດຖະບານ ແຫ່ງ ສປປ ລາວ (2015), ການພັດທະນາການເງິນ ແລະການປະເມີນຜົນການຊ່ວຍເຫຼືອ (DFAA), ການສຶກສາພາຍໃນປະເທດ ຂອງ ສປປ ລາວ: ບົດລາຍງານເບື້ອງຕົ້ນ, ກົມຮ່ວມມືສາກົນ/ກະຊວງແຜນການ ແລະການລົງທຶນ (ຮ່າງເອກະສານພາຍໃນ, ນະຄອນຫຼວງວຽງຈັນ).

ລັດຖະບານ ແຫ່ງ ສປປ ລາວ (n.d.), ການອອກແບບ ແລະການສຶກສາຄວາມເປັນໄປໄດ້ ຂອງແຜນງານກ່ຽວກັບການພັດທະນາແບບຍືນຍົງຢູ່ເຂດເນີນສູງພາກເໜືອ, ເອກະສານການເຮັດວຽກ ກ່ຽວກັບຕ່ອງໂສ້ມູນຄ່າ ແລະບັນດາອົງການຈັດຕັ້ງຂອງຜູ້ຜະລິດ, ກະຊວງກະສິກຳ ແລະປ່າໄມ້, ນະຄອນຫຼວງວຽງຈັນ.

ລັດຖະບານ ແຫ່ງ ສປປ ລາວ (2016), ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII 2016-2020, ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະການລົງທຶນ.

Goyle, S. (2013), ບັນດາແນວໂນ້ມຂອງການຫັນເປັນກົນຈັກ ຢູ່ໃນ ປະເທດອິນເດຍ, Mahindra

& Mahindra Ltd.

IMF (2011), "ການລະດົມລາຍຮັບຢູ່ໃນບັນດາປະເທດກຳລັງພັດທະນາ", ກົມການງົບປະມານ, https://www.imf. org/external/np/pp/eng/2011/030811.pdf (ໜ້າ 5).

IMF (2012),'ການຫັນເປັນເສລີ ແລະການຄຸ້ມຄອງການໄຫຼຂອງກະແສທຶນ: ທັດສະນະດ້ານສະຖາບັນ', ເດືອນທັນວາ (ໜ້າ 14).

IMF (2014), ບົດລາຍງານກ່ຽວກັບບຸກຄະລາກອນຂອງ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ສຳລັບປີ 2014, ພາກທີ IV ຂອງການສົນທະນາປຶກສາຫາລື ການວິໄຈກ່ຽວກັບຄວາມຍືນຍົງຂອງໜີ້ສິນ, ວໍຊິງຕັນ https://www.imf.org/external/pubs/ft/scr/2015/cr1545.pdf.

ຄະນະກຳມະການພັດທະນາຂອງ IMF-World Bank (2006),'ນະໂຍບາຍງົບປະມານສຳລັບການເຕີບໂຕ ແລະການພັດທະນາ: ບົດລາຍງານຢູ່ໃນຊ່ວງລະຫວ່າງກາງ', ເມສາ 2006 (ໜ້າ 6).

Islam, Rizwanul ແລະ Iyanatul Islam (2015), ການຈ້າງງານ ແລະການພັດທະນາເພື່ອທຸກຄົນ. ລອນດອນ: Routledge.

Kaufmann, Daniel (2015),"ການສະທ້ອນທີ່ອີງໃສ່ຫຼັກຖານ ກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະການສໍ້ຫຼາດບັງຫຼວງ ຢູ່ໃນອາຟຼິກາ", ຢູ່ໃນ E. Zedillo, O. Cattaneo ແລະH. Wheeler (eds): ອາຟຼິກາຢູ່ໃນຈຸດແຍກຂອງເສັ້ນທາງ: ຈະເອົາອອກ ຫຼືຈະຜິດຫວັງອີກຄັ້ງໜຶ່ງ? New Haven, CT: Yale Center for the Study of Globalization, ໜ້າ 239–260.

Kawamara, Hiroshi (2014). "ຊີວິດການເປັນຢູ່ຂອງ 24 ປະເທດດ້ອຍພັດທະນາ ທີ່ກຳລັງຈະຫຼຸດພົ້ນອອກຈາກມາດຖານ LDC ໃນປີ 2020: ຈະສາມາດບັນລຸເປົ້າໝາຍໄດ້ບໍ?" ເອກະສານວຽກງານຂອງ CDP, No. 20 ST/ESA/2014/CDP/20, DESA UN ນິວຢອກ.

Kumar, A.K. Shiva ແລະ Fukuda-Parr, Sakiko (eds) (2004), ການອ່ານກ່ຽວກັບການພັດທະນາມະນຸດ: ບັນດາແນວຄວາມຄິດ, ມາດຕະການ ແລະນະໂຍບາຍຕ່າງໆ ສຳລັບຕົວຢ່າງຂອງການພັດທະນາ. ນິວຢອກ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Oxford.

Kuznets, Simon (1966), ການເຕີບໂຕທາງເສດຖະກິດທີ່ທັນສະໄໝ, New Haven: ເອກະສານສິ່ງພິມຂອງມະຫາວິທະຍາໄລ Yale, 1966.

Limaye, S.D. (n.d.), "ການເກັບກ່ຽວນ້ຳຝົນ ແລະການສາກໝໍ້ໄຟ ຜ່ານຖັງທີ່ຮໍ່ວຊຶມຢູ່ໃນເຂດພື້ນທີ່ໆເປັນຫີນພູເຂົາໄຟເຄິ່ງແຫ້ງ ຢູ່ທາງພາກຕາເວັນຕົກຂອງ ປະເທດອິນເດຍ", http://en.cgs.gov.cn/Achievement/The34thCongress/Ecology/18325.htm.

Lindsay, B. Lowell ແລະ Allan Findlay (2001), "ການເຄື່ອນຍ້າຍຖິ່ນຖານຂອງຜູ້ຄົນທີ່ມີສີມືສູງ ຈາກບັນດາປະເທດທີ່ກຳລັງພັດທະນາ: ຜົນກະທົບ ແລະການຕອບສະໜອງທາງດ້ານນະໂຍບາຍ", ບັນດາເອກະສານການເຄື່ອນຍ້າຍຖິ່ນຖານຂອງສາກົນ, No. 44, ILO.

Louka T. Katseli, Robert E.B. Lucas ແລະ Theodora Xenogiani (2006), "ບັນດາຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານ ຕໍ່ກັບບັນດາປະເທດທີ່ສົ່ງອອກ: ພວກເຮົາຮູ້ຈັກຫຍັງແດ່?", ການຈັດແບ່ງດ້ານປະຊາກອນ, ກົມກິດຈະການເສດຖະກິດ ແລະສັງຄົມ, ສຳນັກງານເລຂາທິການຂອງອົງການສະຫະປະຊາຊາດ, UN/POP/MIG/SYMP/2006/11/Rev.

Mandal, S.K. ແລະ A Maity (2013),"ບັນດາແນວໂນ້ມໃນປັດຈຸບັນຂອງອຸດສາຫະກຳລົດຖາກເຕີຂອງອິນເດຍ: ການທົບທວນທີ່ສຳຄັນຫຼາຍ", ບົດລາຍງານວິທະຍາສາດທີ່ຖືກນຳໃຊ້ 3 (2).

Mandych A.F. (2006), ອາຫານ ແລະການເຊື່ອມໂຊມຂອງດິນ, ບັນດາໄພພິບັດທາງທຳມະຊາດ, Flood and Soil Erosion, Natural Disasters, ປື້ມລວບລວມຄວາມຮູ້ສາລະພັດ ກ່ຽວກັບບັນດາລະບົບສະໜັບສະໜູນການດຳລົງຊີວິດ, ເຫຼັ້ມທີ 2, ປາຣີ: UNESCO.

Mehrotra, Santosh (2015), ຄວາມເປັນຈິງຂອງການປັນຜົນດ້ານປະຊາກອນ, ນິວເດັນລີ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Cambridge.

Mellor, J.W, ແລະ R.U. Ahmed (1988), ນະໂຍບາຍການກະສິກຳຢູ່ໃນບັນດາປະເທດກຳລັງພັດທະນາ, ນິວຢອກ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Cornell.

Nelson C.A. (2000),"ການອ່ອນຕົວທີ່ເປັນກາງ ແລະການພັດທະນາມະນຸດ: ບົດບາດຂອງປະສົບປະການຂັ້ນຕົ້ນ ຢູ່ໃນບັນດາລະບົບຄວາມຈຳຂອງການແກະສະຫຼັກ", ວິທະຍາສາດການພັດທະນາ, 3:2.

ສຄສ/NERI (2014), ການປັບປຸງການບໍລິການສຸຂະພາບຂອງແມ່ ບັນດາຕົວກຳນົດສຳຄັນ ທີ່ກະທົບຕໍ່ການຕາຍຂອງແມ່ ຢູ່ໃນ ສປປ ລາວ, ກະຊວງແຜນການ ແລະການລົງທຶນ, ນະຄອນຫຼວງວຽງຈັນ (ໜ້າ 10).

ສຄສ/NERI (2014), ສະພາບເສດຖະກິດມະຫາພາກ ໃນປີ 2013 ແລະແນວໂນ້ມ ສຳລັບປີ 2014, ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະການລົງທຶນ.

ອັນທະນາ ບໍລິນທາ ແລະ IdrisJajri (2015), "ອຸດສາຫະກຳຕັດຫຍິບ ຢູ່ໃນ ສປປ ລາວ: ຄວາມສາມາດດ້ານເຕັກໂນໂລຢີ, ຕ່ອງໂສ້ການຜະລິດຂອງໂລກ ແລະຄວາມສາມາດໃນການແຂ່ງຂັນ", ສຄສ/NERI, ນະຄອນຫຼວງວຽງຈັນ, ແລະຄະນະເສດຖະກິດ ແລະບໍລິຫານ, ມະຫາວິທະຍາໄລມາເລເຊຍ, ຊຸດເອກະສານສົນທະນາຂອງ ERIA, http://www.eria.org/ERIA-DP-2015-13.pdf.

OCED (2008), "ບັນດາຜົນກະທົບຂອງອາກອນ ຕໍ່ກັບການລົງທຶນໂດຍກົງຂອງຕ່າງປະເທດ" ບົດສະຫຼຸບຫຍໍ້ທາງດ້ານນະໂຍບາຍ (ກຸມພາ) https://www.oecd.org/investment/investment-policy/40152903 .pdf.

ສີວຽງໄຊ ອໍລະບູນ (2015), "ການຫຼຸດພົ້ນອອກຈາກ LDC Graduation ແລະຜົນຕາມມາຂອງການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ບົດຮຽນຈາກ ປະເທດມານດິບ ແລະຊາມົວ ພາຍຫຼັງທີ່ເຂົາເຈົ້າຫຼຸດພົ້ນອອກຈາກ LDC ແລ້ວ, ນະຄອນຫຼວງວຽງຈັນ: ສຄສ/NERI.

Ostry, J. D., A. R. Ghosh, K. Habermeier, M. Chamon, M. S. Qureshi, L. Laeven, ແລະ A. Kokenyne (2011),'ການຄຸ້ມຄອງການໄຫຼຂອງກະແສທຶນ: ຈະນຳໃຊ້ເຄື່ອງມືອັນໃດ?'. IMF ການສົນທະນາຂອງພະນັກງານ ບົດບັນທຶກ 11/06.

Ostry, Jonathan, Prakash Loungani, ແລະ Davide Furceri (2016),"ລັດທິເສລີນິຍົມໃໝ່: ເປັນການຍົກຍ້ອງຫຼາຍເກີນໄປບໍ?", IMF ການເງິນ ແລະການພັດທະນາ, ມິຖຸນາ.

Piketty, Thomas (2012), ທຶນຢູ່ໃນສະຕະວັດທີ 21, Cambridge (MA): ເອກະສານສິ່ງພິມຂອງມະຫາວິທະຍາໄລ Harvard.

Pimhidzai, ເດືອນຕຸລາ (2015), ບັນທຶກນະໂຍບາຍກ່ຽວກັບຄວາມທຸກຍາກຂອງ ສປປ ລາວ: ບັນດາຕົວຂັບເຄື່ອນ ກ່ຽວກັບການຫຼຸດຜ່ອນຄວາມທຸກຍາກຢູ່ໃນ ສປປ ລາວ: ນະຄອນຫຼວງວຽງຈັນ: ທະນາຄານໂລກ, ສູນສະຖິຕິແຫ່ງຊາດ ແລະ Ausaid.

Pimhidzai, Obert, Nina Fenton, ພອນສະຫຼີ ສຸກສະຫວັດ ແລະ ວິໄລສຸກ ສີສຸລາດ (2014), ສະພາບຄວາມທຸກຍາກ ຢູ່ໃນ ສປປ ລາວ: ບົດລາຍງານກ່ຽວກັບຄວາມທຸກຍາກ ສຳລັບການສຳຫຼວດການຊົມໃຊ້

ແລະການໃຊ້ຈ່າຍ, 2012–2013, ນະຄອນຫຼວງວຽງຈັນ: ທະນາຄານໂລກ, ສູນສະຖິຕິແຫ່ງຊາດ ແລະAusAid.

Revera, William M. ແລະ Jonh W. Cary (2015), “ການຫັນການສົ່ງເສີມການກະສິກຳເປັນເອກະຊົນ”, ຢູ່ໃນ FAO: ການປັບປຸງການສົ່ງເສີມການກະສິກຳ: ປຶ້ມຄູ່ມື, http://www.fao.org/docrep/w5830e/w5830e0o.htm.

Rosenblatt, Roger A ແລະ L Gary Hart (2000), “ບັນດາທ່ານໝໍຢູ່ໃນເຂດຊົນນະບົດຂອງອາເມລິກາ”, http://www.ncbi.nlm.nih.gov/pmc/articles/PMC1071163/.

Schiller J.M., ຫັດສະດີງ ແລະ ດວງສີລາ (2006), “ປະຫວັດຂອງເຂົ້າໃນລາວ”, in J.M. Schiller, ຈັນເພັງໄຊ, B. Linquist & S.A. Rao, (eds.), ເຂົ້າໃນລາວ, Los Banos: ສະຖາບັນຄົ້ນຄວ້າເຂົ້າຂອງສາກົນ.

Schultz Theodore W (1963),‘ຄຸນຄ່າທາງເສດຖະກິດຂອງການສຶກສາ’ ນິວຢອກ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Columbia.

ສຸທິຈັກ ແລະ ມານະ (2009), “ເສດຖະກິດກາເຟລາວ”, Intergro Inc., http://www.intergro-inc. com/Articles/LaoCoffeeEcon091120.pdf.

ສຸວັນທອງ (1995), ການເຮັດໄຮ່ເລື່ອນລອຍ ຢູ່ໃນ ສປປ ລາວ: ພາບລວມຂອງການນຳໃຊ້ທີ່ດິນ ແລະການລິເລີ່ມນະໂຍບາຍຕ່າງໆ, ນະຄອນຫຼວງວຽງຈັນ: ສະຖາບັນຄົ້ນຄວ້າກະສິກຳ ແລະປ່າໄມ້ ແຫ່ງຊາດ.

Stiglitz, Joseph (2007), “ບົດບາດຂອງລັດແມ່ນຫຍັງ? ບັນຫາຂອງການປ່ຽນແປງບ່ຽງເບນກ່ຽວກັບຊັບພະຍາກອນຕ່າງໆ”, ຢູ່ໃນບົດຂຽນຂອງ M. Humphreys, J. Sachs ແລະ J. Stiglitz (eds): ການຫຼີກໜີ້ຈາກຄວາມຫາຍຍະນະດ້ານຊັບພະຍາກອນທຳມະຊາດ, ນິວຢອກ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Columbia, ໜ້າ 22–55.

Stiglitz, J E. (2012), ລາຄາຂອງຄວາມບໍ່ສະເໝີພາບ: ສັງຄົມທີ່ຖືກແບ່ງແຍກໃນທຸກວັນນີ້ ຈະເປັນອັນຕະລາຍຕໍ່ສັງຄົມຂອງພວກເຮົາໃນອະນາຄົດຄືແນວໃດ?, ນິວຢອກ: W.W. Norton ແລະບໍລິສັດຂອງທ່ານ.

Strauss-Kahn, Dominique (2011), “ນະໂຍບາຍມະຫາພາກ ແລະການເຕີບໂຕ ຢູ່ໃນຄື້ນຂອງວິກິດການ”. ຄັດມາຈາກ: ບົດກ່າວເປີດກອງປະຊຸມ ຂອງ ທ່ານ Dominique Strauss-Kahn ຢູ່ໃນກອງປະຊຸມກ່ຽວກັບບັນດານະໂຍບາຍມະຫາພາກ ແລະການເຕີບໂຕ ຂອງ IMF ກ່ຽວກັບຄື້ນຂອງວິກິດການຕ່າງໆ, ວໍຊິງຕັນ, DC, ວັນທີ 7 ເດືອນມີນາ.

Syrquin, Moshe (1988), “ບັນດາຮູບແບບຂອງການປ່ຽນແປງດ້ານໂຄງສ້າງ” ຢູ່ໃນ Hollis Chenery ແລະ T.N. Srinivasan, eds.

Timmer, C.P (1986), ການໄດ້ລາຄາທີ່ຍຸຕິທຳ: ຂອບເຂດ ແລະຂໍ້ຈຳກັດຂອງນະໂຍບາຍດ້ານການກະສິກຳ, ນິວຢອກ: ເອກະສານສິ່ງພິມຂອງມະຫາວິທະຍາໄລ Cornell.

UNCTAD (2014), “ຂະແໜງການຊັບພະຍາກອນທຳມະຊາດ: ການທົບທວນ ແລະການກຳນົດ ກ່ຽວກັບບັນດາກາລະໂອກາດສຳລັບການຄ້າ ແລະການພັດທະນາທີ່ອີງໃສ່ສິນຄ້າ”, http://unctad.org/ meetings/en/SessionalDocuments/cimem2d26_en.pdf.

UNCTAD (2015), ບົດລາຍງານກ່ຽວກັບປະເທດທີ່ດ້ອຍພັດທະນາ ຂອງປີ 2014, ນະຄອນເຊີແນວ: UNCTAD.

UNDP (2009), ບົດລາຍງານການພັດທະນາມະນຸດແຫ່ງຊາດ ຂອງ ສປປ ລາວ, 2009: ການຈ້າງງານ ແລະການດຳລົງຊີວິດ, ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະການລົງທຶນ (ລັດຖະບານແຫ່ງ ສປປ ລາວ

ແລະ UNDP).

UNDP (2010), ບົດລາຍງານການພັດທະນາມະນຸດ 2010; ຄວາມຮັ່ງມີທີ່ແທ້ຈິງຂອງບັນດາປະຊາຊາດ, ນິວຢອກ. ອົງການສະຫະປະຊາຊາດເພື່ອການພັດທະນາ.

UNDP (2015),ບົດລາຍງານການພັດທະນາມະນຸດ 2015: ເຮັດວຽກເພື່ອການພັດທະນາມະນຸດ, ນິວຢອກ: ອົງການສະຫະປະຊາຊາດເພື່ອການພັດທະນາ.

UNDP (2016), ບົດລາຍງານການພັດທະນາມະນຸດໃນເຂດອາຊີ-ປາຊີຟິກ 2016: ແນວທາງໃນອະນາຄົດ: ການປ່ຽນແປງດ້ານປະຊາກອນ ຈະສາມາດມີອິດທິພົນຕໍ່ການພັດທະນາມະນຸດຄືແນວໃດ. ນິວຢອກ: ອົງການສະຫະປະຊາຊາດເພື່ອການພັດທະນາ.

UNECA (2015), ການປະກອບສ່ວນໃຫ້ແກ່ຄະນະກຳມະການເສດຖະກິດ ແລະສັງຄົມ ຂອງອົງການສະຫະປະຊາຊາດ (ECOSOC) ໃນປີ 2015, Addis Ababa.

UNOHRLLS (2006), ແຜນງານປະຕິບັດການບຣຸກແຊນ: ການແກ້ໄຂທີ່ຈຳເປັນສະເພາະຂອງບັນດາປະເທດດ້ອຍພັດທະນາ, ນິວຢອກ: ອົງການສະຫະປະຊາຊາດເພື່ອການພັດທະນາ.

Varela, Gonzalo, Claire H. Hollweg ແລະ Laura Gomez-Mera (2016), ການເຊື່ອມການບໍລິການ ແລະອຸດສາຫະກຳການຜະລິດServices: ການວິໄຈທີ່ຖືເອົາປະສົບປະການເປັນຫຼັກສຳລັບ ສປປ ລາວ, ນະຄອນຫຼວງວຽງຈັນ: World Bank Group, Australian Aid, the European Union, Irish Aid, and USAID.

Vyas, V.S and S. Singh (2006), “ການປະກັນໄພພືດຢູ່ໃນອິນເດຍ ຂອບເຂດສຳລັບການປັບປຸງ”, ວາລະສານເສດຖະກິດ ແລະການເມືອງ ປະຈຳອາທິດ, 41 (43-44), 2006.

Warr, Peter, ສິດທິລິດ ຣາດຊະພົນ ແລະ Jayant Menon (2015),“ສອງທິດສະວັດຂອງການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະການຫຼຸດລົງຂອງຄວາມທຸກຍາກ ຢູ່ໃນ ສປປ ລາວ”, ຊຸດເອກະສານວຽກງານຂອງADB, No. 461.

Washburn, Nathan T. ແລະ Karen A. Brown (2015), “ການຫຼຸດລົງຂອງໂຮງໝໍຢູ່ໃນເຂດຊົນນະບົດຂອງອາເມລິກາ ແລະຈະປ່ຽນປົ້ນມັນຄືນໄດ້ຄືແນວໃດ”, ການທົບທວນທຸລະກິດຂອງ Harvard, ວັນທີ 30 ມັງກອນ 2015.

World Bank (1993), ບົດລາຍງານການພັດທະນາໂລກ, ວໍຊິງຕັນ DC: ທະນາຄານໂລກ.

World Bank (1993a), ອູສະເບັກກິສະຕານ: ວາລະກອງປະຊຸມເສດຖະກິດ, ວໍຊິງຕັນ DC: ທະນາຄານໂລກ.

World Bank (1995), ບົດລາຍງານການພັດທະນາໂລກ, ວໍຊິງຕັນ DC: ທະນາຄານໂລກ.

World Bank (2010), ວິກິດການຄວາມຄາດຫວັງດ້ານເສດຖະກິດ, ການເງິນ ແລະການເຕີບໂຕຂອງໂລກ, ວໍຊິງຕັນ DC.

World Bank (2013), ການດຳເນີນທຸລະກິດ ໃນປີ 2014: ຄວາມເຂົ້າໃຈດ້ານລະບຽບການ ສຳລັບບັນດາວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ.

World Bank (2014), ບົດລາຍງານການພັດທະນາຂອງລາວ ປີ 2014: ການຂະຫຍາຍການຈ້າງງານການຜະລິດ ສຳລັບການເຕີບໂຕໃນແນວກວ້າງ, ນະຄອນຫຼວງວຽງຈັນ: ກຸ່ມທະນາຄານໂລກ.

World Bank (2014a), ບົດລາຍງານຫຍໍ້ກ່ຽວກັບຄວາມທຸກຍາກ ຢູ່ໃນ ສປປ ລາວ 2014, ກຸ່ມ

ທະນາຄານໂລກ.

Yin, Xingmin (2012),“ການແບ່ງປັນແຮງງານໃໝ່ ລະຫວ່າງ ສປ ຈີນ ແລະອະນຸຂົງເຂດ CLMV”, ອ້າງໃນ Yasushi Ueki ແລະ Teerana Bhongmakapat (Eds.) ການດັດປັບດ້ານອຸດສາຫະກໍາຢູ່ໃນບັນດາປະເທດອ່າງແມ່ນໍ້າຂອງ: ເພື່ອກ້າວໄປສູ່ AEC, ເອກະສານບົດຄົ້ນຄວ້າຂອງ BRC #7, IDE-JETRO ບັງກອກ, http://www.ide.go.jp/English/Publish/Download/Brc/pdf/07_chapter9.pdf.

Zettelmeyer, Jeromin (1998), “ເລື່ອງປິດສະນາກ່ຽວກັບການເຕີບໂຕຂອງອູສະເບັກກິສະຖານ”, ເອກະສານວຽກງານຂອງ IMF, WP/98/133, ເດືອນກັນຍາ 1998.

Zhang Xiaobo, Yang Jin ແລະ T Reardon (2015), “ການຫັນເປັນກົນຈັກແທນການຈ້າງແຮງງານຈາກກຸ່ມຄົນພາຍນອກ ແລະການແບ່ງປັນແຮງງານຢູ່ໃນຂະແໜງກະສິກໍາຂອງຈີນ”, ເອກະສານການສົນທະນາຂອງ IFPRI 01415, ວໍຊິງຕັນ: ສະຖາບັນຄົ້ນຄວ້ານະໂຍບາຍດ້ານອາຫານຂອງສາກົນ.

Zhau J (n.d.), ມາດຖານຂອງການຫຼຸດພົ້ນອອກຈາກ LDC ການຄໍານວນຈາກເບື້ອງຫຼັງ, ນະຄອນຫຼວງວຽງຈັນ: ຫ້ອງການ UNDP ປະຈໍາ ສປປ ລາວ.

# ໝາຍເຫດຄັດທ້າຍ

1 ການສັງລວມຂໍ້ມູນທາງການເງິນຂອງທະນາຄານໂລກ: http://datatopics.worldbank.org/financialinclusion/contry /lao-pdr.

2 ຄະນະກໍາມະການນະໂຍບາຍເພື່ອການພັດທະນາ (CDP) – ໜ່ວຍງານສາຂາ (ສະເພາະ) ຂອງຄະນະກໍາມະການເສດຖະກິດ ແລະ ສັງຄົມ ຂອງອົງການສະຫະປະຊາຊາດ (ECOSOC) – ຮັບຜິດຊອບໃນການດໍາເນີນການທົບທວນບັນຊີຂອງ LDCs ຊຶ່ງສະມາຊິກຂອງມັນແມ່ນປະກອບດ້ວຍບັນດານັກຊ່ຽວຊານເອກະລາດ. ສະຖານະພາບຂອງປະເທດທີ່ເປັນ LDC ແມ່ນບໍ່ໄດ້ຂຶ້ນກັບລະດັບລາຍຮັບຂອງມັນ. ເຖິງແມ່ນວ່າການກໍານົດກ່ຽວກັບການເປັນປະເທດລາຍຮັບຕໍ່າຂອງທະນາຄານໂລກ ແມ່ນມີບາງອັນທັບຊ້ອນກັບການກໍານົດກ່ຽວກັບການເປັນ LDC ຂອງອົງການສະຫະປະຊາຊາດກໍ່ຕາມ, ແຕ່ປະເທດລາຍຮັບປານກາງ ຫຼືລາຍຮັບປານກາງຂັ້ນຕໍ່າກໍ່ຍັງສາມາດເປັນ LDC ຢູ່ ຊຶ່ງຂຶ້ນຢູ່ກັບສອງມາດຖານອື່ນນໍາ.

3 ບົດລາຍງານຂອງກອງປະຊຸມອົງການສະຫະປະຊາຊາດ ຄັ້ງທີ 4 ກ່ຽວກັບປະເທດດ້ອຍພັດທະນາ, ອິສະຕັນບູນ, ຕວັກກີ, 9-13 ພຶດສະພາ 2011, ອົງການສະຫະປະຊາຊາດ, ນິວຢອກ. http://www.un.org/wcm/webdav/site/ldc/shared/Report%20of%20the%20Istanbul%20Conference.pdf.

4 ບັນດາເຫດຜົນອື່ນໆອາດຈະແມ່ນການພິຈາລະນາກ່ຽວກັບທີ່ຕັ້ງຍຸດທະສາດ ແລະຄວາມປອດໄພຂອງບາງປະເທດ, ແລະອື່ນໆ.

5 ສໍາລັບການສົນທະນາໃນໄວໆນີ້ ແລະລາຍລະອຽດກ່ຽວກັບຫົວຂໍ້ນີ້ ແມ່ນເບິ່ງຢູ່ໃນ Mehrotra (2015), ໂດຍສະເພາະແມ່ນພາກທີ 1 ແລະ 2.

6 UNDP ໄດ້ມີການປ່ຽນແປງນິຍາມຂອງອັນນີ້ໄປຕາມຊ່ວງໄລຍະຂອງເວລາ ຊຶ່ງຊີ້ໃຫ້ເຫັນວ່ານິຍາມຂອງ HD ແມ່ນກ່ຽວຂ້ອງກັບຫຼາຍຕົວປ່ຽນທີ່ສາມາດປ່ຽນແປງໄດ້ສູງ ແລະສາມາດຖືກດັດແກ້ໃຫ້ເຂົ້າກັບສະພາບການສະເພາະ ແລະເວລາ. ສໍາລັບວິທີການທີ່ຖືກນໍາໃຊ້ຫຼ້າສຸດນັ້ນ ແມ່ນເບິ່ງຢູ່ໃນ UNDP (2015).

7 ສິງກະໂປ ແລະບຣູໄນ ແມ່ນບໍ່ໄດ້ລວມຢູ່ໃນນີ້ ເນື່ອງຈາກເຂົາເຈົ້າເປັນປະເທດທີ່ມີລາຍຮັບສູງ ຢູ່ໃນ ASEAN.

8 ການເປັນຄູ່ຮ່ວມມືທາງເສດຖະກິດທີ່ໃກ້ສິດ ລະຫວ່າງ ບັນດາປະເທດທີ່ມີຄວາມບໍ່ເທົ່າທຽມກັນ ແມ່ນປະສົບກັບຄວາມຫຼົ້ມເຫຼວໃນໄລຍະຜ່ານມາ. ຕົວຢ່າງ: ເມັກຊິກໂກ ແລະອາເມລິກາ ຢູ່ໃນ NAFTA, ເກຣັກ ແລະເຢຍລະມັນ ຢູ່ໃນ EU.

9 ເບິ່ງວິທີການຄິດໄລ່ຕ່າງໆ ຢູ່ໃນ UNDP (2010). ໃນຂະນະທີ່ GII ແມ່ນເປັນດັດຊະນີໃໝ່ທີ່ພັດທະນາຂຶ້ນ ໃນປີ 2010, GDI ແມ່ນໄດ້ຖືກກໍານົດຄືນໃໝ່ ໃນປີ 2010.

10 ຕົວຄູນຂອງຕົວປ່ຽນ (COV) ແມ່ນອັດຕາສ່ວນຂອງຄ່າໃກ້ຄຽງມາດຕະຖານໂດຍສະເລ່ຍ ຄູນໃຫ້ 100. ມັນສະແດງໃຫ້ເຫັນເຖິງຂະໜາດຂອງຄ່າໃກ້ຄຽງໂດຍສະເລ່ຍ ອັດຕາສ່ວນນີ້ແຫ່ງໃຫຍ່ເທົ່າໃດ ຄ່າໃກ້ຄຽງກໍ່ແຫ່ງໃຫຍ່ເທົ່ານັ້ນ (ແນວໂນ້ມຂອງຈຸດສູນກາງຕໍ່າລົງ), ແລະກົງກັນຂ້າມ. ໂດຍທົ່ວໄປແລ້ວ, ຄ່າທີ່ຕໍ່າກວ່າ 5% ແມ່ນຖືກພິຈາລະນາວ່າເປັນຄ່າໃກ້ຄຽງທີ່ຕໍ່າ, ໃນຂະນະທີ່ມັນຫາກສູງກວ່າ 10% ແມ່ນຖືກພິຈາລະນາວ່າເປັນຄ່າໃກ້ຄຽງທີ່ສູງ. ເບິ່ງຢູ່ໃນ https://www.westgard.com/lesson34.htm#6.

11 ເບິ່ງຢູ່ໃນ, Dasgupta (1995); Becker (1962, 1993); Schultz (1963); World Bank (1993, 1995); Kumar ແລະFukuda-Parr (eds) (2004).

12 ແຫຼ່ງຂໍ້ມູນ: LECS-3 ແລະ LECS-5.

13 ແຫຼ່ງຂໍ້ມູນ: LECS-5.

14 ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະກິລາ, ຖານຂໍ້ມູນ EMIS (ລະບົບຂໍ້ມູນຂ່າວສານການຄຸມຄອງການສຶກສາ).

15 ການໄດ້ຮັບສະບຽງອາຫານບໍ່ພຽງພໍ ທີ່ເປັນເຫດໃຫ້ການໂພຊະນາການບໍ່ພຽງພໍ, ນັ້ນແມ່ນໜຶ່ງໃນບັນດາອົງປະກອບຕ່າງໆຂອງເສັ້ນຄວາມທຸກຍາກ. ເຫັນໄດ້ຢ່າງຈະແຈ້ງວ່າ, ທີ່ມັນຕໍ່າກວ່າເສັ້ນຄວາມທຸກຍາກທົ່ວໄປນັ້ນ ແມ່ນມີອົງປະກອບໜຶ່ງທີ່ບໍ່ແມ່ນລາຍການອາຫານລວມຢູ່ນຳດ້ວຍ. ອາຫານທີ່ຜູ້ທຸກຍາກໄດ້ບໍລິໂພກນັ້ນ ແມ່ນຕໍ່າກວ່າຄວາມຕ້ອງການຂັ້ນຕໍ່າສຸດ, ເພາະສະນັ້ນມັນຈຶ່ງນຳໄປສູ່ການຂາດສານອາຫານ. ແຫຼ່ງຂໍ້ມູນທີ່ນຳໃຊ້ສຳລັບການຄຳນວນແມ່ນມາຈາກ LECS-5

16 ນໍ້າໜັກຕໍ່າກວ່າມາດຕະຖານ: ມີນໍ້າໜັກໜ້ອຍກວ່າອາຍຸ; ຄວາມສູງຕໍ່າກວ່າມາດຕະຖານ: ມີຄວາມສູງຕໍ່າກວ່າອາຍຸ; ຈ່ອຍແຫ້ງ: ມີນໍ້າໜັກຕໍ່າກວ່າຄວາມສູງ. ເບິ່ງຢູ່ໃນ GOL (2012)

17 ບັນດາອຳນາດການປົກຄອງຂັ້ນຕ່າງໆຂອງລາວ ໄດ້ມີການຕິດຕາມຄວາມທຸກຍາກມາແຕ່ຕົ້ນຊຸມປີ 1990 ຊຶ່ງເຂົາເຈົ້າໄດ້ມີການດຳເນີນການສຳຫຼວດຕົວຢ່າງໃນທຸກໆ 5 ປີ. ການສຳຫຼວດເຫຼົ່ານີ້ແມ່ນເປັນທີ່ຮູ້ຈັກກັນວ່າ ການສຳຫຼວດການຊົມໃຊ້ ແລະການໃຊ້ຈ່າຍ (LECS) ທີ່ໄດ້ດຳເນີນການດ້ວຍການນຳໃຊ້ຕົວຢ່າງຕົວແທນ ເພື່ອເຮັດການຄາດຄະເນສຳລັບທົ່ວປະເທດ ແລະໃນປັດຈຸບັນນີ້ແມ່ນຍັງໄດ້ເຮັດສຳລັບຂັ້ນແຂວງນຳ. ສຳລັບການສຳຫຼວດ 5 ຄັ້ງຜ່ານມານັ້ນ ແມ່ນໄດ້ເຮັດຢູ່ໃນປີ 1992-1993 (LECS-1), 1997-1998 (LECS-2), 2002-2003 (LECS-3), 2007-2008 (LECS-4), and 2012-2013 (LECS-5).

18 ສຳລັບເສັ້ນຄວາມທຸກຍາກແຫ່ງຊາດນັ້ນ ແມ່ນໄດ້ມີການຄິດໄລ່ກ່ຽວກັບພື້ນຖານການໂພຊະນາການແຫ່ງຊາດ. ສຳລັບຜູ້ໃຫຍ່ແມ່ນຕ້ອງສາມາດບໍລິໂພກເທົ່າກັບ 2.100 ກິໂລກະລໍລີຕໍ່ມື້ ຈຶ່ງຈະຢູ່ເໜືອ (ຫຼຸດພົ້ນອອກຈາກ) ເສັ້ນຄວາທຸກຍາກໄດ້, ແລະຜູ້ນັ້ນຍັງຈະຕ້ອງສາມາດເຂົ້າເຖິງສິ່ງຈຳເປັນຕ່າງໆທີ່ບໍ່ແມ່ນອາຫານນຳອີກ. ອັນທີໜຶ່ງ, ກ່ຽວກັບການເງິນ ແມ່ນຕ້ອງໄດ້ຄຳນວນໃຫ້ເທົ່າກັບ 2.100 ກິໂລກະລໍລີຂອງອາຫານ (ຈາກກະຕ່າຂອງການຕີຄວາມໝາຍ), ແລະຕໍ່ຈາກນັ້ນຈຶ່ງຄຳນວນບັນດາລາຍການທີ່ບໍ່ແມ່ນສະບຽງອາຫານ ຊຶ່ງຜົນລວມຂອງທັງສອງຢ່າງນີ້ແມ່ນເສັ້ນຄວາມທຸກຍາກ. ໃນແຕ່ລະເທື່ອທີ່ດຳເນີນການສຳຫຼວດນັ້ນ ເສັ້ນຄວາມທຸກຍາກແມ່ນໄດ້ຖືກດັດປັບໄປຕາມອັດຕາເງິນເຟີ້. ຍັງບໍ່ໄດ້ມີການກຳນົດເສັ້ນຄວາມທຸກຍາກໃໝ່ໃນສອງທົດສະວັດຜ່ານມາ. ສປປ ລາວ ໄດ້ນຳໃຊ້ວິທີການວັດແທກຄວາມທຸກຍາກຕາມແບບສະບັບຂອງທະນາຄານໂລກ.

19 Epprecht et al.(2008).

20 ດັດຊະນີຊ່ອງວ່າງຂອງຄວາມທຸກຍາກ ແມ່ນເປັນເປີເຊັນແຕ່ 0 ຫາ 100%, ແຕ່ມີບາງເທື່ອມັນກໍ່ໄດ້ລາຍງານເປັນຈຳນວນໜ້ອຍແຕ່ 0 ຫາ 1. ຄ່າທາງທິດສະດີຂອງ 0% ແມ່ນໝາຍເຖິງບໍ່ມີຜູ້ໃດຈາກຈຳນວນປະຊາກອນທັງໝົດທີ່ຢູ່ລຸ່ມເສັ້ນຄວາມທຸກຍາກ. ຄ່າທາງທິດສະດີຂອງ 100% ແມ່ນໝາຍເຖິງຈຳນວນປະຊາກອນໝົດທຸກຄົນມີລາຍຮັບເປັນ 0 (ບໍ່ມີລາຍຮັບເລີຍ). ເບິ່ງຢູ່ໃນ, Foster ແລະThorbecke (1984).

21 Pimhidzai (2015)

22 Pimhidzai,et al (2014

23 Piketty (2012); Atkinson (2015); Stiglitz (2012)

24 ທະນາຄານໂລກ (2014a)

25 Warr ແລະ Rasphone (2015)

26 GOL (2014a). ຂໍ້ມູນຈາກ LAC ແມ່ນຂ້ອນຂ້າງມັກຈະຖືກນຳໃຊ້ຫຼາຍກວ່າຂໍ້ມູນຂອງຝ່າຍບໍລິຫານ ທີ່ລາຍງານໂດຍກະຊວງ ກ່ຽວຂ້ອງ ເພາະວ່າທີ່ບັນດາຕົວຢ່າງຢູ່ໃນອາດີດແມ່ນກວ້າງກວ່າ ແລະວິທີການຕ່າງໆກ່ຽວກັບການເກັບກຳຂໍ້ມູນ ແມ່ນສາມາດທີ່ຈະເອົາມາໃຊ້ໄດ້ຢູ່ໃນຂອບເຂດວົງການຂອງລັດ.

27 ຮູບທີ 2.2 ໄດ້ສະແດງເຖິງ ‘ຊົ່ວໂມງເຮັດວຽກ’ ຫຼາຍກວ່າ ‘ວຽກທີ່ເຮັດ’, ຫຼັງຈາກທີ່ LECS ໄດ້ລາຍງານຂໍ້ມູນນັ້ນວ່າເປັນຄືແນວໃດ. ການສຳຫຼວດພົນລະເມືອງ ປີ 2015, ແມ່ນໄດ້ມີການຄຳນວນຈຳນວນຕົວເລກຜູ້ທີ່ເຮັດວຽກຢູ່ຕາມຂະແໜງການຕ່າງໆ, ແຕ່ກໍ່

ຍັງບໍ່ທັນສາມາດນຳເອົາມາໃຊ້ຢູ່ໃນຂອບເຂດວົງການຂອງລັດໄດ້.

28 ຂໍ້ມູນຈາກ LECS 3 ແລະ LECS 5.

29 ບັນດາແຫຼ່ງຂໍ້ມູນຈາກກະຊວງກະສິກຳ ແລະປ່າໄມ້ (MAF) ໄດ້ຊີ້ໃຫ້ເຫັນວ່າ ໃນຊ່ວງໄລຍະນີ້ອັດຕາການເຕີບໂຕຂອງຜົນຜະລິດເຂົ້າແມ່ນຢູ່ 1,5%; ແຕ່ວ່າເຂົ້າພຽງຢ່າງດຽວນັ້ນມັນບໍ່ແມ່ນການກະສິກຳທັງໝົດ. ພ້ອມກັນນັ້ນ, ວິທີການເກັບກຳຂໍ້ມູນຂອງ MAF ທີ່ນຳໃຊ້ການສຳຫຼວດຜ່ານຫຼາຍພືດນັ້ນ ກໍ່ມີຄວາມແຕກຕ່າງຈາກວິທີທີ່ນຳໃຊ້ໂດຍ LAC. ເຖິງແນວໃດກໍ່ຕາມ, ຄວາມແຕກຕ່າງເຫຼົ່ານີ້ແມ່ນບໍ່ໄດ້ປ່ຽນແປງເຫດຜົນລວມແຕ່ຢ່າງໃດ.

30 ໄດ້ມີການດຳເນີນການສັງເກດການໃນພາກສະໜາມຢູ່ໃນສາມແຂວງ ຄື: ຊຽງຂວາງ, ສະຫວັນນະເຂດ ແລະເຊກອງ.

31 ແຫຼ່ງຂໍ້ມູນ: ສຳລັບຂໍ້ມູນກ່ຽວກັບການລົງທຶນ ແລະການຈ້າງງານ ແມ່ນໄດ້ຈາກ GOL (2016) ແລະ NERI/ສຄສ (2014).

32 ສຳລັບບັນດາປະເທດທີ່ຮັ່ງມີດ້ານຊັບພະຍາກອນທຳມະຊາດຢູ່ໃນທະວີບອາຟຣິກາ ກໍ່ໄດ້ມີການລາຍງານການສົນທະນາທີ່ຄ້າຍຄືກັນນີ້. ເບິ່ງໃນ, UNECA (2015).

33 ການປ່ຽນແປງໂຄງສ້າງ ແມ່ນຖືກກຳນົດໃຫ້ເປັນການຈັດສັນກິດຈະກຳທາງເສດຖະກິດຄືນໃໝ່ ຜ່ານສາມຂະແໜງການໃຫຍ່ໆ (ກະສິກຳ, ອຸດສາຫະກຳ, ແລະການບໍລິການ) ທີ່ລວມຢູ່ໃນຂະບວນການຂອງການເຕີບໂຕທາງເສດຖະກິດທີ່ທັນສະໄໝ. ມັນໄດ້ມີຫຼາຍຄະນະທີ່ໄດ້ຂຽນ ຫຼືບັນຍາຍກ່ຽວກັບການປ່ຽນແປງໂຄງສ້າງ. ທີ່ສຳຄັນ ແລະເປັນທີ່ຮັບຮູ້ກັນທົ່ວໄປວ່າດີເລີດນັ້ນ ກໍ່ແມ່ນ Clark (1957); Chenery (1960); Kuznets (1966); Syrquin (1988).

34 ແຕ່ວ່າການປ່ຽນແປງໂຄງສ້າງແມ່ນປັດສະຈາກບັນຫາ; ເຖິງແມ່ນວ່າຫຼາຍກໍລະນີທີ່ປະສົບຜົນສຳເລັດນັ້ນ ແມ່ນໄດ້ເຫັນເຖິງການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບຕ່າງໆກໍ່ຕາມ, ຍົກເວັ້ນບັນດາປະເທດອຸດສາຫະກຳໃໝ່ຢູ່ໃນອາຊີຕາເວັນອອກ ທີ່ຢູ່ໃນລະຫວ່າງໄລຍະຕົ້ນຂອງເຂົາເຈົ້າ. ການປະຕິຮູບທີ່ດິນຢ່າງເຖິງກົກເຖິງຮາກ ແລະການຫັນເປັນອຸດສາຫະກຳທີ່ເຂັ້ມງານ ໄດ້ມີບົດບາດທີ່ສຳຄັນຕໍ່ກັບການເຮັດໃຫ້ມີການເຕີບໂຕຢູ່ໃນອາຊີຕາເວັນອອກ.

35 ພາກທີ 1 ໄດ້ສົນທະນາກ່ຽວກັບບັນດາຕົວດັດຊະນີຂອງ HD. ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ LDCs, ລວມທັງ ສປປ ລາວ ແມ່ນເບິ່ງຢູ່ໃນ UNCTAD (2015); ຄະນະກຳມະການນະໂຍບາຍເພື່ອການພັດທະນາ (2015).

36 ຄະນະກຳມະການນະໂຍບາຍເພື່ອການພັດທະນາ (CDP) ໜ່ວຍງານຂອງ UN ທີ່ໄດ້ຮັບມອບໝາຍໃຫ້ກະກຽມບົດລາຍງານ LDC ໄດ້ເລືອກເອົາ GNI ຫຼາຍກວ່າ GDP, ເພາະວ່າ GNI ໄດ້ວັດແທກຍອດລາຍຮັບຕົວຈິງທັງໝົດຂອງປະເທດ. ເຖິງແມ່ນວ່າ ສປປ ລາວ ແລະ LDCs ອື່ນໆ ຍັງບໍ່ທັນໄດ້ຄຳນວນ GNI (ຫຼື GNP) ກໍ່ຕາມ.

37 ໃນເມື່ອຖືກກຳນົດໃຫ້ເປັນ LDC ແລ້ວ, ປະເທດນັ້ນກໍ່ຈະມີທາງເລືອກຕ່າງໆ ເພື່ອໄດ້ຮັບຜົນປະໂຫຍດຈາກບັນດາອົງການຮ່ວມມືຫຼາຍຝ່າຍຂອງໂລກ ແລະຂົງເຂດ, ແລະຈາກສັນຍາສອງຝ່າຍກັບບັນດາປະເທດ OECD ຕາມຈຳນວນທີ່ໄດ້ຂຶ້ນບັນຊີໄວ້ຢູ່ໃນກ່ອງທີ 2.3.

38 ເບິ່ງຢູ່ໃນບົດວິຈານ ແລະການສົນທະນາທີ່ແຜ່ຫຼາຍກ່ຽວກັບການຈັດກຸ່ມ LDC, Alonso et al. (2014)

39 ຕາມທຳມະດາແລ້ວ, ການຄຳນວນໃນແຕ່ລະເທື່ອນັ້ນ ແມ່ນໄດ້ໃຊ້ຂໍ້ມູນຍ້ອນຫຼັງປະມານ 2 ປີ, ຊຶ່ງການຄຳນວນໃນປີ 2015 ແມ່ນໄດ້ອີງໃສ່ຂໍ້ມູນຂອງປີ 2013/2014.

40 ເບິ່ງຢູ່ໃນ, ອໍລະບູນ (2015).

41 ສປປ ລາວ ແມ່ນຍັງບໍ່ທັນໄດ້ຄຳນວນ GNI ເທື່ອ. ອັນນີ້ແມ່ນທະນາຄານໂລກເປັນຜູ້ຄຳນວນເອງ ໂດຍການຄາດຄະເນ GNI ນີ້ແມ່ນອີງໃສ່ວິທີວິທະຍາຂອງເຂົາເຈົ້າ ແລະຖານຂໍ້ມູນທີ່ໄດ້ຮັບຈາກ ສປປ ລາວ. ເຖິງຢ່າງໃດກໍ່ຕາມ, ທັງສອງຊຸດ (ສອງຢ່າງ) ນີ້ ແມ່ນມີຄວາມຄ້າຍຄື, ສອດຄ່ອງ ແລະໃກ້ຄຽງກັນທີ່ສຸດ. ເພາະສະນັ້ນ, ຖ້າຫາກ GDP ເຕີບໂຕໃນລະດັບ 7,5-8% ຕໍ່ປີ, GNI ກໍ່ຈະເຕີບໂຕຢູ່ໃນລະດັບອັດຕາສ່ວນດຽວກັນນີ້; ດັ່ງນັ້ນ, ການຄາດຄະເນແມ່ນມີຄວາມເປັນໄປໄດ້ທີ່ຈະອີງໃສ່ຕົວເລກ GDP.

42 ໃນຂະນະທີ່ຕາມປົກກະຕິແລ້ວ ແມ່ນມັນມີຄວາມເປັນໄປໄດ້ສຳລັບການດັດແກ້ ເພື່ອເຮັດໃຫ້ຖານຂໍ້ມູນທັງສອງນັ້ນສາມາດສົມທຽບກັນໄດ້, ແຕ່ວ່າອັນນີ້ແມ່ນບໍ່ໄດ້ເຮັດ, ເພາະວ່າ CDP ໄດ້ນຳໃຊ້ຂໍ້ມູນທີ່ເຂົາເຈົ້າມີຢູ່, ແລະໃນເວລານັ້ນ ລັດຖະບານກໍ່ບໍ່ໄດ້ໃຫ້ຄຳແນະນຳຫຍັງເລີຍ ກ່ຽວກັບການເຮັດໃຫ້ຂໍ້ມູນນັ້ນສາມາດສົມທຽບກັນໄດ້.

43 ໃນໄລຍະຜ່ານມາແມ່ນໄດ້ເຮັດການຄາດຄະເນຢູ່; ຕົວຢ່າງ: ເບິ່ງຢູ່ໃນ Kawamara (2014). ແຕ່ເອກະສານນີ້ແມ່ນໄດ້ອີງໃສ່ຂໍ້ມູນເກົ່າ; ເພາະສະນັ້ນ, ການຄາດຄະເນຂອງມັນສຳລັບ ສປປ ລາວ ແມ່ນເຫັນວ່າຍັງບໍ່ຖືກຕ້ອງປານໃດ. ສະນັ້ນ, ການເຮັດການຄາດຄະເນເທື່ອນີ້ແມ່ນໄດ້ອີງໃສ່ຂໍ້ມູນຜ່ານມາໃກ້ໆນີ້ຫຼາຍຂຶ້ນ ຊຶ່ງຄາດວ່າຈະຖືກກັບຄວາມເປັນຈິງຫຼາຍກວ່າ.

44 ຄ່າສຳປະສິດສ່ວນເພີ່ມ ແມ່ນມັກໃຊ້ຫຼາຍກວ່າຄ່າຂອງຄວາມຢືດຢ່ອນ (ຂຶ້ນລົງ), ເພາະວ່າຫົວໜ່ວຍຂອງການວັດແທກແມ່ນຈະຄືໆທີ່ຫຼາຍກວ່າ ແລະທັງສອງອັນນັ້ນແມ່ນຄວນຈະໃຫ້ຜົນຄືກັນ.

45 ຕົວຢ່າງ: ນັກສຶກສາຈີນ, ເກົາຫຼີໃຕ້ ແລະອິນເດຍ ແມ່ນໄດ້ຮັບທຶນການສຶກສາຈາກປະເທດຕາເວັນຕົກຫຼາຍກວ່າ ຢູ່ໃນຊ່ວງໄລຍະ 20-25 ຄືນຫຼັງ, ຖ້າສົມທຽບກັບຊ່ວງໄລຍະຕົ້ນໆນີ້ ແມ່ນມີນັກສຶກສາຈຳນວນຫຼາຍຈາກຫຼາຍປະເທດທີ່ໄປຮຽນຢູ່ໃນປະເທດຕາເວັນຕົກ, ເຖິງແມ່ນວ່າທຶນການສຶກສາໄດ້ຫຼຸດລົງຫຼາຍກໍ່ຕາມ. ອັນນີ້ແມ່ນຮູບແບບຂອງການເປັນຄູ່ຮ່ວມໃໝ່ກ່ຽວກັບ 'ຄວາມຮູ້ເພື່ອເງິນ', ຊຶ່ງ ສປປ ລາວ ຈະຕ້ອງມີທາງເລືອກໃນການຮັບເອົາບາງການແລກປ່ຽນ ຫຼາຍກວ່າທີ່ຈະເປັນຜູ້ທີ່ຮັບເອົາເຂົ້າມາພຽງຢ່າງດຽວ.

46 'ອັນໃດກໍ່ໄດ້ທີ່ບໍ່ແມ່ນອາວຸດ' ຂອງ EU ແມ່ນພາກສ່ວນໜຶ່ງຂອງ GSP ທີ່ຖືກຈັດຕັ້ງປະຕິບັດມາແຕ່ປີ 2001. ເບິ່ງຢູ່ໃນມາດຕາ 12 ແລະ 13 ຂອງ GSP.

47 ການຄ້າທີ່ເປັນທາງການ ລະຫວ່າງ ສປປ ລາວ ແລະສະຫະລັດອາເມລິກາ ແມ່ນຍັງມີໜ້ອຍຫຼາຍ. ບັນດາກົດລະບຽບຕ່າງໆຂອງ EU ແມ່ນໄດ້ມີຮຽກຮ້ອງໃຫ້ບັນດາປະເທດທີ່ໄດ້ຮັບການຊ່ວຍເຫຼືອ ຕ້ອງໄດ້ຮັບເອົາ 'ການພັດທະນາແບບຍືນຍົງ' ທີ່ຖືກກຳນົດໂດຍສົນທິສັນຍາສາກົນ: ຖະແຫຼງການຂອງ UN ໃນປີ 1986 ກ່ຽວກັບການພັດທະນາທີ່ຖືກຕ້ອງ, ຖະແຫຼງການ ຣີໂອ ໃນປີ 1992 ກ່ຽວກັບສິ່ງແວດລ້ອມ ແລະການພັດທະນາ, ຖະແຫຼງການ ILO ໃນປີ 1998 ກ່ຽວກັບຫຼັກການພື້ນຖານ ແລະສິດທິຕ່າງໆໃນການເຮັດວຽກ, ຖະແຫຼງການສະຫະສະວັດໃນປີ 2000 ຂອງສະຫະປະຊາຊາດ, ແລະຖະແຫຼງການ ຈໍແຮນເນສະເບີກ 2002 ກ່ຽວກັບການພັດທະນາແບບຍືນຍົງ. ລາຍລະອຽດເບິ່ງຢູ່ໃນ, http://www.brecorder.com/articles-a-letters/187:articles/12575 28:gsp-plus-status-what-does-it-imply/?date=2014-12-30.

48 ໃນສ່ວນນີ້ແມ່ນໄດ້ອີງໃສ່ 'ຂໍ້ມູນສ່ວນນ້ອຍໜຶ່ງ' ຂອງການສົ່ງອອກ, ໝາຍຄວາມວ່າແມ່ນຂໍ້ມູນທີ່ໄດ້ຮອບຮອມມາຈາກການສົ່ງອອກຂອງ ສປປ ລາວ ໄປສູ່ປະເທດອື່ນ. ອັນນີ້ກໍ່ຍ້ອນວ່າຂໍ້ມູນການສົ່ງອອກທີ່ເປັນທາງການຂອງ ສປປ ລາວ ແມ່ນຍັງຈະຕ້ອງໄດ້ຖ້າໃຫ້ມີການຄຳນວນອີກຫຼາຍໆຢ່າງຢູ່ດົນ ແລະຍັງບໍ່ທັນໄດ້ນຳເອົາມາໃຊ້ໄດ້ເທື່ອ, ແລະອົງການຂອງລັດຖະບານກໍ່ຍັງບໍ່ທັນໄດ້ອະນຸຍາດໃຫ້ສາມາດນຳໃຊ້ຂໍ້ມູນເຫຼົ່ານີ້ໄດ້ເທື່ອ.

49 ເບິ່ງຢູ່ໃນ, YIN (2012).

50 ອັນທະນາ ບໍລິນທາ ແລະ Jajri (2015).

51 ເບິ່ງຂໍ້ຫ້າມນີ້ຢູ່ໃນ http://pbc.org.pk/a-road-map-for-optimizing-pakistans-gsp-plus-status/

52 ການແຍກຂໍ້ມູນກາເຟອອກເປັນອັນສະເພາະຢ່າງດຽວ ແມ່ນບໍ່ສາມາດເຮັດໄດ້ ເພາະມັນໄດ້ຖືກລວມເຂົ້າກັບຊາ ແລະເຄື່ອງເທດ, ແຕ່ວ່າການພິຈາລະນາຢ່າງຖີ່ຖ້ວນໃກ້ສິດນັ້ນ ໄດ້ສະແດງໃຫ້ເຫັນວ່າສ່ວນປະກອບຂອງກາເຟແມ່ນກວມເອົາຫຼາຍກວ່າ 78% ຢູ່ໃນກຸ່ມດັ່ງກ່າວ (ກາເຟ+ເຄື່ອງເທດ). ສຳລັບລາຍລະອຽດກ່ຽວກັບຂະແໜງການກາເຟ ຢູ່ໃນ ສປປ ລາວ, ຍັງສາມາດເບິ່ງຢູ່ໄດ້ໃນ South-ichack (2009).

53 ເບິ່ງຢູ່ໃນຜົນການເກັບກ່ຽວທີ່ຂື້ນຂົມຂອງຜູ້ປູກກາເຟ, Asia News Network, Oct 24, 2013; ແລະ Chapman (n.d.).

54 ເບິ່ງຢູ່ໃນຖ້ອຍຄຳທີ່ຄັດມາຈາກ http://www.bloomberg.com/news/articles/2014-03-12/coffee-cravers-ig-no ring - bean-price-surge-for-caffeine-fix.

55 ໂຄງສ້າງກ່ຽວກັບການຊ່ວຍເຫຼືອຢູ່ໃນແຜນງານຕ່າງໆ ກ່ຽວກັບການດຳເນີນງານສຳລັບ LDCs ທີ່ໄດ້ສັງລວມໄວ້ຢູ່ໃນ ເອກະສານຊ້ອນທ້າຍ 2.2.

56 ສ່ວນນີ້ແມ່ນເລີ່ມຕົ້ນດ້ວຍຄວາມລະມັດລະວັງ ແລະຮອບຄອບ: ຂໍ້ມູນທີ່ໄດ້ສະແດງຢູ່ໃນສ່ວນນີ້ ແມ່ນເອົາມາຈາກຖານຂໍ້ມູນຂອງເວທີການສົນທະນາກ່ຽວກັບການຊ່ວຍເຫຼືອ (AMP). ບັນດາຂໍ້ມູນເຫຼົ່ານີ້ອາດຈະບໍ່ໄດ້ລວມເອົາແຫຼ່ງ ຫຼືການນຳໃຊ້ການຊ່ວຍເຫຼືອທັງໝົດທີ່ປະເທດໄດ້ຮັບກໍ່ເປັນໄດ້. ບັນດາຄູ່ຮ່ວມພັດທະນາ (DPs) ໄດ້ໂອນທຶນສຳລັບການຈັດຕັ້ງປະຕິບັດໂຄງການ ໃຫ້ແກ່ບັນດາອົງການຕ່າງໆທີ່ແຕກຕ່າງກັນ: ກະຊວງການເງິນ (ຕົວຢ່າງ: ແມ່ນຜ່ານຂະບວນການງົບປະມານ), ກະຊວງຕ່າງໆ, ບັນດາແຂວງ ຫຼືແມ່ນແຕ່ບັນດາບໍລິສັດ ແລະຄູ່ສັນຍາຕ່າງໆ ທີ່ເປັນຜູ້ຈັດຕັ້ງປະຕິບັດໂຄງການໂດຍກົງ. ການຄຳນວນກ່ຽວກັບການໄຫຼເຂົ້າຂອງທຶນເຫຼົ່ານີ້ຈາກບັນດາອົງການຮ່ວມມືຫຼາຍຝ່າຍໃຫ້ໄດ້ທັງໝົດນັ້ນ ມັນບໍ່ແມ່ນເລື່ອງງ່າຍປານໃດ, ໂດຍສະເພາະແມ່ນໃນເມື່ອທີ່ແບບຟອມການລາຍງານມີຄວາມແຕກຕ່າງກັນ (ບໍ່ຄືກັນ) ຢູ່ໃນປະເທດຕ່າງໆ. ເບິ່ງຢູ່ໃນ http://ppamp.mpi.gov.la/portal/.

57 ເບິ່ງຢູ່ໃນ GOL (2015).

58 ກອງທຶນຊ່ວຍເຫຼືອ ແມ່ນຖືກສ້າງຂຶ້ນໂດຍບັນດາອົງການປະເທດຄູ່ຮ່ວມພັດທະນາ ແລະໄດ້ມອບໝາຍໃຫ້ປະເທດທີ່ຮັບທຶນນັ້ນເປັນຜູ້ຄຸ້ມຄອງໂຄງການຢ່າງເປັນເອກະລາດ. ຕາມປົກກະຕິແລ້ວ, ກອງທຶນເຫຼົ່ານີ້ ແມ່ນພວກມັນໄດ້ມີການປະກອບສ່ວນມາຈາກຫຼາຍແຫຼ່ງ ແລະກອງທຶນຕ່າງໆເຫຼົ່ານັ້ນແມ່ນໃຫ້ໂດຍການມຸ່ງໝາຍເພື່ອຈຸດປະສົງສະເພາະໃດໜຶ່ງ ເຊັ່ນ: ເພື່ອການບັນລຸບັນດາເປົ້າໝາຍ MDG, ການຕໍ່ສູ້ກັບພະຍາດ AIDS ແລະອື່ນໆ. ກອງທຶນຊ່ວຍເຫຼືອຕ່າງໆເຫຼົ່ານີ້ ແມ່ນໄດ້ໃຫ້ເປັນທັງເງິນກູ້ ແລະເງິນຊ່ວຍເຫຼືອລ້ານໍາ ຊຶ່ງພວກມັນຍັງຮັບໃຊ້ໃຫ້ແກ່ຈຸດປະສົງສະເພາະຕ່າງໆ ທີ່ເປັນການຍາກເພື່ອໃຫ້ບັນລຸຕາມຈຸດປະສົງ ຫຼືຄວາມຕ້ອງການຂອງການຊ່ວຍເຫຼືອຫຼາຍຝ່າຍ.

59 ເນື່ອງຈາກການວິນິດໄສແມ່ນຍັງບໍ່ໄດ້ຕົກລົງແນ່ນອນ, ຍ້ອນສະພາບຖານຂໍ້ມູນຍັງບໍ່ທັນສົມບູນ ຄືດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

60 ເຖິງຢ່າງໃດກໍ່ຕາມ, ທັງ 8 ສາຂາວິຊາຊີບເຫຼົ່ານີ້ ເຊັ່ນ: ບັນດາທ່ານໝໍ, ໝໍປົວແຂ້ວ, ພະຍາບານ, ນັກສະຖາປານິກ, ນັກວິຊາວະກອນ, ນັກບັນຊີ, ນັກສຳຫຼວດ ແລະນັກວິຊາຊີບດ້ານການທ່ອງທ່ຽວ ແມ່ນກວມເອົາພຽງແຕ່ 1,5% ຂອງກຳລັງແຮງງານທັງໝົດໃນ ASEAN. ບັນດາຂໍ້ຕົກລົງກ່ຽວກັບການຮັບຮູ້ຮ່ວມກັນຂອງ (MRAs) ແມ່ນຍັງບໍ່ສາມາດເຮັດໃຫ້ວິຊາຊີບເຫຼົ່ານີ້ ເຄື່ອນຍ້າຍຢ່າງເສລີຢູ່ໃນ ASEAN ໄດ້ຢ່າງສົມບູນແບບເທື່ອ, ເນື່ອງຈາກຫຼາຍປະເທດຍັງກຳນົດໃຫ້ເປັນວິຊາຊີບບຸລິມະສິດແກ່ພົນລະເມືອງຂອງເຂົາເຈົ້າເອງ.

61 ເບິ່ງຢູ່ໃນ, Das et al. (eds) (2014).

62 ແຮງງານທີ່ມີສີມືຈາກອາຊີ ເຊັ່ນ: ຈາກຈີນ, ອິນເດຍ ແລະບັນດາປະເທດໃນເຂດອາຊີໃຕ້ ແມ່ນໄດ້ເຄື່ອນຍ້າຍເຂົ້າໄປສູ່ບັນດາປະເທດຕາເວັນຕົກ ເພື່ອຊອກຫາແຫຼ່ງລາຍຮັບທີ່ສູງກວ່າ, ຊຶ່ງການເຄື່ອນຍ້າຍຂອງຜູ້ຄົນທີ່ມີສີມືເຫຼົ່ານັ້ນ ແມ່ນເນື່ອງຈາກ ຫຼືເປັນຍ້ອນຄວາມເປັນຈິງທີ່ເຂົາເຈົ້າໄດ້ທົດລອງມາແລ້ວ. ແມ່ນແຕ່ປະເທດສິງກະໂປ ກໍ່ສູນເສຍແຮງງານທີ່ມີສີມືໃຫ້ແກ່ບັນດາປະເທດຕາເວັນຕົກ.

63 ເບິ່ງຢູ່ໃນ Lindsay, B. Lowell ແລະ Allan Findlay (2001) "ການອອກໄປຂອງຜູ້ຄົນທີ່ມີສີມືສູງຈາກບັນດາປະເທດກຳລັງພັດທະນາ: ຜົນກະທົບ ແລະນະໂຍບາຍທີ່ຕອບຮັບ", ເອກະສານ ຫຼືບົດລາຍງານການເຄື່ອນຍ້າຍອອກຂອງສາກົນ, ເລກທີ 44, ILO. Louka T. Katseli, Robert E.B. Lucas ແລະ Theodora Xenogiani (2006) "ຜົນກະທົບກ່ຽວກັບການເຄື່ອນຍ້າຍອອກຂອງບັນດາປະເທດທີ່ສົ່ງອອກແຮງງານ: ພວກເຮົາຮູ້ຫຍັງແດ່ໃນປັດຈຸບັນນີ້?, ການແບ່ງປັນປະຊາກອນ, ກົມກິດຈະການເສດຖະກິດ-ສັງຄົມ ຂອງກອງເລຂາສະຫະປະຊາຊາດ, UN/POP/MIG/SYMP/2006/11/Rev.

64 ບັນດາອົງປະກອບຂອງການສຶກສາ (ໂຮງຮຽນມັດທະຍົມ) ແລະບັນດາຕົວຊີ້ບອກດ້ານສາທາລະນາສຸກ (ການໂພສະນາການ ແລະອັດຕາການຕາຍຂອງເດັກອາຍຸ) ແມ່ນປະກອບດ້ວຍ HAI ຢູ່ໃນບັນດາຕົວດັດຊະນີ LDC. ອ້າງຢູ່ໃນພາກສະເໜີ.

65 ສິດທີ່ຕໍ່ກັບການພັດທະນາ ແມ່ນໄດ້ຖືກປະກາດຢູ່ໃນຖະແຫຼງການກ່ຽວກັບສິດທີ່ຕໍ່ກັບການພັດທະນາ ທີ່ຖືກຮັບຮອງເອົາ ໃນປີ 1986 ໂດຍສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ (GA) ຢູ່ໃນມະຕິເລກທີ 41/128 ຂອງມັນ. "ສິດທີ່ຕໍ່ກັບການພັດທະນາແມ່ນສິດທິມະນຸດທີ່ບໍ່ສາມາດໂອນກັນໄດ້ ເນື່ອງຈາກວ່າມະນຸດທຸກຄົນ ແລະປະຊາຊົນທັງໝົດ ແມ່ນມີສິດເຂົ້າຮ່ວມ, ປະກອບສ່ວນ ແລະໄດ້ຮັບການພັດທະນາທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ ແລະການເມືອງ, ຊຶ່ງສິດທິ ແລະເສລີພາບຂັ້ນພື້ນຖານຕ່າງໆຂອງມວນມະນຸດທັງໝົດ ແມ່ນສາມາດເປັນຈິງຢ່າງເຕັມສ່ວນ". (ມາດຕາ 1.1, ຖະແຫຼງການກ່ຽວກັບສິດທິໃນການພັດທະນາ).

66 ທະນາຄານໂລກ (2014).

67 ກະຊວງສຶກສາ ແລະກິລາ (MOES) ໄດ້ເກັບກຳ ແລະສົມທຽບຂໍ້ມູນຂອງໂຮງຮຽນ ໂດຍອີງໃສ່ການບັນທຶກຂອງໂຮງຮຽນ ຊຶ່ງອັນນີແມ່ນເປັນສ່ວນໜຶ່ງໃນລະບົບຕິດຕາມ ແລະປະເມີນຜົນຂອງມັນ ແລະຂໍ້ມູນນີ້ແມ່ນມີຢູ່ໃນລະບົບຄຸ້ມຄອງຂໍ້ມູນຂ່າວສານດ້ານການສຶກສາຂອງພາກລັດ (EMIS), ຊຶ່ງ EMIS ອາດຈະມີການປະເມີນຄ່າການເຂົ້າຮຽນສູງໂພດ, ເນື່ອງຈາກວ່າມັນມີການຈົດທະບຽນເຂົ້າຮຽນຫຼາຍແທ້ ແຕ່ຕົວຈິງແລ້ວພັດບໍ່ໄດ້ມາເຂົ້າຮຽນ.

68 ການສຳຫຼວດຕົວຊີ້ວັດທາງສັງຄົມຂອງ ສປປ ລາວ (LSIS) 2010-2011 ໄດ້ລາຍງານວ່າ ຈຳນວນ ຕົວເລກນັ້ນແມ່ນມີຄວາມຄ້າຍຄືກັນກັບ LECS ຢູ່ທີ່ 37%, ແຕ່ໃນ LECS-5 ໄດ້ລາຍງານວ່າ ຈຳນວນຕົວເລກນັ້ນແມ່ນຫຼຸດລົງກວ່າ LSIS . ສ່ວນໜຶ່ງຂອງເຫດຜົນນັ້ນ ອາດຈະແມ່ນຍ້ອນຄວາມແຕກຕ່າງຂອງປີທີ່ມີການສຳຫຼວດ (ລະຫວ່າງ LSIS ແລະ LECS) ແລະອີກສ່ວນໜຶ່ງອາດຈະກ່ຽວຂ້ອງກັບຄຳນິຍາມກໍ່ເປັນໄດ້ ຕົວຢ່າງ: LECS, ໄດ້ຖາມບັນດາຜູ້ຕອບກ່ຽວກັບຈຳນວນເດັກນ້ອຍທີ່ກຳລັງ ຮຽນຢູ່ໃນໂຮງຮຽນໃນມື້ທີ່ສຳພາດນັ້ນຫຼືບໍ່? ຊຶ່ງມັນຈະບໍ່ຄືກັນກັບຈຳນວນທີ່ເອົາມາຈາກການຈົດທະບຽນໃນໂຮງຮຽນ.

69 ການສຸຂະອະນາໄມລວມທີ່ນຳໂດຍຊຸມຊົນ (LSIS) 2010-2011 ແມ່ນວິທີໜຶ່ງທີ່ປະສົບຜົນສຳເລັດໃນປ່ຽນແປງທັດສະນະຄະຕິຂອງຜູ້ຄົນ ຕົ້ນຕໍແມ່ນຜູ້ທີ່ຢູ່ໃນເຂດຊົນນະບົດ ດ້ວຍຂະບວນການຈູດສະນວນການນຳພາເພື່ອໃຫ້ເກີດຂຶ້ນໂດຍທຳມະຊາດ ແລະດ້ວຍຄວາມສະໝັກໃຈໃນການຈັດຕັ້ງປະຕິບັດໃນໄລຍະຍາວ, ຊຶ່ງມັນໄດ້ຖືກນຳມາໃຊ້ເປັນເທື່ອທຳອິດໂດຍ Kamal Kar ຢູ່ໃນປະເທດບັງກະລາເດດ ໃນປີ 2000. ອົງການ UNICEF ກໍໄດ້ນຳໃຊ້ແຜນງານປຸກລະດົມສິ່ງເສີມທີ່ຄ້າຍຄືກັນນີ້ຢູ່ໃນ ສປປ ລາວ ເຊັ່ນ: WASH (Water, Sanitation and Hygiene). ສຳລັບລາຍລະອຽດກ່ຽວກັບການປຸກລະດົມສິ່ງເສີມນີ້ ແມ່ນເບິ່ງຢູ່ໃນ http://www.unicef.org/laos/RAISING_CLEAN_HAND_IN_LAO_PDR_WEB.pdf.

70 ແຫຼ່ງຂໍ້ມູນ: ຖານຂໍ້ມູນຂອງ EMIS.

71 ບັນດາການສຶກສາຢູ່ໃນປະເທດອື່ນໆໄດ້ຊີ້ໃຫ້ເຫັນວ່າ ເດັກນ້ອຍທີ່ມີອາຍຸເກີນຕັດສິນໃຈອອກໂຮງຮຽນ ແມ່ນຍ້ອນການຂາດສານອາຫານ, ສຸຂະພາບທີ່ບໍ່ແຂງແຮງ, ປັດໃຈຕ່າງໆທາງດ້ານວັດທະນະທຳ, ຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການສຶກສາ, ແລະ ເດັກນ້ອຍເຫຼົ່ານີ້ມັກຈະອອກຈາກບ້ານຢູ່ໃນລະຫວ່າງກຸ່ມທີ່ໜຸ່ມກວ່າ. ເບິ່ງຢູ່ໃນ Akyeampong, Westbrook ແລະ Hunt (2010).

72 ໂຮງຮຽນທີ່ບໍ່ສົມບູນ ແມ່ນໝາຍເຖິງອາຄານໂຮງຮຽນທີ່ບໍ່ສົມບູນ, ບໍ່ມີຫ້ອງນ້ຳ ຫຼືນ້ຳ ແລະອື່ນໆ.

73 ແຫຼ່ງຂໍ້ມູນ: ການສໍາພາດຜູ້ໃຫ້ຂໍ້ມູນທີ່ສໍາຄັນ ໂດຍແມ່ນພະນັກງານຂອງພະແນກສຶກສາ ແລະກິລາ, ແຂວງຊຽງຂວາງ.

74 ຄູຄົນດຽວທີ່ສອນຫຼາຍຫ້ອງ, ບັນດານາຍຄູທີ່ສອນນັກຮຽນຫ້ອງ ປ1 ທັງສອນຫຼາຍວິຊາ ຢູ່ໃນຫ້ອງດຽວກັນ ແລະໃນເວລາດຽວກັນ.

75 ອັນນີ້ແມ່ນອີງຕາມການສໍາພາດຜູ້ໃຫ້ຂໍ້ມູນທີ່ສໍາຄັນ ໂດຍພະນັກງານຂອງພະແນກສຶກສາ ແລະກິລາ, ແຂວງຊຽງຂວາງ.

76 ຂໍ້ຄວນລະມັດລະວັງ: ຕົວເລກຂອງ LECS-5 ແມ່ນບໍ່ສອດຄ້ອງກັບຕົວເລກຈາກ EMIS; ສະນັ້ນ, ການສົມທຽບຕົວເລກຂາດຕົວ ຫຼືການລວມຂໍ້ມູນເຂົ້າກັນ ແມ່ນຄວນຈະຕ້ອງຫຼີກລ້ຽງ.

77 ຜູ້ໃຫ້ຂໍ້ມູນທີ່ສໍາຄັນ ຢູ່ໃນ ແຂວງຊຽງຂວາງ ແລະເຊກອງ ໄດ້ແຈ້ງໃຫ້ບັນດານັກຄົ້ນຄວ້າຮູ້ວ່າ ເດັກນ້ອຍທີ່ຕ້ອງອອກຈາກໂຮງຮຽນມັດທະຍົມຕົ້ນນັ້ນ ແມ່ນເຂົາເຈົ້າຕ້ອງການຊ່ວຍເຫຼືອໃນການແກ້ໄຂຊີວິດການເປັນຢູ່ຂອງຄົວເຮືອນເຂົາເຈົ້າ. ຜູ້ປົກຄອງຈາກບັນດາຄົວເຮືອນທີ່ທຸກຍາກ ແມ່ນບໍ່ໄດ້ມອງເຫັນຜົນປະໂຫຍດໃນອະນາຄົດຂອງການສຶກສາໃນລະດັບທີ່ສູງຂຶ້ນແຕ່ຢ່າງໃດ ຍ້ອນວ່າຂອບເຂດເວລາຂອງເຂົາເຈົ້າແມ່ນຂ້ອນຂ້າງສັ້ນ ແລະພື້ນຖານຄວາມຮູ້ກ່ຽວກັບຕະຫຼາດແຮງງານຂອງເຂົາເຈົ້າແມ່ນຈໍາກັດຫຼາຍ. ພ້ອມກັນນັ້ນ, ວັດທະນະທໍາຂອງບາງຊຸມຊົນໆເຜົ່າ ແມ່ນຮຽກຮ້ອງໃຫ້ເພດຍິງຈະຕ້ອງໄດ້ແຕ່ງງານຢູ່ໃນໄວອາຍຸໜຸ່ມ. ເພາະສະນັ້ນ, ຍິງໜຸ່ມຊົນເຜົ່າຈຶ່ງມັກຖືກບັງຄັບໃຫ້ອອກຈາກໂຮງຮຽນ.

78 ແຜນງານການຮູ້ໜັງສືຂອງຜູ້ໃຫຍ່ເທື່ອທໍາອິດ ແມ່ນເລີ່ມຕົ້ນຂຶ້ນໃນຊຸມປີ 1990 ແລະສືບຕໍ່ຈົນຮອດປີ 2010. ມັນມີຂໍ້ມູນທີ່ບໍ່ພຽງພໍກ່ຽວກັບຜົນການດໍາເນີນງານຂອງແຜນງານນີ້ ຍ້ອນວ່າມັນບໍ່ມີການປະເມີນຜົນບົດລາຍງານການສຶກສາທີ່ເປັນເອກະລາດຢ່າງເປີດເຜີຍ ທີ່ເອົາມາໃຊ້ໄດ້. ນອກຈາກນັ້ນ, EMIS ກໍ່ບໍ່ໄດ້ມີການເກັບກໍາຂໍ້ມູນກ່ຽວກັບເລື່ອງນີ້. ເຖິງຢ່າງໃດກໍ່ຕາມ, ມັນເບິ່ງຄ້າຍກັບວ່າແຜນງານນີ້ ແມ່ນບໍ່ມີຜົນສໍາເລັດເທົ່າທີ່ຄວນ ເນື່ອງຈາກອັດຕາການຮູ້ໜັງສືຂອງຜູ້ໃຫຍ່ແມ່ນຍັງສືບຕໍ່ຂ້ອນຂ້າງຕໍ່າຢູ່ ຊຶ່ງສາມາດເຫັນໄດ້ຈາກການສໍາຫຼວດປະຊາກອນ ແລະຜົນຂອງການສໍາຫຼວດອື່ນໆ.

79 ເອກະສານຊ້ອນທ້າຍ 3.1 ປະກອບດ້ວຍບົດຄັດຫຍໍ້ກ່ຽວກັບສະຖານະພາບຂອງພະຍາດອື່ນໆ.

80 ເອກະສານອ້າງອີງ ແມ່ນເຮັດຕາມ MDGs ຊຶ່ງບໍ່ແມ່ນ SDGs ເນື່ອງຈາກຂໍ້ມູນແມ່ນຮອດແຕ່ປີ 2015. ອີກອັນໜຶ່ງ, ແມ່ນເປົ້າໝາຍ ໃໝ່ລະດັບຊາດກ່ຽວກັບ SDGs ແມ່ນຍັງບໍ່ທັນໄດ້ຕັ້ງໄວ້.

81 ບັນດາສິ່ງຢືນຢັນເຫຼົ່ານີ້ ແມ່ນອີງໃສ່ບັນດາບົດລາຍງານຕ່າງໆຂອງລັດຖະບານ ແລະສູນສະຖິຕິແຫ່ງຊາດ.

82 ແຫຼ່ງຂໍ້ມູນ: Pimhidzai et al (2014).

83 ເບິ່ງຢູ່ໃນ ສຄສ/NERI (2014. ໜ. 10).

84 ເບິ່ງຢູ່ໃນ ສຄສ/NERI (2014), op cit.

85 ບົດລາຍງານກ່ຽວກັບການສ້າງບ້ານສາທາລະນາສຸກ 2013-2014, ສປປ ລາວ, ກົມສົ່ງເສີມສຸຂະອະນາໄມ ແລະສຸຂະພາບ. ADB ໄດ້ພະຍາຍາມເຊື່ອມໂຍງໂຄງການສຸຂາພິບານ ເຂົ້າກັບໂຄງການບ້ານຕົວແບບ; ເບິ່ງຢູ່ໃນ ADB (2015).

86 ໂຄງການນີ້ແມ່ນມີສີ່ອົງປະກອບຕົ້ນຕໍ: (i) ການເພີ່ມທະວີຄວາມອາດສາມາດຂອງບ້ານໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງບັນດາກິດຈະກໍາດູແລຮັກສາສຸຂະພາບຂັ້ນຕົ້ນ; (ii) ການປັບປຸງໂຄງລ່າງພື້ນຖານຂອງບ້ານ ກ່ຽວກັບ ‘ສິ່ງແວດລ້ອມຕ່າງໆທີ່ມີສຸຂະພາບເຂັ້ມແຂງ’; (iii) ການເພີ່ມທະວີຂີດຄວາມອາດສາມາດຂອງບັນດາເມືອງສູນ ແລະບັນດາສູນສຸຂະພາບ ເພື່ອສະໜັບສະໜູນສຸຂະພາບຂັ້ນຕົ້ນຢູ່ໃນລະດັບບ້ານ; ແລະ(iv) ໂຄງການການຄຸ້ມຄອງ ແລະການປະສານງານ.

87 ເບິ່ງຢູ່ໃນ Rosenblatt ແລະ Hart (2000); Washburn ແລະ Brown (2015).

88 ສ່ວນນນີ້ແມ່ນດຶງມາຈາກຫຼາຍແຫຼ່ງຂອງລັດຖະບານ (2009). ຂໍ້ມູນນີ້ແມ່ນເປັນຂອງປີ 2006, ສ່ວນຂໍ້ມູນຫຼັງນັ້ນ ແມ່ນບໍ່ສາມາດຫາໄດ້ ເນື່ອງຈາກ LSIS ບໍ່ສາມາດດຶງຂໍ້ມູນກ່ຽວກັບການຂາດອາຫານຂອງຜູ້ໃຫຍ່ອອກມາຢ່າງເປີດເຜີຍເປັນທາງການໄດ້.

89 ຂໍ້ມູນ LSIS 2010-2011 ໄດ້ຊີ້ໃຫ້ເຫັນວ່າ ປະມານ 59% ຂອງເດັກນ້ອຍ ແມ່ນໄດ້ຮັບການສະໜອງດ້ານໂພຊະນາການເພີ່ມຂຶ້ນໃນປີນັ້ນ. ມັນຫວັງວ່າອັນນີ້ຈະຖືກຫຼຸດລົງຍ້ອນການຂາດແຄນວິຕາມິນ A.

90 ໄດ້ມີການເຮັດທົດລອງຢູ່ໃນອາຟຣິກາ ກ່ຽວກັບການທົດລອງປ່ຽນແປງສິ່ງເສດເຫຼືອຈາກມະນຸດໃຫ້ເປັນຝຸ່ນ. ເບິ່ງຢູ່ໃນ http://www. scidev.net/global/agriculture/multimedia/human-waste-disease-free-fertiliser.html.

91 ແຫຼ່ງຂໍ້ມູນ: ບົດລາຍງານຂອງກະຊວງສາທາລະນາສຸກ, 2013-2014, ແຜນການຈັດຕັ້ງປະຕິບັດ, Plan Implementation, ສູນ ສຶກສາຫາສາເຫດກ່ຽວກັບຕົ້ນກໍາເນີດຂອງພະຍາດ, ແມງໄມ້ ແລະການຄວບຄຸມພະຍາດໄຂ້ມາເລເຣຍ, ນະຄອນຫຼວງວຽງຈັນ.

92 ການທີ່ມີຈໍານວນປະຊາກອນໜ້ອຍນັ້ນແມ່ນບໍ່ເປັນບັນຫາ, ຖ້າບັນດາປະເທດຕ່າງໆທີ່ກຽວຂ້ອງຫາກມີການເຊື່ອມໂຍງທີ່ດີເຂົ້າກັບບັນ ດາລາຍການອື່ນໆຂອງກັບຕະຫຼາດ, ການຂົນສົ່ງ, ການສື່ສານ ແລະ ອື່ນໆ. ບາງບັນດາປະເທດທີ່ພັດທະນາແລ້ວ ເຊັ່ນ: ສະວິສ໌,

ສະວີເດນ, ນໍອກແວ໌, ແຟງລັງ, ໄອແລນ, ແດນມາກ ແລະ ລຸກຊໍາບຸກ ກໍ່ມີຈໍານວນປະຊາກອນໜ້ອຍເຊັ່ນກັນ (<10 ລ້ານຄົນ).

93 ພາບລວມໂດຍຫຍໍ້ຂອງການກະສິກໍາຢູ່ໃນ ສປປ ລາວ, ເບິ່ງຢູ່ໃນເອກະສານຊ້ອນທ້າຍທີ 4.1.

94 ເບິ່ງຢູ່ໃນ Zhang, Yang ແລະ Reardon (2015); Mandal ແລະ Maity (2013); ແລະ Goyle (2013)

95 ຂໍ້ມູນກ່ຽວກັບຊົນລະປະທານຕໍ່ກັບດິນກະສິກໍາທັງໝົດ ແມ່ນຍັງບໍ່ທັນສາມາດຫາໄດ້ຢູ່ໃນວົງການຂອງລັດ ຊຶ່ງທີ່ມີຢູ່ນີ້ກໍ່ແມ່ນພຽງແຕ່ຊົນລະປະທານຮັບໃຊ້ນາເຂົ້າເທົ່ານັ້ນ.

96 ເຖິງແມ່ນວ່າເຮົາຢູ່ໃນເງື່ອນໄຂທີ່ມີຝົນຕົກຫຼາຍກໍ່ຕາມ ແຕ່ການທີ່ຈະເຮັດໃຫ້ມີຜົນຜະລິດສູງນັ້ນ ກໍ່ຍັງມີຄວາມຕ້ອງການຊົນລະປະທານຢູ່ກ່ອນບ່ອນທີ່ພືດນັ້ນຈະແຫ້ງ (ກ່ອນການເກັບກ່ຽວ) ຫຼືວ່າໃນເມື່ອຝົນຟ້າມາຊ້າກ່ອນລະດູການໜ້ອຍໜຶ່ງ; ເບິ່ງຢູ່ໃນ Barker ແລະ Molle (2004). ຢູ່ໃນຫວຽດນາມ ທີ່ດິນກະສິກໍາສໍາລັບການປູກເຂົ້າ ທີ່ໄດ້ຮັບນໍ້າຊົນລະປະທານນັ້ນແມ່ນມີເກີນກວ່າ 80%, ຢູ່ໃນ ໄທ ກໍ່ປະມານ 25%, ຢູ່ກໍາປູເຈຍ ແມ່ນ 35%. ຜົນຜະລິດເຂົ້າຢູ່ໃນຫວຽດນາມແມ່ນໄດ້ເຖິງ 4-5 ໂຕນ/ເຮັກຕາ.

97 ໂຄງການເຄື່ອນຊົນລະປະທານທີ່ໃຫຍ່ (ທີ່ອີງໃສ່ແຮງດຶງດູດ) ແມ່ນມັນມີປະໂຫຍດຫຼາຍ, ຖ້າພື້ນທີ່ຄອບຄຸມຫາກເປັນເຂດທົ່ງພຽງເກືອບທັງໝົດ ຫຼື ມີຄວາມຄ້ອຍຊັນບໍ່ຫຼາຍ ແລະ ບ່ອນເກັບນໍ້າທໍາມະຊາດແມ່ນມາຈາກແມ່ນໍ້າ ຫຼື ນໍ້າທີ່ໄຫຼເຂົ້າຈາກຄັ້ນໜ້າດິນທີ່ຕັ້ງຢູ່ທາງເໜືອ; ແຕ່ພື້ນທີ່ຄອບຄຸມຂອງ ສປປ ລາວ ສ່ວນໃຫຍ່ພັດບໍ່ເປັນຄືທີ່ວ່ານີ້.

98 ຕົວຢ່າງ: ສໍາລັບພືດພຶດສວນ ແລະ ໝາກໄມ້ (ໝາກແຂແຊ້ງ) ແມ່ນຊົນລະປະທານແບບນໍ້າຢອດນັ້ນແມ່ນດີທີ່ສຸດ.ຊົນລະປະທານແບບສະປຣິງເກີນັ້ນ ແມ່ນເໝາະສົມສໍາລັບການປູກເປັນແຖວ (ເປັນໝານ), ເປັນທົ່ງ ແລະ ພືດຢືນຕົ້ນ ຢູ່ໃນທີ່ໆນໍ້າສາມາດສີດປົກຄຸມໄປທົ່ວ ຫຼື ພືດທີ່ປູກຢູ່ໃນຮົ່ມ.

99 ມັນບໍ່ເປັນຄືແນວນັ້ນ, ບັນດາຊາວກະສິກອນຂອງ ສປປ ລາວ ແມ່ນບໍ່ຄ່ອຍຮູ້ຄຸນຄ່າຄວາມສໍາຄັນຂອງວິທີການຊົນລະປະທານຂະໜາດ ນ້ອຍ ແລະ ຂະໜາດກາງພໍປານໃດ. ໂຄງສ້າງຊົນລະປະທານແບບທ້ອງຖິ່ນສໍາລັບທົດເນື້ອທີ່ຂະໜາດນ້ອຍ ໃນລະຫວ່າງ 5-10 ເຮັກຕາ ທີ່ໄດ້ມີການກໍ່ສ້າງມາກ່ອນນີ້ ແມ່ນໄດ້ພົບເຫັນຈໍານວນໜ້ອຍໜຶ່ງຢູ່ໃນບັນດາແຂວງພາກເໜືອ ແລະ ພາກຕາເວັນຕົກສ່ຽງເໜືອຂອງປະເທດ, ແຕ່ວ່າໃນປັດຈຸບັນນີ້ແມ່ນບໍ່ຄ່ອຍໄດ້ໃຊ້ແລ້ວ ເນື່ອງຈາກນະໂຍບາຍຂອງລັດແມ່ນມັກຈະສ້າງໂຄງການຊົນລະປະທານທີ່ໃຫຍ່ກວ່າ ຢູ່ໃນສອງສາມປີຜ່ານມາຫຼັງນີ້. ອັນນີ້ແມ່ນການລາຍງານເປັນສ່ວນບຸກຄົນຢູ່ໃນການສົນທະນາກັນ ຢູ່ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ແຫ່ງຊາດ (NAFRI).

100 Limaye (n.d.).

101 ມັນເປັນການງ່າຍທີ່ຈະສະໜອງເງິນກູ້ໃຫ້ແກ່ 100 ໂຄງການ ໂດຍທີ່ແຕ່ລະໂຄງການມີມູນຄ່າ 10.000 ໂດລາສະຫະລັດ, ແຕ່ມັນເປັນການຍາກທີ່ຈະສະໜອງເງິນກູ້ໃຫ້ແກ່ 10.000 ໂຄງການ ໂດຍທີ່ແຕ່ລະໂຄງການມີມູນຄ່າ 100 ໂດລາສະຫະລັດ ຊຶ່ງອັນນີ້ກໍ່ຍ້ອນວ່າມັນມີຕົ້ນທຶນຫຼາຍ ແລະ ເປັນການຍາກສໍາລັບການຕິດຕາມໃນພາຍຫຼັງ ຢູ່ໃນລະບົບທະນາຄານແບບປະເພນີນິຍົມ.

102 ເບິ່ງຢູ່ໃນເວບໄຊຍ໌ຂອງທະນາຄານສົ່ງເສີມກະສິກໍາ: http://apb.com.la/show.php?id=14.

103 ເບິ່ງຢູ່ໃນເວບໄຍ໌ຂອງທະນາຄານ ACLEDA Lao: http://www.acledabank.com.la/la/eng/.

104 ເບິ່ງຢູ່ໃນເວບໄຍ໌ຂອງທະນາຄານ: http://www.nbblao.org/ELVS/home.php.

105 ສໍາລັບຕົວຢ່າງແມ່ນເບິ່ງຢູ່ໃນ Falola, Kayode ແລະ Omonlumhen (2012); ແລະ Rivera ແລະ Cary (2015).

106 ຄວາມຄິດເຫັນຂອງການສົນທະນາທີ່ນໍາໂດຍຄວາມຕ້ອງການ ລະຫວ່າງພະນັກງານສົ່ງເສີມ ແລະ ຊາວກະສິກອນ ທີ່ໄດ້ຮັບຈາກການສົນທະນາກັບອົງການ FAO ຢູ່ໃນ ສປປ ລາວ.

107 ຄວາມແຕກຕ່າງນີ້ບາງທີອາດຈະແມ່ນເນື່ອງມາຈາກຄໍາຖາມທີ່ຖາມໂດຍອົງກອນທີ່ເກັບກໍາຂໍ້ມູນ. ຢູ່ໃນ LECS ແມ່ນໄດ້ຕັ້ງຄໍາຖາມວ່າ 'ພະນັກງານສົ່ງເສີມໄດ້ລົງມາເຮັດວຽກຢູ່ໃນເຮົາບ້ານບໍ?', ໃນຂະນະທີ່ຄໍາຖາມທີ່ຕັ້ງຂຶ້ນຢູ່ໃນການສໍາຫຼວດພັດວ່າ 'ພວກທ່ານໄດ້ຮັບການແນະນໍາທາງດ້ານເຕັກນິກມາຈາກໃສ...?'.

108 ໄດ້ມີຄວາມພະຍາຍາມເພື່ອຕັ້ງຖິ່ນຖານໃໝ່ໃຫ້ແກ່ບັນດາຊຸມຊົນທີ່ມີການເຮັດໄຮ່ເລື່ອນລອຍ ໂດຍນໍາເອົາປະຊາຊົນເຫຼົ່ານັ້ນອອກຈາກພື້ນທີ່ພູດອຍ ເພື່ອສ້າງຕັ້ງຖິ່ນຖານທີ່ຢູ່ອາໄສໃໝ່ຢູ່ໃນເຂດທົ່ງພຽງ. ເຖິງຢ່າງໃດກໍ່ຕາມ, ຄວາມພະຍາຍາມນີ້ແມ່ນບໍ່ປະສົບຜົນສໍາເລັດເທົ່າທີ່ຄວນ ເນື່ອງຈາກປະຊາຊົນທີ່ຍ້າຍມາຕັ້ງຖິ່ນຖານໃໝ່ນີ້ ແມ່ນມີຄວາມຄິດ ແລະ ຄວາມຮູ້ກ່ຽວກັບວ່າຈະຄຸ້ມຄອງທີ່ດິນ ແລະ ລ້ຽງສັດຢູ່ໃນເຂດທົ່ງພຽງໄດ້ຄືແນວໃດນັ້ນໜ້ອຍເກີນໄປ. ການທີ່ບໍ່ມີເຄື່ອງປ່າຂອງດົງຢູ່ໃນເຂດທົ່ງພຽງນັ້ນ ໄດ້ເຮັດໃຫ້ການດໍາລົງຊີວິດຂອງເຂົາເຈົ້າຂີ້ຮ້າຍລົງ. ຍ້ອນການປະເຊີນກັບບັນຫາເຫຼົ່ານີ້ ໃນບໍ່ດົນເຂົາເຈົ້າກໍ່ກັບຄືນໄປສູ່ເຂດພູດອຍດັ່ງເດີມອີກ. ເບິ່ງຢູ່ໃນ ສຸວັນທອງ(Souvanthong), 1995.

109 ບາງສິ່ງອ້າງອີງທີ່ສໍາຄັນກ່ຽວກັບເລື່ອງນີ້ແມ່ນມີຢູ່ໃນ Timmer (1986); ແລະ Mellor ແລະ Ahmed (1988).

110 ປະມານ 25-30% ຂອງຊາວກະສິກອນຢູ່ໃນ ສປປ ລາວ ແມ່ນໄດ້ມີການຈັດຕັ້ງກັນເປັນກຸ່ມ ຊຶ່ງກຸ່ມເຫຼົ່ານີ້ແມ່ນສາມາດເລີ່ມ

ເຮັດໜ້າ ທີ່ຮ່ວມກັບບາງການຊ່ວຍເຫຼືອຈາກລັດຖະບານຢູ່ໃນລະດັບທ້ອງຖິ່ນ. ເບິ່ງຢູ່ໃນກ່ອງທີ 4.5.

111 ແຜນການ 5 ປີຄັ້ງທີ I (1980-1985) ໄດ້ຖືກຮັບຮອງເອົາໃນປີ 1980.

112 ຖືກຮັບຮອງຢ່າງເປັນທາງການຢູ່ໃນກອງປະຊຸມຄັ້ງປະຖົມມະເລີກຂອງສະພາແຫ່ງຊາດຊຸດທີ VIII, ວັນທີ 20-23 ເມສາ 2016.

113 ບໍ່ສາມາດຫາຂໍ້ມູນໄດ້ ເພາະບໍ່ຮູ້ວ່າມັນຈະສໍາເລັດສົມບູນໃນທ້າຍປີ 2015 ຫຼືບໍ່.

114 Varela, Gonzalo, Claire H. Hollweg ແລະ Laura Gomez-Mera (2016).

115 Schiller, Hatsadong ແລະ Doungsila (2006).

116 ສໍາລັບການວິໄຈທາງວິທະຍາສາດກ່ຽວກັບການເຊື່ອມໂຊມຂອງດິນ, ການເຊາະເຈື່ອນ (ດິນຖະຫຼົ່ມ) ແລະ ໄພພິບັດທາງທໍາມະຊາດ, ເບິ່ງຢູ່ໃນ Mandych (2006).

117 ເບິ່ງຢູ່ໃນທິດທາງຂອງການຕັດໄມ້ທີ່ຜິດກົດໝາຍ ແລະ ການຄ້າທີ່ກ່ຽວພັນກັບມັນ: ມັນມີຄວາມຄືບໜ້າຫຍັງແດ່ ແລະ ຂັ້ນຕໍ່ໄປຈະຢູ່ໃສ? Chatham House, Royal Institute of International Affairs, London 2015: https://www.Cha-tham house.org/publication/tackling-illegal-logging-and-related-trade-what-progress-and-where-next? gclid=Cj0KEQiAv5-zBRCAzfWGu-2jo70BEiQAj_F8oHtoi4TZCrYlMMxrVUKsuGbdY7TWrgpLb_U2_PW3srkaAv338P8HAQ.

118 ເບິ່ງຢູ່ໃນ Vientiane Times, ເດືອນມິຖຸນາ, 2015:http://www.vientianetimes.org.la/FreeContent/FreeConten Timber_smuggling.htm.

119 ການວິໄຈກ່ຽວກັບການພົວພັນທີ່ຖືເອົາປະສົບປະການເປັນຫຼັກ ລະຫວ່າງ ວິກິດການທະນາຄານ ແລະການຫັນເປັນເສລີທາງການເງິນ ຢູ່ໃນຄະນະກໍາມະການຂອງ 53 ປະເທດ ສໍາລັບຊ່ວງໄລຍະປີ 1980-1995 ໄດ້ສະແດງໃຫ້ເຫັນວ່າ ວິກິດການທະນາຄານ ແມ່ນຂ້ອນຂ້າງມັກຈະເກີດຂຶ້ນຫຼາຍ ຢູ່ໃນລະບົບການເງິນທີ່ຫັນເປັນເສລີ, ໂດຍສະເພາະແມ່ນໃນເມື່ອສະຖາບັນຕ່າງໆມີຄວາມອ່ອນແອ. ເບິ່ງຢູ່ໃນDemirg -Kunt ແລະ Detragiache (1998).

120 ເລື່ອງ 'ວິທີການພັດທະນາແບບຝູງຫ່ານບິນ' ນັ້ນ ແມ່ນ Kaname Akamatsu ເປັນຜູ້ສ້າງຄໍາສັບໃໝ່ຂຶ້ນໃນທໍາອິດ. ເບິ່ງຢູ່ໃນ Akamatsu (1961, 1962), Chowdhury ແລະ Islam (1993).

121 ບັນດາຕົວເລກທີ່ຍົກເອົາມາອ້າງຢູ່ໃນທີ່ນີ້ ແມ່ນມາຈາກ UNDP (2016).

122 ເບິ່ງຢູ່ໃນ Chowdhury ແລະ Islam (1993).

123 ທະນາຄານໂລກ (2013).

124 ທະນາຄານໂລກ (2014).

125 ທະນາຄານສໍາຮອງຂອງອິນເດຍ ໄດ້ປະກາດຈຸດປະສົງໃນການຫຼຸດຜ່ອນລະບຽບການຄຸ້ມຄອງລະບົບການເງິນເທື່ອລະກ້າວ ເພື່ອໃຫ້ມັນດໍາເນີນການດ້ານສະພາບແວດລ້ອມຂອງການແຂ່ງຂັນ ແລະມີປະສິດທິພາບດີຂຶ້ນ. ແຕ່ສິ່ງດັ່ງກ່າວນີ້, ໄດ້ນໍາໄປສູ່ການກີດກັ້ນທາງດ້ານການເງິນ ແລະກົດດັນຊາວກະສິກອນຈໍານວນຫຼາຍ ເນື່ອງຈາກເຮັດໃຫ້ເຂົາເຈົ້າຕົກເປັນໜີ້ເປັນສິນຫຼາຍຂຶ້ນ. ຫຼັງຈາກທີ່ມີການຂ້າຕົວຕາຍຂອງຊາວກະສິກອນເປັນຊຸດໆ, ບັນດາທະນາຄານທັງໝົດ ຈຶ່ງຖືກຊຸກຍູ້ໃຫ້ຮັບຮອງເອົາ 'ການເງິນເພື່ອທຸກຄົນ' ເປັນນະໂຍບາຍໃນການດໍາເນີນງານ. ເບິ່ງຢູ່ໃນ ເສດຖະກິດ ແລະການເມືອງປະຈໍາອາທິດ, 20 ພຶດສະພາ 2006.

126 ໃນເດືອນ ກຸມພາ 2013, ສປປ ລາວ ໄດ້ສໍາເລັດໃນການເຂົ້າເປັນສະມາຊິກ WTO ຂອງມັນ.

127 ເບິ່ງຢູ່ໃນ UNDP (2016).

128 ADB (2013).

129 Baunsgaard ແລະ Keen (2005).

130 OECD (2008) ໄດ້ສັງເກດວ່າ: "... ໃນຂະນະທີ່ອາກອນ ໄດ້ຖືກຮັບຮູ້ວ່າເປັນປັດໄຈສໍາຄັນໜຶ່ງ ສໍາລັບການຕັດສິນໃຈວ່າຈະລົງທຶນຢູ່ໃສ, ແຕ່ມັນກໍ່ບໍ່ແມ່ນຕົວກໍານົດຕົ້ນຕໍແຕ່ຢ່າງໃດ. FDI ທີ່ຖືກດຶງດູດເຂົ້າສູ່ປະເທດຕ່າງໆນັ້ນ ແມ່ນຍ້ອນເລື່ອງຕ່າງໆເຫຼົ່ານີ້ຫຼາຍກວ່າ ເຊັ່ນ: ການເຂົ້າເຖິງຕະຫຼາດ ແລະກາລະໂອກາດໃນການສ້າງກໍາໄລ; ໂຄງສ້າງລະບຽບການ ແລະຕົວຢ່າງບົດກົດໝາຍທີ່ບໍ່ມີການຈໍາແນກ ແລະສາມາດຄາດການໄດ້; ຄວາມມີສະຖຽລະພາບຂອງເສດຖະກິດມະຫາພາກ; ສີມືແຮງງານ ແລະຕະຫຼາດແຮງງານທີ່ຕອບສະໜອງໄດ້; ໂຄງລ່າງພື້ນຖານທີ່ມີການພັດທະນາດີ. ບັນດາປັດໄຈຕ່າງໆເຫຼົ່ານີ້ ຈະມີອິດທິພົນຕໍ່ກັບການມີກໍາໄລໃນໄລຍະຍາວຂອງ

ໂຄງການ.” ມັນມີອັນທີ່ຄ້າຍຄືກັນນີ້, ຊຶ່ງເອກະສານບົດຄົ້ນຄວ້າຂອງ IMF ໃນປີ 2008 ໄດ້ມີການສົມທຽບບັນດາຕົ້ນທຶນຂອງການອະນຸໂລມຜ່ອນຜັນຕ່າງໆທາງດ້ານລາຍໄດ້ ທີ່ໄດ້ປະຖິ້ມ ຫຼືເຮັດໃຫ້ເສຍຜົນປະໂຫຍດຕ່າງໆນັ້ນ ເຫັນວ່າຂອບເຂດສ່ວນເພີ່ມທີ່ສູງທີ່ສຸດນັ້ນ ແມ່ນຢູ່ໃນບັນດາປະເທດ ຄາຣິບບຽນ, ຊຶ່ງລາຍໄດ້ດ້ານພາສີ-ອາກອນ ແມ່ນໄດ້ເຮັດໃຫ້ເສຍຜົນປະໂຫຍດ ຢູ່ໃນລະຫວ່າງ 9,5% ແລະ 16% ຂອງ GDP ຕໍ່ປີ, ໃນຂະນະທີ່ FDI ທັງໝົດ ແມ່ນບໍ່ໄດ້ເກີດຂຶ້ນຍ້ອນການອະນຸໂລມຜ່ອນຜັນຕ່າງໆເລີຍ. ເບິ່ງຢູ່ໃນ Chai ແລະ Goyal (2008).

131 ຕົວຢ່າງທີ່ໜ້າໃຈ: ປະເທດອິນໂດເນເຊຍ ໄດ້ມີການເກັບພາສີຂາອອກ ແລະຫ້າມສົ່ງອອກແຮ່ດິບໄປຕ່າງປະເທດ, ຊຶ່ງຈຸດປະສົງນີ້ແມ່ນເພື່ອບັງຄັບໃຫ້ TNCs ດໍາເນີນການປຸງແຕ່ງແຮ່ດິບທີ່ມີຢູ່ໃນອິນໂດເນເຊຍ ເພື່ອເພີ່ມມູນຄ່າເພີ່ມໃຫ້ແກ່ເສດຖະກິດພາຍໃນ. ເບິ່ງຢູ່ໃນ UNCTAD (2014).

132 UNCTAD (2014) ໄດ້ຈັດເພີ່ມບັນຊີບັນດາປະເທດຕົວຢ່າງ ທີ່ມີການປ່ຽນແປງລະບຽບກົດໝາຍ ແລະລະບົບການເງິນຕ່າງໆເພື່ອດຶງດູດອຸດສາຫະກໍາ.

133 Blanchard (2012); Strauss-Kahn (2011).

134 IMF ຄະນະກໍາມະການພັດທະນາຂອງທະນາຄານໂລກ (2006) p. i.

135 Ostry, Loungani ແລະ Furceri (2016).

136 ເບິ່ງຢູ່ໃນ Furceri ແລະLoungani (2013).

137 IMF (2012); ທະນາຄານໂລກ (2010).

138 Ostry et al (2011). ຍັງເບິ່ງໄດ້ຢູ່ໃນບົດສະຫຼຸບຫຍໍ້ຂອງ ESCAP/MPDD #12 ສໍາລັບການສົນທະນາກ່ຽວກັບຜົນດີ ແລະຜົນເສຍ (ຄຸນ ແລະໂທດ) ຂອງບັນດາເຕັກນິກຕ່າງໆທັງຫຼາຍ.